| | |
|---|---|
| ກຸ່ມວິຊາສະເພາະ | ສາຍສ້າງຄູມັດທະຍົມຕົ້ນ |

# ວິຊາ ປະຫວັດສາດພົວພັນສາກົນ



ກຸ່ມວິຊາສະເພາະ

ສາຍສ້າງຄູມັດທະຍົມຕົ້ນ

# ວິຊາ ປະຫວັດສາດພົວພັນສາກົນ

ຮຽບຮຽງໂດຍ:

ຊອ ນາງ ລັດສະໝີ ພົນທິສານ

ກວດແກ້ໂດຍ:

ທ່ານ ວັດທະນາ ໝັ້ນວິໄລ

ຊອ ປທ ສີງອຳໄພ ພິມພາພອນ

ປທ ນາງ ລຸ້ງຟ້າ ຂັນຕິວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໞໞໞໞໞໞໞ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ...18.........ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງຮຽບຮຽງປຶ້ມແບບຮຽນປະກອບການສອນ

## ວິຊາປະຫວັດສາດພົວພັນສາກົນ

**- ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກຮຽນ 2022 – 2023.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າປຶ້ມຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ອຈ ປທ ນ ຄຳຂຽງ ຈັນທະວົງສັກ | .................................... |
| ຊອ ປທ ມອນໄຊ ຂັນທະຈັກ | .................................... |
| ຊອ ປອ ໂພທອງ ພົງສິງຄາມ | .................................... |

ທີ່, ສາລະວັນ, ວັນທີ ...09 MAR 2023...

ປະທານສະພາວິທະຍາສາດ

ອ.ຈ ນ. ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

# ໃບຮັບຮອງການກວດແກ້ການຮຽບຮຽງປຶ້ມແບບຮຽນປະກອບການສອນ

## ຫົວຂໍ້: ວິຊາປະຫວັດສາດພົວພັນສາກົນ

ຫ້ອງການ: ວິທະຍາສາດສັງຄົມ

ຜູ້ຮຽບຮຽງປຶ້ມ

ຊອ ນ ລັດສະໝີ ພົນທິສານ

ຄະນະກຳມະການກວດແກ້ບົດ — ລາຍເຊັນ

ທ່ານ ວັດທະນາ ໝັ້ນວິໄລ ..............................

ປທ ນ ລຸ້ງຟ້າ ຂັນຕິວົງ ..............................

ອຈ ປທ ນ ສິງອຳໄພ ພົມພາພອນ ..............................

ທີ່, ສາລະວັນ, ວັນທີ 09 MAR 23

ຫົວໜ້າຫ້ອງການວິທະຍສາດສັງຄົມ

# ຄຳນຳ

ເພື່ອປັບປຸງຄຸນນະພາບ, ປະສິດທິພາບຂອງການກໍ່ສ້າງຄູໃຫ້ສູງ, ແນ່ໃນເພີ່ມສະມັດຖະພາບຂອງຄູ ແລະ  ແລະ ພັດທະນາອາຊີຄູໃຫ້ດີຂຶ້ນເທື່ອລະກ້າວນັ້ນ. ພວກຂ້າພະເຈົ້າຈຶ່ງໄດ້ຮຽບຮຽງປື້ມແບບຮຽນປະຫວັດສາດພົວພັນສາກົນ ນີ້ຂຶ້ນມາ ເພື່ອຮັບໃຊ້ໃນການຮຽນ-ການສອນ ໃນລະລາຍວິຊາ ສຳລັບນັກສຶກສາຄູສາຍປະຫວັດສາດ ລະບົບ 12 +4 ຢູ່ພາຍໃນສະຖາບັນສ້າງຄູ ເຊິ່ງໄດ້ຈັດລຽງເນື້ອໃນວິຊາແມ່ນອີງໃສ່ໂຄງຮ່າງຫຼັກສູດທີ່ຜ່ານການຮັບຮອງຈາກກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ເນື້ອໃນທັງໝົດມີ 8 ບົດ ການພົວພັນລະຫວ່າງປະເທດຕ່າງໆໃນໂລກ ກ່ອນສົງຄາມໂລກຄັ້ງທີ 1 ຈົນເຖິງການເກີດສົງຄວາມໂລກຄັ້ງທີ 1 ຜົນກະທົບຂອງການພົວພັນດັ່ງກ່າວຕໍ່ກັບສັງຄົມໂລກ ແລະ ຮຽນຮູ້ກ່ຽວກັບການພົວພັນປະເທດມະຫາອຳນາດຫຼັງສົງຄາມໂລກຄັ້ງທີ 1, ສາເຫດທີ່ພາໃຫ້ເກີດສົງຄາມໂລກຄັ້ງທີ 2, ການພົວພັນຫຼັງສົງຄາມໂລກຄັ້ງທີ 2 ຈົນເຖິງປັດຈຸບັນ ພ້ອມທັງຜົນກະທົບຕໍ່ກັບສົງຄົມໂລກ. , ໂດຍສຶກສາຕາມທິດທາງການສ້າງຄູແບບໃໝ່ ທີ່ນັ້ນການປູກອຸດົມການ, ຄຸນນຸທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນຄູ, ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈດ້ານການພົວພັນສາກົນ, ຄວາມຮູ້ທົ່ວໄປ ແລະ ຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ

ປື້ມເຫຼັ້ມນີ້ຮຽບຮຽງຂຶ້ນມາອາດປະສະຈາກ ໄດ້ຄວາມຂາດຕົກບົກຜ່ອງ, ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສຸພາບ ກະລຸນາປະກອບຄຳຕິດຄຳເຫັນຂອງຕົນ ເພື່ອຊ່ວຍປັບປຸ່ງເຮັດໃຫ້ປື້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຢ່າງຍິ່ງຂຶ້ນ.

## ສາລະບານ

### ບົດທີ 1 ຄວາມຮູ້ເບື້ອງຕົ້ນກ່ຽວກັບການພົວພັນສາກົນ


1. ຄວາມໝາຍ ແລະ ຄວາມສຳຄັນຂອງການພົວພັນສາກົນ ....................................................................1
2. ລັກສະນະຂອງການພົວພັນສາກົນ....................................................................................................3
   2.1 ການພົວພັນທີ່ເປັນທາງການ ແລະ ບໍ່ເປັນທາງການ .....................................................................3
   2.2 ລັກສະນະການພົວພັນແບບຮ່ວມມື ແລະ ບໍ່ຮ່ວມມື......................................................................5
   2.3 ລັກສະນະການພົວພັນແບບຮຸນແຮງ ..........................................................................................5
3. ຂອບເຂດຂອງການພົວພັນ................................................................................................................6
4. ອົງປະກອບຂອງການພົວພັນສາກົນ....................................................................................................6

ບົດທີ 2 ລັກສະນະການພົວພັນສາກົນກ່ອນສົງຄາມໂລກຄັ້ງທີ 1

1. ລັກສະນະການພົວພັນສາກົນກ່ອນສົງຄາມໂລກຄັ້ງທີ 1 ....................................................................7

2.ປັດໄຈທີ່ພາໃຫ້ການພົວພັນສາກົນເກີດຂຶ້ນ.......................................................................................7
   2.1 ການສະແຫວງຫາອານານິຄົມຂອງປະເທດມະຫາອຳນາດ ................................................................7
   2.2 ການສະສົມກຳລັງພົນ ແລະ ກຳລັງອາວຸດ.....................................................................................7
   2.3 ການກຳເນີດລັດທິຊາດນິຍົມ .....................................................................................................8
   2.4 ການຮ່ວມກຸ່ມກັນຂອງມະຫາອຳນາດ............................................................................................8

ບົດທີ 3 ການພົວພັນສາກົນລະຫວ່າງສົງຄາມໂລກຄັ້ງທີ I

1. ສາເຫດຂອງສົງຄາມໂລກຄັ້ງທີ 1 ...................................................................................................11
   1.2 ການສະແຫວງຫາອານານິຄົມຂອງປະເທດມະຫາອຳນາດ ..............................................................11

1.2 ການສະສົມກຳລັງພົນ ແລະ ກຳລັງອາວຸດ(ການສ້າງຄວາມເຂັ້ມແຂງທາງດ້ານການທະຫານ…......................11
   1.3 ການກຳເນີດລັດທິຊາດນິຍົມ ....................................................................................................11

2. ການດຳເນີນສົງຄາມ......................................................................................................................11
   2.1 ບັ້ນຮົບຕາເວັນຕົກ...................................................................................................................14
   2.2 ການຮົບທີ່ຊອງແຄບດາກດາແນມ. ..............................................................................................15
   2.3 ການຮົບທາງທະເລ ຫຼື ຍຸດທະນາວິທີແຫຼ່ມຈຸດແລນ(The Naval Battle of Jut-lan ..................15
   2.4 ບັນຮົບຕາເວັນອອກ. ...............................................................................................................16
   4.5 ການຮົບທີ່ເມືອງເວີດັງ...........................................................................................................17
3. ຜົນສະທ້ອນຂອງສົງຄາມຕໍ່ກັບການພົວພັນສາກົນ .............................................................................18
   3.1 ດ້ານເສດຖະກິດ......................................................................................................................18
   3.2 ດ້ານສັງຄົມ...........................................................................................................................19
   3.3 ດ້ານການເມືອງ .....................................................................................................................19

ບົດທີ4 ການພົວພັນສາກົນຫຼັງສົງຄາມໂລກຄັ້ງທີ I ຄ.ສ 1919-1929

1. ກອງປະຊຸມປາຣີ ຫຼື ສົນທິສັນຍາຕິພາບ........................................................................................22

2. ສົນທິສັນຍາສັນຕິພາບ ແວກໄຊ .......................................................................................24
2.1 ບັນຫາກ່ຽວກັບດິນແດນ.......................................................................................24
2.2 ດ້ານການທະຫານ.......................................................................................25
2.3 ດ້ານເສດຖະກິດ.......................................................................................25
3. ສົນທິສັນຍາກັບບັນດາປະເທດໄຊຊະນະແລະປາລາໄຊຄັ້ງ I ທີ່ ພັນທະມິດຂອງເຢຍລະມັນ.......................25
4. ອົງການສັນນິບາດຊາດ. .......................................................................................29
4.1 ຈຸດປະສົງ ແລະ ເປົ້າໝາຍທີ່ສຳຄັນຂອງອົງການສັນນິບາດຊາດ.......................................30
4.2 ອົງການຈັດຕັ້ງຂອງອົງການສັນນິບາດຊາດ. ...........................................................30
4.3 ສຳນັກງານ ເລຂາທິການ(Secretarlte).......................................................................31
5. ສັນຍາວໍຊິງຕັນ. .......................................................................................32
ບົດທີ 5 ການພົວພັນສາກົນໄລຍະປີ ຄ.ສ 1919- 1939
1. ວິກິດການທາງດ້ານເສດຖະກິດແຫ່ງໂລກ. .......................................................................................43
2. ລັກສະນະຂອງການພົວພັນສາກົນລະຫວ່າງປະເທດມະຫາອຳນາດ.......................................45
2.1 ການກຳເນີດຟາດຊິດອີຕາລີ.......................................................................................495
2.2 ການກຳເນີດຟາດຊິດເຢຍລະມັນ.......................................................................................496
2.3 ການກຳເນີດຟາດຊິດຍີ່ປຸ່ນ.......................................................................................497
3. ການເຊື່ອມບົດບາດຂອງອົງການສັນນິບາດຊາດ.......................................................................................498
4. ການຮ່ວມກຸ່ມປະເທດມະຫາອຳນາດ.......................................................................................499
5. ຜົນສະທ້ອນຂອງການພົວພັນສາກົນລະຫວ່າງປະເທດມະຫາອຳນາດຕໍ່ສັງຄົມໂລກ .......................50
ບົດທີ 6 ສົງຄາມໂລກຄັ້ງທີ II ໂດຍສັງເຂບ
I.ສາເຫດຂອງສົງຄາມໂລກຄັ້ງທີII .......................................................................................51
1.ວິກິດການທາງດ້ານເສດຖະກິດ .......................................................................................51
2.ການກຳເນີດລັດທິຊາດນິຍົມ .......................................................................................51
3.ຄວາມອ່ອນແອ ແລະ ຂາດປະສິດທິພາບຂອງອົງການສັນນິບາດຊາດ.......................................51
II.ການດຳເນີນສົງຄາມ .......................................................................................52
1.ສະໜາມຮົບເອີຣົບ .......................................................................................52
2.ສະໜາມຮົບອາຟຣິກາເໜືອ ແລະ ໃຕ້ .......................................................................................54
3.ສະໜາມຮົບຕາເວັນອອກ ແລະ ມະຫາສະໝຸດປາຊີຟິກ .......................................................................................55
III.ຜົນກະທົບຂອງສົງຄາມ .......................................................................................56
ບົດທີ 7 ການພົວພັນສາກົນພາຍຫຼັງສົງຄາມໂລກແຕ່ປີຄ.ສ 1945- 1980
1.ການສ້າງຕັ້ງອົງການສະຫະປະຊາຊາດ .......................................................................................59
2.ອົງປະກອບອົງການສະຫະປະຊາຊາດ .......................................................................................62
3.ຄວາມຂັດແຍ່ງລະຫວ່າງສອງກຸ່ມການເມືອງ .......................................................................................62
4.ການສ້າງກຸ່ມສຳພັນທາງການທະຫານຂອງສອງລະບົບການເມືອງໂລກ .......................................67

5.ການກຳເນີດ ແລະ ການຂະຫຍາຍຕົວຂະບວນປົດປ່ອຍຊາດ ....................................................................68
ບົດທີ 8 ການພົວພັນສາກົນພາຍຫຼັງສົງຄາມໂລກແຕ່ປີຄ.ສ 1980 ຫາປະຈຸບັນ
1.ການພົວພັນລະຫວ່າງໂລກເສລີນິຍົມກັບສັງຄົມນິຍົມ ....................................................................73
2.ການພົວພັນລພຫວ່າງປະເທດອຸດສາຫະກຳ ແລະ ໂລກທີສາມ ....................................................................75
3.ການຮ່ວມຂອງບັນດາປະຊາຊາດຕ່າງໆເພື່ອຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ແລະ ການເມືອງ .......80
4.ການກຳເນີດຂະບວນການບໍ່ຮ່ວມກຸ່ມ ....................................................................92
5.ຜົນສະທ້ອນຄວາມແຕກຕ່າງສອງກຸ່ມການເມືອງໂລກ ....................................................................93
6.ບົດບາດຂອງອົງການສະຫະປະຊາດໃນການແກ້ໄຂບັນຫາຕ່າງໆ ....................................................................95
7.ສະພາບການຂອງໂລກໃນຍຸກປະຈຸບັນ ....................................................................101
ພາກອ່ານເພີ່ມ ....................................................................115

# ບົດທີ 1
# ຄວາມຮູ້ເບື້ອງຕົ້ນກ່ຽວກັບການພົວພັນສາກົນ

## 1. ຄວາມໝາຍ ແລະ ຄວາມສຳຄັນຂອງການພົວພັນສາກົນ

ການທີ່ຫຼາຍກຸ່ມຄົນອາໄສຢູ່ຮ່ວມກັນ ມັນມີການທີ່ຈະຄົບຄ້າສະມາຄົມເຊິ່ງກັນ ແລະ ກັນເພື່ອແລກປ່ຽນວັດຖຸສິ່ງຂອງ ຫຼື ແມ່ນແຕ່ຄະນົບທຳນຽມຮີດຄອງປະເພນີຢ່າງມີລະບຽບແບບແຜນ,ມີແນວທາງປະພຶດປະຕິບັດໃນສັງຄົມຈາກອີກກຸ່ມຕົນໜຶ່ງໄປຫາອີກກຸ່ມຄົນໜຶ່ງໂດຍຜ່ານການຈັດລະບຽບ,ມີການຈັດຕັ້ງປົກຄອງ. ຄວາມສຳພັນນີ້ບໍ່ພຽງແຕ່ເກີດຂຶ້ນພາຍໃນຂອບເຂດຂອງຕົນອາໄສຢູ່ເທົ່ານັ້ນ,ແຕ່ມັນຍັງເຊື່ອມປະສານໄປຫາສັງຄົມອື່ນຕື່ມອີກ.ຄວາມສຳພັນນີ້ອາດເປັນຄວາມສຳພັນແບບສ່ວນບຸກຄົນ ຫຼື ການພົວພັນມີສ່ວນຮວມໃນສັງຄົມຕ່າງໆ, ການພົວພັນນັ້ນອາດສະແດງອອກໃນການຮ່ວມມື ຫຼື ຂັດແຍ່ງກໍ່ໄດ້ເຊັ່ນ: ການເຮັດສົງຄາມ, ການຄ້າຂາຍ, ການລົງທຶນ, ການແຕ່ງດອງ,...

ໃນໂລກປັດຈຸບັນຄວາມກ້າວໜ້າທາງດານເຕັກໂນໂລຢີໄດ້ໄປພ້ອມໆກັບການຂະຫຍາຍຕົວທາງສັງຄົມ,ໂດຍສະເພາະການຄົມມະນາຄົມ,ການສື່ສານມີຄວາມສະດວກສະບາຍ ແລະ ວ່ອງໄວກໍ່ຍິ່ງເຮັດໃຫ້ຄົນເຮົາໃນສັງຄົມມີການພົວພັນສະຫຼັບສັບຊ້ອນຫຼາຍກ້ວາເກົ່າອີກ,ເຮັດໃຫ້ມີຄວາມຈຳເປັນຕ້ອງມີລະບຽບກົດໝາຍ ເພື່ອມາຮັບປະກັນລັກສະນະຂອງການພົວພັນຂອງກຸ່ຄົນຕ່າງໆໃນສັງຄົມ.

ການພົວພັນສາກົນ ແມ່ນບັນສາຍພົວພັນທີ່ປະກອບດ້ວຍສາຍກ່ຽວພັນທັງໝົດ ທີ່ມີການກະທົບເຊິ່ງກັນ ແລະ ກັນລະຫວ່າງບັນດາປະເທດ, ລະບົບອົງການຈັດຕັ້ງ ແລະ ຂະບວນການຕ່າງໆໃນທຸກໆດ້ານຂອງການດຳລົງຊີວິດສັງຄົມ. ແມ່ນກາຍພົວພັນລະຫວ່າງອັດຕະພາບດ້ວຍກັນຂອງການພົວພັນສາກົນໃນທຸກດ້ານ, ການພົວພັນສາກົນທີ່ພວກເຮົາຄົ້ນຄວ້າໃນປະຈຸບັນນີ້ ແມ່ນການພົວພັນທີ່ນັ້ນໜັກໄປໃນດ້ານການເມືອງ.

ການພົວພັນການເມືອງສາກົນ ແມ່ນພົວພັນການເມືອງ ລະຫວ່າງປະເທດການເມືອງນີ້ກັບປະເທດອື່ນ, ແມ່ນການສັງລວບັນດາສາຍພາບພັນໃນຂົບເຂດການເມືອງຂອງບັນດາອັນຕະພາບທີ່ເຄື່ອນໄຫວໃນວົງຄະນະຍາດສາກົນ, ແມ່ນການສັງລວມການເມືອງບັນດາລັດ ແລະ ບັນດາກຸ່ມການເມືອງເຂົ້າຮ່ວມ, ການສັງລວມກຳນົດ ແລະ ປະຕິບັດທິດນຳຍຸດທະສາດ, ຮູບການເຄື່ອນໄຫວຂອງສາກົນ.

ເມື່ອສັງເກດເບິ່ງແລ້ວເຫັນວ່າ: ການພົວພັນສາກົນໝາຍເຖິງການພົວພັນແລກປ່ຽນປະພຶດປະຕິບັດຕໍ່ກັນ ແລະ ກັນໃນລັກສະນະຕ່າງໆທີ່ເກີດຂຶ້ນຂ້າມຂອບເຂດຊາຍແດນຂອງລັດ ຫຼືຂອງປະເທດໂດຍມີຈຸດປະສົງຂອງຕົນເອງ.

ເພື່ອສ້າງຄວາມສີວິໄລໃຫ້ສັງຄົມຂອງຕົນມີຄວາມຈຳເປັນຕ້ອງມີການພົວພັນກັບສັງຄົມອ້ອມຂ້າງໃນດ້ານຕ່າງໆເຊັ່ນ: ການຮ່ວມມືດ້ານການຄ້າການລົງທຶນ,ວຽກງານຄວາມໝັ້ນຄົງຂອງຊາດ,ວຽກງານຂໍ້ມູນຂ່າວສານ,ດ້ານສາທາລະນະສຸກ,ສັງຄົມ,...ການພົວພັນລະຫວ່າງສັງກັບສັງຄົມບໍ່ສາມາດປາສະຈາກຂໍ້ຂັດແຍ່ງທີ່ເນື່ອງມາຈາກຄວາມແຕກຕ່າງທາງດ້ານພາສາ,ສາສະໜາ ແລະ ຮີດຄອງປະເພນີ. ດັ່ງນັ້ນຈຶ່ງມີຄວາມຈຳເປັນຕ້ອງມີການພົວພັນເຊິ່ງກັນ ແລະ ກັນເພື່ອສ້າງຄວາມເຂົ້າໃຈໃນຄວາມແຕກຕ່າງຂອງຫຼາກຫຼາຍສັງຄົມໃນໂລກ.

**ກ. ລັດທີ່ມີອະທິປະໄຕ ແມ່ນລັດອັນຕະພາບເຄື່ອນໜັງ ໃນການພົວພັນການເມືອງສາກົນ.**

ລັດທີ່ມີອັດທະປະໄຕ ແມ່ນສັນບາລັກພິເສດ ແລະ ເປັນພື້ນຖານຂອງການພົວພັນການເມື່ອງສາກົນ, ທ່ານ ອັງແກ່ນ ເອີ້ນລັດວ່າ: ຜູ້ແທນທາງການຂອງທົ່ວສັງຄົມ ແມ່ນການເຕົ້າລວມຂອງສັງຄົມໜຶ່ງທີ່ຈະແຈ້ງ.

ໂຄງປະກອບການເມືອງສາກົນ ແມ່ນຮູບການກາຍອິດຊີອັນໜຶ່ງທີ່ໄດ້ກຳເນີດເກີດຂຶ້ນດ້ວຍບັນດາຂອດຂອງການພົວພັນການເມືອງລະຫວ່າງປະເທດອະທິປະໄຕພັດແມ່ນລັກສະນະຈຳເພາະພື້ນຖານຂອງລັດ, ໃນການພົວພັນ

ຕ່າງປະເທດມັນສະແດງອອກຢູ່ໃນລັກສະນະເອກະລາດເປັນເຈົ້າຕົນເອງ, ບໍ່ຂຶ້ນກັບຜູ້ອື່ນ, ເຄົາລົບອະທິປະໄຕຂອງກັນ ແລະ ກັນ. ແມ່ນຫຼັກການພື້ນຖານຂອງການພົວພັນການເມືອງສາກົນ.

ອົງການຈັດຕັ້ງສາກົນ ກໍ່ແມ່ນອັນຕະພາບໜຶ່ງຂອງການພົວພັນການເມືອງສາກົນ. ການພົວພັນສາກົນນັບມື້ນັບເປີດກ້ວາງຈຸດໝາຍທາງເສດຖະກິດ ແລະ ການເມືອງຂອງປະເທດໜຶ່ງບໍ່ພຽງແຕ່ອີງໃສ່ຄວາມສາມາດຂອງປະເທດຕົນ ເພື່ອປະຕິບັດຈຸດໝາຍດັ່ງກ່າວ, ແຕ່ຍັງຮຽກຮ້ອງໃຫ້ມີການພົວພັນນອກຂອບເຂດຊາຍແດນຕື່ມອີກ; ສ້າງອົງການຈັດຕັ້ງສາກົນຄື ກັບການປະມຸກລັດ ຂອງບັນປະເທດບໍ່ຮ່ວມກຸ່ມ, ສະຫະພາບເອີຣົບ...ບັນດາອົງການຈັດຕັ້ງສາກົນນີ້ບໍ່ໄດ້ຢືນຢູ່ເໜືອປະເທດທີ່ມີອະທິປະໄຕ ແຕ່ຜົນກະທົບຂອງມັນພຽງແຕ່ເປັນການປັບປຸງ ແລະ ປົກປ້ອງເອກະລາດອະທິປະໄຕຂອງບັນດາປະເທດເຫຼົ່ານັ້ນ.

**ຂ. ການພົວພັນຜົນປະໂຫຍດ ລະຫວ່າງບັນດາປະຊາຊາດ ແມ່ນພື້ນຖານຂອງການພົວພັນສາກົນ.**

ຜົນປະໂຫຍດແຫ່ງຊາດ ແມ່ນຈຸດເລີ່ມຕົ້ນຂອງພາລະບົດບາດການຕ່າງປະເທດຂອງປະເທດໃດໜຶ່ງ. ການປົກປັກຮັກສາສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງປະເທດ, ຊົນຊາດແມ່ນບ່ອນອີງ ເພື່ອວາງນະໂຍບາຍການຕ່າງປະເທດຂອງປະເທດໃດໜຶ່ງ. ຄວາມສອດຄ່ອງ ແລະ ການປະທະກັນທາງສາຍພົວພັນຜົນປະໂຫຍດ ລະຫວ່າງບັນດາປະເທດໄດ້ສ້າງກຳລັງແຮງກະຕຸກຊຸກຍູ້ການປ່ຽນແປງການພົວພັນ. ຜົນປະໂຫຍດຂອງຊາດປະກອບດ້ວຍຜົນປະໂຫຍດຊົນຊັ້ນ ແລະ ຜົນປະໂຫຍດຊົນຊາດ ສອງຢ່າງນີ້ທັງມີຄວາມເປັນເອກະພາບ ທັງຂັດແຍ່ງເຊິ່ງກັນ ແລະ ກັນ. ກ່ອນຈະລົບລ້າງຄວາມແຕກຕ່າງທາງດ້ານເສດຖະກິດ, ການເມືອງ, ຊົນຊາດ, ຊົນເຜົ່າ, ວັດທະນະທຳ, ອານາເຂດ... ລະຫວ່າງປະເທດປະຊາຊາດທີ່ມີຜົນປະໂຫຍດ ເວົ້າລວມໄດ້ຖືກຕັ້ງຂຶ້ນເພື່ອເປັນຖັນແຖວໜ້າຢ່າງເປັນປະຈຳ.

ຢູ່ບັນດາປະເທດຕາເວັນຕົກມີຫຼາຍຄົນເດີນຕາມ ທິດສະດີຜົນປະໂຫຍດແຫ່ງຊາດ ແຕ່ການອະທິບາຍຄວາມໝາຍຂອງຄວາມສຳນຶກ " ຜົນປະໂຫຍດແຫ່ງຊາດ " ພັດແຕກຕ່າງທີ່ສຸດ ມີບາງຄົນອີງໃສ່ລັດທິໂຊແວງ ຫຼື ຫັນໃຫ້ " ຜົນປະໂຫຍດແຫ່ງຊາດ ເປັນອັນຂາດ" ເນື່ອງຈາກວ່າ "ຜົນປະໂຫຍດແຫ່ງຊາດ" ທີ່ພວກເຂົາເວົ້າຫຼາຍເທື່ອນັ້ນ ພັດມີຈຸດປະສົງສະເພາະໜ້ານັ້ນ ແມ່ນ " **ການປົກຄອງໂລກ**"

**ຄ. ການເມືອງສາກົນ ແມ່ນການສືບທອດຂອງນະໂຍບາຍພາຍໃນຂອງບັນດາປະເທດ.**

ການພົວພັນການເມືອງສາກົນມີພື້ນຖານມາຈາກ ການພົວພັນສາກົນການເມືອງພາຍໃນປະເທດ, ນະໂຍບາຍພາຍໃນຕັດສິນນະໂຍບາຍພາຍນອກ, ນະໂຍບາຍພາຍນອກມີຜົນສະທ້ອນຄືນຕໍ່ນະໂຍບາຍພາຍໃນ. ທັງສອງຢ່າງນີ້ມີການພົວພັນເຊິ່ງກັນ ແລະ ກັນ,ເພີ່ມເຕີມໃຫ້ແກ່ກັນ, ການພົວພັນການເມືງໃນປະຈຸບັນນັບມື້ຍິ່ງຍອມຮັບການກະທົບຢ່າງແຂງແຮງຂອງການເມືອງພາຍໃນ ດ້ານອື່ນການເມືອງພາຍໃນ ແລະ ການເມືອງສາກົນພັດມີລັກສະນະເອກລາດໃນລະດັບແນນອນ, ແຕ່ບາງຄັ້ງເກີດມີຂໍ້ຂັດແຍ່ງກັນ.

ການເມືອງສາກົນບໍ່ມີບັນດາຫຼັກການ ແລະ ກົນໄກຄືກັບການເມືອງພາຍໃນ. ການເມືອງພາຍໃນແມ່ນອີງໃສ່ອຳນາດການປົກຄອງ ແລະ ອຳນາດການນຳພາຂອງພັກ-ລັດ, ອີງໃສ່ຄວາມຮູນແຮງຂອງກົນອຸບາຍ ແລະ ບໍ່ຮຸນແຮງຖືກຕ້ອງຕາມກົດໝາຍ ມັນຕ່າງກັນການເມືອພາຍໃນຄື ໃນການພົວພັນການເມືອສາກົນ ບໍ່ໄດ້ຄົງຕົງລັດຖະບານໂລກ ຫຼື ອົງການຮ່ວມປະເທດ ຄ້າຍຄືກັບລັດຖະບານພາຍໃນປະເທດ, ການຫັນປ່ຽນລະບຽບໂລກ ໄດ້ຖືກດັດສົມໂດຍຜ່ານການເຈລະຈາ, ການຮ່ວມມື,ຕໍ່ສູ້, ປະທະ... ການພັວພັນລະຫວ່າງບັນດາປະຊາຊາດແມ່ນ ການພົວພັນແບບເສັ້ນຂະໜານ, ບໍ່ແມ່ນການພົວພັນແຕ່ງເທິງລົງລຸ່ມທີ່ມີລັກສະນະບັງຄັບ ລະຫວ່າງການປົກຄອງກັບການຖືກປົກຄອງ, ລະຫວ່າງການນຳພາ ແລະ ຖືກນຳພາ.

## 2. ລັກສະນະຂອງການພົວພັນສາກົນ

ວິຊາພົວພັນສາກົນ ເປັນຂະແໜງວິທະຍາສາດໜຶ່ງ ທີ່ມີລັກສະນະປະຫວັດສາດ ແລະ ການເມືອງຢ່າງຈະແຈ້ງເຊິ່ງສະແດງອອກຄື:

ລັກສະນະປະຫວັດສາດຂອງວິຊານີ້ ສະແດງອອກຢູ່ບ່ອນວ່າມັນແມ່ນພາກສ່ວນໜຶ່ງຂອງຊີວິດສັງຄົມໃນປະຫວັດສາດຂອງມະນຸດທີ່ມີການໝູນວຽນປ່ຽນແປງ ໂດຍບໍ່ອາດຈະແຍກອອກໄກ້ຈາກກະແສຄວາມກ້າວໜ້າຂອງມະນຸດ. ການພົວພັນສາກົນແມ່ນພາກສ່ວນໜຶ່ງຂອງຊີວິດສັງຄົມທີ່ມີທັງອະດີດ ແລະ ອານາຄົດ. ສະນັ້ນ ຈຶ່ງເຫັນໄດ້ວ່າເຫດການ ແລະ ປະກົດການຕ່າງໆລ້ວນແຕ່ເກີດຂຶ້ນ, ຂະຫຍາຍຕົວອອກຈາກການພົວພັນສາກົນຂອງມວນມະນຸດເຮົາໄດ້.

ລັກສະນະການເມືອງຂອງວິຊານີ້ໄດ້ການສະແດງໃຫ້ເຫັນໃນການພົວພັນທີ່ມີລັກສະນະຊົນຊັ້ນຝ່າຍຕາເວັນຕົກແຕ່ໃດມາ, ພະຍາຍາມປົກປິດ ແລະ ປະຕິເສດລັກສະນະຊົນຊັ້ນທີ່ຄອບຄອງການພົວພັນລະຫວ່າງປະເທດ,ລະຫວ່າງຊາດໃນໂລກ. ເພາະວ່າການພົວພັນບາງດ້ານໄດ້ຊີ້ໃຫ້ເຫັນການຕໍ່ສູ້ເຊິ່ງກັນ ແລະ ກັນ ທີ່ຂັດແຍ່ງສິດຜົນປະໂຫຍດຂອງ. ຜົນປະໂຫຍດຂອງແຕ່ລະອັດຕະພາບໃນການພົວພັນສາກົນ ນີ້ແມ່ນລັກສະນະການເມືອງຂອງການພົວພັນສາກົນ

ລັກສະນະຂອງການພົວພັນສາກົນແມ່ນມີຫຼາຍລັກສະນະທີ່ແຕກຕ່າງກັນຕາມຈຸດປະສົງຂອງໃຜລາວ, ຕາມສັງລວມແລ້ວພໍສະຫຼຸບໄດ້ດັ່ງນີ້: ການພົວພັນແບບເປັນທາງການ, ການພົວພັນແບບບໍ່ເປັນທາງການ, ການພົວພັນແບບຂັດແຍ່ງ, ການພົວພັນແບບຮຸນແຮງ.

### 2.1 ການພົວພັນທີ່ເປັນທາງການ ແລະ ບໍ່ເປັນທາງການ

ການພົວພັນແບບເປັນທາງການ ໝາຍເຖິງການພົວພັນລະຫວ່າງປະເທດທີ່ເຮັດຂຶ້ນໂດຍລັດຖະບານ ຫຼື ຜູ້ທີ່ເປັນຕົວແທນອັນຊອບທຳຂອງລັດຖະບານເຊັ່ນ: ກອງປະຊຸມສຸດຍອດລະຫວ່າງປະເທດ,ການພົວພັນທາງການທູດ,ການຢືນຄຳຮອງຕ່າງໆຕໍ່ອົງການສາກົນ ຫຼື ອົງການລະຫວ່າງຊາດເຫຼົ່ານີ້ເປັນຕົ້ນ. ການພົວພັນແບບທາງການສ່ວນຫຼາຍແລ້ວແມ່ນມີລັກສະນະສ້າງສັນ,ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ,ມີການຮ່ວມມືຊ່ວຍເຫຼືອ ແລະ ຄຸ້ມຄອງສິດເສລີພາບຂອງກັນ ແລະ ກັນພາຍໃຕ້ກົດກະຕິກາຂອງສາກົນ.



ຮູບທີ 1 ການພົວພັນທີ່ເປັນທາງການ

ການພົວພັນແບບບໍ່ເປັນທາງການ ໝາຍເຖິງການພົວພັນຂອງບຸກຄົນ,ນິຕິບຸກຄົນໂດຍບໍ່ຜ່ານລັດຖະບານ ຫຼື ລັດຖະບານບໍ່ຮັບຮູ້ເຊັ່ນ: ການກໍ່ການຮ້າຍຂ້າມຊາດ, ການກະທຳຂອງບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ກ່ຽວຂ້ອງກັບລັດຖະບານ (ໂດຍບໍ່ຜ່ານລັດຖະບານ )

**ຕົວຢ່າງ** ບັນຫາການເມືອງສາກົນໃນປະຈຸບັນ

ບັນຫາການກໍ່ການຮ້າຍສາກົນສະຫະລັດ ໂດຍອົງການສືບລັບສູນກາງ (CIA) ນິຍາມການກໍ່ການຮ້າຍວ່າ ການກໍ່ການຮ້າຍໄດ້ຖືກກຳນົດວ່າເປັນ "ການກະທຳຂອງຄວາມຮຸນແຮງທີ່ວາງແຜນໄວ້ແລະລ່ວງຫນ້າ ດ້ວຍແຮງຈູງໃຈທາງການເມືອງ ປະຕິບັດຕໍ່ບັນດາເປົ້າໝາຍທີ່ບໍ່ມີສ່ວນຮ່ວມໃນສົງຄາມ ແລະ ບໍ່ມີຄວາມສາມາດໃນການເປັນສັດຕູຂອງການເຄື່ອນໄຫວທີ່ບໍ່ແມ່ນລັດໃນການເມືອງສາກົນ ຫຼື ໂດຍເຈົ້າໜ້າທີ່ລັບຂອງລັດ."

**ຮູບແບບຂອງສົງຄາມກ່ຽວກັບການກໍ່ການຮ້າຍ**

ການກໍ່ການຮ້າຍແມ່ນມຸ່ງໄປເຖິງເປົ້າໝາຍທີ່ເປັນສັນຍາລັກລວມທັງພົນລະເຮືອນ ດ້ວຍຄວາມຕັ້ງໃຈສະເພາະມີຜົນກະທົບທາງຈິດໃຈທີ່ຮ້າຍແຮງ ດັ່ງນັ້ນ, ການກໍ່ການຮ້າຍໄດ້ຖືກໃຊ້ໂດຍອົງການຈັດຕັ້ງໃຕ້ດິນໃນຫຼາຍປະເທດເພື່ອດຳເນີນການຈຸດປະສົງຕ່າງໆ, ເຊິ່ງໃນມື້ນີ້ຂະຫຍາຍອອກຈາກການຕໍ່ສູ້ເພື່ອເສລີພາບ, ພີ່ນ້ອງ, ສົງຄາມທາງສາສະຫນາໄປສູ່ສິດທິຂອງມະນຸດ. ແຕ່ປັດໄຈທາງດ້ານການເງິນຂັດຂວາງການປະຕິບັດສົງຄາມຢ່າງເຕັມທີ່. ດັ່ງນັ້ນ ຈຶ່ງພົບເຫັນໄດ້ເລື້ອຍໆວ່າ ພວກກໍ່ການຮ້າຍສ່ວນໃຫຍ່ ບໍ່ໄດ້ແນເປົ້າໝາຍໃສ່ບ່ອນຕັ້ງທັບຂອງພວກເຂົາເຈົ້າ ຫຼື ມີລະບົບປ້ອງກັນທີ່ຫນາແໜ້ນ ຫຼື ປະທະກັນກັບກຳລັງທີ່ຍິ່ງໃຫຍ່ ແຕ່ເລືອກທີ່ຈະປະຕິບັດເປົ້າຫມາຍທີ່ຊຸດເຈນ ມີລະບົບການລະມັດລະວັງທີ່ບໍ່ເຄັ່ງຄັດ ຫຼື ເຂົ້າໄປໃນການດຳເນີນງານໃນເວລາທີ່ບໍ່ຄາດຄິດ ລະບົບຄວາມປອດໄພຂອງເປົ້າໝາຍບໍ່ໄດ້ຢູ່ໃນສະແຕນບາຍ ພ້ອມເຕັມເປົ້າໝາຍນັ້ນຕ້ອງເປັນເປົ້າໝາຍທີ່ໜ້າສົນໃຈທີ່ສຸດທີ່ມັນສົມຄວນໄດ້ຮັບ.

**ປະເພດຂອງການກໍ່ການຮ້າຍ**

ເຖິງວ່າການກໍ່ການຮ້າຍມີຮູບແບບການເຄື່ອນໄຫວຂ້າມຜ່ານຫຼາຍປະເທດ, ແຕ່ມັນບໍ່ຄ່ອຍມີການເຄື່ອນໄຫວຢູ່ໃນປະເທດດຽວ. ແຕ່ຍັງພຽງພໍທີ່ຈະສາມາດແບ່ງຮູບແບບການກໍ່ການຮ້າຍອອກເປັນ 3 ຊະນິດ.

ການກໍ່ການຮ້າຍໂດຍບໍ່ມີການສະຫນັບສະຫນູນຈາກປະເທດໃດຫນຶ່ງ ປະເພດຂອງການກໍ່ການຮ້າຍນີ້ ຈະເປັນພຽງແຕ່ກຸ່ມນ້ອຍໆຂອງອົງການຈັດຕັ້ງ ດ້ວຍຈິດໃຈຂອງຕົນ ບໍ່ມີຄວາມສຳພັນກັບລັດຖະບານຫຼືລັດໃດໆ. ທ່ານຈຳເປັນຕ້ອງສ້າງພື້ນຖານທຶນຂອງຕົນເອງ. ຫຼືຊອກຫາແຫຼ່ງທຶນສ່ວນຕົວ ຄົນອື່ນໃຊ້ວິທີການລະດົມທຶນເຊັ່ນ: ການລັກລອບ, ການລັກພາຕົວເພື່ອຄ່າໄຖ່, ແລະການຂົ່ມຂູ່, ເຊິ່ງໂດຍທົ່ວໄປແລ້ວອົງການຈັດຕັ້ງກໍ່ການຮ້າຍສ່ວນໃຫຍ່ເລີ່ມຕົ້ນຈາກຈຸດນີ້ເມື່ອພວກເຂົາຖືກສ້າງຕັ້ງຂຶ້ນຄັ້ງທຳອິດ.

ການກໍ່ການຮ້າຍທີ່ສະໜັບສະໜູນໂດຍປະເທດໃດໜຶ່ງ ປະເພດຂອງການກໍ່ການຮ້າຍນີ້ ອົງການຈັດຕັ້ງມີການພົວພັນກັບລັດຖະບານຫຼືປະເທດທີ່ສະຫນອງອາວຸດ, ເງິນທຶນ, ການລີ້ໄພທາງດ້ານການເມືອງ. ລວມທັງຄວາມສະດວກສະບາຍອື່ນໆ ຢ່າງໃດກໍ່ຕາມ, ເຖິງແມ່ນວ່າຈະໄດ້ຮັບການສະຫນັບສະຫນູນຈາກລັດຖະບານຫຼືລັດໃດກໍ່ຕາມ. ລັດຖະບານ ຫຼືລັດຂອງປະເທດນັ້ນ ມັນບໍ່ມີອຳນາດທີ່ຈະຄວບຄຸມການດຳເນີນງານຂອງອົງການ. ສຳລັບລັດທີ່ກ່ຽວຂ້ອງກັບການກໍ່ການຮ້າຍ ຈະຖືກຈຳກັດໃນຮູບແບບການສະຫນັບສະຫນູນທາງດ້ານການເງິນ ການຊ່ວຍເຫຼືອທາງການທະຫານ, ການຝຶກອົບຮົມ ແລະ ອຸດົມການ, ການລິເລີ່ມ, ຄຳແນະນຳການປະຕິບັດ ຫຼື ດຳເນີນການຕົ້ນຕໍໂດຍຜ່ານອົງການຈັດຕັ້ງທີ່ຢູ່ນອກໂຄງສ້າງຂອງລັດຖະບານ

ການກໍ່ການຮ້າຍຢູ່ໃນການຄວບຄຸມຂອງລັດຖະບານ ຫຼື ລັດ. ປະເພດຂອງການກໍ່ການຮ້າຍນີ້ ອົງການຈັດຕັ້ງກໍ່ການຮ້າຍແມ່ນສ່ວນຫນຶ່ງຂອງລັດ. ຫຼືລັດແມ່ນຜູ້ທີ່ປະຕິບັດການກໍ່ການຮ້າຍດ້ວຍຕົນເອງ. ໂດຍຜ່ານກຸ່ມອົງການຈັດຕັ້ງທີ່ຢູ່ນອກໂຄງສ້າງຂອງລັດຖະບານ ນະໂຍບາຍການຕ່າງປະເທດແລະກິດຈະກຳ ທີ່ຈະຄວບຄຸມໂດຍລັດ, ອາວຸດ, ກອງທຶນ, asylum ທາງການເມືອງ ລວມທັງປັດໃຈອຳນວຍຄວາມສະດວກຕ່າງໆ ຈະຖືກສະໜອງໃຫ້ໂດຍລັດຖະບານ ຫຼື ລັດຂອງປະເທດນັ້ນ

**ປັດໄຈທີ່ກ່ຽວຂ້ອງກັບການກໍ່ການຮ້າຍ**

ການກໍ່ການຮ້າຍການຂົນສົ່ງໄດ້ແຜ່ລາມໄປເກືອບທຸກພາກສ່ວນຂອງໂລກ ເນື່ອງຈາກການຂົນສົ່ງທີ່ໄວ ແລະ ມີຫຼາຍວິທີໃຫ້ເລືອກໃນຍຸກປັດຈຸບັນ. ດັ່ງນັ້ນ, ພວກກໍ່ການຮ້າຍຈຶ່ງສາມາດເຄື່ອນຍ້າຍໄປມາໄດ້ງ່າຍ ແລະ ສາມາດນໍາໃຊ້ອຸປະກອນເຄືອຂ່າຍສື່ສານທີ່ທັນສະໄໝ ເພື່ອສົ່ງຂໍ້ມູນ, ບັນຊາ ແລະ ຕິດຕາມຫາຜູ້ກໍ່ການຮ້າຍໄດ້ຍາກ. ການເອື້ອມອອກໄປຫາອົງການກໍ່ການຮ້າຍ ຫຼື ບຸກຄົນອາດຈະຮຽກຮ້ອງໃຫ້ມີການລວບລວມຂໍ້ມູນລັບຈາກຫຼາຍແຫຼ່ງຫຼາຍປີເຊິ່ງບາງຄັ້ງເກືອບບໍ່ມີຜົນຫຍັງເລີຍ

ການຊ່ວຍເຫຼືອຂອງລັດຖະບານ ບາງກຸ່ມກໍ່ການຮ້າຍໃນມື້ນີ້ແມ່ນຜູ້ກໍ່ການຮ້າຍທີ່ມີການຈັດຕັ້ງ. ຫຼືສະຫນັບສະຫນູນໂດຍລັດຖະບານຫຼືລັດຂອງປະເທດຕ່າງໆ ເພື່ອເປັນປະໂຫຍດໃນການປະຕິບັດນະໂຍບາຍການເມືອງໂດຍທໍາມະຊາດຂອງຊາດ ເຫຼົ່ານີ້ມີແນວໂນ້ມທີ່ຈະເປັນປະເທດທີ່ມີກໍາລັງທະຫານອ່ອນແອ. ຫຼືອໍານາດແຫ່ງຊາດບໍ່ເຂັ້ມແຂງ ແລະປະເຊີນໜ້າກັບມະຫາອໍານາດ ຫຼືປະເທດທີ່ເຂັ້ມແຂງ ລວມທັງບັນດາປະເທດທີ່ບໍ່ຕ້ອງການທີ່ຈະດໍາເນີນນະໂຍບາຍທາງດ້ານການເມືອງແລະການທະຫານທີ່ຮຸນແຮງ. ຫຼືກເວັ້ນການປະເຊີນຫນ້າໂດຍກົງ. ເຊິ່ງຈະສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ລະບົບທົ່ວປະເທດ ປະເທດເຫຼົ່ານີ້ແທນທີ່ຈະເລືອກໃຊ້ກໍາລັງກໍ່ການຮ້າຍສໍາລັບພາລະກິດນີ້.

ເສັ້ນທາງການເງິນໝູນວຽນ ສ່ວນຫນຶ່ງຂອງບ່ອນທີ່ການກໍ່ການຮ້າຍເປັນທີ່ນິຍົມ ຫຼື ທາງເລືອກທີ່ຖືກນໍາໃຊ້ເລື້ອຍໆ ເນື່ອງຈາກວ່າການກໍ່ການຮ້າຍບໍ່ແມ່ນສົງຄາມທໍາມະດາ. ແຕ່ມັນເປັນຮູບແບບຂອງສົງຄາມ stealth ມັນເປັນການຍາກສໍາລັບປະເທດຊາດກະທໍາຜິດທີ່ຈະປ້ອງກັນ ແລະ ແກ້ແຄ້ນ ການກໍ່ການຮ້າຍສ່ວນໃຫຍ່ບໍ່ຕ້ອງການເງິນທຶນຈໍານວນຫລາຍ ການກໍ່ການຮ້າຍມີຄ່າໃຊ້ຈ່າຍຫນ້ອຍກ່ວາກິດຈະກໍາຂ້າມຊາດທີ່ຜິດກົດຫມາຍອື່ນໆ. ການຄ້າຢາເສບຕິດ ຫຼືແມ້ກະທັ້ງການຄ້າອາວຸດ ສະນັ້ນມັນບໍ່ຍາກ ເພື່ອເກັບກໍາເງິນພຽງພໍສໍາລັບແຕ່ລະການດໍາເນີນງານ ຕິດຕາມການໄຫຼເຂົ້າຂອງເງິນ ມັນມີຄວາມຫຍຸ້ງຍາກໃນລະບົບເພາະວ່າຜູ້ກໍ່ການຮ້າຍໃຊ້ບັນຊີປອມເພື່ອເຮັດທຸລະກໍາຕ່າງໆ ໃນການເງິນກັບທະນາຄານ ແລະ ສະຖາບັນການເງິນ ບຸກຄົນທີ່ດໍາເນີນທຸລະກໍາແມ່ນພຽງແຕ່ຕົວກາງທີ່ບໍ່ກ່ຽວຂ້ອງກັບລະບົບພາຍໃນຂອງອົງການກໍ່ການຮ້າຍ ແລະ ເງິນທີ່ໄຫຼວຽນຢູ່ໃນລະບົບໃນກໍລະນີຫຼາຍທີ່ສຸດ, ເງິນຈາກກິດຈະກໍາທີ່ຖືກຕ້ອງຖືກລວມເຂົ້າກັບເງິນຈາກກິດຈະກໍາທີ່ຜິດກົດຫມາຍຄວາມສົນໃຈໃນການຕິດຕາມການເຄື່ອນຍ້າຍເງິນນອກລະບົບທະນາຄານແມ່ນບໍ່ເປັນທີ່ສັງເກດເຫັນ.

**2.2 ລັກສະນະການພົວພັນແບບຮ່ວມມື ແລະ ບໍ່ຮ່ວມມື**

ການພົວພັນແບບຮ່ວມມື ເປັນການພົວພັນໃນັກສະນະສ້າງສັນ,ຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ເປັນການພົວພັນທີ່ຕັ້ງຢູ່ບົນພື້ນຖານຄວາມສາມັກຄີ,ຄວາມສະເໝີພາບ ແລະ ຄວາມເປັນທໍາເພື່ອແກ້ໄຂບັນຫາພ້ອມທັງໃຫ້ເກີດຜົນປະໂຫຍດຮ່ວມກັນເຊັ່ນ: ການພົວພັນດ້ານການທູດ,ການຮ່ວມກຸ່ມເປັນພັນທະມິດ ແລະ ການພົວພັນເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ...ສ່ວນຫຼາຍສະແດງອອກໃນຮູບການເຈລະຈາ,ສ້າງອະນຸສັນຍາ ແລະ ຂໍ້ຕົກລົງຕ່າງໆ.

ການພົວພັນບໍ່ຮ່ວມມື ຫຼື ການພົວພັນແບບຂັດແຍ່ງເປັນການພົວພັນທີ່ເກີດຂຶ້ນດ້ວຍຄວາມຕັ້ງໃຈ ຫຼື ບໍ່ຕັ້ງໃຈເຊິ່ງເກີດຂຶ້ນໂດຍຝ່າຍໃດຝ່າຍໜຶ່ງເປັນຜູ້ກະທໍາທີ່ສົ່ງຜົນກະທົບເຖິງອໍານາດ,ສິດອະທິປະໄຕຂອງກຸ່ມຄົນ ຫຼື ຂອງລັດເຊັ່ນ: ການແຊກແຊງທາງການເມືອງ ແລະ ການປົກຄອງ,ການເອົາລັດເອົາປຽບກັນດ້ານໃດດ້ານໜຶ່ງ,ການລວງລະເມີດສິດທິຂອງລັດ ຫຼື ຂອງບຸກຄົນເປັນຕົ້ນ.

**2.3 ລັກສະນະການພົວພັນແບບຮຸນແຮງ**

ມີລັກສະນະຄ້າຍຄືກັນກັບການພົວພັນແບບຂັດແຍ່ງ ແຕ່ຈະມີຄວາມຊັດເຈນກວ່າ,ຮຸນແຮງກວ່າເຊັ່ນ: ການນາບຄູ່ດ້ວຍກໍາລັງປະກອບອາວຸດ,ນາບຂູ່ດ້ວຍການສະກັດກັ້ນທາງດ້ານເສດຖະກິດ,ການເຮັດສົນທິສັນຍາເຂົ້າຮ່ວມຮົບກັບອີກ

ຝ່າຍໜຶ່ງ,ການລ່ວງລະເມີດຂອບເຂດຊາຍແດນຂອງລັດດ້ວຍກຳລັງປະກອບອາວຸດທີ່ກໍ່ໃຫ້ເກີດຄວາມເສຍຫາຍທາງດ້ານຊີວິດ ແລະ ຊັບສິນເຫຼົ່ານີ້ເປັນຕົ້ນ. ແຕ່ຖ້າເບິ່ງໂດຍທົ່ວໄປແລ້ວການພົວພັນສາກົນຈະມີລັກສະນະປົນເປ,ປະສົມປະສານຂຶ້ນກັບລັກສະນະຄວາມຈິງຂອງການພົວພັນ ບາງຄັ້ງກໍ່ມີລັກສະນະທາງການ,ບໍ່ທາງການ,ບໍ່ຮ່ວມມືສະເພາະດ້ານ ຫຼື ຮຸນແຮງ ເພາະວ່າການພົວພັນລະຫວ່າງລັດມັນມີຫຼາຍບັນຫາ,ຫຼາຍຂອບເຂດ ແລະມີຫຼາຍເປົ້າທີ່ແຕກຕ່າງກັນ.

### 3. ຂອບເຂດຂອງການພົວພັນ

ເມື່ອເວົ້າເຖິງການພົວພັນສາກົນສ່ວນຫຼາຍແລ້ວແມ່ນມີຂອບເຂດຄວາມສຳຄັນຂອງບັນຫາພື້ນຖານຂອງສັງຄົມນັ້ນຄື: ການເມືອງ, ເສດຖະກິດ, ສັງຄົມ, ວັດທະນະທຳ, ກົດໝາຍ ແລະ ຄວາມໝັ້ນຄົງບົນພື້ນຖານຄວາມສຳພັນລະຫວ່າງປະເທດ

### 4. ອົງປະກອບຂອງການພົວພັນສາກົນ

ການພົວພັນໃນເວທີສາກົນພື້ນຖານອົງປະກອບຂອງການພົວພັນແມ່ນປະກອບມີຫຼາຍພາກສ່ວນທີ່ກ່ຽວຂ້ອງໂດຍກົງ ຫຼື ໂດຍທາງອ້ອມ ເຊິ່ງແມ່ນການພົວພັນຂອງລັດ,ອົງການລະຫວ່າງປະເທດ,ກຸ່ມບຸກຄົນ ຫຼື ບຸກຄົນທີ່ສ້າງການພົວພັນລະຫວ່າງປະເທດໃຫ້ເກີດຂຶ້ນເຊັ່ນ: ການພົວພັນທາງການທູດທີ່ມີເນື້ອໃນກວມເອົາເສດຖະກິດ-ສັງຄົມ ແລະອື່ນໆກການເຂົ້າຮ່ວມໃນອົງການຈັດຕັ້ງສາກົນ(ກຸ່ມການຈັດຕັ້ງນາໆຊາດ) ເພື່ອຄ້ຳປະກັນສິດຜົນປະໂຫຍດຂອງປະເທດຊາດ,ການພົວພັນກັບອົງການຂ້າມຊາດລັດໄດ້ອະນຸຍາດໃຫ້ອົງການດັ່ງກ່າວເຂົ້າມາເຄື່ອນໄຫວທາງດ້ານທຸລະກິດ,ການຮ່ວມມືທາງດ້ານການຊ່ວຍເຫຼືອຕ່າງໆພາຍໃນກົດກະຕິກາຂອງລັດ. ນອກນີ້ຍັງມີການເຄື່ອນໄຫວຂອງກຸ່ມຄົນ ຫຼື ບຸກຄົນທີ່ເຄື່ອນໄຫວເປັນຜົນກະທົບໃຫ້ແກ່ຄວາມໝັ້ນຄົງ ແລະ ຄວາມປອດໄພຂອງລັດ. ເມື່ອສະຫຼຸບສັງລວມເບິ່ງແລ້ວ ອົງປະກອບຂອງການພົວພັນສາກົນແມ່ນປະກອບມີດັ່ງນີ້: ການພົວພັນລະຫວ່າງລັດກັບລັດ,ລັດກັບອົງການສາກົນ,ລັດກັບອົງການຂ້າມຊາດ ແລະການພົວພົນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນເຫຼົ່ານີ້ເປັນຕົ້ນ.

# ບົດທີ 2
# ການພົວພັນສາກົນໄລຍະກ່ອນສົງຄາມໂລກຄັ້ງທີ 1

## 1. ລັກສະນະການພົວພັນສາກົນກ່ອນສົງຄາມໂລກຄັ້ງທີ 1

ກ່ອນສົງຄາມໂລກຄັ້ງທີ1 ການພົວພັນສາກົນແມ່ນຕົກຢູ່ໃນສະພາວະອານາທິປະໄຕ(ການພົວພັນສາກົນແບບບໍ່ມີຂອບເຂດ) ເຊິ່ງປາສະຈາກກົດກາຕິກາ ຫຼືຂໍ້ກຳນົດໃດໆ,ການເຮັດໃຫ້ສົນທິສັນຍາພົວພັນຕ່າງໆລະຫວ່າງບັນດາປະເທດແມ່ນສ້າງຂຶ້ນບົນພື້ນຖານຂອງຂໍ້ກຳນົດທີ່ຕົກລົງກັນໂດຍບໍ່ຄຳນຶງເຖິງຜົນປະໂຫຍດຕໍ່ກັບກຸ່ມປະເທດອື່ນ. ການພົວພັນໃນໄລຍະນີ້ແມ່ນຕົກຢູ່ໃນໄລຍະລັດທິຊາດນິຍົມພວມຂະຫຍາຍຕົວສູງເຮັດໃຫ້ປະເທດມະຫາອຳນາດຕ່າງໆແຂ່ງຂັນກັນຂະຫຍາຍອານານິຄົມເພື່ອຕົນເອງຈະກ່າວຂຶ້ນເປັນຜູ້ນຳຂອງໂລກ. ສະນັ້ນລັກສະນະຂອງການພົວພັນສາກົນໃນໄລຍະນີ້ຈຶ່ງເຕັມໄປດ້ວຍຄວາມສັບສົນວຸ້ນວາຍ ສ່ວນຫຼາຍແມ່ນເຕັມໄປດ້ວຍຂໍ້ຂັດແຍ່ງ ແລະ ພິພາກກັນ,ສ່ວນການພົວພັນທີ່ມີລັກສະນະຮ່ວມມືແມ່ນມີຈຸດປະສົງເພື່ອຮັກສາໄວ້ເຊິ່ງສິດຜົນປະໂຫຍດ ແລະ ອຳນາດຂອງຕົນເອງ,ການພົວພັນທາງການສ່ວນໃຫຍ່ເປັນການພົວພັນແບບລັບ,ການພົວພັນແບບນີ້ແມ່ນເກີດຂຶ້ນຈາກຫຼາຍປັດໄຈດັ່ງລຸ່ມນີ້

## 2.ປັດໄຈທີ່ພາໃຫ້ການພົວພັນສາກົນເກີດຂຶ້ນ

### 2.1 ການສະແຫວງຫາອານານິຄົມຂອງປະເທດມະຫາອຳນາດ

ການແຂ່ງຂັນກັນລ່າຫົວເມືອງຂຶ້ນເພື່ອຂະຫຍາຍອານານິຄົມຂອງພວກຈັກກະພັດຕາເວັນຕົກເປັນປັດໄຈໜຶ່ງທີ່ນຳໄປສູ່ສົງຄາມ.ໃນທ້າຍສະຕະວັດທີ່XIXບັນດາປະເທດຕາເວັນຕົກໂດຍສະເພາະແມ່ນພວກເອີຣົບໄດ້ທຳການສະແຫວງຫາອານານິຄົມເພື່ອຊອກຕະຫຼາດຈຳໜາຍສິນຄ້າ,ແຫຼ່ງວັດຖຸດິບ ແລະ ແຮງງານໃນການຜະລິດ ເຮັດໃຫ້ເກີດຂໍ້ຂັດແຍ່ງລະຫວ່າງປະເທດໂດຍສະເພາະແມ່ນຂໍ້ຂັດແຍ່ງລະຫວ່າງປະເທດມະຫາອຳນາດໃໝ່ໄດ້ແກ່: ປະເທດເຢຍລະມັນ ,ອິຕາຫຼີກັບມະຫາອຳນາດເກົ່າໄດ້ແກ່: ປະເທດຝຣັ່ງ ແລະ ອັງກິດ,ສ່ວນໃຫຍ່ແມ່ນການຂັດແຍ່ງດິນແດນໃນທະວີບອາຟຣິກາເພາະເປັນເຂດທີ່ມີເສດຖະກິດໜ້ອຍຖ້າທຽບໃສ່ເຂດອື່ນໆ. ສາເຫດຂອງການຂັດແບ່ງລະຫວ່າງມະຫາອຳນາດເກົ່າ ແລະ ມະຫາອຳນາດໃໝ່ເນື່ອງພາຍຫຼັງທີ່ປະເທດອິຕາລີ ແລະ ເຢຍລະມັນຮ່ວມຊາດແລ້ວພວກເຂົາຈຶ່ງໄດ້ດຳເນີນການພັດທະນາປະເທດຊາດໃຫ້ຂະຫຍາຍຕົວຢ່າງວ່ອງໄວ ແຕ່ພັດມີຫົວເມືອງຂຶ້ນ ແລະ ອານານິຄົມໜ້ອຍດັ່ງນັ້ນ ເຢຍລະມັນ ແລະ ອິຕາລີຈຶ່ງເກີດຄວາມບໍ່ພໍໃຈ ແລະ ຕ້ອງການສ່ວນແບ່ງຈາກຕະຫຼາດດ,ແຫຼ່ງວັດຖຸດິບຄືນໃໝ່ຈາກມະຫາອຳນາດເກົ່າໃຫ້ມີຄວາມກຳເກົ່ງກັນ ເຊິ່ງເປັນການແຕະຕ້ອງເຖິງສິດຜົນປະໂຫຍດຂອງຝຣັ່ງ ແລະ ອັງກິດ ຈາກການແຂ່ງຂັນດັ່ງກ່າວນີ້ເຮັດໃຫ້ຂໍ້ຂັດແຍ່ງລະຫວ່າຊາດເພີ່ມຂຶ້ນກ້າວໄປເຖິງການເຮັດສົງຄາມ.

### 2.2 ການສະສົມກຳລັງພົນ ແລະ ກຳລັງອາວຸດ

ການສະສົມກຳລັງພົນ ແລະ ກຳລັງອາວຸດແມ່ນເນື່ອງມາຈາກພວກທີ່ສວຍໂອກາດຫາກຳໄລຈາກການເຮັດສົງຄາມຫຼືຄວາມກັງວົນຢ້ານສົງຄາມເກີດຂຶ້ນເນື່ອງຈາກບັນຫາຂໍ້ຂັດແຍ່ງຕ່າງໆຂອງບັນດາປະຊາຊາດໃນໂລກ ຊຶ່ງບໍລິສັດຜະລິດອາວຸດຫຼາຍແຫ່ງໃນໂລກໄດ້ຍາດໂອກາດໃນການຜະລິດອາວຸດເຊັ່ນ: ບໍລິສັດກຣຸບຂອງເຢຍລະມັນ ແລະ ບໍລິສັດເກີຊິດຂອງຝຣັ່ງ ພວກເຂົາໄດ້ສົ່ງເສີມສ້າງໃຫ້ມີການສ້າງກອງກຳລັງທະຫານທາງບົກ ແລະ ທາງນ້ຳ ບັນຫານີ້ເຊິ່ງເກີດມາຈາກຄວາມຢ້ານກົວວ່າຈະຖືກຊາດອື່ນຮຸກຮານ.ດັ່ງນັ້ນເຢຍລະມັນຈຶ່ງຕັດສິນໃຈສ້າງກອງທັບເຮືອເພື່ອແຂ່ງກັບອັງກິດເຊິ່ງມີເຮືອຮົບ 41 ລຳ,ເຮືອລາດຕະເວນຂະໜາດໃຫຍ່ 20 ລຳ;ສ່ວນອັງກິດກໍປັບປຸງກອງທັບເຮືອຂອງຕົນໃຫ້ເຂັ້ມແຂງກ່ວາເກົ່າຈົນກາຍເປັນກອງທັບເຮືອທີ່ໃຫຍ່ທີ່ສຸດ. ໃນປີຄ.ສ 1905-1906 ອັງກິດໄດ້ສຳເລັດການສ້າງເຮືອຮົບທີ່ໃຫຍ່ທີ່ສຸດເອີ້ນວ່າ: ເດຣດນອດ ເຊິ່ງເປັນເຮືອຮົບຂະໜາດໃຫຍ່ ແລະ ທັນສະໄໝ,ຕິດຕັ້ງອາວຸດຄົບຊຸດ ມີລາຄາແພງ ແລະ ມີມູນຄ້າເຖິງ

1.784.000 ປອນ ເພື່ອປະເຊີນໜ້າກັບເຢຍລະມັນ, ກ່ອນສົງຄາມຈະເກີດຂຶ້ນຝຣັ່ງ ແລະ ເຢຍລະມັນໄດ້ເພີ່ມກຳລັງໂດຍສະເພາະກອງທັບບົກ. ນອກຈາກນີ້ແລ້ວບັນດາປະເທດຕ່າງໆທີ່ຢູ່ໃນອ້ອມຂ້າງປະເທດມະຫາອຳນາດກໍ່ເກີດມີຄວາມຢ້ານກົວ ແລະ ສັ່ງຊື້ອາວຸດຈນກບໍລິສັດຜະລິດອາວຸດເປັນຈຳນວນຫຼວງຫຼາຍເພື່ອມາປ້ອງກນການຮຸກຮານຈາກສັດຕູ ສິ່ງດັ່ງກ່າວນີ້ເປັນການຂົ່ມຂູ່ເຮັດໃຫ້ເກີດມີຄວາມສົງໄສເຊິ່ງກັນ ແລະ ກັນ.

**2.3 ການກຳເນີດລັດທິຊາດນິຍົມ**

ໃນທ້າຍສະຕະວັດທີ່XIX ຄວາມຮູ້ສຶກເປັນຊາດນິຍົມກຳລັງເຕີມໃຫຍ່ຂະຫຍາຍຕົວຂຶ້ນຢ່າງໄວວາ ມີການຮ່ວມຊາດເກີດຂຶ້ນໂດຍສະເພາະແມ່ນອີຕາລີ ແລະ ເຢຍລະມັນ.ຄວາມຮູ້ສຶກເປັນຊາດນິຍົມເປັນທິດສະດີໜຶ່ງຂອງຊາວໂລກພວມໃຫ້ຄວາມສົນໃຈ ມັນເປັນຄວາມນິຍົມຄວາມເປັນຊາດຂອງຕົນເອງ ແລະ ຕ້ອງການໃຫ້ຊາດຕົນເປັນຊາດທີ່ຫຍິ່ງໃຫຍ່ຈົນມີຄຳຂັວນທີ່ວ່າ: ປະເທດຂອງເຮົາບໍ່ວ່າຈະຜິດ ຫຼື ຖືກ,ຈະຮັ່ງມີ ຫຼື ທຸກຍາກພວກເຮົາກໍ່ຕ້ອງການປົກຄອງດ້ວຍຕົນເອງດີກວ່າຈະເປັນຄົນລວຍແຕ່ຢູ່ໃນອິດທິພົນຂອງຝຣັ່ງ ແລະ ເຢຍລະມັນ. ນີ້ເປັນຄຳຂັວນຂອງບັນດາປະຊາຊາດທີ່ຕົກຢູ່ໃຕ້ການປົກຄອງຂອງມະຫາອຳນາດຕາເວັນຕົກເພື່ອປຸກລະດົມໃຫ້ມີການຕໍ່ຕ້ານ ແລະ ສ້າງຊາດດ້ວຍຕົນເອງ.

**2.4ການຮ່ວມກຸ່ມກັນຂອງມະຫາອຳນາດ**

**2.4.1 ກຸ່ມສົນທິສັນຍາໄຕມິດ (Triple Alliance)**

ກຸ່ມສົນທິສັນຍາໄຕຣມິດ (ກຸ່ມສຳພັນທະມິດ) ຖືກສ້າງຕັ້ງຂຶ້ນໃນວັນທີ 20 ພຶດສະພາ ປີ ຄ.ສ 1883. ໃນເບື້ອງຕົ້ນມີ 3 ປະເທດຄື : ເຢຍລະມັນ, ໂອຕຣິດ-ຮົງກາລີ ແລະ ອີຕາລີ, ໄລຍະຕໍ່ມາຈຶ່ງມີປະເທດບູນກາລີ ແລະ ປະເທດຕວກກີເຂົ້າຮ່ວມ ໃນການເຂົ້າຮ່ວມສົນທິສັນຍາໄຕຣມິດຂອງແຕ່ລະປະເທດຕ່າງກໍມີຈຸດປະສົງສະເພາະຂອງຕົນເອງເຊັ່ນ :

- ເຢຍລະມັນ : ມີຄວາມຕ້ອງການທີ່ຈະເປັນມະຫາອຳນາດຊັ້ນນຳໃນທະວີບເອີຣົບ, ມີເປົ້າໝາຍທຳລາຍການຮຸກຮານຂອງຝ່າຍຕຣີມິດ, ທຳລາຍວົງປິດລ້ອມຂອງຝຣັ່ງ ແລະ ຣັດເຊຍ ເຊິ່ງເປັນແຫຼ່ງຊັບພະຍາກອນທີ່ສຳຄັນໃຫ້ເຢຍລະມັນ
- ໂອຕຣິດ-ຮົງກາລີ : ມີເຈດຈຳນົງທີ່ຈະທຳລາຍແຊກບີ ເຊິ່ງເປັນຕົວການເຮັດໃຫ້ຊົນກຸ່ມນ້ອຍໃນໂອຕຣິດ-ຮົງກາລີເຄື່ອນໄຫວເພື່ອແຍກຕົວອອກເປັນເອກະລາດ.
- ຕວກກີ : ຫວັງໄດ້ຮັບການຄຸ້ມຄອງຈາກກຸ່ມໄຕຣມິດເພື່ອຕໍ່ຕ້ານການຂະຫຍາຍອິດທິພົນຂອງຣັດເຊຍ
- ບູນກາລີ : ແມ່ນຕ້ອງການຢາກລ້າງແຄ້ນແຊກບີ ເຊິ່ງຜູ້ນຳປະເທດຕ່າງໆໂຈມຕີຕົນໃນລະຫວ່າງສົງຄາມແຫຼມບານກັງຄັ້ງທີ 2 ແລະ ຕ້ອງການດິນແດນຈາກເກຣັກ ແລະ ແຊກບີ. ການທີ່ບູນກາລີເຂົ້າເປັນຝ່າຍສົນທິສັນຍາໄຕຣມິດນັບວ່າມີຄວາມສຳຄັນຢ່າງຫຼວງຫຼາຍ, ນັບວ່າເປັນໄຊຊະນະທາງຍຸດທະສາດ ແລະ ຊ່ວຍໃຫ້ສົນທິສັນຍາໄຕຣມິດສາມາດຄວບຄຸມເສັ້ນທາງຍຸດທະສາດຈາກກຸ່ມແບກແລັງເຖິງກຸງກົງສະຕັງຕີນົບ ແລະ ແບກແດັດ ໄດ້ໂດຍປາສະຈາກອຸປະສັກກີດຂວາງ.

ເວົ້າລວມແລ້ວຈຸດປະສົງຂອງກຸ່ມສົນທິສັນຍາໄຕມິດແມ່ນເພື່ອຂັດຂວາງການຂະຫຍາຍອຳນາດຂອງຣັດຊຍທີ່ຂະຫຍາຍອຳນາດໄປສູ່ຊອງແຄບບົດສະຟໍ (Bosfore) ແລະ ຊອງແຄບດາກດາແນນ(Dardanelles)ເພື່ອທຳລາຍແອກຄອບຄອງຂອງອັງກິດໃນເອຢິບ ແລະໄຊປຣັດ.

2.4.2 **ກຸ່ມສົນທິສັນຍາຕຣີມິດ(TripleEntente)**

ກຸ່ມສົນທິສັນຍາຕຣີມິດ(ກຸ່ມສັນຍາ)ທີ່ສ້າງຂຶ້ນໃນປີ ຄ.ສ 1907 ເບື້ອງຕົ້ນມີ 3 ປະເທດເຂົ້າຮ່ວມຄື: ຝຣັ່ງ,ອັງກິດ ແລະ ຣັດເຊຍ.ຫຼັງຈາກນັ້ນຈຶ່ງມີປະເທດອີຕາລີ,ຍີ່ປຸ່ນ,ອາເມຣິກາເຂົ້າຮ່ວມໃນໄລຍະຕໍ່ມາເຊິ່ງແຕ່ລະປະເທດກໍ່ມີຈຸດປະສົງທີ່ແຕກຕ່າງກັນຄື:-- ອັງກິດ: ມີຄວາມຕ້ອງການຈະຮັກສາເອກະລາດ ແລະ ຄວາມເປັນກາງຂອງແບນຊິກ

ໄວ້ເພື່ອຄວາມໝັ້ນຄົງປອດໄພຂອງອັງກິດ.ດັ່ງນັ້ນອັງກິດຈຶ່ງຕ້ອງທຳລາຍນະໂຍບາຍຄວາມເປັນມະຫາອຳນາດຂອງເຢຍຣະມັນ,ນອກຈາກນີ້ອັງກິດຍັງຖືວ່າເປັນໜ້າທີ່ສຳຄັນຈະຕ້ອງຕໍ່ຕ້ານກຸ່ມສົນທິສັນຍາໄຕມິດເພື່ອດຳລົງຮັກສາການປົກຄອງແບບປະຊາທິປະໄຕໄວ້.

- ຣັດເຊຍ: ມີຈຸດປະສົງຢາກປົກປອງແຊກບີ ແລະ ຫວັງເຂົ້າຄອບຄອງຊອງແຄບບົດສະຟໍ ແລະ ດາກດາແນນເພື່ອຫາທາງອອກສູ່ທະເລ. ພ້ອມທັງໂຮມເອົາໂປໂລຍທັງໝົດເຂົ້າໃນການປົກຄອງຂອງຕົ້ນເພື່ອໃຊ້ເປັນແນວທາງກຳບັງເຢຍຣະມັນ.
- ຝຣັ່ງ: ມີຄວາມຕ້ອງການກຳຈັດອຳນາດຂອງເຢຍຣະມັນເພື່ອຄວາມປອດໄພຂອງຝຣັ່ງ.ນອກຈາກນີ້ຍັງມີຄວາມຫວັງທີ່ຈະໄດ້ເຂດອານຊັດ-ລໍແລນຈາກເຢຍຣະມັນຄືນ.
- ອີຕາລີ: ພາຍຫຼັງແຍກຕົວອອກຈາກກຸ່ມໄຕມິດ ແລະ ລົງສົນທິສັນຍາລອນດອນກັບຝ່າຍຕຣີມິດໃນປີ ຄ.ສ 1915 ມີຈຸດປະສົງຈະໄດ້ດິນແດນບາງສ່ວນທີ່ຂຶ້ນກັບຕວກກີຄືນ.
- ຍີ່ປຸ່ນ: ເຂົ້າຂ້າງຝ່າຍຕຣີມິດເນື່ອງຈາກໄດ້ເຮັດສົນທິສັນຍາໄວ້ໃນປີ ຄ.ສ 1902ທີ່ມີຄວາມຫວັງຈະໄດ້ຜົນປະໂຫຍດອື່ນໆຂອງເຢຍຣະມັນໃນປະເທດຈີນ.
- ອາເມລິກາ: ເຂົ້າຮ່ວມສົງຄາມໃນປີ ຄ.ສ 1917ເພື່ອຈຸດປະສົງຮັກສາການປົກຄອງແບບປະຊາທິປະໄຕໃຫ້ໝັ້ນຄົງ ແລະ ຢາກມີສ່ວນແບ່ງໃນສົງຄາມ.

**ສະຫຼຸບ:** ຈຸດປະສົງຂອງການຮ່ວມກຸ່ມຂອງມະຫາອຳນາດຫຼັກໆກໍ່ເພື່ອຮັກສາສິດຜົນປະໂຫຍດຮ່ວມກັນ ແລະຂັດຂວາງກັບບັນດາກຸ່ມທີ່ມີສິດຜົນປະໂຫຍດຂັດກັນ ເຊິ່ງມັນເປັນປັດໄຈໜຶ່ງທີ່ກໍ່ໃຫ້ເກີດຂໍ້ຂັດແຍ່ງກັນເພີ່ມຂຶ້ນ ແລະກ້າວໄປຫາການເຮັດສົງຄາມ.

# ບົດທີ 3
# ການພົວພັນສາກົນລະຫວ່າງສົງຄາມໂລກຄັ້ງທີ I

ສະພາບການຂອງໂລກກ່ອນສົງຄາມໂລກ ຄັ້ງທີ I ເປັນສະພາບຂອງການແຂ່ງຂັນກັນ ເພື່ອຂະຫຍາຍອານາດ ແລະ ດິນແດນໄວ້ໃນຄອງຄອງຂອງຊາດມະຫາອຳນາດ ໂດຍສະເພາະນັບຕັ້ງແຕ່ ອີຕາລີ ແລະ ເຢຍລະມັນປະສົບຜົນສຳເລັດໃນການໂຮມປະເທດໃນປີຄ.ສ 1821 ແລະ 1870 ສິ່ງຜົນເຮັດໃຫ້ສອງປະເທດມີກຳລັງທີ່ເຂັ້ມແຂງເທົ່າທຽບກັບບັນດາປະເທດມະຫະອຳນາດອື່ນໃນຂະນະນັ້ນ ດິນແດນທີ່ວີບອາຟຣິກາ ແລະ ມະຫາສະໝຸດ ແລະ ແຂ່ງຂັນກັບກັບມະຫາອຳນາດອື່ນໆຢ່າງຈິງຈັງ

**ກ. ອັງກິດ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຟຣິກກາເປັນອານານິຄົມເຊັ່ນ: ໄນຈີເລຍ: ສະຫະພາບອາຟຣິກາ, ອູກັນດາ,ໂຊມາລີ ແລະ ອື່ນໆອີກ ນອກຈາກນີ້ຍັງມີດິນແດນໃນແຖບມະຫາສະໝຸດປາຊີຟິກຫຼາຍແຫ່ງ.

**ຂ. ຝຣັ່ງ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຟຣິກກາເປັນອານານິຄົມເຊັ່ນ: ອານເຊຣີ, ກົງໂກ, ເກາະມາດາກັດສກາ ແລະ ອື່ນໆ ນອກຈາກນີ້ຍັງມີດິນແດນໃນແຖບມະຫາສະໝຸດປາຊີຟິກຫຼາຍແຫ່ງໄວ້ຄອບຄອງ.

**ຄ. ເຢຍລະມັນ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຟຣິກາເປັນອານານິຄົມເຊັ່ນ: ອາຟຣິກາຕາເວັນຕົກສຽງໃຕ້, ກາເມີຣຸນ ແລະ ແຂ່ງຂັນກັບຝຣັ່ງໃນການຂະຫຍາຍອານານິຄົມໄປຍັງດິນແດນປະເທດມາຣົກທີ່ຍັງເປັນເອກະລາດ. ນອກນັ້ນ ເຢຍລະມັນຍັງໄດ້ດິນແດນແຖບມະຫະສະໝຸດປາຊີຟິກເຊັ່ນ: ໝູເກາະມາກແຊນ, ຄາໂລໄຣ , ມາເຣຍນາ, ບິດສມາດ, ນິວກີນີຕາເວັນຕົກໄວ້ໃນຄອບຄອງ.

**ງ. ອິຕາລີ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຟຣິກກາໜ້ອຍກວ່າມະຫະອຳນາດອື່ນເປັນອານານິຄົມຄື: ລີບີໄວ້ໃນຄອບຄອງ. ດັ່ງນັ້ນ, ອິຕາລີຈຶ່ງຕ້ອງການດິນແດນໃນພາກສ່ວນອື່ນໆອີກທີ່ບໍ່ໄດ້ເປັນຂອງມະຫາອຳນາດໃດມາເປັນອານານິຄົມເຊັ່ນ: ເອເທໂອບີ,ໂຊມາລີ ນອກຈາກນັ້ນ ອິຕາລີ ຍັງພະຍາຍາມຂຫຍາຍອິດທິພົນຂອງຕົນໄປຍັງຂົງເຂດຕາເວັນອອກກາງ ເຊິ່ງເປັນເຂດອິດທິພົນຂອງຈັກກະພັກໂອໂຕມານ ເຊິ່ງເປັນເປົ້າໝາຍແຊກແຊງຈັກກະພັດອັງກິດ, ຝຣັ່ງ ແລະ ຣັດເຊຍມາກ່ອນແລ້ວ .

**ຈ. ຍີປຸ່ນ:** ເປັນປະເທດປະເທດດຽວໃນທະວີບອາຊີ ທີ່ມີການພັດທະນາທາງດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງວ່ອງໄວ ແລະ ກໍ່ພະຍາມຍາມທີ່ຈະສະແຫວງຫາຫົວເມືອງຂຶ້ນຄືກັນບັນດາປະເທດອື່ນໆ. ໃນເວລາທີ່ເຢຍລະມັນ ແລະ ອິຕາລີແຂ່ງຂັນກັບອັງກິດ, ຝຣັ່ງ ໃນການຊອກຫາອານານິຄົມ ແລະ ຕະຫຼາດການຄ້ານັ້ນ, ຍີ່ປຸ່ນເປັນປະເທດດຽວທີ່ກາຍມາເປັນປະເທດມະຫາອຳນາດໃນອາຊີ ຫຼັງຈາກສູ້ຣົບກັບຈີນຊະນະ ໃນປີ ຄ.ສ 1905 ເຮັດຍີປຸ່ນໄດ້ດິນແດນເພີ່ມຂຶ້ນຄື: ເກາະສະຕາລິນຕອນໃຕ້ ຈາກລັດເຊຍ. ຫຼັງຈາກນັ້ນ ຍີ່ປຸ່ນກໍ່ຂະຫຍາຍດິນແດນເຂົ້າໄປໃນເກົາຫຼີ ແລະ ເຂດແມນຈູລີຂອງຈີນ.

**ສ. ສະຫະລັດອາເມລິກາ** ກໍເປັນມະຫາອຳນາດອີກປະເທດໜຶ່ງ ທີ່ພະຍາຍາມຂະຫຍາຍອິດທິພົນເຂົ້າຄອບຄອງດິນແດນໃນພາກສ່ວນອື່ນໆຂອງໂລກ ເຊັ່ນ: ອາເມຣິກາລາຕິນ, ໝູ່ເກາະໃນມະຫາສະໝຸດປາຊີຟິກ ໄດ້ແກ່ ໝູ່ເກາະຮາຍອາຍ, ຟີລິບປິນ ແລະ ອື່ນໆ. ຫຼັງຈາກຣົບຊະນະສະເປນ ຫຼື ປະເທດແອັດສະປາຍ ໃນປີ ຄ.ສ 1899 ອາເມຣິກາກໍ່ໄດ້ເກາະຟີລິບປິນເປັນອານານິຄົມ ແລະ ໃຊ້ເປັນຖານທີ່ໝັ້ນໃນການຂະຫຍາຍການຄ້າເຂົ້າສູ່ປະເທດຈີນ.

ສັງລວມແລ້ວ ເຫດການຂອງໂລກໃນຊ່ວງກ່ອນເກີດສົງຄາມໂລກຄັ້ງທີ 1 ນັ້ນເປັນປະກົດການແຫ່ງການແຂ່ງຂັນສະແຫວງຫາອານານິຄົມ ແລະ ຂະຫຍາຍອິດທິພົນຂອງປະເທດມະຫາອຳນາດເຊິ່ງສົ່ງຜົນໃຫ້ສະຖານະການຂອງໂລກຕົກຢູ່ໃນສະພາບ ອານາທິປະໄຕລະຫວ່າງຊາດ ໂດຍທີ່ກົດໝາຍລະຫວ່າງຊາດບໍ່ສາມາດຢັບຢັ້ງປະເທດມີຫາອຳນາດໃຊ້ສົງຄາມເປັນເຄື່ອງໃນການຂະຫຍາຍດິນແດນ ແລະ ອິດທິພົນ. ສຸດທ້າຍກໍ່ກ່າວໄປສູ່ການຈັດຕັ້ງກຸ່ມຮ່ວມມືຂຶ້ນເພື່ອຜົນ

ປະໂຫຍດທາງດ້ານການເມືອງ ແລະ ການທະຫານ ເພື່ອບໍໃຫ້ຕົນເອງຢູ່ໂດດດ່ຽວ ແລະ ຕ້ອງປະເຊີນກັບຄູ່ແຂ່ງຂັນຕາມລຳພັນ ເຊັ່ນ: ໃນປີ ຄ.ສ 1882 ເຢຍລະມັນ, ໂອຕຣິດ-ຮົງກາລີ ແລະ ອິຕາລີ ໄດ້ຈັດຕັ້ງກຸ່ມສຳພັນ 3 ປະເທດຂຶ້ນເອີ້ນວ່າ: ກຸ່ມສົນທິສັນຍາໄຕຣມິດ . ໃນປີຄ.ສ 1907 ອັງກິດ, ຝຣັ່ງ ແລະ ຣັດເຊຍ ໄດ້ຈັດຕັ້ງກຸ່ມສັນຍາ 3 ປະເທດຂຶ້ນ ເອີ້ນວ່າ ກຸ່ມສົນທິສັນຍາຕຣີມິດ ກ ການສ້າງຕັ້ງກຸ່ມການເມືອງນີ້ ໄດ້ກໍ່ໃຫ້ເຮັດໃຫ້ເກີດຄວາມເຄັ່ງຕຶງລະຫວ່າງປະເທດຂຶ້ນໃນເອີຣົບທີ່ມີລັກສະນະກຍມພ້ອມກ້າວສູ່ສົງຄາມ.

## 1. ສາເຫດຂອງສົງຄາມໂລກຄັ້ງທີ 1

ປັດໃຈ ຫຼື ສາເຫດພາໃຫ້ເກີດມີສົງຄາມຈາກຫຼາຍສາເຫດ ແຕ່ສາມາດສັງລວມໄດ້ສາເຫດໃຫຍ່ຄື:

### 1.1 ການສະແຫວງຫາອານານຸຄົມຂອງປະເທດມະຫາອຳນາດ

ການສະແຫວງຫາອານານິຄົມຂອງປະເທດມະຫາອຳນາດການແຂ່ງຂັນກັນລ່າຫົວເມືອງຂຶ້ນ ເພື່ອຂະຫຍາຍອານານິຄົມຂອງພວກຈັກກະພັດຕາເວັນຕົກເປັນປັດໄຈໜຶ່ງທີ່ນຳໄປເຖິງການເຮັດສົງຄາມ. ໃນສັດຕະວັດທີ XX ບັນດາ ປະເທດຕາເວັນຕົກ ໂດຍສະເພາະແມ່ນພວກເອີຣົບໄດ້ທຳການການສະແຫວງຫາອານານິຄົມເພື່ອຊອກຕະຫຼາດຈຳໜ່າຍສິນຄ້າ, ແຫຼ່ງວັດຖຸດິບ ແລະ ແຮງງານໃນການຜະລິດເຮັດໃຫ້ເກີດຂໍ້ຂັດແຍ່ງລະຫ່ວາງ ປະເທດໂດຍສະເພາະແມ່ນຂໍ້ຂັດແຍ່ງຂອງປະເທດມະຫາອຳນາດໃໝ່ໄດ້ແກ່: ປະເທດເຢຍລະມັນ, ອິຕາລີ ກັບ ມະຫາອຳນາດເກົ່າ ໄດ້ແກ່ ປະເທດຝຣັ່ງ ແລະອັງກິດ; ສ່ວນແມ່ນການຍາດແຍ່ງດິນແດນຢູ່ທະວີບອາຟຣິກາ ເພາະເປັນເຂດທີ່ມີເສດຖະກິດໜ້ອຍຖ້າທຽບໃສ່ເຂດອື່ນໆ. ສາເຫດຂອງຂໍ້ຂັດແຍ່ງລະຫວ່າງມະຫາອຳນາດເກົ່າ ແລະ ມະຫາອຳນາດໃໝ່ ເນື່ອງຈາກພາຍຫຼັງອິຕາລີ ແລະເຢຍລະມັນຮ່ວມຊາດສຳເລັດແລ້ວ ພວກເຂົາຈຶ່ງໄດ້ດຳເນີນການພັດທະນາປະເທດຊາດໃຫ້ຂະຫຍາຍຢ່າງໄວວາ ແຕ່ພັດມີຫົວເມືອງຂຶ້ນ ແລະ ອານານິຄົມໜ້ອຍ. ດັ່ງນັ້ນ, ເຢຍລະມັນ ແລະ ອິຕາລີຈຶ່ງເກີດຄວາມບໍ່ພໍໃຈ ແລະ ຕ້ອງການສ່ວນແບ່ງທາງດ້ານການຕະຫຼາດ, ແຫຼ່ງວັດຖຸດິບຄືນໃໝ່ຈາກມະຫາອຳນາດເກົ່າໃຫ້ມີຄວາມກໍ້າກຶ່ງກັນເຊິ່ງເປັນການແຕະຕ້ອງເຖິງສິດຜົນປະໂຫຍດຂອງຝຣັ່ງ ແລະ ອັງກິດ ຈາກການແຂ່ງຂັນດັ່ງກ່າວນີ້ເຮັດໃຫ້ຂໍ້ຂັດແຍ່ງຊາດເພີ່ມຂຶ້ນກ້າວໄປເຖິງການເຮັດສົງຄາມ.

### 1.2 ການກຳເນີດລັດທະຊາດນິຍົມ

**ການກຳເນີດລັດທິຊາດນິຍົມ**

ໃນທ້າຍສັດຕະວັດທີ XIXຄວາມຮູ້ສຶກເປັນຊາດນິຍົມກຳລັງເຕີບໃຫຍ່ຂະຫຍາຍຕົວຂຶ້ນຢ່າງໄວວາ ມີການຮ່ວມຊາດເກີດຂຶ້ນ ໂດຍສະເພາະແມ່ນອິຕາລີ ແລະ ເຢຍລະມັນ. ຄວາມຮູ້ສຶກເປັນຊາດນິຍົມ ເປັນທິດສະດີໜຶ່ງທີ່ຊາວໂລກພວມໃຫ້ຄວາມສົນໃຈ ມັນເປັນຄວາມນິຍົມຄວາມເປັນຊາດຂອງຕົນເອງ ແລະ ຕ້ອງການໃຫ້ຊາດຕົນມີຄວາມຍິ່ງໃຫຍ່ ຈົນມີຄຳຂວັນທີ່ວ່າ ປະເທດຂອງເຮົາບໍ່ວ່າຈະຜິດ ຫຼື ຖືກ, ຈະຮັ່ງມີ ຫຼື ທຸກຍາກພວກເຮົາກໍ່ຕ້ອງການປົກຄອງດ້ວຍຕົນເອງດີກ່ວາຈະເປັນຄົນລອຍ ແຕ່ຢູ່ໃຕ້ອິດທິພົນຂອງຝຣັ່ງ ແລະ ເຢຍລະມັນ ນີ້ເປັນຄຳຂ້ວນຂອງບັນດາປະຊາຊາດທີ່ຕົກຢູ່ໃຕ້ການປົກຄອງຂອງມະຫາອຳນາດຕາເວັນຕົກ ເພື່ອປຸກລະດົມໃຫ້ມີການລຸກຮື້ຂຶ້ນຕໍ່ຕ້ານ ແລະ ສ້າງຊາດດ້ວຍຕົນເອງ.

### 1.3 ການຮ່ວມກຸ່ມພັນທະມິດຂອງປະເທດມະຫາອຳນາດ

**ການສະສົມກຳລັງພົນ ແລະ ກຳລັງອາວຸດ**

ການສະສົມກຳລັງພົນ ແລະ ກຳລັງອາວຸດແມ່ນເນື່ອງມາຈາກພວກທີ່ສວຍໂອກາດຫາກຳໄລຈາກການເຮັດສົງຄາມ ຫຼືຄວາມກັງວົນຢ້ານສົງຄາມຈະເກີດຂຶ້ນ ເນື່ອງຈາກບັນຫາຂໍ້ຂັດແຍ່ງຕ່າງໆຂອງບັນດາປະຊາຊາດໃນໂລກ ເຊິ່ງບໍລິສັດຜະລິດຫຼາຍແຫ່ງໃນໂລກໄດ້ຍາດໂອກາດໃນການຜະລິດອາວຸດ ເຊັ່ນ ບໍລິສັດກຣຸບ ຂອງເຢຍລະມັນ ແລະ ບໍລິສັດເກີຊິດຂອງຝຣັ່ງ ພວກເຂົາໄດ້ສົ່ງເສີມໃຫ້ມີການສ້າງກອງກຳລັງທະຫານທາງບົກ ແລະ ທາງນ້ຳ ບັນຫານີ້ເກີດມາຈາກຄວາມຢ້ານ

ກໍວ່າຈະຖືກຊາດອື່ນຮຸກຮານ. ດັ່ງນັ້ນ, ເຢຍລະມັນຈຶ່ງຕັດສິນໃຈສ້າງກອງທັບເຮືອ ເພື່ອແຂ່ງກັບອັງກິດ ເຊິ່ງມີເຮືອສູ້ຮົບ 41 ລຳ, ເຮືອລາດຕາເວນຂະໜາດໃຫຍ່ 20ລຳ ສ່ວນອັງກິດເອງກໍປັບປຸງກອງທັບເຮືອຂອງຕົນໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ ຈົນກາຍເປັນກອງທັບເຮືອທີ່ໃຫຍ່ສຸດ. ໃນປີ ຄ.ສ 1905-1906 ອັງກິດໄດ້ສຳເລັດການສ້າງເຮືອຮົບທີ່ໃຫຍ່ສຸດເອີ້ນວ່າ: ດເຣດນອດ ເຊິ່ງເປັນເຮືອຮົບຂະໜາດໃຫຍ່ ແລະ ທັນສະໃໝ່, ຕິດຕັ້ງອາວຸດຄົບຊຸດ ມີລາຄາແພງ ແລະ ມີມູນຄ່າເຖິງ 1.784.000 ປອນ ເພື່ອປະເຊີນໜ້າກັບເຢຍລະມັນກ່ອນສົງຄາມຈະເກີດຂຶ້ນຝຣັ່ງ ແລະ ເຢຍລະມັນໄດ້ເພີ່ມກຳລັງ ໂດຍສະເພາະແມ່ນກອງທັບບົກ.

ນອກຈາກນີ້ແລ້ວບັນດາປະເທດຕ່າງໆ ທີ່ຢູ່ອ້ອມຂ້າງຂອງປະເທດມະຫາອຳນາດຫຼວງຫຼາຍເພື່ອມາປ້ອງກັນການຮຸກຮານຈາກສັດຕູ ສິ່ງດັ່ງກ່າວນີ້ເປັນການຂົ່ມຂູ່ເຮັດໃຫ້ເກີດລະແວງສົງໃສເຊິ່ງກັນ ແລະ ກັນ.

- **ຈຸດປ່ຽນສົງຄາມໂລກຄັ້ງທີI**

**ກ. ການເຂົ້າຮ່ວມສົງຄາມຂອງອາເມຣິກາ**

ສາເຫດທີ່ພາໃຫ້ສະຫາລັດອາເມຣິກາເຂົ້າຮ່ວມສົງຄາມເນື່ອງມາຈາກຫຼາຍສາເຫດເຊັ່ນ:

- ຍ້ອນກອງທັບເຮືອດຳນ້ຳເຢຍລະມັນໄດ້ບຸກໂຈມຕີກອງທັບເຮືອຂອງອັງກິດຢ່າງບໍ່ມີຂອບເຂດເຮັດໃຫ້ເຮືອສິນຄ້າແລະ ເຮືອດຳນ້ຳອາເມຣິກາຖືກຍິງ ເສຍຫາຍຫຼາຍລຳ ຄື ເລີ່ມແຕ່ເດືອນມັງກອນ ປີ ຄ.ສ 1917 ເຢຍລະມັນໄດ້ຕັດສິນປະກາດໃຊ້ເຮືອດຳນ້ຳເຂົ້າໃນການເຮັດສົງຄາມໂດຍບໍ່ໄວ້ໜ້າປະເທດ ໃດທັງນັ້ນ ຈຳນວນເຮືອດຳນ້ຳຂອງເຢຍລະມັນ ມັນໄດ້ເພີ່ມຂຶ້ນ 150 ເປົ້າໝາຍໃນການໂຈມຕີຄັ້ງນີ້ແມ່ນເຮືອທຸກໆລຳທີ່ມຸ້ງເຂົ້າ.ຫາທາເຮືອຂອງອັງກິດ ແລະ ຝຣັ່ງຈຸດປະສົງກໍ່ເພື່ອເຮັດໃຫ້ອັງກິດຂາດອາຫານ, ອາວຸດ ແລະ ນ້ຳມັນເຊື້ອໄຟ ໃນການເຮັດສົງຄາມ. ສ່ວນອາເມຣິກາ ທີ່ພວມວາງຕົນເປັນກາງນັ້ນກໍ່ມີທ່າອ່ຽງເຂົ້າຂ້າງອັງກິດ ເຊິ່ງເປັນການລະເມີດຄວາມເປັນເປັນກາງຂອງຕົນຊ້ຳບໍ່ໜຳຍັງໃຫ້ການຊ່ວຍເຫຼືອ ໃຫ້ທຶນກູ້ຢືມແກ່ອັງກິດ ແລະປະຕິເສດໃຫ້ການຊ່ວຍເຫຼືອແກ່ເຢຍລະມັນ. .ໃນຂະນະທີ່ ອາເມຣິກາລຳລຽງສິນຄ້າມາສົ່ງອັງກິດນັ້ນໄດ້ຖືກເຮືອດຳນ້ຳຂອງເຢຍລະມັນ ບຸກໂຈມຕີຢ່າງໜັກ.
- ຍ້ອນເຢຍລະມັນສະໜັບສະໜູນໃຫ້ແມັກຊິໂກ ປະກາດສົງຄາມກັບຝ່າຍ ພັນທະມິດ( ອັງກິດ, ຝຣັ່ງ, ຣັດເຊຍ ..)ໂດຍເຢຍລະມັນຢືນຂໍ້ສະເໜີວ່າ:ຖ້າແມັກຊິໂກຍອມມາເຂົ້າກັບຝ່າຍຂອງຕົນຈະໃຫ້ແມັກຊິໂກຄອບຄອງດິນແດນ New, Mexico ,Texas, Arizona ເຊິ່ງເປັນດິນແດນຄອບຄອງຂອງສາຣັດອາເມຣິກ
- ເພື່ອຍາດເອົາສິດຜົນປະໂຫຍດຈາກການແບ່ງປັນຂອງຝ່າຍສຳພັນທະມິດ ເພາະສະຫະລັດອາເມຣິກາເຫັນໄດ້ວ່າເຢຍລະມັນກຳລັງຕົກຢູ່ໃນທ່າປາລະໄຊ.

ດັ່ງນັ້ນ, ມາຮອດວັນທີ 6 ເດືອນເມສາ ປີ ຄ.ສ 1917 ສະຫາລັດອາເມີຣິກາໄດ້ປະກາດສົງຄາມກັບເຢຍລະມັນ ໃນໄລຍະທຳອິດສະຫາລັດອາເມຣິກາບໍ່ໄດ້ສົ່ງກຳລັງໄປຊ່ວຍຝ່າຍຕຣີມິດແຕ່ຢ່າງໃດການພົວພັນລະຫວ່າອາເມຣິກາ ກັບຝ່າຍສຳພັນທະມິດ ນັ້ນເປັນຄວາມຜູກພັນທາງດ້ານເສດຖະກິດການຄ້າ ຄື ການຊື້ຂາຍອາວຸດເທົ່ານັ້ນ.

**ຂ. ການຖອນຕົວຂອງຣັດເຊຍອອກຈາກສົງຄາມ**

ພາຍຫຼັງທີ່ໂຄ່ນລົ້ມລະບອບພະເຈົ້າຊາຢູ່ລັດເຊຍສຳເລັດແລ້ວເຢຍລະມັນໄດ້ສວຍໂອກາດໃນຂະນະທີ່ສະພາບທາງດ້ານການເມືອງວຸ້ນວາຍ; ເຢຍລະມັນໄດ້ມີແຜນການຢາກເຮັດໃຫ້ລັດເຊຍຖອນໂຕອອກຈາກສົງຄາມຈຶ່ງໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ທ່ານ ເລນິນ ເຊິ່ງເປັນຜູ້ນຳຂອງພັກໂບນເຊວິກແຫ່ງລັດເຊຍ ທີ່ຖືກເນລະເທດໄປຢູ່ປະເທດສວິດ ໃຫ້ກັບຄືນມາອີກຄັ້ງ.ມາໃນເດືອນຕຸລາປີ ຄ.ສ1917ຢູ່ປະເທດລັດເຊຍໄດ້ເກີດເຫດການຍິ່ງໃຫຍ່ ແລະ

ສຳຄັນກໍ່ຄືເກີດການປະຕິວັດສັງຄົມນິຍົມ ເຊິ່ງເປັນການກຳເນີດລະບອບການປົກຄອງໃໝ່ໃນລັດເຊຍກໍ່ຄືຢູ່ໃນໂລກ ພາຍໃຕ້ການນຳພາຂອງພັກໂບນເຊວິກ ເມື່ອແນວນັ້ນ ທ່ານເລນິນທີ່ເປັນຫົວໜ້າລັດຖະບານຊຸດໃໝ່ຢາກຮັກສາໝາກຜົນຂອງການປະຕິວັດ ແລະດຳເນີນການປັບປຸງປະເທດຊາດຈຶ່ງຕັດສິນໃຈນຳເອົາລັດເຊຍຖອນຕົວອອກຈາກສົງຄາມ ແລະ ເຊັນສັນຍາສະຫງົບເສິກກັບເຢຍລະມັນໃນວັນທີ 3 ມີນາ ປີ ຄ.ສ 1918ເອີ້ນວ່າ:ສັນຍາເບຣດລີຕົບ.(Brestlitovk).

**ຄ.ການສູ້ຮົບໄລຍະສຸດທ້າຍຂອງສົງຄາມໂລກຄັ້ງທີI(ປີຄ.ສ1917-1918)**

ໃນເດືອນກໍລະກົດປີຄ.ສ 1917 ຍອມພົນເຮກ(Haig) ແມ່ທັບຂອງອັງກິດໄດ້ວາງແຜນການສູ້ຮົບໄລຍະຍາວໃນສະໜາມຮົບຟຣານເດີ;ເຊິ່ງມີການຂຸດຂຸມຄອງເປັນອຸບມຸງ.ຈຸດປະສົງກໍ່ເພື່ອເຈາະເຂົ້າໃຈກາງຂອງກອງທັບເຢຍລະມັນ ການປະຕິບັດການຄັ້ງນີ້ອັງກິດເປັນຝ່າຍເສຍຫາຍຄື ທະຫານຖືກຂ້າຕາຍຈຳນວນ 150.000ຄົນ,ບາດເຈັບ ແລະຈັບເປັນສະເລີຍເສິກຈຳນວນ 300.000 ຄົນ ແຕ່ມາຮອດເດືອນພະຈິກ ປີຄ.ສ 1917 ອັງກິດໄດ້ເປີດບັ້ນຮົບກັບເຢຍລະມັນຢູ່ຄອມແບຣ(Combrai) ແລະ ສາມາດເອົາໄຊຊະນະໄດ້. ກ້າວເຂົ້າສູ່ປີຄ.ສ1918 ຄວາມຫວັງທີ່ຈະເອົາຊະນະສົງຄາມຂອງເຢຍລະມັນມີຫຼາຍຂຶ້ນກ່ວາເກົ່າ ເພາະແຕ່ເດືອນມີນາປີຄ.ສ 1918 ລູເດນດອຟ ແມ່ທັບຂອງເຢຍລະມັນໄດ້ເປີດບັ້ນຮົບບຸກໂຈມຕີເຂົ້າປະເທດຝຣັ່ງເພາະເວລານີ້ ທະຫານເຢຍລະມັນກໍ່ໄດ້ເພີ່ມຂຶ້ນຢ່າງໄວວາ. ມາໃນເດືອນມິຖຸນາປີຄ.ສ 1918 ທະຫານເຢຍລະມັນກໍ່ສາມາດບຸກເຂົ້າເມືອງປາຣີ ຍັງເຫຼືອແຕ່ພຽງ14ໄມ ເທົ່ານັ້ນ ແຕ່ແລ້ວຄວາມຫວັງຂອງເຢຍລະມັນກໍ່ພັງທະລາຍລົງ ເນື່ອງຈາກການລຳລຽງຂົນສົ່ງອາຫານ ແລະ ອາວຸດຢູ່ແນວຫຼັງມາຊ່ວຍແນວໜ້າປະສົບກັບຄວາມຫຍຸ້ງຍາກ,ອີກດ້ານໜຶ່ງກໍ່ຍ້ອນວ່າສະຫະລັດອາເມຣິກາໄດ້ສົ່ງກຳລັງພົນຈຳນວນ 1.750.000 ຄົນ ເຂົ້າມາຊ່ວຍທະຫານອັງກິດ ແລະ ຝຣັ່ງ ເຮັດໃຫ້ໄຊຊະນະຂອງເຢຍລະມັນໄດ້ຫຼຸດໜ້ອຍລົງ;ການເຂົ້າຮ່ວມສົງຄາມຂອງສະຫາລັດອາເມຣິກາຄັ້ງນີ້ເຮັດໃຫ້ກຳລັງຂອງຝ່າຍຕົນມີດເຂັ້ມແຂງຂຶ້ນກ່ວາເກົ່າ.

ມາຮອດໄລຍະນີ້ສະຖານະການຂອງສົງຄາມມີການປ່ຽນແປງ ຝ່າຍຕຣີມິດກໍ່ເລີ່ມໄດ້ຮັບໄຊຊະນະໃນການບຸກໂຈມຕີຕະຫຼອດ ເຊັ່ນ ໃນເດືອນກັນຍາປີຄ.ສ 1918 ຝຣັ່ງສາມາດທຳລາຍແນວຮົບຂອງບູນກາລີ ແລະ ສາມາດຍຶດເອົາແຊກບີຄືນ. ດັ່ງນັ້ນ,ຈຶ່ງເຮັດໃຫ້ບູນກາລີຕ້ອງຍອມເຊັນສັນຍາຢຸດຍິງໃນວັນທີ29 ກັນຍາປີຄ.ສ 1918,ວັນທີ 30ປີຄ.ສ1918 ຕວງກກີກໍ່ຍອມເຊັນສັນຍາຢ່າງບໍ່ມີເງື່ອນໄຂຕໍ່ຝ່າຍສັນຍາຕຣີມິດ. ສ່ວນຢູ່ປະເທດໂອຕຣິດ-ຮົງກາຣີ ປະຊາຊົນກໍ່ເລີ່ມເບື່ອໜ່າຍ ແລະລຸກຂຶ້ນຕໍ່ຕ້ານການເຮັດສົງຄາມ,ບາງລັດກໍ່ແຍກຕົວອອກເປັນເອກະລາດ ເຮັດໃຫ້ໂອຕຣິດ-ຮົງກາຣີປະສົບຄວາມລົ້ມເຫຼວສູນເສຍກຳລັງເຖິງ 150.000 ຄົນຊ້ຳບໍ່ໜຳພັນທະມິດຂອງຕົນກໍ່ປະກາດຍອມຈຳນົນຕໍ່ກັບຝ່າຍຕຣີມິດ ເມື່ອເຫັນວ່າຕົນບໍ່ສາມາດຈະດຳເນີນສົງຄາມໄປໄດ້ໂອຕຣິດ-ຮົງກາຣີຈຶ່ງປະກາດຍອມຈຳນົນຕໍ່ກັບຝ່າຍຕຣີມິດໃນວັນທີ 3-4 ເດືອນພະຈິກປີຄ.ສ 1918.

ໃນເວລາ 11:00 ໂມງຂອງວັນທີ 11 ເດືອນພະຈິກ ປີຄ.ສ 1918 ລັດຖະບານເຢຍລະມັນໄດ້ຕົກລົງເຊັນສັນຍາສະຫງົບເສິກຢູ່ປະເທດຝຣັ່ງເອີ້ນວ່າ: ສັນຍາກອມປີແອນ ມີຫຼັກການ 14 ຂໍ້ຝ່າຍເຢຍລະມັນຍອມປະຕິບັດທຸກເງື່ອນໄຂທີ່ຝ່າຍຕຣີມິດວາງອອກ;ເປັນອັນວ່າ ວັນທີ11 ເດືອນພະຈິກ ປີຄ.ສ 1918 ສົງຄາມໂລກຄັ້ງທີI ໄດ້ສິ້ນສຸດລົງຢ່າງສິ້ນເຊີງ.

## 2. ການດຳເນີນສົງຄາມ

ຈຸດສະນວນໃນສົງຄາມໃນສົງຄາມຄັ້ງນີ້ເກີດຈາກການລອບຄາດຕະກຳ **ເຈົ້າຊາຍອາກດຸກ ແຟຣນຊິດເຟີດີນານ** ລາຊະທາຍາດຂອງ ກະສັດໂອຕຣິດ ແລະ ພັນລະຍາ. ເຫດການໄດ້ເກີດຂຶ້ນໃນວັນທີ 23 ເດືອນ ກໍລະກົດ ປີ ຄ.ສ 1914 ໂອຕຣິດໄດ້ຢື່ນຄຳຂາດຕໍ່ແຊກບີວ່າ:

- ໃຫ້ຊາວແຊບີ ອອກມາຮັບຜິຊອບຕໍ່ການກະທຳ ແລະ ສົ່ງຜູ້ກະທຳຜິດອອກມາໃຫ້ໂອຕຣິດລົງໂທດດ້ວຍຕົນເອງ.
- ຂັບໄລ່ຄູ ແລະ ຂ້າລາສະການຜູ້ທີ່ຕໍ່ຕ້ານໂອຕຣິດ ອອກ.

- ຍອມໃຫ້ຄະນະສືບສວນຂອງໂອຕຣິດເຂົ້າໄປດຳເນີນຄະດີຢູ່ບອສເນຍ.

ຂໍ້ສະເໜີຂອງ ໂອຕຣິດ ຊາວແຊກບີ ຍອມປະຕິບັດຕາມທຸກຢ່າງ ຍົກເວັ້ນບໍ່ຍອມໃຫ້ຄະນະສືບສວນຂອງ ໂອຕຣິດ ເຂົ້າມາດຳເນີນຄະດີດ້ວຍຕົນເອງ. ດັ່ງນັ້ນ, ໂອຕຣິດຈຶ່ງປະກາດສົງຄາມ ກັບ ແຊກບີ ໃນວັນທີ 28 ກໍລະກົດ ປີ ຄ.ສ 1914 , ເຢຍລະມັນປະກາດສົງຄາມກັບຣັດເຊຍໃນວັນທີ 1 ສິງຫາ ປີ ຄ.ສ 1914 ແລະ ໄດ້ປະກາດສົງຄາມກັບຝຣັ່ງໃນວັນທີ 3 ສິງຫາ ປີ ຄ.ສ 1914 ສ່ວນອັງກິດກໍ່ໄດ້ປະກາດສົງຄາມກັບເຢຍລະມັນໃນວັນທີ 4 ສິງຫາ ປີ ຄ.ສ 1914 ແລະ ໂອຕຣິດ-ຮົງກາລີໄດ້ປະກາດສົງຄາມກັບຣັດເຊຍໃນວັນທີ 6 ສິງຫາ ປີ ຄ.ສ 1914 ເຮັດສົງຄາມຂະຫຍາຍຕົວກ້ວາງອອກ ຈົນກາຍເປັນສົງຄາມຂອງກຸ່ມເອີ້ນວ່າ: ສົງຄາມໂລກ ໃນເບື້ອງຕົ້ນສົງຄາມນີ້ແມ່ນການຕໍ່ສູ້ກັນຂອງ 5 ປະເທດ ແຕ່ຍ້ອນ ການເຂົ້າມາຊ່ວຍເຫຼືອຂອງບັນດາປະເທດພັນທະມິດ ເຮັດໃຫ້ມີຫຼາຍປະເທດເຂົ້າຮ່ວມ ເຊັ່ນ ໃນເດືອນ ພະຈິກ ປີ ຄ.ສ 1914 ຕວຽກກີໄດ້ເຂົ້າຮ່ວມສົງຄາມ, ໃນເດືອນສິງຫາ ປີ ຄ.ສ 1914 ຍີ່ປຸ່ນໄດ້ປະກາດສົງຄາມກັບເຢຍລະມັນເຮັດໃຫ້ ສົງຄາມລະເບີດຂຶ້ນຢ່າງກ້ວາງຂວາງ ແລະ ມີຫຼາຍບັ້ນຮົບເຊັ່ນ:

### 2.1 ບັ້ນຮົບຕາເວັນຕົກ.

#### ກ. ແຜນການໃນການສູ້ຮົບ.

ບັນຮົບຕາເວັນຕົກຕັ້ງຢູ່ບໍລິເວນຊາຍແດນລະຫ່ວາງຝຣັ່ງ ກັບ ເຢຍລະມັນ ໃນການບຸກໂຈມຕີເຢຍລະມັນໄດ້ ປະຕິບັດຕາມແຜນການຊິບແຟນ ທີ່ໄດ້ກະກຽມໄວ້ແຕ່ປີ 1905 ໂດຍ **ນາຍພົນຟອນ ຊິບແຟນ** ອີງຕາມແຜນການແມ່ນ ເຢຍລະມັນຕ້ອງໃຊ້ກຳລັງບຸກຕີເຂົ້າແບນຊິກແຜ່ນເຂົ້າທາງຕາເວັນອອກສ່ຽງເໜືອຂອງ ປະເທດຝຣັ່ງ ແລະ ຕີອ້ອມ ປະເທດຝຣັ່ງ ໃຫ້ເປັນວົງມົນ; ເພື່ອຈະຍຶດເອົາ ກຸງປາຣີ ໄດ້ໄວ້ ເມື່ອຍຶດເອົາ ປາຣີ ໄດ້ສຳເລັດແລ້ວກໍ່ເຄື່ອນທັບໄປພາກ ຕາເວັນອອກເພື່ອຍຶດເອົາປະເທດຣັດເຊຍ ນີ້ແມ່ນແຜນການຂອງຊິບແຟນ ວາງອອກສ່ວນຝ່າຍຝຣັ່ງເມື່ອຮູ້ຂ່າວເຢຍລະ ມັນຈະບຸກຕີກໍ່ທຳການກະກຽມກຳລັງ ເພື່ອຕ້ານການໂຈມຕີຂອງເຢຍລະມັນ ໂດຍແບ່ງແນວປ້ອງກັນອອກເປັນຫຼາຍຊັ້ນ ທັງນີ້ກໍຍ້ອນວ່າ ຝຣັ່ງ ເຄີຍຮູ້ຍຸດທະວິທີຕໍ່ສູ້ຂອງ ເຢຍລະມັນ ມາແລ້ວໃນສົງຄາມລະຫ່ວາງ ຝຣັ່ງ ກັບ ຣັດເຊຍ (ປີ ຄ.ສ 1870-1871)ເຊິ່ງສົງຄາມຄັ້ງນີ້ ຝຣັ່ງ ເປັນຝ່າຍປາລາໄຊ ແລະ ເສຍເຂດອານຊັນ-ລໍແຣນ ໃຫ້ແກ່ເຢຍລະມັນ.

#### ຂ. ການດຳເນີນສົງຄາມຢູ່ບັ້ນຮົບຕາເວັນຕົກ.

ເຢຍລະມັນໃຊ້ກຳລັງ 68 ກອງພົນບຸກເຂົ້າປະເທດແບນຊິກ ໃຊ້ເວລາໃນການສູ້ຮົບເຖິງ 12 ວັນ ຈຶ່ງສາມາດຜ່ານ ປະເທດແບນຊິກໄດ້ສ່ວນຝຣັ່ງ ແລະ ອັງກິດໄດຍາດເອົາໂອກາດຕອນທີ່ ເຢຍລະມັນ ບຸກຕີແບນຊິກນັ້ນກຽມກຳລັງ. ພາຍຫຼັງຍຶດແບນຊິກໄດ້ແລ້ວ ເຢຍລະມັນ ກໍສືບຕໍ່ບຸກໂຈມຕີເຂົ້າປີກຊ້າຍຂອງ ຝຣັ່ງ ເຊິ່ງມີກອງທັບທີ 5 ຕັ້ງທັບຢູ່ກຳລັງ ຂອງ ທະຫານຝຣັ່ງ ໄດ້ຕໍ່ສູ້ຢ່າງດຸເດືອດ ແຕ່ກໍ່ບໍ່ສາມາດຕ້ານທານໄດ້ ແລະ ຖອຍທັບລົງເລື້ອຍໆ ທັງນີ້ເພື່ອບໍ່ໃຫ້ຕົນ ເອງຖືກປິດລ້ອມ. ມາໃນວັນທີ 2 ກັນຍາ ປີ ຄກສ 1914 ກອງທະຫານເຢຍລະມັນສາມາດບຸກຕີເຂົ້າບໍລິເວນແມ່ນໍ້າມາກ ເນີ ທີ່ຮ່າງຈະນະຄອນຫຼວງປາຣີປະມານ 25 ໄມ ເທົ່ານັ້ນ (1 ໄມ=1,66 ກມ) ເມື່ເມື່ອເປັນແນວນັ້ນລັດຖະບານຝຣັ່ງຈຶ່ງ ຍ້າຍໄປຢູ່ເມືອງບອກໂດ. ຍ້ອນການບຸກຕີຢ່າງໄວວາຂອງ ເຢຍລະມັນ ເຮັດໃຫ້ຝາຍຝຣັ່ງບໍ່ສາມາດຕັ້ງຮັບໄດ້ ເຮັດໃຫ້ ເຢຍລະມັນ ສາມາດບຸກຕີເຂົ້າແນວຕັ້ງຮັບທີ 2 ຂອງຝຣັ່ງ(ມີກອງທັບ 5,6,9 ຕັ້ງຮັບ)ການບຸກຕີຄັ້ງນີ້ເກືອບປະສົບ ຜົນສຳເລັດຕາມແຜນການຊິບແຟນ ແຕ່ເນື່ອງມາຈາກແມ່ທັບຂອງເຢຍລະມັນຊື່ວ່າ: ໂມດເກ ໄດ້ແບ່ງກຳລັງອອກເປັນ ຫຼາຍສ່ວນຄື ກອງທັບທາງປີກຊ້າຍ ແລະ ກອງກາງ ໃຫ້ໄລ່ຕິດຕາມກອງທັບຂອງຝຣັ່ງໄປທາງພາກຕາເວັນອອກສ່ຽງໃຕ້ (ແຕ່ຖືກທະຫານຝຣັ່ງທາງພາກໃຕ້ບຸກຕີຄືກັນ) ສ່ວນກອງທັບທາງປີກຂວາກໍ່ຖືກແບ່ງເຊັ່ນກັນຄື ກອງທັບທີ 1 ຂອງນາຍ ພົນຟອນຄຸກ ແລະ ອີກກອງທີ 2 ກອງຮ້ອຍໃຫ້ສົ່ງໄປແນວຮົບຕາເວັນອອກເພື່ອໄປຕ້ານກັບຣັດເຊຍ. ດັ່ງນັ້ນ, ຈຶ່ງເຮັດໃຫ້ ກຳລັງພົນຢູ່ປີກຂວາເບົາບາງ ເມື່ອຝຣັ່ງຮູ້ວ່າເຢຍລະມັນໄດ້ແບ່ງກຳລັງພົນອອກເປັນຫຼາຍຈຸນາຍພົນຈອຟຈຶ່ງສັ່ງໃຫ້

ກອງທັບທີ 6 ລຸກຂຶ້ນຕໍ່ສູ້, ສ່ວນອັງກິດກໍ່ໄດ້ສົ່ງທະຫານເຂົ້າມາສົມທົບໃນວັນທີ 9 ເດືອນ ກັນຍາ ປີ ຄ.ສ 1914 ຈາກການສູ້ຮົບຝຣັ່ງ ແລະ ອັງກິດສາມາດເຈາະແນວຮົບຂອງເຢຍລະມັນຢ່າງກ້ວາງຂວາງ, ຟອນຄຸກ ຈຶ່ງສັ່ງໃຫ້ກຳລັງໃນນະຄອນຫຼວງປາຣີຫຼຸດພົ້ນອອກຈາກໄພອັນຕະລາຍ. ເຢຍລະມັນກໍ່ໝົດໂອກາດທີ່ຈະຍຶດເອົາຝຣັ່ງໄດ້ຢ່າງໄວ ຕາມແຜນການຂອງຊິບແຟນ. ດັ່ງນັ້ນ, ຝຣັ່ງກໍ່ທຳການກະກຽມກຳລັງເພື່ອຕໍ່ສູ້ກັບເຢຍລະມັນອີກຄັ້ງໃໝ່; ສ່ວຍເຢຍລະມັນກໍຖອຍໄປຕັ້ງຫຼັກຢູ່ຊາຍແດນຂອງຝຣັ່ງ ແລະ ຮູ້ຕົວເອງດີວ່າບໍ່ສາມາດເຮັດສົງຄາມຍາວນານໄດ້ ເພາະຂາດສະບຽງອາຫານ, ຂາດພະລັງງານ( ນໍ້າມັນ) .ຫຼັງຈາກປັບປຸງກຳລັງໃນໄລຍະໜຶ່ງເຢຍລະມັນກໍບຸກຕີຝຣັ່ງອີກຄັ້ງໃໝ່ກໍ່ຍ້ອນວ່າ:

- ຢ້ານອັງກິດເຂົ້າມາຕັ້ງຖານທັບຢູ່ຝຣັ່ງ ເພື່ອຕ້ານຕົນເອງ
- ຕ້ອງການສະບຽງອາຫານຈາກປະເທດຝຣັ່ງ

ຍ້ອນຄວາມອ່ອນແອຂອງຝຣັ່ງຈຶ່ງບໍ່ສາມາດຂັບໄລ່ທະຫານຂອງເຢຍລະມັນອອກຈາກດິນແດນຂອງຕົນ ຊໍ້າບໍ່ໜຳຍັງປ່ອຍໂອກາດໃຫ້ເຢຍລະມັນສ້າງຕັ້ງຖານທັບຢູ່ດິນແດນຂອງຕົນຄືນໃໝ່ອີກ. ການສູ້ຮົບໃນແນວຮົບຕາເວັນຕົກຢູ່ບໍລິເວນແມ່ນໍ້າມາກບໍ່ມີຜົນຄືບໜ້າພໍເທົ່າໃດ ຕ່າງຝ່າຍຕ່າງປ່ຽນກັນບຸກປ່ຽນກັນຖອຍ ແລະ ຕັ້ງຮົບເປັນແນວຂະໜານກັນທີ່ຄວາມຍາວເຖິງ 400 ກ່ວາ ກມ ການສູ້ຮົບດ້ານຕາເວັນຕົກແກ່ຍາວເປັນເວລາ 4 ປີ (ປີ ຄ.ສ 1914-1918)

### 2.2 ການຮົບທີ່ຊອງແຄບດາກດາແນນ.

ເມື່ອສົງຄາມດຳເນີນໄປໄດ້ 2 ເດືອນ ແລະ ບໍ່ມີທ່າທີວ່າຈະສິ້ນສຸດລົງໄວ ແຕ່ລະຝ່າຍກໍ່ພະຍາຍາມປັບປຸງເຂດທີ່ໝັ້ນ, ສະສົມກຳລັງ ແລະ ສະແຫວງຫາພັນທະມິດ ເຢຍລະມັນີດ້ຊັກຊວນເອົາຕວຽກກີເຂົ້າເປັນພັນທະມິດຂອງຕົນ, ໂດຍໃຫ້ຕວຽກກີບຸກຕີເຂົ້າຣັດເຊຍ ແລະ ເຂົ້າຮ່ວມສົງຄາມໃນເດືອນຕຸລາ ປີ ຄ.ສ 1914 ເປັນການຍາດດິນແດນຢູ່ທາງພາເວັນອອກກາງ. ສ່ວນທະຫານອັງກິດໄດ້ບຸກຕີເຂົ້າເຂດເມໂຊໂປຕາມີ ຈຸດປະສົງກໍ່ເພື່ອຍຶດເອົາບໍ່ນໍ້າມັນ ກອງທະຫານອັງກິດສົມທົບກັບກອງທະຫານຝຣັ່ງບຸກເຂົ້າຊອງແຄບດາກດາແນນໃນລະຫ່ວາງເດືອນ ກຸມພາ ຫາ ເດືອນ ມີນາ ພວກຊາວເຕີກໄດ້ທຳການຕໍ່ສູ້ຄືນ ເຮັດໃຫ້ທະຫານອັງກິດ ແລະ ຝຣັ່ງບໍ່ປະສົບຜົນສຳເລັດໃນການຮົບຄັ້ງນີ້, ຊໍ້າບໍ່ໜຳຍັງຖືກຂ້າຕາຍເປັນຈຳນວນຫຼວງຫຼາຍ. ຮອດປີ ຄ.ສ 1915 ອັງກິດ ແລະ ຝຣັ່ງໄດ້ຍົກພົນຂຶ້ນບົກທີ່ກາລິໂປລີ ເຊິ່ງເປັນທາງເຂົ້າຊ່ອງແຄບດາກດາແນນ ທັງນີ້ກໍ່ເພື່ອຫາທາງສົ່ງອາວຸດໃຫ້ກອງທັບຣັດເຊຍ ຢູ່ທີ່ນີ້ແມ່ນກອງທັບຂອງຕວຽກກີແມນທຳການຕໍ່ສູ້ຢ່າງໜຽວແໜ້ນ. ຕໍ່ມາອັງກິດ ແລະ ຝຣັ່ງກໍ່ໄດ້ໄປສົມທົບກັບຣັດເຊຍບຸກຕີເຂົ້າໂອດຣິດ-ຮົງກາລີ ແຕ່ແຜນການດັ່ງກ່າວກໍ່ຖືກທຳລາຍເພາະວ່າພວກຕີຣມິດ (ອັງກິດ, ຝຣັ່ງ, ຣັດເຊຍ) ບໍ່ສາມາດຍຶດເອົາຖານທີ່ໝັ້ນຂອງຕວຽກກີ. ການສູ້ຮົບຄັ້ງນີ້ທັງສອງຝ່າຍຖືກດັບສູນກຳລັງເຖິງ 250.000 ຄົນ ເທົ່າກັບ 1-2 ຂອງຈຳນວນພົນທັງໝົດໃນສະໜາມຮົບ ໃນທີ່ສຸດຝ່າຍຕຣິດມິດກໍ່ຍອມຖອນກຳລັງທັງໝົດອອກຈາກດິນແດນດັ່ງກ່າວ ຈາກການຮົບຄັ້ງນີ້ເຮັດໃຫ້ຈັກກະພັດອອດໂຕມານ(ຕວຽກກີ)ມີບົດບາດພາໃຫ້ໄດ້ຮັບໄຊຊະນະ.

### 2.3 ການຮົບທາງທະເລ ຫຼື ຍຸດທະນາວິທີແຫຼມຈຸດແລນ(The Naval Battle of Jut-lan

ພາຍຫຼັງການສູ້ຮົບຢູ່ກາລິໂປລີສິ້ນສຸດລົງໃນເດືອນມັງກອນປີຄ.ສ 1916 ພວກເຂົາກໍ່ໄດ້ປ່ຽນສະໜາມສູ້ຮົບຈາກທາງບົກໄປສູ່ທາງທະເລເອີ້ນວ່າ: ຍຸດທະວິທີແຫຼມຈຸດແລນ ປະເທດ ແດນມາກ. ເປັນການຮົບທາງທະເລທີ່ສຳຄັນທີ່ສຸດລະຫ່ວາງກອງທັບເຮືອຂອງອັງກິດ ກັບ ກອງທັບຂອງເຢຍລະມັນ, ເຢຍລະມັນນຳໂດຍພົນເອກໄຮຣາດເຊຍ ສ່ວນອັງກິດແມ່ນນາຍພົນເອກເຈວລີໂຄການສູ້ຮົບໄດ້ເລີ່ມຕັ້ງຂຶ້ນຕັ້ງແຕ່ ວັນທີ 8 ພຶດສະພາ ຫາ ວັນທີ 1 ມິຖຸນາ ປີ ຄ.ສ 1916 ກອງທັບເຮືອດັ່ງກ່າວໄດ້ປະຈັນບານກັນຢູ່ທີ່ແຫຼມຈຸດແລນ (ປະເທດແດກມາກ)ຈາກການສົ່ງຊາກຳລັງພົນເຫັນວ່າຝ່າຍອັງກິດໄດ້ປຽບຄື: ມີເຮືອ

ປະຈັນບານຂະໜາດໃຫ່ຍ 37 ລຳ, ປື່ນໃຫຍ່ຂະໜາດ 12 ນີ້ວ 272 ກະບອກ, ເຮືອລາດຕະເວັນ 11 ລຳ , ເຮືອພິຄາດ 63 ລຳ ການສູ້ຮົບຄັ້ງນີ້ດຳເນີນໄປຢ່າງດຸເດືອດ ແລະ ຂາດຂ້ຽວທີ່ສຸດ ເຮັດໃຫ້ເຮືອຮົບຂອງອັງກິດຖືກທຳລາຍຢ່າງໜັກໜ່ວງ ເຢຍລະມັນອ້າງວ່າຕົນເປັນຝ່າຍຊະນະສົງ ເພາະອີງໃສ່ການຊັ່ງຊາຄວາມເສຍຫາຍໃຍການຕໍ່ສູ້ຄັ້ງນີ້ແມ່ນຕົນເສຍຫາຍໜ້ອຍກ່ວາ ຄື ເຢຍລະມັນເສຍເຮືອຂະໜາດບັນຈຸ 62.000ໂຕນ, ອັງກິດແມ່ນ 111. 000 ໂຕນ; ແຕ່ໃນຄວາມເປັນຈິງແລ້ວເຢຍລະມັນບໍ່ສາມາດທີ່ຈະເອົາຊະນະເຮືອຂອງອັງກິດໄດ້ ກອງທັບອັງກິດສາມາດຄວບຄຸມອັດລັງຕິກໄດ້ຄືເກົ່າ ເພາະອັງກິດຂະໜານວ່າ ເປັນເຈົ້າທາງທະເລຄຸມເສັ້ນທາງການເດີນເຮືອໃນທົ່ວໂລກ.



ຮູບທີ 2 ( ບັນຮົບທາງທະເລ)

### 2.4 ບັນຮົບຕາເວັນອອກ.

ໃນເມື່ອການສູ້ຮົບທາງຕາເວັນຕົກ ບໍ່ມີຄວາມຄືບໜ້າຕ່າງຝ່າຍກໍ່ບໍສາມາດທີ່ຈະເອົາຊະນະ ເຊິ່ງກັນ ແລະ ກັນໄດ້; ເຢຍລະມັນຈຶ່ງຫັນໄປໃສ່ແນວຮົບຕາເວັນອອກ ເພື່ອໂຈມຕີຣັດເຊຍ ໃນວັນທີ 15 ເດືອນ ສິງຫາ ປີ ຄ.ສ 1914 ກອງທັບຣັດເຊຍ 2 ກອງທັບໄດ້ເປີດບັ້ນຮົບບຸກໂຈມຕີເຂົ້າທາງພາກຕາເວັນອອກຂອງປຣັດເຊຍ(ແດນນໜຶ່ງຂອງເຢຍລະມັນ),ຜູ້ບັນຊາການທະຫານທາງພາກຕາເວັນອອກແມ່ນນາຍພົນ ຮິນເດນເບີກ.

ຈຸດປະສົງໃນການສູ້ຮົບຄັ້ງນີ້ກອງທັບເຢຍລະມັນມີຄວາມເຂັ້ມແຂງກ່ວາໄດ້ບຸກໂຈມຕີກອງທັບຣັດເຊຍ໑ ີຢ່າງຍິງໃຫຍ່ເຮັດໃຫ້ກອງທະຫານຣັດເຊຍຢູ່ໃນທ່າປະລາໄຊ, ທະຫານເກືອບ 100 000ເປັນສະເລີຍເສິກ ແລະ ຖືກປິດລ້ອມຢູ່ເຂດທະເລສາບ ມັດຊູລຽນ ຫາເຫດ ທີ່ເຢຍລະມັນໄດ້ຮັບໄຊຊະນະກໍ່ຍ້ອນວ່າ:

- ທະຫານເຢຍລະມັນຢູ່ແນວຮົບຕາເວັນອອກໄດ້ຮັບການຊ່ວຍເຫຼືອຈາກທະຫານເຢຍລະມັນ ໃນແນວຮົບຕາເວັນຕົກ ເຮັດໃຫ້ກຳລັງເໜືອກ່ວາສັດຕູ.
5. ມັນເປັນການຕົກລົງກັນຕື່ມອີກວ່າ ສະຫະລັດໃນພິຈາລະນາຄວາມບໍ່ສະດວກ ແລະ ບັນຫາໃນການເຂົ້າຮ່ວມການໂຍກຍ້າຍໃນບັນຊີຂອງມູນຄ່າຫຼຸດລົງຂອງສ່ວນໃຫຍ່ຂອງທີ່ດິນຢູ່ທີ່ນີ້ໄດ້ມອບໃຫ້ Cherokees, ເມື່ອປຽບທຽບກັບຜູ້ທີ່ຢູ່ໃນ. ທີ່ໄດ້ຖືກເຮັດໃຫ້ຂອງເຂົາເຈົ້າໂດຍສົນທິສັນຍາຂອງ 1817, ແລະສົນທິສັນຍາຂອງ 1819, ຈະຈ່າຍໃຫ້ Cherokees, ທັນທີຫຼັງຈາກການໂຍກຍ້າຍຂອງເຂົາເຈົ້າທີ່ຈະພາຍໃນສິບສີ່ເດືອນຂອງສັນຍາສະບັບນີ້, ລວມຂອງຫ້າສິບພັນໂດລາ; ເງິນປີ, ສໍາລັບສາມປີ, ຂອງສອງພັນໂດລາ, ຕໍ່ການ defraying ຄ່າໃຊ້ຈ່າຍແລະບັນຫາທີ່ອາດຈະເກີດຂຶ້ນພາຍຫຼັງແລະຟື້ນຕົວຫຼັກຊັບຂອງເຂົາເຈົ້າທີ່ອາດຈະ stray ເຂົ້າໄປໃນອານາເຂດໃນການສະແຫວງຫາທີ່ງຫຍ້າລ້ຽງສັດຈາກທີ່ເຂົາເຈົ້າອາດຈະຖືກຂັບໄລ່ - - ຍັງ, ແປດພັນເຈັດຮ້ອຍຫົກສິບໂດລາ, ສໍາລັບການ spoliations ຫມັ້ນສັນຍາກັບເຂົາເຈົ້າ, (Cherokees,) ທີ່ລວມຈະເຕັມໄປດ້ວຍຄວາມຕ້ອງການທັງຫມົດຂອງປະເພດເຖິງປັດຈຸບັນ, ເຊັ່ນດຽວກັນກັບການຕໍ່ຕ້ານ Osages ໄດ້, ເປັນຜູ້ຕໍ່ຕ້ານພົນລະເມືອງຂອງ. ສະຫະລັດ - - ນີ້ແມ່ນຈໍານວນຂອງການຮ້ອງຂໍສໍາລັບການ spoliations ກ່າວວ່າ, ດັ່ງທີ່ໄດ້ຮັບການປະຕິບັດໂດຍ Cherokees, ແລະທີ່ເຊື່ອກັນວ່າຈະຖືກກ່າວຢ່າງຖືກຕ້ອງແລະຍຸຕິທໍາ. -ນອກຈາກນີ້, ຫນຶ່ງພັນສອງຮ້ອຍໂດລາສໍາລັບການນໍາໃຊ້ຂອງ Thomas Graves, ເປັນຫົວຫນ້າ Cherokee, ສໍາລັບການສູນເສຍທີ່ຍືນຍົງໃນຊັບສິນຂອງຕົນ, ແລະສໍາລັບຄວາມທຸກທໍລະມານສ່ວນບຸກຄົນທີ່ເຂົາທົນທຸກເມື່ອຖືກກັກຂັງເປັນນັກໂທດ, ໃນຄະດີອາຍາ, ແຕ່ການກ່າວຫາທີ່ບໍ່ຖືກຕ້ອງ; ນອກຈາກນີ້, ຫ້າຮ້ອຍໂດລາສໍາລັບການນໍາໃຊ້ George Guess, Cherokee ຄົນອື່ນ, ສໍາລັບຜົນປະໂຫຍດອັນໃຫຍ່ຫຼວງທີ່ລາວໄດ້ມອບໃຫ້ປະຊາຊົນ Cherokee, ໃນຜົນໄດ້ຮັບທີ່ເປັນປະໂຫຍດທີ່ເຂົາເຈົ້າກໍາລັງປະສົບໃນປັດຈຸບັນຈາກການນໍາໃຊ້ຕົວອັກສອນທີ່ຄົ້ນພົບໂດຍລາວ, ກັບໃຜ, ໃນການພິຈາລະນາກ່ຽວກັບການປະຖິ້ມເຄັມທີ່ມີຄຸນຄ່າຂອງພຣະອົງ, ສິດທິພິເສດແມ່ນໄດ້ຮັບໂດຍການສະຖານທີ່ແລະຄອບຄອງການເຄັມອີກປະການຫນຶ່ງ Lee's Creek. ມັນໄດ້ຖືກຕົກລົງຕື່ມອີກໂດຍສະຫະລັດ, ຈະຈ່າຍສອງພັນໂດລາ, / G / ປີ, ໃຫ້ Cherokees, ສໍາລັບສິບປີ, ເພື່ອໃຊ້ຈ່າຍພາຍໃຕ້ການຊີ້ນໍາຂອງປະທານາທິບໍດີຂອງສະຫະລັດອາເມລິກາໃນການສຶກສາຂອງເດັກນ້ອຍຂອງເຂົາເຈົ້າ. ປະເທດຂອງຕົນເອງ, ໃນຕົວອັກສອນແລະສິລະປະກົນຈັກ; ນອກຈາກນັ້ນ, ເງິນຫນຶ່ງພັນໂດລາຕໍ່ການຊື້ເຄື່ອງພິມແລະປະເພດຕ່າງໆເພື່ອຊ່ວຍ Cherokees ໃນຄວາມຄືບຫນ້າຂອງການສຶກສາ, ແລະເພື່ອປະໂຫຍດແລະເຮັດໃຫ້ມີແສງໃຫ້ເຂົາເຈົ້າເປັນປະຊາຊົນ, ໃນຂອງຕົນເອງ, ແລະພາສາຂອງພວກເຂົາ. ມັນໄດ້ຖືກຕົກລົງກັນຕື່ມອີກວ່າຄ່າໃຊ້ຈ່າຍທີ່ເກີດຂຶ້ນນອກເຫນືອການຈ່າຍໂດຍສະຫະລັດໃນການກໍ່ສ້າງອາຄານແລະການປັບປຸງ, ຈົນກ່ວານັ້ນອາດຈະໄດ້ຮັບຄ່າຈ້າງໂດຍສັງຄົມທີ່ມີເມດຕາທີ່ໄດ້, ແລະຍັງມີ, ມີສ່ວນຮ່ວມໃນຄໍາແນະນໍາ Cherokee. ເດັກນ້ອຍ, ຈະຖືກຈ່າຍໃຫ້ກັບສັງຄົມ, ມັນເປັນຄວາມເຂົ້າໃຈວ່າຈໍານວນເງິນທີ່ຈະ

ຕ້ອງໃຊ້ໃນການກໍ່ສ້າງອາຄານແລະການປັບປຸງອື່ນໆ, ສໍາລັບຈຸດປະສົງເຊັ່ນດຽວກັບ, ໃນປະເທດນີ້ມອບໃຫ້ Cherokees. ສະຫະລັດໄດ້ຍົກເລີກການຮຽກຮ້ອງຂອງເຂົາເຈົ້າເນື່ອງຈາກການ Cherokees ກັບໂຮງງານທ້າຍຂອງສະຫະລັດ, ສະຫນອງໃຫ້ດຽວກັນບໍ່ເກີນສາມພັນຫ້າຮ້ອຍໂດລາ.

6. ມັນໄດ້ຖືກຕົກລົງ, ໂດຍສະຫະລັດ, ທຸກຄັ້ງທີ່ Cherokees ຕ້ອງການ, ໃຫ້ພວກເຂົາກໍານົດກົດຫມາຍທໍາມະດາ, ເຫມາະສົມກັບເງື່ອນໄຂຂອງພວກເຂົາຍັງ, ໃນເວລາທີ່ພວກເຂົາອາດຈະຕ້ອງການປົດອອກຈາກທີ່ດິນ, ແລະເປັນເຈົ້າຂອງຂອງເຂົາເຈົ້າສ່ວນບຸກຄົນ. , ນັກສໍາຫຼວດຈະຖືກສົ່ງໄປເພື່ອເຮັດການສໍາຫຼວດໃນລາຄາຂອງສະຫະລັດ.
7. ບັນດາຫົວໜ້າ ແລະ ຫົວໜ້າຂອງຊາດ Cherokee, ໄດ້ກ່າວໄວ້ກ່ອນ, ສໍາລັບ ແລະ ພິຈາລະນາຂໍ້ກໍານົດທີ່ກ່າວມານີ້, ເຫັນດີນໍາກັນ, ໃນນາມຂອງປະເທດຊາດຂອງເຂົາເຈົ້າ, ຍອມຈໍານົນເຂົາເຈົ້າຍອມຕໍ່ປະເທດສະຫະລັດຕົກລົງທີ່ຈະປະໄວ້ຢ່າງດຽວກັນພາຍໃນສິບສີ່ເດືອນ, ດັ່ງທີ່ໄດ້ກ່າວໄວ້ກ່ອນ, ດິນແດນທັງຫມົດທີ່ເຂົາເຈົ້າມີສິດໃນ Arkansasໄດ້ຮັບການຮັບປະກັນໃຫ້ເຂົາເຈົ້າໂດຍສົນທິສັນຍາຂອງເດືອນມັງກອນ 8, 1817, ແລະສົນທິສັນຍາຂອງ 27th ໄດ້. ເດືອນກຸມພາ, 1819.
8. ປະເທດ Cherokee, ທາງທິດຕາເວັນຕົກຂອງ Mississippi ມີ, ໂດຍຂໍ້ຕົກລົງນີ້, ໄດ້ປົດປ່ອຍຕົນເອງຈາກການລົບກວນແລະການທໍາລາຍຄວາມເສຍຫາຍທີ່ເກີດຂຶ້ນກັບສະຖານທີ່ທ່າມກາງປະຊາກອນສີຂາວ, ແລະຮັບປະກັນຕົນເອງແລະລູກຫລານຂອງເຂົາເຈົ້າ, ພາຍໃຕ້ການລົງໂທດຢ່າງຈິງຈັງຂອງການຄໍ້າປະກັນຂອງ. ສະຫະລັດ, ດັ່ງທີ່ບັນຈຸຢູ່ໃນຂໍ້ຕົກລົງນີ້, ຂອບເຂດຂະຫນາດໃຫຍ່ຂອງປະເທດທີ່ບໍ່ມີອາຍ; ແລະວ່າອ້າຍນ້ອງຂອງພວກເຂົາທີ່ຍັງເຫຼືອຢູ່ໃນລັດອາດຈະຖືກຊັກຊວນໃຫ້ເຂົ້າຮ່ວມກັບພວກເຂົາແລະມີຄວາມສຸກກັບການພັກຜ່ອນແລະພອນຂອງລັດດັ່ງກ່າວໃນອະນາຄົດ, ມັນແມ່ນຕົກລົງກັນຕື່ມອີກ, ໃນສ່ວນຫນຶ່ງຂອງສະຫະລັດ, ທີ່ໃຫ້ຫົວຫນ້າຄອບຄົວ Cherokee ແຕ່ລະຄົນ. ໃນປັດຈຸບັນອາໄສຢູ່ໃນຂອບເຂດຈໍາກັດຂອງລັດຈໍເຈຍ ຫຼື ຂອງລັດໃດໜຶ່ງ, ຕາເວັນອອກຂອງ Mississippi, ຜູ້ທີ່ອາດຈະຕ້ອງການທີ່ຈະໂຍກຍ້າຍຕາເວັນຕົກ, ຈະໄດ້ຮັບ, ກ່ຽວກັບການລົງທະບຽນຕົນເອງສໍາລັບການອົບພະຍົບ, Rifle ທີ່ດີ, ຜ້າຫົ່ມ ,Kettle,ຫ້າpounds of Tobacco: ແລະ ສໍາລັບສະມາຊິກແຕ່ລະຄົນໃນຄອບຄົວຂອງລາວ, ຜ້າຫົ່ມ,) ຍັງ, ການຊົດເຊີຍພຽງແຕ່ສໍາລັບຊັບສິນທີ່ລາວອາດຈະປະຖິ້ມ, ຈະຖືກປະເມີນໂດຍບຸກຄົນທີ່ຈະໄດ້ຮັບການແຕ່ງຕັ້ງໂດຍປະທານາທິບໍດີສະຫະລັດຄ່າໃຊ້ຈ່າຍຂອງ emigration ຂອງທັງຫມົດດັ່ງກ່າວຍັງຈະຮັບຜິດຊອບໂດຍສະຫະລັດ ແລະວິທີການທີ່ດີເຫມາະສົມໄດ້ເປີດ, ການສະຫນອງການຈັດຊື້ເພື່ອຄວາມສະດວກສະບາຍ, ທີ່ພັກ, ສະຫນັບສະຫນູນຂອງເຂົາເຈົ້າ, ໂດຍວິທີທາງການການສະຫນອງສໍາລັບສິບສອງເດືອນຫຼັງຈາກການມາຮອດຂອງພວກເຂົາ. ອີງການໃຫ້ແຕ່ລະຄົນ, ຫຼືຫົວຫນ້າຄອບຄົວ, ຖ້າລາວໄປກັບລາວສີ່ຄົນ, ຈະຖືກຈ່າຍທັນທີເມື່ອລາວມາຮອດອີງການແລະລາຍງານຕົນເອງແລະຄອບຄົວ ຫຼື ຜູ້ຕິດຕາມຂອງລາວ, ເປັນຜູ້ອົບພະຍົບຜູ້ຕັ້ງຖິ່ນຖານຖາວອນ, ນອກເຫນືອໄປຈາກຂ້າງເທິງ. , ສະຫນອງໃຫ້ເຂົາແລະເຂົາເຈົ້າໄດ້ immigrated ຈາກພາຍໃນຂອບເຂດຈໍາກັດ Chartered ຂອງລັດຈໍເຈຍ, ຈໍານວນຫ້າສິບໂດລາຈໍານວນນີ້ໃນອັດຕາສ່ວນຂອງຈໍານວນຫຼາຍ ຫຼື ຫນ້ອຍທີ່ອາດຈະໄປກັບລາວຈາກພາຍໃນຂອບເຂດຈໍາກັດ Chartered ຂ້າງເທິງຂອງລັດຂອງ ຈໍເຈຍ.
9. ເປັນທີ່ເຂົ້າໃຈຕົກລົງກັນໂດຍຄູ່ສັນຍາສະບັບນີ້, ສັນຍາວ່າດ້ວຍທີ່ດິນ, ກວ້າງ 2 ໄມ ແລະ ຍາວ 6 ໄມລ໌, ຈະເປັນ, ແລະ ອັນດຽວກັນນີ້, ສະຫງວນໄວ້ເພື່ອນໍາໃຊ້ຜົນປະໂຫຍດຂອງ/ກ/ສ ສະຫະລັດ. , ສໍາລັບການທີ່ພັກຂອງກໍາລັງທະຫານທີ່ປະຈຸບັນ ຫຼື ໃນອະນາຄົດອາດຈະເປັນ, ປະຈໍາການຢູ່ Fort Gibson ເທິງ Neasho ຫຼື Grand River, ເພື່ອເລີ່ມຕົ້ນການເທິງແມ່ນໍ້າດັ່ງກ່າວເຄິ່ງຫນຶ່ງກິໂລແມັດຂ້າງລຸ່ມນີ້ Fort ໄດ້, ແລະແລ່ນໄປຈາກຕາເວັນອອກເນື່ອງຈາກ

ຕາເວັນອອກສອງໄມ, ຈາກນັ້ນໄປທາງເຫນືອທິກໄມ, ໄປຫາຈຸດທີ່ຈະເປັນສອງໄມຫ່າງຈາກນ້ຳທີ່ໄດ້ກ່າວມາ, ຈາກນັ້ນເນື່ອງຈາກຕາເວັນຕົກຂອງແມ່ນ້ຳດັ່ງກ່າວ, ແລະລົງໄປສະຖານທີ່ຕົ້ນ. ແລະ Cherokees ຕົກລົງເຫັນດີວ່າສະຫະລັດຈະມີແລະເປັນເຈົ້າຂອງສິດທິໃນການສ້າງຕັ້ງເສັ້ນທາງໂດຍຜ່ານປະເທດຂອງເຂົາເຈົ້າສຳລັບຈຸດປະສົງຂອງການມີວິທີການຟຣີແລະ unmolested ໄປແລະຈາກ Fort ກ່າວ

10. ມັນເປັນການຕົກລົງເຫັນດີວ່າ Captain James Rogers, ໃນການພິຈາລະນາຂອງລາວໄດ້ສູນເສຍມ້າໃນການບໍລິການຂອງສະຫະລັດ ແລະ ສຳລັບການບໍລິການທີ່ລາວສິ່ງກັບສະຫະລັດຈະຕ້ອງຈ່າຍເຕັມທີ່ສຳລັບຂ້າງເທິງ ແລະອື່ນໆທັງຫມົດການຮຽກຮ້ອງສຳລັບການສູນເສຍການບໍລິການຜົນລວມຂອງຫ້າຮ້ອຍໂດລາ.

11. ສົນທິສັນຍາສະບັບນີ້ຈະມີຜົນຜູກມັດກັບຄູ່ສັນຍາໃນທັນທີທີ່ມັນໄດ້ຮັບການໃຫ້ສັດຕະຍາບັນຈາກປະທານາທິບໍດີສະຫະລັດ, ໂດຍຄຳແນະນຳແລະການຍິນຍອມຂອງວຽງຈັນຝົນ.

"ເຖິງຢ່າງໃດກໍຕາມ, ສົນທິສັນຍາດັ່ງກ່າວຈະບໍ່ຖືກຕີຄວາມໝາຍວ່າເປັນການຂະຫຍາຍເຂດແດນທາງເໜືອຂອງ 'ປະຕູທາງທິດຕາເວັນຕົກຕະຫຼອດໄປ", ທີ່ໄດ້ກຳນົດໄວ້ ແລະ ຮັບປະກັນໃນມາດຕາທີສອງຂອງສົນທິສັນຍາດັ່ງກ່າວ, ເໜືອຂອງເສັ້ນຂະໜານທີສາມສິບຫົກຂອງເສັ້ນຂະໜານເໜືອ ຫຼື ເພື່ອແຊກແຊງທີ່ດິນທີ່ຖືກມອບຫມາຍ ຫຼື ຖືກມອບຫມາຍ , ທາງທິດຕາເວັນຕົກຂອງແມ່ນ້ຳ Mississippi ໃຫ້ແກ່ຊາວອິນເດຍ Creek ຜູ້ທີ່ໄດ້ອົບພະຍົບ ຫຼື ອາດຈະອົບພະຍົບ.

**5.2 ສັນຍາຄັ້ງທີ 2**

ສົນທິສັນຍາວໍຊິງຕັນຍັງເອີ້ນວ່າສົນທິສັນຍາກັບ Wyandot (10 Stat. 1159) ແມ່ນສົນທິສັນຍາທີ່ດຳເນີນໃນມັງກອນ 31/1855, ໃນວໍຊິງຕັນດີຊີລະຫວ່າງສະຫະລັດ ແລະ Wyandot ໄດ້. ສົນທິສັນຍາໄດ້ຮັບການໃຫ້ສັດຕະຍາບັນໃນເດືອນກຸມພາ 20/ 1855 ແລະ ປະກາດໂດຍປະທານປະເທດໃນເດືອນມີນາ 1/1855.

ສົນທິສັນຍາວໍຊິງຕັນຍັງເອີ້ນວ່າ Treaty with the Chippewa (10 Stat. 1165) is a conducted in on February 22, 1855, in Washington, DC between the United States and the Pillager Chippewas and the Mississippi Chippewas. ສົນທິສັນຍາໄດ້ຮັບການໃຫ້ສັດຕະຍາບັນໃນເດືອນມີນາ 3/ 1855, ແລະ ປະກາດໂດຍປະທານປະເທດໃນວັນທີ 7 ເມສາ 1855.

ໃນສົນທິສັນຍາສະບັບນີ້, ທັງສອງກຸ່ມ Ojibwe ໄດ້ມອບດິນແດນຂະຫນາດໃຫຍ່ທີ່ກວມເອົາພາກຕາເວັນຕົກສຽງເຫນືອຂອງ Minnesota, ບໍ່ລວມເອົາເຂດພາກຕາເວັນຕົກສຽງເຫນືອຂອງ Minnesota, ຍັງຄົງຮັກສາສິດທິການຜະລິດຂອງເຂົາເຈົ້າຢູ່ໃນທີ່ດິນ, ແລະມີ 9 ສະຫງວນຂະຫນາດນ້ອຍຂອງອິນເດຍສ້າງຕັ້ງຂຶ້ນສຳລັບກຸ່ມດັ່ງກ່າວ:

Pillager Chippewas ທະເລສາບ Cass ທະເລສາບ Leechທະເລສາບ Winnibigoshish ລັດ Mississippi Chippewa ທະເລສາບ Gull ທະເລສາບ Mille Lacsທະເລສາບ Pokegama Rabbit Lake ທະເລສາບເຂົ້າທະເລສາບຊາຍ ຂອງການຈອງເຫຼົ່ານີ້, ການຈອງ Rice Lake Indian ບໍ່ເຄີຍຖືກສ້າງຕັ້ງຂຶ້ນ. ທະເລສາບ Gull, Pokegama Lake ແລະ Rabbit Lake Indian reserves ໄດ້ຖືກຕັດ. ຕໍ່ມາ, ການຈອງສາມ Pillager Chippewa ໄດ້ຖືກລວມເຂົ້າກັນເພື່ອສ້າງເປັນ Greater Leech Lake Indian Reservation. ສົນທິສັນຍາກັບ Winnebago

ສົນທິສັນຍາວໍຊິງຕັນຍັງເອີ້ນກັນວ່າສົນທິສັນຍາ Winnebago (10 Stat. 1172) ແມ່ນສົນທິສັນຍາທີ່ດຳເນີນໃນວັນທີ 27 ກຸມພາ 1855, ໃນວໍຊິງຕັນ, DC ລະຫວ່າງສະຫະລັດແລະ Ho-chunk (Winnebago). ສົນທິສັນຍາດັ່ງກ່າວໄດ້ໃຫ້ສັດຕະຍາບັນໃນວັນທີ 3 ມີນາ 1855, ແລະປະກາດໂດຍປະທານາທິບໍດີໃນວັນທີ 23 ມີນາ 1855. ສົນທິສັນຍາສະບັບນີ້ໄດ້ມອບດິນແດນທີ່ສັນຍາໄວ້ໃນສົນທິສັນຍາວໍຊິງຕັນ (1846) ໃຫ້ແກ່ກຸ່ມ Ho-chunks ສຳລັບການສະຫງວນຂອງອິນເດຍໃນພາກກາງຂອງ Minnesota ແລະໄດ້ມາຈາກ. Ojibwe ຜ່ານສົນທິສັນຍາ Fond du Lac (1847).

ສົນທິສັນຍາວໍຊິງຕັນຍັງເອີ້ນວ່າ Treaty with the Choctaw and Chickasaw (11 Stat. 611) is a conducted in on June 22, 1855, in Washington, DC between the United States, the Choctaws and the Chickasaws. ສົນທິສັນຍາໄດ້ຮັບການໃຫ້ສັດຕະຍາບັນໃນເດືອນກຸມພາ 21, 1856, ແລະປະກາດໂດຍປະທານປະເທດໃນວັນທີ 4 ມີນາ 1856.

**5.3 ສັນຍາຄັ້ງທີ 3**

ສົນທິສັນຍາສັນຕິພາບຂອງອີຢິບ-ອິດສະຣາເອນ (ອາຣັບ: معاهدة السلام المصرية الإسرائيلية, ໂຣແມນຕິກ: Mu`āhadat as-Salām al-Misrīyah al-'Isrā'īlīmāyah; ພາສາເຮັບເຣີ: Mu`āhadat as-Salām al-Misrīyah al-'Isrā'īlīlīhyah; Hebrew: שילב לכל אליהרהן) , D.C., ສະຫະລັດອາເມຣິກາ ໃນວັນທີ 26 ມີນາ 1979, ປະຕິບັດຕາມສັນຍາ 1978 Camp David. ສົນທິສັນຍາອີຢິບ-ອິດສະຣາແອນແມ່ນລົງນາມໂດຍປະທານາທິບໍດີອີຢິບ Anwar Sadat ແລະນາຍົກລັດຖະມົນຕີອິດສະຣາແອນ Menachem Begin ເປັນພະຍານໂດຍປະທານາທິບໍດີສະຫະລັດອາເມລິກາ Jimmy Carter.[1]-

ສົນທິສັນຍາສັນຕິພາບລະຫວ່າງອີຢິບ ແລະ ອິດສະຣາແອນ ໄດ້ຮັບການລົງນາມໃນ 16 ເດືອນພາຍຫຼັງທີ່ປະທານາທິບໍດີ ອີຢິບ Anwar Sadat ໄປຢ້ຽມຢາມ ອິດສະຣາແອນ ເມື່ອປີ 1977, ພາຍຫຼັງການເຈລະຈາຢ່າງແໜ້ນແຟ້ນ. ລັກສະນະຕົ້ນຕໍຂອງສົນທິສັນຍາແມ່ນການຮັບຮູ້ເຊິ່ງກັນ ແລະ ກັນ ການຢຸດຕິສະພາບສົງຄາມທີ່ມີມາຕັ້ງແຕ່ສົງຄາມອາຣັບ - ອິດສະຣາເອນ 1948, ການເຮັດໃຫ້ການພົວພັນເປັນປົກກະຕິແລະການຖອນຕົວໂດຍອິດສະລາແອນຂອງກໍາລັງປະກອບອາວຸດ, ພົນລະເຮືອນອອກຈາກແຫຼມ Sinai, ທີ່ອິດສະຣາເອນໄດ້ຍຶດເອົາ. ໃນລະຫວ່າງສົງຄາມ 6 ມື້ໃນປີ 1967. ອີຢິບຕົກລົງທີ່ຈະປ່ອຍໃຫ້ແຫຼມ Sinai ປອດທະຫານ. ຂໍ້ຕົກລົງດັ່ງກ່າວໄດ້ສະໜອງໃຫ້ກໍາປັ່ນອິດສະຣາແອນຜ່ານຊ່ອງແຄບ Suez ແລະ ຮັບຮູ້ຊ່ອງແຄບ Tiran ແລະ ອ່າວ Aqaba ເປັນທາງນໍ້າສາກົນ. ຂໍ້ຕົກລົງດັ່ງກ່າວຍັງຮຽກຮ້ອງໃຫ້ຢຸດຕິການປົກຄອງຂອງກອງທັບອິດສະຣາແອນ ຕໍ່ກັບດິນແດນທີ່ອິດສະລາແອນຍຶດຄອງ ແລະ ສ້າງຕັ້ງອໍານາດການປົກຄອງຢ່າງຄົບຖ້ວນໃຫ້ແກ່ຊາວປາແລັດສະຕິນອານາເຂດ, ຂໍ້ກໍານົດທີ່ບໍ່ໄດ້ປະຕິບັດແຕ່ໄດ້ກາຍເປັນພື້ນຖານໃຫ້ແກ່ຂໍ້ຕົກລົງ Oslo ຂໍ້ຕົກລົງດັ່ງກ່າວໄດ້ເຮັດໃຫ້ອີຢິບເປັນລັດອາຣັບແຫ່ງທໍາອິດທີ່ໄດ້ຮັບຮູ້ອິດສະຣາເອນຢ່າງເປັນທາງການ.[1]

ການປະຕິບັດຕາມ Menachem Begin, Jimmy Carter ແລະ Anwar Sadat ຢູ່ Camp David, 1978. ການເຮັດໃຫ້ເປັນປົກກະຕິການພົວພັນລະຫວ່າງອິດສະຣາແອນ ແລະ ອີຢິບ ໄດ້ຮັບຜົນເປັນປົກກະຕິໃນເດືອນມັງກອນ 1980. ມີການແລກປ່ຽນເອກອັກຄະລັດຖະທູດໃນເດືອນກຸມພາ. ກົດໝາຍ boycott ໄດ້ຖືກຍົກເລີກໂດຍລັດຖະສະພາຂອງອີຢິບໃນເດືອນດຽວກັນ ແລະ ການຄ້າບາງຢ່າງເລີ່ມພັດທະນາ ເຖິງແມ່ນວ່າຈະຫນ້ອຍກວ່າທີ່ອິດສະລາແອນໄດ້ຫວັງໄວ້. ໃນເດືອນມີນາ 1980 ຖ້ຽວບິນຂອງສາຍການບິນປົກກະຕິໄດ້ຮັບການເປີດ. ອີຢິບກໍ່ເລີ່ມສະໜອງນໍ້າມັນດິບໃຫ້ອິດສະຣາແອນແລ້ວ.[2]

**ການປົດທະຫານຂອງ Sinai**

ວັນທີ 18 ພຶດສະພາປີ 1981, ປະທານສະພາຄວາມໝັ້ນຄົງສະຫະປະຊາຊາດສະແດງໃຫ້ເຫັນວ່າສະຫະປະຊາຊາດຈະບໍ່ສາມາດສະໜອງກໍາລັງສັງເກດການໄດ້ຍ້ອນການຂົ່ມຂູ່ຂອງສະຫະພາບໂຊວຽດຍ້ອນຄວາມຂັດແຍ່ງກັບອີຢິບ, ອິດສະຣາແອນ ແລະ ອາເມລິກາໄດ້ເປີດການເຈລະຈາເພື່ອສ້າງຕັ້ງອົງການຮັກສາສັນຕິພາບຢູ່ນອກຂອບເຂດຂອງ ສປຊ. ວັນທີ 3 ສິງຫາ 1981, ອະນຸສັນຍາສົນທິສັນຍາສັນຕິພາບໄດ້ຮັບການລົງນາມ, ໄດ້ສ້າງຕັ້ງກໍາລັງຂ້າມຊາດ ແລະ ຜູ້ສັງເກດການ (MFO). ກອງກໍາລັງສັງເກດການນີ້ຕິດຕາມກວດກາທັງສອງຝ່າຍເພື່ອຮັບປະກັນການປະຕິບັດຕາມ

ສົນທິສັນຍາກົນໄກກິດຈະກຳທີ່ຕົກລົງສົນທິສັນຍາສັນຕິພາບລວມມີຂໍ້ກຳນົດທີ່ເອີ້ນວ່າ ກົນໄກການເຄື່ອນໄຫວທີ່ເຫັນດີເຫັນພ້ອມທີ່ອະນຸຍາດໃຫ້ອີຢິບ ແລະ ອິດສະຣາແອນ ສາມາດຮ່ວມກັນແກ້ໄຂການຈັດວາງກຳລັງທະຫານອີຢິບຢູ່ເຂດ Sinai ໂດຍບໍ່ຈຳເປັນຕ້ອງກວດກາຄືນສົນທິສັນຍາດັ່ງກ່າວຢ່າງເປັນທາງການ. ອິສຣາແອລໄດ້ອະນຸຍາດໃຫ້ອີຢິບສົ່ງກຳລັງໄປຍັງພາກກາງແລະພາກຕາເວັນອອກ Sinai ອອກຈາກຄວາມກັງວົນດ້ານຄວາມປອດໄພເຊິ່ງກັນແລະກັນ, ເຊັ່ນການປະກົດຕົວຂອງກຸ່ມຫົວຮຸນແຮງ jihadi ໃນເຂດເຫຼົ່ານີ້. ການປ່ຽນແປງເຫຼົ່ານີ້ແມ່ນປະສານງານຜ່ານ MFO.[4]

ໃນເດືອນມັງກອນ 2011 ໃນລະຫວ່າງການປະທ້ວງຢ່າງກວ້າງຂວາງໂດຍຊາວອີຢິບຕໍ່ຕ້ານລັດຖະບານຂອງພວກເຂົາ, ອິສຣາແອລໄດ້ຕົກລົງທີ່ຈະອະນຸຍາດໃຫ້ອີຍິບຍ້າຍທະຫານຫຼາຍຮ້ອຍຄົນເຂົ້າໄປໃນແຫຼມ Sinai ເປັນຄັ້ງທຳອິດນັບຕັ້ງແຕ່ສົນທິສັນຍາສັນຕິພາບໄດ້ຖືກລົງນາມ.[5] ດ້ວຍຂໍ້ຕົກລົງຂອງອິສຣາແອລ, ອີຢິບໄດ້ຍ້າຍ 2 ກອງພັນ, ມີທະຫານປະມານ 800 ຄົນ, ເຂົ້າໄປໃນເຂດ Sharm el-Sheikh ໃນເຂດພາກໃຕ້ຂອງ Sinai, ໄກຈາກອິສຣາແອລ.

ໃນເດືອນສິງຫາ 2012, ອິສຣາແອລໄດ້ຕົກລົງເຫັນດີວ່າອີຢິບສາມາດສົ່ງກຳລັງເພີ່ມເຕີມ, ລວມທັງເຮລິຄອບເຕີໂຈມຕີ, ໃນພາກເຫນືອຂອງ Sinai ເພື່ອຕໍ່ສູ້ກັບພວກຫົວຮຸນແຮງທີ່ໄດ້ທຳການໂຈມຕີທະຫານຊາຍແດນອີຍິບທີ່ເຮັດໃຫ້ 16 ຄົນເສຍຊີວິດ ຕໍ່ມາໃນເດືອນນັ້ນ, ອີຢິບໄດ້ຍ້າຍອາວຸດໜັກຕື່ມໃສ່ເຂດປອດທະຫານໂດຍບໍ່ໄດ້ຮັບການອະນຸມັດຈາກອິດສະຣາແອນ, ເປັນການລະເມີດຂໍ້ຕົກລົງຂອງສົນທິສັນຍາສັນຕິພາບ. ອີຢິບກ່າວວ່າ ການນຳໃຊ້ກຳລັງທະຫານແລະອາວຸດເຫຼົ່ານີ້ແມ່ນສອດຄ່ອງກັບຂໍ້ຕົກລົງທີ່ບັນລຸໄດ້ກັບອິດສະຣາແອນໃນປີ 2011 ລາຍງານຂ່າວວ່າ ອິສຣາແອລ ໄດ້ຮ້ອງຂໍໃຫ້ສະຫະລັດ ໄກ່ເກ່ຍການຂັດແຍ້ງນີ້.[8] ຫຼັງຈາກນັ້ນບໍ່ດົນ, ລັດຖະມົນຕີປ້ອງກັນປະເທດອີຢິບ Abdel Fattah el-Sisi ລາຍງານວ່າໄດ້ຮັບປະກັນຄູ່ຮ່ວມງານ Israeli, Ehud Barak, ວ່າອີຍິບໄດ້ມຸ່ງຫມັ້ນທີ່ຈະຮັກສາສົນທິສັນຍາສັນຕິພາບ Camp David ປີ 1979 ກັບອິດສະລາແອນ.

ສົນທິສັນຍານີ້ໄດ້ຮັບດ້ວຍການໂຕ້ຖຽງກັນຢ່າງໃຫຍ່ຫຼວງໃນທົ່ວໂລກອາຣັບ ບ່ອນທີ່ມັນໄດ້ຖືກປະນາມ ແລະຖືວ່າເປັນການແທງທາງຫຼັງ. ຄວາມຮູ້ສຶກຂອງຄວາມໂກດແຄ້ນແມ່ນມີຄວາມເຂັ້ມແຂງໂດຍສະເພາະໃນບັນດາຊາວປາແລັດສະຕິນ, ກັບຜູ້ນໍາຂອງອົງການປົດປ່ອຍປາແລັດສະໄຕ, Yasser Arafat, ໄດ້ກ່າວວ່າ: "ໃຫ້ພວກເຂົາເຊັນສິ່ງທີ່ພວກເຂົາມັກ. ສັນຕິພາບທີ່ບໍ່ຖືກຕ້ອງຈະບໍ່ຍືນຍົງ." ຄຽງຄູ່ກັນນັ້ນ, ສົນທິສັນຍາດັ່ງກ່າວໄດ້ພາໃຫ້ປະທານາທິບໍດີ ອີຢິບ Anwar Sadat ແລະ ນາຍົກລັດຖະມົນຕີ ອິດສະຣາແອນ Menachem ເລີ່ມແບ່ງປັນລາງວັນໂນແບນສັນຕິພາບປີ 1978 ເພື່ອນຳມາເຊິ່ງສັນຕິພາບລະຫວ່າງສອງລັດ. ເພື່ອຟື້ນຟູຄວາມຖືກຕ້ອງຊອບທຳໃນສາຍຕາຂອງບັນດາປະເທດສະມາຊິກຊາວມຸດສະລິມອື່ນໆ ພາຍຫຼັງສົນທິສັນຍາສັນຕິພາບກັບ ອິດສະຣາແອນ, ອີຢິບ ໄດ້ຮຽກຮ້ອງໃຫ້ບັນດາຂໍ້ອ້າງອີງຂອງອິດສະລາມ ອີງໃສ່ຂໍ້ລິເລີ່ມສັກສິດຂອງອິດສະລາມ ເພື່ອແນໃສ່ສ້າງຄວາມສະດວກໃຫ້ແກ່ບັນດາຄວາມພະຍາຍາມຂອງຕົນເພື່ອບັນຍາຍນະໂຍບາຍສັນຕິພາບທີ່ມີຫົວຄິດປະດິດສ້າງຂອງຕົນ, ພ້ອມກັນນັ້ນກໍ່ປະຕິເສດ. ຂະບວນການຕ້ານສັນຕິພາບທີ່ນໍາພາໂດຍອົງການຈັດຕັ້ງ Islamist ໃນໂລກອາຫລັບແລະຕາເວັນອອກກາງ. ຢ່າງໃດກໍຕາມ, ເປັນຜົນມາຈາກສົນທິສັນຍາ, ປະເທດເອຢິບຖືກໂຈະຈາກສະຫະພັນອາຣັບໃນ 1979-1989, [13] ແລະ Sadat ຖືກລອບສັງຫານໃນວັນທີ 6 ເດືອນຕຸລາປີ 1981 ໂດຍສະມາຊິກຂອງອິດສະລາມອີຢິບ Jihad.[14] ປະທານາທິບໍດີ ຊີຣີ Hafez al-Assad ໄດ້ຕັດສາຍສຳພັນທັງໝົດກັບ ອີຢິບ ພາຍຫຼັງການລົງນາມໃນສັນຍາສັນຕິພາບ, ການພົວພັນທາງການທູດຍັງບໍ່ທັນໄດ້ຮັບການສ້າງຕັ້ງຄືນໃໝ່ຈົນເຖິງປີ 2005, ເມື່ອ ອີຢິບ ເຄີຍມີການພົວພັນອັນອົບອຸ່ນກັບ ຊີຣີ ຄືນໃໝ່ພາຍໃຕ້ການປົກຄອງຂອງທ່ານ Bashar al-Assad.
ບົດຄວາມທີ່ຕົ້ນຕໍ: ການພົວພັນອີຢິບ - Israel

ສັນຕິພາບລະຫວ່າງອີຢິບ ແລະ ອິດສະຣາແອນ ໄດ້ແກ່ຍາວມາຕັ້ງແຕ່ສົນທິສັນຍາມີຜົນສັກສິດ, ແລະ ອີຢິບໄດ້ກາຍເປັນຄູ່ຮ່ວມມືຍຸດທະສາດສຳຄັນຂອງ ອິດສະຣາແອນ. ທ່ານ Binyamin Ben-Eliezer, ອະດີດລັດຖະມົນຕີປ້ອງກັນປະເທດອິດສະຣາແອນທີ່ຮູ້ຈັກກັບຄວາມໃກ້ຊິດຂອງລາວກັບເຈົ້າຫນ້າທີ່ອີຢິບໄດ້ກ່າວວ່າ "ອີຢິບບໍ່ພຽງແຕ່ເປັນເພື່ອນທີ່ໃກ້ຊິດຂອງພວກເຮົາໃນພາກພື້ນເທົ່ານັ້ນ, ການຮ່ວມມືລະຫວ່າງພວກເຮົາໄປເຫນືອຍຸດທະສາດ."ໃນສ່ວນຂອງຂໍ້ຕົກລົງ, ສະຫະລັດໄດ້ເລີ່ມຕົ້ນການຊ່ວຍເຫຼືອດ້ານເສດຖະກິດແລະການທະຫານໃຫ້ປະເທດເອຢິບ, ແລະການ ສະຫນັບສະຫນູນທາງດ້ານການເມືອງສໍາລັບລັດຖະບານຕໍ່ມາຂອງຕົນ. ຈາກສັນຍາສັນຕິພາບ Camp David ໃນປີ 1978 ຈົນຮອດປີ 2000, ສະຫະລັດໄດ້ໃຫ້ການອຸປະຖໍາແກ່ກໍາລັງປະກອບອາວຸດຂອງອີຢິບ ດ້ວຍມູນຄ່າການຊ່ວຍເຫຼືອຫຼາຍກວ່າ 38 ຕື້ໂດລາ. ປະເທດເອຢິບໄດ້ຮັບປະມານ 1.3 ຕື້ໂດລາຕໍ່ປີ ຢ່າງໃດກໍຕາມສັນຕິພາບມັກຈະຖືກອະທິບາຍວ່າເປັນ "ສັນຕິພາບເຢັນ",[15] ທີ່ມີຫຼາຍຄົນໃນອີຢິບສົງໄສກ່ຽວກັບປະສິດທິພາບຂອງມັນ ຄວາມຂັດແຍ້ງຂອງຊາວອາຣັບ ແລະອິສຣາແອລ ໄດ້ຮັກສາຄວາມສໍາພັນໃຫ້ເຢັນລົງ.

ການປະຕິວັດອີຈິບຂອງປີ 2011 ເຮັດໃຫ້ເກີດຄວາມຢ້ານກົວໃນ Israel ກ່ຽວກັບອະນາຄົດຂອງສົນທິສັນຍາ, ເຖິງແມ່ນວ່ານາຍົກລັດຖະມົນຕີ Israeli Benjamin Netanyahu ໄດ້ກ່າວວ່າທ່ານຄາດຫວັງວ່າລັດຖະບານອີຢິບໃຫມ່ຈະຮັກສາສົນທິສັນຍາສັນຕິພາບກັບອິດສະຣາເອນ, ຍ້ອນວ່າມັນໄດ້ຮັບໃຊ້ທັງສອງປະເທດໄດ້ດີ. ພາຍຫຼັງກອງທັບອີຢິບຂຶ້ນກໍາອໍານາດໃນວັນທີ 11 ກຸມພາ 2011, ປະເທດເອຢິບໄດ້ປະກາດວ່າ ເອຢິບຈະສືບຕໍ່ປະຕິບັດຕາມສົນທິສັນຍາສາກົນ ແລະພາກພື້ນທັງໝົດຂອງຕົນ. ແນວໃດກໍ່ຕາມ, Ayman Nour, ຜູ້ມີອິດທິພົນຂອງຝ່າຍຄ້ານຂອງອີຢິບແລະຜູ້ລົງແຂ່ງຂັນເປັນປະທານາທິບໍດີໄດ້ຮຽກຮ້ອງໃຫ້ສົນທິສັນຍາສັນຕິພາບຂອງ Cairo ກັບອິດສະລາແອນໄດ້ຮັບການ "ປະເມີນຄືນ" ວັນທີ 15 ກັນຍາປີ 2011, ນາຍົກລັດຖະມົນຕີອີຢິບ Essam Sharaf ໄດ້ກ່າວວ່າ "ສັນຍາສັນຕິພາບກັບ ອິດສະຣາແອນ ບໍ່ສັກສິດ". ທ່ານ Rashad al-Bayumi ຮອງຫົວໜ້າພັກໃຫຍ່ຂອງກຸ່ມພະລາດອນພາບອິສລາມຂອງອີຈິບກ່າວວ່າ ພວກເຂົາເຈົ້າຈະບໍ່ຮັບຮູ້ອິສຣາແອລ ແລະສົນທິສັນຍາດັ່ງກ່າວສາມາດລົງປະຊາມະຕິໄດ້, ໂດຍເນັ້ນໜັກວ່າ ໃນຂະນະທີ່ພວກເຂົາເຈົ້າເຄົາລົບບັນດາຂໍ້ຕົກລົງສາກົນຂອງພວກເຂົາເຈົ້າກໍ່ມີ ສິດທິໃນການທົບທວນຄືນຂໍ້ຕົກລົງສັນຕິພາບ " ແລະ ວ່າປະຊາຊົນອີຢິບ "ຍັງບໍ່ທັນເວົ້າຄວາມຄິດຂອງເຂົາເຈົ້າ". ຜູ້ຕາງຫນ້າຂອງກຸ່ມໄດ້ບອກນັກການທູດສະຫະລັດວ່າພວກເຂົາບໍ່ໄດ້ຕັ້ງໃຈທີ່ຈະຍົກເລີກສົນທິສັນຍາດັ່ງກ່າວ. ກ່າວຄໍາເຫັນກ່ຽວກັບຄວາມກັງວົນຂອງອິດສະຣາແອນ ເມື່ອວັນທີ 31/7/2014, ປະທານາທິບໍດີ ອີຢິບ Abdel Fattah el-Sisi ໄດ້ໃຫ້ຄໍາໝັ້ນສັນຍາສືບຕໍ່ສັນຕິພາບກັບ ອິດສະຣາແອນ.

# ບົດທີ 5
## ການພົວພັນສາກົນໄລຍະປີ ຄ.ສ 1919- 1939

ພາຍຫຼັງສົງຄາມໂລກຄັ້ງທີ I ໄດ້ມີການເຊັນສົນທິສັນຍາແວກຊາຍ-ວໍຊິງຕັນທີ່ມີຜົນເຮັດໃຫ້ການແບ່ງໂລກໃນເມື່ອກ່ອນມາຮອດດເວລານີ້ບໍ່ເໝາະສົມອີກແລ້ວ. ທັງນີ້ກໍເພາະວ່າບັນດາປະເທດທີ່ປະລາໄຊໃນສົງຄາມໄດ້ມີການພັດທະນາຂະຫຍາຍຕົວຢ່າງວ່ອງໄວສົມທົບກັບການເຕີບໂຕໃໝ່ຂອງບັນດາປະເທດທຶນນິຍົມເຊັ່ນ: ອີຕາລີ, ຍີ່ປຸ່ນ. ດ້ວຍເຫດນັ້ນເພື່ອແບ່ງໂລກຄືນໃໝ່ຕາມແບບຟາຊິດ, ກຸ່ມນີ້ຈຶ່ງສຳພັນກັນເຂົ້າເພື່ອທັບມ້າງລະບົບສັນຍາແວກຊາຍ-ວໍຊິງຕັນ ຂອງຈັກກະພັດ ດ້ວຍການໃຊ້ສົງຄາມເປັນເຄື່ອງມື.ສະນັ້ນ,ຈຶ່ງເວົ້າໄດ້ວ່າມີ 3 ສາເຫດຕົ້ນຕໍທີ່ພາໃຫ້ເກີດສົງຄາມໂລກຄັ້ງທີ II ຄື:

### 1. ວິກິດການທາງດ້ານເສດຖະກິດແຫ່ງໂລກ.

ແມ່ນເກີດຈາກຂໍ້ຕົກລົງໃຫ້ມີການໃຊ້ໜີ້ສົງຄາມລະຫວ່າງປະເທດທີ່ໄດ້ຮັບໄຊຊະນະກັບປະເທດທີ່ປະລາໄຊ, ອີກສາເຫດໜຶ່ງ ແມ່ນວິກິດການທາງດ້ານເສດຖະກິດເກີດຈາກການແຂ່ງຂັນກັນຜະລິດຢ່າງບໍ່ມີຂອບເຂດຂອງປະເທດມະຫາອຳນາດທີ່ຜະລິດສິນຄ້າອອກມາຫຼາຍເກີນຄວາມຕ້ອງການຂອງຜູ້ຊົມໃຊ້. ຍ້ອນເຫດຜົນດັ່ງກ່າວນີ້ຈຶ່ງເຮັດໃຫ້ພວກນາຍທຶນພະຍາຍາມຊອກຫາທຸກວິທີທາງເພື່ອຫຼຸດພົ້ນອອກຈາກວິກິດການດັ່ງກ່າວດ້ວຍດານບັງຄັບໃຫ້ລັດຖະບານເຂົາໄປຄວບຄຸມການຜະລິດທັງໝົດແຕ່ວິທີການນີ້ສາມາດແກ້ໄຂໄດ້ຊົ່ວຄາວເທົ່ານັ້ນ, ມີແຕ່ຫົນທາງດຽວທີ່ສາມາດແກ້ໄຂບັນຫາທັງໝົດໄດ້ຄືການເຮັດສົງຄາມຍາດເອົາຕະຫຼາດຈຳໜ່າຍສິນຄ້າໃນໂລກ. ວິກິດການທາງດ້ານເສດຖະກິດຄັ້ງນີ້ໄດ້ນຳໄປສູ່ຄວາມປ່ຽນແປງທາງດ້ານສັງຄົມ, ການເມືອງເຊິ່ງລັດຖະບານຫາບໍ່ສາມາດແກ້ໄຂໄດ້ໂດຍສັນຕິຈຳຕ້ອງໃຊ້ກຳລັງເຂົ້າມາແກ້ໄຂອັນເປັນການຈູດສະນວນສົງຄາມໃຫ້ເກີດຂຶ້ນ.







ຮູບທີ 8 ບັນຫາສັງຄົມທີ່ເກີດຈາກເສດຖະກິດຕົກຕໍ່າ

**ກ. ວິກິການທາງດ້ານການເມືອງ.**

ຫຼັງການເຊັນສັນຍາແວກຊາຍ ສິ້ນສຸດລົງສັງຄົມໄກ້ແບ່ງອອກໄປຕາມຄວາມມັກຄວາມຕ້ອງການຂອງພາການາຍທຶນຊາດຂອງມະຫາອຳນາດຜູ້ທີ່ຊະນະສົງຄາມ. ເນື້ອໃນສັນຍາໄດ້ສິ່ງຜົນໃຫ້ພາຍໃນຈັກກະພັດມີຂັດແຍ່ງ ສືບຕໍ່ນັບມື້ນັບຮຸນຮງລະຫວ່າງປະເທດປະລາໄຊ ແລະ ຮັບໄຊຊະນະໃນສົງຄາມ.ເພື່ອແກ້ໄຂບັນຫາດັ່ງກ່າວນັ້ນ ອາເມຣິກາ ຈຶ່ງສະເໜີໃຫ້ບັນດາປະເທດມະຫາອຳນາດ ຈັດກອງປະຊຸມໃໝ່ຂຶ້ນເອີ່ນວ່າ: ກອງປະຊຸມວໍຊິງຕັນ 1921 ຜົນຂອງກອງປະຊຸມຄັ້ງນີ້ການແບ່ງອຳນາດ, ແບ່ງປັນໂລກຄືນໃໝ່ໄດ້ເປັນໄປຕາມຄວາມຕ້ອງການຂອງປະເທດມະຫາອຳນາດ ໂດຍສະເພາະອາເມຣິກາ ແຕ່ມັນໄດ້ເຮັດໃຫ້ຈັກກະພັດອື່ນສູນເສຍຜົນປະໂຫຍດສະເພາະປະເທດທີ່ພົ້ນຕົວເສດຖະກິດໃໝ່ຄື: ເຢຍລະມັນ, ອີຕາລີ ແລະ ຍີ່ປຸ່ນ. ຖືກຈຳກັດຫຼາຍດ້ານ ເຮັດໃຫ້ປະເທດຕ່າງຕ້ອງລິເມີດສັນຍາ ແລະ ກົດລະບຽບຂອງອົງການສັນນິບາດຊາດ.ສະແດງອອກດັ່ງນີ້:

- ວິກິດການຢູ່ອາຊີຕາເວັນອອກ ເກີດການຄວາມຕັ້ງໃຈຂອງຍີ່ປຸ່ນກໍ່ຂຶ້ນ ເພື່ອເປັນຂໍ້ອ້າງໃນການຂະຫຍາຍອິດທິພົນເຂົ້າປະເທດຈີນ ໃນຮູບແບບເສດຖະກິດ( ສ້າງທາງລົດໄຟ ), ບຽດຍຶດເອົາພາກເໜືອ, ຕາເວັນອອກຂອງຈີນແລ້ວສືບຕໍ່ລົງມາທາງອິດດູຈີນ.
- ວິກິດການທີ່ເອທີໂອປີ ດ້ວຍການຂະຫຍາຍອິດທິພົນຂອງອີຕາລີ ໃນປີຄ.ສ 1934 ແລະ ຍຶດເອົາເອທີໂອປີສຳເລັດ
- ວິກິດການທີ່ໂປໂລຍ ເຢຍລະມັນເປັນຜູ້ກໍ່ຂຶ້ນໃນ ເດືອນ ສິງຫາ 1939 ເພື່ອທຳລາຍໂຄງສ້າງຂອງສັງຄົມເອີຣົບຕາມເຂົາວາງໄວ້. ຍ້ອນວ່າໂປໂລຍ ໄດ້ຮັບການສະໜັບສະໜູນຈາກອັງກິດ ແລະ ຝຣັ່ງ.ບໍ່ຍອມເຈລະຈາ, ປະຕິເສດຄຳສະເໜີຂອງເຢຍລະມັນ ເຊິ່ງເປັນສາເຫດຂອງຄວາມຂັດແຍ່ງກ້າວສູ່ສົງຄາມຄັ້ງໃໝ່.

## 2. ລັກສະນະຂອງການພົວພັນສາກົນລະຫວ່າງປະເທດມະຫາອຳນາດ

ສະພາບການໂລກໄລຍະປີຄ.ສ 1919 -1929 ເປັນໄລຍະແຫ່ງສັນຕິພາບ, ເພາະຄວາມຂັດແແຍ່ງລະຫວ່າງປະເທດສາມາດຕົກລົງກັນໄດ້ໂດຍສັນຕິວິທີ. ເຖິງຢ່າງໃດກໍ່ຕາມ, ສັນຕິພາບທີ່ມີຢູ່ ກໍ່ບໍ່ໄດ້ເກີດມາຈາກຄວາມສາມາດທີ່ຕົກລົງກັນໄດ້ໃນບັນຫາຄວາມຂັດແຍ່ງໃນແຕ່ລະປະເທດ. ແຕ່ເກີດຈາກນາໆຊາດຈຳຕ້ອງຍອມຮັບພາລະເດີມທັງໆທີ່ບໍ່ພໍໃຈ, ທັງນີ້ກໍ່ເພາະວ່າບໍ່ສາມາດປ່ຽນແປງສະພາບການຕ່າງໆກັນໄດ້. ການດຳເນີນງານຂອງບັນດາປະຊາຊາດໃນໂລກ ເພື່ອສະແຫວງຫາສະຖຽນລະພາບ ແລະ ສັນຕິພາບລະຫວ່າງປີ 1919-1929 ນັ້ນໄດ້ດຳເນີນໄປຕາມຮູບແບລັກສະນະແຕກຕ່າງກັນ.

### 2.1 ການກຳເນີດຟາຊິດອີຕາລີ.

ຫຼັງສົງຄາມໂລກຄັ້ງທີ I ອີຕາລີປະສົບກັບບັນຫາຫຼາຍຢ່າງນັບທັງບັນຫາທົ່ວໆໄປຂອງສັງຄົມຈົນຮອດບັນຫາຂອງລັດຖະບານໃນລະບອບການປົກຄອງແບບປະຊາທິປະໄຕບໍ່ສາມາດແກ້ໄຂໄດ້. ອັນໄດ້ນຳໄປສູ່ການກຳເນີດລະບອບຜະເດັດການຂອງຟາຊິດຂຶ້ນໃນອີາລີສາເຫດຂອງການເກີດລັດທິຟາຊິດໃນອີຕາລີແມ່ນສືບເນື່ອງມາຈາກບັນຫາຂອງລັດຖະບານພາຍຫຼັງສົງຄາມໂລກຄັ້ງທີ່ I ຊຶ່ງສາມາດສັງເກດໄດ້ດັ່ງນີ້:

ມາຈາກຄວາມຜິຫວັງຂອງສົນທິຍາສັນຕິພາບທີ່ເຮັດໃຫ້ອີຕາລີຕ້ອງການດິນແດນຕ່າງໆທີ່ຝ່າຍສຳພັນທະມິດໄດ້ຕົກລົງໃນສົນທິສັນຍາລອນດອນ ປີຄ.ສ 1919ແຕ່ສຸດທ້າຍກໍ່ຖືກຝ່າຍພັນທະມິດຫັກຫຼັງ ໂດຍສະເພາະອັງກິດກັບຝຣັ່ງໄດ້ເປັນເອກະພາບກັນແບ່ງຜົນປະໂຫຍດຈາກສົງຄາມໃຫ້ອີຕາລີໜ້ອຍເກີນໄປຄື: ບໍ່ໄດ້ດິນແດນ ແລະ ອິດທິພົນໃດໆໃນທະວີບອາຟຣິກາ ແລະແຫຼມບານກັງ( Bnl kan).

ມາຈາກຄວາມຜິດຫວັງທາງດ້ານເສດຖະກິດຊຶ່ງປະຊາຊົນອີຕາລີ ຕ້ອງໄດ້ຄືກັນກັບຊາວເອີຣົບອື່ນໆ. ເພາະອີຕາລີຕ້ອງສູນເສຍກຳລັງທາງເສດຖະກິດໄປເກືອບເຄິ່ງທີ່ອີຕາລີມີຢູ່ ດັ່ງນັ້ນ, ພາຍຫຼັງສົງຄາມອີຕາລີຕ້ອງປະສົບກັບຄວາມຫາຍຍະນະຄືຕ້ອງພົບກັບໄພວ່າງງານ, ໄພເງິນເຟີ້ ນັບແຕ່ ປີຄ.ສ 1920 – 1922ໂຮງງານອຸດສາຫະກຳຫຼາຍແຫ່ງຖືກປິດ. ປະຊາຊົນຕ້ອງພົບກັບສະພາບດຳລົງຊີວິດແບບຂາດເຂີນຈົນນຳພາໄປສູ່ຄວາມວຸ້ນວາຍແຕ່ ປີຄ.ສ 1919 ເປັນຕົ້ນມາ.

ມາຈາກຄວາມຜິດຫວັງໃນລັດຖະບານ ເຊິ່ງພາຍຫຼັງສົງຄາມອີຕາລີມີແຕ່ລັດຖະບານທີ່ມີຄວາມອອ່ນແອຂາດປະສິດທິພາບເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນ ແລະ ເບື່ອໜ່າຍຕໍ່ການແກ້ໄຂຂອງລັດຖະບານດ້ວຍເຫດນັ້ນປະຊາຊົນອີຕາລີຕ້ອງການເຫັນຜູ້ນຳທີ່ມີຄວາມເຂັ້ມແຂງ ເພື່ອເປັນບ່ອນອີງໃນການພັດທະນາປະເທດຊາດໃຫ້ເທົ່າທຽມກັນປະເທດອື່ນໆ.



ຮູບທີ 9 ຄະນະນຳຟາດຊິດເຢຍລະມັນ ແລະ ອີຕາລີ.

ຈາກເຫດການດັ່ງກ່າວມານັ້ນ ຈຶ່ງເຮັດໃຫ້ປະຊາຊົນຫັນໄປສະໜັບສະໜູນພັກການເມືອງທີ່ເໜັ້ນເຖິງລັດທິຊາດນິຍົມເຊິ່ງເປັນຫົນທາງນຳໄປສູ່ລະບອບຜະເດັກການໃນອີຕາລີຄືການກຳເນີດລັດທິຟາຊິດໂດຍແມ່ນມຸສໂສ ລີນີ (Mousso lini) ເປັນຜູ້ສ້າງຕັ້ງຂຶ້ນໃນເດືອນ ມີນາ ປີຄ.ສ 1919 ຮອດປີ 1924 ເຂົາໄດ້ນຳພາພັກຟາຊິດຂຶ້ນກຳອຳນາດທາງດ້ານການເມືອງຢູ່ອີຕາລີ. ດ້ວຍການໂຄສະນາຫຼາຍຮູບແບບທີ່ມີລັກສະນະເດັ່ນກວ່າພັກການເມືອງອື່ນໆໃນອີຕາລີ. ຈາກການຂົ່ມຂູ່ ແລະຄາດຕະກຳຄູ່ແຂ່ງໂດຍສະເພາະພັກສັງຄົມນິຍົມທີ່ຍັງອ່ອນນ້ອຍຕ້ອງສະຫຼາຍຕົວແລ້ວມຸສໂສ ລີນີກໍໄດ້ກຳອຳນາດຖືກຕ້ອງຕາມກົດໝາຍ ແລະ ໄດ້ດຳເນີນການປົກຄອງດ້ວຍລະບອບຜະເດັດການຢ່າງແທ້ຈິງໃນ ປີຄ.ສ 1926 ໂດຍເປັນຜູ້ສັ່ງການພຽງຜູ້ດຽວພາຍໃນຊາດດ້ວຍຮູບການປົກຄອງແບບຜະເດັດການທະຫານ.

ເວົ້າລວມແລ້ວ: ລັດຟາຊິດອີຕາລີສາມາດກຳອຳນາດໄດ້ໂດຍອາໄສຮູບການໂຄສະນາຫຼາຍຮູບແບບເຊັ່ນ: ລັດທິຊາດນິຍົມ, ການກໍ່ຄວາມຮຸນແຮງ ແລະ ການລອບຄາດຕະກຳສັດຕູທາງດ້ານການເມືອງ ແລະ ໂຄສະນາຊວນເຊື່ອຕ່າງໆເພື່ອໃຫ້ປະຊາຊົນຫຼົງເຊື່ອເພາະຕ້ອງການຄວາມປ່ຽນແປງ ແລະ ຄວາມຫວັງທາງດ້ານເສດຖະກິດການເມືອງໃໝ່ການກຳເນີດລັດທິຟາຊິດສົ່ງຜົນກະທົບເຖິງໂຄ້ງສ້າງສັງຄົມການເມືອງໂລກໄລຍະຕໍ່ມາ.

2.2 **ການກຳເນີດຟາຊິດເຢຍລະມັນ.**

ເຢຍລະມັນກໍເຊັ່ນດຽວກັນກັບອີຕາລີທີ່ໄດ້ປະສົບບັນຫາຕ່າງໆຢ່າງຫຼວງຫຼາຍສົງຄາມໂລກຄັ້ງທີ່ I ນັບທັງບັນຫາເສດຖະກິດ,ການເມືອງ ແລະ ສະພາບສັງຄົມວຸ້ນວາຍເມື່ອລັດຖະບານບໍ່ມາສາມາດແກ້ໄຂບັນຫາຕ່າງໆໄດ້. ໃນທີ່ສຸດກໍຊຸກດັນໃຫ້ເກີດລະບົບການປົກຄອງທີ່ເຂັ້ມແຂງຂຶ້ນໃນເຢຍລະມັນໂດຍສະເພາະນັບແຕ່ມີການປະຕິຮູບລະບອບການປົກຄອງຈາກລະບົບສົມບູນສິດ( ລາຊາທິປະໄຕ) ມາເປັນລະບອບສາທາລະນະລັດໃນ ປີຄ.ສ 1919ໂດຍແມ່ນຟຣີດຣິດສເອເບີດ(Friedrich Ebeit) ຂຶ້ນກຳອຳນາດ ເຊິ່ງປະຫັວດເຢຍລະມັນເອີ້ນວ່າ: ສາທາລະນະລັດໄວມາຣ, (The Weimar Republic ຄ.ສ1919 – 1933). ຕະຫຼອດການປົກຄອງຂອງສາທາລະນະລັດໄວມາຣ, ສະພາບວຸ້ນວາຍທາງດ້ານເສດຖະກິດ., ສັງຄົມໄດ້ເກີດຂຶ້ນຢ່າງລຽນຕິດເຊິ່ງລັດຖະບານບໍ່ສາມາດແກ້ໄຂອັນທີ່ມີຜົນກະທົບເຖິງເສດຖະກິດເຢຍລະມັນເກີດວິກິດການ. ອີກຢ່າງໜຶ່ງສິ້ນຄ້າທີ່ສົ່ງອອກຂອງເຢຍລະມັນທີ່ໄດ້ຈຳໜ່າຍຢູ່ຕ່າງປະເທດແມ່ນຂາຍບໍ່ອອກເພາະບັນດາປະເທດຕ່າງໆໄດ້ພາກັນຕັ້ງພາສີຂາເຂົ້າສູງ. ດັ່ງນັ້ນເຮັດໃຫ້ເສດຖະກິດຂອງເຢຍລະມັນຊຸດໂຊມການຜະລິດຖືກຢຸດສະງັກ ເຊິ່ງສົ່ງຜົນສະທ້ອນເຖິງສະພາບການດຳລົງຊີວິດຂອງປະຊາຊົນເຢຍລະມັນ ເຊິ່ງສາມາດສັງລວມປັດໄຈການກາຍເປັນຟາດຊິດຄືດັ່ງນີ້:

**ກ. ວິກິດການທາງດ້ານເສດຖະກິດ**

-ບັນຫາການໃຊ້ໜີສົງຄາມໃຫ້ແກ່ປະເທດຮັບໄຊຊະນະໃນສົງຄາມ ເຊິ່ງເປັນການຊໍ້າເຕີມໃນລະບົບການເງິນເຢຍລະມັນພົບວິກິດການ.

- ບັນຫາສິນຄ້າຂາຍບ່ອອກ ເພາະບັນດາປະເທດຕ່າງໆໄດ້ຕັ້ງກຳແພງພາສີຂາເຂົ້າໄວ້ສູງ ເຮັດໃຫ້ລະບົບເສດຖະກິດຢຸດສະງັກ ຊີວິດການເປັນຢູ່ປະຊາຊົນຕົກຕໍ່າ. ເຮັດໃຫ້ພັກນາຊີຂຶ້ນກຳອຳນາດ

**ຂ.ຄວາມບໍ່ພໍໃຈຕໍ່ສົນທິສັນຍາສັນຕິພາບ**

- ເຢຍລະມັນເປັນປະເທດປະລາໄຊສົງຄາມ ແລະ ໄດ້ຮັບການລົງໂທດຈາກປະເທດຊະນະສົງຄາມຢ່າງຮູນແຮງ ກຳນົດໄວ້ໃນສົນທິສັນຍາແວກຊາຍ ເຢຍລະມັນຮັບຜິດຊອບທັງໝົດຕໍ່ສົງຄາມທີ່ເກີດຂຶ້ນ.

**ຄ.ການກຳເນີດລັດທິຊາດນິຍົມ, ການຂຶ້ນກຳອຳນາດຂອງພັກນາຊີ**

- ນັບແຕ່ວິກິດການທາງເສດຖະກິດເຮັດໃຫ້ລະບົບການປົກຄອງຂອງນາຍທຶນເຢຍລະມັນຂາດປະສິດທິພາບ, ນາຍທຶນການເງິນ- ອຸດສາຫະກຳ ຂາດຄວາມເຊື່ອໝັ້ນຕໍ່ການນຳລັດຖະບານ.

- ພັກນາຊີ ເຄື່ອນໄຫວ ແລະ ຂຶ້ນກຳອຳນາດ ໃຕ້ການນຳພາຂອງຮິດເລີ
- ອອກຄຳສັ່ງຍຸບເລີບລະບອບການເມືອງຕ່າງໆ ແລ້ວສ້າງກອງທະຫານທີ່ແນ່ໃສ່ຮັບໃຊ້ນະໂຍບາຍ ແລະ ລາອອກຈາກອົງການສັນນິບາດຊາດ, ປະຕິເສດທຸກໆສັນຍາບໍ່ໃຊ້ໜີ້ສົງຄາມ, ເພື່ອກຳລັງທະຫານ, ຮຽກຮ້ອງດິນແດນອານານິຄົມຄືນ, ຕົກລົງສັນຍາກັບຍີ່ປຸ່ນ ຕ້ານຄອມມູນິດສາກົນ.

ສວຍໂອກາດສະພາບການນີ້ພັກການເມືອງຕ່າງໆໄດ້ພາກັນໂຈມຕີລັດຖະບານວ່າ: ເປັນລັດຖະບານທີ່ຂາດປະສິດທິພາບອັນເປັນສາເຫດໃຫ້ພັກນາຊີເຢຍລະມັນໃຕ້ການນຳພາຂອງ ອາດອຟ ຮິດເລີ (Adolf Hitler) ໄດ້ຮັບຄວາມນິຍົມຊົມຊອບຈາກມະຫາຊົນຢ່າງວ່ອງໄວດ້ວຍຮູບການໂຄສະນາທີ່ມີຫຼາຍຮູບແບບເພື່ອດຶງດູດເອົາສຽງສະໜັບສະໜູນຈາກມະຫາຊົນເຊັ່ນ: ການປະນາມລັດຖະບານທີ່ຂາດຄວາມສາມາດ ແລະ ສົນທິສັນຍາແວກຊາຍທີ່ເປັນອຸປະສັກທັງເປັນພັນທະທີ່ເຢຍລະມັນບໍ່ສາມາດປະຕິບັດຕາມໄດ້. ດ້ວຍຮູບການຈົກສົນທິສັນຍາແວກຊາຍນີ້ໄດ້ເປັນການໂຄສະນາທີ່ສຳຄັນທີ່ ຮິດເລີ. ໃຊ້ເປັນເຄື່ອງມືໃນການກ້າວສູ່ການມີອຳນາດໃນ ປີຄ.ສ 1933 ຈາກນັ້ນພຽງແຕ່ 4 ປີທີ່ພັກນາຊີກຳອຳນາດຢູ່ເຢຍລະມັນຄື: ໃນປີຄ.ສ 1938 ເຢຍລະມັນໄດ້ກ່າຍເປັນຊາດທີ່ມີຄວາມເຂັ້ມແຂງເຂົ້າສູ່ການຂະຫຍາຍອານາເຂດຕາມອຸດົມການ “ເພື່ອເປັນຈອມໂລກ”.

2.3 **ການກຳເນີດຟາຊິດຍີ່ປຸ່ນ.**

ຍີ່ປຸ່ນເປັນປະເທດທຳອິດໃນທະວີບອາຊີທີ່ນຳເອົາການປົກຄອງແບບຟາຊິດມາໃຊ້ຫຼັງຈາກໄດ້ຮັບໄຊຊະນະໃນການສູ້ຮົບກັບລັດເຊຍໃນປີຄ.ສ 1905 ແລ້ວຍີ່ປຸ່ນເລີ່ມມີບົດບາດທາງການເມືອງລະຫວ່າງປະເທດຫຼາຍຂຶ້ນ, ກຸ່ມທະຫານເລີ່ມມີອິດທິພົນ ແລະ ມີບົດບາດໃນການເມືອງເພື່ອບໍລິຫານປະເທດອັນນຳໄປສູ່ທະຫານນິຍົມ(Mili tarsm) ລັດທິທະຫານນິຍົມ ແລະ ຄວາມພູມໃຈໃນເຜົ່າພັນຂອງຕົນໄດ້ໄດ້ນຳໄປສູ່ລັດທິຊາດນິຍົມ ເຊິ່ງເຮັດໃຫ້ຍີ່ປຸ່ນຫັນໄປນັບຖືອຸດົມການຕາມແບບຟາຊິດ ດັ່ງນັ້ນ ມາຮອດປີຄ.ສ 1931 – 1936 ຄະນະທະຫານພາຍໃຕ້ການນຳພາຂອງນາຍພົນເອກ ໂຕໂຈ ຮິເດກິ (Tojo Hi-de-ki)ໄດ້ເຂົ້າຍຶດອຳນາດ ແລະ ດຳເນີນແຜນການຂະຫຍາຍອານາເຂດດ້ວຍຄຳຂວັນທີ່ວ່າ “ ທະວີບອາຊີຕ້ອງເປັນຄົນອາຊີ” ແລະ ສ້າງວົງໄພບູນອາຊີເພື່ອເພື່ອເປັນສ້າງເປັນສາກບັງໜ້າດ້ວຍການຍຶດເອົາພາກຕາເວັນອອກສຽງເໜືອຂອງປະເທດຈີນໃນປີ ຄ.ສ 1937. ດັ່ງນັ້ນ; ຈຶ່ງສາມາດສັ່ງລວມເປັນປັດໄຈທີ່ພາໃຫ້ກຳເນີດລະບອບຟາດຊິດຍີ່ປຸ່ນ.

**ກ.ຍີ່ປຸ່ນມີພື້ນຖານລະບົບການປົກຄອງແບບຂຸນເສິກມາແຕ່ດົນນານ.**



- ຍີ່ປຸ່ນປົກຄອງແບບບຸກຄົນດຽວມີອຳນາດ ແລະ ມີອົງການຈັດຕັ້ງຕ່າງໆທີ່ມີລັກສະນະທີ່ເປັນພື້ນຖານລັດທິຂຸນເສິກໃນການຄົງຕົວຈົນຮອດສະຕະວັດທີ xx
- ກຸ່ມທະຫານມີອິດທິພົນ ແລະ ມີບົດບາດທາງການາເມືອງສູງໃນການບໍລິຫານປະເທດຊາດ ເຮັດໃຫ້ຮູບແບບການປົກຄອງຂອງຍີ່ປຸ່ນກ້າວໄປສູ່ລັດທິທະຫານນິຍົມ
- ປະຊາຊົນເກີດມີກະແສແນວຄິດຊາດນິຍົມພາກພູມໃຈໃນເຜົ່າພັນຢ່າງແຮງກ້າຂອງຄົນ

ຍີ່ປຸ່ນຫັນໄປຍຶດອຸດົມການຕາມແບບຟາດຊິດ
ຄືກັບ ອີຕາລີ ແລະ ເຢຍລະມັນ.

**ຂ. ຄວາມຕ້ອງການເພື່ອແກ້ໄຂບັນຫາວິກິດການທາງດ້ານເສດຖະກິດ**

- ກ້າວສູ່ສະຕະວັດທີ xx ການພັດທະນາປະເທດໄປສູ່ຄວາມທັນສະໄໝຂອງຍີປຸ່ນຕາມຮູບແບບເສດຖະກິດທຶນນິຍົມເລີ່ມມີອຸປະສັກ, ຝືດເຄືອງເນື່ອງຈາກຍີ່ປຸ່ນເປັນປະເທດທີ່ມີເນື້ອທີ່ແຄບ, ປະຊາກອນເພີ່ມຂຶ້ນຫຼາຍ, ຊັບພະຍາກອນໜ້ອຍ, ສະບຽງອາຫານ, ຂາດເຂີນວັດຖຸດິບ ພ້ອມກັບມີຫົວເມືອງຂື້ນໜ້ອຍ.
- ໄລຍະປີຄ.ສ 1930 ເສດຖະກິດ, ສັງຄົມ, ການເມືອງ ຍີ່ປຸ່ນວິກິດໜັກໜ່ວງ ຂະບວນການຊາດນິຍົມຫົວຮຸນແຮງເກີດຂຶ້ນ ແລະ ຮຽກຮ້ອງໃຫ້ປະຊາຊົນ, ທະຫານຕໍ່ຕ້ານລັດຖະບານ.
- ຄ.ສ 1936 ຄະນະທະຫານພາຍໃຕ້ການນໍາພາຂອງ ນາພົນພ ໂຕໂຈ ຮິເດກິ ພັກການເມືອງໃໝ່ ຂຶ້ນກໍາອໍານາດ.

ສັງລວມແລ້ວ ການກໍາເນີດລະບອບຟາຊິດໃນ ສະຕະວັດທີ່ 20 ມີຜົນເຮັດໃຫ້ສະພາບສັງຄົມໂລກມີການປ່ຽນແປງ. ທັງນີ້ກໍ່ເນື່ອງມາຈາກແຜນນະໂຍບາຍຂອງ ພວກຟາຊິດ ທີ່ສໍາພັນກັນເພື່ອຂະຫຍາຍດິນແດນ ແລະ ຈາກຄວາມອ່ອນແອຂອງປະເທດທຶນນິຍົມໂດຍສະເພາະລັດຖະບານຝຣັ່ງ, ອັງກິດ, ທີ່ມີລັກສະນະໂຍະຍານໃຫ້ພວກຟາຊິດກຽມກໍາລັງເພື່ອດັບສູນ ສະຫະພາບໂຊວຽດ ແຕ່ຕໍ່ມາຜົນປະໂຫຍດຂອງບັນດາປະເທດນາຍທຶນຕ່າງໆໄດ້ຖືກພວກຟາຊິດແຕະຕ້ອງເຊິ່ງນັບມື້ນັບຮຸນແຮງຂຶ້ນອັນເປັນສາເຫດທີ່ນໍາໄປສູ່ການກໍາເນີດສົງຄາມໂລກຄັ້ງໃໝ່.

## 3 ການເຊື່ອມບົດບາດຂອງອົງການສັນນິບາດຊາດ.

ອົງການສັນນິບາດຊາດເປັນອົງການນາໆຊາດພາກັນສ້າງຕັ້ງຂຶ້ນເພື່ອຮັກສາສັນຕິພາບໂລກໄດ້ສະແດງຄວາມອ່ອນແອ ແລະ ຂາດປະສິດທິພາບໃນການແກ້ໄຂບັນຫາເມື່ອມີການຮຸກຮານເກີດຂຶ້ນ. ຕົວຢ່າງໃນກໍລະນີທີ່ຍີ່ປຸ່ນຮຸກຮານແມນຈູຣີ, ອີຕາລີຮຸກຮານເອທີໂອປີ ແລະ ເຢຍລະມັນຮຸກຮານໂປໂລຍ.

ໃນປີ ຄ.ສ 1931 ຍີ່ປຸ່ນໄດ້ໄດ້ສັ່ງກອງທະຫານບຸກເຂົ້າແມນຈູຣີຂອງຈີນ ເຊິ່ງເປັນແຫຼ່ງລົງທຶນຂອງຍີ່ປຸ່ນ, ອ້າງວ່າເພື່ອລົບລ້າງກໍລະນີຄວາມເສຍຫາຍທີ່ເກີດຈາກການລະເບີດທາງລົດໄຟສາຍ ແມນຈູເຣຍການຮຸກຮານນີ້ໄດ້ຖືກຈີນກ່າວປະນາມ ແລະ ສະເໜີອົງການສັນນິບາດຊາດແກ້ໄຂ, ແຕ່ໃນທາງກົງກັນຂ້າມຍີ່ປຸ່ນພັດບໍ່ເອົາຫົວຊາ. ສຸດທ້າຍກໍລາອອກຈາກສະມາຊິກອົງການສັນນິບາດຊາດໃນປີ ຄ.ສ 1933.

- ການລາອອກຂອງຍີ່ປຸ່ນ, ໄດ້ມີສ່ວນເຮັດໃຫ້ອີຕາລີກໍລາອອກເຊັ່ນດຽວກັນໃນປີ ຄ.ສ1935 ຫຼັງຈາກທີ່ອີຕາລີຖືກອົງການສັນນິບາດຊາດຂວໍ້າບາດທາງເສດຖະກິດ ໃນກໍລະນີອີຕາລີຍົກກໍາລັງເຂົ້າຮຸກຮານເອທີໂອປີກໍລະນີວິກິດການໂປໂລຍທີ່ເກີດຂຶ້ນໃນເດືອນ ສິງຫາ ປີຄ.ສ 1939ໂດຍເຈຕະນາຂອງຟາຊິດເຢຍລະມັນເພື່ອຫວັງທໍາລາຍໂຄງສ້າງການເມືອງຂອງເອີລົບທີ່ກໍານົດໄວ້ໃນສົນທິສັນຍາແວກຊາຍ ແລະ ສ້າງລະບຽບການໃໝ່ໃນເອີຣົບຕາມແຜນການຂອງຕົນ. ແຕ່ເນື່ອງຈາກໂປໂລຍໄດ້ຮັບການສະໜັບສະໜູນຈາກຝຣັ່ງ, ອັງກິດຈຶ່ງບໍ່ຍອມເຈລະຈາ ແລະ ປະຕິເສດຂໍ້ສະເໜີຂອງຟາຊິດເຢຍລະມັນ. ສະນັ້ນເຢຍລະມັນຈຶ່ງໃຊ້ເປັນຂໍ້ອ້າງໃນການໃຊ້ກໍາລັງທະຫານບຸກຕີເຂົ້າໂປໂລຍໃນວັນທີ່ 1 ກັນຍາ 1939ອັນເປັນການຈູດສະນວນສົງຄາມສົງຄາມໂລກຄັ້ງທີ່ II ໃຫ້ລະເບີດຂຶ້ນ.

ສັງລວມແລ້ວ: ຄວາມອ່ອນແອຂອງອົງການສັນນິບາດຊາດມີຢູ່ 3 ສາເຫດຕົ້ນຕໍຄື:

- ປະເທດມະຫາອໍານາດຖອນຕົວອອກຈາກການເປັນສະມາຊິກ ແລະ ບໍ່ໃຫ້ການຮ່ວມມື.

- ການທີ່ປະເທດມະຫາອຳນາດບໍ່ລົ້ມເລີກທີ່ຈະເປັນປໍລະປັກກັນ ແລະ ເຫັນແຕ່ສິດຜົນປະໂຫຍດຕົນເອງຫຼາຍກວ່າສ່ວນລວມ.
    - ອົງການສັນນິບາດຊາດບໍ່ສາມາດໄກ່ເກຍແກ້ໄຂບັນຫາຂໍ້ພິພາກຂອງບັນດາປະເທດທີ່ເປັນສະມາຊິກໄດ້.

## 4 ການຮ່ວມກຸ່ມປະເທດມະຫາອຳນາດ.

### ການລະງັບຄວາມຂັດແຍ່ງຕ່າງໆຜ່ານອົງການສັນນິບາດຊາດ

ນັບແຕ່ອົງການສັນນິບາດຊາດສ້າງຕັ້ງຂຶ້ນມາ ເພື່ອຮັກສາໄວ້ເຊິ່ງສັນຕິພາບ ແລະ ຄວາມໝັ້ນຄົງ ລະຫວ່າງປະເທດໃນຊ່ວງປີ ຄ.ສ 1920-1929 ອົງການສັນນິບາດຊາດໄດ້ດຳເນີນການພິຈາລະນາແກ້ໄຂບັນຫາຕ່າງໆ ໄດ້ຫຼາຍພໍສົມຄວນເຊັ່ນ: ກໍລະນີຂໍ້ຜິດພາດທີ່ຊູເອດ ກັບ ແຟັງລັງ ປີ ຄ.ສ 1920- 1921 ກ່ຽວກັບອະທິປະໄຕຂອງໝູ່ເກາະອົສລັງ ແກ້ໄຂຂໍ້ຜິດພາດລະຫວ່າງບັນຫາອີຣັກ ມີປີ ຄ.ສ 1924 ແລະ ສາມາດຢຸດຕິສົງຄາມລະຫວ່າງ ບູນກາລີ ແລະ ເກຣັກ ໃນປີ ຄ.ສ 1925-ຄ.ສ 1926

### ການຮວມຕົວເປັນພັນທະມິດການທະຫານ

ໃນດ້ານການຮ່ວມກັນເປັນພັນທະມິດທາງດ້ານການທະຫານນັ້ນ, ເລີ່ມຕົ້ນດ້ວຍຝຣັ່ງໄດ້ຮັບການສັນຍາຊ່ວຍເຫຼືອທາງທະຫານກັບແບນຊິກ ແລະ ໂປໂລຍ ເພື່ອປົກປ້ອງຕົວໃນກໍລະນີຖືກຮຸກຮານຈາກເຢຍລະມັນ, ເວລາດຽວກັນນັ້ນຣູມານີ,ຢູໂກສະລາວີ, ເຊັກໂກສະລົວາກີ ແລະ ໂປຍໂລຍ ກໍ່ຕົກລົງເປັນພັນທະມິດທາງດ້ານການທະຫານ, ທັງນີ້ເພາະ ຢ້ານການແຜ່ອຳນາດຂອງໂອຕຣິດ ແລະ ຮົງກາລີ. ຕໍ່ມາຝຣັ່ງກໍ່ເຂົ້າໃນກຸ່ມນີ້ອີກດ້ວຍ. ສ່ວນສະຫະພາບໂຊວຽດ ແລະ ອິຕາລີ ກໍ່ໄດ້ເຮັດສັນຍາເປັນມິດ ແລະ ຕົກລົງຈະບໍ່ເຮັດສົງຄາມຮຸກຮານຫຼາຍປະເທດ.

### ການເຊັນສັນຍາຄ້ຳປະກັນຊາຍແດນ ແລະ ດິນແດນໄວ້ໃນການຄອບຄອງ

ໃນການຄ້ຳປະກັນທາງຊາຍແດນ ແລະ ດິນແດນໃນການຄອບຄອງຂອງຊາດຕ່າງໆຄື: ເຢຍລະມັນ, ອັງກິດ, ຝຣັ່ງ, ແບນຊິກ, ....ກໍ່ໄດ່ພ້ອມກັນຕົກລົງສັນຍາໂລລາໂນ ໃນປີ ຄ.ສຄ.ສ 1925 ຮ່ວມກັນເຖິງ 7 ສະບັບ ເພື່ອໃຫ້ຊາຍແດນຕາເວັນຕົກລະຫວ່າງເຢຍລະມັນ ກັບ ແບນຊິກ ແລະ ຝຣັ່ງໄປຕາມສົນທິສັນຍາແວກຊາຍ, ໃຫ້ເຂດຣິນເຣນ ເປັນເຂດປອດທະຫານ ແລະ ແກ້ໄຂຂໍ້ຜິດພາດ ດ້ວຍສັນຕິວິທີ, ຈະຮ່ວມສົງຄາມສະເພາະໃນກໍລະນີກ້ອງກັນຕົວ, ຈະຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເມື່ອມີການລະເມີດສັນຍາ ແລະ ອື່ນໆທີ່ບໍ່ໃຊ້ກຳລັງ.

### ການຕົກລົງບໍ່ໃຊສົງຄາມເປັນເຄື່ອງມືໃນການຕັດສິນຂໍ້ຜິດພາດລະຫວ່າງປະເທດ.

ໃນດ້ານການຕົກລົງບໍ່ໃຊ້ສົງຄາມເປັນເຄື່ອງມືໃນການຕັດສິນຂໍ້ພິດພາດ ລະຫວ່າງ ປະເທດນັ້ນ ໄດ້ມີການເຊັນສັນຍາເຄນລອກບຣີອັງ ( kenlogg Briand ) ໃນປີ ຄ.ສ 1928 ໃຫ້ນາໆຊາດ 15 ປະເທດເຂົ້າຮ່ວມຕົກລົງສັນຍາ ບໍ່ໃຊ້ສົງຄາມເປັນເຄື່ອງມືໃນການດຳເນີນນະໂຍບາຍຂອງຊາດ. ຈະພາກັນແກ້ໄຂກໍລະນີພິພາດກັນໂດຍສັນຕິ. ຫຼັງຈາກນັ້ນຕໍ່ມາ ກໍ່ມີປະເທດອື່ນໆເຂົ້າຮ່ວມມາລົງນາມໃນສັນຍາຮ່ວມເປັນສະມາຊິກທັງໝົດ 64 ປະເທດດ້ວຍກັນ.

### ການຫຼຸດຜ່ອນກຳລັງປະກອບອາວຸດ

ສຳລັບການຫຼຸດອາວຸດຈະຫຼອດເວລາລະຫວ່າງປີ ຄ.ສ1919-1929 ນີ້, ບັນດາປະຊາຊາດໄດ້ສະເໜີໂຄງການດຳເນີນງານ ໂດຍຜ່ານອົງການສັນນິບາດຊາດ ທີ່ຈະມີການຫຼຸດອາວຸດໂດຍທົ່ວໄປ, ແຕ່ບໍ່ປະສົບຜົນສຳເລັດເພາະຍັງມີຫຼາຍຊາດທີ່ຍັງຮັກສາກຳລັງໄວ້ໂດຍອ້າງເຫດຜົນວ່າ ກອງທັບເຂັ້ມແຂງເປັນສິ່ງຈຳເປັນສຳລັບຄວາມປອດໄພແຫ່ງຊາດ. ເຖິງຢ່າງໃດກໍຕາມ ຄວາມພະຍາຍາມທີ່ຈະຫຼຸດຜ່ອນກຳລັງທາງເຮືອ ເຊິ່ງດຳເນີນໄປໂດຍບໍ່ຜ່ານອົງການສັນບາດຊາດກໍ່ໄດ້ປະສົບຜົນສຳເລັດໃນກອງປະຊຸມວໍຊິງຕັນເຊິ່ງປະກອບມີ 5 ຊາດເຂົ້າຮ່ວມເຊັ່ນ: ອັງກິດ, ຝຣັ່ງ, ຍີປຸ່ນ, ອິຕາລີ ແລະ ສະຫະລັດອາເມຣິກາ.

## 5 ຜົນສະທ້ອນຂອງການພົວພັນສາກົນລະຫວ່າງປະເທດມະຫາອຳນາດຕໍ່ສັງຄົມໂລກ.

ພາຍຫຼັງສົງຄາມໂລກຄັ້ງທີ I ໄດ້ມີການເຊັນສົນທິສັນຍາແວກຊາຍ-ວໍຊິງຕັນທີ່ມີຜົນເຮັດໃຫ້ການແບ່ງໂລກໃນເມື່ອກ່ອນມາຮອດດເວລານີ້ບໍ່ເໝາະສົມອີກແລ້ວ. ທັງນີ້ກໍເພາະວ່າບັນດາປະເທດທີ່ປະລາໄຊໃນສົງຄາມໄດ້ມີການພັດທະນາຂະຫຍາຍຕົວຢ່າງວ່ອງໄວສົມທົບກັບການເຕີບໂຕໃໝ່ຂອງບັນດາປະເທດທຶນນິຍົມເຊັ່ນ: ອີຕາລີ, ຍີ່ປຸ່ນ ແລະ ເຢຍລະມັນ. ດ້ວຍເຫດນັ້ນເພື່ອແບ່ງໂລກຄືນໃໝ່ຕາມແບບຟາຊິດ, ກຸ່ມນີ້ຈຶ່ງສຳພັນກັນເຂົ້າເພື່ອທັບມ້າງລະບົບສັນຍາແວກຊາຍ-ວໍຊິງຕັນ ຂອງ ຈັກກະພັດດ້ວຍກັນ ໂດຍການນຳໃຊ້ສົງຄາມເປັນເຄື່ອງມືໃນປະການປະຕິບັດນະໂຍບາຍຂະຫຍາຍອຳນາດ. ສະນັ້ນ; ຈຶ່ງເຮັດ ການເມືອງ-ໂລກ ຫຼື ການພົວພັນສາກົນໃນໄລຍະນີ້ແມ່ນຕົກຢູ່ໃນໄລຍະລັດທິຊາດນິຍົມຂະຫຍາຍຕົວສູງເຮັດໃຫ້ປະເທດມະຫາອຳນາດ ຕ່າງໆແຂ່ງຂັນກັນຂະຫຍາຍອານານິຄົມເພື່ອຕົນເອງຈະກ່າວຂຶ້ນເປັນຜູ້ນຳຂອງໂລກ. ສະນັ້ນລັກສະນະຂອງການພົວພັນສາກົນໃນໄລຍະນີ້ຈຶ່ງເຕັມໄປດ້ວຍ ຄວາມສັບສົນວຸ້ນວາຍ ສ່ວນຫຼາຍແມ່ນເຕັມໄປດ້ວຍຂໍ້ຂັດແຍ່ງ ແລະ ພິພາກກັນ, ສ່ວນການພົວພັນທີ່ມີລັກສະນະຮ່ວມມື ແມ່ນມີຈຸດປະສົງເພື່ອຮັກສາໄວ້ເຊິ່ງສິດຜົນປະໂຫຍດ ແລະ ອຳນາດຂອງຕົນເອງ,ການພົວພັນທາງການສ່ວນໃຫຍ່ເປັນການພົວພັນແບບລັບ, ການພົວພັນແບບນີ້ແມ່ນເກີດຂຶ້ນຈາກຫຼາຍເຫດການ, ຫຼາຍປັດໄຈ ເຮັດໃຫ້ລັກນະສະການພົວພັນນັ້ນນັບມື້ນັບເຄັ່ງຕຶງນັບມື້ນັບຮຸນແຮງ ເຊິ່ງເປັນສາເຫດໃຫ້ເກີດສົນຄາມຄັ້ງໃໝ່.

# ບົດທີ 6
# ສົງຄາມໂລກຄັ້ງທີ II ໂດຍສັງເຂບ

## I. ສາເຫດຂອງສົງຄາມຄັ້ງທີ

ພາຍຫຼັງສົງຄາມໂລກຄັ້ງທີ I ໄດ້ມີການເຊັນສົນທິສັນຍາແວກຊາຍ-ວໍຊິງຕັນທີ່ມີຜົນເຮັດໃຫ້ການແບ່ງໂລກໃນເມື່ອກ່ອນມາຮອດດເວລານີ້ບໍ່ເໝາະສົມອີກແລ້ວ. ທັງນີ້ກໍເພາະວ່າບັນດາປະເທດທີ່ປະລາໄຊໃນສົງຄາມໄດ້ມີການພັດທະນາຂະຫຍາຍຕົວຢ່າງວ່ອງໄວສົມທົບກັບການເຕີບໂຕໃໝ່ຂອງບັນດາປະເທດທຶນນິຍົມເຊັ່ນ: ອີຕາລີ, ຍີ່ປຸ່ນ. ດ້ວຍເຫດນັ້ນເພື່ອແບ່ງໂລກຄືນໃໝ່ຕາມແບບຟາຊິດ, ກຸ່ມນີ້ຈຶ່ງສໍາພັນກັນເຂົ້າເພື່ອທັບມ້າງລະບົບສັນຍາແວກຊາຍ-ວໍຊິງຕັນຂອງຈັກກະພັດດ້ວຍການໃຊ້ສົງຄາມເປັນເຄື່ອງມື. ສະນັ້ນ, ຈຶ່ງເວົ້າໄດ້ວ່າມີ 3 ສາເຫດຕົ້ນຕໍ

**1. ວິກິດການທາງດ້ານເສດຖະກິດ**

ແມ່ນເກີດຈາກຂໍ້ຕົກລົງໃຫ້ມີການໃຊ້ໜີ້ສົງຄາມລະຫວ່າງປະເທດທີ່ໄດ້ຮັບໄຊຊະນະກັບປະເທດທີ່ປະລາໄຊ, ອີກສາເຫດໜຶ່ງ ແມ່ນວິກິດການທາງດ້ານເສດຖະກິດເກີດຈາກການແຂ່ງຂັນກັນຜະລິດຢ່າງບໍ່ມີຂອບເຂດຂອງປະເທດມະຫາອໍານາດທີ່ຜະລິດສິນຄ້າອອກມາຫຼາຍເກີນຄວາມຕ້ອງການຂອງຜູ້ຊົມໃຊ້. ຍ້ອນເຫດຜົນດັ່ງກ່າວນີ້ຈຶ່ງເຮັດໃຫ້ພວກນາຍທຶນພະຍາຍາມຊອກຫາທຸກວິທີທາງເພື່ອຫຼຸດພົ້ນອອກຈາກວິກິດການດັ່ງກ່າວດ້ວຍດານບັງຄັບໃຫ້ລັດຖະບານເຂົາໄປຄວບຄຸມການຜະລິດທັງໝົດແຕ່ວິທີການນີ້ສາມາດແກ້ໄຂໄດ້ຊົ່ວຄາວເທົ່ານັ້ນ, ມີແຕ່ຫົນທາງດຽວທີ່ສາມາດແກ້ໄຂບັນຫາທັງໝົດໄດ້ຄືການເຮັດສົງຄາມຍາດເອົາຕະຫຼາດຈໍາໜ່າຍສິນຄ້າໃນໂລກ. ວິກິດການທາງດ້ານເສດຖະກິດຄັ້ງນີ້ໄດ້ນໍາໄປສູ່ຄວາມປ່ຽນແປງທາງດ້ານສັງຄົມ, ການເມືອງເຊິ່ງບໍ່ສາມາດແກ້ໄຂໄດ້ໂດຍສັນຕິຈໍາຕ້ອງໃຊ້ກໍາລັງເຂົ້າມາແກ້ໄຂອັນເປັນການຈູດສະນວນສົງຄາມໃຫ້ເກີດຂຶ້ນ.

**2. ການກໍາເນີດລັດທິຊາດນິຍົມ**

ທິດສະດີນິຍົມນີ້ໄດ້ສະແດງໃຫ້ເຫັນໃນບັນດາປະເທດທີ່ຂະຫຍາຍຕົວໃໝ່ທີ່ພະຍາຍາມ ( ຕ້ອງການຄວາມເປັນໃຫຍ່ ) ເປັນຄໍຕົ້ນປະເທດອີຕາລີທີ່ຕ້ອງການສ້າງຄວາມເປັນໃຫຍ່ເໝືອນກັບຈັກກະພັດໂຣແມັງໃນສະໄໝບູຮານເພື່ອຂະຫຍາຍອານາເຂດຄວບຄຸມແຖບທະເລເມດີເຕລາເນ.

ເຢຍລະມັນເນື່ອງຈາກມີຄວາມຄຽດແຄ້ນໃນສົນທິສັນຍາແວກຊາຍເຊິ່ງປະຊາຊົນເຢຍລະມັນຖືວ່າມັນບໍ່ມີຄວາມຍຸດຕິທໍາຈຶ່ງພາໃຫ້ເກີດທິດສະດີຊາດນິຍົມທີ່ວ່າ: " ດ້ວຍຄວາມເໜືອກວ່າທາງດ້ານຊົນເຜົ່າ " ແລະຄວາມນິຍົມຊາດຢ່າງຮຸນແຮງຂອງຍີ່ປຸ່ນອັນພາໃຫ້ເກີດຄວາມເຊື່ອທີ່ວ່າ: " ການໃຊ້ສົງຄາມເປັນເຄື່ອງມືໃນການສ້າງຄວາມຍິ່ງໃຫຍ່ໃຫ້ແກ່ປະເທດຊາດເປັນສິ່ງທີ່ຖືກຕ້ອງ " ແລະ ທິດສະດີທີ່ວ່າ: ( ສ້າງວົງໄພບູນແຫ່ງອາຊີ ຫຼື ອາຊີສໍາລັບຄົນອາຊີ ) ບັນຫານີ້ໄດ້ນໍາໄປສູ່ຂໍ້ຂັດແຍ່ງທີ່ຍິ່ງໃຫຍ່ໃນເວລາຕໍ່ມາ.

**3. ຄວາມອ່ອນແອ ແລະ ຂາດປະສິດທິພາບຂອງອົງການສັນນິບາດຊາດ**

ພາຍຫຼັງສົງຄາມໂລກຄັ້ງທີ I ໄດ້ເກີດມີກອງປະຊຸມແວກຊາຍຂຶ້ນໃນກອງປະຊຸມນີ້ໄດ້ມີຂໍ້ຕົກລົງໃຫ້ມີການສ້າງຕັ້ງອົງການສັນນິບາດຊາດຂຶ້ນໃນວັນທີ 28.4.1919 ເພື່ອປົກປ້ອງແລະຮັກສາສັນຕິພາບໂລກ. ອົງການສັນນິບາດຊາດບໍ່ສາມາດຄໍ້າປະກັນເອກະລາດຂອງຊາດສາມາຊິກໄດ້ ແລະ ບໍ່ສາມາດແກ້ໄຂບັນຫາ ແລະ ວິກິດການຕ່າງໆທີ່ເກີດຂຶ້ນໄດ້ຍ້ອນບັນຫາປະເທດມະຫາອໍານາດບໍ່ເອົາຫົວຊາຕໍ່ກັບຂໍ້ກໍານົດ ແລະ ກົດລະບຽບຂອງອົງການສັນນິບາດຊາດ ແລະຮັກສາສິດຜົນປະໂຫຍດຂອງຕົນເອງສະແດງອອກໃນກໍລະນີຂອງຍີ່ປຸ່ນບຸກເຂົ້າຈີນ ( ປີ ຄ.ສ 1937 ) ໂດຍບໍ່ປະກາດສົງຄາມ, ສົງຄາມກາງເມືອງຢູ່ສະເປນ ( ປີ ຄ . ສ 1936 ) . ກໍລະນີອີຕາລີບຸກເຂົ້າເອທີໂອເປຍ ( ປີ ຄ.ສ 1935 )...

**4. ການຮ່ວມກຸ່ມຂອງມະຫາອຳນາດ**

ວິດກິດການທາງດ້ານເສດຖະກິດ ປີ ຄ.ສ 1929-1933. ໄດ້ເຮັດໃຫ້ບັນດາຈັກກະພັດໄດ້ແຍກໂຕອອກເປັນ 2 ກຸ່ມຄື:

- ກຸ່ມນາຍທຶນຂຸນເສິກ(ຟາຊິດ)ມີ 3 ປະເທດຄື: ເຢຍລະມັນ, ອີຕາລີ, ຍີ່ປຸ່ນ. ເຊິ່ງລ້ວນແຕ່ປົກຄອງແບບຜະເດັດການ. ມາຮອດປີຄ.ສ1937 ເຢຍລະມັນໄດ້ລົງນາມສົນທິສັນຍາ 3 ຝ່າຍ ( ໄຕຣພາຄີ ) ທີ່ກຸງເບີລິນເພື່ອຮ່ວມກັນຈັດລະບຽບໂລກຄືນໃໝ່ຄື: ຢູໂຣບເປັນຂອງເຢຍລະມັນ, ເອເຊຍເປັນຂອງຍີ່ປຸ່ນ, ຂົງເຂດເມເຕລາເນເປັນຂອງອີຕາລີ. ແລະອີກຈຸດປະສົງໜຶ່ງແມ່ນເພື່ອທັບມ້າງລະບຽບສັນຍາແວກຊາຍ-ວໍຊິງຕັນ.
- ກຸ່ມນາຍທຶນປະຊາທິປະໄຕປະກອບມີ: ອາເມຣິກາ,ອັງກິດ,ຝຣັ່ງ. ກຸ່ມດັ່ງກ່າວເປັນພັນທະມິດກັນມາແຕ່ສົງຄາມໂລກຄັ້ງທີ I . ຈຸດປະສົງໃນການຮ່ວມກຸ່ມແມ່ນເພື່ອສ້າງຕັ້ງແນວໂຮມເອກະພາບຕ້ານລັດທິຟາຊິດ, ຕ້ານສົງຄາມ, ປົກປັກຮັກສາສັນຕິພາບແລະປະຊາທິປະໄຕໃຫ້ແກ່ມ່ວນມະນຸດ.

ເວົ້າລວມແລ້ວທັງສອງກຸ່ມນີ້ລ້ວນແຕ່ຂັດແຍ່ງກັນທາງດ້ານສິດຜົນປະໂຫຍດ ແລະ ສູ້ຍັນກັນໃນທຸກຂົງເຂດເຊິ່ງນັບມື້ນັບເລິກເຊິ່ງ ແລະ ດຸເດືອດເຊິ່ງເປັນສາເຫດໜຶ່ງທີ່ພາໃຫ້ເກີດສົງຄາມໂລກຄັ້ງທີ II.

## II. ການດຳເນີນສົງຄາມ

ສົງຄາມໂລກຄັ້ງທີ II ເປັນສົງຄາມທີ່ມີຂອບເຂດກວ້າງຂວາງ, ຄວບຄຸມດິນແດນໃນຫຼາຍພາກສ່ວນ. ສົງຄາມໄດ້ລະເບີດຂຶ້ນຍ້ອນຟາຊິດເຢຍລະມັນບຸກໂຈມຕີໂປໂລຍຢ່າງກະທັນຫັນໂດຍບໍ່ປະກາດສົງຄາມໃນວັນທີ 1 ກັນຍາ ຄ.ສ 1939. ມາຮອດວັນທີ 3 ກັນຍາ ຄ.ສ 1939 ອັງກິດ ແລະ ຝຣັ່ງໄດ້ປະກາດສົງຄາມກັບເຢຍລະມັນອັນເປັນຂີດໝາຍແຫ່ງການກຳເນີດສົງຄາມໂລກຄັ້ງທີ II. ສົງຄາມ.ໄດ້ແຜ່ຂະຫຍາຍໄປທົ່ວໂລກ ແລະ ກິນເວລາຍາວນານເຖິງ 6 ປີ ຈຶ່ງສິ້ນສຸດລົງໃນວັນທີ 2 ກັນຍາ ຄ.ສ 1945 ເຊິ່ງມີຂົງເຂດການຕໍ່ສູ້ກັນຢູ່ 3 ຂອບເຂດສະໜາມຮົບໃຫຍ່ທີ່ຈະນຳສະເໜີດັ່ງຕໍ່ໄປນີ້:

### 1. ສະໜາມຮົບເອີຣົບ

ສົງຄາມໂລກຄັ້ງທີ II ເລີ່ມຂຶ້ນທຳອິດແມ່ນຢູ່ເທິງສະໜາມຮົບເອີຣົບ,ເມື່ອເຢຍລະມັນບຸກໂຈມຕີໂປໂລຍໃນວັນທີ 1 ກັນຍາ ຄ.ສ 1939 ແບບສາຍຟ້າແລບໂດຍບໍ່ທັນຕັ້ງຕົວ, ເຮັດໃຫ້ອັງກິດ ແລະ ຝຣັ່ງທີ່ເປັນພັນທະມິດຂອງໂປໂລຍຈຳຕ້ອງປະກາດສົງຄາມກັບເຢຍລະມັນໃນວັນທີ 3 ກັນຍາ ຄ.ສ 1939 ອັນເປັນຂີດໝາຍແຫ່ງການກຳເນີດສົງຄາມໂລກຄັ້ງທີ II. ໃນບັ້ນຮົບນີ້ເຢຍລະມັນໄດ້ໃຊ້ກຳລັງບຸກໂຈມຕີເຖິງ 57 ກອງພັນ, ເຮືອບິນ 3 ພັນລຳ ແລະ ລົດຖັງ 3000 ລາ, ປະຕິບັດຕາມແຜນການຮົບ" ແບບສົງຄາມສາຍຟ້າແລບ" ໃນເບື້ອງຕົ້ນເຢຍລະມັນສາມາດບຸກໂຈມຕີເອົາປະເທດຕ່າງໆໃນເອີຣົບຄວາມຕ້ອງການໄດ້ຢ່າງໄວເຊັ່ນ: ຍຶດເອົາແດນມາກ,ນອກແ,ໂຮນລັງ,ແບນຊິກ ແລະ ລຸກຊຳບວກໃນເດືອນ ມີນາ ຫາ ເດືອນ ເມສາ ຄ.ສ 1940. ໃນເວລາຕໍ່ມາເຢຍລະມັນໄດ້ບຸກໂຈມຕີຝຣັ່ງ ແລະ ສາມາດບັງຄັບໃຫ້ຝຣັ່ງຍອມຈຳນົນຕໍ່ເຢຍລະມັນໃນວັນທີ 22 ມິຖຸນາ ຄ.ສ 1940. ບັນດາປະເທດເກອຫຼົ່ານີ້ຖືກເຢຍລະມັນຍຶດຄອງໄດ້ກໍ່ຍ້ອນຍັງມີຄວາມຄິດວ່າຈະສາມາດເຈລະຈາສະຫງົບເສິກກັບເຢຍລະມັນ,ດັ້ງນັ້ນຈຶ່ງບໍ່ເອົາໃຈໃສ່ວຽກງານປ້ອງກັນຊາດ.ສະນັ້ນຈຶ່ງບຸຍຶດເອົາບັນດາປະເທດຕາເວັນຕົກແລະຝຣັ່ງໄດ້ຢ່າງໄວວາ.ໃນຂະນະດຽວກັນຟາຊິດເຢຍລະມັນກໍ່ໃຊ້ກອງທັບອາກາດບຸກໂຈມຕີອັງກິດ ແຕ່ເດືອນ ສິງຫາ ຫາ ເດືອນ ທັນວາ ປີ ຄ.ສ 1940. ໃຊ້ເວລາເຖິງ 5 ເດືອນກໍ່ບໍ່ສາມາດທຳລາຍກອງທັບອັງກິດໄດ້. ດັ່ງນັ້ນ,ເຢຍລະມັນຈຶ່ງເລີກລົ້ມແຜນການດັ່ງກ່າວແລ້ວຫັນທິດໂຈມຕີໄປທາງທິດຕາເວັນອອກກໍ່ຄື:ໃນວັນທີ 22 ມິຖຸນາຄ.ສ 1941 ບຸກເຂົ້າສະຫະພາບໂຊຫວຽດໂດຍບໍ່ປະກາດສົງຄາມ,ໃນການບຸກໂຈມຕີນີ້ໄດ້ແບ່ງອອກເປັນ 3 ປີກຄື:

- ປີກທີ I : ທາງພາກເໜືອ ບັນຊາໂດຍ ນາຍພົນ ວອນລີບ ( V0nleeb ) ໄດ້ເຂົ້າຍຶດເອົາເມືອງຣີກາ ( Riga ) ເພື່ອບຸກເຂົ້າເລນິນກຣາດ ( Leningrad ).
- ປີກທີ II : ທາງພາກກາງ ບັນຊໂດຍ ນາຍພົນ ວອນບອນ ( Von Bock ) ບຸກເຂົ້າເບໂລຣຸດຊີແຕ່ຖືກກອງທັບໂຊວຽດຕໍ່ຕ້ານໃນບັ້ນຮົບສະໂມແລນ(Smolensk)ເພື່ອເດີນທາງສູ່ມົດສະກູ ( Moscow ).
- ປີກທີIII : ທາງພາກໃຕ້ ບັນຊາໂດຍ ນາຍພົນ ຣັນແທດເຂົ້າເມືອງກີແອບ ( Kiev ) ຕາມເສັ້ນທາງຕາກັນຣອກ-ຄາກອຟ-ເຄີຣສ ( Taganrog-Khakov-kursh ) ເຂົ້າສູ່ເຂດອູ່ແກຣນ ( Ukraine ). ແຜນການຂອງເຢຍລະມັນວາງໄວ້ຄື ຕ້ອງຍຶດ ເລນິນກຣາດ, ມົດສະກູ,ກີແອບ ໃຫ້ໄດ້ໃນເວລາ 6 ເດືອນ ແຕ່ຈອມພົນສະຕາລິນ, ຜູ້ຜະເດັດການສູງສຸດແຫ່ງສະຫະພາບໂຊວຽດ ໄດ້ສັ່ງທີ່ທຳການລັດຖະບານອອກຈາກມົດສະກູແລະອອກຄຳສັ່ງໃຫ້ທະຫານແລະປະຊາຊົນຮ່ວມໃຈກັນປ້ອງກັນ 3 ຕົວເມືອງຍຸດທະສາດນີ້ໃຫ້ໄດ້ໂດຍທີ່ຊາວໂຊວຽດທຸກຄົນຈະຍອມຕາຍດີກ່ວາທີ່ຈະໃຫ້ສັດຕູຍຶດ 3 ຕົວເມືອງດັ່ງກ່າວ.

ຮອດທ້າຍ ປີ ຄ.ສ 1941 ກອງທັບເຢຍລະມັນສາມາດບຸກເຂົ້າຮອດໃຈກາງຂອງສະຫະພາບໂຊວຽດ ດາເນີນການປິດລ້ອມເລນິນກຣາດ ແລະ ເຄື່ອນເຂົ້າໄປອີກ 20 Km ກໍຈະເຖິງມົດສະກູ. ແຕ່ແຜນການຂອງເຢຍລະມັນທີ່ຈະເດີນສວນສະໜາມຢູ່ທີ່ຈະຕຸລັດແດງແຫ່ງມົດສະກູ ໄດ້ພັງທະລາຍລົງເພາະກອງທັບແດງໂຊວຽດໄດ້ທຳການຕໍ່ຕ້ານຢ່າງອົງອາດ ແລະ ແຂງແຮງ. ນັບແຕ່ເດືອນ ກຸມພາ ປີ ຄ.ສ 1942 ເປັນຕົ້ນມາກອງທັບເຢຍບະມັນໄດ້ຖືກຕ້ານຄືນ. ໂດຍສະເພາະບັ້ນຮົບລະດູໜາວ ປີ ຄ.ສ 1941 – 1942 ກອງທັບເຢຍລະມັນໄດ້ຖືກດັບສູນເຖິງ 5 ກອງພົນເຊິ່ງເປັນການປະລາໄຊຄັ້ງທຳອິດຂອງເຢຍລະມັນ. ແຕ່ມາຮອດປີ ຄ.ສ 1942 ຟາຊິດເຢຍລະມັນໄດ້ເປີດບັ້ນຮົບບຸກໂຈມຕີໂຊວຽດອີກຄັ້ງໂດຍຍຶດເອົາເຂດເຊບາດສະໂຕຣໂປນ ( Sebastopol ) ແລະ ບຸກເຂົ້າເຂດເລນິນກຣາດໂດຍໃຊ້ກຳລັງພົນເຖິງ 240 ກອງພົນ. ພາຍຫຼັງ 90 ວັນທີ່ປິດລ້ອມເລນິນຣາດກອງທັບຟາຊິດເຢຍລະມັນກໍຖືກຕອບໂຕ້ຢ່າງແຂງແຮງ. ໃນທີ່ສຸດກອງທັບພິເສດຂອງເຢຍລະມັນຈຳນວນ 330.000 ຄົນໄດ້ຖືກທຳລາຍ ( ½ ແລະ 1/3 ຖືກຈັບ ) ໃນເດືອນ ກຸມພາ ປີ ຄ. ສ 1943, ນັບແຕ່ເດືອນພະຈິກ ປີ ຄ.ສ 1942 ຫາ ເດືອນ ທັນວາ ຄ.ສ 1943 ກອງທັບເຢຍລະມັນໄດ້ຖືກປັດເຂ່ຍອອກຈາກວົງສູ້ຮົບເຖິງ 112 ກອງພົນ. ຖືກດັບສູນປະມານ 800.000 ຄົນ, ຍົນຖືກທຳລາຍ 3.000 ລຳ, ລົດຖັງ 4.500 ຄັນ ແລະ ລົດຂົນສົ່ງ 70.000 ຄັນ...ການສູນເສຍຄັ້ງນີ້ເຮັດໃຫ້ກອງທັບເຢຍລະມັນອ່ອນເພຍລົງ. ສະໜາມຮົບເອີຣົບມີຄວາມດຸເດືອດຂຶ້ນກໍຍ້ອນສະຫະລັດໄດ້ເຂົ້າຮ່ວມສົງຄາມໂດຍຍົກພົນຂຶ້ນບົກທີ່ນໍມັງດີ ( Normandy ) ຂອງຝຣັ່ງ. ມາຮອດວັນທີ 6 ມິຖຸນາ ຄ.ສ 1944 ຜ່ານການສູ້ຮົບຂອງຝ່າຍສຳພັນທະມິດກໍສາມາດປົດປ່ອຍຕົວເມືອງປາຣີສຳເລັດໃນວັນທີ 19.8.1944. ມາຮອດວັນທີ 25 ເດືອນດຽວກັນກອງທັບສຳພັນທະມິດກໍຍົກພົນຂຶ້ນບົກທີ່ ໂປຣວັງ ( Provence ) ພາກໃຕ້ຂອງຝຣັ່ງຂັບໄລ່ກອງທັບເຢຍລະມັນຈົນຮອດຊາຍແດນຂອງເຢຍລະມັນ.

ໃນຂະນະດຽວກັນກອງທັບແດງໂຊວຽດກໍເປີດສາກບຸກໂຈມຕີກອງທັບຟາຊິດຢ່າງແຂງແຮງຢູ່ສະໜາມຮົບເອີຣົບໃນຕົວເມືອງວາກໂຊວີ ( ໂປໂລຍ ). ສາມາດປົດປ່ອຍໂປໂລຍໄດ້ ແລະ ສືບຕໍ່ປົດປ່ອຍບູນກາລີ, ລູມານີ, ແຟງລັງ, ເຊັກໂກ, ໂອຕຣິດ... ກອງທັບເຢຍລະມັນຖືກຕີຖອຍຈົນຮອດແບກແລັງ. ໃນຂະນະທີ່ທ່າແຮງທາງສະໜາມຮົບພວມມີຜົນດີແກ່ຝ່າຍສຳພັນທະມິດນັ້ນອັງກິດ, ຈີນ, ໂຊວຽດ ແລະ ອາເມລິກາໄດ້ເປີດກອງປະຊຸມຂຶ້ນທີ່ດຳບາເຕີນໂອກ ( Dambatan-Oaks ) ນອກກຸງວໍຊິງຕັນ ( ສະຫະລັດອາເມລິກາ ) ໃນເດືອນ ສິງຫາ ຄ.ສ 1944 ເພື່ອປຶກສາຫາລືກ່ຽວກັບການເຮັດສົງຄາມສິ້ນສຸດ ແລະ ການສ້າງຕັ້ງອົງການຈັດຕັ້ງສາກົນຄື: ອົງການສະຫະປະຊາຊາດເພື່ອລົງມະຕິດັບສູນຟາຊິດ. ໃນວັນທີ 16 ເມສາ ຄ.ສ 1945 ກອງທັບແດງບຸກໂຈມຕີແບກແລັງເຊິ່ງເປັນເຮືອນຮັງສຸດທ້າຍຂອງຟາຊິດເຢຍລະມັນຕາມທາງເຂົ້າແບກແລງເຢຍລະມັນກໍໄດ້ຈັດວາງກຳລັງເຖິງ 90 ກອງພົນ ມີຈຳນວນພົນຫຼາຍກວ່າ 1 ລ້ານຄົນ, ລົດຖັງ 1.500 ລາ,

ເຮືອບິນຫຼາຍກວ່າ 3.000 ລາ, ສ່ວນຢູ່ໃນຕົວເມືອງແບກແລັງພວກເຂົາໄດ້ສ້າງຕັ້ງກາລັງປ້ອງກັນລວມມີ 200.000 ຄົນ ເຊິ່ງໄດ້ປະກອບອາວຸດທີ່ທັນສະໄໝຢ່າງຄົບຊຸດ. ເພື່ອເອົາຊະນະກອງທະຫານຂອງເຢຍລະມັນກອງບັນຊາການທະຫານສູງສຸດຂອງໂຊວຽດໄດ້ລະດົມກຳລັງເຖິງ 2,5 ລ້ານຄົນ, ລົດຖັງ 6.250 ຄັນ, ເຮືອບິນ 7.500 ລາ, ແຕ່ວັນທີ 16-30 ເດືອນ ເມສາການສູ້ຣົບຢູ່ຊານເມືອງແບກແລັງໄດ້ເລີ່ມແຕ່ວັນທີ 23.4.1945 ໄດ້ບຸກເຂົ້າເຮືອນຮັງຂອງຮິດເລີເທົ່າໃດ ການສູ້ຣົບຍິ່ງດຸເດືອດຂ້ຽວຂາດເທົ່ານັ້ນ. ກອງທະຫານຟາຊິດໄດ້ຍຶດຖະໜົນແຕ່ລະສາຍ, ຫຼັງຄາເຮືອນແຕ່ລະຫຼັງ ແລະ ຂຸມຄອງຂອງພວກເຂົາຢ່າງເດັດດ່ຽວ. ແຕ່ກອງທັບແດງໂຊວຽດນັບມື້ນັບຮັດແຄບວົງລ້ອມເຂົ້າຊັກໄຊ້. ຮອດວັນທີ 30 ເມສາ ກອງທັບແດງໂຊວຽດກໍ່ສາມາດຍຶດໄດ້ຫ້ອງການສະພາແຫ່ງຊາດຂອງເຢຍລະມັນ. ຕອນບ່າຍວັນນັ້ນເອງຜືນທຸງຂອງສະຫະພາບໂຊວຽດກໍ່ໄດ້ປິວສະບັດຢູ່ເທິງຫຼັງຄາຫ້ອງການສະພາແຫ່ງຊາດຮິດເລີກໍ່ຟ້າວຂ້າຕົວຕາຍ. ຮອດວັນທີ 2 ເດືອນ ພຶດສະພາ ກອງທັບອັງກິດຈຶ່ງເປີດ “ ບັ້ນຮົບທີ II “ ຂຶ້ນໃນວັນທີ 6 ມີຖຸນາ ຄ.ສ 1944. ບັ້ນຮົບນີ້ໄດ້ປະກອບສ່ວນເຂົ້າໃນການຊຸກຍູ້ໃຫ້ສົງຄາມຢູ່ທະວີບເອີຣົບຢຸດຕິລົງໂດຍໄວ.

ໃນຄືນວັນທີ 8 ພຶດສະພາ ຄ.ສ 1945 ຢູ່ທີ່ແບກແລັງ, ລັດຖະບານໃໝ່ຂອງເຢຍລະມັນໄດ້ເຊັນສັນຍາຍອມຈຳນົນໂດຍບໍ່ມີເງື່ອນໄຂໃດໆຕໍ່ໜ້າຜູ້ແທນຂອງກອງກຳລັງພັນທະມິດ. ດັ່ງນັ້ນຈຶ່ງເຮັດໃຫ້ສົງຄາມຢູ່ເອີຣົບຢຸດຕິລົງ.ກອງປະຊຸມທີ່ຍັດຕາ ຫຼື ຢານນຕາໃນເດືອນ ກຸມພາ ຄ.ສ 1945 ມີຜູ້ນຳທີ່ສຳຄັນເຊີຊິນ ( ແຫ່ງອັງກິດ ), ຣຸສເວສ ( ແຫ່ງອາເມຫຣິກາ ), ສາຕາລິນ (ແຫ່ງລັດຊຍ).

**2. ສະໜາມຮົບອາຟຣິກາເໜືອ ແລະ ເອີຣົບໃຕ້**

ຄືດັ່ງກ່າວມາແລ້ວວ່າກ່ອນສົງຄາມໂລກຄັ້ງທີ 2 ກຳເນີດຂຶ້ນນັ້ນອິຕາລີມີອານານິຄົມຢູ່ໃນອາຟຣິກາເໜືອ ແລ້ວ 3 ແຫ່ງຄື: ບີລີ, ໂຊມາລີ, ເອໂທໂອບີ, ເຊິ່ງອິຕາລີຫາກໍ່ຍຶດໄດ້ໃນປີ 1936 ນອກຈາກນັ້ນຍັງມີອານບານີໃນເອີຣົບພາກໃຕ້ອີກ 1 ແຫ່ງ ໃນທັດສະນະຂອງອິຕາລີນັ້ນອານານິຄົມດັ່ງກ່າວມີຈຳນວນໜ້ອຍເກີນໄປບໍ່ສົມສັກສີຂອງປະເທດມະຫາອຳນາດຕາມຄວາມຫວັງຂອງມຸດໂຊລີນີທີ່ຢາກເຮັດໃຫ້ອິຕາລີເໝືອນຈັກກະພັດໂລແມັງໃນອາດີດອີກຄັ້ງໜຶ່ງ. ດ້ວຍເຫດນີພາຍຫຼັງທີ່ອິຕາລີປະກາດສົງຄາມກັບອັງກິດ-ຝຣັ່ງໃນວັນທີ 10 ມີຖຸນາຄສ 1940 ກອງທັບອິຕາລີກໍເປີດສາກຍຶດເອົາປະເທໂຊມາລີດ້ວຍການບຸກໂຈມຕີທະຫານອັງກິດຢູ່ທະເລແດງ. ພາຍໃນສອງອາທິດກອງທັບອັງກິດກໍຖືກບັງຄັບໃຫ້ຖອນອອກຈາກໂຊມາລີ. ຈາກນັ້ນກອງທັບອິຕາລີກໍມຸ່ງໜ້າເຂົ້າສູ່ປະເທດເອຍິບໃນເດືອນກັນຍາຄສ 1940 ແລະ ໄດ້ຮັບໄຊຊະນະຢູ່ທີ່ເມືອງເມຊາມາຣູ; ແຕ່ມາຮອດວັນທີ 11 ພະຈິກຄ.ສ 1940 ກອງທັບເຮືອອັງກິດໄດ້ໂຈມຕີຖານທັບເຮືອອິຕາລີທີ່ຢູ່ໂຕຣັນໂຕ, ສາມາດທຳລາຍເຮືອປະຈັນບານອິຕາລີໄດ້ 3 ລຳ, ເຮືອລາດຕະເວນ 2 ລຳ ແລະ ເຮືອຂົນສົ່ງອີກ 2 ລຳ. ໂດຍໄດ້ຮັບການຊ່ວຍເຫຼືອຈາກອິນເດຍກອງທັບອັງກິດກໍ່ໄດ້ບຸກໂຈມຕີກອງທະຫານອິຕາໃນເດືອນທັນວາຄ.ສ 1940, ຮອດເດືອນກຸມພາຄສ 1941 ກອງທັບອັງກິດກໍສາມາດເອົາຊະນະກອອງທັບອິຕາລີຊຶ່ງມີກຳລັງກອງພົນເຖິງ 10 ກອງພົນໄດ້ ແລະຈັບເປັນສະເລີຍເສິກ ເຄື່ອນທັບເຂົ້າຍຶດເອົາປະເທດໂຊມາລີ, ເອທີໂອປີຄືນໃນເດືອນ ເມສາຄ.ສ 1941. ໄປພ້ອມໆກັບຍຶດເອົາປະເທດເກຣັກໃນເດືອນຕຸລາຄ.ສ 1940 ໂດຍໃຊ້ອານບານີເປັນຖານທັບ.ໃນບັ້ນຮົບນີ້ອິຕາລີໄດ້ປະເຊີນນ້າກັບການຕໍ່ຕ້ານກັບຢ່າງອົງອາດກ້າຫານຂອງກອງທັບເກຣັກ. ໂດຍໄດ້ຮັບການຊ່ວຍເຫຼືອຈາກກອງທັບເຢຍລະມັນ, ກອງທັບອິຕາລີຈຶ່ງສາມາດຍຶດຄອງເກຣັກໄດ້ລວມເວລາເຖິງ8 ເດືອນຈຶ່ງສຳເລັດ. ໃນຂະນະດຽວກັນນີ້, ກອງທັບເຢຍລະມັນພາຍຫຼັງໄດ້ຮັບໄຊຊະນະຢູ່ຮົງກາລີ, ຣູມານີ ແລະບູນກາລີໃນຕົ້ນປີຄ.ສ 1941 ກໍ່ໄດ້ສົ່ງກຳລັງບຸກເຂົ້າໄປຍຶດຄອງຢູໂກສະລາວີ, ແຕ່ຖືກກອງທັບຢູໂກສະລາວີຕີຕ້ານຄືນເຢຍລະມັນໄດ້ໃຊ້ເຄື່ອງບິນຖິ້ມລະເບີດໃສ່ຕົວເມືອງແບນກຣາດເປັນການໃຫຍ່ສົມທົບກັບກຳລັງພາກພື້ນດິນ 20 ກອງພົນຈຶ່ງສາມາດຍຶດເຂົ້າເອົາຕົວເມືອງສຳຄັນໃນຢູໂກສະລາວີໄດ້. ວັນທີ 8 ພະຈິກຄ.ສ 1942 ກອງທັບອັງກິດແລະກອງທັບອາເມຣິກາໄດ້ຮ່ວມກັບກອງກຳລັງ “ ຝຣັ່ງເສລີ “ ຍົກພົນຂຶ້ນ

ບົກເປັນຜົນສຳເລັດທີ່ເມືອງກາຊາບລັງກາຂອງມາຣົກ ແລະກອງທັບຂອງຝ່າຍຟາຊິດກໍເລີ່ມມືດມົນເພາະເປັນການຮົບປະລາໄຊຕ+ຫຼອດມາເຊັ່ນ: ກອງທະຫານລົດຖັງຂອງເຢຍລະມັນທີ່ບັນຊາ ໂດຍນາຍພົນຣອມແມນທີ່ມີໜ້າທີ່ຕັດກຳລັງການລຳລຽງຂົນສົ່ງອາວຸດຍຸດທະພັນຂອງຝ່າຍພັນທະມິດໂດຍສະເພາະອາເມລິກາທີ່ເຂົ້າໄປຊ່ວຍສະຫະພາບໂຊວຽດເພື່ອຕໍ່ຕ້ານເຢຍລະມັນ, ແຕ່ຖືກກອງທັບອັງກິດດຳເນີນການບຸກໂຈມຕີຕະຫຼອດເວລາ. ສຸດທ້າຍນາຍພົນຣອກແມນກໍຕ້ອງຍອມວາງອາວຸດພ້ອມກັບທະຫານ 300.000 ຄົນ ໃນເດືອນ ພຶດສະພາ ຄ.ສ 1943 ອັນເປັນຜົນເຮັດໃຫ້ສະໜາມຮົບໃນອາຟຣິກາເໜືອສິ້ນສຸດລົງ

ຫຼັງຈາກນັ້ນກອງທັບຝ່າຍສຳພັນທະມິດກໍບຸກເຂົ້າທະເລເມດີເຕຣາເນ ແລະ ສາມາດຍຶດເກາະຊິຊິນຂອງອີຕາລີໄດ້ໃນເດືອນ ກໍລະກົດ ຄ.ສ 1943 ພາຍໃນ 39 ວັນ. ໄປພ້ອມໆກໍາການບຸກໂຈມຕີຈາກກຳລັງພາກພື້ນດິນ,ກອງທັບສຳພັນທະມິດກໍໄດ້ບຸກໂຈມຕີອີຕາລີທາງອາກາດຕາມສະຖານທີ່ສຳຄັນຕ່າງໆລວມທັງກຸງໂຣມດ້ວຍ. ຕໍ່ໜ້າສະພາບການນັ້ນຊາວອີຕາລີກໍໄດ້ກ່າວປະນາມໂຈມຕີໂຊລີນີຢ່າງຮຸນແຮງ. ໃນທີ່ສຸດກໍຕ້ອງຍອມສະຫຼະຕຳແໜ່ງເມື່ອວັນທີ 24.7.1943 ໃຫ້ຄະນະລັດຖະບານໃໝ່, ແລ້ວລັດຖະບານໃໝ່ຂອງອີຕາລີທີ່ນຳພາໂດຍຈອມພົນປຣີໂຕ ໂບໂດກລີໂອ ໄດ້ເຈລະຈາສັນຍາສະຫງົບເສິກ ໃນວັນທີ 3.9.1943 ເຮັດໃຫ້ອີຕາລີສິ້ນສຸດບົດບາດໃນສົງຄາມໂລກຄັ້ງທີ II ຢ່າງສົມບູນ.

**3. ສະໜາມຮົບອາຊີຕາເວັນອອກ ແລະ ມະຫາສະມຸດປາຊີຟິກ**

ເມື່ອສົງຄາມໂລກໄດ້ລະເບີດຂຶ້ນ ແລະ ແຜ່ລາມຢູ່ເອີຣົບ, ຍີ່ປຸ່ນເຊິ່ງຍຶດຄອງພາກຕາເວັນອອກສ່ຽງເໜືອເມືອງຊາຍຝັ່ງທະເລຂອງຈີນ ມາຕັ້ງແຕ່ປີ 1938 ເປັນຕົ້ນມານັ້ນກໍ່ໄດ້ພະຍາຍາມແຜ່ອິດທິພົນເຂົ້າອາຊີຕາເວັນອອກສ່ຽງໃຕ້ ແລະ ບຸກຍຶດເກາະດອນຕ່າງໆໃນມະຫາສະໝຸດປາຊີຟິກໃນເດືອນ ມິຖຸນາ ປີ ຄ.ສ 1940 ຍີ່ປຸ່ນໄດ້ປະກາດເຂົ້າຮ່ວມສົງຄາມກັບເຢຍລະມັນ ແລະ ອີຕາລີໂດຍມີເນື້ອໃນວ່າຈະຊ່ວຍເຫຼືອເຊິ່ງກັນແລະກັນ ທາງດ້ານການເມືອງ, ເສດຖະກິດ ແລະ ການທະຫານຖ້າປະເທດໃດໜຶ່ງຖືກຮຸກຮານຈາກພາຍນອກ. ໃນຄະນະທີ່ສົງຄາມພວມລະເບີດຂຶ້ນນັ້ນຝຣັ່ງ, ອັງກິດ ແລະ ໂຮນລັງໄດ້ສຸມກຳລັງໃສ່ເອີຣົບເຊິ່ງເປັນການປະປ່ອຍຫົວເມືອງຂຶ້ນຢູ່ອາຊີຕາເວັນອອກສ່ຽງໃຕ້. ສະນັ້ນ, ເປັນໂອກາດດີໃຫ້ແກ່ຟາຊິດຍີ່ປຸ່ນໃນການຂະຫຍາຍອຳນາດໃນຂົງເຂດນີ້ຄື: ໃນເດືອນ ກໍລະກົດ ປີ ຄ.ສ 1941 ກອງທັບຍີ່ປຸ່ນໄດ້ບຸກເຂົ້າພະມ້າ ( ມຽນມາ ), ໄທ, ອິນໂດເນເຊຍ, ຖານທັບອັງກິດຢູ່ສິງກະໂປ ແລະ ອິນດູຈີນ. ແຕ່ເຫດການເຫຼົ່ານີ້ໄດ້ຖືກກີດຂວາງຈາກສະຫະລັດອາເມລິກາເຊິ່ງກຳລັງຂະຫຍາຍບົດບາດໃນຂົງເຂດມະຫາສະໝຸດປາຊີຟິກ.

ສະນັ້ນ, ໃນວັນທີ 7 ທັນວາ ຄ.ສ 1941 ຍີ່ປຸ່ນຈຶ່ງໄດ້ທຳການບຸກໂຈມຕີຖານທັບເຮືອຂອງສະຫະລັດອາເມຣິກາຢູ່ອ່າວເພີນລ໌ຮ່າເບີ ບໍລິເວນເກາະຮາວາຍ ແລະ ເກາະໂຮໂນລູລູເຮັດໃຫ້ກອງທັບເຮືອຂອງອາເມລິກາເສຍຫາຍເປັນຈຳນວນຫຼາຍຄືຕາຍເຖິງ 2.343 ຄົນ ແລະ ບາດເຈັບ 1.200 ຄົນ.

ຫຼັງຈາກນັ້ນຍີ່ປຸ່ນກໍຍຶດເອົາເກາະໃນມະຫາສະໝຸດປາຊີຟິກເຊັ່ນ: ເກາະກວມ, ເກາະເວກ ແລະ ເກາະຟີລິບປິນ ໃນເດືອນ ທັນວາ ຄ.ສ 1941 ແລະ ຍຶດສິງກະໂປຈາກອັງກິດ ໃນວັນທີ 15 ກຸມພາ ຄ.ສ 1942 ແລ້ວສືບຕໍ່ປະຕິບັດການເພື່ອບຸກຍຶດເອົາເກາະອົດສະຕາລີ. ພາຍຫຼັງທີ່ສຳເລັດໃນການຍຶດເອົາອານານິຄົມຂອງປະເທດຕາເວັນຕົກໝົດແລ້ວ, ຍີ່ປຸ່ນຈຶ່ງສະໜັບສະໜູນໃຫ້ຊາວພື້ນເມືອງເຂົ້າຮ່ວມໃນການປົກຄອງດ້ວຍຄຳຂວັນ “ ວົງໄພບູນມະຫາອາຊີບົວລະພາ “ ແລະ ມີຍຸດໂທບາຍມອບເອກະລາດໃຫ້ແກ່ປະເທດເຫຼົ່ານັ້ນແລ້ວສ້າງຕັ້ງລັດຖະບານຫຸ່ນຂຶ້ນເພື່ອຮັບໃຊ້ຈຸດປະສົງຂອງຍີ່ປຸ່ນ. ສ່ວນບັ້ນຮົບມະຫາສະໝຸດປາຊີຟິກນັ້ນ, ໃນໄລຍະທຳອິດຂອງສົງຄາມກອງທັບເຮືອອັນຍິ່ງໃຫຍ່ຂອງຍີ່ປຸ່ນສາມາດຄວບຄຸມທະເລຕອນໃຕ້ໄວ້ໄດ້ຈົນສາສມາດທີ່ຈະຮຸກຮານອົດສະຕາລີໄດ້. ສ່ວນມະຫາສະໝຸດຕອນເໜືອກອງທັບເຮືອຍີ່ປຸ່ນກໍຄວບຄຸມເສັ້ນທາງເດີນເຮືອໄດ້ເທິງເກາະມິດເວຂອງອາເມຣິກາກ ເຖິງຢ່າງໃດກໍຕາມກອງທັບເຮືອຂອງຍີ່ປຸ່ນກໍ່ຄອງຄວາມເປັນເຈົ້າທະເລພຽງແຕ່ 6 ເດືອນທຳອິດຂອງສົງຄາມເທົ່ານັ້ນກໍ່ໝົດອິດທິພົນເນື່ອງຈາກປະລາໄຊຢ່າງໜັກໜ່ວງໃນ

ການສູ້ຮົບກັບກອງທັບອາເມຣິກາ ໃນເດືອນ ເມສາ ຄ.ສ 1942 ເທິງສະໜາມຮົບຄໍຣານ ລະຫວ່າງອິດສະຕາລີກັບໝູ່ເກາະຊາໂລມົງ ກອງບິນອາເມຣິກາໄດ້ໂຈມຕີກອງທັບຍີ່ປຸ່ນຢ່າງນັກ. ກອງທັບຍີ່ປຸ່ນຈຳຕ້ອງສູນເສຍເຮືອບັນທຸກເຄື່ອງບິນ 1 ລຳ, ເຮືອລາດຕະເວນ 4 ລາ, ເຮືອປະຈັນບານ 2 ລາ ແລະ ເຮືອບິນສູ້ຮົບ 322 ລາ. ນອກຈາກນີ້ກອງທັບຍີ່ປຸ່ນຍັງປະລາໄຊໃນບໍລິເວນໝູ່ເກາະມິດເວອີກໃນເດືອນ ພຶດສະພາ ຄ.ສ 1942. ນັບຕັ້ງແຕ່ນັ້ນມາກອງທັບເຮືອຍີ່ປຸ່ນກໍສາມາດດຳເນີນການຮົບໃນທະເລໄດ້ອີກຕໍ່ໄປ ແລະ ກາຍເປັນຝ່າຍຮັບການບຸກໂຈມຕີຂອງກອງທັບເຮືອອາເມຣິກາ.

ໃນປີ ຄ.ສ 1944 ກອງທັບເຮືອອາເມຣິກາກໍ່ເລີ່ມບຸກຍຶດເອົາບັນດາໝູ່ເກາະຕ່າງໆຈາກຍີ່ປຸ່ນຄືນໄດ້ເຊັ່ນ: ເກາະມາກຊານ ( Marshall ), ເກາະກາໂລຣີ ( Calories ) ແລະ ໝູ່ເກາະມາຣີອານ ( Marian ) , ຮອດເດືອນ ຕຸລາ ຄ.ສ 1944 ອາເມຣິກາໄດ້ສຳເລັດໃນການຍຶດຄອງເອົາຟີລິປິນຄືນມາ ແລະ ມາໃນຕົ້ນປີ ຄ.ສ 1975 ຍີ່ປຸ່ນກໍ່ສູນເສຍໝູ່ເກາະໂອກີນາວາ ແລະ ເກາະກີວຊິວ ໃຫ້ແກ່ອາເມຣິກາພາຍຫຼັງການສູ້ຮົບກັນມາເປັນເວລາ 90 ວັນ. ຈາກນັ້ນກອງທັບອາກາດ ແລະ ຝູງບິນອາເມຣິກາຈາກຖານທັບຕ່າງໆກໍ່ໄດ້ບິນທຳລາຍຕົວເມືອງຕ່າງໆຂອງຍີ່ປຸ່ນເຮັດໃຫ້ຍີ່ປຸ່ນຖືກສຍຫາຍຢ່າງໜັກໜ່ວງຄື: ໂຮງງານອຸດສາຫະກຳ 550 ແຫ່ງຖືກທາລາຍ ແລະ ເສັ້ນທາງຄົມມະນາຄົມຖືກຕັດຂາດ.

ວັນທີ 6 ສິງຫາ ຄ.ສ 1945 ປະທານາທິບໍດີທຣູແມນແຫ່ງສະຫະລັດອາເມຣິກາກໍ່ຕັດສິນໃຈໃຊ້ລະເບີດປະລະມະນູໄປຖິ້ມໃສ່ເມືອງຮີໂຣຊິມະໄດ້ເຮັດໃຫ້ປະຊາຊົນຍີ່ປຸ່ນຕ້ອງສູນເສຍຊີວິດ ແລະ ຊັບສິນເປັນຈຳນວນຫຼວງຫຼາຍ.ຈາກນັ້ນ 2 ວັນຕໍ່ມາຄື: ວັນທີ 8 ສິງຫາ ຄ.ສ 1945 ອາເມຣິກາກໍ່ໄດ້ນາເອົາລູກລະເບີດປະລະມະນູລູກທີ 2 ມາຖິ້ມໃສ່ເມືອງນາກາຊາກິອັນໄດ້ເຮັດໃຫ້ປະຊາຊົນຍີ່ປຸ່ນຜູ້ທີ່ບໍ່ມີຄວາມຜິດຫຍັງຕ້ອງສູນເສຍຊີວິດເຖິງ 360.000 ຄົນ ແລະ ທຳລາຍເຮືອນຊານບ້ານຊ່ອງຢ່າງຮາບກ້ຽງ.ການຖິ້ມລະເບີດປະລະມະນູຂອງອາເມຣິກາຄັ້ງນີ້ໄດ້ເຮັດໃຫ້ຊາວໂລກກ່າວປະນາມເພາະເປັນການບໍ່ສົມຄວນທີ່ອາເມຣິກາຈະຕ້ອງກະທຳແບບນີ້.

ວັນທີ 8 ສິງຫາ ຄ.ສ 1945 ໂດຍປະຕິບັດຕາມສົນທິສັນຍາປົດສະດາມສະຫະພາບໂຊວຽດກໍ່ໄດ້ປະກາດສົງຄາມກັບຍີ່ປຸ່ນ ແລະ ວັນທີ 9 ສິງຫາ ຄ.ສ 1945 ກອງທັບແດງໂຊວຽດກໍ່ໄດ້ເປີດສາກບຸກໂຈມຕີທະຫານຍີ່ປຸ່ນຢູ່ມານຈູຣີ,ເກົາຫຼີ ແລະ ປົດປ່ອຍພາກຕາເວັນອອກສ່ຽງເໜືອຂອງປະເທດຈີນ.

ດ້ວຍອຳນາດທຳລາຍຢ່າງມະຫາສານຂອງລະເບີດປະລະມະນູສົມທົບກັບການປະລາໄຊຂອງກອງທັບຍີ່ປຸ່ນໃນເຂດກວາງຕຸ້ງຈາກການບຸກໂຈມຕີຂອງກອງທັບແດງໂຊວຽດຈັກກະພັດຍີ່ປຸ່ນໄດ້ປະກາດຍອມຈຳນົນໃນວັນທີ 15 ສິງຫາ ຄ.ສ 1945 ເຮັດໃຫ້ສົງຄາມຄັ້ງທີ II ຢຸດຕິລົງ.ຫຼັງຈາກການສູ້ຮົບກັນມາເປັນເວລາ 6 ປີໃນສາມສະໜາມຮົບໃຫ່ຍຂອງສາມທະວີບ.

## III. ຜົນກະທົບຂອງສົງຄາມ.

ສົງຄາມໂລກຄັ້ງທີ II ໄດ້ເປີດສາກຂຶ້ນນັບແຕ່ວັນທີ 1 / 9 / 1939 ແລະ ສິ້ນສຸດລົງໃນວັນທີ 2 / 9 /1945ໂດຍນຳໃຊ້ອາວດທີ່ທັນສະໄໝເຂົ້າຮ່ວມໃນສົງຄາມເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດໂລກມັນໄດ້ທຳລາຍຊີວິດ ແລະ ຊັບສິນຂອງມວນມະນຸດເປັນຈຳນວນຫຼວງຫຼາຍເຊິ່ງສິ່ງຜົນສະທ້ອນຕໍ່ເສດຖະກິດ-ສັງຄົມ ແລະ ລະບອບການເມືອງການປົກຄອງຂອງໂລກ ແລະ ສິ່ງຜົນກະທົບຕໍ່ຈິດໃຈຂອງປະຊາຊາດໃນໂລກຈົນບໍ່ສາມາດປະເມີນຄ່າເປັນຕົວເລກໄດ້. ສົງຄາມໄດ້ແກ່ດຶງເອົາ 61 ປະເທດໃນໂລກເຂົ້າຮ່ວມ,ກວມເອົາຈານວນພົນ 1.700.000.000 ຄົນ,ມີຜູ້ເສຍຊີວິດ 58.000.000 ຄົນ,ທະຫານ 32.000.000 ຄົນ, ເສຍຊີວິດຫຼາຍກວ່າໝູ່ແມ່ນສະຫະພາບໂຊວຽດ ຄື : 17 ລ້ານຄົນ, ທະຫານ 6.115.000 ຄົນ,ນາໃຊ້ທຶນເຂົ້າທັງໝ 4.000.000.000.000 $ ( 4.000 ຕື້ $ ) ບໍ່ນັບເງິນເດືອນທະຫານ, ສ່ວນມູນຄ່າຄວາມເສຍຫາຍບໍ່ສາມາດປະເມີນໄດ້ຖ້າທຽບໃສ່ສົງຄາມໂລກຄັ້ງທີ I ເຮົາຈະເຫັນໄດ້ດັ່ງຕາຕະລາງ

| ເນື້ອໃນ | ສົງຄາມໂລກຄັ້ງທີ I | ສົງຄາມໂລກຄັ້ງທີ II |
|---|---|---|
| ເວລາ | 4 ປີ 3 ເດືອນ ( 28/7/1914-11/11/1918 ) | 6 ປີ ( 1/9/1939-2/9/1945) |
| ປະເທດທີ່ເຂົ້າຮ່ວມສົງຄາມ | 36 ປະເທດ | 61 ປະເທດ |
| ຈຳນວນພົນເຂົ້າຮ່ວມທັງໝົດ | 1.000.000.000 | 1.700.000.000 ຄົນ |
| ຈຳນວນຜູ້ເສຍຊີວິດ | 8.524.831 ຄົນ | 58.000.000 ຄົນ |
| ທຶນທີ່ນຳມາໃຊ້ | 338.000.000.000 $ | 4.00.00.00.0 $ |

ສົງຄາມໂລກຄັ້ງທີ II ເປັນສົງຄາມຂະໜາດໃຫ່ຍກວມເອົາຫຼາຍປະເທດ,ບັນດາປະເທດທີ່ປະກາດສະພາວະສົງຄາມນີ້ມີ 76 ປະເທດເຂົ້າຮ່ວມ,ມີການໃຊ້ກຳລັງພົນ 1,7 ຕື້ຄົນ ແລະ ອາວຸດທີ່ທັນສະໄໝເຂົ້າຮ່ວມໃນສົງຄາມເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດໂລກມັນໄດ້ທຳລາຍຊີວິດ ແລະ ຊັບສິນຂອງມວນມະນຸດເປັນຈຳນວນຫຼວງຫຼາຍເຊິ່ງສົ່ງຜົນສະທ້ອນຕໍ່ເສດຖະກິດ-ສັງຄົມ ແລະ ລະບອບການເມືອງການປົກຄອງຂອງໂລກ.

**3.1 ດ້ານການເມືອງ**

ຫຼັງສົງຄາມໂລກຄັ້ງທີ II ການເມືອງ-ການປົກຄອງໄດ້ມີການປ່ຽນແປງໃນຫຼາຍປະເທດເຊັ່ນ : ເຢຍລະມັນໄດ້ຖືກຕັດແບ່ງອອກເປັນ 4 ເຂດ ( 1 ສິງຫາ ຄ.ສ 1945 )ກໍ່ຄືເຂດຕາເວັນອອກປົກຄອງໂດຍໂຊວຽດ,ອີກ 3 ເຂດແມ່ນປົກຄອງໂດຍ 3 ປະເທດມະຫາອຳນາດ ( ອາເມຣິກາ,ອັງກິດ,ຝຣັ່ງ ),ເກົາຫຼີຖືກແບ່ງອອກເປັນ 2 ເຂດຄື : ພາກເໜືອປົກຄອງໂດຍໂຊວຽດ,ພາກໃຕ້ ແມ່ນສະຫະລັດອາເມຣິກາ,ສ່ວນບັນດາຫົວເມືອງຂຶ້ນຂອງພວກຈັກກະພັດໄດ້ລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ,ອິດສະຫຼະພາບຢ່າງລຽດໂດຍສະເພາະແມ່ນຢູ່ທະວີບອາຊີ,ອາຟຣິກາ,ອາເມຣິກາລາຕິນການປ່ຽນແປງດັ່ງກ່າວນັ້ນໄດ້ກໍ່ໃຫ້ເກີດຄວາມຂັດແຍ່ງທີ່ເລິກເຊິ່ງກວ່າເກົ່າໂດຍສະເພາະປະເທດທີ່ມີລະບອບການເມືອງທີ່ແຕກຕ່າງກັນເຊັ່ນ : ລະບອບເສລີປະຊາທິປະໄຕໂດຍມີສະຫະລັດອາເມຣິກາເປັນຜູ້ນຳ ແລະ ລະບອບສັງຄົມນິຍົມ ( ຄອມມູນິດ ) ໂດຍມີສະຫະພາບໂຊວຽດເປັນຜູ້ນຳ.ແຕ່ເຖິງຢ່າງໃດກໍ່ຕາມທ່າອ່ຽງຂອງສັງຄົມໂລກກໍ່ມີຄວາມພະຍາຍາມໄປໃນທາງທີ່ສ້າງສັນຕິພາບ,ອິດສະຫຼະພາບ ແລະ ຮັບປະກັນສິດທິມະນຸດຂອງບັນດາຊາດຫຼາຍຂຶ້ນ.

**3.2 ດ້ານເສດຖະກິດ**

ງົບປະມານທີ່ໃຊ້ເຂົ້າໃນການເຮັດສົງຄາມລວມທັງຝ່າຍໄດ້ຮັບໄຊຊະນະ ແລະປະລາໄຊໃນສົງຄາມລວມເປັນເງິນເຖິງ 4.000 ຕື້ໂດລາສະຫະລັດ (ບໍ່ນັບເງິນເດືອນຂອງທະຫານ)ປະເທດທີ່ຊະນະສົງຄາມໄດ້ຕິດໜີ້ຕ່າງປະເທດເປັນຈຳນວນຫຼວງຫຼາຍເພາະໄດ້ຊ່ວງສົງຄາມພວກເຂົາໄດ້ກູ້ຢືມເງິນເພື່ອຊື້ອາວຸດ ແລະ ສະບຽງອາຫານມາຮັບໃຊ້ເຂົ້າໃນການເຮັດສົງຄາມເຊັ່ນ : ອັງກິດ,ຝຣັ່ງ,ອີຕາລີ...(ສຳລັບຈຳນວນກູ້ຢືມບໍ່ສາມາດລະບຸໄດ້).ດັ່ງນັ້ນ,ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງບັນດາປະເທດທີ່ປະລາໄຊລ້ວນຕ່າງຖືກບັງຄັບໃຫ້ໃຊ້ຄ່າເສຍຫາຍ (ໃຊ້ໜີ້ສົງຄາມ).ແຕ່ບາງປະເທດຖືກມະຫາອຳນາດເຂົ້າມາຍາດແຍ່ງອິດທິພົນເຊິ່ງມັນໄດ້ສະແດງໃຫ້ເຫັນກໍ່ຄື: ຂໍ້ຂັດແຍ່ງໃນກຸງເບີລິນຂອງເຢຍລະມັນ,ບັນຫາຈີນ,ບັນຫາເກົາຫຼີ...ນອກຈາກນີ້ຫຼັງສົງຄາມສະຫະລັດອາເມຣິກາໄດ້ວາງນະໂຍບາຍຟື້ນຟູເສດຖະກິດຂອງບັນດາປະເທດຕ່າງໆທີ່ໄດ້ຮັບຄວາມເສຍຫາຍຈາກສົງຄາມພ້ອມກັນນັ້ນຍັງມີນະໂຍບາຍໃຫ້ກູ້ຢືມເງິນເພື່ອນຳເອົາເງິນມາບູລະນະປະເທດຊາດຂອງຕົນ.

**3.3 ດ້ານສັງຄົມ**

**ກ.ດ້ານບວກ** : ເຮັດໃຫ້ບັນດາປະເທດຫຼືເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນທີ່ເຄີຍຕົກຢູ່ໃຕ້ອິດທິພົນຂອງບັນດາປະເທດຈັກກະພັດລ້ອມແຕ່ພາກັນລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ,ອິດສະຫຼະພາບເພື່ອສ້າງປະເທດຂອງຕົນຂຶ້ນເຊັ່ນ:

- ຫວຽດນາມໄດ້ສ້າງປະເທດຂອງຕົນຂຶ້ນເອີ້ນວ່າ : ສາທາລະນະລັດ ປະຊາທິປະໄຕຫວຽດນາມ ( 2 ກໍລະກົດ 1976 ).
- ຈີນສ້າງປະເທດຂອງຕົນເອງຂຶ້ນເອີ້ນວ່າ : ສາທາລະນະລັດ ປະຊາຊົນຈີນ ( 1 ຕຸລາ ຄ.ສ 1949 ).
- ຄິວບາໄດ້ສ້າງຕັ້ງປະເທດຂອງຕົນຂຶ້ນເອີ້ນວ່າ : ສາທາລະນະລັດ ຄິວບາ ( 1 ມັງກອນ ຄ.ສ 1959 )ສ່ວນຢູ່ທະວີບອາຟຣິກາເຊິ່ງເມື່ອກ່ອນຕົກຢູ່ໃຕ້ການປົກຄອງຂອງຈັກກະພັດກໍ່ລ້ອມແຕ່ພາກັນລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ.

**ຂ. ດ້ານລົບ :**

ສົງຄາມເຮັດໃຫ້ເກີດຄວາມສັບສົນວຸ້ນວາຍ,ປະຊາຊົນລົ້ມຕາຍເປັນຈຳນວນຫຼວງຫຼາຍໂດຍສະເພາະປະເທດທີ່ຖືກປະລາໄຊໃນສງຄາມເດັ່ນກວ່າໝູ່ແມ່ນຢູ່ເຢຍລະມັນ,ຍີ່ປຸ່ນ.ປະຊາຊົນມີຄວາມທຸກຍາກ,ຂາດທີ່ພັກພາອາໃສ,ຂາດສະບຽງອາຫານ.ຈິດໃຈຂອງປະຊາຊົນສ່ວນຫຼາຍກໍ່ໝົດຫວັງ,ສົງຄາມຂອງບາງປະເທດກໍ່ມີການປ່ຽນແປງອັນເນື່ອງຈາກການປ່ຽນແປງຂອງລັດຖະບານ ແລະ ຮູບແບບການປົກຄອງ. ບັນດາຕົວເມືອງຕ່າງໆໄດ້ຮັບຜົນກະທົບຈາກການໃຊ້ລະເບີດທີ່ຮ້າຍແຮງຂອງບັນດາປະເທດມະຫາອຳນາດ.

# ບົດທີ 7
# ການພົວພັນສາກົນພາຍຫຼັງສົງຄາມໂລກແຕ່ປີ ຄ.ສ 1945-1980

ສົງຄາມໂລກຄັ້ງທີ II ເຖິງຈະສິ້ນສຸດລົງແລ້ວກໍ່ຕາມແຕ່ມັນກໍ່ສົ່ງຜົນສະທ້ອນຢ່າງໃຫ່ຍຫຼວງຕໍ່ກັບເອທີການເມືອງໂລກໃນໄລຍະຕໍ່ມາ.ເພື່ອເຮັດໃຫ້ໂລກມີສະຖຽນລະພາບ ແລະ ມີຄວາມໝັ້ນຄົງຈຳເປັນຕ້ອງໄດ້ມີການສ້າງຕັ້ງອົງການລະຫວ່າງຊາດຂຶ້ນເພື່ອໄກ່ເກ່ຍບັນຫາຕ່າງໆ ແລະ ຫຼີກລຽງຄວາມຮຸນແຮງທີ່ຈະເກີດຂຶ້ນຄັ້ງໃໝ່ດັ່ງນັ້ນ,ອົງການສະຫະປະຊາຊາດຈຶ່ງໄດ້ຖືກກຳເນີດຂຶ້ນໃນປີ 1945.ແຕ່ລະບົບການເມືອງໂລກຍັງມີຂໍ້ຂັດແຍ່ງຢ່າງກ້ວາງຂວາງໂດຍສະເພາະອຸດົມການທາງດ້ານການເມືອງເຮັດໃຫ້ໂລກແບ່ງອອກເປັນສອງຂົ້ວລະບອບການເມືອງຄື: ລະບອບການເມືອງເສລີປະຊາທິປະໄຕທຶນນິຍົມມີອາເມຣິກາເປັນແກນນຳ ແລະ ລະບອບການເມືອງສັງຄົມນິຍົມເຊິ່ງມີສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດເປັນແກນນຳ.ທັງສອງລະບົບການເມືອງໄດ້ມີຂໍ້ຂັດແຍ່ງກັນຮອບດ້ານບໍ່ວ່າທາງດ້ານເສດຖະກິດ,ການເມືອງ,ສັງຄົມ,ກໍ່ຄືການທະຫານ ແລະ ໄດ້ແຂ່ງກັນສະແຫວງຫາພັນທະມິດ,ການຂະຫຍາຍກຳລັງທາງທະຫານ ແລະ ສະສົມອາວຸດທີ່ຮ້າຍແຮງ.ນອກນີ້ຍັງມີການປະເຊີນໜ້າກັນລະຫວ່າງສອງລະບອບການເມືອງໂດຍເອົາປະເທດທີ່ສາມເປັນສະໜໍລະພູມເຊັ່ນ : ວິກິດການເຢຍລະມັນ,ເຮັດໃຫ້ເຢຍລະມັນແບ່ງອອກເປັນ 2 ປະເທດໃນປີ 1947 ,ວິກິດການແຫຼມເກົາຫຼີໃນປີ 1951-1952,ວິກິດການອິນດູຈີນ ແລະ ອື່ນໆ...ເຊິ່ງນັກປະຫວັດສາດເອີ້ນຂໍ້ຂັດແຍ່ງທີ່ກ່າວມານີ້ວ່າ:"ສົງຄາມເຢັນ"ເລີ່ມເກີດຂຶ້ນໃນປີ 1947ເປັນຕົ້ນມາຈົນເຖິງປີ 1974 ຈຶ່ງຄ່ອຍໆຄາຍຄວາມຄຽດຕຶງລົງ.

ເມື່ອສະພາບການທາງດ້ານການເມືອງຂອງໂລກມີການປ່ຽນແປງຄືກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ເກີດມີອີກກຸ່ມປະເທດໜຶ່ງເຊິ່ງເປນປະເທດທີ່ກຳລັງພັດທະນາ ແລະ ປະເທດທີ່ດ້ອຍພັດທະນາເຊິ່ງເອີ້ນວ່າ : ກຸ່ມປະເທດໂລກທີສາມຫຼື ກຸ່ມປະເທດທີ່ບໍ່ຝັກໄຝ່ຝ່າຍ ( ກຸ່ມປະເທດເປັນກາງ).

ພາຍຫຼັງສົງຄາມໂລກຄັ້ງທີ II ສິ່ງທີ່ພົ້ນເດັ່ນອີກບັນຫາໜຶ່ງແມ່ນຂະບວນການປົດປ່ອຍຊາດຂອງປະເທດທີ່ຕົກເປັນອານານິຄົມຂອງປະເທດຈັກກະພັດໃນເມື່ອກ່ອນໄດ້ມີຄວາມພະຍາຍາມຈະປົດປ່ອຍຕົນເອງອອກຈາກແອກຄອບຄອງຂອງຈັກກະພັດໂດຍສະເພາະຢູ່ຂົງເຂດ. ອາຟຣິກາໃນຊຸມປີ 1950 ຫາ 1965,ຂົງເຂດອາເມຣິກາລາຕິນໃນຊຸມປີ 1950,ຂົງເຂດອາຊີຕາເວັນອອກສ່ຽງໃຕ້ ແລະ ເຂດອື່ນໆ.ໄດ້ມີການຕໍ່ສູ້ເພື່ອຄວາມເປັນເະລາດ ແລະ ສິດທິອັນຊອບທາຂອງຕົວເອງ.

## 1. ການສ້າງຕັ້ງອົງການສະຫະປະຊາຊາດ United Nations Organization

ພາຍຫຼັງສັງຄາມໂລກຄັ້ງທີ I ສິ້ນສຸດລົງບັນດາປະຊາຊາດໄດ້ລົງນາມສ້າງຕັ້ງອົງການລະຫວ່າງຊາດ (ອົງການສັນນິບາດຊາດ)ຂຶ້ນໃນວັນທີ 28 ເມສາ 1919 ເພື່ອເຮັດໜ້າທີ່ຮັກສາສັນຕິພາບຂອງໂລກ ແລະ ສົ່ງເສີມຄວາມຮ່ວມມືລະຫວ່າງຊາດແຕ່ກໍ່ບໍ່ປະສົບຜົນສຳເລັດເນື່ອງຈາກບັນດາປະເທດມະຫາອຳນາດບໍ່ໃຫ້ການຮ່ວມມື ແລະ ສົ່ງເສີມອົງການດັ່ງກ່າວຢ່າງຈິງຈັງເພາະຕ່າງຝ່າຍຕ່າງກໍ່ພະຍາຍາມຮັກສາໄວ້ເຊິ່ງສິດ ແລະ ຜົນປະໂຫຍດຂອງຕົນເອງສ່ວນລວມກໍ່ຄືສັງຄົມໂດຍບໍ່ປະຕິບັດຕາມກົດກະຕິກາຂອງອົງການສັນນິບາດຊາດທີ່ວາງອອກ ແລະ ເຮັດໃຫ້ສັງຄົມໂລກກ້າວໄປສູ່ຄວາມຂັດແຍ່ງ ແລະ ນຳເອົາສົງຄາມມາສູ່ສັງຄົມມະນຸດອີກຄັ້ງໜຶ່ງ.

ສົງຄາມໂລກຄັ້ງທີ II ລະເບີດຂຶ້ນມັນໄດ້ສ້າງຄວາມເສຍຫາຍອັນມະຫາສານຈົນບໍ່ສາມາດປະເມີນຄ່າໄດ້.ເຮັດໃຫ້ບັນດາປະຊາຊາດໃນໂລກໄດ້ສຳນຶກເຫັນການແກ້ໄຂບັນຫາລະຫວ່າງໂດຍສັນຕິວິທີ ແລະ ການຢູ່ຮ່ວມກັນໂດຍສັນຕິເຮັດໃຫ້ແນວຄິດທີ່ຈະຟື້ນຟູອົງການລະຫວ່າງຊາດເກີດຂຶ້ນອີກເທື່ອໜຶ່ງ.ມາຮອດວັນທີ 1 ມັງກອນ 1942 ໄດ້ມີ 4

ປະເທດມະຫາອຳນາດ ( ອາເມຣິກາ,ອັງກິດ,ສະຫະພາບໂຊວຽດ ແລະ ຈີນ )ເຂົ້າຮ່ວມປຶກສາຫາລື ແລະ ປະກາດຖະແຫຼງການການສະຫະປະຊາຊາດຂຶ້ນເຊິ່ງເປັນຈຸດກຳເນີດຂອງຄຳວ່າ : " ອົງການສະຫະປະຊາຊາດ"ຂຶ້ນເປັນຄັ້ງທຳອິດ. ວັນທີ 25 ເມສາ 1945ບັນດາຜູ້ແທນຂອງປະຊາຊາດຕ່າງໆລວມ 51 ປະເທດໄດ້ເຂົ້າຮ່ວມປະຊຸມກັນທີ ຊານຟານຊິດສະໂກ ,ສະຫະລັດອາເມຣິກາເພື່ອຄົ້ນຄ້ວາ ແລະ ກຳນົດຮ່າງກົດບັດຮ່ວມກັນ.ມາເຖິງວັນທີ 26 ມິຖຸນາ 1945ໄດ້ມີການປະກາກໃຊ້ກົດບັດສະຫະປະຊາຊາດຢ່າງເປັນທາງການ.ວັນທີ 24 ຕຸລາ 1945 ບັນດາຜູ້ແທນຂອງປະຊາຊາດຕ່າງໆຈຶ່ງໄດ້ຮ່ວມກັນລົງສັດຕະຍາບັນຮັບຮອງເອົາກົດບັດປະຊາຊາດຢ່າງເປັນທາງການ ແລະ ຖືເປັນວັນສ້າງຕັ້ງອົງການສະຫະປະຊາຊາດຢ່າງເປັນທາງການ.

| | | | | | |
|---|---|---|---|---|---|
| ລດ | ຊື່ ແລະ ນາມສະກຸນ | ສັນຊາດ | ດຳລົງຕຳແໜ່ງ | ດຳລົງຕຳແໜ່ງ | ໝາຍເຫດ |
| 1 | ທຣິກເວີ ລີ | ນໍແວ | 2 ກຸມພາ 1946 | 10 ພະຈິກ 1952 | |
| 2 | ດ໊າກ ຮັນມາສເທີນ | ສະວີເດັນ | 10 ເມສາ 1953 | 18 ກັນຍາ 1961 | |
| 3 | ອູ້ຕັ່ນ | ພະມ້າ | 30 ພະຈິກ 1961 | 31 ທັນວາ 1971 | |
| 4 | ຄວັນ ວັນໄຮມ໌ | ອັອດເຕຍ | 1 ມັງກອນ 1972 | 31 ທັນວາ 1981 | |
| 5 | ມາບິເອ ເປເຣສເດກູເອ | ເປຣູ | 1 ມັງກອນ 1982 | 31 ທັນວາ 1991 | |
| 6 | ບູສຣຸດ ບູສຣຸດ ມໍລີ | ເອຢິບ | 1 ມັງກອນ 1992 | 31 ທັນວາ 1996 | |
| 7 | ໂຄພີ ແອນນັນ | ການາ | 1 ມັງກອນ 1997 | 31 ທັນວາ 2006 | |
| 8 | ບັນກີມູນ | ເກົາຫຼີໃຕ້ | 1 ມັງກອນ 2007 | 31 ທັນວາ 2016 | |
| 9 | ອັງຕີນີຢູ ກູເຕຣີຊ | ປ໊ອກຕຸ່ຍການ | 1 ມັງກອນ 2017 | ດຳລົງຕຳແໜ່ງ | |

ລາຍຊື່ເລຂາທິການສະຫະປະຊາຊາດ

### 1.1 ຈຸດປະສົງ ແລະ ໜ້າທີ່ຂອງອົງການສະຫະປະຊາຊາດ

ອົງການສະຫະປະຊາຊາດເປັນອົງການໜຶ່ງທີ່ມີຈຸດປະສົງສ້າງຕັ້ງຂຶ້ນເພື່ອປະຕິບັດຫຼັກການພື້ນຖານຕ່າງໆດັ່ງນີ້:

- ເພື່ອຮັກສາສັນຕິພາບ ແລະ ຄວາມໝັ້ນຄົງຄວາມປອດໄພລະຫວ່າງປະເທດ,ຮ່ວມກັນດຳເນີນມາດຕະການຢ່າງເຂັ້ມງວດໃນການປ້ອງກັນ,ກຳຈັດການກະທຳທີ່ເປັນການຮຸກຮານ ຫຼື ຄຸກຄາມສັນຕິພາບ.ຫາວິທີສະກັດກັ້ນຂໍ້ຜິດພາດລະຫວ່າງຊາດໂດຍສັນຕິວິທີ.
- ເພື່ອສົ່ງເສີມຄວາມສຳພັນລະຫວ່າງຊາດໂດຍຍຶດຫຼັກການຄວາມສະເໝີພາບ ແລະ ສິດທິໃນການເລືອກທິດທາງໃນການປົກຄອງຕົນເອງ.
- ເພື່ອບັນລຸຄວາມຮ່ວມມືລະຫວ່າງປະເທດໃນການແກ້ໄຂບັນຫາທາງດ້ານເສດຖະກິດ,ສັງຄົມ,ວັດທະນະທຳ ແລະ ມະນຸດສະທຳ,ສົ່ງເສີມໃຫ້ທຸກຊາດເຄົາລົບສິດທິມະນຸດຕະຫຼອດເຖິງເສລີພາບຂັ້ນພື້ນຖານ,ໂດຍບໍ່ຈຳແນກຄວາມແຕກຕ່າງທາງດ້ານເຊື້ອຊາດ,ຜິວພັນ,ເພດ,ພາສາ ແລະ ສາສະໜາ.
- ເພື່ອເປັນສູນກາງສຳລັບການປະສານງານຂອງປະຊາຊາດທັງໝົດໃນການດຳເນີນງານໃຫ້ບັນລຸຈຸດປະສົງ ແລະ ເປົ້າໝາຍທັງໝົດຂອງອົງການສະຫະປະຊາຊາດ.

### 1.2 ລະບົບການຈັດຕັ້ງຂອງອົງການ ສ ປ ຊ

ເພື່ອເຮັດໃຫ້ວຽກງານຂອງອົງການສະຫະປະຊາຊາດສາມາດບັນລຸໄດ້ເຖິງຈຸດປະສົງທີ່ກຳນົດໄວ້ໃນກົດມັນຈຶ່ງຈຳເປັນຕ້ອງມີໜ່ວຍງານເພື່ອຮັບຜິດຊອບໜ້າວຽກຂອງໃຜລາວ.ດັ່ງນັ້ນອົງການສະຫະປະຊາຊາດຈຶ່ງປະກອບດ້ວຍລະບົບການຈັດຕັ້ງທີ່ສຳຄັນທັງໝົດ 6 ອົງການດັ່ງນີ້ :

## 2. ອົງປະກອບຂອງອົງການສະຫະປະຊາຊາດ

### 2.1 ສະມັດຊາໃຫຍ່ (General Assembly)

ເປັນສູນກາງຂອງສະຫະປະຊາຊາດ,ເປັນບ່ອນປະຊຸມໃຫຍ່ຂອງສະມາຊິກທັງໝົດ,ກອງປະຊຸມສະໄໝສາມັນປີລະ 1 ຄັ້ງເຊິ່ງປະເທດສະມາຊິກທັງໝົດຈະສົ່ງຕົວແທນເຂົ້າຮ່ວມ 5 ທ່ານ,ແຕ່ມີສິດໃນການອອກສຽງພຽງແຕ່ 1 ສຽງເພື່ອພິຈາລະນາລົງມະຕິຕ່າງໆ.ສະມັດຊາໃຫຍ່ມີໜ້າທີ່ພິຈາລະນາບັນຫາຕ່າງໆ.ພາຍໃນຂອບເຂດຂອງກົດບັດສະຫະປະຊາຊາດວ່າງອອກ,ລວມເຖິງການເລືອກຕັ້ງເອົາຄະນະມົນຕີ,ເລຂາທິການ ແລະ ຕຸລະການປະຈຳສານໂລກ.ການຕັດສິນບັນຫາຕ່າງໆແມ່ນຖືເອົາປະຊາມະຕິຂອງບັນດາປະເທດສະມາຊິກທັງໝົດເປັນຕົວຕັດສິນ.

### 2.2 ຄະນະມົນຕີຄວາມໝັ້ນຄົງ ( Security council )

ມີໜ້າທີ່ໂດຍກົງໃນການແກ້ໄຂບັນຫາຂໍ້ຜິດພາດລະຫວ່າງປະເທດດ້ວຍຮູບການສັນຕິວິທີເຊັ່ນ: ການສອບສວນ ,ພິຈາລະນາຕັດສິນຊີ້ຂາດ,ໃຊ້ການບັງຄັບທາງດ້ານເສດຖະກິດເຫຼົ່ານີ້ເປັນຕົ້ນ,ເພື່ອເຮັດໃຫ້ໂລກເກີດສັນຕິພາບ ແລະ ຄວາມໝັ້ນຄົງຖາວອນ.ອົງການນີ້ປະກອບດ້ວຍປະເທດທີ່ເປັນສະມາຊິກຢູ່ 15 ປະເທດ,ໃນນັ້ນປະກອບມີປະເທດທີ່ເປັນສະມາຊິກຖາວອນ 5 ປະເທດ (ສະຫະລັດອາເມຣິກາ,ຣາຊະອານາຈັກອັງກິດ,ສາທາລະນະລັດຝຣັ່ງ,ສະຫະພາບໂຊວຽດ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນຈີນ),ສ່ວນອີກ 10 ປະເທດແມ່ນສະມາຊິກບໍ່ຖາວອນເຊິ່ງໄດ້ມາຈາກການເລືອກຕັ້ງຂອງສະມັດຊາໃຫຍ່,ມີວາລະດຳລົງຕຳແໜ່ງ 2 ປີໂດຍຈະໝູນວຽນໄປເລື້ອຍໆຈົນກວ່າຈະຄົບ.

### 2.3 ຄະນະມົນຕີເສດຖະກິດ - ສັງຄົມ ( Economic and Soclal Council )

ເປັນຕົວແທນເຮັດໜ້າທີ່ດຳເນີນການດ້ານມະນຸດສະທຳ,ເສດຖະກິດ-ສັງຄົມຂອງອົງການສະຫະປະຊາຊາດ. ຊອກຫາວິທີທາງໃນການປັບປຸງໃຫ້ແກ່ບັນດາປະເທດທີ່ເປັນສະມາຊິກທີ່ຍັງພັດທະນາຊ້າ,ສົ່ງເສີມຄວາມກ້າວໜ້າທາງດ້ານເສດຖະກິດ ແລະ ຄວາມປອດໄພທາງສັງຄົມຂອງບັນດາຊາດ.ອົງການນີ້ປະກອບດ້ວຍສະມາຊິກ 54 ປະເທດຈະດຳລົງຕຳແໜ່ງ 3 ປີ ແລະ ຈະມີສະມາຊິກຖືກທອດຖອນ 18 ປະເທດໝູນວຽນກັນໄປ.ໜ້າທີ່ສຳຄັນຂອງອົງການນີ້ແມ່ນ ຮ່ວມມືກັບກຳມະທິການຕ່າງໆເປັນຕົ້ນຄະນະກຳມະທິການສະຖິຕິ,ຄະນະກຳມະທິການປະຊາກອນ,ຄະນະກຳມະທິການພັດທະນາສັງຄົມ ແລະ ອົງການອື່ນໆ.ນອກນີ້ຍັງມີໜ້າທີ່ຮ່ວມມືກັບທະບວງທີ່ສຳນານງານອື່ນໆຕື່ມອີກເພື່ອໃຫ້ການຊ່ວຍເຫຼືອໃຫ້ແກ່ນາໆປະເທດດ້ານມະນຸດສະທຳ.

### 2.4 ຄະນະມຸນຕີພິທັກ (Trusteeship council )

ເຮັດໜ້າທີ່ດູແລຮັກສາ ແລະ ຄຸ້ມຄອງປະເທດທີ່ຍັງບໍ່ທັນໄດ້ຮັບເອກະລາດຢ່າງສົມບູນ.ເຊິ່ງປະກອບມີປະເທດທີ່ເປັນສະມາຊິກ ປະກອບກັບປະເທດສະມາຊິກຖາວອນຂອງຄະນະມຸນຕີຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ແລະ ປະເທດສະມາຊິກອື່ນໆເທົ່າທີ່ຈຳເປັນ.ໂດຍເຮັດໜ້າທີ່ພິຈາລະນາຄຳລາຍງານຂອງປະເທດທີ່ເຮັດປົກຄອງດິນແດນ ແລະ ເຮັດຂໍ້ສະເໜີແນະເພື່ອດຳເນີນການໃນດິນແດນພິທັກໃຫ້ມີຄວາມກ້າວໜ້າ ແລະ ສາມາດປົກຄອງຕົນເອງໄດ້,ພິຈາລະນາຄຳອຸທອນຂອງນິຕິບຸກຄົນ ຫຼື ບຸກຄົນໃນດິນແດນພິທັກ ແລະດິນແດນອື່ນໆພ້ອມທັງຈັດຕັ້ງຄະນະຜູ້ແທນເພື່ອກວດສອບສະພາບພາຍໃນປະເທດທີ່ຢູ່ພາຍໃຕ້ການພິທັກ.

### 2.5 ສານລະຫວ່າງປະເທດ ( Intemetional Court of Gustice)

ມີສຳນັກງານໃຫຍ່ຢູ່ເມືອງເຮກ ປະເທດຮອນແລນມີໜ້າທີ່ໃຫ້ຄຳແນະນຳກ່ຽວກັບກົດໝາຍ ແລະ ຕີຄວາມໝາຍກ່ຽວກັບກົດໝາຍຂອງລັດໂດຍອີງໃສ່ຄວາມສະໝັກໃຈຂອງຄູ່ກໍລະນີເປັນປະເດັ່ນສຳຄັນ. ສານລະຫວ່າງປະເທດຈະມີອຳນາດໃນການພິພາກສາກໍ່ຕໍ່ເມື່ອຄູ່ກໍລະນີໃຫ້ການເຫັນດີເທົ່ານັ້ນ.

**2.6 ສຳນັກເລຂາທິການ (Secietariat)**

ເປັນອົງການຫຼັກຂອງ ສປຊ . ເຮັດໜ້າທີ່ບໍລິຫານໃຫ້ແກ່ອົງການອື່ນໆ,ດຳເນີນງານ ແລະ ບໍລິຫານໂຄງການຂອງອົງການຕ່າງໆທີ່ ສປຊ ວາງໄວ້.ສະມາຊິກປະກອບດ່ວຍບຸກຄົນຂອງປະເທດສະມາຊິກຕ່າງໆທັງໝົດໂດຍເຮັດໜ້າທີ່ຮັບໂຮມ ແລະ ກະກຽມເລື່ອງລາວຄວາມເປັນມາຂອງບັນຫາຕ່າງໆໃຫ້ແກ່ກອງປະຊຸມ.ເລຂາທິການໃຫ່ຍ ສປຊ.ມີວາລະດຳລົງຕຳແໜ່ງ 3 ປີ,ນັບແຕ່ 1945ເປັນຕົ້ນມາມີທັງໝົດມີ 8 ທ່ານ.

ນອກນີ້ຍັງມີທະບວງການສຳນານງານພິເສດທີ່ເຮັດໜ້າທີ່ກ່ຽວກັບເສດຖະກິດ - ສັງຄົມ, ວັດທະນະທຳ, ການສຶກສາ, ອານາໄມ ແລະ ອື່ນໆ ທີ່ເຮັດໜ້າທີ່ກ່ຽວພັນກັບ ສປຊ. ລວມມີ 16 ທະບວງການຫຼັກຄື : FAO, ICAO, ILO, UNESCO, WHO, IMS, UNDP, IFC, UPC, IFU, IMO, IFAD, IBRD, IAEA (International Atomic Energy Agency), GATT ແລະ WTO

**2.7 ທະບວງພິເສດ ( Specialized Agences )**

ອີງຕາມຂໍ້ 57 ຂອງກົດບັດສະຫະປະຊາຊາດ ໄດ້ກ່າວເຖິງອົງການຊຳນານພິເສດໄດ້ເວົ້າວ່າ ອົງການລະຫວ່າງປະເທດຕ່າງໆທີ່ໄດ້ສະຖາປະຊາຂຶ້ນ ດ້ວຍການຕົກລົງລະຫວ່າງລັດຖະບານ ແລະ ມີຄວາມຮັບຜິດຊອບລະຫວ່າງປະເທດຢ່າງກວ້າງຂວາງໃນດ້ານເສດຖະກິດ-ສັງຄົມ, ວັດທະນະທຳ, ການສຶກສາ, ອານາໄມ ແລະ ອື່ນໆທີ່ກ່ຽວຂ້ອງມີຄວາມຕ້ອງການກັບອົງການສະຫະປະຊາຊາດ

ອົງການເຫຼົ່ານີ້ ຫຼັງຈາກໄດ້ນຳເຂົ້າສູ່ຄວາມສຳພັນກັບ ສ.ປ.ຊ ເອີ້ນວ່າ: ອົງການຊຳນານພິເສດ ຫຼື ທະບວງພິເສດ ( Specialised Agencies ) ອົງການຊານານພິເສດຂອງສະຫະປະຊາຊາດປະກອບດ້ວຍ 16 ທະບວງການເຊັ່ນ: ອົງການອາຫານ ແລະ ກະເສດແຫ່ງສະຫະປະຊາຊາດ ( Food and Agriculture : FAO ) , ອົງການການບິນພົນລະເຮືອນລະຫວ່າງປະເທດ( Intrenational Civil Aviatoin Organzation: ICAO , ອົງການແຮງງານລະຫວ່າງປະເທດ(ntrenational Labour Organzation ILO ), ອົງການສຶກສາວິທະຍາສາດ( UNEESCO )ແລະວັດທະນະທຳແຫ່ງສະຫະປະຊາຊາດ( World Health Organzation WHO, ອົງການນາໄມໂລກ ( Internatiponal Monetry: IMF , ກອງທຶນການເງິນລະຫວ່າງປະເທດ( Uneted Natois Monetary Fund : IMF , ອົງການສະຫະປະຊາຊາດເພື່ອການພັດທະນາ , ອົງການການເງິນ, ສະຫະພາບໄປສະນີສາກົນ, ສະຫະພາບໂທລະຄົມມະນາຄົມລະຫວ່າງປະເທດ, ອົງການອຸຕຸນິຍົມໂລກ, ອົງການກິດຈະການຄ້າຄ້າທາງທະເລລະຫວ່າງປະເທດ, ອົງການຊັບສິນທາງພຸດທິປັນຍາແຫ່ງໂລກ, ກອງທຶນລະຫວ່າງປະເທດເພື່ອພັດທະນາກະສິກຳສະຫະປະຊາຊາດ ແລະ ທະນາຄານໂລກ ຫຼື IBRD

ນອກຈາກທີ່ກ່າວມາແລ້ວ ອົງການສະຫະປະຊາຊາດຍັງມີອົງການລະຫວ່າງປະເທດ ອິດສະຫຼະ ( Autonomous Internatiponal Organzation) ອົງການນີ້ ປະກອບມີອົງການທີ່ມີລັກສະນະຄ້າຍຄືກັບອົງການຊຳນານພິເສດ ກໍ່ເນື່ອງມາຈາກວ່າລັກສະນະ ແລະ ວິວັດທະນາການໃນການດຳເນີນງານຂອງອົງການນີ້ມີລັກສະນະພິເສດເຊັ່ນ: ອົງການພະລັງງານປະລາມະນູລະຫວ່າງປະເທດ ( IAFA : Internatiponal Atomic Enegy ) , ອົງການ GATT: General Agreement onTariffs and Trade , ການຕົກລົງວ່າດ້ວຍອັດຕາພາສີອາກອນ ແລະ ການຄ້າ

## 3. ຄວາມຂັດແຍ່ງລະຫວ່າງສອງລະບົບການເມືອງ

### ຄວາມຂັດແຍ່ງລະຫວ່າງໂລກເສລີກັບໂລກສັງຄົມນິຍົມ

ສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງພ້ອມກັບຄວາມຫາຍະນະຂອງບັນດາປະເທດມະຫາອຳນາດເອີຣົບຕາເວັນຕົກ ແລະ ການກ້າວຂຶ້ນສູ່ອຳນາດຂອງສະຫະລັດອາເມຣິກາ ຊຶ່ງມີຖານະທາງເສດຖະກິດໝັ້ນຄົງ ຈຶ່ງກາຍເປັນ

ຜູ້ນຳຂອງໂລກເສລີ. ໃນຂະນະດຽວກັນສະຫະພາບໂຊວຽດກໍກ້າວຂຶ້ນສູ່ຄວາມມີອຳນາດ ມີອິດທິພົນອັນເນື່ອງມາຈາກຄວາມປະສົບຜົນສຳເລັດໃນສົງຄາມໂລກຄັ້ງທີ II ໂດຍສະເພາະການຊ່ວຍເຫຼືອປົດປ່ອຍບັນດາປະເທດເອີຣົບຕາເວັນອອກໃຫ້ຫຼຸດພົ້ນຈາກອິດທິພົນຂອງພວກພາຊິດ, ອັນເປັນຜົນເຮັດໃຫ້ປະເທດເຫຼົ່ານັ້ນໄດ້ຕັດສິນໃຈສ້າງຊາດຂອງຕົນໄປຕາມເສັ້ນທາງສັງຄົມນິຍົມ, ເຊິ່ງເປັນຜົນເຮັດໃຫ້ສັງຄົມນິຍົມໄດ້ກາຍເປັນລະບົບການເມືອງໜຶ່ງທີ່ມີບົດບາດໃນເວທີສາກົນ ເຮັດໃຫ້ໂລກຖືກແບ່ງອອກເປັນ 2 ລະບົບ (2 ຄ້າຍ) ທີ່ມີຄວາມຂັດແຍ່ງກັນທາງດ້ານອຸດົມການຄື :

- ຄ້າຍເສລີປະຊາທິປະໄຕ ໂດຍມີສະຫະລັດອາເມຣິກາເປັນຜູ້ນຳ
- ຄ້າຍສັງຄົມນິຍົມ (ຄອມມູນິດ) ໂດຍມີສະຫະພາບໂຊວຽດເປັນຜູ້ນຳ

ທັງສອງຄ້າຍຕ່າງກໍມີຄວາມແຕກຕ່າງກັນໃນລະບົບການປົກຄອງ, ລະບົບເສດຖະກິດ ແລະສັງຄົມ. ສະນັ້ນຈຶ່ງມີຄວາມຂັດແຍ່ງກັນ, ໂດຍສະເພາະຈັກກະພັດອາເມຣິກາໄດ້ພະຍາຍາມເຮັດທຸກວິທີທາງເພື່ອຫວັງບີບຮັດ ລັດທິຄອມມູນິດບໍ່ໃຫ້ຂະຫຍາຍຕົວ, ຂະນະດຽວກັນສະຫະພາບໂຊວຽດກໍໄດ້ພະຍາຍາມສຸດຂີດ ເພື່ອປົກປ້ອງ ແລະ ເສີມຂະຫຍາຍລັດທິສັງຄົມນິຍົມ; ດັ່ງນັ້ນຈຶ່ງມີຄວາມເຄັ່ງຕຶງໃນສັງຄົມໂລກ ແລະ ນັບມື້ນັບທະວີຄວາມຮຸນແຮງຂຶ້ນເຊິ່ງນັກປະຫວັດສາດໄດ້ໃຫ້ນາມວ່າ : " ສົງຄາມເຢັນ "

ການປະເຊີນໜ້າກັນຂອງສອງລະບົບການເມືອງ ຫຼື ເອີ້ນວ່າ ສົງຄາມເຢັນນັ້ນໄດ້ດຳເນີນໄປໃນຫຼາຍຮູບການໂດຍປາສະຈາກການໃຊ້ອາວຸດເຮັດສົງຄາມແບບເປີດເຜີຍ ຄືກັບໄລຍະກ່ອນ, ແຕ່ຫາກແມ່ນການແຂ່ງຂັນກັນຊ່ວງຊີງກັນໃນດ້ານຕ່າງໆເຊັ່ນ :

- **ດ້ານອຸດົມການ :** ແຕ່ລະຝ່າຍຈະພະຍາຍາມໂຄສະນາຊວນເຊື່ອໃຫ້ເຫັນຜົນສຳເລັດ ແລະ ຄວາມດີເລີດຂອງອຸດົມການຂອງຕົນ, ຝ່າຍໂລກເສລີ ກໍໂຄສະນາເຖິງຊີວິດທີ່ມີສິດເສລີພາບຢ່າງກວ້າງຂວາງຂອງຕົນ. ສ່ວນຝ່າຍສັງຄົມນິຍົມ ກໍໂຄສະນາເຖິງຊີວິດທີ່ມີຄວາມສະເໝີພາບ ປະຊາທິປະໄຕ ຂອງປະຊາຊົນຝ່າຍຕົນ. ເຄື່ອງມືໃນການປະຕິບັດແມ່ນ ສຳນັກງານຂ່າວສານວັດທະນະທຳຂອງແຕ່ລະຝ່າຍ, ໂຄງການແລກປ່ຽນການສຶກສາວັດທະນະທຳ...
- **ດ້ານການເມືອງ ການທູດ :** ເພື່ອສະແຫວງຫາສາພັນທະມິດສາລັບໄວ້ຕໍ່ສູ້ກັນໃນເວທີການເມືອງລະຫວ່າງປະເທດເຊັ່ນ : ການຊັກຊວນຮ່ວມກຸ່ມທຳສົນທິສັນຍາຮ່ວມກັນ, ການຈັດປະຊຸມລະດັບນາໆຊາດ, ການແຂ່ງຂັນໃນອົງການສະຫະປະຊາຊາດເປັນຕົ້ນ.
- **ດ້ານເສດຖະກິດ :** ສະແດງອອກໃນການຊ່ວຍເຫຼືອທາງດ້ານເສດຖະກິດ ແກ່ບັນດາປະເທດພັນທະມິດເຊັ່ນ : ການໃຫ້ກູ້ຍືມເງິນ ຫຼື ໃຫ້ການຊ່ວຍເຫຼືອລ້າ. ນອກນີ້ຍັງມີການໃຊ້ມາດຕະການທາງດ້ານເສດຖະກິດ ເພື່ອຕອບໂຕ້ຝ່າຍກົງກັນຂ້າມເຊັ່ນ : ການປິດລ້ອມດ້ານເສດຖະກິດ. ນອກນີ້ຍັງມີການຈັດຕັ້ງກຸ່ມທາງດ້ານເສດຖະກິດຊ່ວງຊີງກັນເຊັ່ນ : ໃນຂະນະທີ່ສະຫະລັດອາເມຣິກາປະກາດໃຊ້ແຜນການມາກຊານ (Marshall Plan) ໃນປີ ຄ.ສ 1947 ເພື່ອຟື້ນຟູເສດຖະກິດເອີຣົບຕາເວັນຕົກອັນນຳໄປສູ່ການກໍ່ຕັ້ງ ອົງການວ່າດ້ວຍຄວາມຮ່ວມມືທາງດ້ານເສດຖະກິດ ຂອງເອີຣົບ (Organization for European Economic Cooperation) "OEEC" ໃນປີ ຄ.ສ 1948 ນັ້ນ, ສະຫະພາບໂຊວຽດ ກໍໄດ້ປະກາດໃຊ້ແຜນການ ໂມໂລຕົບ (Molotov Plan) ໃນປີ ຄ.ສ 1947 ແລະ ກ້າວໄປສູ່ການຈັດຕັ້ງສະພາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ (COMECON) ໃນປີ ຄ.ສ 1948.
- **ດ້ານການທະຫານ :** ມີການສະສົມອາວຸດທີ່ນັບມື້ນັບທັນສະໄໝ ແລະ ຫຼວງຫຼາຍ, ການຊ້ອມຮົບເພື່ອບໍ່ໃຫ້ຝ່າຍກົງກັນຂ້າມທ້າທາຍປະເຊີນໜ້າ, ການໃຫ້ຄວາມຊ່ວຍເຫຼືອທາງດ້ານການທະຫານແກ່ພັນທະມິດເຊັ່ນ :

ຊ່ວຍເຫຼືອອາວຸດ, ຊ່ຽວຊານການທະຫານຕະຫຼອດຮອດການສົ່ງກອງທະຫານໄປຊ່ວຍເຫຼືອພັນທະມິດ ແລະ ການເຊັນສົນທິສັນຍາທາງດ້ານການທະຫານຊ່ວງຊີງກັນເຊັ່ນ : ເມື່ອຝ່າຍໂລກເສລີສ້າງຕັ້ງກຸ່ມ ນາໂຕ (NATO) ໃນປີ ຄ.ສ 1949 ແລະ ກຸ່ມ ຊີອາໂຕ (SEATO) ໃນປີ ຄ.ສ 1954, ຝ່າຍສັງຄົມນິຍົມກໍໄດ້ສ້າງຕັ້ງກຸ່ມ ວາກ ໂຊວີ (Warsaw Pact) ໃນປີ ຄ.ສ 1955 ເພື່ອເປັນການຕອບໂຕ້, ແຕ່ຕົກມາຮອດປີ ຄ.ສ 1959 ສະຫະລັດອາເມຣິກາກໍໄດ້ສ້າງຕັ້ງອົງການ ນາໆລັດອາເມຣິກາ (OAS) ແລະກຸ່ມສົນທິສັນຍາກາງ(CETO) ຂຶ້ນອີກເພື່ອຊ່ວງຊີງອຳນາດອິດທິພົນໃນໂລກ.

- **ດ້ານວິທະຍາການ ແລະ ເຕັກໂນໂລຊີ :** ໄດ້ພະຍາຍາມສະແດງຄວາມສຳເລັດທາງວິທະຍາສາດ ທີ່ໃຊ້ເຕັກໂນໂລຊີຊັ້ນສູງເຊັ່ນ : ການຄິດຄົ້ນປະດິດສິ່ງໃໝ່, ອາວຸດທັນສະໄໝ, ການສຳຫຼວດອາວະກາດ...ເພື່ອສ້າງສັດທາໃຫ້ແກ່ສະມາຊິກ ຫຼື ພັນທະມິດຝ່າຍຕົນ ແລະ ເປັນການສ້າງຄວາມຢຳເກງຂົ່ມຂູ່ຝ່າຍກົງກັນຂ້າມຕື່ມອີກ.

**3.1 ລະບົບເສລີນິຍົມ**

ໂລກເສລີນິຍົມ ໝາຍເຖິງກຸ່ມປະເທດທີ່ຢຶດໝັ້ນການປົກຄອງປະເທດຕາມລະບອບປະຊາທິປະໄຕນາຍທຶນ ແລະ ລະບົບເສດຖະກິດເສລີ ທີ່ມີຄວາມຜູກພັນກັບສະຫະລັດອາເມຣິກາທັງດ້ານການເມືອງ, ເສດຖະກິດ ແລະການທະຫານ ລັກສະນະສຳຄັນຂອງປະເທດກຸ່ມໂລກທີສາມຈະມີລັກສະນະອຸດົມການການຮ່ວມມືກັນເຊິ່ງສະແດງອອກດັ່ງນີ:

- ການປົກຄອງເປັນແບບປະຊາທິປະໄຕນາຍທຶນ
- ເສດຖະກິດເປັນລະບົບເສດຖະກິດແບບເສລີ
- ໄດ້ຮັບການຊີ້ນຳຈາກສະຫະລັດອາເມຣິກາໃນຖານະເປັນຜູ້ນາໂລກເສລີ.

ສະພາບທາງດ້ານເສດຖະກິດການນເມືອງ ແລະ ສັງຄົມຂອງກຸ່ມປະເທດໂລກເສລີແບ່ງອອກເປັນສອງກຸ່ມໃຫຍ່ຄື: ເສດຖະກິດຂອງກຸ່ມປະເທດທີ່ພັນທະນາແລ້ວ ແລະ ເສດຖະກິດນ້ອຍຂອງກຸ່ມປະເທດທີ່ກຳລັງພັດທະນາ ເປັນເສດຖະກິດແບບອຸດສາຫະກຳ, ມີການໃຊ້ເຄື່ງກົນຈັກຊ່ວຍໃນການຜະລິດ, ມີການໃຊ້ເທັກໂນໂລຊີ, ມີການສະສົມທຶນ ແລະ ມີການລົງທຶນຂະຫຍາຍຕົວການຜະລິດ.

| | ປະເທດທີ່ພັດທະນາແລ້ວ | ປະເທດທີ່ກຳລັງພັດທະນາ |
|---|---|---|
| ເສດຖະກິດ | - ເສດຖະກິດແບບອຸດສາຫະກາ<br>- ໃຊ້ເຄື່ອງກົນຈັກ ແລະ ເທັກໂນໂລຊີເຂົ້າໃນການຜະລິດ<br>- ສະສົມທຶນ ແລະ ລົງທຶນເຂົ້າໃນການຜະລິດສູງ.<br>- ກຸ້ມຕົນເອງ | - ເສດຖະກິດແບບກະສິກຳ<br>- ໃຊ້ແຮງງານຫຼາຍກວ່າເຄື່ອງຈັກໃນການຜະລິດ, ເທັກໂນໂລຢີໃນການຜະລິດຕ່ຳ<br>- ການສະສົມທຶນໜ້ອຍ, ການລົງທຶນໃນການຜະລິດບໍ່ສູງ<br>- ເພິ່ງຕົນເອງຍັງບໍ່ໄດ້ ຕ້ອງຂໍຄວາມຊ່ວຍເຫຼືອຈາກຊາດອື່ນ<br>- ລັດມີສ່ວນໃນການການິດ ແລະ ສ້າງເສດຖະກິດຫຼາຍ |
| ການເມືອງ ແລະ ສັງຄົມ | - ລະບອບປະຊາທິປະໄຕ<br>- ມີພັກການເມືອງ ພຽງສອງພັກ ຫຼື ຫຼາຍພັກ<br>- ປະຊາກອນສ່ວນໃຫຍ່ມີລະດັບການສຶກສາສູງ. | - ລະບອບຜະເດັດການ ຫຼື ປະສົມກັບປະຊາທິປະໄຕ<br>- ມີຫຼາຍພັກການເມືອງ, ກຸ່ມພະລັງງານ |

| | | |
|---|---|---|
| | | ການເມືອງສ່ວນໃຫຍ່ມີອິດທິພົນທາງດ້ານການທະຫານ<br>- ປະຊາກອນສ່ວນໃຫຍ່ມີລະດັບການສຶກສາບໍ່ສູງ |

ລັກສະນະຄວາມສໍາພັນພາຍໃນຂອງກຸ່ມໂລກເສລີ ນອກຈາກຈະມີຄວາມສໍາພັນທາງການທູດ, ການຄ້າແລ້ວຍັງມີຄວາມສໍາພັນໃນຮູບແບບພິເສດອີກເຊັ່ນ ການໃຫ້ການຊ່ວຍເຫຼືອ ໃນຮູບແບບຕ່າງໆທາງໃນດ້ານເສດຖະກິດ ແລະ ການທະຫານ ໂດຍມີການໃຊ້ອົງກອນຕ່າງປະເທດເປັນເຄື່ອງມືໃນການດໍາເນີນຄວາມສໍາພັນລະຫວ່າງປະເທດໃນກຸ່ມໂລກເສລີ.

ຕົວຢ່າງ:

- ອົງການນານາລັດອາເມຣິກາ ທີ່ສ້າງຕັ້ງຂຶ້ນໃນເດືອນກັນຍາ ຄ.ສ 1947 ທີ່ປະເທດ ເບຣຊິນ
- ອົງການສົນທິສັນຍາອັດລັງຕິກເໜືອ ( ) ທີ່ສ້າງຕັ້ງຂຶ້ນໃນວັນທີ 4 ເມສາ 1949
- ອົງການສົນທິສັນຍາອາຊີຕາເວັນອອກສຽງໃຕ້ ສ້າງຕັ້ງຂຶ້ນໃນວັນທີ 8 ກັນຍາ ຄ.ສ 1954

**3.2 ລະບົບສັງຄົມນິຍົມ**

ສັງຄົມນິຍົມ ໝາຍເຖິງປະເທດທີ່ຍຶດຖືລັດທິມາດ-ເລນິນ ເປັນເຄື່ອງມືໃນການຊີ້ນໍາໃນການຈັດການປົກຄອງ ແລະ ດໍາເນີນນະໂຍບາຍການຕ່າງປະເທດ ໂດຍສະເພາະສະຫະພາບໂຊວຽດເປັນຜູ້ນໍາການເຄື່ອນໄຫວໃນໄລຍະທໍາອິດ. ແຕ່ຫຼັກຈາກທີ່ໂລກສັງຄົມນິຍົມ ( ກອມມູນິດ ) ມີຄວາມແຕກຕ່າງອອກເປັນສອງກຸ່ມແລ້ວ ສະມາຊິກກຸ່ມໂລກກອມມູນິດບາງປະເທດກໍ່ສະໜັບສະໜູນສາທາລະນະລັດປະຊາຊົນຈີນເປັນຜູ້ນໍາ ເຊັ່ນ  ເກົາຫຼີເໜືອ ແລະ ກໍາປູເຈຍ, ໃນຄວາມເປັນຈິງນັ້ນໂລກກອມມູນິດພາຍໃຕ້ການຊີ້ນໍາຂອງສະຫະພາບໂຊວຽດ ແລະ ສາທາລະນາລະລັດປະຊາຊົນຈີນມີອິດທິພົນຫຼາຍໃນສັງຄົມໂລກ ຫຼື ນອກຈາກບັນດາປະເທດສະມາຊິກແລ້ວ ຍັງຊີ້ນໍາພັກກອມມູນິດໃນບັນດາປະເທດຕ່າງໆໃນໂລກເກືອບ 100 ກວ່າພັກທີ່ມີການເຄື່ອນໄຫວໄປຕາມແນວທາງທີ່ທັງສອງປະເທດກໍານົດ.

| **ລໍາດັບ** | **ທະວີບ** | **ປະເທດ** | **ໝາຍເຫດ** |
|---|---|---|---|
| | **ທະວີເອີຣົບ** | ສະຫະພາບໂຊວຽດ | |
| 1 | | ສປ ໂປໂລຍ | |
| 2 | | ສປບູນກາລີ | |
| 3 | | ສປ ຣູມານີ | |
| 4 | | ສປ ອານບານີ | |
| 5 | | ສປ ຮົມກາລີ | |
| 6 | | ສປ ເຊັກໂກສະໂລວາກີ | |
| 7 | | ສປ ເຢຍລະມັນ | |
| 8 | | ສ ຢູໂລສະໂລວາກີ | |
| 9 | | | |
| | **ອາຊີ** | | |

| | | | |
|---|---|---|---|
| 10 | | ສປ ມົງໂກລີ | |
| 11 | | ສ.ປ ຈີນ | |
| 12 | | ສສ ຫວຽດນາມ | |
| 13 | | ສປ ເກົາຫຼີ | |
| 14 | | ສປປ ລາວ | |
| 15 | | ສ ກຳປູເຈຍ | |
| | **ອາເມຣິກາ** | | |
| 16 | | ສ ກຸຍບາ | |
| 17 | | ສ ນີກາຣາກົວ | |
| | **ອາຟຣິກາ** | | |
| 18 | | ອັງໂກລາ | |

ລະບົບເສດຖະກິດເປັນແບບສັງຄົມນິຍົມໂດຍແມ່ນລັດເປັນເຈົ້າຂອງປັດໄຈການຜະລິດ, ພື້ນຖານເສດຖະກິດສ່ວຍໃຫຍ່ເປັນອຸດສາຫະກຳ, ການອອມຊັບ ແລະ ການລົງທຶນເປັນຂອງລັດ, ການຄ້າຢູ່ສະເພາະໃນແຕ່ລະກຸ່ມ, ຜະລິດຕະພັນສິນຄ້າສົ່ງອອກແມ່ນສິນຄ້າທາງດ້ານອຸດສາຫະກຳ. ເວົ້າລວມແລ້ວ, ການຈັດການລະບົບເສດຖະກິດຂອງບັນດາປະເທດໃນກຸ່ມສັງຄົມນິຍົມ ແມ່ນມີລັກສະນະຮູບແບບທີ່ຄ້າຍຄືກັນເຊັ່ນ ມີການວາງແຜນພັດທະນາຊັບພະຍາກອນຢ່າງຊັດເຈນ ແລະ ກຳນົດການເຮັດວຽກຂອງກຳມະກອນ ຫຼື ຜູ້ອອກແຮງງານຕາມແຜນພັນທະນາເສດຖະກິດທີ່ວາງໄວ້ຢ່າງລະອຽດ.

ລັກສະນະຄວາມສາພັນ ຫຼື ພານພົວພັນໃນກຸ່ມໂລກສັງຄົມນິຍໄມ ຕັ້ງຢູ່ບົນຫຼັກການທີ່ແຕກແຕ່າງກັນໄປຕາກຄວາມສຳພັນໃນກຸ່ມໂລກເສລີ ໂດຍກຸ່ມປະເທດສັງຄົມນິຍົມຖືອຸດົມການມາກ-ເລນິນ ເປັນເປົ້າໝາຍໃນການເຄື່ອນໄຫວຮ່ວມມືກັນ ເຖິງວ່າຈະມີການຈັດແຍ່ງກັນພາຍໃນ ແຕ່ກໍ່ຍັງຍຶດຖືໃນອຸດົມການທີ່ເປັນສ່ວນໜຶ່ງຂອງກອມມູນິດ.

ນອກຈາກນີ້, ການພົວພັນຂອງປະເທດສະມາຊິກຈະບໍ່ຕ້ອງດຳເນີນການໃດໆທີ່ອາດເປັນໄພຕໍ່ຄວາມໝັ້ນຄົງຂອງປະເທດກອມມູນນິດອື່ນ. ບັນດາປະເທດສະມາຊິກຈະຕ້ອງພາກັນຫາທົນທາງຢັບຢັ້ງແກ້ໄຂທັງທີ. ເຖິງຢ່າງໃດກໍ່ຕາມ, ໃນການດຳເນີນນະຟບາຍການຕ່າງປະເທດນັ້ນແຕ່ລະປະເທດສະມາຊິກໃນກຸ່ມໂລກສັງຄົມນິຍົມຈະອິດສະຫຼະໃນການກຳນົດແນວທາງການດຳເນີນນະໂຍບາຍການຕ່າງປະເທດຂອງຕົນ ຄືຄຳນຶ່ງເຖິງຜົນປະໂຫຍດຂອງຊາດເປັນຫຼັກໃນການດຳເນີນນະໂຍບາຍຕ່າງປະເທດ.

ເວົ້າລວມແລ້ວ ແຕ່ຊຸມປີ 50 ຈົນຮອດຊຸມປີ 80 ຂອງສະຕະວັດທີ 20 ບັນດາປະເທດໃນກຸ່ມສັງຄົມນິຍົມໄດ້ມີການພັດທະນາ ສ້າງສາຂະຫຍາຍຕົວຕາມແຕ່ລະບາດແກ້າວຂອງແຜນການ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເທື່ອລະກ້າວ. ແຕ່ພໍກ້າວເຂົ້າສູ່ປີ ຄ.ສ 1985 ລະບົບສັງຄົມນິຍົມ ໂດຍສະຫະພາບໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກໄດ້ເລີ່ມມີການປ່ຽນແປງໃໝ່ ຕາມທິດສະດີ( ເປຍເຣສໂຕຍກາ ) ທີ່ຮູ້ຈັກກັນດີໃນນາມຈິນຕະນາການໃໝ່ ຂອງກໍບາຊອບ ໄດ້ສົ່ງຜົນເຮັດໃຫ້ບັນດາປະເທດສັງຄົມນິຍົມເອີຣົບຕາເວັນອອກ ແລະ ສະຫະພາບໂຊວຽດກ້າວສູ່ເສັ້ນທາງທີ່ຜິດພາດ. ພ້ອມດຽວກັນນັ້ນ, ມະຫາອຳນາດຂອງໂລກສັງຄົມນິຍົມກໍສວຍໂອກາດໃຊ້ຊ່ອງວ່າງຂອງທິດສະດີດັ່ງກ່າວດຳເນີນການແບ່ງແຍກ, ຍຸຍົງໃຫ້ເກີດສະພາບຄວາມວຸ້ນວາຍ ສຸດທ້າຍເຮັດໃຫ້ລະບົບສັງຄົມນິຍົມໃນເອີຣົບຕາເວັນອອກພັງທະລາຍລົງ.

ແຕ່ເຖິງຢ່າງໃດກໍ່ຕາມ, ລັດທິລັດຄົມມິວນິດກໍ່ຍັງຄົງຖືຮັກສາ ແລະ ເສີມຂະຫຍາຍຢ່າງມີທ່າອິດປະດິດສ້າງຢູ່ໃນຫຼາຍປະເທດ ເຊັ່ນ ສາທາລະນະລັດ ປະຊາຊົນຈີນ, ສາທາລະນະລັດສັງຄົມນິຍົມ, ສາທາລະນະລັດກຸຍບາ ແລະ ປະເທດອື່ນໆ.

## 4. ການສ້າງກຸ່ມສຳພັນທາງການທະຫານຂອງສອງລະບົບການເມືອງໂລກ

### 4.1 ກຸ່ມທະຫານປ້ອງກັນອາຊີຕາເວັນອອກສຽງໃຕ້ ( SEATO )

ອົງການສົນທິສັນຍາເອເຊຍຕາເວັນອອກສຽງໃຕ້ (SEATO) ແມ່ນອົງການສາກົນເພື່ອການປ້ອງກັນປະເທດລວມຢູ່ໃນອາຊີຕາເວັນອອກສຽງໃຕ້ທີ່ສ້າງຂຶ້ນໂດຍສົນທິສັນຍາດ້ານອາຊີຕາເວັນອອກສຽງໃຕ້ ຫຼື Manila Pact, ລົງນາມໃນເດືອນກັນຍາ 1954 ທີ່ນະຄອນຫຼວງມະນິລາ, ປະເທດຟີລິບປິນ. ສະຖາບັນຢ່າງເປັນທາງການຂອງ SEATO ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 19 ກຸມພາ 1955 ໃນກອງປະຊຸມຄູ່ຮ່ວມມືສົນທິສັນຍາທີ່ບາງກອກ, ປະເທດໄທ.[1] ສຳນັກງານໃຫຍ່ຂອງອົງການກໍ່ຕັ້ງຢູ່ໃນບາງກອກ. ແປດສະມາຊິກໄດ້ເຂົ້າຮ່ວມອົງການຈັດຕັ້ງ. ໂດຍພື້ນຖານແລ້ວແມ່ນສ້າງຂຶ້ນເພື່ອສະກັດກັ້ນຜົນປະໂຫຍດຂອງພວກຄອມມູນິດໃນອາຊີຕາເວັນອອກສຽງໃຕ້, ໂດຍທົ່ວໄປແລ້ວ SEATO ຖືວ່າເປັນຄວາມລົ້ມເຫລວ ເພາະວ່າຂໍ້ຂັດແຍ່ງພາຍໃນ ແລະ ຂໍ້ຂັດແຍ່ງໄດ້ຂັດຂວາງການນຳໃຊ້ກອງທັບ SEATO ໂດຍທົ່ວໄປ; ແນວໃດກໍ່ຕາມ, ໂຄງການວັດທະນະທຳ ແລະ ການສຶກສາທີ່ໄດ້ຮັບທຶນຈາກ SEATO ໄດ້ສົ່ງຜົນກະທົບອັນຍາວນານໃນອາຊີຕາເວັນອອກສຽງໃຕ້. SEATO ຖືກຍຸບລົງໃນວັນທີ 30 ມິຖຸນາ 1977 ຫຼັງຈາກສະມາຊິກຫຼາຍຄົນໄດ້ສູນເສຍຄວາມສົນໃຈ ແລະຖອນຕົວອອກ.

### 4.2 ສົນທິສັນຍາວາກຊໍ ( Warsawpact )

ອົງການສົນທິສັນຍາວໍຊໍ[3] (WTO), ຢ່າງເປັນທາງການແມ່ນສົນທິສັນຍາມິດຕະພາບ, ການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນແລະກັນ,[4] ທີ່ຮູ້ຈັກທົ່ວໄປໃນນາມສົນທິສັນຍາວໍຊໍ (WP),[5] ແມ່ນສົນທິສັນຍາດ້ານປ້ອງກັນຊາດລວມທີ່ລົງນາມໃນວໍຊໍ, ປະເທດໂປແລນ, ລະຫວ່າງ ສະຫະພາບໂຊວຽດ ແລະອີກ 7 ປະເທດສາທາລະນະລັດສັງຄົມນິຍົມ Bloc ຕາເວັນອອກຂອງເອີຣົບກາງ ແລະຕາເວັນອອກໃນເດືອນພຶດສະພາ 1955, ໃນລະຫວ່າງສົງຄາມເຢັນ. ສັນຍາວໍຊໍແມ່ນການເສີມຂະຫຍາຍການທະຫານໃຫ້ແກ່ສະພາການຊ່ວຍເຫຼືອດ້ານເສດຖະກິດເຊິ່ງກັນແລະກັນ (CoMEcon), ອົງການເສດຖະກິດພາກພື້ນສຳລັບລັດສັງຄົມນິຍົມຂອງເອີລົບກາງ ແລະ ຕາເວັນອອກ. ສົນທິສັນຍາ Warsaw ໄດ້ຖືກສ້າງຕັ້ງຂຶ້ນໃນປະຕິກິລິຍາຕໍ່ການລວມຕົວຂອງເຢຍລະມັນຕາເວັນຕົກເຂົ້າໄປໃນ NATO[6] ໃນ 1955 ຕາມກອງປະຊຸມລອນດອນ ແລະ ປາຣີຂອງ 1954 ຄອບຄອງໂດຍສະຫະພາບໂຊວຽດ, ສົນທິສັນຍາ Warsaw ໄດ້ຖືກສ້າງຕັ້ງຂຶ້ນເປັນຄວາມສົມດຸນຂອງອຳນາດຫຼື counterweight ກັບ NATO.[15] ບໍ່ມີການປະທະກັນທາງທະຫານໂດຍກົງລະຫວ່າງ 2 ອົງການ; ແທນທີ່ຈະ, ຄວາມຂັດແຍ້ງໄດ້ຖືກຕໍ່ສູ້ບົນພື້ນຖານອຸດົມການ ແລະ ໃນສົງຄາມຕົວແທນ. ທັງ NATO ແລະສົນທິສັນຍາ Warsaw ໄດ້ນຳໄປສູ່ການຂະຫຍາຍກຳລັງທະຫານແລະການລວມຕົວຂອງພວກເຂົາເຂົ້າໄປໃນບັນດາກຸ່ມທີ່ກ່ຽວຂ້ອງ.[16] ການມີສ່ວນພົວພັນທາງທະຫານທີ່ໃຫຍ່ທີ່ສຸດຂອງມັນແມ່ນການບຸກໂຈມຕີ Warsaw Pact ຂອງເຊັກໂກສະໂລວາເກຍໃນເດືອນສິງຫາ 1968 (ດ້ວຍການເຂົ້າຮ່ວມຂອງບັນດາປະເທດ Pact ທັງຫມົດຍົກເວັ້ນ Albania ແລະ Romania), [15], ເຊິ່ງໃນບາງສ່ວນ, ໄດ້ເຮັດໃຫ້ Albania ຖອນຕົວອອກຈາກ Pact ຫນ້ອຍກວ່າຫນຶ່ງເດືອນຕໍ່ມາ. Pact ໄດ້ເລີ່ມຕົ້ນທີ່ຈະ unravel ກັບການແຜ່ກະຈາຍຂອງການປະຕິວັດຂອງ 1989 ໂດຍຜ່ານກຸ່ມຕາເວັນອອກ, ເລີ່ມຕົ້ນດ້ວຍການເຄື່ອນໄຫວສາມັກຄີໃນໂປໂລຍ,[17] ຜົນສຳເລັດການເລືອກຕັ້ງຂອງຕົນໃນເດືອນມິຖຸນາ 1989 ແລະ Pan-European Picnic ໃນເດືອນສິງຫາ 1989.

ເຢຍລະມັນຕາເວັນອອກໄດ້ຖອນຕົວອອກຈາກສົນທິສັນຍາພາຍຫຼັງເຢຍລະມັນເປັນເອກະພາບໃນປີ 1990. ໃນວັນທີ 25 ກຸມພາ 1991, ທີ່ກອງປະຊຸມຢູ່ຮົງກາຣີ, ສັນຍາດັ່ງກ່າວໄດ້ຮັບການປະກາດສິ້ນສຸດລົງໂດຍລັດຖະມົນຕີປ້ອງກັນປະເທດ ແລະ ລັດຖະມົນຕີການຕ່າງປະເທດຂອງ 6 ປະເທດສະມາຊິກທີ່ຍັງເຫຼືອ. ສະຫະພາບໂຊວຽດເອງໄດ້ຖືກລະລາຍໃນເດືອນທັນວາ 1991, ເຖິງແມ່ນວ່າສ່ວນໃຫຍ່ຂອງສາທາລະນະລັດໂຊວຽດໃນອະດີດໄດ້ສ້າງຕັ້ງອົງການສົນທິສັນຍາຄວາມປອດໄພລວມ. ໃນ 20 ປີຕໍ່ມາ, ບັນດາປະເທດສົນທິສັນຍາ Warsaw ຢູ່ນອກ USSR ແຕ່ລະຄົນໄດ້ເຂົ້າຮ່ວມ NATO (ເຢຍລະມັນຕາເວັນອອກໂດຍການໂຮມເຂົ້າກັບເຢຍລະມັນຕາເວັນຕົກ; ແລະສາທາລະນະລັດເຊັກແລະສະໂລວາເກຍເປັນປະເທດແຍກຕ່າງຫາກ), ເຊັ່ນດຽວກັນກັບລັດ Baltic ທີ່ເປັນສ່ວນໜຶ່ງຂອງສະຫະພາບໂຊວຽດ. .

## 5. ການກາເນີດ ແລະ ການຂະຫຍາຍຕົວຂະບວນປົດປ່ອຍຊາດ.

ໃນຂະນະທີ່ກອງທັບຟາຊິດພວມຖຸກຄາມຍຶດຄອງໂລກອັນເປັນການກະທຳທີ່ໂຫດຮ້າຍແບບບໍ່ເຄີຍມີມາກ່ອນ, ສະຫະພາບໂຊວຽດລັດທີສັງຄົມນິຍົມແຫ່ງທຳອິດຂອງໂລກໄດ້ເປັນຜູ້ຢຸດຕິ ແລະ ຕ່າວປີ້ນຄວາມກະຫາຍສົງຄາມຂອງຟາຊິດລົງໄດ້. ໄປພ້ອມໆກັບການຂັບໄລ່ດັບສູນຂອງພວກຟາຊິດນັ້ນຂະບວນການຂອງພວກຄອມມູນິດ, ຂະບວນການປະຊາທິປະໄຕຢູ່ເອີຣົບຕາເວັນອອກກໍໄດ້ລຸກຂຶ້ນປົດປ່ອຍຕົນເອງ ແລະ ເດີນຕາມເສັ້ນທາງແຫ່ງຄວາມເປັນເອກະລາດ, ປະຊາທິປະໄຕ ແລະ ສັງຄົມນິຍົມ ໂດຍບໍ່ໄດ້ຮັບການຊ່ວຍເຫຼືອຈາກກອງທັບແດງໂຊວຽດອຳນາດການປົກຄອງປະຕິວັດຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ແລະ ປະຕິບັດລະບອບປະຊາທິປະໄຕ ປະຊາຊົນ ຢ່າງຈິງໃຈຢູ່ບັນດາປະເທດເອີຣົບຕາເວັນອອກໄດ້ປະສົບຜົນສຳເລັດຂັ້ນພື້ນຖານໃນການປະຕິວັດຊາດ ປະຊາທິປະໄຕ, ຈາກນັ້ນແຕ່ລະປະເທດກໍເລີ່ມກ້າວເຂົ້າສູ່ການປະຕິວັດສັງຄົມນິຍົມ, ຍ້ອນນະໂຍບາຍເສດຖະກິດມີຄວາມກ້າວໜ້າສອດຄ່ອງກັບສິດຜົນປະໂຫຍດຂອງປະຊາຊົນຜູ້ອອກແຮງງານ, ສະນັ້ນ ນັບຕັ້ງແຕ່ສົງຄາມໂລກຄັ້ງທີ 2 ເປັນຕົ້ນມາ ບັນດາປະເທດຕ່າງໆຢູ່ເອີຣົບຕາເວັນອອກໄດ້ປະກາດຕົນເດີນຕາມເສັ້ນທາງສັງຄົມນິຍົມ, ເຮັດໃຫ້ສັງຄົມນິຍົມກາຍເປັນລະບົບການເມືອງໃໝ່ທີ່ເຂັ້ມແຂງເອີ້ນວ່າ : “ ລະບົບສັງຄົມນິຍົມແຫ່ງໂລກ ”. ຈາກນັ້ນກໍແຜ່ກະຈາຍໄປທົ່ວທະວີບອື່ນໆເຊັ່ນ : ອາຊີ (ມົງໂກລີ, ຫວຽດນາມ, ຈີນ, ເກົາຫຼີ), ອາເມຣິກາລາຕິນ (ກຸຍບາ), ເອີຣົບ (ໂຊວຽດ, ໂປໂລຍ, ບູນກາລີ, ເຊັກໂກສະໂລວາກີ...)

ນັບແຕ່ກາງສະຕະວັດທີ 19 ບັນດາປະເທດມະຫາອຳນາດກໍ່ພາກັນແຂ່ງຂັນກັນເພື່ອຂະຫຍາຍດິນແດນດ້ວຍການບຸກຍຶດເອົາດິນແດນປະເທດຕ່າງໆໄວ້ເປັນອານານິຄົມ ຫຼື ຫົວເມືອງຂຶ້ນ. ເປັນບ່ອນຈຳໜ່າຍສິນຄ້າ, ເປັນບ່ອນຕອບສະໜອງກຳລັງແຮງງານ ແລະ ເປັນບ່ອງລົງທຶນ . ດັ່ງນັ້ນ, ດິນແດນພາກສ່ວນຕ່າງໆຂອງໂລກທີ່ບໍ່ທັນມີຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ການເມືອງ ເຊັ່ນ: ທະວີບອາຊີ, ອາຟຣິກາ ແລະ ອາເມຣິກາລາຕິນ ເຊິ່ງເປັນດິນແດນທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ທັງເປັນຍຸດທະສາດອັນສຳຄັນໃນຫຼາຍດ້ານຈຶ່ງຕົກເປັນເປົ້າໝາຍຮຸກຮານ ແລະ ຄອບຄອງຂອງປະເທດມະຫາອຳນາດ.

ແຕ່ດ້ວຍຄວາມພາກພູມໃຈໃນເຜົ່າພັນ, ນ້ຳໃຈຮັກຊາດ, ຮັກຄວາມເປັນເອກະລາດ, ອິດສະຫຼະາບເທິງດິນແດນອັນອຸດົມສົມບູນ ໂດຍບໍ່ອະນຸຍາດໃຫ້ບຸກຄົນໃດ, ຊາດອື່ນໃດເຂົ້າມາຄອບຄອງ ແລະ ມີອິດທິພົນເໜືອດິນແດນດັ່ງກ່າວ. ນັ້ນແຕ່ມື້ເລີ່ມຕົ້ນທີ່ຊາດມະຫາອຳນາດເຂົ້າມາແຊກແຊງຈົນຮອດມື້ຖືກຄອບຄອງໄດ້ເກີດມີຂະບວນການຕໍ່ສູ້ຂອງປະຊາຊົນດັ່ງກ່າວຢ່າງບໍ່ຢຸດຢັ້ງກ ຂະບວນການຕໍ່ສູ້ນີ້ເອີ້ນວ່າ: ຂະບວນການປົດປ່ອຍຊາດ ຫຼື ຂະບວນການຊາດນິຍົມ

**5.1 ຂະບວນການປົດປ່ອຍຊາດ ໃນອາຟຣິກກາ**

ພາຍຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດລົງ. ໂລກໄດ້ມີການປ່ຽນແປງກໍຄືການຊັ່ງຊາກຳລັງລະຫວ່າງສັງຄົມນິຍົມກັບທຶນນິຍົມເຊິ່ງມັນໄດ້ສ້າງເງື່ອນໄຂອັນດີໃຫ້ແກ່ບັນດາປະຊາຊາດຕ່າງໆ ທີ່ຕົກເປັນຫົວເມືອງຂຶ້ນຂອງບັນດາປະເທດຈັກກະພັດລ້ອມແຕ່ພາກັນລຸກຮື້ຂຶ້ນຍາດເອົາເອກະລາດ ອິດສະຫຼະພາບຢ່າງເນື່ອງນິດລຽນຕິດໂດຍສະເພາະແມ່ນຢູ່ທະວີບອາຊີມີ ອິນໂດເນເຊຍ (ຄ.ສ 1950), ຟີລິບປິນ (ຄ.ສ 1946), ຈີນ (ຄ.ສ 1949), ພະມ້າ (ຄ.ສ 1950). ທະວີບອາຟຣິກາມີ ລີບີ (ຄ.ສ 1951).

ນັບແຕ່ສະຕະວັດທີ 15 ເປັນຕົ້ນມາ ດິນແດນປະເທດໃນທະວີບອາຝຣິກາໄດ້ກາຍເປັນແຫຼ່ງຕອບສະໜອງວັດຖຸດິບ, ເປັນຕະຫຼາດຈຳໜ່າຍສິນຄ້າ ແລະ ເປັນບ່ອນຕອບສະໜອງກຳລັງງານ, ໂດຍສະເພາະ ນັບແຕ້ ຄ.ສ 1870-1900 ໄດ້ເກີດມີການແຂ່ງຂັນກັນຂະຫຍາຍອານາດຄັ້ງໃຫຍ່ເທິງດິນແດນອາຝຣິກາ ເຊິ່ງສົ່ງຜົນໃຫ້ດນແດນຂອງທະວີບດັ່ງກ່າວ ຕ້ອງຕົກເປັນອານານິຄົມ ຫຼື ດິນແດນທີ່ຢູ່ໃຕ້ອິດທິພົນຂອງຊາດມະຫາອຳນາດທະວີບເອີຣົບເກືອບທັງໝົດ.

ກ່ອນສົງຄາມໂລກຄັ້ງທີ 2 ທະວີບອາຝຣິກາໄດ້ຖືກຂະໜານນາວ່າເປັນ ທະວີບນອນຫຼັບ ແຕ່ພາຍຫຼັງສົງຄາມໂລກຄັ້ງທີ 2 ຢຸດຕິລົງ ໂດຍໄດ້ຮັບຜົນສະທ້ອນຈາກຂະບວນການປົກປ່ອນຊາດປະເທດຕ່າງໆໃນໂລກ ສົມທົບກັບບຄວາມຮູ້ສຶກໃນເຜົ່າພັນ, ຄວາມເປັນຊາດນິຍົມ, ອິດສະຫຼະພາບຂອງຊາວອາຝຣິກາ ໄດ້ກາຍເປັນພະລັງແຮງໃຫ້ເກີດມີຂະບວນການຕໍ່ສູ້ຕ້ານແອກຄອບຄອງຂອງ ຊາດມະຫາອຳນາດໃນອາຝຣິກມີຊື່ວ່າ ອຸຣຸວາ ( ) ຂະບວນການຕ້ານແອກປົກຄອງຂອງຊາດມະຫາອຳນາດໃນອາຝຣິກາມີຊື່ວ່າ: ຂະບວນການພະລັງງານຮ່ວມອາຝຣິກາຕໍ່ຕ້ານຈັດກະພັດ ຫຼື ຂະບວນການຊາດນິຍົມອາຝຣິກາ ເຊິ່ງມີບົດບາດສຳຄັນໃນການສະໜັບສະໜູນໃນອານານິຄົມຕ່າງໆ ດຳເນີນການຕໍ່ສູ້ເພື່ອຄວາມເປັນເອກະລາດ

ການຕໍ່ສູ້ເພື່ອຄວາມເປັນເອກະລາດຂອງອານານິຄົມໃນອາຝຣິກາ ສ່ວນຫຼວງຫຼາຍເກີດຂຶ້ນພາຍຫຼັງສົງຄາມໂລດຄັ້ງທີ 2 ຢຸດຕິລົງຄື: ຊ່ວງໄລຍະປີ ຄ.ສ 1956 -1970 ເຊິ່ງໃນຊ່ວງນີ້ມີະເທດທີ່ໄດ້ຮັບເອກະລາດເຖິງ 42 ປະເທດໂດຍສະເພາະ ໃນໄລຍະ ຄ.ສ 1960 – 17 ປະເທດໄດ້ຮັບເອກະລາດຈົນນັກປະຫວັດສາດໃນນາມວ່າ ໃນປີ ຄ.ສ 1960 ເປັນປີແຫ່ງທະວີບອາຝຣິກາ ໄດ້ແກ່: ເບແນັ່ງ, ນິເຊ, ກາເມີຣູນ, ໂມຣິຕານີ, ມາລີ, ກົງໂກ, ກາບົງ, ນີເຊເຣຍ, ຊາເອຍ, ມາດາກັດສະກາ, ໂຊມາລີ, ໂຕໂກ, ອາຝຣິກາາງ, ກົດດີວົວ, ອິດໂວນຕາ ແລະ ຈາດ.

**ກ. ອານເຊຣີ**

ພາຍຫຼັງສົງຄາມໂລກຕັ້ງທີ 2 ປະຊາຊົນ ອານເຊຣີ ໄດ້ດຳເນີນການຕໍ່ສູ້ຕ້ານແອກຄອບຄອງຂອງພວກລ່າເມືອງຂຶ້ນຝຣັ່ງ. ການຕໍ່ສູ້ນັບມື້ນັບເຕີບໃຫຍ່. ມາຮອດວັນທີ 1 ພະຈິກ ຄ.ສ 1954 ສະພາປະຕິວັດເອກະພາບໃຫ້ນາມວ່າ ປີຄ.ສ 1958 ສະພາປະຕິວັດໄດ້ຈັດຕັ້ງລັດຖະບານຊົ່ວຄາວຂຶ້ນ. ຜ່ານການຕໍ່ສູ້ຂອງກອງທັບປະຊາຊົນອາເຊຣີ ມາຮອດ ຄ.ສ 1960 ກໍ່ສາມາດສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ ອານເຊຣີ , ວັນທີ 18 ມີນາ ຄ.ສ 1968 ຈັກກະພັດຝຣັ່ງ ຈຳຕ້ອງຍອມເຊັນສັນຍາຍອມຮັບຮອງຄວາມເປັນເອກະລາດແຫ່ງຊາດຂອງອານເຊຣີ.

**ຂ. ອັງໂກລາ**

ອັງໂກລາ ເປັນປະເທດໜຶ່ງທີ່ຕົກເປັນເມືອງຂຶ້ນຢູ່ອຳນາດປົກຄອງຂອງປ໊ອກຕຸ໋ຍການ. ນັບແຕ່ມື້ເລີ່ມຕົ້ນຖືກແຊກແຊງເປັນຕົ້ນມາ ປະຊາຊົນອັງໂກລາກໍ່ໄດ້ດຳເນີນການຕໍ່ສູ້ຕ້ານແອກຄອບຄອງຂອງປ໊ອກຕຸ໋ຍການຕະຫຼອດມາ. ໃນເດືອນທັນວາ ຄ.ສ 1956 ປະຊາຊົນອັງໂກລາ ໄດ້ຈັດຕັ້ງ ຂະບວນການປະຕິວັດປົດປ່ອຍຊາດຂຶ້ນ ໂດຍໃຊ້ຮູບແບບການຕໍ່ສູ້ທາງດ້ານການເມືອງ ແລະ ອາວຸດໄປພ້ອມໆກັນ. ຄ.ສ 1971 ກອງທັບປົດປ່ອຍຊາດອັງໂກລາກໍ່ສາມາດປົດປ່ອຍດິນແດນໃນຂອບເຂດທົ່ວປະເທດໄດ້ຢ່າງກວ້າງຂວາງ.

**5.2 ຂະບວນການປົດປ່ອຍຊາດ ໃນອາຊີ.**

ອາຊີເປັນທະວີບໃຫຍ່ ທັງເປັນດິນແດນທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດທີ່ມີຄຸນຄ່າ ແລະ ມີປະຊາກອນອາໄສຢູ່ຢ່າງຫຼວງຫຼາຍ. ດ້ວຍເຫດນັ້ນ ດິນແດນແຫ່ງນີ້ຈຶ່ງຕົກເປັນເປົ້າໝາຍຮຸກຮານ ແລະ ຍຶດຄອງຂອງປະເທດມະຫາອຳນາດຕາເວັນຕົກທັງເກົ່າ ແລະ ໃໝ່ ມາຕັ້ງແຕ່ສະຕະວັດທີ 17 ຈົດຮອດສະຕະວັດທີ 20 . ຕະຫຼອດເວລາດັ່ງກ່າວ ດິນແດນໃນທະວີບອາຊີແຫ່ງນີ້ໄດ້ເຕັມໄປດ້ວຍຂໍ້ຂັດແຍ່ງລະຫວ່າງຊາດ ແລະ ຊົນຊັ້ນຢ່າງດຸເດືອດ.

ພາຍຫຼັງສົງຄາມໂລກຄັ້ງທີ 2 ຢຸດຕິລົງ ສະພາບການຂອງໂລກໄດ້ມີການປ່ຽນແປງໄປໃນທາງທີ່ມີຜົນດີ ບັນດາປະເທດຕ່າງໆໃນທະວີບອາຊີທີ່ຕົກເປັນອານານິຄົມຂອງຊາດມະຫາອຳນາດ ຈຶ່ງໄດ້ພ້ອມກັນລຸກຂຶ້ນຕໍ່ສູ້ຂັບໄລ່ຊາດມະຫາອຳນາດອອກຈາກດິນແດນຂອງຕົນ ເພື່ອຄວາມເປັນເອກະລາດແຫ່ງຊາດ ຈົນສາມາດຍາດໄດ້ຊະນະໃນຫຼາຍປະເທດເຊັ່ນ:

**5.2.1 ອາຊີຕາເວັນອອກສຽງໃຕ້.**

**ກ. ປະເທດຫວຽດນາມ**

ປະເທດຫວຽດນາມເປັນປະເທດໜຶ່ງ ໃນອາຊີຕາເວັນອອກສຽງໃຕ້ ທີ່ຕົກເປັນຫົວເມືອງຂຶ້ນຂອງຊາດມະຫາອຳນາດຕາເວັນຕົກຄອບຄອງ. ຕະຫຼອດໄລຍະແຫ່ງການຖືກຄອບຄອງນັ້ນ ປະຊາຊົນຫວຽດນາມໄດ້ດຳເນີນດານຕໍ່ສູ້ຂັບໄລ່ຫຼາຍຮູບແບບ. ໃນຊ່ວງສົງຄາມໂລກຄັ້ງທີ 2 ຂະບວນການຕໍ່ສູ້ປົດປ່ອຍຊາດຫວຽດນາມ ໄດ້ເກີດຂຶ້ນຢ່າງຮຸນແຮງພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ດ້ວຍການໃຊ້ຮູບແບບການຕໍ່ສູ້ ( ແບບກຳລັງ ) ເປັນຫຼັກ. ວັນທີ 15 ສິງຫາ ຄ.ສ 1945 ຟາຊິດຍີ່ປຸ່ນໄດ້ຍອມຈຳນົນຕໍ່ຝ່າຍສຳພັນທະມິດ, ປະຊາຊົນ ແລະ ກອງທັບຫວຽດນາມ ພາຍໃຕ້ການນຳພາຂອງທ່ານ ໂຮ່ຈິມິນ ໄດ້ຍຶດອຳນາດໂຄ່ນລົ້ມລັດຖະບານຫຸ່ນລົງ. ວັນທີ 23 ສິງຫາ ຄ.ສ 1945 ເຈົ້າຊີວິດບາວດາຍໄດ້ປະກາດສະຫຼະບັນລັງ ແລະ ມາຮອດວັນທີ 2 ກັນຍາ ຄ.ສ 1945 ຄະນະນຳຂອງຂະບວນການຕໍ່ສູ້ຂອງປະຊາຊົນຫວຽດນາມກໍ່ໄດ້ປະກາດສ້າງຕັ້ງປະເທດຫວຽດນາມເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນຫວຽດນາມຂຶ້ນໂດຍມີທ່ານ ໂຮຈິມິນ ເປັນປະທານເທດ.

ແຕ່ວ່າສັນຍານີ້ ໄດ້ເຮັດໃຫ້ຫວຽດນາມແບ່ງອອກເປັນສອງປະເທດຄື: ຫວຽດນາເໜືອ ແລະ ຫວຽດນາມໃຕ້ ໂດຍກຳນົດເອົາເສັ້ນຂະໜານທີ 17 ອົງສາເໜືອເປັນຊາຍແດນ, ມີແມ່ນ້ຳເບໄຮ ເປັນຊາຍແດນທຳມະຊາດ. ພາກເໜືອມີຊື່ວ່າ ສາທາລະນະລັດປະຊາທິປະໄຕຫວຽດນາມ ໄດ້ການປົກຄອງຂອງລັດຖະບານປະຕິວັດແມ່ນ ທ່ານ ໂຮ່ຈິມິນ ເປັນຜູ້ນຳ. ພາກໃຕ້ຊື່ວ່າ ສາທາລະນະລັດຫວຽດນາມໃຕ້ ປົກຄອງໂດຍລັດຖະບານເກົ່າ ໂດຍຈັກກະພັດບາວດາຍ ເປັນປະມຸກລັດ ແລະ ມີ ໂງດິນຢຽມ ເປັນນາຍົກລັດຖະມົນຕີ.

ພາຍຫຼັງທີ່ຝຣັ່ງຖອນຕົວອອກຈາກຫວຽດນາມ ໃນປີຄ.ສ 1945 ແລ້ວຈັກກະພັດອາເມລິກາ ກໍ່ໄດ້ເຂົ້າມາແຊກແຊງຫວຽດນາມ ດ້ວຍຮູບແບບການຊ່ວຍເຫຼືອລັດຖະບານຫວຽດນາມໃຕ້ ຂອງໂງດິນຢຽມ ເພື່ອປະຕິບັດແຜນຍຸດທະສາດຂອງອິນດູຈີນ ມາໃນປີ ຄ.ສ 1956 ຈັກກະພັດອາເມຣິກາກໍ່ໄດ້ດຳເນີນສົງຄາມຮຸກຮານຫວຽດນາມ ດ້ວຍຮູບແບບທຸ້ມເທວັດຖຸ ແລະ ກຳລັງຄົນຢ່າງຫຼວງຫຼາຍ ເພື່ອດັບສູນຫວຽດນາມເໜືອ ແຕ່ກໍ່ບໍ່ປະສົບຜົນສຳເລັດ. ວັນທີ 30 ເມສາ ຄ.ສ 1975 ຂະບວນການຕໍ່ສູ້ຂອງປະຊາຊົນຫວຽດນາມ ກໍ່ສາມາດປົດປ່ອຍດິນແດນດິນຫວຽດນາມໃຕ້ ອອກຈາກການເປັນເມືອງຂຶ້ນຂອງອາເມຣິກາໄດ້ສົມບູນ ວັນທີ 2 ກໍລະກົດ ຄ.ສ 1976 ດິນແດນປະເທດຫວຽດນາມທັງພາກເໜືອ ແລະ ພາກໃຕ້ກໍ່ໄດ້ໂຮມກັນເຂົ້າເປັນປະເທດດຽວມີຊື່ວ່າ: ສາທະລະນະສັດ ສັງຄົມນິຍົມຫວຽດນາມ.

**ຂ. ປະເທດອິນໂດເນເຊຍ.**

ການປະລາໄຊ ຂອງກອງທັບຍີ່ປຸ່ນຕໍ່ພັນທະມິດ ໄດ້ກາຍເປັນໂອກາດອັນດີໃຫ້ຊາວອິນໂດເນເຊຍ ໃຕ້ການນຳພາ ຂອງ ຊູກາໂນ ແລະ ຮັດນາ ປະກາດອິດສາລະພາບຂອງອິນໂດເນເຊຍ ໃນວັນທີ 17 ສິງຫາ ຄ.ສ 1945 ກຳນົດຊື່ປະເທດ ສາທາລະນະລັດ ອິນໂດເນເຊຍ ໂດຍມີ ທ່ານ ຊູກາກໂນ ເປັນປະທານາທິບໍດີ. ແຕ່ວ່າປະກາດອິດສາລະພາບຂອງອິນໂດ ເນເຊຍຄັ້ງນີ້ ຖືກພວກຈັກກະພັດນິຍົມຕາເວັກຕົກປະຕິເສດ ໂດຍສະເພາະ ໂຮນລັງ ທີ່ໄດ້ຮັບການຊ່ວຍເຫຼືອຈາກ ກອງທັບອັງກິດໄດ້ກັບຄືເຂົ້າມາຄອບຄອງອິນໂດເນເຊຍອີກຄັ້ງໃໝ່.

ການກັບຄືນມາຂອງໂຮນລັງອີກຄັ້ງນີ້ ໄດ້ຖືກຕໍ່ຕ້ານຈາກປະຊາຊົນອິນໂດເນເຊຍ ຈິນເກີດການສູ້ຮົບກັນຂຶ້ນຢ່າງ ຮຸນແຮງ. ໃນທີ່ສຸດອົງການສະຫະປະຊາຊາດກໍ່ໄດ້ໄຂກອງປະຊຸມຂຶ້ນໃນວັນທີ 23 ສິງຫາ 1949 ສະເໜີໃຫ້ໂຮນລັງຕ້ອງ ຖອນຕົວອອກຈາກອິນແດນອິນໂດເນເຊຍ. ວັນທີ 2 ທັນວາ ຄ.ສ 1949 ໂຮງລັງຍອມເຊັນສັນຍາຢຸດຕິການສູ້ຮໄບກັບ ອິນໂດເນເຊຍ ແລະ ຮັບຮູ້ຄວາມເປັນເອກະລາດຂອງອິນໂດເນເຊຍຢ່າງເປັນທາງການໃນວັນທີ 17 ສິງຫາ ຄ.ສ1975

**ຄ. ປະເທດມຽນມາ**

ຫຼັງຈາກຟາຊິດຍອມຈຳນົນສຳພັນທະມິດແລ້ວ ມາຮອດເດືອນກັນຍາ ຄ.ສ 1945 ຈັກກະພັດອັງກິດໄດ້ກັບຄືນ ມາມີອຳນາດໃນພະມ້າອີກ ການກັບຄືນມາຂອງອັງກິດໃນຄັ້ງນີ້ ໄດ້ເກີດມີຂະບວນການເຄື່ອນໄຫວ ເພື່ອຕໍ່ຕ້ານອັງກິດອີກ ຄັ້ງໃໝ່, ມີພັກການເມືອງຫຼາຍພັກຮ່ວມມືກັນຕໍ່ສູ້ກັນເພື່ອຄວາມເປັນເອກະລາດຂອງຊາດ. ພັກການເມືອງທີ່ສຳຄັນ ໄດ້ແກ່ພັກສັນນິບັນເສລີນິຊົນຕໍ່ຕ້ານຟາຊິດ ( AFPFL ) ເພື່ອສືບຕໍ່ການຕໍ່ສູ້ ມາໃນປີຄ.ສ 1947 ແນວໂຮມແຫ່ງ ຊາດມຽນມາໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນທ່ານ ອູອອງຊານ ເປັນຫົວໜ້າ. ຈາກນັ້ນ ແນວໂຮມແຫ່ງຊາດມຽນມາກໍ ໄດ້ສືບຕໍ່ການຕໍ່ສູ້ພາຍໃຕ້ນະໂຍບາຍກອບກູ້ເອກະລາດ ດ້ວຍຮູບແບບການເຈລະຈາ . ຮູບແບບການຕໍ່ສູ້ແບບສັນຕິຂອງ ແນວໂຮມແຫ່ງຊາດມຽນມາເກືອບຈະເປັນຜົນສຳເລັດແລ້ວ, ແຕ່ມາໃນວັນທີ 19 ກໍລະກົດ ຄ.ສ 1947 ອູອອງຊານ ພ້ອມຄະນະລັດຖະມົນຕີ 6 ຄົນ ໄດ້ຖືກລອບຕາຕະກຳໃນກອງປະຊຸມເຖິງຢ່າງໃດກໍ່ຕາມ ຜ່ານການຕໍ່ສູ້ດ້ວຍກຳລັງ ປະກອບກັບການເຈລະຈາ ມາຮອດວັນທີ 17 ຕຸລາ ຄ.ສ 1947 ມຽນມາໄດ້ບັງຄັບໃຫ້ຈັກກະພັດອັງກິດຍອມຕົກລົງ ເຊັນສັນຍາກັນທີ່ລອນດອນ ແລະ ປະກາດຮັບຮູ້ຄວາມເປັນເອກະລາດຢ່າງເປັນທາງການໃນວັນທີ 4 ມັງກອນ ຄ.ສ 1946 .

ນອກຈາກທີ່ກ່າວມາແລ້ວ ຂະບວນການບວນການປົດປ່ອຍຊາດໃນທະວີບໃນອາຊີ ຍັງມີອີກຢ່າງຫຼວງຫຼາຍ ເຊັ່ນ: ຂະບວນການປົດປ່ອຍຊາດຂອງຟີລິບປິນຕ້ານແອກປົກຄອງຂອງສະຫະລັດອາເມລິກາບັງຄັບໃຫ້ອາເມຣິກາມອບ ເອກະລາດໃຫ້ຢ່າງສົມບູນ ໃນວັນທີ 4 ກໍລະກົດ 1946 ຂະບວນປົດປ່ອຍຊາດຂອງມາເລເຊຍຕ້ານແອກປົກຄອງຂອງ ອັງກິດ, ສາມາດບັງຄັບໃຫ້ອັງກິດມອບເອກະລາດໃນວັນທີ 13 ສິງຫາ ຄ.ສ 1957 ແລະ ຂະບວນປົດປ່ອຍຊາດອື່ນໆ ອີກ.

**5.2.2 ອາຊີຕາເວັນອອກໄກ ແລະ ອາຊີໃຕ້**

**ກ. ປະເທດຈີນ**

ໃນໄລຍະສົງຄາມໂລກຄັ້ງທີ 2 ຈີນພັກຄະນະຊາດ ແລະ ຈີນກອມມູນິດໄດ້ຢຸດຕິການຕໍ່ສ◌ູຮົບຊົ່ວຄາວ ເພື່ອ ຮ່ວມກັນຕໍ່ຕ້ານຟາຊິດຍີ່ປຸ່ນ. ແຕ່ໃນຂະນະທີ່ຟາຊິດຍີ່ປຸ່ນກຳລັງຖືກປະລາໄຊຢູ່ນັ້ນ ພັກຈີນຄະນະຊາດຂອງຈຽງໄຕເຊັກ ທີ່ມີສະຫະລັດອາເມຣິກາເປັນຜູ້ສະໜັບສະໜູນ ໄດ້ພະຍາຍາມກໍ່ສົງຄາມກາງເມືອງຂຶ້ນ ເພື່ອດັບສູນກຳລັງພັກກອມມູນິດ ແຕ່ກໍ່ຖືກກຳລັງຝ່າຍປະຕິວັດຕໍ່ຕ້ານຄືນ ຈົນເຮັດໃຫ້ຈຽງໄຄເຊັກຈຳຕ້ອງອອກຈາກແຜ່ນດິນໃຫຍ່ ໄປຢູ່ເກາະໄຕ້ຫວັນ ວັນທີ 1 ຕຸລາ ຄ.ສ 1949 ໄດ້ສະຖາປະນາປະເທດເປັນ “ ສາທາລະນະລັດປະຊາຊົນຈີນ”

**ຂ. ປະເທດອິນເດຍ.**

ອິນເດຍຕົກເປັນເມືອງຂຶ້ນຂອງຈັກກະພັດອັງກິດ ໃນປີ ຄ.ສ 1818 ໃນໄລຍະສົງຄາມໂລກຄັ້ງທີ 2 ໃນຂະນະທີ່ຟາຊິດຍີ່ປຸ່ນ ກຳລັງປັດເຂ່ຍອິດທິພົນຂອງອັງກິດ ແລະ ອາເຣິກາໃນເຂດອາຊີ-ປາຊີຟິກ ແລະ ໃນໝູ່ເກາະອິນເດຍ ໂດຍສະເພາະໝູ່ເກາະອັນດາມັນ ( Andaman ) ໃນອ່າວເບັງການ ( Bengal ) ໄດ້ເຮັດໃຫ້ອັງກິດເຫັນອັນຕະລາຍທີ່ຈະເຂົ້າສູ່ອຳນາດຂອງອັງກິດຢູ່ໃນອິນເດຍ. ດັ່ງນັ້ນ, ອັງກິດໄດ້ດຳເນີນການເຈລະຈາກັບອິນເດຍໃຫ້ຊ່ວຍສູ້ຮົບໃນສົງຄາມໂລກຄັ້ງທີ 2 ແລ້ວອັງກິດຈະອະນຸຍາດໃຫ້ອິນເດຍປົກຄອງຕົນເອງເປັນເອກະລາດ. ແຕ່ພາຍຫຼັງສົງຄາມຢຸດຕິ ອັງກິດບໍ່ຍອມມອບເອກະລາດໃຫ້ຕາມສັນຍາທີ່ເຊັນໄວ້ . ດັ່ງນັ້ນ, ຂະບວນການຕໍ່ສູ້ຂອງປະຊາຊົນອິນເດຍຕ້ານແອກປົກຄອງຂອງອັງກິດ ຈຶ່ງໄດ້ເກີດຂຶ້ນເປັນຂະບວນກວ້າງຂວາງພາຍໃຕ້ການນຳພາຂອງ ພັກຄອນເກຣດ ( Congress ) ໂດຍມີພະມະຫາຄານທີ ນຳໜ້າ. ຮູບແບບການຕໍ່ສູ້ຂອງປະຊາຊົນພາຍໃຕ້ການນຳພາພະມະຫາຄັນທີນັ້ນ ໄດ້ດຳເນີນການຕໍ່ສູ້ແບບສະຫງົບທີ່ບໍ່ໃຊ້ຄວາມຮຸນແຮງ ເຊິ່ງເອີ້ນວ່າ: ແບບມະຫິງສາ ເຊັ່ນ ການບໍ່ຍອມປະຕິບັດຕາມຄຳສັ່ງຂອງອັງກິດດ້ວຍການເຮັດເສີຍເມີຍ, ການບໍ່ຍອມຊື້ສິນຄ້າຈາກອັງກິດ ແລະ ອື່ນໆ. ຕົ້ນປີ ຄ.ສ 1947 ຂະບວນການຕໍ່ສູ້ຂອງປະຊາຊົນອິນເດຍໄດ້ຂະຫຍາຍຕົວຢ່າງກວ້າງຂວາງແຜ່ລາມໄປທົ່ວປະເທດ ເຮັດໃຫ້ລັດຖະບານອັງກິດຈຳຕ້ອງຖອນອອກຈາກອິນເດຍ ໃນເດືອນ ມິຖຸນາ ຄ.ສ 1947 ແລະ ມາຮອດວັນທີ 15 ສິງຫາ ຄ.ສ 1947 ອັງກິດຍອມຮັບຮູ້ຄວາມເປັນເອກະລາດຂອງອິນເດຍຢ່າງສົມບູນ.

# ບົດທີ 8

# ການພົວພັນສາກົນແຕ່ປີຄ.ສ 1980 ຫາປະຈຸບັນ

## 1. ການພົວພັນລະຫວ່າງໂລກເສລີນິຍົມກັບສັງຄົມນິຍົມ

### 1.1 ຄວາມສຳພັນລະຫວ່າງສະຫະລັດອາເມຣິກາກັບສະຫະພາບໂຊວຽດ

ຫຼັງຈາກທີ່ສົງຄາມໂລກເປັນໄດ້ເລີ່ມເກີດຂຶ້ນຢ່າງເປັນທາງການໃນເດືອນກັນຍາ ຄ.ສ 1947 ສັງຄົມໂລກຈຶ່ງໄດ້ແບ່ງອອກເປັນສອງຄ້າຍ ທີ່ມີອຸດົມການຂອງມະຫາອຳນາດຄື ອຖດົມການເສລີປະຊາທິປະໄຕສະຫະລັດອາເມຣິກາ ແລະ ອຸດົມການແບບສັງຄົມນິຍົມກອມມູນິດຂອງສະຫະພາບໂຊວຽດ ເປັນສິ່ງທີ່ຊີ້ນຳແນວທາງການເຄື່ອນໄຫວຈອງແຕ່ລະຄ້າຍ ເຫດຜົນທີ່ພາໃຫ້ເຫີດແບບນີແພາະວ່າ

ສະຫະລັດອາເມຣິກາ ເປັນປະເທດໜຶ່ງທີ່ປະສົບຜົນສຳເລັດໃນດ້ານການພັດທະນາປະເທດດ້ວຍການສ້າງອຸດົມການແບບເສລີນິຍົມ. ດ້ວນເຫດນີ້, ສະຫະລັດອາເມຣິກາ ຈຶ່ງມີຄວາມເຊື່ອວ່າຫາກປະເທດຕ່າງໆໃນໂລກເດີນຕາມແນວທາງຂອງຕົນ ທົ່ວໂລກກໍ່ຈະເປັນປະຊາທິປະໄຕ . ດັ່ງນັ້ນ, ສະຫະລັດອາເມຣິກາ ຈຶ່ງພະຍາຍາມທີ່ຈະເຜີຍແຜ່ອຸດົມການແບບເສລີນິຍົມໄປຍັງປະເທດຕ່າງໆໃນໂລກ. ປະກົດວ່າປະເທດໃນທະວີບເອີຣົບຕາເວັນຕົກ, ຫຼາຍປະເທດໃນອາເມຣິກາລາຕິນ ແລະ ອາຊີ ເຫັນເສດຖະກິດ ແລ້ວສ້າງຕັ້ງກຸ່ມຂຶ້ນ ເອີ້ນວ່າ: ໂລກເສລີ

ສະຫະພາບໂຊວຽດ ມີຄວາມເຊື່ອໝັ້ນໃນອຸດົມການຂອງຊົນຊັ້ນກຳມະຊີບ ແບບກອມມູນນິດ ຈະຊ່ວຍໃຫ້ປະເທດຕ່າງໆໃນໂລກມີການພັດທະນາ ແລະ ສາມາດສ້າງຄວາມສຸກໃຫ້ແກ່ຄົນໃນສັງຄົມໂລກໄດ້. ດ້ວຍເຫດນີ້, ສະຫະພາບໂຊວຽດຈຶ່ງພະຍາຍາມເຜີຍແຜ່ອຸດົມການສັງຄົມນິຍົມກອມມູນິດໄປຍັງປະເທດຕ່າງໆໃນໂລກ ໂດຍສະເພາະມີຫຼາຍປະເທດໃນເອີຣົບຕາເວັນອອກ, ອາຊີຕາເວັນອອກສຽງໃຕ້ ແລະ ອາເມຣິກາລາຕິນ ມີຄວາມພ້ອມແລ້ວຮ່ວມກັນສ້າງເປັນກຸ່ມໜຶ່ງຂຶ້ນເອີ້ນວ່າ: “ ໂລກສັງຄົມນິຍົມ ‘’

**ສາເຫດທີ່ພາໃຫ້ໂລກເກີດແບ່ງອອກເປັນສອງຄ້າຍນັ້ນເກີດມາຈາກຫຼາຍປັດໄຈດັ່ງນີ້:**

**ກ. ປັດໄຈທາງດ້ານເສດຖະກິດ ແລະ ສັງຄົມ.**

ຫຼັງຈາກສົງຄາມໂລກຄັ້ງທີ່ສອງສິ້ນສຸດລົງ ບັນດາປະເທດທີ່ເຂົ້າຮ່ວມສົງຄາມຝ່າຍປະລາໄຊ ແລະ ຝ່າຍທີ່ໄດ້ຮັບໄຊຊະນະ ຕ່າງກໍ່ໄດ້ຮັບການສູນເສຍຢ່າງມະຫາສານໄປຕາມໆກັນ. ໃນຝ່າຍຜູ້ຮັບໄຊຊະນະ ໂດຍສະເພາະ ກຸ່ມປະເທດເອີຣົບຕາເວັນຕົກເສບຫາຍຫຼາຍທີ່ສຸດ ທັງໃນດ້ານເສດຖະກິດ ແລະ ຈຳນວນພົນ ເຊິ່ງເປັນກຳລັງທີ່ສຳຄັນໃນການພັດທະນາຟື້ນຟູປະເທດ ໃນກັບຄືນສູ່ສະພາບປົກກະເດີມ. ດ້ວຍເຫດນັ້ນ ການຊ່ວຍເຫຼືອຈາກປະເທດທີ່ມີຄວາມເຂັ້ມແຂງຢູ່ ຈຶ່ງເປັນສິ່ງທີ່ເທດເອີຣົບຕ້ອງການ.

ປະເທດທີ່ມີຄວາມສາມາດ ໃຫ້ການຊ່ວຍເຫຼືອປະເທດອື່ນໄດ້ໃນສັງຄົມໂລກຍຸກນັ້ນ ກໍ່ມີພຽງສອງປະເທດມະຫາອຳນາດ ຄື: ສະຫະລັດອາເມຣິກາ ແລະ ສະຫະພາບໂຊວຽດ. ແຕ່ເນື່ອງຈາກພື້ນຖານລັດທິທາງເສດຖະກິດ- ການເມືອງທີ່ແຕກຕ່າງກັນ ຈຶ່ງເຮັດໃຫ້ແຕ່ລະຝ່າຍໃຊ້ຄວາມຊ່ວຍເຫຼືອເປັນເຄື່ອງມື ໃນການຂະຫຍາຍອິດທິພົນທາງດ້ານອຸດົມການຂອງຕົນ ໃຫ້ແກ່ຝ່າຍຜູ້ຮັບທາງກົງ ແລະ ທາງ ທາງອ້ອມ, ດັ່ງນັ້ນ, ເມື່ອປະເທດໃດໄດ້ຮັບການຊ່ວຍເຫຼືອຈາກຕົນ ກໍຈະມີການຜູກພັນກັນທາງດ້ານເສດຖະກິດ ແລະ ການທູດກັບຕົນ ພ້ອມທັງໃຫ້ການສະໜັບສະໜູນແນວທາງການເມືອງການຕ່າງປະເທດຕົນໃນອົງການສະຫະປະຊາຊາດ. ນອກຈາກນັ້ນ, ຍັງສາມາດທີ່ຈະເຜີຍແຜ່ອຸດົມດົມການທາງດ້ານເສດຖະກິດ, ການເມືອງທີ່ຕົນເອງຍຶດຖືໄປຍັງປະເທດທີ່ໄດ້ຮັບການຊ່ວຍເຫຼືອຈາກຕົນຕໍ່ໄປອີກດ້ວຍ.

**ຂ. ປັດໄຈທາງດ້ານການເມືອງ**

ຫຼັງຈາກສົງຄາມໂລກຄັ້ງທີສອງສິ້ນສຸດລົງ , ທະວີບເອີຣົບ ເຊິ່ງເຄີຍເປັນສູນກາງທາງດ້ານການເມືອງລະຫວ່າງປະເທດ ໂດຍມີມະຫາອຳນາດຕ່າງໆເຊັ່ນ: ອັງກິດ, ຝຣັ່ງ ທີ່ເປັນຕົວໜ່ວງຖ່ວງດຶງອຳນາດກໍສູນສິ້ນປະສິດທິພາບໃນການດຳເນີນງານ ເນື່ອງຈາກວ່າມີຄວາມບອບຊ້ຳໃນສົງຄາມ. ສາເຫດທາງການເມືອງທີ່ແທ້ຈິງໃນການແບ່ງໂລກອອກເປັນສອງຄ້າຍນັ້ນ ມາຈາກ ຄວາມແຕກຕ່າງທາງດ້ານອຸດົມການທາງດ້ານການເມືອງຂອງແຕ່ລະຝ່າຍນັ້ນເອງ

ສະຫະລັດອາເມຣິກາ ຈາກບົດຮຽນ ຫຼື ປະສົບການຜ່ານມາຫຼັງຈາກສົງຄາມໂລກຄັ້ງທີ 1 ແລະ ທີ 2 ປະກອບກັບການມີອາວຸດປະລາມະນູຈຶ່ງເຮັດໃຫສະຫະລັດອາເມຣິກາ ມີຄວາມຮູ້ສຶກວ່າຕົນເອງເປັນຕຳຫຼວດໂລກທີ່ຕ້ອງສະແດງຕົນອອກໜ້າ ເພື່ອຊ່ວຍໃຫ້ສັງຄົມໂລກດຳລົງໄວ້ຕາມຮູບແບບເສລີປະຊາທິປະໄຕທີ່ນິຍົມຕາມສະບັບຂອງອາເມຣິກາ.

ສ່ວນສະຫະພາບໂຊວຽດທີ່ມີອຸດົມການພື້ນຖານແບບເສລີນິຍົມ ປະກອລກັບຄວາມສຳເລັດໃນທົດລອງອາວຸດປະລາມະນູສຳເລັດໃນປີຄ.ສ 1949 ໄດ້ກາຍເປັຮຈຸດເລີ່ມຕົ້ນຂອງສະຫະພາບໂຊວຽດ ກາຍເປັນຂົ້ວມະຫາອຳນາດທີ່ແທ້ຈິງ. ຈາກນັ້ນ, ກໍ່ພະຍາຍາມສ້າງລັດແບບແນວຄິດອຸດົມການມາກຊິດ-ເລນິນ ດ້ວຍການສະໜັບສະໜູນຂະບວນການຕໍ່ສູ້ຂອງຊາວກຳມະຊີບໃນທົ່ວໂລກ.

ດັ່ງນັ້ນ, ເມື່ອອຖດົມການພື້ນຖານທີ່ແຕກຕ່າງກັນ ຈຶ່ງບໍ່ເປັນທີ່ສົງໃສວ່າພຶດທິກຳຂອງທັງສອງຝ່າຍຈຳຕ້ອງພະຍາຍາມເສີມສ້າງຖານອຳນາດດ້ວຍກຳລັງ ແລະ ຫາສຽງສະໜັບສະໜູນ ຫຼື ມິດປະເທດທີ່ມີອຸດົມການຄ້າຍຄືກັນມາເປັນພັກພວກ. ສະຫຼຸບແລ້ວ, ຄວາມຂັດແຍ່ງທາງດ້ານອຸດົມກການທາງດ້ານການເມືອງຂອງທັງສອງຝ່າຍກໍ່ໃຫ້ເກີດຄວາມບໍໄວ້ວາງໃຈເຊິ່ງກັນ ແລະ ກັນ. ແລ້ວນຳໄປສູ່ການແຂ່ງຂັນໃນການສ້າງ ແລະ ສະສົມກຳລັງອາວຸດ ທີ່ມີອຳນາດໃນອຳນາດໃນການທຳລາຍລ້າງສູງຂຶ້ນເລື້ອຍໆຈົນກໍ່ໃຫ້ສະພາບການໃຫມ່ທີ່ໜ້າຍ້ານກົວເກີດຂຶ້ນໃນສັ/ຄົມໂລກ.

**1.2 ໂລກທີສາມ ກັບ ການຜ່ອນຄາຍຄວາມເຄັ່ງຕຶງຂອງມະຫາອຳນາດ**

ຄຳວ່າ ໂລກທີສາມ ເປັນຄຳສັບທາງດ້ານການເມືອງທີ່ດັງແປງມາຈາກສັບພາສາໃນພາສາຝຣັ່ງທີ່ວ່າ LE Tier Monde ຫຼື ເອີ້ນເປັນພາສາອັງກິດວ່າ The Third World ໂດຍທົ່ວໄປແລ້ວ ຄຳວ່າໂລກທີສາມນີ້ສ່ວນໃຫຍ່ໝາຍເຖິງປະເທດທີ່ໄດ້ຮັບເອກະລາດໃໝ່ໆ ພາຍຫຼັງສົງຄາມໂລກຄັ້/ທີ 2 ທີ່ບໍ່ປາຖະໜາ ຕົກຢູ່ໃຕ້ອຳນາດອິດທິພົນຂອງມະຫາອຳນາດທັງສອງຝ່າຍ ຈຶ່ງໄດ້ຮ່ວມກັນສ້າງຕັ້ງເປັນກຸ່ມໃໝ່ຂຶ້ນເອີ້ນວ່າ: ປະເທດໂລກທີສາມ

ກຸ່ມປະເທດໂລກທີສາມນີ້ ໄດ້ຖືເອົານະໂຍບາຍທາງດ້ານການເມືອງລະຫວ່າງປະເທດເປັນສິ່ງຜູກພັນ ໃນທາງປະຕິບັດຄືການວາງຕົວເປັນກາງ, ບໍ່ເຂົ້າຮ່ວມຝ່າຍໃດຝ່າຍໜຶ່ງ, ໃນການພິຈາລະນາບັນຫາ ຫຼື ລົງມະຕິໃນການແກ້ໄຂບັນຫາຂໍ້ຂັດແຍ່ງທາງດ້ານການເມືອງລະຫວ່າງປະເທດດ້ວຍການຍຶດຖືເອົາເຫດຜົນ ແລະ ຄວາມເປັນທຳເປັນຫຼັກການສຳຄັນ.

ກຸ່ມປະເທດໂລກທີສາມເກີດຂຶ້ນໃນຂະນະທີ່ສັງຄົມໂລກແບ່ງອອກເປັນສອງລະບົບ ຫຼື ສອງໂລກທີ່ມີຄວາມແຕກທາງດ້ານອຸດົມການ, ມີການແຂ່ງຂັນກັນຈັດຕັ້ງກຸ່ມເສດຖະກິດ, ກຸ່ມການເມືອງ, ການທະຫານ ເຊິ່ງກໍ່ໃຫ້ເກີດຄວາມຫຍຸ້ງຍາກໃນການຕົກລົງ ຫຼື ແກ້ໄຂບັນຫາລະຫວ່າງຊາດ ແລະ ເພີ່ມທະວີຄວາມຮຸນແຮງຈອງສົມຄາມເປັນຂຶ້ນ. ດັ່ງນັ້ນ, ບັນດາປະເທດທີ່ດ້ອຍພັດທະນາ ແລະ ປະເທດກຳລັງພັດທະນາ ໂດຍສະເພາະປະເທດທີ່ໄດ້ຮັບເອກະລາດໃໝ່ຈຶ່ງໄດ້ຮ່ວມກັນສ້າງຕັ້ງເປັນກຸ່ມຂຶ້ນວ່າໂລກທີສາມ.

ຈຸດປະສົງຂອງການສ້າງຕັ້ງໂລກທີສາມ

- ເພື່ອຫຼີກເວັ້ນການຢູ່ໂດດດ່ຽວ ເຊິ່ງເປັນການສ້າງຄວາມສະດວກໃຫ້ແກ່ການແຊກແຊງຂອງມະຫາອຳນາດ.
- ເພື່ອຫຼີກເວັ້ນຈາກການຕົກຢູ່ໃນການຄອບຄອງປະເທດມະຫາອຳນາດ

- ເພື່ອສ້າງໃຫ້ເກີດພະລັງງານທີ່ສຳຄັນເຊິ່ງຈະເຮັດໃຫ້ປະເທດມະຫາອຳນາດຕ້ອງຈຳຍອມຮັບຮູ້ຖານະບົດບາດໃນເວທີເສດຖະກິດຂອງການເມືອງໂລກ
- ເພື່ອຍາດແຍ່ງເອົາການຊ່ວຍເຫຼືອຈາກປະເທດມະຫາອຳນາດ ເຂົ້າໃນການພັດທະນາປະເທດຢ່າງບໍ່ເກງກົວ ໂດຍສວຍໃຊ້ຂໍ້ຂັດແຍ່ງລະຫວ່າງມະຫາອຳນາດທັງສອງມາເປັນຂໍ້ຕໍ່ລອງ.

ແນວໃດກໍ່ດີ ເພື່ອຄວາມເຂົ້າໃຈໂລກທີສາມໃຫ້ຊັດເຈນຂຶ້ນຈຳເປັນຕ້ອງໄດ້ເຂົ້າໃຈຕໍ່ໂລກທີ 1 ແລະ ທີ 2 ຄວບຄູ່ກັນໄປ. ໃນດ້ານຫຼັກການແລ້ວ ຄຳວ່າໂລກທີ 1 ແລະ ທີ 2 ນັ້ນຍັງບໍ່ທັນມີຫຼັກການໃນການແບ່ງທີ່ແນ່ນອນ ແຕ່ເທົ່າທີ່ສັງຄົມສ່ວນໃຫຍ່ຮັບຮູ້ໃນປະຈຸບັນນີ້ ໂລກແບ່ງອອກເປັນສາມກຸ່ມຄື: ກຸ່ມສັງຄົມນິຍົມ, ກຸ່ມເສລີນິຍົມ ແລະ ກຸ່ມໂລກທີສາມ. ທັງສາມກຸ່ມນີ້ມີຄວາມແຕກຕ່າງກັນທາງດ້ານເສດຖະກິດ, ການເມືອງ ແລະ ສັງຄົມ.

## 2. ການພົວພັນລະຫວ່າງປະເທດອຸດສາຫະກຳ ແລະ ໂລກທີສາມ ( ປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ )

### 2.1 ຂະບວນການບໍ່ຮ່ວມກຸ່ມ

ກຸ່ມປະເທດໂລກທີສາມໝາຍເຖິງປະເທດທີ່ໄດ້ຮັບເອກະລາດໃໝ່ພາຍຫຼັງສົງຄາມໂລກຄັ້ງທີ 2 ທີ່ບໍ່ຕ້ອງການຕົກຢູ່ໃຕ້ອຳນາດຂອງສອງຂົ້ວມະຫາອຳນາດຈຶ່ງຮ່ວມກັນສ້າງກຸ່ມໃໝ່ຂຶ້ນ ແລະ ບັນດາປະເທດເປັນກາງ (ບໍ່ຟັກໃຝ່ຝ່າຍໃດ). ໂດຍມີຈຸດປະສົງຫຼີກເວັ້ນຈາກການໂດດດ່ຽວທາງການເມືອງທີ່ເປັນການສະດວກໃນການແຊກແຊງຂອງມະຫາອຳນາດ, ຫຼີກລ່ຽງການຕົກຢູ່ພາຍໃຕ້ການຄອບຄອງຂອງປະເທດມະຫາອຳນາດ, ສ້າງຖານະບົດບາດຂອງຕົນເພື່ອຄ້ຳຢັນກັບປະເທດມະຫາອຳນາດໃນເວທີສາກົນ ແລະ ເປັນການຍາດແຍ່ງເອົາການຊ່ວຍເຫຼືອຂອງປະເທດມະຫາອຳນາດ ຢ່າງປອດໄພໂດຍສວຍໃຊ້ຂໍ້ຂັດແຍ່ງຂອງມະຫາອຳນາດ. ໃນເດືອນ ເມສາ 1955 ບັນດາປະເທດໂລກທີສາມ ໄດ້ປະຊຸມລວມກັນຢູ່ບັນດຸງ ອິນໂດເນເຊຍ ລວມມີ 29 ປະເທດຈາກອາຊີ, ອາຟຣິກາ. ກອງປະຊຸມໄດ້ຮ່ວມກັນຮັບຮອງເອົາ 5 ຫຼັກການຢູ່ຮ່ວມກັນໂດຍສັນຕິເປັນຫຼັກປະຕິບັດລະຫວ່າງຊາດ ແລະ ຕໍ່ມາກໍ່ໄດ້ມີກອງປະຊຸມອີກຫຼາຍຄັ້ງພ້ອມທັງປະເທດສະມາຊິກທີ່ເຂົ້າຮ່ວມກໍເພີ່ມຂຶ້ນເຊັ່ນ : ປີ 1957 ທີ່ເອຢິບມີ 44 ປະເທດ, ປີ 1964 ມີ 47 ປະເທດ. ພ້ອມກັນນີ້ກໍຍັງມີການສ້າງຕັ້ງກຸ່ມເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນຂຶ້ນເຊັ່ນ : ອົງການຮ່ວມມືປະຊາຊົນອາຊີ - ອາຟຣິກາ (AAPSO) ປີ 1957, ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ASEAN) 8 ສິງຫາ1967, ກຸ່ມຜູ້ຄ້ານ້ຳມັນ (OPEC), ກຸ່ມ 77 ປີ 1963 ເປັນກຸ່ມທີ່ສ້າງຂຶ້ນເພື່ອພັດທະນາເສດຖະກິດສັງຄົມຂອງປະເທດທີ່ດ້ອຍພັດທະນາ.

### 2.2 ຂະບວນການຮ່ວມມືຂອງປະຊາຊົນອາຊີ, ອາຟຣິກາ

ອົງການຮ່ວມມືຂອງປະຊາຊົນອາຊີ-ອາຟຣິກາ Afro-Asain People's Oganization: AAPSO ໄດ້ຮັບການສ້າງຕັ້ງຂຶ້ນໃນປີ ຄ.ສ 1957 ໂດຍມີຈຸດມຸ່ງໝາຍເພື່ອຈະສ້າງຄວາມເປັນອັນໜຶ່ງອັນດຽວກັນແຕ່ລະກຸ່ມປະເທດອາຊີ ແລະ ອາຟຣິກາ ເຊິ່ງມີໜ້າທີ່ຊ່ວຍເຫຼືອຂະບວນການປົດປ່ອຍຕ້ານການແຜ່ອຳນາດຂອງຈັກກະພັດ ໂດຍສະເພາະແມ່ນຕ້ານລັດທິລ່າເມືອງຂຶ້ນແບບໃຫມ່ຢູ່ອາຊີ- ອາຟຣິກາ

ນອກຈາກການຮ່ວມມືທາງດ້ານການເມືອງແລ້ວ ກຸ່ມໂລກທີສາມຍັງຮ່ວມກັນສ້າງຕັ້ງກຸ່ມເສດຖະກິດ ເພື່ອພັດທະນາເສດຖະກິດຂອງບັນດາປະເທດໂລກທີສາມໃຫ້ເຂັ້ມແຂງຂຶ້ນ ແລະ ພະຍາຍາມຫຼຸດຜ່ອນຊ່ອງວ່າງຂອງຄວາມແຕກຕ່າງກັນລະຫວ່າງປະເທດທີ່ຮັ່ງມີ ກັບປະເທດທຸກຈົນ, ປະເທດອຸດສາຫະກຳ ແລະ ປະເທດທີ່ດ້ອຍພັດທະນາ ເຊັ່ນ:

- ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສຽງໃຕ້ ຫຼື ກຸ່ມອາຊຽນ ( Asain ) , ກຸ່ມດັ່ງກ່າວນີ້ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ ຄ.ສ 1967 ມີ 5 ປະເທດເຂົ້າຮ່ວມຄື: ໄທ, ສິງກະໂປ, ອິນໂດເນເຊຍ, ຟີລິປິນ ແລະ ມາເລເຊຍ ຮ່ວມກັນລົງນາມຖະແຫຼງການທີ່ບາງກອກ ( ປະເທດໄທ )

**2.3 ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສຽງໃຕ້ ຫຼື ອາຊຽນ**

ກຸ່ມອາຊຽນ ASEAN ຫຍໍ້ມາຈາກຄຳສັບພາສາອັງກິດທີ່ວ່າ: Associasion of South East

- Asian Nation ມີຊື່ເອີ້ນໃນພາສາລາວວ່າ: ສະມາຄົມບັນດາປະຊາຊາດແຫ່ອາຊີຕາເວັນອອກສ່ຽງ

ໃຕ້, ເປັນອົງການຮ່ວມມືລະຫວ່າງບັນດາປະເທດໃນພູມມິພາກອາຊີຕາເວັນອອກສ່ຽງໃຕ້ ຫຼື ອາຊີອາຄະເນປັດຈຸບັນມີສະມາຊິກທັງໝົດ 10 ປະເທດ. ກຸ່ມອາຊຽນໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967 ທີ່ນະຄອນຫຼວງບາງກອກ,ປະເທດໄທ. ໃນເບື້ອງຕົ້ນມີພຽງ 5 ປະເທດທີ່ເຂົ້າເປັນສະມາຊິກໄດ້ແກ່:

1. ປະເທດໄທ Thailand
2. ປະເທດມາເລເຊຍ Malaysia
3. ປະເທດອິນໂດເນເຊຍ Indonesia
4. ປະເທດສິງກະໂປ Singapore
5. ປະເທດຟີລິບປິນ Philippines

ຫຼັງຈາກນັ້ນຈຶ່ງໄດ້ເພີ່ມບັນດາສະມາຊິກອາຊຽນເຂົ້າຕື່ມອີກ 5 ປະເທດ ຄື:

6. ປະເທດບຣູໄນ Brunie dalussalam ໄດ້ເຂົ້າເປັນສະມາຊິກອາຊຽນວັນວັນທີ 08 ມັງກອນ 1984
7. ປະເທດຫວຽດນາມ Vietnam ໄດ້ເຂົ້າເປັນສະມາຊິກອາຊຽນໃນວັນທີ 28 ກໍລະກົດ 1995
8. ປະເທດລາວ Laos ໄດ້ເຂົ້າເປັນສະມາຊິກອາຊຽນໃນວັນທີ 23 ກໍລະກົດ 1997
9. ປະເທດມຽນມາ Myanmar ໄດ້ເຂົ້າເປັນ ສະມາຊິກອາຊຽນໃນວັນທີ 23 ກໍລະກົດ 1997
10. ປະເທດຈຳປູເຈຍ Cambodia ໄດ້ເຂົ້າເປັນສະມາຊິກອາຊຽນໃນວັນທີ 30 ເມສາ 1999.

- **ຈຸດປະສົງຂອງການສ້າງຕັ້ງກຸ່ມອາຊຽນ**

1. ເລັ່ງລັດໃນການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມແລະ ການພັດທະນາທາງດ້າວັດທະນະທຳໃນພາກພື້ນອາຊີອາຄະເນ
2. ດຳລົງ ແລະ ຮັກສາໄວ້ເຊິ່ງສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ.
3. ສົ່ງເສີມການຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເປີດກວ້າງການຄ້າລະຫວ່າງປະເທດສະມາຊິກ.
4. ສົ່ງເສີມວຽກງານຄົ້ນຄວ້າກ່ຽວກັບອາຊີອາຄະເນ ແລະ ຮັກສາການຮ່ວມມືຢ່າງສະໜິດແໜ້ນກັບອົງການລະຫວ່າງປະເທດ ແລະ ພາກພື້ນ.

**ເນື້ອໃນເສົາຫຼັກຂອງກຸ່ມອນຊຽນມີຢູ່ 3 ເນື້ອໃນເສົາຫຼັກຕົ້ນຕໍຄື:**

**+ປະຊາຄົມເສດຖະກິດອາຊຽນ AEC ຫຍໍ້ມາຈາກ ASEAN Economic Community** ຫຼື ເປັນເປົ້າໝາຍສຳລັບ ການຮ່ວມກຸ່ມທາງເສດຖະກິດ ຂອງສະມາຄົມ ປະຊາຊາດອາຊີຕາເວັນອອກສຽງໃຕ້ ຫຼື ອາຊຽນ (Association of Southeast Asian Nations: ASEAN) ເຊິ່ງປະກອບດ້ວຍສະມາຊິກ 10 ປະເທດໄດ້ແກ່: ບຣູໄນ , ກາປູເຈຍ, ອິນໂດເນເຊຍ, ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ ເຊິ່ງອາຊຽນ ມີເປົ້າໝາຍທີ່ຈະໃຫ້ ການຮ່ວມກຸ່ມທາງເສດຖະກິດບັນລຸຜົນໃນທ້າຍປີ 2015.

-AEC ເປັນໜຶ່ງໃນ 3 ເສົາຫຼັກຂອງ ປະຊາຄົມອາຊຽນ (ASEAN Community) ເຊິ່ງປະກອບດ້ວຍເສົາຫຼັກອີກ 2 ເສົາຄື ປະຊາຄົມສັງຄົມ ແລະ ວັດທະນະທຳອາຊຽນ (ASEAN Socio-Cultural Community: ASCC) ແລະ ປະຊາຄົມການເມືອງ ແລະ ຄວາມໝັ້ນຄົງອາຊຽນ (ASEAN Political-Security Community: APSC)

- **ເປົ້າໝາຍຂອງ AEC ມີຄື:**

(1). ສົ່ງເສີມໃຫ້ອາຊຽນເປັນຕະຫຼາດ ແລະ ຖານການຜະລິດດຽວກັນ ມີການເຄື່ອນຍ້າຍສິນຄ້າ, ບໍລິການ, ການລົງທຶນ, ແຮງງານທີ່ມີສີມືຢ່າງເສລີ ແລະ ການເຄື່ອນຍ້າຍເງິນທຶນທີ່ເສລີຫຼາຍຂຶ້ນກວ່າເກົ່າ.

(2). ສົ່ງເສີມຄວາມສາມາດໃນການແຂ່ງຂັນຂອງອາຊຽນ.

(3). ຫຼຸດຊ່ອງວ່າງການພັດທະນາລະຫວ່າງປະເທດສະມາຊິກ.

(4). ສົ່ງເສີມການຮ່ວມຕົວເຂົ້າກັບປະຊາຄົມໂລກຂອງອາຊຽນ

**+ປະຊາຄົມການເມືອງ ແລະ ຄວາມໝັ້ນຄົງ ASEAN POLITICAL SECURITY COMMUNITY (APSC)**ເປັນກຸ່ມທີ່ມີຄວາມສຳຄັນທີ່ຕ້ອງສ້າງສັນຕິພາບຄວາມໝັ້ນຄົງຄວາມສະຫງົບສຸກໃຫ້ກັບປະເທດໃນກຸ່ມອາຊຽນ ແກ້ໄຂບັນຫາ ຫຼື ຄວາມຂັດແຍ່ງຕ່າງໆໄດ້ຢ່າງສັນຕິວິທີ ມີຄ່ານິຍົມກິດຈະກຳຮ່ວມກັນ ສ້າງຄວາມເຂົ້າໃຈໃນສັງຄົມ, ວັດທະນະທຳ ແລະ ປະຫວັດສາດທີ່ແຕກຕ່າງອອກໄປໃນແຕ່ລະປະເທດ, ການສ້າງຄວາມກ້າວໜ້າ ແລະ ການເຈລະຈາຕໍ່ລອງທີ່ດີກັບເຫຼົ່າບັນດາປະເທດອື່ນໆ.

**+ປະຊາຄົມສັງຄົມ ແລະ ວັດທະນະທຳ ASEAN SOCIOCULTURAL COMMUNITY (ASSC)**ເປັນກຸ່ມທີ່ມີຄວາມສຳຄັນຄືມີການເອື້ອເຟື້ອເພື່ອແຜ່ ການແບ່ງປັນເພື່ອທີ່ຈະຕ້ອງການພັດທະນາຄຸນນະພາບຊີວິດໃນດ້ານຄວາມເປັນຢູ່ຂອງປະຊາກອນໃນອາຊຽນໃຫ້ດີຂຶ້ນກວ່າເກົ່າຍົກລະດັບໃຫ້ຄຸນນະພາບຊີວິດທີ່ດີກວ່າເດີມ.

### 2.4 ອົງການໂອເປັກ ( OPEC)

ການຮ່ວມມືເສດຖະກິດອາຊີ-ປາຊີຟິກ ອົງການຂອງບັນດາປະເທດສົ່ງອອກນ້ຳມັນ (OPEC) ອົງການຂອງບັນດາປະເທດສົ່ງອອກນ້ຳມັນ (OPEC/ OH-pek) ເປັນອົງການລະຫວ່າງລັດຖະບານຂອງ 13 ປະເທດ. ສ້າງຕັ້ງຂຶ້ນໃນວັນທີ 14 ກັນຍາ 1960 ໃນແບກແດດ ໂດຍສະມາຊິກ 5 ປະເທດທາອິດ (ອີຣ່ານ, ອີຣັກ, ຄູເວດ, ຊາອຸດີອາຣາເບຍ ແລະ ເວເນຊູເອລາ), ຕັ້ງແຕ່ປີ 1965 ມີສຳນັກງານໃຫຍ່ຕັ້ງຢູ່ໃນກຸງວຽນນາ ປະເທດອອສເຕຣຍ ເຖິງວ່າອອສເຕຣຍບໍ່ແມ່ນປະເທດສະມາຊິກ OPEC. ມາຮອດເດືອນກັນຍາ 2018, 13 ປະເທດສະມາຊິກກວມເອົາປະມານ 44 ສ່ວນຮ້ອຍຂອງການຜະລິດນ້ຳມັນທົ່ວໂລກແລະ 81.5 ສ່ວນຮ້ອຍຂອງສະຫງວນໄວ້ນ້ຳມັນ "ພິສູດ" ຂອງໂລກ, ເຮັດໃຫ້ OPEC ມີອິດທິພົນທີ່ສຳຄັນຕໍ່ລາຄານ້ຳມັນຂອງໂລກທີ່ຖືກກຳນົດໄວ້ກ່ອນຫນ້ານີ້ໂດຍອັນທີ່ເອີ້ນວ່າ ". Seven Sisters "ການຈັດກຸ່ມຂອງບໍລິສັດນ້ຳມັນຫຼາຍແຫ່ງຊາດ.

ການສ້າງຕັ້ງ OPEC ໄດ້ຖືເປັນຈຸດຫັນປ່ຽນສູ່ອະທິປະໄຕແຫ່ງຊາດກ່ຽວກັບຊັບພະຍາກອນທຳມະຊາດ, ການຕັດສິນໃຈຂອງ OPEC ໄດ້ມີບົດບາດສຳຄັນໃນຕະຫຼາດນ້ຳມັນໂລກ ແລະ ການພົວພັນສາກົນ. ຜົນກະທົບສາມາດມີຄວາມເຂັ້ມແຂງໂດຍສະເພາະເມື່ອສົງຄາມຫຼືຄວາມຜິດປົກກະຕິທາງດ້ານພົນລະເຮືອນນຳໄປສູ່ການຂັດຂວາງການສະຫນອງຢ່າງຕໍ່ເນື່ອງ. ໃນຊຸມປີ 1970, ຂໍ້ຈຳກັດໃນການຜະລິດນ້ຳມັນເຮັດໃຫ້ລາຄານ້ຳມັນເພີ່ມຂຶ້ນຢ່າງຫຼວງຫຼາຍແລະລາຍໄດ້ແລະຄວາມຮັ່ງມີຂອງ OPEC, ເຊິ່ງມີຜົນກະທົບທີ່ຍາວນານແລະໄກຕໍ່ເສດຖະກິດໂລກ. ໃນຊຸມປີ 1980, OPEC ເລີ່ມຕັ້ງເປົ້າໝາຍການຜະລິດໃຫ້ບັນດາປະເທດສະມາຊິກ; ໂດຍທົ່ວໄປ, ເມື່ອເປົ້າຫມາຍຫຼຸດລົງ, ລາຄານ້ຳມັນ

ເພີ່ມຂຶ້ນ. ອັນນີ້ເກີດຂຶ້ນເມື່ອບໍ່ດົນມານີ້ຈາກການຕັດສິນໃຈຂອງອົງການໃນປີ 2008 ແລະ 2016 ເພື່ອຕັດການສະໜອງເກີນຂະໜາດ.

ນັກເສດຖະສາດໄດ້ກໍານົດ OPEC ເປັນຕົວຢ່າງຂອງປື້ມແບບຮຽນຂອງ cartel ທີ່ຮ່ວມມືເພື່ອຫຼຸດຜ່ອນການແຂ່ງຂັນໃນຕະຫຼາດ, ແຕ່ວ່າການປຶກສາຫາລືໄດ້ຖືກປົກປ້ອງໂດຍຄໍາສອນຂອງພູມຕ້ານທານຂອງລັດພາຍໃຕ້ກົດຫມາຍສາກົນ. ໃນຊຸມປີ 1960 ແລະ 1970, OPEC ປະສົບຜົນສໍາເລັດໃນການສ້າງໂຄງປະກອບລະບົບການຜະລິດນໍ້າມັນຂອງໂລກຄືນໃໝ່, ເພື່ອໃຫ້ອໍານາດການຕັດສິນໃຈ ແລະ ຜົນກໍາໄລສ່ວນໃຫຍ່ແມ່ນຢູ່ໃນມືຂອງບັນດາປະເທດຜະລິດນໍ້າມັນ. ນັບຕັ້ງແຕ່ຊຸມປີ 1980 ເປັນຕົ້ນມາ, OPEC ໄດ້ມີຜົນກະທົບທີ່ຈໍາກັດຕໍ່ການສະຫນອງນ້ຳມັນຂອງໂລກແລະຄວາມຫມັ້ນຄົງຂອງລາຄາ, ຍ້ອນວ່າສະມາຊິກມີການສໍ້ໂກງເລື້ອຍໆກ່ຽວກັບຄໍາຫມັ້ນສັນຍາຂອງພວກເຂົາຕໍ່ກັນແລະກັນ, ແລະຍ້ອນວ່າຄໍາຫມັ້ນສັນຍາຂອງສະມາຊິກສະທ້ອນໃຫ້ເຫັນເຖິງສິ່ງທີ່ເຂົາເຈົ້າຈະເຮັດເຖິງແມ່ນວ່າໃນເວລາທີ່ບໍ່ມີ OPEC.

ສະມາຊິກ OPEC ປັດຈຸບັນແມ່ນ Algeria, Angola, Equatorial Guinea, Gabon, Iran, Iraq, Kuwait, Libya, Nigeria, Republic of Congo, Saudi Arabia, United Arab Emirates ແລະ Venezuela. ເອກົວດໍ, ອິນໂດເນເຊຍ ແລະ ກາຕາ ເປັນອະດີດສະມາຊິກ OPEC.[7] ກຸ່ມໃຫຍ່ທີ່ເອີ້ນວ່າ OPEC+ ໄດ້ຖືກສ້າງຕັ້ງຂຶ້ນໃນທ້າຍປີ 2016 ເພື່ອຄວບຄຸມຕະຫຼາດນ້ຳມັນດິບທົ່ວໂລກຫຼາຍຂຶ້ນ.

ການຈັດຕັ້ງ ແລະໂຄງສ້າງ

ໃນຫຼາຍຂັ້ນຕອນໃນຊຸມປີ 1960 ແລະ 1970, OPEC ໄດ້ປັບໂຄງສ້າງລະບົບການຜະລິດນໍ້າມັນທົ່ວໂລກຄືນໃໝ່ເພື່ອສະໜັບສະໜູນລັດທີ່ຜະລິດນໍ້າມັນ ແລະ ຫ່າງຈາກກຸ່ມບໍລິສັດນໍ້າມັນອັງກິດ-ອາເມລິກາທີ່ເດັ່ນຊັດ (ທັງເຈັດເອື້ອຍນ້ອງ). ການປະສານງານລະຫວ່າງປະເທດທີ່ຜະລິດນໍ້າມັນພາຍໃນ OPEC ເຮັດໃຫ້ມັນງ່າຍຂຶ້ນສໍາລັບພວກເຂົາໃນການສັນຊາດການຜະລິດນໍ້າມັນ ແລະໂຄງສ້າງລາຄານໍ້າມັນຕາມຄວາມພໍໃຈຂອງເຂົາເຈົ້າ ໂດຍບໍ່ມີການລົງໂທດຈາກລັດຖະບານ ແລະບໍລິສັດຕາເວັນຕົກ.[9] ກ່ອນທີ່ຈະສ້າງຕັ້ງ OPEC, ປະເທດຜູ້ຜະລິດນ້ຳມັນສ່ວນບຸກຄົນໄດ້ຖືກລົງໂທດສໍາລັບການດໍາເນີນຂັ້ນຕອນການປ່ຽນແປງການຄຸ້ມຄອງການຜະລິດນ້ຳມັນພາຍໃນຊາຍແດນຂອງພວກເຂົາ.[9] ລັດຕ່າງໆໄດ້ຖືກບີບບັງຄັບທາງທະຫານ (ເຊັ່ນ: ສະຫະລັດ - ອັງກິດທີ່ສະຫນັບສະຫນູນການກໍ່ລັດຖະປະຫານຕໍ່ Mohammad Mosaddegh ຫຼັງຈາກທີ່ລາວໄດ້ຮັບການຜະລິດນ້ຳມັນຂອງອີຣ່ານເປັນສັນຊາດ) ຫຼືທາງດ້ານເສດຖະກິດ (ເຊັ່ນ: Seven Sisters ໄດ້ຊ້າລົງການຜະລິດນ້ຳມັນຢູ່ໃນລັດຫນຶ່ງທີ່ບໍ່ສອດຄ່ອງແລະເລັ່ງການຜະລິດນ້ຳມັນຢູ່ບ່ອນອື່ນ) ເມື່ອປະຕິບັດ. ຂັດກັບຜົນປະໂຫຍດຂອງເອື້ອຍນ້ອງທັງເຈັດ ແລະລັດຖະບານຂອງພວກເຂົາ.[9]

ເຫດຜົນຂອງອົງການຈັດຕັ້ງທີ່ສະຫນັບສະຫນູນ OPEC ແມ່ນວ່າມັນຢູ່ໃນຜົນປະໂຫຍດລວມຂອງສະມາຊິກເພື່ອຈໍາກັດການສະຫນອງນ້ຳມັນຂອງໂລກເພື່ອເກັບກ່ຽວລາຄາທີ່ສູງຂຶ້ນ.[6] ຢ່າງໃດກໍຕາມ, ບັນຫາຕົ້ນຕໍພາຍໃນ OPEC ແມ່ນວ່າມັນເປັນສ່ວນບຸກຄົນທີ່ສົມເຫດສົມຜົນສໍາລັບສະມາຊິກທີ່ຈະໂກງຄໍາຫມັ້ນສັນຍາແລະການຜະລິດນ້ຳມັນຫຼາຍເທົ່າທີ່ເປັນໄປໄດ້.[6]

ນັກວິທະຍາສາດທາງດ້ານການເມືອງ Jeff Colgan ໄດ້ໂຕ້ຖຽງວ່າ OPEC ນັບຕັ້ງແຕ່ຊຸມປີ 1980 ສ່ວນໃຫຍ່ລົ້ມເຫລວໃນການບັນລຸເປົ້າຫມາຍຂອງຕົນ (ຂອບເຂດຈໍາກັດການສະຫນອງນ້ຳມັນຂອງໂລກ, ລາຄາທີ່ສະຖຽນລະພາບ, ແລະການເພີ່ມລາຍຮັບສະເລ່ຍໃນໄລຍະຍາວ). ລາວພົບວ່າສະມາຊິກໄດ້ຫລອກລວງ 96% ຂອງຄໍາຫມັ້ນສັນຍາຂອງພວກເຂົາ.[6] ໃນຂອບເຂດທີ່ປະເທດສະມາຊິກປະຕິບັດຕາມຄໍາຫມັ້ນສັນຍາຂອງພວກເຂົາ, ມັນແມ່ນຍ້ອນ

ວ່າຄໍາຫມັ້ນສັນຍາສະທ້ອນໃຫ້ເຫັນເຖິງສິ່ງທີ່ເຂົາເຈົ້າຈະເຮັດເຖິງແມ່ນວ່າ OPEC ບໍ່ມີ. ເຫດຜົນອັນໃຫຍ່ຫຼວງອັນໜຶ່ງສໍາລັບການສໍ້ໂກງເລື້ອຍໆແມ່ນວ່າ OPEC ບໍ່ໄດ້ຊຸກຍູ້ສະມາຊິກສໍາລັບການບໍ່ປະຕິບັດຕາມຄໍາຫມັ້ນສັນຍາ.[6]

ຄວາມເປັນຜູ້ນໍາແລະການຕັດສິນໃຈ

ເບິ່ງເພີ່ມເຕີມ: ບັນຊີລາຍຊື່ຂອງເລຂາທິການທົ່ວໄປຂອງ OPEC

ອ້າງເຖິງຄໍາບັນຍາຍ

ບັນດາຜູ້ແທນກອງປະຊຸມ OPEC ທີ່ Swissotel, Quito, Ecuador, ເດືອນທັນວາ 2010. ກອງປະຊຸມ OPEC ແມ່ນອໍານາດສູງສຸດຂອງອົງການຈັດຕັ້ງ, ແລະປະກອບດ້ວຍຄະນະຜູ້ແທນໂດຍປົກກະຕິໂດຍບັນດາລັດຖະມົນຕີນໍ້າມັນຂອງບັນດາປະເທດສະມາຊິກ. ຫົວໜ້າບໍລິຫານຂອງອົງການດັ່ງກ່າວແມ່ນເລຂາທິການໃຫຍ່ OPEC. ກອງປະຊຸມປົກກະຕິຈະປະຊຸມຢູ່ສໍານັກງານໃຫຍ່ວຽນນາ, ຢ່າງຫນ້ອຍສອງຄັ້ງຕໍ່ປີແລະໃນກອງປະຊຸມພິເສດເພີ່ມເຕີມໃນເວລາທີ່ມີຄວາມຈໍາເປັນ. ໂດຍທົ່ວໄປແລ້ວມັນດໍາເນີນການກ່ຽວກັບຫຼັກການຂອງເອກະພາບແລະ "ຫນຶ່ງສະມາຊິກ, ຫນຶ່ງລົງຄະແນນສຽງ", ໂດຍແຕ່ລະປະເທດຈ່າຍຄ່າທໍານຽມສະມາຊິກເທົ່າທຽມກັນເຂົ້າໄປໃນງົບປະມານປະຈໍາປີ ຢ່າງໃດກໍຕາມ, ເນື່ອງຈາກວ່າ Saudi Arabia ເປັນປະເທດສົ່ງອອກນໍ້າມັນທີ່ໃຫຍ່ທີ່ສຸດ ແລະ ມີກໍາໄລຫຼາຍທີ່ສຸດໃນໂລກ, ມີຄວາມສາມາດພຽງພໍທີ່ຈະເຮັດຫນ້າທີ່ເປັນຜູ້ຜະລິດ swing ແບບດັ້ງເດີມເພື່ອດຸ່ນດ່ຽງຕະຫຼາດໂລກ, ມັນເຮັດຫນ້າທີ່ເປັນ "ຜູ້ນໍາ de facto ຂອງ OPEC".

### 2.5 ກຸ່ມເຈັດສິບເຈັດ( G77 )

ກຸ່ມ 77 ກຸ່ມຂອງ 77 Logo.svg ຕົວຫຍໍ້ G77ຕັ້ງຊື່ຕາມຈໍານວນປະເທດສະມາຊິກສ້າງຕັ້ງ 15 ມິຖຸ 1964; 57 ປີກ່ອນສ້າງຕັ້ງຂຶ້ນທີ່ນະຄອນເຈນີວາ, ສະວິດເຊີແລນປະເພດການລົງຄະແນນສຽງລະຫວ່າງລັດຖະບານຈຸດປະສົງເພື່ອສ້າງເວທີປາໄສໃຫ້ປະເທດພວມພັດທະນາເພື່ອຊຸກຍູ້ຜົນປະໂຫຍດດ້ານເສດຖະກິດສໍານັກງານໃຫຍ່ ສະຫະປະຊາຊາດວິທີການລວມການຕໍ່ລອງ, lobbying, ບົດລາຍງານ ແລະ ການສຶກສາຂົງເຂດການເມືອງສາກົນສະມາຊິກ (2019) 134 ປະເທດສະມາຊິກປະທານກຸ່ມ 77 ປະເທດ ສາທາລະນະລັດ ອິສລາມ ປາກິສຖານພັນທະມິດຂອງສະຫະປະຊາຊາດ

ກຸ່ມ 77 (G77) ຢູ່ອົງການສະຫະປະຊາຊາດ (ສປຊ) ແມ່ນປະເທດປະສົມຂອງ 134 ປະເທດພວມພັດທະນາ, ໄດ້ອອກແບບເພື່ອຊຸກຍູ້ຜົນປະໂຫຍດດ້ານເສດຖະກິດລວມຂອງສະມາຊິກ ແລະ ສ້າງຂີດໝາຍການເຈລະຈາຮ່ວມໃນສະຫະປະຊາຊາດ ມີສະມາຊິກຜູ້ກໍ່ຕັ້ງ 77 ຄົນຂອງອົງການທີ່ມີສໍານັກງານໃຫຍ່ຢູ່ໃນນະຄອນເຈນີວາ, ແຕ່ມັນໄດ້ຂະຫຍາຍອອກໄປເຖິງ 134 ປະເທດສະມາຊິກຕາມອົງການຈັດຕັ້ງດັ່ງກ່າວປາກິສຖານເປັນປະທານໃນປີ 2021.ກຸ່ມດັ່ງກ່າວໄດ້ສ້າງຕັ້ງຂຶ້ນໃນວັນທີ 15 ມິຖຸນາ 1964, ໂດຍ 77 ປະເທດທີ່ບໍ່ເຂົ້າກຸ່ມໃນ "ຖະແຫຼງການຮ່ວມຂອງເຈັດສິບເຈັດປະເທດ" ທີ່ອອກໃນກອງປະຊຸມສະຫະປະຊາຊາດກ່ຽວກັບການຄ້າແລະການພັດທະນາ (UNCTAD). ກອງປະຊຸມໃຫຍ່ຄັ້ງທໍາອິດແມ່ນຢູ່ໃນ Algiers ໃນປີ 1967, ບ່ອນທີ່ Charter of Algiers ໄດ້ຖືກຮັບຮອງເອົາແລະພື້ນຖານສໍາລັບໂຄງສ້າງສະຖາບັນຖາວອນໄດ້ຖືກເລີ່ມຕົ້ນພາຍໃຕ້ການນໍາພາຂອງ Raul Prebisch ຜູ້ທີ່ເຄີຍເຮັດວຽກຢູ່ ECLA.[5] ໃນນັ້ນມີກຸ່ມ 77 ກຸ່ມທີ່ຈັດຂຶ້ນຢູ່ນະຄອນເຈນີວາ (ສປຊ), ໂຣມ (FAO), ວຽນນາ (UNIDO), ປາຣີ (UNESCO), ໄນໂຣບີ (UNEP) ແລະກຸ່ມ 24 ປະເທດທີ່ນະຄອນຫຼວງວໍຊິງຕັນ ດີຊີ (ກອງທຶນເງິນຕາສາກົນແລະທະນາຄານໂລກ). ນະໂຍບາຍກຸ່ມດັ່ງກ່າວໄດ້ຮັບການຍົກຍ້ອງວ່າມີຈຸດຢືນຮ່ວມກັນຕໍ່ຕ້ານການແບ່ງແຍກສີຜິວ ແລະ ສະໜັບສະໜູນການປົດອາວຸດທົ່ວໂລກ ມັນໄດ້ຮັບການສະຫນັບສະຫນູນຂອງຄໍາສັ່ງເສດຖະກິດສາກົນໃຫມ່ມັນໄດ້ຮັບການວິພາກວິຈານສໍາລັບການສະຫນັບສະຫນູນທີ່ຂາດແຄນຂອງຕົນ ຫຼື ການຄັດຄ້ານຢ່າງແທ້ຈິງ,

ຕໍ່ກັບຂໍ້ລິເລີ່ມທີ່ສົ່ງເສີມສິ່ງແວດລ້ອມ, ເຊິ່ງກຸ່ມພິຈາລະນາການລິເລີ່ມການພັດທະນາເສດຖະກິດແລະການລົບລ້າງຄວາມທຸກຍາກ.

## 3. ການຮ່ວມກຸ່ມຂອງບັນດາຊາດຕ່າງໆເພື່ອຜົນປະໂຫຍດທາງດ້ານເສດຖະກິດ - ສັງຄົມ ແລະ ການເມືອງ

### 3.1 ການຮ່ວມມືທາງດ້ານເສດຖະກິດ, ການເມືອງຂອງບັນດາປະເທດສັງຄົມນິຍົມ

#### 3.1.1 ລະບົບທຶນນິຍົມ

ລະບົບທຶນນິຍົມແມ່ນ ບັນດາປະເທດທີ່ມີການປົກຄອງໄປຕາມ ລະບອບປະຊາທິປະໄຕ ນາຍທຶນ ເຊິ່ງລະບົບເສດຖະກິດແມ່ນ ລັກສະນະເສລີນິຍົມທີ່ມີຄວາມຜູກພັນກັບ ສະຫະລັດອາເມຣິກາ ທັງໃນດ້ານ ການເມືອງ, ເສດຖະກິດ ແລະ ດ້ານການທະຫານເຊິ່ງສະແດງອອກໃນຫຼາຍດ້ານ

**ກ. ເສດຖະກິດ**

ເສດຖະກິດທຶນນິຍົມ ເປັນລະບົບເສດຖະກິດແບບເອກກະຊົນ ທີ່ມີຜະລິດຕະພັນສິນຄ້າຕ່າງໆ ແລກປ່ຽນຊື້ຂາຍໂດຍ ບໍລິສັດເອກະຊົນ ຫຼື ກຸ່ມທຸລະກິດ ເພື່ອສ້າງຜົນກຳໄລໃຫ້ບໍລິສັດ ກໍ່ຄືອົງການ. ໂດຍມີການແລກປ່ຽນສິນຄ້າ ແລະ ການບໍລິການທີ່ມີການຮັບຮອງທາງດ້ານກົດໝາຍ ແລະ ການແຂ່ງຂັນກັນໃນຂໍ້ຂັດແຍ່ງທາງການສິນຄ້າເພື່ອຜົນກຳໄລ.

**ຂ. ການຂະຫຍາຍຕົວຂອງເສດຖະກິດ ທຶນນິຍົມ**

- **ປະເທດອາເມຣິກາ**

ອາເມຣິກາ ເປັນປະເທດໜຶ່ງທີ່ນອນໃນ ທະວີບອາເມຣິກາ ທີ່ມີບົດບາດນຳໜ້າໝູ່ ບໍ່ວ່າຈະເປັນດ້ານ ການຜະລິດອາວຸດນິວເຄຣຍ, ການທະຫານເສດຖະກິດ, ການຄົມມະນາຄົມ, ດ້ານການເມືອງຫຼືວ່າດ້ານອື່ນໆ. ເຊິ່ງເປັນປັດໃຈເຮັດໃຫ້ອາເມຣິກາ ຢືນຢູ່ໃນອັນດັບໜຶ່ງຂອງໂລກ. ພາຍຫຼັງ ສົງຄາມກາງເມືອງໃນປີ ຄ.ສ 1861-1865 ສິ້ນສຸດລົງເສດຖະກິດອາເມຣິກາໄດ້ມີການຂະຫຍາຍຕົວວ່ອງໄວ ພຽງແຕ່ໄລຍະເວລາ 30 ປີ ອາເມຣິກາ ສາມາຍົກຖານະທາງດ້ານອຸດສາຫະກຳໃຫ້ຢືນຢູ່ໃນອັບດັບ 1 ຂອງໂລກ ຜະລິດຕະພັນອຸດສາຫະກຳກວມເອົາ 1/2  ຂອງຜົນຜະລິດໃນເອີຣົບ. ມາຮອດສະຕະວັດທີ XIX ຂະແໜງການຜະລິດ ອຸດສາຫະກຳໄດ້ມີການເຕົ້າໂຮມເຂົ້າເປັນ ສະຫະພັນການຜະລິດເອີ້ນວ່າ: “ ເທີຣສ ” ມີບໍລິສັດຜູກຂາດເຖິງ 445 ກວ່າອົງການຈິນສາມາດເວົ້າໄດ້ວ່າ: ອາເມຣິກາຄື ບ້ານເກີດເມືອງນອນຂອງ “ ເທີຣສ ”  ແລະ ເປັນ “ ລາຊາອຸດສາຫະກຳ ”.

ພາຍຫຼັງ ສົງຄາມໂລກຄັ້ງທີ 2 ໄດ້ສິ້ນສຸດລົງ ເສດຖະກິດຂອງ ອາເມຣິກາໄດ້ມີການຂະຫຍາຍຕົວຢ່າງກະໂດດຂຶ້ນ; ເນື່ອງຈາກວ່າອາເມຣິກາ ໄດ້ຮັບຜົນກຳໄລຈາກການຂາຍອາວຸດ ຢູ່ໃນປາງສົງຄາມພຸ້ນມີເຖິງ 114 ຕື້ ໂດລາສະຫະລັດ, ມາຮອດປີ ຄ.ສ 1945 ຍັງມີບັນດາປະເທດ ສຳພັນທະມິດຍັງຕິດໜີ້ ອາເມຣິກາເຖິງ 41.751 ຕື້ ໂດລາສະຫະລັດ.

- ດ້ານອຸດສາຫະກຳ: ການຜະລິດອຸດສາຫະກຳຂອງ ອາເມຣິກາສະເລ່ຍແລ້ວແມ່ນມີປະລິມານເພີ່ມຂຶ້ນເປັນ 24% , ຜະລິດຕະພັນກະສິກຳເພີ່ມຂຶ້ນ 27% ຖ້າທຽບໃສ່ໄລຍະປີ ຄ.ສ 1935-1939 ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ເສດຖະກິດ ອາເມຣິກາມີຄວາມເຂັ້ມແຂງ ແລະ ຮັ່ງມີກວ່າໝູ່ໃນໂລກ. ໃນຊຸມປີ ຄ.ສ 1945-1949 ຜະລິດຕະພັນອຸດສາຫະກຳກວມເຖິງ 56.4% ຂອງຜະລິດຕະພັນອຸດສາຫະກຳໃນທົ່ວໂລກ , ຜົນຜະລິດຕະພັນກະສິກຳ ແມ່ນສາມາດທຽບເທົ່າປະເທດອັງກິດ, ຝຣັ່ງ, ເຢຍລະມັນຕາເວັນຕົກ, ອີຕາລີ ແລະ ຍີ່ປຸ່ນ ( ລວມເຂົ້າກັນທັງໝົດ 1949 ). ນອກນັ້ນ ອາເມຣິກາ ຍັງມີປະລິມານ ຄຳສົດກວມ 3/4 ຂອງປະລິມານຄຳສົດໃນທົ່ວໂລກ ( ປະມານ 25 ຕື້ໂດລາ 1949 )  ແລະ

ມີຈຳນວນກຳປັ່ນຫຼາຍກວ່າ 50% ຂອງໂລກ. ໃນຊຸມປີ 1960 ອາເມຣິກາໄດ້ກາຍເປັນສູນກາງທາງດ້ານເສດຖະກິດການເງິນ ເປັນພຽງແຫ່ງດຽວໃນໂລກ



ຮູບທີ 10 ໂຮງງານຫຼອມເຫຼັກກ້າ ແລະ ອຸດສາຫະກຳເຄມີ

ເງື່ອນໄຂທີ່ພາໃຫ້ເສດຖະກິດ ອາເມຣິກາມີການຂະຫຍາຍຕົວກະໂດດຂັ້ນຢ່າງໄວອາແມ່ນມາຈາກຫຼາຍປັດໄຈເຊັ່ນ:

- ອາເມຣິກາ ໄດ້ອີງໃສ່ການປະຕິວັດວິທະຍາສາດ-ເຕັກນິກ ແລະ ການດັດສົມກົນໄກການຜະລິດທີ່ມີ ຄວາມສອດຄ່ອງກັບໂຄງ ການປະກອບເສດຖະກິດ ຍົກສູງສະມັດທະພາບຂອງງານ ແລະ ຫຼຸດຜ່ອນລາຄາສິນຄ້າ
- ໄດ້ເພີ່ມທະວີການໂຮມສູນໃນການຜະລິດ ແລະ ມີການທຸ່ມເທຕົ້ນທຶນສູງເຂົ້າໃນການລົງທຶນແມ່ນສູງ.
- ອາເມຣິກາ ໄດ້ອີງໃສ່ການຜະລິດ ອາວຸດທີ່ມີຄວາມທັນສະໄໝເພື່ອຂາຍ ( 50% ຂອງລາຍໄດ້ແຫ່ງຊາດແມ່ນມາຈາກການຂາຍອາວຸດ ). ນອກນັ້ນ ອາເມຣິກາຍັງມີຊັບພະຍາກອນທຳມະຊາດມີກຳລັງແຮງງານຫຼາຍທັງເປັນ ປະເທດທີ່ບໍ່ເຄີຍມຖືກສົງຄາມທຳລາຍ.

ຄຽງຄູ່ກັນນັ້ນ ເສດຖະກິດອາເມຣິກາກໍ່ ຍັງມີຂໍ້ຫຍຸ້ງຍາກຫຼາຍຢ່າງຄື:

- ປະຈຸບັນເຖິງວ່າ ອາເມຣິກາຍັງນຳໜ້າໝູ່ທາງ ດ້ານຜະລິດຕະພັນອຸດສາຫະກຳ, ກະສິກຳ ແລະ ການເງິນກໍ່ຕາມ ແຕ່ບົດບາດຂອງອາເມຣິກາທາງ ດ້ານເສດຖະກິດຂອງເຂົານັບມື້ຖອຍລົງ ເພາະວ່າ ບັນດາປະເທດ ຕາເວັນຕົກ, ປະເທດຈີນ ແລະ ຍີ່ປຸ່ນ ໄດ້ມີການບີນຕົວຂຶ້ນ ແລະ ການເປັນຄູ່ແຂ່ງຢ່າງເອົາຈິງເອົາຈັງຂອງ ອາເມຣິກາໃນທຸກໆດ້ານ.
- ເສດຖະກິດ ອາເມຣິກາຂະຫຍາຍຕົວໄວ ແຕ່ຂາດສະຖຽນລະພາບ ( ແຕ່ປີຄ.ສ 1945 ຮອດປະຈຸບັນ ໄດ້ເກີດມີວິກິດການທາງດ້ານເສດຖະກິດເຖິງ 8 ຄັ້ງ
- ສັງຄົມ ຍັງມີຄວາມຫຼູດໂຕນກັນ ລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ ອັນເປັນສາເຫດທີ່ພາໃຫ້ເກີດມີຄວາມຂັດແຍ່ງກັນ ເຮັດເກີດຄຄວາມບໍ່ສະຫງົບພາຍໃນສັງຄົມອາເມຣິກາ

ຈຸດພິເສດທາງດ້ານເສດຖະກິດ ອາເມຣິກາເປັນ ປະເທດນາຍທຶນທີ່ມີການຂະຫຍາຍຕົວສູງ ມີຄວາມສາມາດທ້ອນໂຮມບັນດາທຶນຮອນສູງ, ຜົນຜະລິດບາງຊະນິດ ກໍ່ມີຫຼາຍກວ່າປະເທດທຶນນິຍົມອື່ນເປັນຕົ້ນແມ່ນ: ນ້ຳມັນເຊື້ອໄຟ, ເຫຼັກກ້າ ກວມເຖິງ 30% ຂອງປະລິມານທົ່ວໂລກ, ດ້ານເຕັກນິກວິທະຍາສາດ ລື່ນອັງກິດ, ເຢຍລະມັນ 2.5 ເທື່ອ. ການທ້ອນໂຮມທຶນຮອນຂອງອາເມຣິກາໄດ້ຫຼາຍ ແລະ ໄດ້ໄວ ເພາະວ່າບັນດາບໍລິສັດໃຫຍ່ໆຂອງ ນາຍທຶນເປັນຜູ້ກຳນົດ

ແລະ ຕັດສິນໃຈໃນການຂະຫຍາຍຕົວເສດຖະກິດສູງຂອງ ເສດຖະກິດແຫ່ງຊາດ ໂດຍມີການລົງທຶນໃສ່ການ ຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີເປັນຈຳນວນຫຼວງຫຼາຍຕໍ່ປີ ອັນເຮັດໃຫ້ການຜະລິດມີການຂະຫຍາຍຕົວຂຶ້ນສູ່ລະດັບສູງໃນທຸກໆດ້ານ.

- ການຄ້າ - ການລົງທຶນ ແມ່ນເປັນຂະແໜງການທີ່ສຳຄັນ ເພື່ອຄວາມຢູ່ລອດຂອງ ອາເມຣິກາ ດ້ານການຜະລິດ. ສິນຄ້າແມ່ນໄດ້ມາຈາກຜົນຜະລິດອຸດສາຫະກຳ ແລະ ກະສິກຳ ອາເມຣິກາ ໄດ້ສ້າງສາຍພົວພັນການຄ້າຂາຍຫຼາຍປະເທດຢ່າງກວ້າງຂວາງກັບທຸກໆປະເທດໃນໂລກ ບໍ່ພຽງແຕ່ພົວພັນດ້ານເສດຖະກິດກັບຕ່າງປະເທດດ້ວຍຮູບການຄ້າຂາຍແລກປ່ຽນສິນຄ້າເທົ່ານັ້ນ ອາເມຣິກາ ຍັງມີການຈຳໜ່າຍທຶນຮອນທີ່ກອມເອົາອັດຕາສ່ວນສູງ ໄດ້ໃຫ້ທຶນກູ້ຢືມແກ່ປະເທດທີ່ຄວາມຕ້ອງການ ຄວາມຈະເລີນດ້ານອຸດສາຫະກຳ ແລະ ປະເທດທີ່ກຳລັງພັດທະນາເປັນຈຳນວນຫຼວງຫຼາຍ. ສິນຄ້າສົ່ງອອກແມ່ນ ຜະລິດຕະພັນເຄື່ອງກົນຈັກກວມເຖິງ 78%, ເຄື່ອງບິນ, ທາດເຊື້ອໄຟ, ຜະລິດຈະພັນເຄມີ, ເຄື່ອງຄອມພິວເຕີ, ເຄື່ອງກໍ່ສ້າງ... ສິນຄ້າຂາເຂົ້າແມ່ນເປັນປະເພດ ວັດຖຸດິບຊະນິດຕ່າງໆ, ນ້ຳມັນ, ແຮ່ທາດຊະນິດຕ່າງໆ, ກາເຟ, ຢາງ, ໝາກໄມ້ເຂດຮ້ອນ...ອັນເປັນເງື່ອນໄຂເຮັດໃຫ້ ອາເມຣິກາຈະເລີນຮັ່ງມີ. ນອກນັ້ນ ຍັງມີປັດໃຈທີ່ຊຸກຍູ້ສົ່ງເສີມໃຫ້ເສດຖະກິດອາເມຣິກາຂະຫຍາຍຕົວມາຈາກ ປະຊາກອນອາເມຣິກາມີຫຼາຍທີ່ມີຄວາມຮູ້ຄວາມສາມາດສູງ, ມີຊັບພະຍາກອນທຳມະຊາດຫຼວງຫຼາຍ, ມີທຶນຮອນອັນມະຫາສານ, ມີລະບົບການຄົມມະນາຄົມທີ່ທັນສະໄໝສະດວກສະບາຍ ແລະ ມີການບໍລິການດ້ານການຄ້າຂາຍຢ່າງມີຄວາມຄ່ອງແຄ້ວວ່ອງໄວ.

ຕາຕາລາງການຄ້າຂອງອາເມຣິກາ

| | ກວມ % ຂອງການແລກປ່ຽນໃນໂລກ | | |
|---|---|---|---|
| | 1980 | 1985 | 1990 |
| ການນຳເຂົ້າສິນຄ້າ | 13.5% | 19.8% | 18% |
| ການສົ່ງອອກສິນຄ້າ | 11.7% | 12% | 13.5% |

- **ປະເທດອັງກິດ**

ປະເທດອັງກິດເປັນປະເທດໜຶ່ງທີ່ເສດຖະກິດຂະຫຍາຍຕົວທີ່ຢືນຢູ່ແຖວໜ້າຂອງເສດຖະກິດໂລກ ກໍ່ຄືຂົງເຂດເອີຣົບຕາເວັນຕົກ ແລະ ທັງເປັນປະເທດທີ່ມີການປະຕິວັດອຸດສາຫະກຳກ່ອນໝູ່ໃນໂລກ ມີການນຳໃຊ້ໂຮງງານມາທົດແທນແຮງງານຄົນ ອັນເຮັດໃຫ້ການຜະລິດໄດ້ຫຼາຍ ແລະ ມີຄຸນນະພາບສູງ. ສາດມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມນັບມື້ນັບຫຼາຍຂຶ້ນອັນໄດ້ເຮັດໃຫ້ມີເສດຖະກິດ ອັງກິດມີການຂະຫຍາຍຕົວ.

- ອຸດສາຫະກຳ ພາຍຫຼັງສົງຄວາມໂລກຄັ້ງທີ 2 ລະບົບຫົວເມືອງຂຶ້ນຂອງອັງກິດ ໄດ້ຖືກພັງທະລາຍລົງຢ່າງໄວວາ ບັນຫາດັ່ງກ່າວໄດ້ສົ່ງຜົນສະທ້ອນໜັກໜ່ວງຕໍ່ກັບພື້ນຖານເສດຖະກິດຂອງປະເທດອັງກິດ. ຍ້ອນວ່າພື້ນຖານທາງດ້ານເສດຖະກິດຂອງອັງກິດມີຄວາມຫຼ້າຫຼັງ ແລະ ເກົ່າແກ່ອັນເຮັດໃຫ້ ຜົນການຜະລິດບໍ່ໄດ້ດີເທົ່າທີ່ຄວນ. ໃນສະຕະວັດທີ XIX ອັງກິດເປັນ “ ໂຮງຊ່າງຂອງໂລກ ”, ມາຮອດສະຕະວັດທີ XX ອັງກິດຖືກອາເມຣິກາ ແລະ ເຢຍລະມັນນຳໜ້າ ແລະ ສາມາດລື່ນກາຍ. ດັ່ງນັ້ນຈຶ່ງເຮັດໃຫ້ທ່າຕັ້ງທາງດ້ານເສດຖະກິດຫຼຸດໜ້ອຍຖອຍລົງຮອງອາເມຣິກາ, ຍີ່ປຸ່ນ ແລະ ເຢຍລະມັນຕາເວັນຕົກ.

ມາໃນປີ ຄ.ສ 1948 ອັງກິດຕ້ອງອີງໃສ່ຄວາມຊ່ວຍເຫຼືອຈາກອາເມຣິກາ ເພື່ອເປັນກ້ອນທຶນໃນການພື້ນຟູພື້ນຖານເສດຖະກິດດ້ານການຜະລິດ, ສະນັ້ນຈຶ່ງເຮັດໃຫ້ເສດຖະກິດຂອງອັງກິດຖືກຜູກມັດ ແລະ ຂຶ້ນກັບອາເມຣິກາ.

-	ການຄ້າ - ການລົງທຶນ ຍ້ອນວ່າອັງກິດໄດ້ອາໄສ ຄວາມຊ່ວຍເຫຼືອຈາກອາເມຣິກາເຮັດໃຫ້ ລັດຖະບານອັງກິດອະນຸຍາດ ໃຫ້ອາເມຣິກາສາມາດເຂົ້າມາທຳມາຄ້າຂາຍ, ເຂົ້າມາລົງທຶນຢູ່ພາຍໃນປະເທດຂອງຕົນໄດ້ຢ່າງຫຼວງຫຼາຍ ( ປະຈຸບັນສະເພາະບລິສັດຟອດຂອງອາເມຣິກາໄດ້ຄວບຄຸມ 50% ຂອງຂະແໜງການຜະລິດລົດຍົນໃນປະເທດອັງກິດ ).

ມາຮອດປີ ຄ.ສ 1950 ອັງກິດສາມາດຟື້ນຟູພື້ນຖານເສດຖະກິດໃຫ້ສາມາດເທົ່າທຽມກັບໄລຍະກ່ອນສົງຄາມ ແມ່ນໄດ້ມີການຂະຫຍາຍຕົວໄວພໍສົມຄວນ ນອກນັ້ນອັງກິດຍັງໄດ້ສຸມໃສ່ຂະຫຍາຍເສດຖະກິດທີ່ເປັນມູນເຊື້ອຄື: ການລົງທຶນຢູ່ຕ່າງປະເທດ, ການຂຸດຄົ້ນຖ່ານຫີນ, ການຜະລິດເຄື່ອງກົນຈັກ, ການຜະລິດກຳປັ່ນ ແລະ ການຕ່ຳແຜ່ນແພ ອັງກິດໄດ້ຖືເອົາຂະແໜງການກະສິກຳລ້ຽງສັດເປັນພື້ນຖານ, 1/2 ເນື້ອທີ່ການປູດຝັງແມ່ນດຳເນີນການປູກຫຍ້າເພື່ອລ້ຽງສັດ.

- **ປະເທດຍີ່ປຸ່ນ**

ປະເທດຍີ່ປຸ່ນເປັນ ປະເທດໜຶ່ງທີ່ນອນໃນທະວີບອາຊີ ທີ່ມີເສດຖະກິດຂະຫຍາຍຕົວ ແລະ ພັດທະນາປະເທດຊາດໄປສູ່ຄວາມຈະເລີນຮຸ່ງເຮືອງທີ່ມີຄວາມທັນສະໄໝ ດ້ານເຕັກໂນໂລຢີ ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຕັ້ງແຕ່ມີ ການປະຕິຮູບເມຈິ ເຮັດໃຫ້ເສດຖະກິດຍີ່ປຸ່ນຂະຫຍາຍຕົວເລື້ອຍມາ.

ຍີ່ປຸ່ນເປັນປະເທດຟາດຊິດທີ່ປາລາໄຊໃນສົງຄາມໂລກຄັ້ງທີ 2 ເຮັດໃຫ້ຍີ່ປຸ່ນສູນເສຍຫົວເມືອງຂຶ້ນທັງໝົດ ແລະ ຖືກອາເມຣິກາໃຊ້ກຳລັງທະຫານປາບປາມຍຶດຄອງ ຕາມກົດເກນຂອງຝ່າຍສຳພັນທະມິດ. ພື້ນຖານເສດຖະກິດຂອງຍີ່ປຸ່ນແມ່ນຖືກທຳລາຍຢ່າງໜັກໜ່ວງ ຜະລິດຕະພັນອຸດສາຫະກຳໃນປີ ຄ.ສ 1946 ເທົ່າກັບ1/4 ຂອງໄລຍະສົງຄາມ

ປີ ຄ.ສ 1945 – 1950 ພື້ນຖານເສດຖະກິດຍີ່ປຸ່ນ ການຂະຫຍາຍຕົວແມ່ນຊັກຊ້າ ແລະ ມີຄວາມຕິດພັນແໜ້ນແຟ້ນກັບເສດຖະກິດ ອາເມຣິກາ. ພາຍຫຼັງທີ່ອາເມຣິກາໄດ້ດຳເນີນສົງຄາມຮຸກຮານ ເກົາຫຼີ ( ຄ.ສ 1950 ) ເຮັດໃຫ້ຍີ່ປຸ່ນສາມາດຂະຫຍາຍໄດ້ຢ່າງວ່ອງໄວ ຍ້ອນວ່າໄດ້ມີການຜະລິດອຸປະກອນຮັບໃຊ້ທາງ ການທະຫານຂາຍໃຫ້ອາເມຣິກາ. ຮອດຊຸມປີ 60 ໃນເມື່ອອາເມຣິກາພວມເມົາໃນການເຮັດສົງຄວາມຮຸກຮານອິນດູຈີນ, ເຮັດໃຫ້ ຍີ່ປຸ່ນສວຍໃຊ້ໂອກາດດັ່ງກ່າວ ເພື່ອຂະຫຍາຍເສດຖະກິດຢ່າງວ່ອງໄວກະໂດດຂັ້ນ ແລະ ໜ້າມະຫັດສະຈັນທີ່ສຸດ.

ຂະແໜງອຸດສາຫະກຳ ຍີ່ປຸ່ນກໍ່ມີບາດກ້າວການຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ໄວກວ່າໝູ່. ປະຈຸບັນ ຍີ່ປຸ່ນກາຍເປັນຜູ້ນຳໜ້ຳກ່ຽວກັບການຜະລິດກຳປັນ ( ເທົ່າກັບ 50% ຂອງຈຳນວນກຳປັ່ນໃນທົ່ວໂລກ ), ການຜະລິດເຫຼັກກ້າ, ເຄື່ອງຈັກ, ລົດຍົນ, ເທັບ, ໂທລະພາບ, ກ້ອງຖ່າຍຮູບ, ໂມງ...

ດ້ານການກະສິກຳ ປະລິມານການຜະລິດເຂົ້າແມ່ນ 80% ( ຄ.ສ 1967 – 1969 ) ຂອງຈານວນເຂົ້າໃນທົ່ວປະເທດ. ການລ້ຽງສັດສະໜອໄດ້ 2/3 ຂອງຄວາມຕ້ອງການພາຍໃນປະເທດ ສ່ວນການປະມົງແມ່ນມີການຂະຫຍາຍຕົວຮອງອັນດັບສອງຮອງຈາກປະເທດເປຣູ

ນັບແຕ່ຊຸມປີ 70 ເປັນຕົ້ນມາ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນ 3 ປະເທດທີ່ເປັນສູນກາງທາງດ້ານເສດຖະກິດ ແລະ ການເງິນຂອງໂລກ ( ອາເມຣິກາ, ເອີຣົບຕາເວັນຕົກ ແລະ ຍີ່ປຸ່ນ ) ໃນນັ້ນຄັງເງິນສົດ ແລະ ຄຳສົດຂອງຍີ່ປຸ່ນລື່ນກາຍອາເມຣິກາ.

-	ການຄ້າຍີ່ປຸ່ນ ສິນຄ້າໄດ້ແຊກຊຶມ ແລະ ແກ້ງແຍ້ງຢູ່ໃນຕະຫຼາດໂລກຢ່າງກ້ວາງຂວາງ ພຽງແຕ່ໄລຍະເວລາສັ້ນໆເທົ້ານັ້ນ, ຍີ່ປຸ່ນກໍ່ສາມາດສູ້ຊົນບົ່ນຕົວຂຶ້ນໃຫ້ກາຍເປັນມະຫາອຳນາດທາງດ້ານເສດຖະກິດ ເຊິ່ງໂລກໄດ້ໃຫ້ຂະໜານນາມວ່າ " ຍີ່ປຸ່ນມະຫັດສະຈັນ ".

ປັດໃຈທີ່ເຮັດໃຫ້ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຢ່າງວ່ອງໄວກະໂດດຂັ້ນມາຈາກ

- ໄດ້ນຳໃຊ້ແຫຼ່ງທຶນຂອງອຕ່າງປະເທດ ເພື່ອສຸມໃສ່ການລົງທຶນໃນຂະແໜງການອຸດສາຫະກຳທີ່ສຳຄັນເຊັ່ນ: ເຄື່ອງກົນຈັກ, ຫຼອມໂລຫະ...ຫຼຸດຜ່ອນຄ່າໃຊ້ຈ່າຍທາງດ້ານການທະຫານ ກົນໄກກົງຈັກລັດໃຫ້ກະທັດຮັດລົງ.
- ໝູນໃຊ້ຜົນງານທາງດ້ານວິທະຍາສາດ ເຕັກນິກ ເພື່ອເພີ່ມສະມັດທະພາບຂອງການອອກແຮງງານການຜະລິດໃຫ້ດີຂຶ້ນ, ດັດແປງເຕັກນິກ ແລະ ຫຼຸດລາຄາສິນຄ້າ.



ຮູບທີ 11 ສະໜາມບິນນິວຊິໂຕເຊະ ໃນຍີ່ປຸ່ນ

- ການເປີດກວ້າງປະຊາທິປະໄຕພາຍຫຼັງສົງຄາມ ໄດ້ຮັບການກະຕຸກຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ
- ຮູ້ນຳເອົາສິນຄ້າຂອງຕົນແຊກຊຶມເຂົ້າ ຕະຫຼາດປະເທດຕ່າງໆໃນໂລກໄດ້ຢ່າງຄ່ອງແຄ້ວ
- ນັບແຕ່ການປະຕິຮູບເມຈິ ( Meji ) ເປັນຕົ້ນມາຄືນ ຍີ່ປຸ່ນໄດ້ເສີມຂະຫຍາຍມູນເຊື້ອ ( ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ) ເພື່ອບຸກບືນຕົວໃນການສ້າງສາພັດທະນາປະເທດຊາດໃຫ້ຮັ່ງມີເຂັ້ມແຂງ.

ລັດຖະບານ ຍີ່ປຸ່ນ ເວລາໃດກໍ່ຖືເອົາວຽກງານການຂະຫຍາຍຕົວທາງ ດ້ານວິທະຍາສາດເຕັກນິກ ແລະ ປະຕິຮູບພື້ນຖານການສຶກສາແຫ່ງຊາດເປັນໜ້າທີ່ສຳຄັນ. ປັດຈຸບັນນີ້ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນຈຳນວນປະເທດທີ່ນຳໜ້າໝູ່ໃນການຂະຫຍາຍຕົວທາງດ້ານວິທະຍາສາດເຕັກນິກ.

ຂະແໜງການຄ້າ ແມ່ນໄມ້ງັດທີ່ສຳຄັນຂອງເສດຖະກິດ ຍີ່ປຸ່ນ ເພາະວ່າ ຍີ່ປຸ່ນຕ້ອງມີການຊື້ ວັດຖຸດິບຫຼາຍຢ່າງຈາກຕ່າງປະເທດເປັນຈຳນວນຫຼວງຫຼາຍເຊັ່ນ: ແຮ່ເຫຼັກ 100%, ແຮ່ທອງ 99.9%, ຖ່ານຫີນ 97.1%, ບົກຊິດ 100%, ແຮ່ກົ່ວ 87.7%, ເກືອກິນ 85.5%, ນ້ຳມັນເຊື້ອໄຟ 99..7%... ແຕ່ກໍ່ເປັນປະເທດທີ່ມີການສົ່ງສິນຄ້າອອກຂາຍປະເພດວັດຖຸສຳເລັດຮູບ, ຜະລິດຕະພັນອຸດສາຫະກຳທີ່ມີລາຄາແພງໄດ້ເປັນຈຳນວນຫຼວງຫຼາຍເຊັ່ນ: ເຄື່ອງຈັກແມ່, ເຄື່ອງກົນຈັກຕ່າງໆ, ເຄື່ອງໄຟຟ້າ-ເອເລັກໂທນິກ, ລາງລົດໄຟ, ເຫຼັກເສັ້ນ, ເຄື່ອງແກ້ວ, ເຄື່ອງກະປ໋ອງ ແລະ ອື່ນໆ ເຊິ່ງເຮັດໃຫ້ການຄ້າຕ່າງໆໄດ້ດູນການຄ້າຕະຫຼອດມາ

ສະຫຼຸບລວມແລ້ວເສດຖະກິດທຶນນິຍົມແມ່ນເປັນເສດຖະກິດເອກະຊົນການຂະຫຍາຍຕົວ ເສດຖະກິດສະແດງອອກໃນດ້ານການຊ່ວຍເຫຼືອກັນທາງ ດ້ານເສດຖະກິດແກ່ບັນ ດາປະເທດພັນ ທະມິດເຊັ່ນ: ການໃຫ້ກູ້ຢືມເງິນ ຫຼື ການໃຫ້ຊ່ວຍເຫຼືອລ້າ.

ນອກນັ້ນຍັງມີການໃຊ້ມາດຕະການທາງດ້ານເສດຖະກິດເພື່ອຕອບໂຕ້ ຝ່າຍກົງກັນຂ້າມເຊັ່ນ: ການປິດລ້ອມທາງດ້ານເສດຖະກິດ, ການຈັດຕັ້ງກຸ່ມທາງ ດ້ານເສດຖະກິດເຊິ່ງກັນ ແລະ ກັນ. ໂດຍມີການສ້າງຕັ້ງ " ອົງການຕະຫຼາດຮ່ວມ " ເປັນການຮ່ວມກຸ່ມທາງດ້ານເສດຖະກິດຂອງເອີຣົບຕາເວັນຕົກ ເພື່ອເປັນການສົ່ງເສີມເສດຖະກິດ ແລະ ການຄ້າຮ່ວມກັນພາຍໃນປະເທດສະມາຊິກ ເຊິ່ງມີການຫຼຸດຜ່ອນລະບົບພາສີລະຫວ່າງປະເທດສະມາຊິກ, ລົບລ້າງຂໍ້ກີດກັ້ນດ້ານການຄ້າຕ່າງປະເທດສະມາຊິກດ້ວຍກັນເວົ້າໄດ້ວ່າເປັນ " ເປັນລະບົບການຄ້າເສລີ " ນອກຈາກການຮ່ວມກຸ່ມທາງດ້ານເສດຖະກິດແລ້ວ ນອກນັ້ນບັນດາປະເທດສະມາຊິກຍັງຮ່ວມກັນສ້າງຕັ້ງອົງການປະລາມະນູເອີຣົບ ( European Atomic Energy Community :EORTOM ) ເພື່ອພັດທະນາພະລັງງານປາລາມະນູ ແລະ ການນຳໃຊ້ໂດຍສັນຕິ ການຮ່ວມກຸ່ມທາງດ້ານເສດຖະກິດ ໄດ້ເຮັດໃຫ້ມີຜົນກະທົບຕໍ່ກັບປະເທດທີ່ບໍ່ແມ່ນປະເທດສະມາຊິກ ອັນກ້າວໄປເຖິງການ ຈັດຕັ້ງກຸ່ມເສດຖະກິດຫຼາຍໆຂຶ້ນ ເພື່ອແກ້ງແຍ່ງກັດທາງດ້ານເສດຖະກິດ,

ເວົ້າລວມແລ້ວ ການຮ່ວມກຸ່ມທາງດ້ານເສດຖະກິດຂອງບັນດາປະເທດທຶນນິຍົມແມ່ນ ເພື່ອປົກປ້ອງຕົນເອງຈາກການແຂກແຂງ ແລະ ການເອົາລັດເອົາປຽບທາງດ້ານການຄ້າ ແລະ ດ້ານເສດຖະກິດ.

### 3.1.2 ວິກິດການທາງດ້ານເສດຖະກິດທຶນນິຍົມ

ສົງຄາມໂລກສິ້ນສຸດລົງໄດ້ມີຜົນສະທ້ອນຢ່າງໃຫຍ່ຫຼວງຕໍ່ ສະພາບທາງດ້ານເສດຖະກິດການເມືອງ ແລະ ສັງຄົມ, ແຕ່ຜົນກະທົບທີ່ສຳຄັນຄື: ການກໍ່ໃຫ້ເກີດບັນຫາທາງ ດ້ານເສດຖະກິດຕົກຕໍ່າຄັ້ງໃຫຍ່ສຸດໃນລະຫວ່າງປີ ຄ.ສ 1929-1933 ຢ່າງບໍ່ເຄີຍມີມາກ່ອນ. ເຮັດໃຫ້ປະເທດທີ່ໄດ້ຮັບໄຊຊະນະ ແລະ ປະເທດປາລາໄຊສົງຄາມ ກໍ່ຕ້ອງພົບກັບບັນຫາດັ່ງກ່າວ ໂດຍສະເພາະແມ່ນເມື່ອສິ້ນສຸດສົງຄາມໃໝ່ໆ ແລະ ມີຄວາມຮຸນແຮງກວ່າໝູ່ທີ່ນອນຢູ່ໃນລະຫວ່າງປີ ຄ.ສ 1929-1933

ສາເຫດທີ່ພາໃຫ້ເກີດມີສະພາວະເສດຖະກິດຕົກຕໍ່ານີ້ ແມ່ນເນື່ອງມາຈາກໃນ ຄ.ສ 1929 ໂຮງງານອຸດສາຫະກຳ ແລະ ພື້ນທີ່ການຜະລິດກະສິກຳຕ່າງໆຂອງໂລກ ພາກັນຜະລິດເຄື່ອງສຳເລັດຮູບ ແລະ ຜົນຜະລິດທາງການກະສິກຳມີຫຼາຍຢ່າງມະຫາສານຈົນເກີນຄວາມສາມາດຊື້ຂອງ ປະຊາຊົນ ( ເກີນຄວາມຕ້ອງການຂອງຄົນ ) ດັ່ງນັ້ນຈຶ່ງເຮັດໃຫ້ລາສິນຄ້າຕົກຕໍ່າ ແລະ ຂາຍບໍ່ອອກ ຈົນກ້າວໄປເຖິງໂຮງງານອຸດສາຫະກຳ ມີການປິດກິດຈະການອັນເຮັດໃຫ້ກຳມະກອນເກີດໄພຫວ່າງງານຫຼາຍ. ອີກປະການໜຶ່ງແມ່ນໄດ້ຮັບຜົນກະທົບຈາກການຄ້າ ເພາະວ່າພາຍຫຼັງສົງຄາມຢຸດຕິລົງ ເຮັດໃຫ້ບັນດາໂຮງງານຕ່າງໆທີ່ເຄີຍຜະລິດອາວຸດ ໄດ້ປ່ຽນສະພາບການໃຊ້ງານປ່ຽນມາເປັນໂຮງງານ ຜະລິດເຄື່ອງສຳເລັດຮູບເພື່ອສົ່ງອອກ. ເຫດຜົນນີ້ກໍ່ເພື່ອຊອກຫາກ້ອນທຶນ ( ເງິນ ) ມາສຳລະໜີ້ທີ່ໄດ້ກູ້ຢືມໃນໄລຍະສົງຄາມ ແຕ່ວ່າປະເທດເຫຼົ່ານີ້ຕ້ອງມີການປະເຊີນໜ້າ ກັບ ສິນຄ້າສົ່ງອອກລວມທັງ ອາເມຣິກາພ້ອມ ມີການກັ້ນກຳແພງດ້ານພາສີຂາເຂົ້າແພງ ເພື່ອປ້ອງກັນເສດຖະກິດພາຍໃນຂອງປະເທດຕົນ. ອີກຢ່າງໜຶ່ງປະເທດທີ່ເຄີຍຊື້ ສິນຄ້າຄື: ອິນເດຍ, ຍີ່ປຸ່ນ ກໍ່ຫັນມາສ້າງຕັ້ງໂຮງງານອຸດສາຫະກຳຂຶ້ນເພື່ອດຳເນີນການຜະລິດເປັນຈຳນວນຫຼວງຫຼາຍ.

ອີກສາເຫດໜຶ່ງທີ່ພາໃຫ້ເສດຖະກິດຕົກຕໍ່າກໍ່ຄື: ຂໍ້ຕົກລົງໃນການໃຊ້ໜີ້ສົງຄາມລະຫວ່າງ ອັງກິດ, ຝຣັ່ງ ແລະ ອາເມຣິກາ ປະເທດເຫຼົ່ານີ້ເປັນເຈົ້າໜີ້ລາຍໃຫຍ່ ການສຳລະເງິນຄ່າປະຕິສົງຄາມຂອງ ເຢຍລະມັນໄດ້ກູ້ຢືມມາໃຊ້ຄ່າ ປະຕິສົງຄາມຈາກທະນາຄານ ອາເມຣິກາ ເຢຍລະມັນກໍ່ ໃຊ້ຄືນພຽງບາງສ່ວນເທົ່ານັ້ນ ເພາະວ່າອີກບາງສ່ວນແມ່ນເພື່ອນຳໄປປັບປຸງອຸດສາຫະກຳພາຍໃນ ປະເທດຂອງຕົນເອງ ດັ່ງນັ້ນຈຶ່ງມີການໝູນໃຊ້ທາງການເງິນຊ່ວຍໃຫ້ເສດຖະກິດຂະຫຍາຍຕົວໄວ. ພາຍຫຼັງປີ ຄ.ສ 1929 ຕະຫຼາດຫຸ້ນໃນນິວຢອກ ( ອາເມຣິກາ ) ຕົກຕໍ່າທີ່ສຸດເຮັດໃຫ້ ທະນາຄານຮຽກເງິນກູ້ຈາກ ເຢຍລະມັນ ເຮັດໃຫ້ໂຮງງານຈຳເປັນຕ້ອງປິດກິດຈະການ ເຊິ່ງເປັນຜົນໃຫ້ ລະບົບທຸລະກິດການເງິນໂລກຕົກຕໍ່າຢູ່ໃນ ພາວະຮ້ອນອັນຕະລາຍເຊັ່ນດຽວກັນ. ເວົ້າລວມແລ້ວເຫດການທັງໝົດນີ້ແມ່ນເຮັດໃຫ້ເສດຖະກິດ

ໂລກຊ່ວງປີ ຄ.ສ 1929-1933 ພົບກັບວິກິດການຮ້າຍແຮງ. ທຳອິດແມ່ນເກີດຢູ່ອາເມຣິກາ ແລະ ໄດ້ແຜ່ລາມໄປຍັງທະວີບເອີຣົບ ໄລຍະນີ້ປະລິມານອຸດສາຫະກຳຫຼຸດລົງເຖິງ 36%, ການຄ້າ 66%, ລາຄາສິນຄ້າກະສິກຳ50%, ມີຄົນຫວ່າງງານເຖິງ 30.000.000 ຄົນ ແລະ ຊາວນາຫຼາຍລ້ານຄົນພົບບກັບຄວາມອຶດຫິວ ກົງກັນຂ້າມພວກນາຍທຶນພັດເອົາ ສິນຄ້າ ຫຼື ຜົນປະລິດທີ່ຂາຍບໍ່ອອກທັງໝົດໄປຖິ້ມລົງທະເລ ຫຼື ທຳລາຍຖິ້ມ.

ໃນໄລຍະເກີດວິກິດການ ເຮັດໃຫ້ພວກນາຍທຶນເກີດມີຄວາມວິຕົກກັງວົນພວກເຂົາໄດ້ຊອກຫາວິທີທາງເພື່ອແກ້ໄຂບັນຫາເພື່ອໃຫ້ພົ້ນຈາກ ວິກິດການດັ່ງກ່າວເຊັ່ນ: ນາຍທຶນບັງຄັບໃຫ້ ລັດຖະບານ ຕ້ອງຈ່າຍເງິນອຸດໜູນເພື່ອກູ້ສະຖານະພາບ ເສດຖະກິດທີ່ຊຸດໂຊມ, ດຳເນີນການປິດຕະຫຼາດພາຍໃນປະເທດ, ທຳລາຍສິນຄ້າຕ່າງໆ ແລະ ຫຼຸດກຳລັງຜະລິດລົງ ໂດຍມີການໃຊ້ມາດຕະການເດັດຂາດເຂົ້າຄວບຄຸມການຜະລິດທັງໝົດ. ວິທີການດັ່ງກ່າວສາມາດແກ້ໄຂວິກິດການໄດ້ຊົ່ວຄາວເທົ່ານັ້ນ. ພວກນາຍທຶນຄິດວ່າ ມີພຽງຫົນທາງດຽວເທົ່ານັ້ນທີ່ ສາມາດແກ້ໄຂບັນຫາໄດ້ຄື: ການເຮັດສົງຄາມ, ການຍາດເອົາຕະຫຼາດຈຳໜ່າຍສິນຄ້າໃນໂລກ, ດ້ວຍເຫດນັ້ນພວກນາຍທຶນໃຫຍ່ຕ່າງໆ ກໍ່ພາກັນສະໜັບສະໜູນສົ່ງເສີມໃຫ້ ລັດຖະບານຂະຫຍາຍອານານິຄົມອອກຈົນກ້າວໄປເຖິງ ການປະທະດ້ວຍກຳລັງເຮັດໃຫ້ເກີດມີຄວາມຂັດແຍ່ງລະຫວ່າງ ປະເທດທຶນນິຍົມດ້ວຍກັນ ຄວາມຂັດແຍ່ງດັ່ງກ່າວໄດ້ກ້າວໄປສູ່ຄວາມຮຸນແຮງກ້າວໄປເຖິງສົງຄາມໄລຍະຕໍ່ມາ.

ວິກິດການທາງດ້ານເສດຖະກິດ ໄດ້ມີຜົນສູ່ປະຊາຊົນຜູ້ອອກແຮງງານເກີດມີຄວາມຂັດແຍ່ງກັນຢູ່ໃນສັງຄົມອັນໄດ້ເຮັດໃຫ້ ສະພາບທາງດ້ານການເມືອງ-ສັງຄົມປ່ຽນແປງ ບັນດາພັກການເມືອງຕ່າງໆມີແນວຄິດຕໍ່ຕ້ານ ອານາດລັດຖະບານ ເຮັດໃຫ້ມີໂອກາດໃນການສະແຫວງຫາຄວາມນິຍົມ ເພື່ອກ້າວໄປສູ່ການມີອຳນາດ ເດັ່ນແມ່ນຂະບວນກຳມະກອນແຕ່ກໍ່ຕ້ອງຢຸດຕິລົງຍ້ອນ ສະພາບການບໍ່ອຳນວຍຄວາມສະດວກເຮັດໃຫ້ ຂະບວນກະມະກອນຢຸດຕິລົງ. ເວລາດຽວກັນຢູ່ ປະເທດອີຕາລີ, ຍີ່ປຸ່ນ ແລະ ເຢຍລະມັນ ໄດ້ໄປຄຸກຄາມການເມືອງໂລກໃນໄລຍະຕໍ່ມາ.

### 3.1.3 ດ້ານການເມືອງ ການທູດ-ອຸດົມການ ຂອງລະບົບທຶນນິຍົມ

ສະຫະລັດອາເມຣິກາ ເປັນປະເທດໜຶ່ງທີ່ມີຜົນສຳເລັດໃນການພັດທະນາ ປະເທດຊາດດ້ວຍການສ້າງອຸດົມການແບບເສລີນິຍົມ ( ທຶນນິຍົມ ) ຍ້ອນວ່າອາເມຣິກາໄດ້ມີບົດຮຽນ ແລະ ປະສົບການທາງດ້ານການ ຜະລິດອາວຸດຮັບໃຊ້ໃນຊ່ວງ ສົງຄາມໂລກຄັ້ງທີ 1 ແລະ 2 ປະກອບກັບ ອາເມຣິກາມີອາວຸດປາລາມະນູຈຶ່ງເຮັດໃຫ້ ອາເມຣິກາຄິດວ່າຕົນເອງເປັນຕຳຫຼວດໂລກທີ່ໄດ້ສະແດງຕົນອອກໜ້າ ໂດຍພະຍາຍາມເຜີຍແຜ່ອຸດົມການແບບເສລີນິຍົມໄປຍັງປະເທດຕ່າງໆໃນໂລກ ປະກົດວ່າປະເທດຕ່າງໆໃນທະວີບເອີຣົບ ( ເອີຣົບຕາເວັນຕົກ ), ບັນດາປະເທດໃນອາເມຣິກາລາຕິນ ແລະ ອາຊີເຫັນດີຮ່ວມມືຕາມອຸດົມການຂອງ ອາເມຣິກາ.

ດັ່ງນັ້ນ ອຸດົມການຂອງ ທຶນນິຍົມ ທີ່ມີຄວາມແຕກຕ່າງກັບ ສັງຄົມນິຍົມຈຶ່ງຈຳເປັນຕ້ອງມີການພະຍາຍາມສົ່ງເສີມສ້າງອຳນາດຂອງຕົນດ້ວຍກຳລັງ ແລະ ການຫາສຽງສະໜັບສະໜູນສະແດງອອກໃນການພະຍາຍາມສ້າງກຸ່ມທາງການເມືອງ.

#### ກ.ກຸ່ມມາກຊານ ( MarShallPlan )

ນັບແຕ່ໂລກແບ່ງອອກເປັນສອງລະບົບ ( ຄ້າຍ ) ທີ່ມີອຸດົມການ ແລະ ເປົ້າໝາຍທີ່ແຕກຕ່າງກັນ ບັນດາປະເທດທຶນນິຍົມ ອັນມີສະຫະລັດອາເມຣິກາ ເປັນຜູ້ນຳໜ້າກໍ່ມີຄວາມພະຍາຍາມຈັດຕັ້ງກຸ່ມເສດຖະກິດ, ກຸ່ມການເມືອງຂຶ້ນເພື່ອຕໍ່ຕ້ານກັບບັນດາປະເທດສະມາຊິກສັງຄົມນິຍົມກໍ່ຄື ສະຫະພາບໂຊວຽດ ເພື່ອຕ້ອງການຢາກຢັບຢັ້ງການຂະຫຍາຍຕົວຂອງລະບົບສັງຄົມນິຍົມກໍ່ຄືການຂະຫຍາຍຕົວຂອງ ລັດທິຄອມມູນິດໃນໂລກ.

ບັນດາປະເທດທຶນນິຍົມ ໂດຍສະເພາະອາເມຣິກາໄດ້ເລີ່ມມີການຮ່ວມກຸ່ມທາງດ້ານເສດຖະກິດ ການເມືອງ ເພື່ອຕ້ານກັບລັດທິຄອມມູນິດ ຕັ້ງແຕ່ໄລຍະຫຼັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ, ສະແດງອອກຢູ່ໃນແຜນການ " ມາກ ຊານ " ຂອງແຜນສະຫະລັດອາເມຣິກາ.

ກຸ່ມມາກຊານ ( MarShallPlan ) ເປັນກຸ່ມແຜນການຂອງສະຫະລັດອາເມຣິກາວາງອອກ ແຜນການນີ້ ອາ ເມຣິກາພະຍາຍາມໃຫ້ຄວາມຊ່ວຍເຫຼືອແກ່ ບັນດາປະເທດເອີຣົບຕາເວັນອອກ ທີ່ໄດ້ຮັບຜົນສະທ້ອນໃນສົງຄາມໂລກ ຄັ້ງທີ 2 ເພື່ອເປັນກ້ອນທຶນໃນການພື້ນຟູເສດຖະກິດ, ສັງຄົມໃຫ້ມີຄວາມເຂັ້ມແຂງຢ່າງໄວວາ ເພື່ອເປັນກຳລັງໃນການ ສະໜັບສະໜູນຂອງຕົນໃນການຕໍ່ຕ້ານ ອິດທິພົນຂອງ ສະຫະພາບໂຊວຽດກໍ່ຄື ລັດທິສັງຄົມນິຍົມແຫ່ງໂລກ.

**ຄ. ດ້ານການທະຫານ**

ໃນເດືອນມິຖຸນາປີ ຄ.ສ 1948 ມີປະເທດແບນຊິກ, ຝຣັ່ງ, ອັງກິດ, ລຸກຊຳບວກ, ໂຮນລັງ ໄດ້ຮ່ວມກັນເຮັດ ສົນທິສັນຍາຢູ່ກຸງບຣກແຊນ ( ປະເທດແບນຊິກ ) ເອີ້ນວ່າ: ສົນທິສັນຍາບຣຸກແຊນ ( BrasselsTreaty ) ສົນທິ ສັນຍາວ່າດ້ວຍ ການຮ່ວມມືທາງດ້ານເສດຖະກິດ ແລະ ດ້ານການທະຫານ, ຈັດຕັ້ງລະບົບປ້ອງກັນການຮ່ວມມືກັບ ບັນດາປະເທດເອີຣົບຕາເວັນຕົກ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ອາເມຣິກາຢ່າງເຕັມທີ່ ສະແດງອອກໃນຄວາມ ພະຍາຍາມຊ່ວຍເຫຼືອທາງ ດ້ານການທະຫານນັບມື້ນັບຫຼາຍຂຶ້ນຈົນສຸດທ້າຍກໍ່ມີການຮ່ວມມືກັນເຮັດ ສົນທິສັນຍາປ້ອງ ກັນອັດລັງຕິກເໜືອ ( NATO ) ຂຶ້ນ.

**ງ. ການພົວພັນບັນດາປະເທດທຶນນິຍົມດ້ວຍກັນ**

- **ຂໍ້ຂັດແຍ່ງຂອງໂລກທຶນນິຍົມ**

ການພົວພັນກັນລະຫວ່າງປະເທດທຶນນິຍົມ ແມ່ນໄປຄຽງຄູ່ກັບ ຄວາມປານີປະນອມເຊິ່ງກັນ ແລະ ກັນ ເພື່ອ ຂັດຂວາງ ແລະ ຫວັງດັບສູນລັດທິຄອມມູນິດນັ້ນ ພາຍໃນຂອງກຸ່ມປະເທດນາຍທຶນເອງກໍ່ເກີດມີຄວາມຂັດແຍ່ງເຊັ່ນດຽວ ກັນ ເຊິ່ງສືບເນື່ອງມາຈາກການເອົາລັດເອົາປຽບກັນເຊິ່ງກັນ ແລະ ກັນ, ການຊ່ວງຊິງກັນເປັນໃຫຍ່ ແລະ ຍາດແຍ່ງກັນ ທາງດ້ານສິດຜົນປະໂຫຍດຂອງກັນ ແລະ ກັນລະຫວ່າງ ປະເທດມະຫາອຳນາດດ້ວຍກັນໂດຍ ສະເພາະຄວາມຂັດແຍ່ງ ທາງດ້ານ ເສດຖະກິດອັນເປັນເຫດໃຫ້ມີຄວາມຂັດແຍ່ງກັນໃນດ້ານອື່ນຕາມໆມາ.

ພາຍຫຼັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງເປັນຕົ້ນມາອາເມຣິກາ ໄດ້ອາໄສຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ຄວາມເໜືອກ່ວາທາງ ດ້ານການທະຫານຂອງຕົນແຜ່ອຳນາດແຜ່ອິດທິພົນຄອບງຳ ບັນດາປະເທດຕາເວັນຕົກ ເຊິ່ງເຄີຍ ເປັນປະເທດມະຫາອຳນາດມາກ່ອນ ສະແດງອອກການເຂົ້າມີບົດບາດໃນການຈັດຕັ້ງກຸ່ມການເມືອງ, ການທະຫານ ຂຶ້ນ ໃນພາກພື້ນຕ່າງໆໃນໂລກ. ດ້ານເສດຖະກິດອາເມຣິກາໄດ້ແຜ່ອິດທິພົນດ້ວຍແຜນການ " ມາກຊານ ປີ ຄ.ສ 1947 " ກ້າວໄປສູ່ການສ້າງຕັ້ງອົງການວ່າດ້ວຍ ການຮ່ວມມືທາງດ້ານເສດຖະກິດຂອງເອີຣົບໃນປີ ຄ.ສ 1948

ຄວາມພະຍາຍາມຢາກເປັນມະຫາອຳນາດພຽງຜູ້ດຽວຂອງ ສະຫະລັດອາເມຣິກາຢູ່ໃນໂລກເວລານັ້ນ ກໍ່ໃຫ້ເກີດ ຄວາມຂັດແຍ່ງເກີດຂຶ້ນໄປຄຽງຄູ່ກັບການຮ່ວມມືຂອງ ບັນດາປະເທດມະຫາອຳນາດເອີຣົບຕາເວັນຕົກກັບ ອາເມຣິກາ. ເຊິ່ງສະແດງອອກຢູ່ໃນການພະຍາຍາມຈັດຕັ້ງສະພາເສດຖະກິດເອີຣົບໃນປີ ຄ.ສ 1957 ເພື່ອການຫຼີກລ້ຽງການແຊກ ແຊງທາງດ້ານເສດຖະກິດຂອງອາເມຣິກາ, ຕົກມາຊ່ວງຊຸມປີ 70 ຂອງສະຕະວັດທີ XX ຝຣັ່ງໄດ້ມີນະໂຍບາຍຂັດແຍ່ງ ກັບ ສະຫະລັດອາເມຣິກາສະແດງອອກ ປະທານາທິບໍດີ ທ່ານ ເດີໂກນ ໄດ້ມີການປ່ຽນແປງນະໂຍບາຍການຕ່າງປະເທດ ໃໝ່ຄື: ໄດ້ປະກາດຮັບຮູ້ລັດຖະບານ ສາທາລະນະລັດ ປະຊາຊົນຈີນ ປີ ຄ.ສ 1964 ຈາກນັ້ນກໍ່ເປີດສຳພັນການທູດຕໍ່ກັນ , ມາໃນປີ ຄ.ສ 1965 ຝຣັ່ງໄດ້ຢຸດຕິການເຂົ້າຮ່ວມກິດຈະການຕ່າງໆຂອງກຸ່ມນາໂຕ, ໃນປີຖັດມາໄດ້ສ້າງສາຍສຳພັນທະ ໄມຕີກັບ ສະຫະພາບໂຊວຽດ, ມາໃນປີ ຄ.ສ 1966 ໄດ້ປະກາດຖອນຕົວອອກຈາກການເປັນສະມາຊິກຂອງ ອົງການນາ

ໂຕ ( NATO ) ພ້ອມກັນນັ້ນ ຍັງຮຽກຮ້ອງໃຫ້ກອງບັນຊາການສູງສຸດ ແລະ ທະຫານຂອງອົງການນາໂຕ ( NATO ) ຕ້ອງຖອນອອກຈາກຝຣັ່ງໂດຍໄວ ໃນທີ່ສຸດອົງການນາໂຕກໍ່ຖອນອອກຈາກຝຣັ່ງໄປຕັ້ງຢູ່ກຸງບຣຸກແຊນ ( ປະເທດແບນຊິກ ). ໃນປີ ຄ.ສ 1967 ຝຣັ່ງໄດ້ປະກາດນະໂຍບາຍວ່າ " ເອີຣົບສຳລັບຊາວເອີຣົບ ແລະ ເອີຣົບຍ່ອມມີສ່ວນຮັບຜິດຊອບຕໍ່ການເມືອງລະຫວ່າງປະເທດຢູ່ໃນລະດັບດຽວກັບ ສະຫະລັດອາເມຣິກາ ແລະ ສະຫະພາບໂຊວຽດ " ເຫດການດັ່ງກ່າວນັ້ນມັນ ໄດ້ສະແດງໃຫ້ເຫັນຄວາມຂັດແຍ່ງລະຫວ່າງປະເທດມະຫາອຳນາດຕາເວັນຕົກ ແລະ ສະຫະລັດອາເມຣິກາ.

- ຄວາມຂັດແຍ່ງລະຫວ່າງຝຣັ່ງ ກັບ ອັງກິດ ຝຣັ່ງໄດ້ທຳການກີດຂວາງບໍ່ໃຫ້ອັງກິດເຂົ້າຮ່ວມອົງການຕະຫຼາດຮ່ວມ ໃນໄລຍະຕົ້ນທັງໆທີ່ນອນ ໃນກຸ່ມໂລກເສລີຄືກັນ
- ເກຣັກ ກັບ ຕວກກີ ຄວາມຂັດແຍ່ງລະຫວ່າງບັນຫາ ເກາະໄຊປຣັດ ແລະ ການຊ່ວງຊີງກັນສະແຫວງຫາແຫຼ່ງນ້ຳມັນໃນທະເລເຊຍ.
- ອັງກິດ ກັບ ໄອແລນ ເກີດຄວາມຂັດແຍ່ງກັນໃນ ເຂດນ່ານນ້ຳຫາປາຈີນໄປເຖິງ ໄອແລນໄດ້ຕັດຄວາມສຳຄັນໄມຕີຈິດຮ່ວມກັນ ແລະ ຄວາມສຳພັນທາງດ້ານການທູດກັບອັງກິດໃນປີ ຄ.ສ 1975.
- ປ໋ອກຕຸຍການ ກັບ ແອັດສະປາຍ ຂັດແຍ່ງກັນເນື່ອງຈາກຂະບວນກອງໂຈນ ແຕ່ລະເຂົ້າມາອາໃສຢູ່ໃນດິນແດນທັງສອງຝ່າຍ ພາໃຫ້ເກີດມີຄວາມເຂົ້າໃຈຜິດຕໍ່ກັນ.
- ສະມາຊິກອົງການຕ່າງໆຕະຫຼາດຮ່ວມ ບັນດາປະເທດສະມາຊິກຕ່າງກໍ່ພະຍາຍາມຮັກສາສິດຜົນປະໂຫຍດຂອງຕົນສູງກວ່າຜົນປະໂຫຍດສ່ວນລວມເຊິ່ງເປັນຂອດທີ່ພາໃຫ້ເກີດຄວາມຂັດແຍ່ງກັນຂຶ້ນເລື້ອຍໆ. ຄວາມຂັດແຍ່ງທີ່ພວມເຄັ່ງຕຶງຢູ່ໃນລະດັບສູງລະຫວ່າງປະເທດທຶນນິຍົມດ້ວຍກັນແມ່ນຄວາມຂັດແຍ່ງທາງດ້ານເສດຖະກິດ, ການຄ້າທີ່ໄດ້ເລີ່ມຂຶ້ນແຕ່ຊຸມປີ 80 ແມ່ນ 3 ໃຈກາງທາງດ້ານເສດຖະກິດຄື: ສະຫະລັດອາເມຣິກາ, ເອີຣົບຕາເວັນຕົກ ແລະ ຍີ່ປຸ່ນ ເຮັດໃຫ້ຄວາມຂັດແຍ່ງແຜ່ຂະຫຍາຍຕົວກ້ວາງອອກ ພາຍຫຼັງທີ່ປະເທດຕ່າງໆພາກພື້ນໃນທົ່ວໂລກໄດ້ມີມາດຕະການເຕົ້າໂຮມກັນເປັນກຸ່ມເສດຖະກິດໃນພາກພື້ນ ໂດຍມີຈຸດປະສົງເພື່ອປົກປ້ອງຕະຫຼາດຂອງຕົນ ແລະ ຫຼີກລ້ຽງມີການໃຊ້ກຳລັງໃນ ການເຈລະຈາແກ້ໄຂບັນຫາລະຫ່ວາງປະເທດໃນກຸ່ມ ແລະ ກຸ່ມປະເທດນາຍທຶນ.

ເວົ້າລວມແລ້ວ ຄວາມເປັນເອກະພາບຂອງນາຍທຶນນັ້ນ ໄດ້ຂະຫຍາຍຕົວໄປພ້ອມໆກັບຄວາມຂັດແຍ່ງກັນທາງດ້ານການເມືອງ ແລະ ດ້ານເສດຖະກິດ ທີ່ພວມຜັນແປໄປຢ່າງສັບສົນລະຫ່ວາງປະເທດທຶນນິຍົມດ້ວຍກັນ.

### 3.2 ການຮ່ວມກຸ່ມທາງດ້ານເສດຖະກິດ, ການເມືອງຂອງໂລກເສລີ

ສັງຄົມນິຍົມແມ່ນ ລະບອບການປົກຄອງທີ່ມີອຳນາດການປົກຄອງແບບລວມສູນທີ່ສູນກາງຂອງປະເທດຄື: ຄະນະລັດຖະບານ ແລະ ປະມຸກລັດຂອງປະເທດເປັນລະບົບການປົກຄອງທີ່ບໍ່ມີກະສັດເປັນປະມຸກສັດ ດັ່ງນັ້ນຈຶ່ງມີການປົກຄອງແບບສາທາລະນະລັດ ໂດຍມີລັດຖະບານເປັນຜູ້ນຳບໍລິຫານປະເທດຊາດ.

#### 3.2.1 ເສດຖະກິດ

**ກ.ສະພາຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນ**

ພາຍຫຼັງປະເທດເອີຣົບຕາເວັນອອກ ໄດ້ກ້າວເຂົ້າສູ່ໄລຍະກໍ່ສ້າງ ສັງຄົມນິຍົມເພື່ອສ້າງສາຍພົວພັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ມີການຮ່ວມກຸ່ມທາງດ້ານເສດຖະກິດແຕ່ຕ້ອງໃຕ້ສະພາຊ່ວຍກັນ ແລະ ກັນ ທາງເສດຖະກິດ (Couneil of Mual Eutual Ecomomic Assistant ) ຊື່ຫຍໍ້ວ່າ: ໂຄເມຄອນ ( ComeCon ) ສ້າງຕັ້ງຂຶ້ນໃນ ເດືອນມັງກອນ ປີ ຄ ສ 1969 ໃນເບື້ອງຕົ້ນມີພຽງແຕ່ເອີຣົບຕາເວັນອອກ ໂດຍສະເພາະແມ່ນສະຫະພາບໂຊວຽດເປັນຜູ້ຊີ້ນຳ ປະເທດສະມາຊິກປະກອບມີ : ສະຫະພາບໂຊວຽດ, ບູນກາລີ, ເຊັກໂກສະໂລວາກີ, ຮົງກາລີ, ອານປານີ ( ປີ ຄ.ສ 1961

ລາອອກຈາກປະເທດສະມາຊິກ ) ແລະ ເຢຍລະມັນຕາເວັນອອກ. ໃນໄລຍະຕໍ່ມາມີບັນດາປະເທດໃນອາຊີ ແລະ ອາເມລິກາລາຕິນເຂົ້າຮ່ວມຢ່າງຫຼວງຫຼາຍເຊັ່ນ: ຄ.ສ 1972 ປະເທດມົງໂກລີ, ປະເທດຄິວບາ, ຫວຽດນາມ ຄ ສ 1978.

ຈຸດປະສົງການຮ່ວມກຸ່ມເສດຖະກິດນີ້ແມ່ນເພື່ອການຮ່ວມມືກັນທາງດ້ານເສດຖະກິດລະຫວ່າງປະເທດ ສັງຄົມນິຍົມດ້ວຍກັນ ໂດຍສະເພາະແມ່ນເອີຣົບຕາເວັນອອກ. ມາໃນປີ ຄ.ສ 1959 ອົງການນີ້ໄດ້ຮັບການພັດທະນາປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນຄື: ມີການຈັດຕັ້ງໜ່ວຍງານທີ່ສຳຄັນ ເພື່ອຮັບຜິດຊອບວຽກງານອົງການຄັກແນ່ເຊັ່ນ: ຄະນະມົນຕີ, ຄະນະກຳມາທິການຖາວອນ, ສຳນັກງານເລຂາທິການ ຕະຫຼອດຮອດການຈັດຕັ້ງລະບົບທະນາຄານເພື່ອຮ່ວມກັນທາງດ້ານເສດຖະກິດ ແລະ ການລົງທຶນພາຍໃນປະເທດສະມາຊິກ ພາລະບົດຂອງອົງການນີ້ມີຖານະຄືກັບລັດໜຶ່ງ ໂດຍມີການກຳນົດແຜນການຕ່າງໆທາງດ້ານເສດຖະກິດຮ່ວມກັນ, ມີການລົງທຶນ ແລະ ການຮ່ວມມືໃນ ການກຳນົດຄວາມຊຳນານ ເພື່ອການແບ່ງງານກັນໃນຂະບວນການຜະລິດເພື່ອແນ່ໃສ່ຫຼີກເວັ້ນການຜະລິດທີ່ຊ່ວງຊິງແຂ່ງກັນ. ເພື່ອທ້ອນໂຮມ ແລະ ປະສົມປະສານແຮງງານຂອງບັນດາປະເທດໃນສັງຄົມນິຍົມ ໂດຍແນໃສ່ການລົງເລິກ ແລະ ປັບປຸງການຮ່ວມມືລະຫ່ວາງພວກເຂົາໃນ ຂົງເຂດເສດຖະກິດ, ວິທະຍາສາດ ແລະ ເຕັກນິກ. ຍົກສູງລະດັບການຂະຫຍາຍຕົວທາງດ້ານອຸດສາຫະກຳໜັກຂອງ ບັນດາປະເທດທີ່ມີລະດັບການຂະຫຍາຍຕົວໜ້ອຍກວ່າ, ຊຸກຍູ້ການເພີ່ມທະວີສະມັດຕະພາບຂອງແຮງງານໃນ ປະເທດສະມາຊິກເຫຼົ່ານີ້ ກ້າວໄປສູ່ຄວາມດຸ່ນດ່ຽງກັບລະດັບການຂະຫຍາຍຕົວທາງ ດ້ານເສດຖະກິດ ກ້າວໄປເຖິງຄວາມສົມບູນພູນສຸກຂອງປະຊາຊົນໃນບັນດາປະເທດພາຄີເອງ.

ຜ່ານການດຳເນີນງານຮ່ວມກັນໃນອົງການນີ້ເຮັດໃຫ້ການຜະລິດຂະຫຍາຍຕົວຢ່າງວ່ອງໄວ ຜົນຜະລິດຕະພັນເພີ່ມຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະເທດສະມາຊິກໃນກຸ່ມ ແລະ ສາມາດຕອບສະໜອງການກະຈາຍຜົນຜະລິດຕ່າງໆອອກໄປຍັງປະເທດທີ່ດ້ອຍ ພັດທະນາກ່ວາໃນຂົງເຂດຕ່າງໆທົ່ວໂລກ.

ການຮ່ວມກຸ່ມກັນທາງດ້ານເສດຖະກິດຂອງປະເທດສັງຄົມນິຍົມ ຫຼື ເອີຣົບຕາເວັນອອກແມ່ນໄດ້ສົມທົບກັນຢ່າງສົມເຫດ ແລະ ສົມຜົນ ລະຫວ່າງຜົນປະໂຫຍດຂອງຊາດ ແລະ ສິດຜົນປະໂຫຍດສ່ວນລວມຂອງລະບົບ ໂດຍພາຍໃຕ້ການແບ່ງງານກັນ ຜະລິດເປັນວິຊາສະເພາະຕາມຄວາມຊຳນິຊຳນານ ແລະ ການຮ່ວມມືແຕ່ລະປະເທດ ປະເທດທີ່ເປັນພື້ນຖານໃນການຜະລິດແມ່ນ ສະຫະພາບໂຊວຽດ ແລະ ປະເທດໂປໂລຍ ຜະລິດກຳປັ່ນ ສ່ວນປະເທດອື່ນໆກໍຜະລິດຕາມການກຳນົດໃນແຜນການລວມຂອງລະບົບ ການຮ່ວມກຸ່ມທາງດ້ານເສດຖະກິດ ຂອງປະເທດເຫຼົ່ານີ້. ນອກຈາກ ເປັນການພັດທະນາບັນດາປະເທດສະມາຊິກແລ້ວ ຍັງເປັນການຊ່ວຍສົ່ງເສີມເສດຖະກິດ, ສັງຄົມ ແລະ ການເມືອງໂລກ ໃຫ້ຜັນແປໄປຢ່າງມີ ສັນຕິພາບ ແລະ ມີຄວາມເປັນທຳ.

**ຂ. ການຂະຫຍາຍຕົວຂອງເສດຖະກິດຂອງສັງຄົມນິຍົມ**

- **ປະເທດຣັດເຊຍ**

- **ດ້ານເສດຖະກິດ**

ພາຍຫຼັງ ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ລັດຖະບານຣັດເຊຍ ໄດ້ເລີ່ມທຳການພື້ນຟູເສດຖະກິດ ໂດຍມີການຜັນປ່ຽນ ຈາກການຜະລິດກະສິກຳ ທີ່ຫຼ້າຫຼັງຫັນມາເປັນການກະສິກຳທີ່ມີຄວາມກ້າວໜ້າເທື່ອລະກ້າວ. ມາຮອດ ຄ.ສ 1921 ກອງປະຊຸມໃຫຍ່ຂອງ ພັກໂບເຊວິກ ໄດ້ຕົກລົງການຫັນນະໂຍບາຍ ( ຄອມມູນິດໃນສະໄໝສົງຄາມ ) ມາເປັນນະໂຍບາຍ “ ເສດຖະກິດແຜນໃໝ່ Nep ” ຫຍໍ້ມາຈາກ ( New Economic Planning ) ໂດຍແມ່ນທ່ານເລນິນ ເປັນຜູ້ຄົ້ນຄ້ວາ, ຮຽບຮຽງຂຶ້ນມາ ເຊິ່ງເນື້ອແທ້ຂອງ ນະໂຍບາຍເສດຖະກິດແຜນໃໝ່ ແມ່ນແຜນການຫັນປ່ຽນຈາກພື້ນຖານເສດຖະກິດເກົ່າເຊິ່ງເມື່ອກ່ອນແມ່ນ ລັດກຳມະສິດຜູກຂາດໃນທຸກດ້ານນັ້ນ ມາເປັນເສດຖະກິດການຄ້າ ໂດຍມີການດັດສົມຂອງລັດໃຫ້ມີການຂະຫຍາຍຕົວຂອງເສດຖະກິດຫຼາຍພາກສ່ວນ ແລະ ການນຳໃຊ້ທຶນຮອນ,

ເຕັກນິກ ບົດຮຽນຂອງນາຍທຶນທີ່ມີຢູ່ໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ໃຫ້ ເສດຖະກິດມີການຂະຫຍາຍຕົວ ເຊິ່ງໄດ້ຖືເອົາການພື້ນຟູຂະຫຍາຍການ ກະສິກາເປັນຂອດຕົ້ນ ແລ້ວຈຶ່ງໄດ້ຊຸກຍູ້ຂະແໜງການອື່ນໆໃຫ້ມີການຂະຫຍາຍຕົວໄປພ້ອມໆກັນ.

ຍ້ອນມີແນວທາງອັນຖືກຕ້ອງ, ການພື້ນຟູເສດຖະກິດຂອງ ຣັດເຊຍຈຶ່ງມີທ່າຂະຫຍາຍຕົວໄປຢ່າງເຂັ້ມແຂງ ເນື້ອທີ່ການປູກຝັງຂະຫຍາຍຕົວອອກ ມາຮອດປີ ຄ.ສ 1922 ປະຊາຊົນໄດ້ຮັບໄຊຊະນະໃນ ການເກັບກູ້ຜົນລະປູກ ມີອາຫານພຽງພໍ, ກຳມະກອນຜູ້ຊໍານານງານຕ່າງໆກໍ່ກັບກັບຄືນເຂົ້າມາເຮັດວຽກຢູ່ ຕາມໂຮງຈັກ, ໂຮງງານຫຼາຍແຫ່ງ. ມາໃນທ້າຍປີ ຄ.ສ 1922 ທົ່ວດິນແດນຣັດເຊຍ ສາມາດປົດປ່ອຍຕົນເອງ ໄດ້ຢ່າງສິ້ນເຊີງບັນດາຊົນຊາດພາຍໃນປະເທດຣັດເຊຍ ໄລຍະ 3 ປີ ( ຄ.ສ 1922-1924 ) ການພື້ນພູເສດຖະກິດແມ່ນສໍາເລັດໂດຍພື້ນຖານ ປີຄ.ສ 1925 ປະລິມານການຜະລິດການກະສິກໍາເພີ່ມຂຶ້ນ 87%, ຜະລິດຕະພັນອຸດສາຫະກໍາບັນລຸ 75% ຊີວິດການເປັນຢູ່ຂອງປະຊາຊົນກໍ່ໄດ້ຮັບການປົວແປງດີຂຶ້ນເທື່ອລະກ້າວ.

ທ້າຍປີ ຄ.ສ 1925 ເພື່ອເຮັດໃຫ້ເສດຖະກິດມີການພັດທະນາດີຂຶ້ນກ່ວາເກົ່າ ລັດຖະບານໄດ້ຫັນນະໂຍບາຍເສດຖະກິດມາເປັນອຸດສາຫະກໍາ ສັງຄົມນິຍົມ ອຸດສາຫະກໍາພື້ນຖານຕົ້ນຕໍແມ່ນ ອຸດສາຫະກໍາພະລັງງານເຊັ່ນ: ໄຟຟ້າ, ຖ່ານຫີນ, ນໍ້າມັນເຊື້ອໄຟ...ນອກນັ້ນຍັງມີຍັງມີ ອຸດສາຫະກໍາກົນຈັກ, ອຸດສາຫະກໍາເຄມີ, ຂະແໜງການຄົມມະນາຄົມຂົນສົ່ງ ແລະ ປ້ອງກັນຊາດ.

ປີ 1927 ພັກ ແລະ ລັກຖະບານ ໄດ້ວາງແນວທາງໂດຍລະດົມໃຫ້ທຸກພາກສ່ວນປະຕິບັດ “ ແຜນການ 5 ປີໃຫ້ສໍາເລັດພາຍໃນ 4 ປີ ” ຄ.ສ 1928-1933 ໃນແຜນການ 5 ປີ ລັດຖະບານໄດ້ວາງແນວທາງ ໂດຍຫັນເປັນ ກະສິກອນກະເສດ ທີ່ວ່າດ້ວຍການຫຼຸດຜ່ອນ ຊົນຊັ້ນກູລັກ ( ການກິດຂີ່ຂູດຣີດ ) ປະຊາຊົນລັດເຊຍ ໄດ້ພ້ອມກັນສູ້ຊົນຢ່າງສຸດຂີດເພື່ອບັນລຸຜົນສໍາເລັດ ຕາມແຜນການ 5 ປີ ແລະ ສາມາດຮັບຜົນສໍາເລັດໄດ້ພາຍໃນ 4 ປີ 3 ເດືອນ ( ຄ.ສ 1932 )

ຮອດປີ ຄ.ສ 1929 ວຽກງານການຫັນເປັນອຸດສາຫະກໍາ ໄດ້ບັນລຸຜົນສໍາເລັດ, ກິດຈະການໃຫຍ່ຫຼາຍແຫ່ງໄດ້ຮັບການກໍ່ສ້າງຂຶ້ນ ( ຄ.ສ 1930 ), ຄ.ສ 1931 ການຫັນເປັນກະສິກອນໄດ້ກວມ 2/3 ຂອງເນື້ອທີ່ປູກຝັງທົ່ວປະເທດ, ຈໍານວນຄອບຄົວຊາວນາໃນທົ່ວປະເທດເພີ່ມຂຶ້ນ 53% ມາຮອດທ້າຍປີ ຄ.ສ 1932 ວຽກງານການເຫັນເປັນການກະສິກນແມ່ນໄດ້ຮັບຜົນສໍາເລັດໂດຍພື້ນຖານ. ແຜນການ 5 ປີຄັ້ງທີ 1 ໄດ້ຮັບຜົນສໍາເລັດອັນໃຫຍ່ຫຼວງ ແລະ ຈົບງາມໃນການສ້າງພື້ນຖານເສດຖະກິດ - ສັງຄົມ ຂອງຣັດເຊຍ.

- **ດ້ານການເມືອງ-ສັງຄົມ**

ພາຍຫຼັງ ການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917 ອໍານາດຂອງຣັດເຊຍ ໄດ້ຖະແຫຼງການກ່ຽວກັບ ກໍາມະສິດຂອງ ບັນດາຊົນຊາດຢູ່ໃນປະເທດຣັດເຊຍ ຖະແຫຼງການດັ່ງກ່າວໄດ້ຢືນຢັນວ່າເຖິງສິດສະເໝີພາບ ແລະ ບັນດາສິດຕັດສິນດ້ວຍຕົນເອງຂອງບັນຊາດ ພ້ອມທັງມີສິດແຍກຕົວອອກຈາກປະເທດຣັດເຊຍ ແລະ ປະກາດລົບລ້າງທຸກຮູບການກົດຂີ່ຂູດຂອງ ລະບອບເກົ່າ, ໄດ້ຮັບຮອງເອົາຄວາມເປັນເອກະລາດແຫ່ງຊາດ ປະເທດແຟງ ແລະ ປະເທດໂປໂລຍ ຢ່າງເປັນທາງການ.

ໜ້າທີ່ສໍາຄັນກ່ວາໝູ່ແມ່ນ ການທັບມ້າງກົງຈັກການປົກຄອງຂອງ ລັດສະຖາບັນເກົ່າ ສ້າງຕັ້ງກົງຈັກຂອງ ຊົນຊັ້ນກໍາມະຊີບແບບໃໝ່ຄື ລັດໂຊວຽດ, ສານປະຊາຊົນ, ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຮັບຜິດຊອບໜ້າທີ່ໆສໍາຄັນຢູ່ໃນ ກົງຈັກອໍານາດການປົກຄອງໃໝ່.

ນອກຈາກນັ້ນ ລັດຖະບານຍັງປະກາດລົບລ້າງຊົນຊັ້ນວັນນະ, ຖານະບັນດາສັກຂອງພວກສັກດີນາຕ່າງໆໃນສັງຄົມ ພ້ອມທັງລົບລ້າງອະພິສິດຂອງໂບດ ( ຄວາມເຊື່ອ ) , ແຍກໂບດອອກຈາກ ອຳນາດລັດ ແລະ ໂຮງຮຽນຍິງ ແລະ ຊາຍໃຫ້ມີສິດສະເໝີພາບ ແລະ ພົນລະເມືອງທຸກຄົນລ້ວນແຕ່ມີສິດເທົ່າທຽມກັນ.

### 3.2.2 ດ້ານການເມືອງ ການທູດ-ອຸດົມການ

ອຸດົມການຂອງລັດທິສັງຄົມນິຍົມ ພາຍຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດລົງ ສະຫະພາບໂຊວຽດກ້າວສູ່ຄວາມມີບົດບາດ ອັນເນື່ອງມາຈາກຄວາມປະສົບຜົນສຳເລັດ ໂດຍສະພາຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ບັນດາປະເທດເອີຣົບຕາເວັນອອກ ໄດ້ຫຼຸດພົ້ນອອກຈາກອິດທິພົນຂອງພວກ ຟາດຊິດ ເຮັດໃຫ້ປະເທດເຫຼົ່ານີ້ຕັດສິນໃຈ ການສ້າງສາພັດທະນາປະເທດຊາດຂອງຕົນເອງໄປຕາມ ເສັ້ນທາງສັງຄົມນິຍົມ ໄດ້ມີການໂຄສະນາເຜີຍແຜ່ ຍົກໃຫ້ເຫັນຜົນສຳເລັດ ແລະ ຜົນດີຂອງອຸດົມການທາງການເມືອງຂອງຕົນ. ດັ່ງນັ້ນຈຶ່ງເຮັດໃຫ້ ລະບົບສັງຄົມນິຍົມກາຍເປັນ ການເມືອງທີ່ມີບົດບາດໃນເວທີສາກົນ ເຄື່ອງມືຊ່ວຍໃນການດຳເນີນການປະຕິບັດ ແມ່ນສຳນັກງານຂ່າວສານ ວັດທະນະທຳ.

ດ້ານການເມືອງ-ການທູດ ສັງຄົມນິຍົມ ໄດ້ມີການປຸກລະດົມຂົນຂວາຍ ຫາສຳພັນທະມິດເພື່ອການຕໍ່ສູ້ກັນທາງດ້ານການເມືອງເຊິ່ງສະແດງອອກເຊັ່ນ: ການຊັກຊວນກັນເຮັດສົນທິສັນຍາຮ່ວມກັນທາງດ້ານການເມືອງ

**ກ. ອົງການໂຄມິນຟອມ**

ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງບັນດາປະເທດສັງຄົມນິຍົມ ໄດ້ມີການຈັດຕັ້ງກຸ່ມຂອງຕົນຂຶ້ນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ, ບໍ່ໃຫ້ຊາດຕາເວັນຕົກ ໂດຍສະເພາະ ຈັກກະພັດບໍໃຫ້ເຂົ້າມາແຊກແຊງກິດຈະການພາຍໃນຂອງບັນດາປະເທດສັງຄົມນິຍົມ ດັ່ງຈຶ່ງການສ້າງອົງການທຳອິດຂຶ້ນແມ່ນສຳນັກງານຂ່າວ ຄອມມູນິດ ຫຼື ອົງການໂຄມິນຟອມ (COMINFROM: The Communist Infromation Bureau ) ໃນເດືອນຕຸລາປີ ຄ.ສ 1947; ເປັນອົງການແລກປ່ຽນຂ່າວສານຂອງ ບັນດາພັກຄອມມູນິດປະເທດຕ່າງໆ ໂດຍສະເພາະແມ່ນ ເອີຣົບຕາເວັນອອກ ແລະ ສະຫະພາບໂຊວຽດ

ຈຸດປະສົງການສ້າງຕັ້ງອົງການນີ້ແມ່ນ ເພື່ອການປົກປ້ອງບໍ່ໃຫ້ພວກປະເທດ ມະຫາອຳນາດຕາເວັນຕົກ ສາມາດແຊກແຊງເຂົ້າພາຍໃນ ພັກຄອມມູນິດ ຂອງເອີຣົບຕາເວັນອອກ ແລະ ປ້ອງກັນບໍ່ໃຫ້ປະເທດເຫຼົ່ານັ້ນ ຮັບການຊ່ວຍເຫຼືອຕາມແຜນ ການມາກຊາກ ຂອງສະຫະລັດອາເມຣິກາວາງອອກ. ອົງການນີ້ ໄດ້ລົດລະຄວາມຈຳເປັນລົງ ເມື່ອທຸກປະເທດໃນເອີຣົບຕາເວັນອອກໄດ້ຖືກປົກຄອງໂດຍພັກຄອມມູນິດຮຽບຮ້ອຍແລ້ວ ແລະ ໃນທີ່ສຸດອົງການນີກໍໄດ້ຖືກຍົກເລີກໃນ ຄ.ສ 1958 ມີອາຍຸການພຽງແຕ່ 11 ປີ

### 3.2.3 ດ້ານການທະຫານ

ໃນໄລຍະຕໍ່ມາ ພາຍຫຼັງທີ່ບັນດາປະເທດຕາເວັນຕົກ ໂດຍແມ່ນຈັກກະພັກອາເມຣິກາ ເປັນຫົວໜ້າ ໄດ້ພາກັນຈັດຕັ້ງກຸ່ມການທະຫານ ຄື ອົງການນາໂຕ ຂຶ້ນ ເຊິ່ງມັນໄດ້ເປັນໄພຂົ່ມຂູ່ຕໍ່ລະບົບສັງຄົມນິຍົມແຫ່ງໂລກ, ສະນັ້ນ ກຸ່ມປະເທດ ເອີຣົບຕາເວັນອອກ ໂດຍມີສະຫະພາບໂຊວຽດ ເປັນແກນນຳ ໄດ້ຮ່ວມກັນທຳສົນທິສັນຍາ ວາກໂຊວີ ຂຶ້ນ ໃນປີ ຄ.ສ 1955 ເພື່ອເປັນການຕອບໂຕ້ ກັບ ກຸ່ມທະຫານຂອງພວກ ເອີຣົບຕາເວັນຕົກ ເຊັ່ນ: ອົງການນາໂຕ, ອົງການຊີອາໂຕ ເປັນຕົ້ນ.

**ກ. ກຸ່ມວາກໂຊວີ**

ການສ້າງຕັ້ງກຸ່ມສົນທິສັນຍາ ວາກໂຊວີ ( Warksaw Pact ) ສ້າງຕັ້ງຂຶ້ນ ໃນວັນທີ 14 ພຶດສາພາ ຄ.ສ 1955 ມີບັນດາປະເທດພາຄີເຂົ້າຮ່ວມມີ ສະຫະພາບໂຊວຽດ, ບູນກາລີ, ເຊັກໂກສະໂລວາກີ, ຮົງກີ, ໂປໂລຍ, ລູມານີ ແລະ ເຢຍລະມັນຕາເວັນອອກ.

ຈຸດປະສົງການສ້າງຕັ້ງ ກຸ່ມສົນທິສັນຍາທາງ ການທະຫານ ນີ້ເພື່ອ ຮັກສາຄວາມໝັ້ນຄົງ ຄວາມປອດໄພຂອງ ລະບົບສັງຄົມນິຍົມ ໂດຍສະເພາະແມ່ນ ເພື່ອຕ້ານຈາກການແຊກແຊງຂອງ ກຸ່ມທະຫານນາໂຕ ( NATO ) ອີງການນີ້ ສະຫະພາບໂຊວຽດ ເປັນພື້ນຖານທາງດ້ານການຊີ້ນຳ ແລະ ທາງດ້ານການທະຫານ, ຕາມການ ຕົກລົງຂອງສົນທິສັນຍານີ້ ສະຫະພາບໂຊວຽດ ສາມາດມີກຳລັງທະຫານໄວ້ໃນປະເທດສະມະຊິກໄດ້. ສົນທິສັນຍາ ນີ້ໄດ້ລະບຸວ່າ: ໃນກໍລະນີໜຶ່ງ ຫຼາຍປະເທດສະມາຊິກພາຍໃນ ກຸ່ມຖືກບຸກໂຈມຕີ ຈາກສະພາບການພາຍນອກ ຫຼື ສະພາບການພາຍໃນບໍ່ມີ ຄວາມ ສະຫງົບ ບັນດາປະເທດສະມາຊິກໃນກຸ່ມ ມີໜ້າທີ່ຊ່ວຍເຫຼືອໄດ້ທຸກຮູບການ. ນອກນັ້ນ ບັນດາປະເທດເຫຼົ່ານັ້ນ ຍັງໄດ້ ຕົກລົງສ້າງກອງບັນຊາການຂອງ ກຳລັງປະກອບອາວຸດ ໂດຍມີ ນາຍພົນ ໂກແຢບ ເປັນຜູ້ບັນຊາການສູງສຸດ.

ກຸ່ມສົນທິສັນຍາ ວາກໂຊວີ ໄດ້ປະກອບສ່ວນສຳຄັນເຂົ້າໃນ ການຮັກສາສັນຕິພາບຢູ່ໃນເອີຣົບ ແລະ ຄວາມ ເປັນ ເອກະລາດຂອງບັນດາປະເທດສັງຄົມນິຍົມ, ສາມາດທັບມ້າງທຸກໆໄພຂົ່ມຂູ່ ຈາກກຳລັງພາຍນອກ. ຕົວຢ່າງ ຢູ່ ຮົງ ກາລີ ( 1956 ), ເຊັກໂກສະໂລວາກີ (1968 ) ແລະ ໂປໂລຍ ( ຊຸມປີ 80 ) ໃນທີ່ສຸດກໍ່ກ້າວໄປເຖິງຄວາມດຸ່ນດ່ຽງໃນ ທ່າຍຸດທະສາດທາງດ້ານ ການທະຫານ ລະຫວ່າງ ບັນດາປະເທດ ສັງຄົມນິຍົມ ກັບ ບັນດາປະເທດຈັກກະພັດໃນຕົ້ນຊຸມ ປີ 70

ພາຍຫຼັງການຜັນແປໄປທາງດ້ານການເມືອງຢ່າງສັບສົນຢູ່ເອີຣົບຕາເວັນອອກ ແລະ ຜູ້ນຳໂຊວຽດ-ອາເມຣິກາ ໄດ້ ມີການເຈລະຈາກັນ ກ່ຽວກັບບັນຫາ ການຢຸດຕິ " ສົງຄາມເຢັນ " , ຫຼັງຈາກນັ້ນ ການສືບຕໍ່ຄົງຕົວຂອງ ກຸ່ມສົນທິສັນຍາ ວາກໂຊວີ ບໍ່ສອດຄ່ອງກັບ ສະພາບການປ່ຽນແປງໃໝ່ ດັ່ງນັ້ນ ມາຮອດຕົ້ນປີ ຄ.ສ 1991 ການຈັດຕັ້ງກອງປະຊຸມຜູ້ແທນ ຂອງບັນດາ ປະເທດສະມາຊິກດັ່ງກ່າວ ໄດ້ຕົກລົງການຢຸດຕິການເຄື່ອນໄຫວຂອງ ກຸ່ມວາກໂຊວີ ໃນວັນທີ 31/3/1991.

## 4. ການກຳເນີດຂະບວນການບໍ່ຮ່ວມກຸ່ມ

ໃນຄະນະທີ່ ສະພາບການຂອງໂລກ ພວມຜັນແປໄປຢ່າງສັບສົນ ແບ່ງອອກເປັນ ສອງລະບົບ ( ຄ້າຍ ) ມີ ຄວາມຂັດແຍ່ງກັນທາງດ້ານ ອຸດົມການລະຫ່ວາງ ນາຍທຶນປະຊາທິປະໄຕ ແລະ ລັດທິຄອມມູນິດ ໄປຢ່າງຮຸນແຮງນັ້ນ ໄດ້ເກີດມີການແຂ່ງຂັນກັນ ຈັດຕັ້ງກຸ່ມທາງດ້ານເສດຖະກິດ, ການເມືອງ ຕະຫຼອດຮອດການຮ່ວມກຸ່ມທາງດ້ານ ການ ທະຫານຂອງແຕ່ລະຝ່າຍ. ເຊິ່ງກໍໃຫ້ເກີດບັນຫາຫຍຸ້ງຍາກໃນການເຈລະຈາຕົກລົງລະຫ່ວາງຊາດ ແລະ ນັບມື້ນັບ ເພີ່ມມີ ຄວາມຮຸນແຮງ ສະນັ້ນ, ບັນດາປະເທດທີ່ດ້ອຍພັດທະນາ ແລະ ກຳລັງພັດທະນາ ໂດຍສະເພາະບັນດາປະເທດຫາກໍ່ ໄດ້ ຮັບເອກະລາດ ໃໝ່ ໄດ້ຮ່ວມກັນເປັນກຸ່ມເອີ້ນວ່າ: " ໂລກທີ 3 " ໂດຍຖືເອົາ ນະໂຍບາຍທາງດ້ານການເມືອງ ລະຫ່ວາງ ປະເທດເປັນຕົວວັດ. ກຸ່ມນີ້ ຈະວາງຕົວເປັນກາງ ບໍ່ເຂົ້າຮ່ວມຝ່າຍໃດຝ່າຍໜຶ່ງ, ພິຈາລະນາບັນຫາ ຫຼື ລົງມະຕິໃນການ ແກ້ໄຂບັນຫາ ຂໍ້ຂັດແຍ່ງທາງ ດ້ານການເມືອງ ລະຫວ່າງປະເທດ. ໂດຍຍຶດເອົາເຫດ ແລະ ຜົນ, ຫຼັກການເປັນທຳເປັນ ຫຼັກການສຳຄັນໃນການດຳເນີນງານຂອງກຸ່ມ.

ຂະບວນການບໍ່ຮ່ວມກຸ່ມນີ້ ໄດ້ເປີດຂຶ້ນ ໂດຍກອງປະຊຸມທີ່ ບັນດຸງ ( ປະເທດອິນໂດເນເຊຍ ) ເດືອນ ເມສາ ປີ ຄ.ສ 1955 ລວມມີ 25 ປະເທດທີ່ມາຈາກທະວີບອາຊີ ແລະ ອາຟຣິກາ, ກອງປະຊຸມໄດ້ຄົ້ນຄ້ວາ ແລະ ຮັບຮອງເອົາ 10 ຫຼັກການ ໂດຍຖືເອົານະໂຍບາຍ ຢູ່ຮ່ວມກັນໂດຍສັນຕິຂອງ ທ່ານ ຍາວາຣາ ຮານເນລູ 5 ປະການພື້ນຖານຄື:

- ການເຄົາລົບ ອຳນາດອະທິປະໄຕ ແລະ ເຂດນ້ຳແດນດິນຂອງກັນ ແລະ ກັນ
- ບໍ່ຮຸກຮານເຊິ່ງກັນ ແລະ ກັນ
- ບໍ່ແຊກແຊງ ກິດຈະການພາຍໃນຂອງກັນ ແລະ ກັນ.
- ມີຄວາມສະເໝີພາບ ແລະ ມີຜົນປະໂຫຍດຮ່ວມກັນ
- ການຢູ່ຮ່ວມກັນໂດຍສັນຕິ

5 ຫຼັກການນີ້ ມີລັກສະນະສອດຄ່ອງກັບ ອົງການສະຫະປະຊາຊາດ ຕໍ່ຕ້ານກັບ ລັດທິລ່າເມືອງຂຶ້ນຂອງ ຈັກກະພັດ, ສົ່ງເສີມການຕໍ່ສູ້ເພື່ອ ເອກະລາດ ອະທິປະໄຕ ຂອງປະເທດຕ່າງໆໃນໂລກ ແລະ ຮ່ວມການຕໍ່ຕ້ານທຸກການ ກະທຳທີ່ເປັນການເອົາລັດເອົາປຽບປະເທດອື່ນຂອງ ບັນດາປະເທດມະຫາອຳນາດ ແລະ ຕໍ່ຕ້ານທຸກການກະທຳ ທີ່ເປັນ ໄພຂົ່ມຂູ່ ສັນຕິພາບໂລກ.

ຍ້ອນນະໂຍບາຍກ້າວໜ້າຂອງວຽກງານນີ້ ເຮັດໃຫ້ມີປະເທດສະມາຊິກເພີ່ມຂຶ້ນຢ່າງຫຼວງຫຼາຍເຊັ່ນ: ໃນກອງ ປະຊຸມ ເດືອນຕຸລາ ປີ ຄ.ສ 1957 ມີ 44 ປະເທດເຂົ້າຮ່ວມ, ເດືອນ ຕຸລາ ຄ.ສ 1964 ມີ 47 ປະເທດເຂົ້າຮ່ວມ.

### 4.1 ຈຸດປະສົງຂອງການສ້າງຕັ້ງກຸ່ມ

ຈຸດປະສົງຂອງການສ້າງຕັ້ງກຸ່ມບໍ່ຮ່ວມກຸ່ມນີ້ເພື່ອ

- ເພື່ອຫຼີກເວັ້ນຈາກ ການຢູ່ໂດດດ່ຽວ ເຊິ່ງເປັນການສ້າງຄວາມສະດວກໃນການແຊກແຊງໄດ້ຍາກຂອງ ປະເທດ ມະຫາອຳນາດ
- ເພື່ອຫຼີກລ້ຽງຈາກການຕົກຢູ່ໃນ ການຄອບຄອງຂອງປະເທດມະຫາອຳນາດ
- ເພື່ອສ້າງໃຫ້ເກີດກຳລັງທີ່ສຳຄັນເຊິ່ງຈະເຮັດໃຫ້ ປະເທດມະຫາອຳນາດ ຈຳຕ້ອງຍອມຮັບຮູ້ ຖານະບົດບາດໃນ ເວທີເສດຖະກິດ ຂອງການເມືອງໂລກ.
- ເພື່ອຍາດແຍ່ງເອົາຄວາມຊ່ວຍເຫຼືອຈາກ ປະເທດມະຫາອຳນາດ ໃນການພັດທະນາປະເທດ ຢ່າງບໍ່ເກງກົວ ໂດຍ ຊ່ວງໃຊ້ຂໍ້ຂັດແຍ່ງ ລະຫ່ວາງມະຫາອຳນາດ ທັງສອງມາຕໍ່ລອງ.

ເຖິງແນວໃດກໍ່ຕາມ ເພື່ອຄວາມເຂົ້າໃຈກ່ຽວ ໂລກທີ 3 ຫຼື ອົງການບໍ່ຮ່ວມກຸ່ມໃຫ້ມີຄວາມຊັດເຈນຂຶ້ນ ເຮົາ ຕ້ອງມີຄວາມເຂົ້າໃຈຕໍ່ໂລກທີໜຶ່ງ ແລະ ໂລກທີສອງ ຄວບຄູ່ກັນໄປ. ໃນດ້ານຫຼັກການແລ້ວ ຄຳວ່າ ໂລກທີໜຶ່ງ ແລະ ໂລກທີສອງ ຍັງບໍ່ທັນມີຫຼັກການແບ່ງອັນເປັນທີ່ແນ່ນອນ ແຕ່ເທົ່າທີ່ການສັງເກດ ສະພາບສັງຄົມສ່ວນໃຫຍ່ ອັນຮັບຮູ້ກັນ ໃນປັດຈຸບັນນີ້ ໂລກອອກເປັນ 3 ກຸ່ມ ຄື: ກຸ່ມເສລີນິຍົມ ( ທຶນນິຍົມ ), ກຸ່ມສັງຄົມນິຍົມ ແລະ ກຸ່ມບໍ່ຮ່ວມກຸ່ມ. ທັງ 3 ກຸ່ມນີ້ ໄດ້ມີຄວາມແຕກຕ່າງກັນໃນຫຼາຍໆດ້ານເປັນຕົ້ນແມ່ນ ດ້ານເສດຖະກິດ ການເມືອງ ແລະສັງຄົມ.

## 5. ຜົນສະທ້ອນຄວາມແຕກຕ່າງລະຫ່ວາງສອງກຸ່ມການເມືອງໂລກ

### ກ. ດ້ານຕັ້ງໜ້າ.

ດ້ານເສດຖະກິດ ເຮັດໃຫ້ມີການຊ່ວຍເຫຼືອກັນທາງ ດ້ານເສດຖະກິດ ແກ່ບັນດາປະເທດພັນທະມິດເຊັ່ນ ການ ໃຫ້ກູ້ຢືມເງິນ ຫຼື ການໃຫ້ຄວາມຊ່ວຍເຫຼືອລ້າ. ນອກນັ້ນ ຍັງມີມາດຕະການ ທີ່ໃຊ້ເປັນມາດຕະການທາງ ດ້ານ ເສດຖະກິດ ເພື່ອຈະຕອບໂຕ້ກັບຝ່າຍ ກົງກັນຂ້າມເຊັ່ນ ການສະແດງອອກທາງ ການການປິດລ້ອມທາງດ້ານເສດຖະກິດ, ນອກນັ້ນ ຍັງມີການຈັດຕັ້ງກຸ່ມທາງດ້ານເສດຖະກິດເພື່ອຊ່ວງຊີງກັນເຊັ່ນໃນຂະນະທີ່ ສະຫະລັດອາເມຣິກາ ປະກາດໃຊ້ ແຜນການມາກຊານ ( Marshall Plan ) ຄ.ສ 1947 ເປັນແຜນການຊ່ວຍເຫຼືອ ເອີຣົບຕາເວັນຕົກ ເພື່ອພື້ນຟູ ເສດຖະກິດ ອັນນຳການໄປສູ່ ການກໍ່ຕັ້ງອົງການວ່າ ດ້ວຍຄວາມຮ່ວມມືທາງດ້ານເສດຖະກິດຂອງເອີຣົບ ( OEEC: Organization of European Economic Co-operation ) ໃນ ປີ ຄ.ສ 1949 ສະຫະພາບໂຊວຽດ ກໍ່ໄດ້ ປະກາດໃຊ້ແຜນການ ໂມໂລຕົບ ( MOLOTOPLAN ແຜນການຊ້ວຍເຫຼືອທາງດ້ານເສດຖະກິດຂອງ ສະຫະພາບໂຊ ວຽດ ) ກ້າວໄປສູ່ການສ້າງຕັ້ງ ສະພາຊວ່ຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານເສດຖະກິດ.

ຕາຕາລາງສົມທຽບປະລິມານການຜະລິດເຫຼັກກ້າ ( ລ້ານໂຕນ )

| ປີ<br><br>ປະເທດ | 1950 | 1960 | 1970 | 1980 |
|---|---|---|---|---|
| ສະຫະພາບໂຊວຽດ | 27.3 | 65.3 | 115.9 | 147.9 |
| ສະຫະລັດອາມາຣິກາ | 87.8 | 90.1 | 119.3 | 11.5 |
| ທົ່ວໂລກ | 189.3 | 348.1 | 593.8 | 696.3 |

- ດ້ານວິທະຍາສາດ ແລະ ເຕັດໂນໂລຊີ ຕ່າງຝ່າຍກໍ່ ໄດ້ພະຍາຍາມສະແດງໃຫ້ເຫັນຄວາມສຳເລັດທາງ ດ້ານວິທະຍາສາດ ທີ່ໃຊ້ເຕັກໂນໂລຊີສູງເຊັ່ນ: ການຄົ້ນຄິດປະດິດສິ່ງໃໝ່ໆ, ສ້າງອາວຸດທີ່ທັນສະໄໝ, ການສະຫຼວດອາວະກາດ... ການແຂ່ງຂັນ ລະຫ່ວາງອາເຣິກາ ແລະ ໂຊວຽດ ເພື່ອສ້າງຄວາມສັດທາໃຫ້ແກ່ປະເທດສະມາຊິກ ຫຼື ຝ່າຍພັນທະມິດຂອງຕົນ ແລະ ສ້າງຄວາມ ຢຳເກງ ຂົ່ມຂູ່ຝ່າຍກົງກັນຂ້າມ ສະແດງອອກໃນ ປີ ຄ.ສ 1961 ໂຊວຽດ ເປັນປະເທດ ທຳອິດທີ່ສົ່ງ ຍານອາວະກາດ ຂື້ນສູ່ ອະວະກາດ ໂດຍມີ ຢູຣີກາກາລີນ ເປັນນັກອາວະກາດທຳອິດຂອງໂລກ ມັນໄດ້ສົ່ງກາດແຫ່ງການຄອບຄອງ ອາວະກາດຂອງມວນມະນຸດ ເຮັດໃຫ້ ໂຊວຽດ ມີທ່າແຮງເທົ່າທຽມກັບອາເມຣິກາທາງ ດ້ານການທະຫານ ສະເພາະແມ່ນ ອາວຸດນິວເຄຣຍ ຜົນງານຂອງ ໂຊວຽດຄັ້ງນີ້ ໄດ້ມີຄວາມໝາຍເຊິ່ງສາມາດພິກປີ້ນ ຍຸດທະສາດກວມໂລກຂອງ ອາເມຣິກາ ແລະ ພັນທະມິດຂອງພວກເຂົາ.
- ດ້ານການທະຫານ ສອງຝ່າຍ ໄດ້ມີການສະສົມອາວຸດ ທີ່ມີຄວາມທັນສະໄໝ ແລະ ຫຼວງຫຼາຍ, ມີການຊ້ອມຮົບເພື່ອບໍ່ໃຫ້ຝ່າຍກົງທ້າທາຍ, ໃຫ້ຄວາມຊ່ວຍເຫຼືອທາງດ້ານການທະຫານແກ່ ປະເທດພັນທະມິດເຊັ່ນ ການຊ່ວຍເຫຼືອດ້ານອາວຸດ, ຊ່ຽວຊານທາງດ້ານການທະຫານ ຝ່າຍໂລກເສລີປະຊາທິປະໄຕ ໄດ້ສ້າງຕັ້ງກຸ່ມນາໂຕ ( 1949 ) , ກຸ່ມຊີອາໂຕ ( ຄ.ສ 1954 ); ຝ່າຍ ສັງຄົມນິຍົມ ກໍ່ໄດ້ສ້າງຕັ້ງ ກຸ່ມສັນຍາວາກໂຊວີ ( ຄ.ສ 1955 ) ເພື່ອຕອບໂຕ້ຝ່າຍກົງກັນຂ້າມຄືນ

**ຂ.ດ້ານຫຍໍ້ທໍ້**

ດ້ານການເມືອງ ພາຍຫຼັງໂລກແບ່ງອອກເປັນສອງລະບົບ ( ສອງຄ້າຍ ) ໄດ້ເຮັດໃຫ້ ສະພາບການທາງດ້ານການເມືອງໂລກ ມີຄວາມສັບສົນວຸ້ນວາຍ ຍ້ອນວ່າທັງສອງ ລະບົບການເມືອງນັ້ນ ໄດ້ພະຍາຍາມສ້າງຄວາມເປັນປໍລະປັກເຊິ່ງກັນ ແລະ ກັນ, ເປັນຕົວການໃນການແບ່ງແຍກດິນແດນ ຫຼື ເປັນຕົວການໃນການ ແຊກເຂົ້າກິດຈະການພາຍໃນຂອງຊາດອື່ນ ເຊິ່ງເປັນເຫດໃຫ້ເກີດ ມີຄວາມຂັດແຍ່ງກັນພາຍໃນ ປະເທດ ກ້າວໄປເຖິງ ການເກີດສົງຄາມອີກຄັ້ງໃໝ່ນັ້ນກໍ່ຄື " ການເກີດສົງຄວາມເຢັນ ". ເຊິ່ງມັນ ໄດ້ສົ່ງຜົນສະທ້ອນໃຫ້ ສັງຄົມໂລກຫຼາຍປະການເປັນຕົ້ນແມ່ນ ໄດ້ເຮັດໃຫ້ແຜນດິນ ປະເທດເກົາຫຼີ ຕ້ອງຖືກແບ່ງອອກເປັນສອງປະເທດ ຫຼື ສອງລະບົບການເມືອງທີ່ແຕກຕ່າງກັນ; ເກົາຫຼີໃຕ້ ເດີນຕາມລະບົບການເມືອງ ເສລີ ປະຊາທິປະໄຕ ໂດຍມີ ສະຫະລັດອາເມຣິກາ ເປັນຕົວຜັກດັນ, ສ່ວນເກົາຫຼີເໜືອ ແມ່ນເດີນຕາມລະບົບສັງຄົມນິຍົມ ໂດຍມີ ສະຫະພາບໂຊວຽດເປັນຜູ້ຊຸກດັນ ຄວາມແຕກຕ່າງທາງດ້ານອຸດົມການດັ່ງກ່າວນີ້ອັນ ໄດ້ເຮັດ

ໃຫ້ເກີດມີ ຄວາມຂັດແຍ່ງກັນຢ່າງຮຸນແຮງ ໃນທີ່ສຸດກໍ່ແບ່ງອອກເປັນສອງປະເທດໃນ ລະຫ່ວາງເສັ້ນຂະໜານທີ N ມາຮອດປະຈຸບັນ.

ບັນຫາເຢຍລະມັນ ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງ ເຢຍລະມັນ ໄດ້ແບ່ງອອກເປັນ 4 ເຂດ ( 1 ສິງຫາ 1945 ); ເຢຍລະມັນຕາເວັນອອກ ຄຸ້ມຄອງໂດຍ ສະຫະພາບໂຊວຽດ ແລະ ອີກ 3 ເຂດແມ່ນຄຸ້ມຄອງ ໂດຍປະເທດມະຫາອຳນາດມີ ອັງກິດ, ຝຣັ່ງ ແລະ ອາເມຣິກາ; ດ້ວຍວ່າອິດທິພົນຂອງອາເມຣິກາເໜືອກວ່າ ຈຶ່ງເຮັດໃຫ້ອາເມຣິກາ ສາມາດຄຸມໄດ້ທັງໝົດ 3 ເຂດ ( ເຢຍລະມັນຕາເວັນຕົກ ). ສະນັ້ນ ໂຊວຽດຈຶ່ງປິດລ້ອມ ແບັກແລງ ເປັນເວລາ 1 ປີ ເຮັດໃຫ້ສະພາບຄວາມຂັດແຍ່ງໃນເຢຍລະມັນ ຍິ່ງເຄັ່ງຕຶງຂຶ້ນ ແລະ ໃນທີ່ສຸດ ປີ ຄ.ສ 1949 ອາເມຣິກາໄດ້ປະກາດສະຖາປະນາເຂດປົກຄອງ ຂອງຕົນ (ເອີຣົບຕາເວັນຕົກ ) ເປັນປະເທດສາທາລະນະລັດ ເຢຍລະມັນ, ສ່ວນ ສະຫະພາບໂຊວຽດ ກໍ່ໄດ້ປະກາດເຂດຄຸ້ມຄອງຂອງຕົນຂຶ້ນເປັນ ປະເທດສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ. ດັ່ງນັ້ນ ເຮັດໃຫ້ ເຢຍລະມັນ ແຍກອອກເປັນສອງເຂດ ທີ່ມີລະບົບການເມືອງແຕກຕ່າງກັນ. ນອກຈາກນັ້ນ ຍັງມີຫຼາຍບັນຫາທີ່ເກີດຂຶ້ນ ເປັນຕົ້ນ ບັນຫາຢູ່ ຈີນ, ຫວຽດນາມ, ບັນຫາອິນດູຈີນ...

ສະຫຼຸບລວມແລ້ວ, ພາຍຫຼັງສົງຄາມໂລກຄັ້ງທີ II ບັນດາຊົນຊາດ ຕ່າງກໍສະແຫວງຫາຊ່ອງທາງເພື່ອຄວາມສັນຕິ ຫຼື ເວັ້ນຈາກສົງຄາມ ອັນຈະນຳມາ ຊຶ່ງຄວາມຫາຍານະ ສະແດງອອກຢູ່ໃນ ການຮ່ວມກັນກໍ່ຕັ້ງ ອົງການສະຫະປະຊາຊາດ , ການກໍ່ຕັ້ງອົງການສົນທິສັນຍາ ດ້ານເສດຖະກິດ ການເມືອງຕ່າງໆ; ແຕ່ພ້ອມດຽວກັນນັ້ນ ຕ່າງກຸ່ມ ຕ່າງຝ່າຍກໍພະຍາຍາມ ຍາດແຍ່ງສິດຜົນປະໂຫຍດ, ຊິງດີ ຊິງເດັ່ນ ຊິງຄວາມເປັນໃຫຍ່ ນັບທັງດ້ານເສດຖະກິດ ການເມືອງ ແລະ ການທະຫານ; ອັນພາໃຫ້ເກີດຄວາມເຄັ່ງຕຶງ ຊຶ່ງເອີ້ນກັນວ່າ: “ ຍຸກແຫ່ງສົງຄາມເຢັນ ”. ຕົກມາຮອດກາງຊຸມປີ 80 ຂອງສະຕະວັດທີ XX ກໍເກີດມີການປ່ຽນແປງທີ່ໃຫຍ່ຫຼວງ ຢູ່ໃນລະບົບສັງຄົມນິຍົມ, ນັ້ນແມ່ນການ ລົ້ມລະລາຍຂອງສະຫະພາບໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກ, ເຫດການດັ່ງກ່າວໄດ້ເປັນຂີດໝາຍການປ່ຽນແປງ ການຊັ່ງຊາກຳລັງທີ່ກ້ຳເກິ່ງກັນລະຫວ່າງສອງລະບົບການເມືອງ, ໄພຂົ່ມຂູ່ຂອງສົງຄາມຂະໜາດໃຫຍ່ໄດ້ຖືກຫຼຸດຜ່ອນລົງ ແລະ ໄດ້ຮັບການແກ້ໄຂເປັນລຳດັບ, ທ່າອ່ຽງການພົບປະເຈລະຈາກັນ ເພື່ອຢູ່ຮ່ວມກັນໂດຍສັນຕິ ແລະ ຮ່ວມມືກັນລະຫ່ວາງນາໆຊາດໃນໂລກ ນັບມື້ນັບຂະຫຍາຍຕົວ, ແຕ່ພ້ອມດຽວກັນນັ້ນ ຄວາມຂັດແຍ່ງລະຫວ່າງຊາດໃນພາກພື້ນ, ກຸ່ມ, ພັກຝ່າຍ ຫຼື ລັດທິ ກໍຍັງຄົງສືບຕໍ່ຂະຫຍາຍຕົວ ໃນສະຖານະການໃໝ່ແຫ່ງໂລກປັດຈຸບັນ.

## 6. ບົດບາດຂອງອົງການສະຫະປະຊາຊາດໃນການແກ້ໄຂບັນຫາຕ່າງໆໃນໂລກ

### ກ ບົດບາດໃນການຮັກສາສັນຕິພາບ

ໜ້າທີ່ສຳຄັນໃນການຮັກສາສັນຕິພາບຂອງອົງການສະຫະປະຊາຊາດ ໄດ້ແກ່ ການລະງັບກໍລະນີຜິດພາດລະຫວ່າງປະເທດ, ການກຳຈັດຄວາມຈັດແຍ່ງທັງທາງກົງ ແລະ ທາງອ້ອມ ດ້ວຍວິທີແບບສັນຕິ ເຊັ່ນ: ການເຈລະຈາທາງດ້ານການທູດ, ການໄກ່ເກ່ຍ, ການປານີປານອມ, ການຕັດສິນຂອງສານ ແລະ ການຮ້ອງຂໍການສອບສວນຂໍ້ມູນຄວາມຈິງ.

### ຂ. ບົດບາດໃນການສົ່ງເສີມຄວາມຮ່ວມມືລະຫວ່າງປະເທດໃນການພັດທະນາເສດຖະກິດສັງຄົມ.

ໜ່ວຍງານທີ່ເຮັດໜ້າທີ່ນີ້ໂດຍກົງແມ່ນຄະນະມົນຕີເສດຖະກິດ ແລະ ສັງຄົມເຮັດໜ້າທີ່ໃນການເຜີຍແຜ່ຂ່າວສານກ່ຽວກັບສະພາບທາງດ້ານເສດຖະກິດ, ຈັດການປະຊຸມປຶກສາຫາລືເພື່ອສົ່ງເສີມການຄ້າ ແລະ ດຳເນີນໂຄງການຕ່າງໆ.

### ຄ. ບົດບາດການສົ່ງເສີມສິດທິມະນຸດ

ການສົ່ງເສີມສິດທິມະນຸດເປັນວຽກງານໜຶ່ງທີ່ສະຫະປະຊາຊາດໃຫ້ຄວາມສຳຄັນ ໂດຍສະເພາະນັບແຕ່ວັນທ 10 ທັນວາ ຄ.ສ 1948 ກອງປະຊຸມສະມັດຊາໃຫຍ່ໄດ້ລົງມະຕິຮັບຮອງເອົາຄຳປະກາດຖະແຫຼງການວ່າດ້ວຍສິດທິມະນຸດ

ເຊິ່ງຕໍ່ມາເອີ້ນວ່າ: ປະຕິຍານສາກົນ ຫຼັງຈາກນັ້ນມາເອົາການສະຫະປະຊາຊາດຈຶ່ງໄດ້ກຳນົດເອົາວັນທີ 10 ທັນວາ ເປັນວັນສິດທິມະນຸດໂລກ.

**6.1 ລັກສະນະການແກ້ໄຂບັນຫາຂອງອົງການສະຫະປະຊາຊາດ**

ການແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດໂດຍອົງການສະຫະປະຊາຊາດ ຜົນຈາກສົງຄາມໂລກເທື່ອທີ່ 1 ນຳຄວາມສູຍເສຍທັງຊີວິດ ແລະ ຊັບສິນຂອງທຸກຝ່າຍເປັນຈຳນວນຫຼາຍ ຫຼາຍປະເທດຈຶ່ງໄດ້ ສ້າງລະບົບການເມືອງລະຫວ່າງປະເທດຂຶ້ນໃໝ່ ໂດຍຈັດໃຫ້ມີອົງຄ໌ ການກາງລະຫວ່າງປະເທດຂຶ້ນເພື່ອ ແກ້ໄຂບັນຫາຄວາມຂັດແຍ້ງຕ່າງໆ ອົງການສັນຕິພາບອົງການທຳອິດຂອງໂລກ ຄື ອົງຄ໌ການສັນນິບາດຊາດແຕ່ການເຮັດວຽກງານຂອງອົງການສັນນິບາດຊາດ ບໍ່ສາມາດລະງັບຂໍ້ພິພາດໄດ້ສຳເລັດ ເຮັດໃຫ້ເກີດສົງຄາມໂລກເທື່ອທີ່ 2 ຂຶ້ນຈຶ່ງລົ້ມເລີກໄປ ຫຼັງຈາກສິ້ນສຸດສົງຄາມໂລກເທື່ອທີ່ 2 ໄດ້ມີການຈັດຕັ້ງ ອົງການສະປະຊາຊາດ (United Nations) ຂຶ້ນມາແທນໜ່ວຍງານຂອງສະຫະປະຊາຊາດທີ່ມີບົດບາດຢ່າງສູງໃນການຖືຮັກສາສັນຕິພາບຂອງໂລກ ໄດ້ແກ່ຄະນະລັດມົນຕຣີ ຄວາມໝັ້ນຄົງເຊິ່ງປະກອບດ້ວຍຊາດ ມະຫາອຳນາດ 5 ຊາດເຊິ່ງເປັນສະມາຊິກຖາວອນ ຄື ອັງກິດ, ຝຣັ່ງ , ອາເມຣິກາ, ສະຫະພາບໂຊວຽດ ແລະ ຈີນ ແຕ່ລະຊາດ ມີສິດທິ ພິເສດໃນການຢັບຢັ້ງ (Veto) ມະຕິຂອງກອງຊຸມໄດ້ ການຖືຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງປະເທດຂອງອົງການສະຫະປະຊາຊາດ ປະກອບດ້ວຍວິທີການ 2 ຮູບແບບ ຄື 1.) ການລະງັບກໍລະນີພິພາດໂດຍສັນຕິວິທີໄດ້ແກ່ການຂໍຮ້ອງການໃຫ້ຄວາມຊ່ວຍເຫລືອໃນການເຈນຈາທາງການທູດ ການໄກ່ເກ່ຍການສອບສວນຂໍ້ເທັດຈິງການລະງັບຂໍ້ພິພາດໂດຍສັນຕິວິທີນີ້ທັງຄະນະມົນຕີຄວາມໝັ້ນຄົງ ແລະ ສະມັດຊາຕ່າງມີອຳນາດທີ່ຈະດຳເນີນການໄດ້ ແຕ່ຕ້ອງບໍ່ຊໍ້າຊ້ອນກັນ 2.) ການລະງັບຂໍ້ພິພາດໂດຍການໃຊ້ ມາດການບັບບັງຄັບ ມີ 2 ລັກສະນະ ຄື 1) ໃຊ້ມາດຕະການບັບບັງຄັບໂດຍບໍ່ແມ່ນກຳລັງໄດ້ແກ່ການຕັດສຳພັນ ທາງເສດຖະກິດ ແລະ ການຄົມການຕັດສຳພັນທາງການທູດ ການປະນາມປະເທດທີ່ບໍ່ໄດ້ປະຕິບັດຕາມມຕິ

2.2) ໃຊ້ມາດຕະການບັບບັງຄັບໂດຍໃຊ້ກຳລັງທະຫານໃຊ້ເມື່ອເຫັນວ່າການໃຊ່ມາດຕະການບັບບັງຄັບ ໂດຍບໍ່ໃຊ້ກຳລັງບໍ່ໄດ້ຜົນພຽງພໍໂດຍມອບໝາຍໃຫ້ຄະນະມົນຕຣີ ຄວາມໝັ້ນຄົງເຮັດໜ້າທີ່ບັງຄັບໂດຍໃຊ້ກຳລັງທະຫານ ເຊິ່ງມີແນວປະຕິບັດ ຄື ກຳນົດໃໝ່ອາວຸດ ແລະ ກອງກຳລັງທະຫານທັງໝົດກັນກັບປະເທດສະມາຊິກແຕ່ຈະມີລັກສະນະເປັນພຽງກອງກຳລັງທະຫານທີ່ເຮັດໜ້າທີ່ປ້ອງກັນການຕໍ່ສູ້ສັງເກດການ ຄົ້ນຫາຂໍ້ເທັດຈິງ ແລະ ຖືຮັກສາກົດໝາຍ ໂດຍຈັດຕັ້ງຂຶ້ນເປັນເທື່ອຮູ້ຕາມຄວາມຈຳເປັນ

**6.2 ຂໍ້ຈຳກັດຂອງອົງການສະຫະປະຊາຊາດໃນການແກ້ໄຂບັນຫາສາກົນ**

ອົງການສະກະປະຊາຊາດມີໜ້າທີ່ສາຄັນກໍ່ຄືການຮັກສາສັນຕິພາບ ລະງັບຂໍ້ຜິດພາດຕ່າງໆລະຫວ່າງປະເທດໂດຍທາງກົງ ແລະ ທາງອ້ອມດ້ວຍວິມີແບບສັນຕິວິທີ ເຊັ່ນ: ການເຈລະຈາການທູດ, ການໄກເກ່ຍ,ການປານີປານອມ…ແຕ່ອົງການສະຫະປະຊາຊາດບໍ່ມີສິດ ແລະ ອຳນາດທີ່ຈະໄປກ້າວກ່າຍກິດຈະການພາຍໃນປະເທດຂອງແຕ່ລະປະເທດສະມາຊິກ, ບໍ່ສາມາດໃຊ້ອາວຸດ ແລະ ຄວາມຮຸນແຮງໃນການແກ້ໄຂບັນຫາໃດໜຶ່ງໄດ້.

**ກ.ການແກ້ໄຂບັນຫາຂໍ້ຂັດແຍ່ງ**

ນັບແຕ່ການສ້າງຕັ້ງຂຶ້ນມາ ອົງການສະຫະປະຊາຊາດ ໄດ້ເຮັດໜ້າທີ່ຂອງຕົນໃນການດຳເນີນການເຈລະຈາແກ້ໄຂ ເຊິ່ງໃນບາງ ກໍ່ໃຊ້ກຳລັງສະໜັບສະໜູນການແກ້ໄຂໃນກໍລະນີພິພາດ ຫຼື ຄວາມຂັດແຍ່ງທາງດ້ານເຊື້ອຊາດ, ລັດທິການເມືອງ ແລະ ບັນຫາຊາຍແດນຂອງລັດໃຫ້ລຸລ່ວງໄປໃນກໍລະນີ ເຊັ່ນ: ບັນຫາສົງຄາມໃນແຫຼມເກົາຫຼີ, ບັນຫາສົງຄາມລະຫວ່າງອາຣັບກັບອິດສາລະແອນທີ່ເກີດຂຶ້ນໃນຫຼາຍຄັ້ງ, ບັນຫາຄວາມຂັດແຍ່ງໃນໂຊມາລີ ແລະ ອື່ນໆ.

ສຳລັບອົງການສະຫະປະຊາຊາດ ແມ່ນໜ້າທີ່ຄືຮັກສາສັນຕິພາບຂອງໂລກ ຖ້າຫາກວ່າປະເທດໃດໜຶ່ງຂອງສະມາຊິກສະຫະປະຊາຊາດຫາກມີບັນຫາລະຫວ່າງຊາດ ສະຫະປະຊາຊາດກໍ່ມີໜ້າທີ່ໃນການເຂົ້າໄປໄກ່ເກ່ຍ ແກ້ໄຂບັນຫາໂດຍສັນຕິວິທີຕາມຄຳສະເໜີຂອງປະເທດນັ້ນໆ ຕົວຢ່າງ: ການແກ້ໄຂຄວາມຂັດແຍ່ງຢູ່ແຫຼມເກົາຫຼີ, ບັນຫາອິດສາລະເອວ, ບັນຫາອ່າວເປີເຊຍ, ບັນຫາຢູ່ໂຊມາລີ, ແລະ ອື່ນໆ




ນອກນັ້ນຍັງມີການຫຼຸດຜ່ອນອາວຸດແລະກຳຈັດອາວຸດທີ່ທັນສະໄໝ ເຊັ່ນ: ອາວຸດນິວເຄຍ, ຫ້າມທົດລອງອາວຸດທີ່ມີອານຸພາກທຳລາຍລ້າງສູງ ອື່ນໆ ເຮັດໃຫ້ໂລກມີສະຖຽນລະພາບ ແລະ ມີຄວາມປອດໄພຈາກອາວຸດນິວເຄຍ

**ຂ.ການຫຼຸດຜ່ອນອາວຸດ**

ເພື່ອຄວາມໝັ້ນຄົງໃນສັງຄົມໂລກ ສະຫະປະຊາຊາດໄດ້ຖືເອົາບັນຫາການຫຼຸດຜ່ອນ ແລະ ການຄວບຄຸມການໃຊ້ອາວຸດ ໂດຍສະເພາະອາວຸດນິວເຄຍຂອງສອງມະຫາອຳນາດເປັນສິ່ງສຳຄັນ. ຜ່ານມາສະຫະປະຊາຊາດໄດ້ຈັດທຳສົນທິສັນຍາກ່ຽວກັບການຫຼຸດຜ່ອນອາວຸດ ແລະ ຄວາມຄຸມອາວຸດຂຶ້ນ ຫຼາຍສະບັບ ເຊັ່ນ: ສົນທິສັນຍາຈຳກັດອາວຸດນອກພິພົບ, ສົນທິສັນຍາຫ້າມທົດລອງອາວຸດນິວເຄຍ, ສົນທິສັນຍາຫ້ອງຄອບຄອງອາວຸດນິວເຄຍໃນອາເມຣິກາລາຕິນ ແລະ ອື່ນໆ.

**ຄ. ການແກ້ໄຂບັນຫາເສດຖະກິດ-ສັງຄົມ.**

ອົງການສະຫະປະຊາຊາດ ນັບແຕ່ມື້ສ້າງຕັ້ງຂຶ້ນມາ ໄດ້ປະຕິບັດໜ້າທີ່ຂອງຕົນເອງເພື່ອສົ່ງເສີມປລພ ສະໜັບສະໜູນ ໃຫ້ການຊ່ວຍເຫຼືອບັນຫາປະເທດດ້ອຍພັດທະນາ  ແລະ ກຳລັງພັດທະນາທັງດ້ານການເງິນທຶນ ແລະ ບຸດຄະລາກອນເພື່ອພັດທະນາຕົນເອງໃຫ້ມີຄວາມກ້າວໜ້າທາງດ້ານເສດຖະກິດ, ເທັກໂນໂລຍີ ແລະ ຄຸນນະພາບປະຊາກອນ. ການແກ້ໄຂບັນຫາເສດຖະກິດ-ສັງຄົມຂອງສະຫະປະຊາຊາດ ສະແດງອອກໃນການໃຫ້ຄວາມຊ່ວຍເຫຼືອປະເທດທີ່ກຳລັງພັດທະນາໃນຮູບການຕ່າງໆໂດຍຜ່ານອົງປະກອບ ຫຼື ທະບວງການຊຳນານພິເສດ ເຊັ່ນ: ທະນາຄານໂລກ,ສຳນັກງານຂ້າຫຼວງໃຫຍ່ສຳລັບຜູ້ລີ້ໄພແຫ່ງສະຫະປະຊາດ, ອົງການການຄ້າໂລກ. ອົງການອາຫານໂລກ ແລະ ການກະເສດ ແລະ ອື່ນໆ

**6.3 ການແກ້ໄຂບັນຫາໃນປະເທດຕ່າງໆ**

**ກ. ບົດບາດຂອງສະຫະປະຊາຊາດໃນການສ້າງສັນຕິພາບໂລກ**

ອົງການສະຫະປະຊາຊາດໄດ້ກ້າວເຂົ້າມີບົດບາດໃນການແກ້ໄຂບັຫາຂໍ້ຜິດພາດ ແລະ ຂໍ້ຂັດແຍ່ງລະຫວ່າງປະເທດດ້ວຍຮູບແບບທາງກົງ ແລະ ທາງອ້ອມ, ມີການຮ່ວມມືທາງດ້ານເສດຖະກິດ ແລະ ສັງຄົມ, ມີການສົ່ງເສີມສິດທິມະນຸດເປັນຕົ້ນແມ່ນການແກ້ໄຂຄວາມຂັດແຍ່ງຢູ່ແຫຼມເກົາຫຼີ, ບັນຫາອິດສະລະເອວ, ບັນຫາອ່າວເປີເຊຍ, ຢູ່ໂຊມາເລຍ ແລະ ອື່ນໆ. ການຫຼຸດຜ່ອນ ແລະ ຈຳກັດອາວຸດທີ່ທັນສະໄໝເປັນຕົ້ນແມ່ນອາວຸດນິວເຄຼຍ, ອາວຸດນອກພິພົບ, ຫ້າມການທົດລອງອາວຸດນິວເຄຼຍ ແລະ ອື່ນໆ ເຮັດໃຫ້ໂລກມີສະຖຽນລະພາບ ແລະ ປອດໄພຈາກສົງຄາມນິວເຄຼຍ

**ຂ. ການແກ້ໄຂຂໍ້ຂັດແຍ່ງ**

ນັບແຕ່ສ້າງຕັ້ງ ອົງການສະຫະປະຊາຊາດໄດ້ເຮັດໜ້າທີ່ຂອງຕົນໃນການດຳເນີນການເຈລະຈາການແກ້ໄຂ ເຊິ່ງໃນບາງຄັ້ງ ກໍ່ໃຊ້ກຳລັງເຂົ້າໄປສະໜັບສະໜູນການແກ້ໄຂບັນຫາໃນກໍລະນີຜິດພາດ ຫຼື ຄວາມຂັດແຍ່ງທາງດ້ານເຊື້ອຊາດ, ລັດທິທາງດ້ານການເມືອງ ແລະ ບັນກາຊາຍແດນຂອງລັດທີໃຫ້ລຸລ່ວງໄປໃນຫຼາຍກໍລະນີ ເຊັ່ນ ບັນຫາສົງຄາມໃນແຫຼມເກົາຫຼີ, ບັນຫາສົມຄາມລະຫວ່າງອາຣັບໃຫ້ອິດສະລາແອນທີ່ເກີດຂຶ້ນໃນຫຼາຍຄັ້ງ, ບັນຫາຄວາມຂັດແຍ່ງໃນໂຊມາລີ ແລະ ອື່ນໆ.

**ຄ. ການຫຼຸດຜ່ອນອາວຸດ**

ເພື່ອຄວາມໝັ້ນຄົງໃນສັງຄົມໂລກ ສະຫະປະຊາຊາດໄດ້ຖືເອົາບັນຫາຫຼຸດຜ່ອນ ແລະ ຄວບຄຸມການໃຊ້ອາວຸດ ໂດຍສະເພາະອາວຸດນິວເຄຍຂອງສອງມະຫາອຳນາດເປັນສິ່ງສຳຄັນ. ຜ່ານມາສະຫະປະຊາຊາດໄດ້ຈັດທຳສົນທິສັນຍາກ່ຽວກັບການຫຼຸດຜ່ອນ ແລະ ຄວບຄຸມອາວຸດຂຶ້ນ ຫຼາຍສະບັບ ເຊັ່ນ: ສົນທິສັນຍາຈຳກັດອາວຸດນອກພິພົບ, ສົນທິສັນຍາຫ້າມທົດລອງອາວຸດນິວເຄຍ, ສົນທິສັນຍາ ຫ້າມຄອບຄອງອາວຸດນິວເຄຍໃນອາເມຣິກາລາຕິນ ແລະ ອື່ນໆ

**ງ. ການແກ້ໄຂບັນຫາເສດຖະກິດ- ສັງຄົມ.**

ອົງການສະຫະປະຊາຊາດ ນັບແຕ່ມື້ສ້າງຕັ້ງຂຶ້ນມາ ໄດ້ປະຕິບັດໜ້າທີ່ຕົນເອງເພື່ອສົ່ງເສີມ ແລະ ສະໜັບສະໜູນໃຫ້ການຊ່ວຍເຫຼືອ ບັນດາປະເທດດ້ອຍພັດທະນາ ແລະ ກຳລັງພັດທະນາ ທັງດ້ານເງິນທຶນ ແລະ ບຸກຄະລາກອນເພື່ອພັດທະນາຕົນເອງໃຫ້ມີຄວາມກ້າງໜ້າທາງດ້ານເສດຖະກິດ, ເທັກໂນໂລຍີ ແລະ ຄຸນນະພາບຂອງປະຊາກອນ ການແກ້ໄຂບັນຫາເສດຖະກິດ-ສັງຄົມຂອງສະຫະປະຊາຊາດ ສະແດງອອກໃນການໃຫ້ຄວາມຊ່ວຍເຫຼືອປະເທດທີ່ກຳລັງປະເທດໃນຮູບແບບຕ່າງໆໂດຍຜ່ານອົງກອນ ຫຼື ທະບວງການຊຳນານພິເສດ ເຊັ່ນ: ທະນາຄານໂລກ, ສຳນັກງານຂ້າຫຼວງໃຫຍ່ສຳລັບຜູ້ລີ້ໄພແຫ່ງສະຫະປະຊາຊາດ, ອົງການການຄ້າໂລກ, ອົງການອາຫານໂລກ ແລະ ເສດຖະກິດ ແລະ ອື່ນ.

**ຈ. ການສົ່ງເສີມການພັດທະນາ**

ອົງການສະຫະປະຊາຊາດໄດ້ມຸ່ງໝັ້ນໃນການພັດທະນາຊັບພະຍາກອນຕ່າງໆ ເພື່ອປັບລະດັບຄວາມເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ຕະຫຼອດຈົນສົ່ງເສີມແຮງງານທີ່ມີສີມື ແລະ ເພີ່ມພູນຊັບພະຍາກອນໃນທົ່ວໂລກ ເຊິ່ງໄດ້ດຳເນີນໄປຕາມເປົ້າໝາຍແຫ່ງການພັດທະນາແຫ່ງສະຫັດສະວັດ ຕັ້ງແຕ່ປີ 2000 ເປັນຕົ້ນມາ ງົບປະມານລາຍຈ່າຍປະຈຳປີຂອງສະຫະປະຊາຊາດເພື່ອການພັດທະນາ ບໍ່ລວມກັບສະຖາບັນການເງິນລະຫວ່າງປະເທດສູງເຖິງ 1 ໝື່ນລ້ານໂດລາສະຫະລັດ ຕົວຢ່າງໆ ໂຄງການພັດທະນາແຫ່ງສະຫະປະຊາຊາດ ຫຼື UNDP ມີພະນັກງານປະຈຳຢູ່ແຕ່ລະປະເທດຕ່າງໆ 166 ປະເທດ ທີ່ມີຄວາມພະຍາຍາມຈັດບັນຫາຄວາມທຸກຍາກ, ການສົ່ງເສີມວຽກງານດ້ານການຄ້າ, ການລົງທຶນ ແລະ ໃຫ້ຄວາມຊ່ວຍເຫຼືອດ້ານຕ່າງໆ

**ສ. ການສົ່ງເສີມປະຊາທິປະໄຕ**

ອົງການສະຫະປະຊາຊາດໄດ້ໃຫ້ຄວາມຊ່ວຍເຫຼືອໂດຍການໃຫ້ຄວາມຊ່ວຍເຫຼືອສະຖາບັນ ແລະ ກິດຈະກຳຕ່າງໆ ໃນດ້ານປະຊາທິປະໄຕທົ່ວໂລກໃຫ້ມີຄວາມເຂັ້ມແຂງເຮັດໃຫ້ປະຊາຊົນຫຼາຍປະເທດບໍ່ວ່າຈະເປັນ ກຳປູເຈຍ, ນາມິເບຍ, ເອສຊາວາດໍ, ອິຊິເລຍ: ອາຟຣິກາໃຕ້... ປະເທດເຫຼົ່ານີ້ສາມາດມີສ່ວນຮ່ວມໃນການເລືອກຕັ້ງທົ່ວໄປຢ່າງອິດສະຫຼະ ແລະ ຍຸດຕິທຳ ສະຫະປະຊາຊາດໄດ້ໃຫ້ຄຳແນະນຳຊ່ວຍເຫຼືອກ່ຽວກັບການເລືອກຕັ້ງ ຕະຫຼອດຮອດການນັບຄະແນນສຽງຂອງການເລືອກຕັ້ງໃນປະເທດຕ່າງໆ ຫຼາຍກວ່າ 90 ປະເທດ  ແລະ ຫຼາຍຄັ້ງທີ່ເກີດຂຶ້ນໃນຊ່ວງຫົວລ່ຽວຫົວຕໍ່ໃນໄລຍະປະຫວັດສາດປະເທດນັ້ນໆ ເຊັ່ນ: ໃນປະເທດອາຟຣິກາ, ອາຮ່ານ ແລະ ບຸຣຸນດີ.

**ຊ. ສົ່ງເສີມສິດທິມະນຸດ**

ນັບແຕ່ມີການຈັດກອງປະຊຸມສະມັດຊາໃຫຍ່ ໄດ້ມີມະຕິຮັບຮອງດ້ວຍສິດທິມະນຸດ ໃນປີ ຄສ 1948 ອົງການສະຫະປະຊາຊາດໄດ້ຮັບການຊ່ວຍເຫຼືອໃນການອອກຂໍ້ຕົກລົງຫຼາຍສະບັບ ເປັນຂໍ້ຕົກລົງວ່າດ້ວຍສິດທິທາງດ້ານການເມືອ, ສັງຄົມ, ເສດຖະກິດ ແລະ ວັດທະນະທຳ ຄະນະກຳມະການສິດທິມະນຸດ ໄດ້ສຶກສາຄົ້ນຄວ້າຈາກຄຳຮຽກຮ້ອງຈາກບຸກຄົນໃດບຸກຄົນໜຶ່ງ ແລະ ການກະຕຸ້ນສັງຄົມໂລກໃຫ້ມີຄວາມສົນໃຈໃນກໍລະນີຕ່າງໆໆ ທີ່ກ່ຽວຂ້ອງກັບການທາລຸນ, ການທໍລະມານ, ການສູນຫາຍ ແລະ ການກັກຂັງໂດຍພາລະການ ຕະຫຼອດຮອດການສ້າງແຮງກົດດັນຕາການນາປະເທດຕໍ່ລັດຖະບານນັ້ນໆ ເພື່ອໃຫ້ມີການປັບປຸງສະຖານະພາບດ້ານສິດທິມະນຸດຂອງຄົນໃນປະເທດນັ້ນ.

**ຍ. ບຳລຸງຮັກສາສັນຕິພາບ ແລະ ຄວາມໝັ້ນຄົງ**

ໂດຍການສົ່ງກອງກຳລັງຮັກສາສັນຕິພາບ ແລະ ສັງເກດການ ລວມທັງໝົດ 50 ໜ່ວຍ ໄປຍັງຈຸດທີ່ໄດ້ເດືອນຮ້ອນໃນທົ່ວໂລກ ໃນປີ ຄ.ສ 2005 ສະຫະປະຊາຊາດ ສາມາດນຳຄວາມສະງົບກັບຄືນມາ ພຍາຍາມທີ່ຈະເຮັດໃຫ້ເກີດຂັ້ນຕອນການຕໍ່ລອງ, ເຈລະຈາ  ເຊິ່ງຊ່ວຍໃຫ້ຫຼາຍລ້ານຊີວິດຫຼຸດພົ້ນອອກຈາກສົງຄາມ ປະຈຸບັນ ມີກອງກຳລັງຮັກສາສັນຕິພາບປະຕິບັດຢູ່ 16 ແຫ່ງທົ່ວໂລກ.

**ດ. ການສ້າງສັນຕິພາບ**

ຕັ້ງແຕ່ປີ 1945 ເປັນຕົ້ນມາ ສະຫະປະຊາຊາດ ໄດ້ເຂົ້າການຊ່ວຍເຫຼືອໃນດານເຈລະຈາຕໍ່ລອງດ້ານສັນຕິພາບ 170 ຄັ້ງ ເຊິ່ງຊ່ວຍຢຸດຕິຂໍ້ຂັດແຍ່ງຕ່າງໆ ໃນພູມິພາກ ເຊັ່ນ: ການເຈລະຈາຢຸດຕິສົງຄາມອີຣັກ-ອີຣານ  ການຊ່ວຍເຫຼືອດຳເນີນງານ ໃນການຖອນທະຫານໂຊວຽດອອກຈາກອັບການິດສະຖານ ແລະ ຢຸດຕິສົງຄາມກາງເມືອງໃນເອວາດໍ ແລະ ກົວເຕມາລາ ສະຫະປະຊາຊາດຍັງໄດ້ດຳເນີນການທາງດ້ານການທູດແບບທຳມະດາ ເພື່ອຢຸດຕິສົງຄາມຕ່າງໆ ທີ່ມີແນວໂນ້ມງ່າທີ່ຈະເກີດຂຶ້ນ.

ປ້ອງກັນການແຜ່ຂະຫຍາຍຂອງອາວຸດນິວເຄຣຍ

ສົ່ງເສີມການການິດເຈດຈານົງຕົງເອງ ແລະ ເອກລາດ

ດຳເນີນຄະດີກັບອາດສະຍາກາຂ້າມຊາດ

ຢຸດຕິການແບ່ງແຍກສີຜິວໃນອາຟຣິກາໃຕ້

ເພີ່ມຄວາມເຂັ້ມແຂງໃຫ້ກັບກົດໝາຍລະຫວ່າງປະເທດ

ຈັດຫາຄວາມຊ່ວຍເຫຼືອທາງດ້ານດ້ານມະນຸດະທຳໃຫ້ແກ່ຜູ້ອາໄສ

ການແກ້ໄຂບັນຫາຄວາມຍາກຈົນໃນຊົນນະບົດປະເທດກຳລັງພັດທະນາ

ຊ່ວຍເຫຼືອຜູ້ລີ້ໄພຊາວປາເຣສໄຕ

ການມຸ້ງເນັ້ນທີ່ການພັດທະນາທະວີບອາຟຣິກາ

ການສົ່ງເສີມເສີມຄຸນນະພາບຊີວິດແມ່ຍິງ
ການຈັດຫານໍ້າດື່ມທີ່ສະອາດ
ການຈັດໂລກໂປລີໂອໃຫ້ໝົດໄປ
ການດໍາເນີນງານດ້ານໂຣກເອດ
ການຈັດໂລກໄຂ້ທໍລະພິດ
ການຕໍ່ສູ້ກັບເຊື້ອໂລກທີ່ເກີດຈາກທໍາມະຊາດ
ການຢຸດຕິການແຜ່ລະບາດໂລກລະບາດ
ການກົດດັນໃຫ້ມີການສ້າງພູມຄຸ້ມກັນທົ່ວໂລກ.
ການລົດການເສຍຊີວິດໃນໄວເດັກ
ການວາງຮາກຖານສໍາລັບການເຮັດທຸລະກິດ
ການສະໜັບສະໜູນອຸດສາຫະກໍາໃນປະເທດກໍາລັງພັດທະນາ
ການຊ່ວຍເຫຼືອເຫຍື່ອຜູ້ປະສົບໄພ
ການລົດຜົນກະທົບຕາກໄພພິບັດຈາກທໍາມະຊາດ
ການບັນເທົາທຸກຈາກໄພພິບັດສືນາມິ
ປົກປ້ອງຊັ້ນບັນຍາກາດ
ມຸ້ງໃສ່ເລື່ອງການແກ້ໄຂບັນຫາການປ່ຽນແປງສະພາບພູມີອາກາດ
ການເກັບກູ້ລະເບີດ
ການຈັດຫາອາຫານໃຫ້ແກ່ຜູ້ອຶດຫິວ
ການຕໍ່ສູ້ກັບຄວາມອຶດຫິວ
ການປົກປ້ອງກັນການປະມົງ
ຫ້າມຜະລິດສານເຄມີ
ການຄຸ້ມຄອງຂອງສຸຂະພາບຂອງຜູ້ບໍລິໂພກ
ການຕໍ່ສູ້ກັບການກໍ່ການຮ້າຍ
ການສົ່ງເສີມການວາງແຜນຄອບຄົວ ແລະ ສຸຂະພາບອານາໄມຂອງແມ່ຍິງ
ການຊ່ວຍເຫຼືອກ່ຽວກັບການຕັດສິນຄະດີຄວາມໃນຂໍ້ຂັດແຍ່ງລະຫວ່າງປະເທດ
ປັບປຸງຄວາມສໍາພັນທາງການຄ້າໂລກ
ສະໜັບສະໜູນປຸງໂຄງສ້າງທາງດ້ານເສດຖະກິດ
ສົ່ງເສີມຄວາມຍືນຍົງ ແລະ ການຈັດການມະຫາສະໝຸດທີ່ດີ
ພັດທະນາການເດີນທາງທາງອາກາດ ແລະ ທະເລ
ການແກ້ໄຂບັນຫາຢາເສບຕິດ
ການຕໍ່ສູ້ອາສາຍາກໍາຂ້າມຊາດ
ສົ່ງເສີມວຽກງານທີ່ມີຄຸນຄ່າ
ການປັບປຸງການຮຽນຮູ້ໜັງສື ແລະ ການສຶກສາໃນປະເທດທີ່ກໍາລັງພັດທະນາ
ການສ້າງພັນທະບັດເພື່ອເດັກໃນທົ່ວໂລກ

ການອານຸລັກ ແລະ ບູລະນາສະຖານທີ່ສຳຄັນທາງດ້ານປະຫວັດສາດ, ວັດທະນາທຳ, ສະຖາປັດຕະຍາກຳລວມທັງສະຖານທີ່ສຳຄັນທາງທຳມະຊາດ

ການອຳນວຍຄວາມອະດວກໃນການປ່ຽນແປງທາງດ້ານຄວາມຮູ້ ແລະ ວັນທະນາທຳ

ການຄຸ້ມຄອງຊັບສິນທາງປັນຍາ

ການສົ່ງເສີມເສລີພາບຂອງສື່ມວນຊົນ ແລະ ອິດສາລະພາບໃນການສະແດງຄວາມຄິດເຫັນ

ການປ່ຽນແຫຼ່ງເສື່ອໂຊມໃຫ້ເໝາະສົມກັບຄວາມເປັນຢູ່ຂອງມະນຸດ

ປັງປຸງບໍລິການໄປຊະນີທົ່ວໂລກ

ການແນະນຳເທັກນິກໃນການປັບປຸງການກະສິກຳ ແລະ ການລຶດຄ່າໃຊ້ຈ່າຍ

ການສົ່ງເສີມສິດທິຂອງຄົນພິການ

ການພັດທະນາລະບົບໂທລະມະນາຄົມລະຫວ່າງປະເທດ

ການປັບປຸງສະພາບຊີວິດຂອງພື້ນເມືອງ

## 7. ສະພາບການຂອງໂລກໃນຍຸກປະຈຸບັນ

ບັນຫາທ້າທາຍຂອງໂລກໃນຍຸກປະຈຸບັນພາຍຫຼັງການພັງທະລາຍຂອງສະຫະພາບໂຊວຽດ ເຮັດໃຫ້ການພົວພັນຂອງໂລກມີການປ່ຽນແປງໄປໃນທາງທີ່ດີຂຶ້ນ ໂດຍສະເພາະການປະເຊີນໜ້າຂອງສອງຂົ້ວລະບອບການເມືອງເຮັດໃຫ້ປະຊາຊາດຕ່າງໆມີການເປີດກວ້າງການຮ່ວມມືເຊິ່ງກັນ ແລະ ກັນຫຼາຍຂຶ້ນບົນພື້ນຖານການຂະຫຍາຍຕົວຂອງເຕັກນິກວິທະຍາສາດທີ່ທັນສະໄໝ. ແຕ່ເຖິງຢ່າງໃດກໍຕາມຄວາມຂັດແຍ່ງກໍຍັງຄົງມີຢູ່ແຕ່ສະແດງອອກໃນຮູບການທີ່ບໍ່ຮຸນແຮງດັ່ງໃນເມື່ອກ່ອນສ່ວນຫຼາຍແມ່ນຮູບການຂະຫຍາຍເສດຖະກິດ ແລະ ການເມືອງເປັນຫຼັກ. ບັນດາປະເທດໂລກທີສາມໄດ້ມີບົດບາດໃນເວທີໂລກຫຼາຍຂຶ້ນ.

ໃນປັດຈຸບັນໂລກກຳລັງປະເຊີນກັບບັນຫາຄວາມທ້າທາຍທີ່ຫຼາກຫຼາຍ, ເປັນຕົ້ນບັນຫາອາວຸດນິວເຄຼຍ, ວິກິດການເສດຖະກິດ, ການຂາດແຄນວັດຖຸດິບ, ໄພພິບັດທາງທຳມະຊາດ ແລະ ບັນຫາການກໍ່ການຮ້າຍຕ່າງໆທີ່ເກີດຂຶ້ນ, ບັນຫາການລະເມີດສິດທິມະນຸດ, ບັນຫາຄວາມຂັດແຍ່ງລະຫວ່າງໂລກອາຫຼັບກັບໂລກຕາເວັນຕົກເຫຼົ່ານີ້ເປັນຕົ້ນ.

ສະຫຼຸບລວມແລ້ວການພົວພັນສາກົນພາຍຫຼັງສົງຄາມໂລກຄັ້ງທີII ປະຈຸບັນຄວາມໝາຍຂອງການພົວພັນສາກົນມີການປ່ຽນແປງທາງດ້ານທາດແທ້, ຄວາມສຳນຶກກ່ຽວກັບ ການພົວພັນສາກົນນັບມື້ຍິ່ງອຸດົມສົມບູນ, ຄົບຖ້ວນກ່ວາເກົ່າເຊິ່ງສະແດງອອກໃນຕົວຈິງດັ່ງນີ້:

### ກ. ເປົ້າໝາຍຂອງການພົວພັນສາກົນ

ເປົ້າໝາຍເຂົ້າຮ່ວມການພົວພັນສາກົນ ນັບມື້ນັບຫຼາຍກວ່າເກົ່າ, ວົງຄະນະຍາດສາກົນໄດ້ຮັບການເປີດກວ້າງ ໄດ້ມີຫຼາຍກວ່າ 226 ປະເທດ ແລະ ອານາເຂດ; ໃນນັ້ນ 193 ປະເທດໄດ້ເຂົ້າຮ່ວມອົງການສະຫະປະຊາຊາດ, ການພົວພັນສາກົນບໍ່ແມ່ນແຕ່ການພົວພັນຂອງປະເທດໃຫຍ່ຈຳນວນໜຶ່ງເທົ່ານັ້ນ, ລະບົບການພົວພັນສາກົນ ທີ່ທະວີບເອີຣົບເປັນໃຈກາງບໍ່ມີອີກແລ້ວ; ບັນດາປະຊາຊາດຫຼຸດພົ້ນອອກຈາກການກົດຂີ່ຂອລັດທິລ່າເມືອງຂຶ້ນ, ເປັນຄັ້ງທຳອິດທີ່ກ້າວສູ່ເວທີການເມືອງສາກົນ, ມີຖານະເທົ່າທຽມກັບປະເທດໃຫຍ່.ການປ່ຽນແປງຂອງການພົວພັນສາກົນໄດ້ລື່ນກາຍຍຸກສະໄໝທີ່ເຄີຍມີມາໃນປະຫວັດສາດ.

### ຂ. ເນື້ອໃນຂອງການພົວພັນສາກົນ.

ເນື້ອໃນຂອງການພົວພັນສາກົນ ແມ່ນອຸດົມສົມບູນ, ມີຫຼາຍຮູບຫຼາຍສີກວ່າເກົ່າ, ໄດ້ເກີດມີລະບົບຕາໜ່າງກວມໂລກ. ບັນດາພາຫະນະເຕັກນິກ, ຄົມມະນາຄົມ, ຂ່າວສານໃນທົ່ວໂລກນັບມື້ຍິ່ງປ່ຽນແປງໃໝ່, ກຳລັງການຜະລິດຂອງ

ສັງຄົມໄດ້ບັນລຸເຖິງລະດັບທີ່ບໍ່ເຄີຍມີມາໃນປະຫວັດສາດ, ບໍລິສັດຂ້າມຊາດ ແລະ ການຫັນເປັນເອກະພາບ ຂອງພື້ນຖານເສດຖະກິດໄດ້ຊຸກຍູ້ທ່າອ່ຽງຫັນເປັນສາກົນທາງເສດຖະກິດ ແລະ ການເມືອງ ລະຫວ່າງບັນດາປະເທດ ນັບມື້ນັບເກີດມີວິງຄານະຍາດທີ່ມີການພົວພັນສະໜິດແໜ້ນນຳກັນ, ໄດ້ເກີດມີການພົວພັນ ລະຫວ່າງປະເທດທຶນນິຍົມ ແລະ ບັນດາປະເທດສັງຄົມນິຍົມ,ການພົວພັນລະຫວ່າງປະເທດທຶນນິຍົມດ້ວຍກັນ, ການພົວພັນລະຫວ່າງປະເທດທີ່ພັດທະນາແລ້ວ ແລະ ປະເທດທີ່ພວມພັດທະນາ, ການພົວພັນລະຫວ່າງປະເທດສັງຄົມນິຍົມ ແລະ ບັນດາປະເທດໂລກທີສາມ. ນອກນັ້ນ; ຍັງມີສາຍພົວພັນລະຫວ່າງບັນດາຊົນຊາດຊົນເຜົ່າ, ບັນດານິກາຍ, ບັນດາພັກການເມືອງ, ບັນດາກຸ່ມທະຫານ, ບັນດາອົງການຈັດຕັ້ງເສດຖະກິດ. ບັນດາສາຍພົວພັນດັ່ງກ່າວໄດ້ເກີດມີການພົວພັນການຕ່າງປະເທດແບບຫຼາຍຝ່າຍ, ການຕ່າງປະເທດແບບຮອບດ້ານ, ການຕ່າງປະເທດແບບມິດຕະພາບບ້ານໃກ້ເຮືອນຄຽງ, ການຕ່າງປະເທດແບບສັນຕິພາບ-ກາງ, ການຕ່າງປະເທດແບບກຸ່ມ, ການຕ່າງປະເທດແບບເສດຖະກິດ,ການຕ່າງປະເທດແບບປະຊາຊົນ, ການຕ່າງປະເທດແບບແຜ່ຫຍາຍອຳນາດ...

**ຄ.ຍຸກສະໄໝນິວເຄຼຍ**

ຍຸກສະໄໝນິວເຄຼຍ ເປັນຈຸດໃໝ່ອ່ຽມທີ່ຄອບງຳການພົວພັນສອນກົນປະຈຸບັນ. ການປ່ຽນແປງທາງດ້ານກຳລັງຂອງບັນດາປະເທດ ທີ່ມີບັນດາອາວຸດນິວເຄຼຍໄດ້ປ່ຽນແປງສາຍສຳພັນທະພາບໃນການປ່ຽນແປງກຳລັງຂອງການພົວພັນສາກົນ, ເຮັດໃຫ້ການຊັບຊ້ອນກຳລັງ. ໂຄງປະກອບສ້າງກຳລັງອຳນາດຢູ່ໃນໂລກມີການປ່ຽນ, ບັນດາອາວຸດນິວເຄຼຍໄດ້ປ່ຽນແປງທັດສະນະຂອງການພົວພັນສາກົນແບບເປັນມູນເຊື້ອ, ບັນຫາສັນຕິພາບ ແລະ ສົງຄາມເນື້ອໃນໃໝ່ ເຊິ່ງແມ່ນບັນຫາສຳຄັນຂອງມວນມະນຸດ ເຊິ່ງໄດ້ຈັດຢູ່ທີ່ຕັ້ງແຖວໜ້າຂອງການພົວພັນສາກົນ. ມວນມະນຸດໄດ້ຢືນຢູ່ຕໍ່ໜ້າໄພອັນຕະລາຍຮ້າຍແຮງຍ້ອນອາວຸດນິວເຄຼຍ. ການພົວພັນສາກົຍຮັບການຜູກຂາດ ແລະ ຄອບຄອງຂອງສັນຍາລັກພິເສດຍກສະໄໝນິວເຄຼຍ; ເງົາມືດຂອງວິເຄຼຍໄດ້ປົກຄຸມໄປທົ່ວທຸກບ່ອນ ຂອງພື້ນແຜ່ນດິນ ແລະ ທຸກໆຂອດຂອງການພົວພັນ.

**ງ. ການລົ້ມລະລາຍສະຫະພາບໂຊວຽດແລະ ບັດດາປະເທດສັງຄົມນິຍົມຢູ່ເອີຣົບຕາເວັນອອກ.**

ພາຍຫຼັງການລົ້ມລະລາຍສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມ ໂລກພວມຢູ່ໃນຂະບວນການສ້າງລະບຽບໂລກຄືນໃໝ່, ສະຫະລັດອາເມຣິກາ ເຖິງວ່າຍັງເຂັ້ມແຂງທາງດ້ານເສດຖະກິດ ແຕ່ບໍ່ສາມາດກົດໜ່ວງລະບຽບໂລກໄວ້ໄດ້ ບົດບາດຂອງບັນດາປະເທດໃຫຍ່, ບັນດາພາກພື້ນນັບມື້ນັບໄດ້ຮັບການຢືນຢັນ ແລະ ເກີດມີການເຕົ້າໂຮມກຳລັງໃໝ່ໃນການພົວພັນສາກົນ.

**ຈ. ການປະຕິວັດວິທະຍາສາດ ແລະ ເຕັກໂນໂລຢີ.**

ຂະບວນການປະຕິວັດວິທະຍາສາດ ແລະ ເທັກໂນໂລຢີທັນສະໄໝ ໄດ້ເຮັດໃຫ້ກຳລັງການຜະດລິດຂອງສັງຄົມມີບາດກ້າວກະໂດດຂັ້ນທາງດ້ານທາດແທ້ ແລະ ມວນມະນຸດຈາກພື້ນຖານຄວາມສີວິໄລທາງດ້ານອຸດສາຫະກຳ ກ້າວໄປສູ່ຄວາມສີວິໄລຂອງຂໍ້ມູນ- ຂ່າວສານ. ເຕັກໂນໂລຢີຂ່າວສານໄດ້ເຮັດໃຫ້ບັດົນດາປະຊາຊາດຢູ່ໃນໂລກຫຍັບມໍ່ເຂົ້າມາກວ່າເກົ່າ; ຂະບວນການປະຕິວັດວິທະຍາສາດ ແລະ ເຕັກໂນໂລຢີ ໄດ້ນຳເອົາຜົນສະທ້ອນຫຼາຍຢ່າງທີ່ມີລັກສະນະຕົ້ງໜ້າຫຼາຍຢ່າງຄື: ຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ ແລະ ການປ່ຽນແປງໃໝ່ໃນຫຼາຍຂົງເຂດສັງຄົມ. ແຕ່ດ້ານອື່ນ ກໍ່ນຳໄປສູ່ບັນຫາກວມໂລກ ເຊິ່ງວິງຄະນະຍາດສາກົນຕ້ອງເອົາໃຈໃສ່.

ການເມືອງໂລກໃນປະຈຸບັນການນຳໃຊ້ອຳນາດລະຫວ່າງລັດ ແລະ ບັນດາອົງການສາກົນທີ່ບໍ່ແມ່ນລັດໃນທົ່ວໂລກ, ລວມທັງການເຄື່ອນໄຫວກໍ່ການຮ້າຍ, ອາດຍະຍາດກຳຂ້າມຊາ ອົງການຈັດຕັ້ງສາກົນ ແລະ ລັດຕ່າງໆ ໂດຍການ

ນຳໃຊ້ອຳນາດນັ້ນຈະຕ້ອງໃຊ້ໃນຂອບເຂດທົ່ວໂລກ, ນັ້ນກໍຄື ຜົນກະທົບຕໍ່ໂລກ ເຊັ່ນກໍລະນີທີ່ສະຫະລັດ ໃຊ້ອຳນາດຕ້ານການກໍ່ການຮ້າຍສາກົນ. ມັນເປັນການຄັດຄ້ານທົ່ວໂລກ. ຖືວ່າເປັນການເມືອງຂອງໂລກ ຫຼືການເຄື່ອນໄຫວກໍ່ການຮ້າຍ Bin ຂອງ Al-Qaedar Laden ມີການກໍ່ການຮ້າຍທົ່ວໂລກ ຖືວ່າເປັນການນຳໃຊ້ອຳນາດໂດຍການເຄື່ອນໄຫວກໍ່ການຮ້າຍໃນທົ່ວໂລກ, ນີ້ແມ່ນ "ການເມືອງທົ່ວໂລກ".

ການຂັດແຍ້ງລະຫວ່າງນັກສະແດງສາກົນໃນຂອບເຂດທົ່ວໂລກ, ເຊັ່ນ: ການກໍ່ການຮ້າຍທົ່ວໂລກ al-Qedar ຕໍ່ຕ້ານຈັກກະພັດ. (ອາເມລິກາ - ສະຫະພາບເອີຣົບ)

ສະພາບການເມືອງທົ່ວໂລກແມ່ນປະກົດການສາກົນ ຫຼື ເຫດການສາກົນທີ່ເກີດຂຶ້ນໃນເວທີໂລກ ມັນສະແດງໃຫ້ເຫັນເຖິງການໃຊ້ອຳນາດໃນການຮ່ວມມື ແລະ ຄວາມຂັດແຍ້ງລະຫວ່າງປະເທດຕ່າງໆ ເຫດການສາກົນທີ່ເກີດຂຶ້ນອາດເປັນເຫດການທາງດ້ານການເມືອງ, ເສດຖະກິດ, ການທະຫານ, ສັງຄົມ, ວັດທະນະທຳ ແລະ ອື່ນໆ.

**ສິ່ງທ້າທາຍຂອງ EU**

ເປັນປີທີ່ບັນດາປະເທດ EU ປະສົບກັບຄວາມເຄັ່ງຕຶງທັງພາຍໃນ ແລະ ຕ່າງປະເທດບໍ່ວ່າຈະເປັນຜົນກະທົບທາງດ້ານເສດຖະກິດ-ສັງຄົມຈາກການລະບາດຂອງພະຍາດໂຄວິດ-19 ທີ່ບໍ່ມີວັນສິ້ນສຸດ. ເຊິ່ງປັດຈຸບັນເປັນປະເທດໃນເອີຣົບ ບໍ່ວ່າຈະເປັນປະເທດຝຣັ່ງ, ເຢຍລະມັນ ແຕ່ລະຄົນມີຜູ້ຕິດເຊື້ອຫຼາຍຮ້ອຍພັນຄົນຕໍ່ມື້ ຍັງມີສິ່ງທ້າທາຍດ້ານຄົນເຂົ້າເມືອງ ແລະ ການເຂົ້າເມືອງ ບໍ່ວ່າຈະເປັນຊາວອົບພະຍົບຈາກເບລາຣູດ ຫຼື ຕາເວັນອອກກາງ ເຖິງຄວາມເຄັ່ງຕຶງຂອງລັດເຊຍ ແລະ ຢູແກຼນ ແລະ ບັນຫາສິ່ງແວດລ້ອມ ເຊັ່ນ: ເປົ້າໝາຍການປ່ອຍອາຍພິດສູນສຸດທິ ຫຼັງຈາກໄດ້ຈັດກອງປະຊຸມ COP26 ປີກາຍນີ້ເຊັ່ນດຽວກັນ

**ເຢຍລະມັນ Post Merkel ແລະການເລືອກຕັ້ງທີ່ສຳຄັນໃນປະເທດຝຣັ່ງ ແລະຣັງກາຣີ.**

ເມື່ອເວົ້າເຖິງບັນດາຜູ້ນຳຂອງສະຫະພາບເອີຣົບທີ່ໂດດເດັ່ນ ຫຼືຜູ້ນຳຂອງເຢຍລະມັນ, ທ່ານນາງ Angela Merkel ຕ້ອງໄດ້ລະນຶກເຖິງ, ບ່ອນທີ່ນາງໄດ້ເປັນຜູ້ນຳຂອງເຢຍລະມັນມາເປັນເວລາ 16 ປີແລ້ວ. ນາງໄດ້ລາອອກຈາກຕຳແຫນ່ງ ແລະອອກຈາກການເມືອງ ນີ້ແມ່ນການທ້າທາຍອັນໃຫຍ່ຫຼວງຂອງປະເທດພາຍໃຕ້ການເປັນນາຍົກລັດຖະມົນຕີຄົນໃໝ່ Olaf Scholz ແລະ ລັດຖະບານປະສົມທີ່ນຳພາໂດຍພັກສັງຄົມນິຍົມ SPD.

ເປັນລັດຖະບານປະສົມ Scholz ຕ້ອງພະຍາຍາມໂຮມລັດຖະບານປະສົມທັງຈາກພັກສັງຄົມນິຍົມ, ພັກເສລີ ແລະ ພັກຂຽວ, ມີອຸດົມການທີ່ແຕກຕ່າງກັນເພື່ອແກ້ໄຂທັງການລະບາດຂອງໄວຣັດ ແລະ ສິ່ງແວດລ້ອມ ການປ່ຽນແປງດິນຟ້າອາກາດ ທັງໃນເວທີສາກົນ ເຢຍລະມັນ ຈະຕ້ອງໄດ້ຮັບເອົາໄມ້ຢືນຕົ້ນເພື່ອນຳພາ G7 ຫຼັງຈາກອັງກິດ Scholz ຈະເປັນເຈົ້າພາບຂອງຜູ້ນຳຂອງປະຊາທິປະໄຕຊັ້ນນຳຂອງໂລກ. ທີ່ຈະມີກອງປະຊຸມສຸດຍອດໃນເດືອນມິຖຸນາເຊັ່ນດຽວກັນ

ດ້ານການເມືອງ ນອກຈາກເຢຍລະມັນ, ປະເທດຝຣັ່ງ ຍັງມີການເລືອກຕັ້ງປະທານາທິບໍດີທີ່ກຳລັງຈະມາເຖິງພ້ອມກັບການເລືອກຕັ້ງຮອບທຳອິດໃນເດືອນເມສາ.ການເລືອກຕັ້ງນີ້ ມັນເປັນການເດີມພັນທີສອງສຳລັບ Immanuel Macron, ຜູ້ທີ່, ເຖິງແມ່ນວ່າ Macron ປະຈຸບັນຍັງນຳພາການເລືອກຕັ້ງ. ແຕ່ມີການທ້າທາຍຈາກຄູ່ແຂ່ງ Valerie Pecras ຂອງພັກອະນຸລັກ.

ໃນອະດີດ, Macron ໄດ້ຖືກເຫັນວ່າເປັນຜູ້ນຳຊັ້ນສູງ. ການເລືອກນະໂຍບາຍການຫຼຸດຜ່ອນພາສີສຳລັບຄົນຮັ່ງມີ ແລະສະເໜີເພີ່ມພາສີນ້ຳມັນ ຈົນກ່ວາຈະເຮັດໃຫ້ເກີດການປະທ້ວງຂອງພະນັກງານໃນປີ 2018, ມັນຕ້ອງປະຕິບັດຕາມວ່າໃນການເລືອກຕັ້ງຄັ້ງນີ້ ລາວຈະຕ້ານຊົນຊັ້ນກຳມະກອນແນວໃດ? ລວມທັງຝຣັ່ງເອງ ຍັງໄດ້ຮັບຕຳແໜ່ງປະທາ

ນາທິບໍດີສະຫະພາບເອີລົບ ນັບຕັ້ງແຕ່ວັນທີ 1 ມັງກອນທີ່ຜ່ານມາ. ດັ່ງນັ້ນ Macron ກາຍເປັນຜູ້ນຳທີ່ສຳຄັນຂອງ EU ຫຼັງຈາກ Merkel ໄດ້ບໍ? ນີ້ແມ່ນສິ່ງທ້າທາຍອື່ນ.

ການເລືອກຕັ້ງອີກປະການຫນຶ່ງທີ່ຈະສັງເກດເບິ່ງໃນເອີຣົບ ຈັດຂຶ້ນໃນຮັງກາຣີ ໃນລະຫວ່າງເດືອນເມສາຫາເດືອນພຶດສະພາ ເຊິ່ງຈະກຳນົດວ່າຮັງກາລີຈະກາຍເປັນຜູ້ມີອຳນາດຫຼາຍກວ່າເກົ່າຫຼືບໍ່. ຈາກການກັບຄືນມາຂອງທ່ານ Victor Orban, ນາຍົກລັດຖະມົນຕີຮັງກາລີທີ່ໄດ້ຮັບຕຳແໜ່ງມາເປັນເວລາ 12 ປີ, ທ່ານແມ່ນຜູ້ທີ່ຫັນຮັງກາຣີເປັນປະເທດ. ປະຊາທິປະໄຕທີ່ບໍ່ເຂົ້າຮ່ວມຂອງຕົນເອງ ເຊິ່ງທຳລາຍສິດເສລີດ້ານຂ່າວ. ທຳລາຍຄວາມເປັນເອກະລາດຂອງຂະບວນການຍຸຕິທຳ ແລະຫຼ້າສຸດ, ມັນຍັງປະກາດຫ້າມເນື້ອຫາທີ່ຖືວ່າສົ່ງເສີມການຮັກຮ່ວມເພດໃນປະເທດ.

ໃນເວລານີ້, ຄູ່ແຂ່ງຂອງ Orban ແຕກຕ່າງຈາກການເລືອກຕັ້ງທີ່ຜ່ານມາ ເນື່ອງຈາກວ່າ 6 ພັກຝ່າຍຄ້ານໄດ້ເຕົ້າໂຮມກັນເພື່ອຜູ້ສະໝັກຄົນດຽວ, ທ່ານ Peter Mark-Say, ເຈົ້າເມືອງນ້ອຍຂອງກາໂຕລິກ. ຊຶ່ງຈາກການສຳຫຼວດຫຼ້າສຸດ ທັງສອງຄົນມີຄະແນນຄ້າຍຄືກັນຫຼາຍ. ອາດສາມາດໂຄ່ນລົ້ມ Orban ເປັນເວລາດົນນານໃນການເລືອກຕັ້ງຮັງກາຣີ.

**ໂລກຈະປ່ຽນແປງແນວໃດ? ຫຼັງຈາກວິກິດການ COVID-19 ສິ້ນສຸດລົງ?**

**ທ່ານ ສຸພະລິດ ສຸວັນນະກອນ**

**ກົມເສດຖະກິດມະຫາພາກ**

ມັນເປັນທີ່ຮູ້ຈັກດີວ່າ ການແຜ່ລະບາດຂອງເຊື້ອໄວຣັສ COVID-19 ໄດ້ສ້າງຄວາມວຸ້ນວາຍຂຶ້ນໃນທົ່ວໂລກ ບໍ່ວ່າຈະເປັນທາງດ້ານເສດຖະກິດ, ສັງຄົມ, ການເມືອງ ລວມທັງວິຖີຊີວິດຂອງປະຊາຊົນ. ຜູ້ຂຽນໄດ້ອະທິບາຍແລ້ວກ່ຽວກັບຜົນກະທົບທາງເສດຖະກິດໂດຍກົງໃນບົດຄວາມ. "ໂຣກ Coronavirus: ຝັນຮ້າຍຂອງເສດຖະກິດໂລກບໍ?" ເນື່ອງຈາກສະຖານະການຢູ່ນອກປະເທດຈີນບໍ່ຮຸນແຮງແລະອັດຕາການຕິດເຊື້ອໄດ້ຊ້າລົງ, ແນວໃດກໍ່ຕາມ, ຂ້ອຍຍອມຮັບຢ່າງບໍ່ຢຸດຢັ້ງວ່າການແຜ່ລະບາດຂອງໄວຣັດນີ້ແມ່ນຮ້າຍແຮງ, ຢ່າງໄວວາແລະແຜ່ລາມໄປກວ່າແຕ່ກ່ອນ, ຄາດຄະເນຢ່າງແທ້ຈິງ. ດັ່ງນັ້ນ, ພວກເຮົາຈຶ່ງຂໍເປັນກຳລັງໃຈອີກເທື່ອໜຶ່ງໃຫ້ກັບພະນັກງານສາທາລະນະສຸກແຖວໜ້າ ແລະເຈົ້າໜ້າທີ່ພາກລັດແລະພາກເອກະຊົນໃນທົ່ວໂລກພະຍາຍາມຫຼຸດຜ່ອນຜົນກະທົບອັນຮ້າຍແຮງນີ້. ຜູ້ຂຽນສາມາດພຽງແຕ່ຫວັງວ່າຝັນຮ້າຍນີ້ຈະສິ້ນສຸດລົງດ້ວຍການຮ່ວມມືຂອງທຸກໆຄົນໃນຄວາມຫ່າງໄກທາງສັງຄົມ, ໂດຍສະເພາະແມ່ນການຢູ່ເຮືອນເພື່ອຢຸດການແຜ່ລະບາດແລະການຕິດເຊື້ອ. ແລະໄດ້ຮັບຜົນປະໂຫຍດຈາກມາດຕະການແກ້ໄຂຂອງລັດຖະບານຢ່າງຊັດເຈນໃນໄລຍະທີ່ມີຄວາມຫຍຸ້ງຍາກ. ເຊັ່ນດຽວກັນກັບຜົນສຳເລັດຂອງການປະດິດການປິ່ນປົວແລະວັກຊີນຕ້ານເຊື້ອໄວຣັສໄວເທົ່າທີ່ເປັນໄປໄດ້ແຕ່ຜູ້ອ່ານ, ຢ່າໝົດຫວັງເທື່ອ. ເພາະວ່າໃນທຸກວິກິດ, ຈະມີການດັບສູນສະເໝີ. ພະຍາດລະບາດນີ້ຄືກັນ. ຄຳຖາມທີ່ສຳຄັນຕໍ່ໄປແມ່ນ ເມື່ອວິກິດການນີ້ສິ້ນສຸດລົງ ໂລກນີ້ຈະປ່ຽນແປງແນວໃດ? ບາງທ່ານ ພິມມະ ເຊີນທ່ານຜູ້ອ່ານຈົ່ງເບິ່ງໄປຂ້າງໜ້າ ແລະ ຄິດໄປພ້ອມໆກັນໃນລັກສະນະຕໍ່ໄປນີ້.

**"ການສະທ້ອນໂລກາພິວັດ (deglobalization) ຈະເຂັ້ມຂຸ້ນຂຶ້ນ ແລະ ການປ່ຽນແປງລະບົບຕ່ອງໂສ້ການສະໜອງທົ່ວໂລກຢ່າງໄວວາ."**

1. ການຕ້ານໂລກາພິວັດ (deglobalization) ຈະເຂັ້ມຂຸ້ນຂຶ້ນ ແລະ ການປ່ຽນແປງລະບົບຕ່ອງໂສ້ການສະໜອງທົ່ວໂລກຢ່າງໄວວາ: ໃນສອງປີກ່ອນວິກິດການນີ້ ພວກເຮົາໄດ້ເຫັນຫລາຍປະເທດນຳເອົານະໂຍບາຍເອົາໃຈໃສ່ຕົນເອງ (ນະໂຍບາຍເບິ່ງພາຍໃນ) ຫຼື ການປົກປ້ອງການຄ້າ (Protectionism) ແມ່ນຈະແຈ້ງແລ້ວ ພິເສດ, ສົງຄາມການຄ້າທີ່ເກີດຂຶ້ນໂດຍປະທານາທິບໍດີອາເມລິກາ Donald Trump ໄດ້ຊຸກຍູ້ບັນດາວິສາຫະກິດອາເມລິກາຜະລິດພາຍໃນປະເທດເພີ່ມຂຶ້ນ ແລະ ສະກັດກັ້ນການຄ້າຕ່າງປະເທດ. ບັນຫານີ້ໄດ້ກັບຄືນມາຢ່າງຈະແຈ້ງຫຼາຍຂຶ້ນກັບວິກິດການ

COVID-19. ເຊິ່ງເສີມສ້າງຄວາມເຊື່ອຂອງຝ່າຍຂວາໄກແລະຜູ້ທີ່ບໍ່ສະໜັບສະໜູນໂລກາພິວັດທີ່ ມັນເປັນອັນຕະລາຍທີ່ຈະອີງໃສ່ລະບົບການຜະລິດສາກົນຫຼາຍເກີນໄປ. ນີ້ຈະເລັ່ງຂະບວນການຫັນປ່ຽນຂອງຕ່ອງໂສ້ການສະໜອງທົ່ວໂລກທີ່ມີຢູ່, ເວົ້າອີກຢ່າງໜຶ່ງ, ປະເທດຕ່າງໆຈະກາຍເປັນຫຼາຍຂຶ້ນກັບຕ່ອງໂສ້ການສະໜອງພາຍໃນຂອງຕົນເອງ ຄວາມຫຼາກຫຼາຍຂອງຄວາມສ່ຽງດ້ານການຜະລິດແລະການຂາຍໂດຍບໍ່ມີການອີງໃສ່ພຽງແຕ່ປະເທດດຽວ ເນື່ອງຈາກວ່າຜົນກະທົບແມ່ນເຫັນໄດ້ຊັດເຈນຈາກຂະບວນການຜະລິດຫຼືຕະຫຼາດການຂາຍໃນເວລາທີ່ມັນຕ້ອງຖືກປິດ ນີ້ແມ່ນຜົນມາຈາກມາດຕະການຕ່າງໆເຊັ່ນ: ການປິດລ້ອມເມືອງຫຼືປະເທດຕ່າງໆເພື່ອປ້ອງກັນການແຜ່ລະບາດຂອງໄວຣັດ. ນອກຈາກນັ້ນ, ລັດຖະບານອາດຈະປ່ຽນວິກິດການນີ້ເປັນ "ໂອກາດ" ທີ່ຈະຄິດຢ່າງລະມັດລະວັງກ່ຽວກັບນະໂຍບາຍເສດຖະກິດຂອງພວກເຂົາຈະກ້າວໄປໃນທິດທາງທີ່ຖືກຕ້ອງ. ມັນຈະພະຍາຍາມຫຼາກຫຼາຍຄວາມສ່ຽງທາງດ້ານເສດຖະກິດໂດຍການບໍ່ອີງໃສ່ລາຍໄດ້ຫຼາຍເກີນໄປ, ຕົວຢ່າງ, ບໍ່ພຽງແຕ່ອີງໃສ່ການສົ່ງອອກຫຼືການທ່ອງທ່ຽວເທົ່ານັ້ນ. ແຕ່ກໍ່ອີງໃສ່ການບໍລິໂພກ ແລະ ການລົງທຶນພາຍໃນປະເທດເປັນກົນໄກສໍາຄັນເຊັ່ນກັນ

**"ບັນຫາດ້ານໂຄງສ້າງ, ໂດຍສະເພາະດ້ານສາທາລະນະສຸກຈະໄດ້ຮັບການແກ້ໄຂຢ່າງເຂັ້ມງວດ ແລະ ສະເໝີພາບກວ່າ."**

2. ບັນຫາດ້ານໂຄງສ້າງ ໂດຍສະເພາະດ້ານສາທາລະນະສຸກ ຈະໄດ້ຮັບການແກ້ໄຂຢ່າງຮອບດ້ານແລະສະເໝີພາບກວ່າ: ວິກິດການ COVID-19 ນີ້ເຮັດໃຫ້ຄວາມກົດດັນຕໍ່ລັດຖະບານໃນຫຼາຍປະເທດໃຫ້ສຸມໃສ່ພື້ນຖານຂອງສຸຂະພາບສາທາລະນະແລະບໍ່ໃຫ້ກໍາລັງຕະຫຼາດເຮັດ trick ໄດ້. ໂດຍສະເພາະໃນສະຫະລັດ ວ່າລະບົບສາທາລະນະສຸກບໍ່ມີລະບົບປະກັນສຸຂະພາບທົ່ວໆໄປ ວິກິດການແນະນໍາວ່າບຸກຄົນມີການເຂົ້າເຖິງການດູແລສຸຂະພາບບໍ່ຄວນເປັນເລື່ອງສ່ວນບຸກຄົນອີກຕໍ່ໄປ. ເພາະວ່າຄົນໜຶ່ງເປັນຜູ້ນໍາເອົາພະຍາດທີ່ແທ້ຈິງແລ້ວ. ແຕ່ບໍ່ສາມາດໄປບໍລິການກວດໄວຣັດໄດ້ເພາະບໍ່ສາມາດຈ່າຍຄ່າສອບເສັງໄດ້ ເຖິງວ່າຢາກໄປ ແລະຍັງດໍາລົງຊີວິດຄືເກົ່າ ນີ້ສາມາດແຜ່ລະບາດໄປສູ່ຜູ້ອື່ນໂດຍບໍ່ຮູ້ຕົວ. ຈີນກ່າວໃນທີ່ສຸດການຄວບຄຸມພະຍາດທັງໝົດຈະມີຄວາມຫຍຸ້ງຍາກ. ແລະເປັນສ່ວນໜຶ່ງຂອງເຫດຜົນວ່າເປັນຫຍັງສະຫະລັດ ມັນປະເຊີນກັບວິກິດການລະບາດທີ່ຮ້າຍແຮງກວ່າປະເທດທີ່ພັດທະນາອື່ນໆ, ຍ້ອນວ່າມັນສະແດງໃຫ້ເຫັນໃນປັດຈຸບັນອີງຕາມຈໍານວນຜູ້ຕິດເຊື້ອໃນສະຫະລັດ. ການເພີ່ມຂຶ້ນຢ່າງໄວວາໄດ້ລື່ນກາຍອີຕາລີແລ້ວ, ດັ່ງນັ້ນຫຼັງຈາກຜ່ານວິກິດການນີ້. ພວກເຮົາອາດຈະເຫັນບົດບາດທີ່ເພີ່ມຂຶ້ນຂອງລັດສະຫວັດດີການໃນແຕ່ລະປະເທດ.

**"ສັງຄົມຈະກ້າວເຂົ້າສູ່ລະບົບດິຈິຕອລຢ່າງຄົບຖ້ວນ.**
**ເພື່ອໃຫ້ທັນກັບການປ່ຽນແປງພຶດຕິກໍາຂອງຜູ້ບໍລິໂພກ"**

3. ສັງຄົມຈະກ້າວເຂົ້າສູ່ລະບົບດິຈິຕອນ ຢ່າງຄົບຖ້ວນ ເພື່ອຕິດຕາມການປ່ຽນແປງພຶດຕິກໍາຂອງຜູ້ບໍລິໂພກ: ທຸກວິກິດຈະປະໄວ້ເປັນມໍລະດົກສະເໝີ ເມື່ອປີ 2002, ການລະບາດຂອງພະຍາດ SARS ໄດ້ເປັນຈຸດປ່ຽນຂອງການນໍາໃຊ້ເທັກໂນໂລຍີອອນໄລນ໌ເຊັ່ນ: ອີຄອມເມີຊໃນປະເທດຈີນ ເຊິ່ງໄດ້ຮັບຄວາມນິຍົມສູງຈາກປະຊາຊົນ. ໂດຍສະເພາະ Alibaba ແລະ JD.com. ເນື່ອງຈາກວ່າປະຊາຊົນຫລີກລ້ຽງການຕິດເຊື້ອຈາກພື້ນທີ່ສາທາລະນະແລະຫັນໄປຊື້ເຄື່ອງອອນໄລນ໌ຫຼາຍຂຶ້ນ. ໃນເວລາທີ່ມັນມາກັບວິກິດການນີ້, ມັນຈະປ່ອຍໃຫ້ເຄື່ອງໝາຍເຊັ່ນດຽວກັນ. ສິ່ງດັ່ງກ່າວໄດ້ເສີມສ້າງຄວາມຕ້ອງການຂອງຮ້ານຄ້າພື້ນເມືອງ ແລະ ຫ້າງຮ້ານຕ່າງໆ ເພື່ອເລັ່ງການພັດທະນາຢ່າງກ້າວກະໂດດ ແລະ ກ້າວໄປຂ້າງໜ້າເພື່ອຍາດເອົາຕະຫຼາດຈາກການຄ້າອອນໄລນ໌ຫຼາຍຂຶ້ນ. ລວມທັງຫຼາຍປະເພດຂອງເຕັກໂນໂລຢີດິຈິຕອນທີ່ມີມາແຕ່ດົນນານແຕ່ບໍ່ໄດ້ຖືກນໍາໃຊ້ໂດຍປະຊາຊົນຈໍານວນຫຼາຍ. ວິກິດການນີ້ໄດ້ບັງຄັບໃຫ້ປະຊາຊົນຫັນໄປຫາເຕັກໂນໂລຢີເຫຼົ່ານີ້ຢ່າງຈິງຈັງ ແລະ ສ້າງໂອກາດໃຫ້ຜູ້ຫຼິ້ນໃນຕະຫຼາດຫຼາຍຂຶ້ນ ເຊັ່ນ: ເວທີທີ່ຊ່ວຍດ້ານໂທລະຄົມ, ການຈັດກອງ

ປະຊຸມ ຫຼື ງານຕ່າງໆ ເຊິ່ງຜູ້ບໍລິໂພກຈະຄຸ້ນເຄີຍປ່ຽນແປງພຶດຕິກຳມາໃຊ້ເທັກໂນໂລຢີຢ່າງຖາວອນວິກິດການເຊິ່ງອາດຈະຫັນປ່ຽນລະບົບການສຶກສາທົ່ວໂລກຢ່າງສິ້ນເຊີງ ພາຍຫຼັງວິກິດການໄດ້ຜ່ານໄປ

ເວົ້າລວມແລ້ວໃນປະຈຸບັນໂລກກຳລັງປະເຊີນໜ້າກັບບັນຫາການທ້າທາຍຫຼາຍຫຼາຍເປັນຕົ້ນແມ່ນບັນຫາອາວຸດນິວເຄຍ, ວິກິດການທາງດ້ານເສດຖະກິດ, ພະຍາດລະບາດ, ໄພທຳມະຊາດ, ຂາດແຄດວັດຖຸດິບ ແລະ ບັນຫາການກໍ່ການຮ້າຍທີ່ເກີດຈາກຢາເສບຕິດ ຫຼື ບັນຫາທາງດ້ານສັງຄົມ, ການລະເມີດສິດທິມະນຸດ, ບັນຫາຄວາມຂັດແຍ່ງລະຫວ່າງໂລກຕາເວັນຕົກ ແລະ ຕາເວັນອອກ.

ສັງຄົມປະຈຸບັນມີຄວາມກ້າວໜ້າມີການພັດທະນາທາງດ້ານເທັກໂນໂລຍີ ເອີ້ນວ່າ : ຍຸກໂລກາພິວັດ ໄດ້ມີການປັບປ່ຽນໂຄງສ້າງທາງດ້ານເສດຖະກິດ, ສັງຄົມ ແລະ ການເມືອງ ເຮັດໃຫ້ປະເທດຕ່າງໆໃນໂລກຕ້ອງເພິ່ງພາອາໄສກັນ ໂລກທີ່ເຄີຍກວ້າງໃຫຍ່ກໍ່ເບິ່ງນ້ອຍລົງ ດິນແດນທີ່ຢູ່ຫ່າງໄກກໍ່ສາມາດຕິດກັນໄດ້ງ່າຍ ສາມາດຮັບຮູ້ຂໍ້ມູນຂ່າວສານໄດ້ໂດຍງ່າຍດາຍ ຄວາມກ້າວໜ້າທາງດ້ານເທັກໂນໂລຊີ ໄດ້ເຮັດໃຫ້ຄົນມີຄວາມກ້າວໜ້າໃນຫຼາຍໆດ້ານ

**ໂຄງຮ່າງຫຼັກສູດລາຍວິຊາ**
**ຊື່ວິຊາ ປະຫວັດສາດການພົວພັນສາກົນ**
**ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ**
**ລະຫັດວິຊາ: 0905703**

| | |
|---|---|
| ລະບົບ-ພາກຮຽນ | ລະບົບ 12+4 ປີ ພາກຮຽນ 1 ປີທີ 4 |
| ຈຳນວນຊົ່ວໂມງ | 64 ຊົ່ວໂມງ |
| ຈຳນວນໜ່ວຍກິດ | 3 (2-2-2) |
| ອະທິບາຍຄ່າໜ່ວຍກິດ | ວິຊານີ້ປະກອບດ້ວຍ 3 ໜ່ວຍກິດ, ບັນຍາຍ2 ຊົ່ວໂມງໃນ 16 ອາທິດເທົ່າກັບ 32 ຊົ່ວໂມງ, ປະຕິບັດຕົວຈິງ 2 ຊົ່ວໂມງໃນ 16 ອາທິດເທົ່າກັບ 32 ຊົ່ວໂມງ, ມອບວຽກບ້ານ 2 ຊົ່ວໂມງໃນ 16 ອາທິດເທົ່າກັບ 32 ຊົ່ວໂມງ, ລວມເປັນ 64 ຊົ່ວໂມງ. |
| ຈຸດປະສົງ | ເມື່ອຮຽນຈົບວິຊານີ້ແລ້ວນັກສຶກສາຄູສາມາດ:<br>- ອະທິບາຍໄດ້ກ່ຽວກັບການພົວພັນລະຫວ່າງປະເທດຕ່າງໆໃນໂລກ ກ່ອນສົງຄາມໂລກຄັ້ງທີ 1 ຈົນເຖິງການເກີດສົງຄາມໂລກຄັ້ງທີ 1.<br>- ບອກໄດ້ກ່ຽວກັບຜົນກະທົບຂອງການພົວພັນດັ່ງກ່າວຕໍ່ກັບສັງຄົມໂລກ.<br>- ບອກໄດ້ກ່ຽວກັບການພົວພັນປະເທດມະຫາອຳນາດຫຼັງສົງຄາມໂລກຄັ້ງທີ 1.<br>- ອະທິບາຍໄດ້ກ່ຽວກັບສາເຫດທີ່ພາໃຫ້ເກີດສົງຄາມໂລກຄັ້ງທີ 2.<br>- ອະທິບາຍໄດ້ກ່ຽວກັບການພົວພັນຫຼັງສົງຄາມໂລກຄັ້ງທີ 2 ຈົນເຖິງປັດຈຸບັນ ພ້ອມທັງຜົນກະທົບຕໍ່ກັບສັງຄົມໂລກ. |
| ເນື້ອໃນຫຍໍ້ | ວິຊານີ້ຜູ້ຮຽນຈະໄດ້ຮຽນຮູ້ກ່ຽວກັບ:<br>ການພົວພັນລະຫວ່າງປະເທດຕ່າງໆໃນໂລກ ກ່ອນສົງຄາມໂລກຄັ້ງທີ 1 ຈົນເຖິງການເກີດສົງຄວາມໂລກຄັ້ງທີ 1 ຜົນກະທົບຂອງການພົວພັນດັ່ງກ່າວຕໍ່ກັບສັງຄົມໂລກ ແລະ ຮຽນຮູ້ກ່ຽວກັບການພົວພັນປະເທດມະຫາອຳນາດຫຼັງສົງຄາມໂລກຄັ້ງທີ 1, ສາເຫດທີ່ພາໃຫ້ເກີດສົງຄາມໂລກຄັ້ງທີ 2, ການພົວພັນຫຼັງສົງຄາມໂລກຄັ້ງທີ 2 ຈົນເຖິງປັດຈຸບັນພ້ອມທັງຜົນກະທົບຕໍ່ກັບສັງຄົມໂລກ. |
| ອຸປະກອນ/ສື່ການສອນ | ຄອມພິວເຕີ, ເຄື່ອງສາຍ (LCD), ບົດສອນ ແລະ ສື່ການສອນວິຊາຕ່າງໆທີ່ກ່ຽວຂ້ອງກ່ຽວກັບເນື້ອໃນບົດຮຽນ. |
| ວິທີປະເມີນ/ຮູບແບບການປະເມີນ | - ສັງເກດການມີສ່ວນຮ່ວມ<br>- ຖາມ-ຕອບ<br>- ການນຳສະເໜີ, ບົດລາຍງານກິດຈະກຳ<br>- ກວດກາກາງພາກ ແລະ ສອບເສັງຈົບລາຍວິຊາ |
| ອາທິດທີ 1 | ບົດທີ 1 ຄວາມຮູ້ເບື້ອງຕົ້ນກ່ຽວກັບການພົວພັນສາກົນ<br>1 ຄວາມໝາຍ, ຄວາມສຳຄັນ, ລັກສະນະ ແລະ ຮູບແບບການພົວພັນສາກົນ<br>ຂອງການພົວພັນສາກົນ<br>2.1ການພົວພັນທີ່ເປັນທາງການ ແລະ ບໍ່ເປັນທາງການ |

| | |
|---|---|
| | 2.2ລັກສະນະການພົວພັນແບບຮ່ວມມື ແລະ ບໍ່ຮ່ວມມື (ຂັດແຍ່ງ)<br>2.3ລັກສະນະການພົວພັນແບບຮຸນແຮງ<br>3ອົງປະກອບຂອງການພົວພັນສາກົນ |
| ອາທິດທີ 2 | ບົດທີ2  ການພົວພັນສາກົນໄລຍະກ່ອນສົງຄາມໂລກຄັ້ງທີI<br>1 ລັກສະນະການພົວພັນສາກົນໄລຍະສົງຄາມໂລກຄັ້ງທີI<br>1.1ປະເທດອັງກິດ<br>1.2ປະເທດຝຣັ່ງ<br>1.3ປະເທດເຢຍລະມັນ<br>1.4ປະເທດອີຕາລີ<br>1.5ປະເທດຍີ່ປຸ່ນ<br>1.6ປະເທດອາເມຣິກາ<br>1.7ປະເທດຣັດເຊຍ<br>2 ການພົວພັນລະຫວ່າງປະເທດກ່ອນສົງຄາມໂລກຄັ້ງທີI<br>1.1  ຄວາມຂັດແຍ່ງທີ່ມາຣົກໂຄ (ປີຄສ 1905-1911)<br>1.2  ສົງຄາມລະຫວ່າງຕວກກີ ແລະ ອີຕາລີ (ປີຄສ 1911-1912)<br>1.3  ຄວາມຂັດແຍ່ງໃນແຫຼມບານກັງ (ປີຄສ 1908-1913) |
| ອາທິດທີ 3 | 3 ຜົນສະທ້ອນຂອງການພົວພັນລະຫວ່າງປະເທດກ່ອນສົງຄາມໂລກຄັ້ງທີI<br>ບົດທີ 3 ການພົວພັນສາກົນລະຫວ່າງສົງຄາມໂລກຄັ້ງທີ I<br>1 ສາເຫດຂອງສົງຄາມໂລກຄັ້ງທີ I<br>1.1 ການເກີດສົງຄາມລະຫວ່າງຝຣັ່ງ ແລະ ເຢຍລະມັນ<br>1.2 ການສະແຫວງຫາອານານິຄົມຂອງປະເທດມະຫາອຳນາດ<br>1.3 ການກຳເນີດລັດທິຊາດນິຍົມ<br>1.4 ການຮ່ວມກຸ່ມພັນທະມິດຂອງປະເທດມະຫາອຳນາດ |
| ອາທິດທີ 4 | 2ການດຳເນີນສົງຄາມ<br>1.1  ສະໜາມຮົບຕາເວັນຕົກ<br>1.2  ສະໜາມຮົບຕາເວັນອອກ<br>1.3  ບັ້ນຮົບທີ່ຊ່ອງແຄບດາກດາແນນ ປີ ຄສ 1915<br>1.4  ບັ້ນຮົບທາງທະເລ ຫຼື ຍຸດທະນາວີໃນແຫຼມຈຸດແລນ<br>1.5  ການຮົບທີ່ເມືອງແວກດອງ<br>1.6  ການເຂົ້າຮ່ວມສົງຄາມຂອງອາເມຣິກາ<br>1.7  ການສູ້ຮົບໄລຍະສຸດທ້າຍຂອງສົງຄາມໂລກຄັ້ງທີ I (ປີຄ.ສ1917 - 1918)<br>3 ຜົນສະທ້ອນຂອງສົງຄາມຕໍ່ກັບການພົວພັນສາກົນ<br>3.1 ດ້ານເສດຖະກິດ<br>.32ດ້ານສັງຄົມ |

| | |
|---|---|
| | .33ດ້ານການເມືອງ |
| ອາທິດທີ 5 | ບົດທີ 4ການພົວພັນສາກົນຫຼັງສົງຄາມໂລກຄັ້ງທີ I<br>1 ກອງປະຊຸມປາຣີ<br>2 ສົນທິສັນຍາແວກໄຊ(Treaty Of VerSailles)<br>2.1 ບັນຫາກ່ຽວກັບດິນແດນ<br>2.2 ດ້ານການທະຫານ<br>2.3 ດ້ານເສດຖະກິດ<br>3 ສົນທິສັນຍາລະຫວ່າປະເທດໄຊຊະນະ ແລະ ປະລາໄຊໃນສົງຄາມໂລກຄັ້ງທີ I<br>3.1 ສັນຍາແຊງແຊກແມງ-ອັງ-ເລ (Treaty of Saint Germain enlaye)<br>3.2 ສັນຍາເນີຍຍີ (Treaty of Neuilly).<br>3.3ສັນຍາແຊວວະເຣີ (TreatyofSeveres). |
| ອາທິດທີ 6 | 4 ການສ້າງຕັ້ງອົງການສັນນິບາດຊາດ (League of Nation)<br>4.1 ຈຸດປະສົງ, ເປົ້າໝາຍທີ່ສຳຄັນຂອງອົງການສັນນິບາດຊາດ<br>4.2 ອົງການຈັດຕັ້ງຂອງອົງການສັນນິບາດຊາດ<br>4.3ບົດບາດຂອງອົງການສັນນິບາດຊາດ.<br>5ສົນທິສັນຍາວໍຊິງຕັນ (Treaty of Washington)<br>5.1ສັນຍາຄັ້ງທີ I<br>5.2 ສັນຍາຄັ້ງທີ II<br>5.3ສັນຍາຄັ້ງທີ III |
| ອາທິດທີ 7 | ບົດທີ5ການພົວພັນສາກົນໄລຍະແຕ່ປີ ຄ.ສ 1929 - 1939<br>1ວິກິດການທາງດ້ານເສດຖະກິດແຫ່ງໂລກ<br>2ລັກສະນະການພົວພັນສາກົນລະຫວ່າງປະເທດມະຫາອຳນາດ<br>2.1ການກຳເນີດລັດທິຟາຊິດອີຕາລີ<br>2.2ການກຳເນີດລັດທິຟາຊິດເຢຍລະມັນ<br>2.3ການກຳເນີດລັດທິຟາຊິດຍີ່ປຸ່ນ |
| ອາທິດທີ 8 | 3 ການເຊື່ອມບົດບາດຂອງອົງການສັນນິບາດຊາດ<br>4 ການຮ່ວມກຸ່ມຂອງບັນດາປະເທດມະຫາອຳນາດ<br>5 ຜົນສະທ້ອນຂອງການພົວພັນລະຫວ່າງປະເທດມະຫາອຳນາດຕໍ່ສັງຄົມໂລກ |
| ອາທິດທີ 9 | ບົດທີ 6ສົງຄາມໂລກຄັ້ງທີ II ໂດຍສັງເຂບ<br>1ສາເຫດຕົ້ນຕໍທີ່ພາໃຫ້ເກີດສົງຄາມໂລກຄັ້ງທີII<br>2ການດຳເນີນສົງຄາມ<br>2.1ສະໜາມຮົບເອີຣົບ<br>2.2ສະໜາມຮົບອາຟຣິກາເໜືອ ແລະ ເອີຣົບໃຕ້ |
| ອາທິດທີ 10 | 2.3 ສະໜາມຮົບອາຊີຕາເວັນອອກ ແລະ ມະຫາສະໝຸດປາຊີຟິກ |

| | |
|---|---|
| | 3 ຜົນຂອງສົງຄາມ<br>3.1 ທາງດ້ານການເມືອງ<br>3.2ທາງດ້ານເສດຖະກິດ.<br>3.3 ທາງດ້ານສັງຄົມ.<br>ບົດທີ 7ການພົວພັນສາກົນພາຍຫຼັງສົງຄາມໂລກແຕ່ປີ ຄ.ສ 1945 - 1980<br>1 ການສ້າງຕັ້ງອົງການສະຫະປະຊາດ<br>1.1 ຈຸດປະສົງຂອງການສ້າງຕັ້ງອົງການສະຫະປະຊາຊາດ |
| ອາທິດທີ 11 | 1.2 ຫຼັກການສ້າງຕັ້ງອົງການສະຫະປະຊາຊາດ<br>2ອົງປະກອບຂອງອົງການສະຫະປະຊາຊາດ<br>2.1 ສະມັດຊາໃຫຍ່ (General Assembly)<br>2.2 ຄະນະມົນຕີຄວາມໝັ້ນຄົງ (Security Council)<br>2.3 ຄະນະມົນຕີເສດຖະກິດ ແລະ ສັງຄົມ (Economic and SocialCouncil)<br>2.4 ຄະນະມົນຕີພິທັກ (Trusteeship Council)<br>2.5 ສານຍຸດຕິທຳລະຫວ່າງປະເທດ (International Court of Justice)<br>2.6ສຳນັກງານເລຂາທິການ(Secretariat)<br>2.7 ທະບວງການພິເສດ (Specialized Agencies) |
| ອາທິດທີ 12 | 3 ຄວາມຂັດແຍ່ງລະຫວ່າງສອງລະບົບການເມືອງ<br>3.1 ລະບົບເສລີນິຍົມ<br>3.2 ລະບົບສັງຄົມນິຍົມ<br>4 ການສ້າງຕັ້ງກຸ່ມສຳພັນທາງການທະຫານຂອງສອງລະບົບການເມືອງໂລກ<br>5 ການສ້າງຕັ້ງກຸ່ມສຳພັນທາງການທະຫານຂອງລະບົບການເມືອງໂລກ<br>5.1 ກຸ່ມທະຫານປ້ອງກັນອາຊີຕາເວັນອອກສ່ຽງໃຕ້ (SEATO)<br>5.2ສົນທິສັນຍາວາກຊໍ(Warsawpact) |
| ອາທິດທີ 13 | 6ການກຳເນີດ ແລະ ຂະຫຍາຍຕົວຂອງຂະບວນປົດປ່ອຍຊາດ<br>6.1ຂະບວນການປົດປ່ອຍຊາດໃນອາຟຣິກາ<br>6.2ຂະບວນການປົດປ່ອຍຊາດໃນອາເມຣິກາລາຕິນ<br>6.3ຂະບວນການປົດປ່ອຍຊາດໃນອາຊີ |
| ອາທິດທີ 14 | ບົດທີ 8ການພົວພັນສາກົນແຕ່ປີ ຄ.ສ 1980 ຫາປັດຈຸບັນ<br>1ການພົວພັນລະຫວ່າງໂລກເສລີກັບສັງຄົມນິຍົມ.<br>1.1 ຄວາມສຳພັນລະຫວ່າງສະຫະພາບໂຊວຽດກັບສະຫະລັດອາເມຣິກາ<br>1.2 ໂລກທີສາມກັບການຜ່ອນຄາຍຄວາມເຄັ່ງຕຶງຂອງມະຫາອຳນາດ<br>2ການພົວພັນລະຫວ່າງປະເທດອຸດສາຫະກຳ ແລະ ປະເທດໂລກທີສາມ (ປະເທດກຳລັງພັດທະນາ ແລະດ້ອຍພັດທະນາ)<br>2.1ຂະບວນການບໍ່ຮ່ວມກຸ່ມ |

| | |
|---|---|
| | 2.2 ຂະບວນການຮ່ວມມືຂອງປະຊາຊົນອາຊີ, ອາຟຣິກາ.<br>2.3 ສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ຫຼື ອາຊຽນ<br>2.4 ອົງການໂອເປັກ<br>2.5 ກຸ່ມເຈັດສິບເຈັດ (G77) |
| ອາທິດທີ 15 | 3ການຮ່ວມກຸ່ມຂອງປະຊາຊາດຕ່າງໆເພື່ອຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ແລະ ການເມືອງ<br>3.1 ການຮ່ວມກຸ່ມທາງເສດຖະກິດ, ການເມືອງຂອງບັນດາປະເທດສັງຄົມນິຍົມ<br>3.2ການຮ່ວມກຸ່ມທາງເສດຖະກິດ, ການເມືອງຂອງໂລກເສລີ |
| ອາທິດທີ 16 | 4 ບົດບາດຂອງອົງການສະຫະປະຊາຊາດໃນການແກ້ໄຂບັນຫາຕ່າງໆໃນໂລກ<br>4.1 ລັກສະນະການແກ້ໄຂບັນຫາຂອງອົງການສະຫະປະຊາຊາດ<br>4.2 ຂໍ້ຈຳກັດຂອງອົງການສະຫະປະຊາຊາດໃນການແກ້ໄຂບັນຫາສາກົນ<br>4.3 ການແກ້ໄຂບັນຫາໃນປະເທດຕ່າງໆ<br>5 ສະພາບການຂອງໂລກໃນຍຸກປັດຈຸບັນ |
| ປະເມີນຜົນ | 1. ຮ່ວມຮຽນ 10%<br>2. ກິດຈະກຳບຸກຄົນ 20%<br>3. ກິດຈະກຳກຸ່ມ 15%<br>4. ກາງພາກ 20%<br>5. ເສັງຈົບລາຍວິຊາ 35% |
| ເອກະສານອ້າງອີງ | ບຸນຕຽມຈັນທະພົນ ພ້ອມຄະນະ(2009). ປະຫວັດສາດ 2ສາຍສ້າງຄູມັດທະຍົມ ລະບົບ11+3. ກະຊວງສຶກສາທິການແລະກິລາ: Nhan Dan printing House HCMC.<br>ສະເຫຼີມສັກ ພາບຸດດີ ພ້ອມຄະນະ(2016). ປະຫວັດສາດຊັ້ນມັດທະຍົມສຶກສາປີທີ7. ກະຊວງສຶກສາທິການແລະກິລາ: ໂຮງພິມແຫ່ງລັດ.<br>ເດຊານຸລາດ ແສນດວງເດດ ພ້ອມຄະນະ,(1998). ປະຫວັດສາດໂລກສຳລັບໂຮງຮຽນສ້າງຄູລະບົບ8+3. ກະຊວງສຶກສາທິການສູນພັດທະນາຄູ: ໂຮງພິມແຫ່ງລັດ.<br>ຂັນທອງ ພາບຸດດີ,(2007). ການພົວພັນສາກົນ2. ຄະນະວິທະຍາສາດສັງຄົມ: ມະຫາວິທະຍາໄລແຫ່ງຊາດ<br>ສະເຫຼີມສັກ ພາບຸດດີ,(1998). ປະຫວັດສາດໂລກສະໄໝປັດຈຸບັນ. ກະຊວງສຶກສາທິການສູນພັດທະນາຄູ: ໂຮງພິມແຫ່ງລັດ.<br>ສຸກສັນ ໄຊຍະວົງ, (2011). ການພົວພັນສາກົນ 2. ຄະນະສຶກສາສາດ: ມະຫາ ວິທະຍາໄລແຫ່ງຊາດ<br>ອິນທະວົງ ພົງປະດິດມະໂນທຳ ພ້ອມຄະນະ, (2009). ປະຫວັດສາດ 2. ກະຊວງສຶກສາທິການ, ກົມສ້າງຄູ, ສູນພັດທະນາຄູ |

| | |
|---|---|
| ຊື່ຜູ້ຂຽນ | 1. ຊອ. ປທ ຄຳຫຼ້າ ໄຊຍະພູມ  ວິທະຍາໄລຄູຄັງໄຂ<br>ໂທລະສັບ: 02028551470Email: Khamla1984lao@gmail.com<br>2. ອຈ. ປທ ນ. ບົວລີ ພັນທະພາ ວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 55548700.Email: boualyphanthapha@gmail.com<br>3. ຊອ. ປທ ນ. ເພັດສະໝອນ ພຸດສະດີ ວິທະຍາໄລຄູຄັງໄຂ<br>ໂທລະສັບ: 020 5471 7789. Email: Phet samone psd@gmail.com<br>4.ຊອ. ປທ ນ. ສຸວັນທອນ ຍົດສະຫວັດ ຄະນະສຶກສາສາດ (ມຊ)<br>ໂທລະສັບ: 020 55798938. Email: thone svt 2021@gmail.com<br>5. ຊອ. ປທ ນ. ພິມໃຈ ອິນແປງ ວິທະຍາໄລຄູດົງຄຳຊ້າງ<br>ໂທລະສັບ: 020 2821 1124. Email: Phim inpheng@gmail.com<br>6. ປຕ ນ. ວິໄລພອນ ສິມສຸດທິ ຄະນະສຶກສາສາດ, ມະຫາວິທະຍາໄລສະຫັວນນະເຂດ<br>ໂທລະສັບ: 020 77983567. Email: man svk.119@gmail.com<br>7.ຊອ. ປທ ນ. ສິງອຳໄພ ພິມພາພອນ ວິທະຍາໄລຄູສາລະວັນ<br>ໂທລະສັບ: 030 9095686. Email: Phimpha sing sun@gmail.com<br>8.ປທ ອຸ່ນເຕົ້າ ໄຊຍະແສງ ສູນພັດທະນາຄູ<br>ໂທລະສັບ: 020 56472846. Email: Ountao 76@gmail.com<br>9. ປຕ ນ. ດາວອນ ສິດທິເດດ ສູນພັດທະນາຄູ<br>ໂທລະສັບ: 020 28892323. Email: Davones si thided@gmail.com |

# ເອກະສານອ້າງອີງ


1. ທະນູ ແກ້ວໂອກາສ. ປະຫວັດສາດໂລກ (ພາສາໄທ), ພິມທີ່ກຸງເທບ ໂຮງພິມ ຫຈກ.ເອມີ່ເທຣດດິ້ງ ພ.ສ 2542
2. ຄະນະອັກສອນສາດ ຈຸລາລົງກອນ ມະຫາວິທະຍາໄລ. ອະລິຍະທຳສະໄໝບູຮານ - ກາງ (ພາສາໄທ), ໂຮງພິມ ຈຸລາລົງກອນ ມະຫາວິທະຍາໄລ ພ.ສ 2538
3. ສະເຫຼີມສັກ ພາບຸດດີ. ແບບຮຽນປະຫວັດສາດໂລກສະໄໝບູຮານ ແລະ ສະໄໝກາງ, ສໍາລັບໂຮງຮຽນສ້າງຄູ 11 + 3, ກະຊວງສຶກສາທິການ ສູນພັດທະນາຄູ ຄ.ສ 1998
4. ຣສ. ເດຊານຸລາດ ແສນດວງເດດ ພ້ອມຄະນະ 2010. ປະຫວັດສາດມັດທະຍົມສຶກສາປີທີ 7 ກະຊວງສຶກສາທິການ.
5. ຈັດທະລາດພູພິທັກ ຂະບວນບົດປ່ອນທົ່ວໂລກເອກະສານປພກອບການສອນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.
6. ສະເຫຼີມສັກ ພາບຸດດີ ແບບຮຽນປະຫວັດສາໂລກ ສໍາລັບໂຮງຮຽນສ້າງຄູ ລະບົບ 8+3 ປີທີ 1 1998
7. ປານອມພອນ ຖິ່ນສະໄໝ , ລໍາໄພ ວົງໄຊ ວິທິຍາສາສັງຄົມ 1 ສາຍປະຖົມ 2009
8. ສຸກສະຫວັນ ໄຊຍະວົງ ພົວພັນສາກົນ 2 ເອກະສານປະກອບການສອນສໍາລັບຄູປະຫວັກສາດ ຄອດ 2021.
9. ສະເຫຼີມສັກ ພາບຸດດີ ແລະ ເດຊານຸລາດ ແແສນດວງເດດ ປະຫວັດສາດໂລກສະໄໝໃໝ່, ສູນພັດທະນາຄູ 11+3 ປາກປາສັກການພິມ 1998
10. www. Google wekepdai.com
11. https://www.bbc.com/thai/international-61675879
12. morganstanley.com, jpmorgan.com, scbeic.com, ft.com, tiscowealth.com, tisco.co.th, bot.or.th, dw.com, asia.nikkei.com

# ພາກອ່ານເພີ່ມ

# I. ພາກສະເໜີ

## 1. ຄວາມເປັນມາ ແລະ ຄວາມສຳຄັນຂອງບົດ

ໃນໄລຍະປະຫວັດສາດຂອງໂລກໄດ້ມີຫຼາຍໄລຍະທີ່ມີບົດບາດຄວາມສຳຄັນພ້ອມທັງເປັນເຫດການປະຫວັດສາດອັນຍືດເຍື້ອຍາວນານມາຫຼາຍສະຕະວັດ ທີ່ມີຄວາມຈຳເປັນຈະໄດ້ສຶກສາຄົ້ນຄວ້າ ໂດຍສະເພາະປະຫວັດສາດໂລກສະໄໝໃໝ່ ມີຫຼາຍເຫດການຍັ້ງຢືນເຖິງການຂະຫຍາຍຕົວທາງດ້ານເສດຖະກິດ ຂອງບັນດາປະເທດມະຫາອຳນາດທຶນນິຍົມ ແລະ ບັນດາປະເທດມະຫາອຳນາດສັງຄົມນິຍົມ ເຊິ່ງປະຫວັດສາດໄດ້ສ່ອງແສງໃຫ້ເຫັນແຈ້ງເຖິງ “ ຄວາມແຕກຕ່າງຂອງສອງກຸ່ມການເມືອງໃນໂລກ ” ຂອງບັນດາປະເທດມະຫາອຳນາດ ຈົນກາຍເປັນຄູ່ແຂ່ງທາງດ້ານເສດຖະກິດ, ດ້ານແນວຄິດ ແລະ ດ້ານອຸດົມການ ໂດຍສະເພາະ ພາຍຫຼັງສົງຄາມໂລກຄັ້ງທີ I. ໃນຊ່ວງປີ ຄ.ສ 1917 ຮອດປັດຈຸບັນ ກໍ່ແມ່ນປະຫວັດສາດໄລຍະໜຶ່ງທີ່ມີຄວາມໝາຍຄວາມສຳຄັນ ແລະ ຈຳເປັນໃນການສຶກສາຄົ້ນຄວ້າຮ່ຳຮຽນຂອງນັກສຶກສາປັນຍາຊົນທຸກຄົນ ໂດຍສະເພາະແມ່ນຮຸ່ນນ້ອງໆ ທີ່ກຳລັງກ້າວໄປເປັນນັກຮຽນ ແລະ ລົງເລິກເຖິງ ວິຊາປະຫວັດສາດໂລກສະໄໝໃໝ່ ຈຶ່ງຈຳເປັນຕ້ອງສຶກສາຄົ້ນຄວ້າຮ່ຳຮຽນ ໃຫ້ຮູ້ວ່າ: ຄວາມແຕກຕ່າງຂອງສອງກຸ່ມການເມືອງໃນໂລກນັ້ນເປັນໄປຄືແນວໃດ, ຄວາມເປັນຈິງມີແນວໃດແດ່ ເພື່ອນຳເອົາໄປໃຊ້ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແນວທາງນະໂຍບາຍຂອງການສຶກສາ.

## 2. ຈຸດປະສົງລວມຂອງການສຶກສາ

- ເພື່ອເປັນການປັບປຸງຂະບວນການຮຽນ - ການສອນ ແລະ ພັດທະນາຄວາມຮູ້ຄວາມສາມາດຂອງຄູທີ່ສອນໃນໂຮງຮຽນສາມັນກໍ່ຄືໂຮງຮຽນ
- ເພື່ອສຶກສາຄົ້ນຄວ້າເຫດການຕ່າງໆໃນປະຫວັດສາດຂອງໂລກ
- ເພື່ອຄົ້ນຄວ້າສະພາບການຕ່າງໆທີ່ເກີດຂຶ້ນໃນໂລກແຕ່ລະໄລຍະປະຫວັດສາດ
- ເພື່ອຮັບຮູ້ ຄວາມແຕກຕ່າງຂອງສອງກຸ່ມການເມືອງໃນໂລກ ພາຍຫຼັງການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917
- ເພື່ອຮັບຮູ້ໃນອຸດົມການຂອງສອງກຸ່ມການເມືອງ
- ເພື່ອຮັບຮູ້ໃນອຸດົມການລະຫວ່າງສອງກຸ່ມການເມືອງທີ່ມີຄວາມແຕກຕ່າງກັນ
- ເພື່ອປູກຝັງແນວຄິດໃຫ້ນັກຮຽນຮູ້ຮັກຊາດ, ຮັກທ່ານຜູ້ນຳ, ຮູ້ຄຽດຊັງສັດຕູ, ຮູ້ຈຳແນກໄດ້ມິດ ແລະ ສັດຕູ້ຢ່າງຈະແຈ້ງ

## 3. ຜົນປະໂຫຍດຄາດວ່າຈະໄດ້ຮັບ

ໄດ້ປະສົບການ ແລະ ບົດຮຽນຕົວຈິງໃນການຄົ້ນຄວ້າ

- ໄດ້ທິດສະດີ ແລະ ບົດຮຽນໃໝ່ໆທີ່ສອດຄ່ອງກັບສະພາບຕົວຈິງໃນສັງຄົມປະຈຸບັນ
- ໄດ້ຮັບຜົນສຳເລັດຕາມແນວທາງທີ່ພັກ - ລັດ ວາງອອກ
- ໄດ້ບົດຮຽນອັນລ້ຳຄ່າ ແລະ ເປັນທິດທາງທີ່ເປັນຕົວຊີ້ວັດເຮັດໃຫ້ລະບົບການຮຽນການສອນຂອງຄູມີປະສິດທິຜົນສູງຂຶ້ນ.

## 4. ຂອບເຂດຂອງການສຶກສາ

ເປັນການສຶກສາຈາກຄູອາຈານທີ່ສອນວິຊາປະຫວັດສາດ

- ເປັນການຮຽນຮູ້ຢູ່ໃນທ້ອງຖິ່ນ, ໂຮງຮຽນສາມັນ, ວິທະຍາໄລ ແລະ ມະຫາວິທະຍາໄລ

- ເປັນການສຶກສາຂອບເຂດ ປະຫວັດສາດສ່ວນໜຶ່ງຂອງໂລກ, ອາຊີ ແລະ ອິນດູຈີນ ເຊິ່ງໄດ້ລົງເລິກເຖິງ " ຄວາມແຕກຕ່າງລະຫວ່າງສອງກຸ່ມການເມືອງໂລກ " ພ້ອມກັນກັບການສຶກສາເຖິງການສ້າງຕັ້ງບັນດາ ອົງການທາງ ດ້ານການເມືອງ, ເສດຖະກິດ, ການທະຫານ ແລະ ການສ້າງຕັ້ງອົງການບໍ່ຮ່ວມກຸ່ມໃນໂລກ.

# II. ເຄື່ອງມືເກັບກຳຂໍ້ມູນ ແລະ ວິທີປະຕິບັດ

## 1. ເຄື່ອງມືເກັບກຳຂໍ້ມູນ

- ປຶ້ມຄູ່ມື ການຂຽນບົດປ້ອງກັນຈົບຊັ້ນ ລະດັບປະລິນຍາຕີ
- ປຶ້ມຕຳລາຮຽນຕ່າງໆ
- ໄດ້ຈາກອິນເຕີເນັດ
- ເກັບກຳຈາກການສອບຖາມຄູທີ່ປຶກສາໃນເວລາທີ່ເພິ່ນໃຫ້ຄຳແນະນຳ ແລະ ຜູ້ມີຄວາມຮູ້ທາງປະຫວັດສາດ

## 2. ວິທີປະຕິບັດ

- ຮັບເອົາຫົວຂໍ້ຈາກຄູທີ່ເປີກສາ

| ວັນເດືອນປີ | ເນື້ອໃນ | ເຊັນ | ໝາຍເຫດ |
|---|---|---|---|
| 5/11/2013 | ຮັບຟັງຄຳແນະນຳຈາກຄູທີ່ເປີກສາ | | |
| 19/11/2013 | ຜ່ານໂຄງຮ່າງຄັ້ງທີ1 | | ດັດແປງ |
| 25/11/2013 | ຜ່ານໂຄງຮ່າງຄັ້ງທີ2 | | ດັດແປງ |
| 3.12.2013 | ຜ່ານໂຄງຮ່າງຄັ້ງທີ3 | | ຜ່ານ |
| 16/12/2013 | ຜ່ານບົດຄັ້ງທີ 1 | | ດັດແປງ |
| /1/2014 | ຜ່ານບົດຄັ້ງທີ 2 | | |

- ລວບລວມຂໍ້ມູນຈາກຕຳລາ ຫຼື ເອກະສານຕ່າງໆທີ່ກ່ຽວຂ້ອງ
- ຟັງຄຳແນະນຳຈາກຄູທີ່ເປີກສາ
- ຮຽບຮຽງຫົວຂໍ້ໄປຜ່ານຄູທີ່ເປີກສາພ້ອມຮັບຟັງຄຳແນະນຳ
- ຮຽບຮຽງເນື້ອໃນໄປຜ່ານຄູທີ່ປຶກສາ ເພື່ອແກ້ໄຂຂໍ້ຜິດພາດແລ້ວເອົາມາດັດແປງ

- ນຳເອົາໄປຈັດພິມ ແລ້ວນຳເອົາມາກວດແກ້ຄືນນຳຄູທີ່ປຶກສາ ແລະ ປະກອບເປັນປຶດສາລະນິພົນ ທີ່ສົມບູນໄດ້.

# III. ເນື້ອໃນລວມ

## " ຄວາມແຕກຕ່າງລະຫວ່າງສອງກຸ່ມການເມືອງໂລກ "

### 1. ການກຳເນີດລັດທິສັງຄົມນິຍົມ

ມະຫາປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ໄດ້ເກີດຂຶ້ນອັນສືບເນື່ອງມາຈາກຫຼາຍປັດໃຈ ເປັນຕົ້ນແມ່ນຣັດເຊຍເປັນຄຸກຄຸມຂັງບັນດາຊົນຊາດຊົນເຜົ່າ ແລະ ເປັນບ່ອນເຕົ້າໂຮມຄວາມຂັດແຍ່ງຂອງຄົນຢູ່ໃນສັງຄົມ ຄວາມຂັດແຍ່ງລະຫວ່າງນາຍທຶນ ກັບ ກຳມະກອນ, ເຈົ້າທີ່ດິນ ກັບ ຊາວນາ ໃຕ້ການປົກຄອງຂອງພະເຈົ້າຊາອັນດຽວກັນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນມີຄວາມທຸກຍາກລຳບາກທີ່ສຸດ ດັ່ງນັ້ນຈິ່ງເກີດມີການລຸກຮື້ນຂຶ້ນຕໍ່ສູ້ຕ້ານ ແລະ ໂຄ່ນລົ້ມພະເຈົ້າຊາ ຂອງກຳມະກອນ, ຊາວນາ ພາກັນເດີນປະທ້ວງ, ມີການນັດຢຸດງານ, ຢຶດເອົາສະຖານທີ່ສຳຄັນຕ່າງໆ ( ສະຖານີວິທະຍຸກະຈາຍສຽງ, ໂທລະສັບ, ໂທລະເລກ... ) ກໍ່ຄືປະຊາຊົນໄດ້ລູກຮື້ຂຶ້ນໃນທົ່ວປະເທດ ໃຕ້ການນຳພາຂອງທ່ານເລນິນ ພັກໂບນເຊວິກ ວັນທີ 25 ຕຸລາ ຄ.ສ 1917. ສາມາດຍາດໄດ້ຊະຊະນະ ແລະ ຍຶດອຳນາດທັງໝົດມາໄວ້ໃນກຳມືຂອງຊົນຊັ້ນກຳມະຊີບມີປະກາດການປ່ຽນແປງຈາກການປະຕິວັດປະຊາທິປະໄຕນາຍທຶນໃຫ້ກາຍມາເປັນການປະຕິວັດສັງຄົມນິຍົມໃຕ້ການນຳພາຂອງ ພັກໂບນເຊວິກ.

### 1.1 ຜົນສຳເລັດຂອງການປະຕິວັດເດືອນຕຸລາຣັດເຊຍ

ການປະຕິວັດເດືອນຕຸລາຣັດເຊຍ ຄ.ສ ( 1917 ) ໄດ້ມີຄວາມໝາຍສຳຄັນອັນໃຫຍ່ຫຼວງໃນ ປະຫວັດສາດຂອງມວນມະນຸດ ເພາະວ່າມັນເປັນການໄຂສັງກາດໃໝ່ໃນໂລກເຊິ່ງມັນເປັນ ລະບອບການເມືອງ ທີ່ມີຄວາມແຕກກັນກັບລະບອບທຶນນິຍົມກໍ່ຄື ລະບອບສັງຄົມນິຍົມທີ່ມີຊົນຊັ້ນກຳມະຊີບເປັນຜູ້ນຳພາການປະຕິວັດ.

ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ເປັນການທັບມ້າງ ແລະ ຍົກເລີກທິດສະດີແຫ່ງການແບ່ງແຍກຢູ່ໃນຣັດເຊຍທີ່ເປັນເກມຫຼິ້ນຂອງບັນດາປະເທດຈັກກະພັດນັ້ນໄດ້ພັງທະລາຍລົງ ພ້ອມນັ້ນ ຍັງເປັນການທຳລາຍເກມຫຼິ້ນໃນບັນດາຊົນຊາດໃນ ຣັດເຊຍຢ່າງສິ້ນເຊີງ ນອກນັ້ນມັນ ຍັງເປັນການສ້າງເງື່ອນໄຂອັນດີເພື່ອລົບລ້າງຄວາມຫຼ້າຫຼັງທາງດ້ານເສດຖະກິດທີ່ຄົງຕົວມາເປັນເວລາໄລຍະຍາວນານຫຼາຍສະຕະວັດລົງ ເພື່ອພັດທະນາຕົນເອງໃຫ້ກ້າວຂຶ້ນສູ່ລະດັບທີ່ມີຄວາມເທົ່າທຽມກັບ ບັນດາປະຊາຊາດຕ່າງໆໃນໂລກ.

ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ຍັງໄດ້ເປັນການພື້ນຟູຖານແນວຄວາມຄິດ ສັງຄົມນິຍົມຄືນໃໝ່ທີ່ຈະຕ້ອງ ໄດ້ດຳເນີນໄປຕາມຂັ້ນຕອນຂອງ ທິດສະດີມາກ ສູ່ເສັ້ນທາງ ສັງຄົມນິຍົມ ເຊິ່ງເສັ້ນທາງດັ່ງກ່າວນີ້ບໍ່ເຄີຍມີຜູ້ໃດ ຫຼື ບຸກຄົນໃດທີທຳການບຸກເບີກມາກ່ອນ. ຜົນຂອງ ການປະຕິວັດເດືອນຕຸລາຣັດເຊຍຄັ້ງນີ້ ໄດ້ເປັນພຽງແຕ່ຜົນສຳເລັດເບື້ອງຕົ້ນຂອງ ຊົນຊັ້ນກຳມະຊີບທີ່ສາມາດຈັດຕັ້ງ ອຳນາດການປົກຄອງຂອງຕົນເອງຂຶ້ນ. ແຕ່ການປະຕິວັດເດືອນຕຸລາຣັດເຊຍ ຍັງສົ່ງຜົນສະທ້ອນໃຫ້ແກ່ຂະບວນການຕໍ່ສູ້ເພື່ອ ເອກະລາດ ເອກະພາບ ປະຊາທິປະໄຕ ແລະ ຂະບວນການປົດປ່ອຍຊາດຕ່າງໆທີ່ເກີດຂຶ້ນໃນໂລກ ເຊິ່ງສາມາດຖອດຖອນນຳເອົາໄປເປັນບົດຮຽນໄດ້ຄື: ການຍຶດອຳນາດຈຳເປັນຕ້ອງມີຄວາມເປັນ ເອກະພາບກັນ, ມີຄວາມຮັກແພງສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນຢ່າງແໜ້ນແຟ້ນ ແລະ ມີຈຸດປະສົງເປົ້າໝາຍຢ່າງຈະແຈ້ງ, ຮູ້ໝູນໃຊ້ກາລະໂອກາດທີ່ເໝາະສົມຂອງການດຳເນີນການປະຕິວັດ. ນອກຈາກນັ້ນການປະຕິວັດເດືອນຕຸລາຣັດເຊຍ ໄດ້ມີຜົນໃຫ້ ພັກໂບນເຊວິກ ໄດ້ປ່ຽນຊື່ມາເປັນ " ພັກຄອມມູນິດ " ແລະ ເປັນການເປີດເຜີຍແຜ່ລັດທິຄອມມູນິດອອກໄປທົ່ວທຸກຂົງເຂດຕ່າງໆໃນໂລກ ຈົນພາໃຫເກີດມີລັດທິຕໍ່ຕ້ານເກີດຂຶ້ນເຊັ່ນ: ລັດທິຟາດຊິດ ( ເຢຍລະມັນ, ອິຕາລີ ແລະ ຍີ່ປຸ່ນ ).

## 1.2. ຄວາມໝາຍປະຫວັດສາດຂອງການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917

ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ໄດ້ເປັນການທັບມ້າງແອກປົກຄອງທີ່ມີການກົດຂີ່ຂູດຮີດຂອງລັດທິທືນນິຍົມ ແລະ ລະບອບສັກດີນາ ໃນຣັດເຊຍລົງຢ່າງສິ້ນເຊີງ ແລະ ເປັນຄັ້ງທໍາອິດໃນ ປະຫວັດສາດໂລກທີ່ມີດິນແດນອັນກ້ວາງໃຫຍ່ເຊິ່ງກວມເຖິງ 1/6 ເນື້ອທີ່ຂອງໂລກ ທີ່ມີຊົນຊັ້ນທໍາມະກອນຂຶ້ນກໍາອໍານາດຢ່າງແທ້ຈິງ.

ໄຊຊະນະດັ່ງກ່າວນີ້ ໄດ້ເປັນສິ່ງກະຕຸກຊຸກຍູ້ໃຫ້ຊົນຊັ້ນກໍາມະຊີບ ກໍ່ຄືຊາວຜູ້ອອກແຮງງານ ແລະ ຜູ້ທີ່ຖືກກົດຂີ່ຂູດຮີດທັງຫຼາຍຢູ່ໃນໂລກ ກໍ່ຄືຢູ່ພາຍໃນຣັດເຊຍເອງໄດ້ພາກັນລຸກຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງໃຫ້ມີ ເອກະລາດ ເອກະພາບ

ໄຊຊະນະຄັ້ງນີ້ ຍັງເປັນການໄຂສັງກາດໃໝ່ແຫ່ງ ລະບອບການເມືອງໂລກ ກໍ່ຄືລະບອບສັງຄົມນິຍົມ ແລະ ໄດ້ກາຍເປັນບົດຮຽນອັນລໍ້າຄ່າໃຫ້ແກ່ ບັນດາປະເທດ ທຶນນິຍົມປະຊາທິປະໄຕ ໃຫ້ບັນດາບຸກຄົນໃນ ສັງຄົມນິຍົມພວມຂະຫຍາຍຕົວທັງໝົດເຫັນໄດ້ໝາກຜົນ ແລະ ຄວາມໝາຍ ປະຫວັດສາດການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917.

# 2. ຄວາມແຕກຕ່າງຂອງ ລະບົບທຶນນິຍົມ ແລະ ລະບົບສັງຄົມນິຍົມ

## 2.1 ລະບົບທຶນນິຍົມ

ລະບົບທຶນນິຍົມແມ່ນ ບັນດາປະເທດທີ່ມີການປົກຄອງໄປຕາມ ລະບອບປະຊາທິປະໄຕ ນາຍທຶນ ເຊິ່ງລະບົບເສດຖະກິດແມ່ນ ລັກສະນະເສລີນິຍົມທີ່ມີຄວາມຜູກພັນກັບ ສະຫະລັດອາເມຣິກາ ທັງໃນດ້ານ ການເມືອງ, ເສດຖະກິດ ແລະ ດ້ານການທະຫານເຊິ່ງສະແດງອອກໃນຫຼາຍດ້ານ

### 2.1.1 ເສດຖະກິດ

ເສດຖະກິດທຶນນິຍົມ ເປັນລະບົບເສດຖະກິດແບບເອກກະຊົນ ທີ່ມີຜະລິດຕະພັນສິນຄ້າຕ່າງໆ ແລກປ່ຽນຊື້ຂາຍໂດຍ ບໍລິສັດເອກະຊົນ ຫຼື ກຸ່ມທຸລະກິດ ເພື່ອສ້າງຜົນກໍາໄລໃຫ້ບໍລິສັດ ກໍ່ຄືອົງການ. ໂດຍມີການແລກປ່ຽນສິນຄ້າ ແລະ ການບໍລິການທີ່ມີການຮັບຮອງທາງດ້ານກົດໝາຍ ແລະ ການແຂ່ງຂັນກັນໃນຂໍ້ຂັດແຍ່ງທາງການສິນຄ້າເພື່ອຜົນກໍາໄລ.

**ກ. ການຂະຫຍາຍຕົວຂອງເສດຖະກິດ ທຶນນິຍົມ**

**ປະເທດອາເມຣິກາ**

ອາເມຣິກາ ເປັນປະເທດໜຶ່ງທີ່ນອນໃນ ທະວີບອາເມຣິກາ ທີ່ມີບົດບາດນໍາໜ້າໝູ່ ບໍ່ວ່າຈະເປັນດ້ານ ການຜະລິດອາວຸດນິວເຄຣຍ, ການທະຫານເສດຖະກິດ, ການຄົມມະນາຄົມ, ດ້ານການເມືອງຫຼືວ່າດ້ານອື່ນໆ. ເຊິ່ງເປັນປັດໃຈເຮັດໃຫ້ອາເມຣິກາ ຢືນຢູ່ໃນອັນດັບໜຶ່ງຂອງໂລກ. ພາຍຫຼັງ ສົງຄາມກາງເມືອງໃນປີ ຄ.ສ 1861-1865 ສິ້ນສຸດລົງ ເສດຖະກິດອາເມຣິກາໄດ້ມີການຂະຫຍາຍຕົວວ່ອງໄວ ພຽງແຕ່ໄລຍະເວລາ 30 ປີ ອາເມຣິກາ ສາມາຍົກຖານະທາງດ້ານອຸດສາຫະກໍາໃຫ້ຢືນຢູ່ໃນອັບດັບ 1 ຂອງໂລກ ຜະລິດຕະພັນອຸດສາຫະກໍາກວມເອົາ 1/2 ຂອງຜົນຜະລິດໃນເອີຣົບ. ມາຮອດສະຕະວັດທີ XIX ຂະແໜງການຜະລິດ ອຸດສາຫະກໍາໄດ້ມີການເຕົ້າໂຮມເຂົ້າເປັນ ສະຫະພັນການຜະລິດເອີ້ນວ່າ: “ ເທີຣສ ” ມີບໍລິສັດຜູກຂາດເຖິງ 445 ກວ່າອົງການຈຶ່ງສາມາດເວົ້າໄດ້ວ່າ: ອາເມຣິກາຄື ບ້ານເກີດເມືອງນອນຂອງ “ ເທີຣສ ” ແລະ ເປັນ “ ລາຊາອຸດສາຫະກໍາ ”.

ພາຍຫຼັງ ສົງຄາມໂລກຄັ້ງທີ 2 ໄດ້ສິ້ນສຸດລົງ ເສດຖະກິດຂອງ ອາເມຣິກາໄດ້ມີການຂະຫຍາຍຕົວຢ່າງກະໂດດຂັ້ນ; ເນື່ອງຈາກວ່າອາເມຣິກາ ໄດ້ຮັບຜົນກໍາໄລຈາກການຂາຍອາວຸດ ຢູ່ໃນປາງສົງຄາມພຸ້ນມີເຖິງ 114 ຕື້ ໂດລາສະຫະລັດ, ມາຮອດປີ ຄ.ສ 1945 ຍັງມີບັນດາປະເທດ ສໍາພັນທະມິດຍັງຕິດໜີ້ ອາເມຣິກາເຖິງ 41.751 ຕື້ ໂດລາສະຫະລັດ.

- ດ້ານອຸດສາຫະກຳ: ການຜະລິດອຸດສາຫະກຳຂອງ ອາເມຣິກາສະເລ່ຍແລ້ວແມ່ນມີປະລິມານເພີ່ມຂຶ້ນເປັນ 24% , ຜະລິດຕະພັນກະສິກຳເພີ່ມຂຶ້ນ 27% ຖ້າທຽບໃສ່ໄລຍະປີ ຄ.ສ 1935-1939 ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ເສດຖະກິດ ອາເມຣິກາມີຄວາມເຂັ້ມແຂງ ແລະ ຮັ່ງມີກວ່າໝູ່ໃນໂລກ. ໃນຊຸມປີ ຄ.ສ 1945-1949 ຜະລິດຕະພັນອຸດສາຫະກຳກວມເຖິງ 56.4% ຂອງຜະລິດຕະພັນອຸດສາຫະກຳໃນທົ່ວໂລກ , ຜົນຜະລິດຕະພັນກະສິກຳ ແມ່ນສາມາດທຽບເທົ່າປະເທດອັງກິດ, ຝຣັ່ງ, ເຢຍລະມັນຕາເວັນຕົກ, ອີຕາລີ ແລະ ຍີ່ປຸ່ນ ( ລວມເຂົ້າກັນທັງໝົດ 1949 ). ນອກນັ້ນອາເມຣິກາ ຍັງມີປະລິມານ ຄຳສົດກວມ 3/4 ຂອງປະລິມານຄຳສົດໃນທົ່ວໂລກ ( ປະມານ 25 ຕື້ໂດລາ 1949 ) ແລະ ມີຈຳນວນກຳປັ່ນຫຼາຍກວ່າ 50% ຂອງໂລກ. ໃນຊຸມປີ 1960 ອາເມຣິກາໄດ້ກາຍເປັນສູນກາງທາງດ້ານເສດຖະກິດ ການເງິນ ເປັນພຽງແຫ່ງດຽວໃນໂລກ



ຮູບທີ 1: ໂຮງງານຫຼອມເຫຼັກກ້າ ແລະ ອຸດສາຫະກຳເຄມີ

ເງື່ອນໄຂທີ່ພາໃຫ້ເສດຖະກິດ ອາເມຣິກາມີການຂະຫຍາຍຕົວກະໂດດຂັ້ນຢ່າງໄວວາແມ່ນມາຈາກຫຼາຍປັດໃຈເຊັ່ນ:

- ອາເມຣິກາ ໄດ້ອີງໃສ່ການປະຕິວັດວິທະຍາສາດ-ເຕັກນິກ ແລະ ການດັດສົມກົນໄກການຜະລິດທີ່ມີ ຄວາມສອດຄ່ອງກັບໂຄງ ການປະກອບເສດຖະກິດ ຍົກສູງສະມັດທະພາບຂອງງານ ແລະ ຫຼຸດຜ່ອນລາຄາສິນຄ້າ
- ໄດ້ເພີ່ມທະວີການໂຮມສູນໃນການຜະລິດ ແລະ ມີການທຸ່ມເທຕົ້ນທຶນສູງເຂົ້າໃນການລົງທຶນແມ່ນສູງ.
- ອາເມຣິກາ ໄດ້ອີງໃສ່ການຜະລິດ ອາວຸດທີ່ມີຄວາມທັນສະໄໝເພື່ອຂາຍ ( 50% ຂອງລາຍໄດ້ແຫ່ງຊາດແມ່ນ ມາຈາກການຂາຍອາວຸດ ). ນອກນັ້ນ ອາເມຣິກາຍັງມີຊັບພະຍາກອນທຳມະຊາດມີກຳລັງແຮງງານຫຼາຍທັງເປັນ ປະເທດທີ່ບໍ່ເຄີຍມຖືກສົງຄາມທຳລາຍ. ຄຽງຄູ່ກັນນັ້ນ ເສດຖະກິດອາເມຣິກາກໍ່ ຍັງມີຂໍ້ຫຍຸ້ງຍາກຫຼາຍຢ່າງຄື:
- ປະຈຸບັນເຖິງວ່າ ອາເມຣິກາຍັງນຳໜ້າໝູ່ທາງ ດ້ານຜະລິດຕະພັນອຸດສາຫະກຳ, ກະສິກຳ ແລະ ການເງິນກໍ່ຕາມ ແຕ່ບົດບາດຂອງອາເມຣິກາທາງ ດ້ານເສດຖະກິດຂອງເຂົານັບມື້ຖອຍລົງ ເພາະວ່າ ບັນດາປະເທດ ຕາເວັນຕົກ, ປະເທດຈີນ ແລະ ຍີ່ປຸ່ນ ໄດ້ມີການບົນຕົວຂຶ້ນ ແລະ ການເປັນຄູ່ແຂ່ງຢ່າງເອົາຈິງເອົາຈັງຂອງ ອາເມຣິກາໃນທຸກໆດ້ານ.

- ເສດຖະກິດ ອາເມຣິກາຂະຫຍາຍຕົວໄວ ແຕ່ຂາດສະຖຽນລະພາບ ( ແຕ່ປີຄ.ສ 1945 ຮອດປະຈຸບັນ ໄດ້ເກີດມີວິກິດການທາງດ້ານເສດຖະກິດເຖິງ 8 ຄັ້ງ
- ສັງຄົມ ຍັງມີຄວາມຫຼູດໂຕນກັນ ລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ ອັນເປັນສາເຫດທີ່ພາໃຫ້ເກີດມີຄວາມຂັດແຍ່ງກັນເຮັດເກີດຄວາມບໍ່ສະຫງົບພາຍໃນສັງຄົມອາເມຣິກາ

ຈຸດພິເສດທາງດ້ານເສດຖະກິດ ອາເມຣິກາເປັນ ປະເທດນາຍທຶນທີ່ມີການຂະຫຍາຍຕົວສູງ ມີຄວາມສາມາດທ້ອນໂຮມບັນດາທຶນຮອນສູງ, ຜົນຜະລິດບາງຊະນິດ ກໍ່ມີຫຼາຍກວ່າປະເທດທຶນນິຍົມອື່ນເປັນຕົ້ນແມ່ນ: ນ້ຳມັນເຊື້ອໄຟ, ເຫຼັກກ້າ ກວມເຖິງ 30% ຂອງປະລິມານທົ່ວໂລກ, ດ້ານເຕັກນິກວິທະຍາສາດ ລື່ນອັງກິດ, ເຢຍລະມັນ 2.5 ເທື່ອ. ການທ້ອນໂຮມທຶນຮອນຂອງອາເມຣິກາໄດ້ຫຼາຍ ແລະ ໄດ້ໄວ ເພາະວ່າບັນດາບໍລິສັດໃຫຍ່ໆຂອງ ນາຍທຶນເປັນຜູ້ກຳນົດ ແລະ ຕັດສິນໃຈໃນການຂະຫຍາຍຕົວເສດຖະກິດສູງຂອງ ເສດຖະກິດແຫ່ງຊາດ ໂດຍມີການລົງທຶນໃສ່ການ ຄົ້ນຄວ້າວິທະຍາສາດ ເຕັກໂນໂລຊີເປັນຈຳນວນຫຼວງຫຼາຍຕໍ່ປີ ອັນເຮັດໃຫ້ການຜະລິດມີການຂະຫຍາຍຕົວຂຶ້ນສູ່ລະດັບສູງໃນທຸກໆດ້ານ.

- ການຄ້າ - ການລົງທຶນ ແມ່ນເປັນຂະແໜງການທີ່ສຳຄັນ ເພື່ອຄວາມຢູ່ລອດຂອງ ອາເມຣິກາ ດ້ານການຜະລິດ. ສິນຄ້າແມ່ນໄດ້ມາຈາກຜົນຜະລິດອຸດສາຫະກຳ ແລະ ກະສິກຳ ອາເມຣິກາ ໄດ້ສ້າງສາຍພົວພັນການຄ້າຂາຍຫຼາຍປະເທດຢ່າງກວ້າງຂວາງກັບທຸກໆປະເທດໃນໂລກ ບໍ່ພຽງແຕ່ພົວພັນດ້ານເສດຖະກິດກັບຕ່າງປະເທດດ້ວຍຮູບການຄ້າຂາຍແລກປ່ຽນສິນຄ້າເທົ່ານັ້ນ ອາເມຣິກາ ຍັງມີການຈຳໜ່າຍທຶນຮອນທີ່ກວມເອົາອັດຕາສ່ວນສູງ ໄດ້ໃຫ້ທຶນກູ້ຢືມແກ່ປະເທດທີ່ຄວາມຕ້ອງການ ຄວາມຈະເລີນດ້ານອຸດສາຫະກຳ ແລະ ປະເທດທີ່ກຳລັງພັດທະນາເປັນຈຳນວນຫຼວງຫຼາຍ. ສິນຄ້າສົ່ງອອກແມ່ນ ຜະລິດຕະພັນເຄື່ອງກົນຈັກກວມເຖິງ 78%, ເຄື່ອງບິນ, ທາດເຊື້ອໄຟ, ຜະລິດຈະພັນເຄມີ, ເຄື່ອງຄອມພິວເຕີ, ເຄື່ອງກໍ່ສ້າງ... ສິນຄ້າຂາເຂົ້າແມ່ນເປັນປະເພດ ວັດຖຸດິບຊະນິດຕ່າງໆ, ນ້ຳມັນ, ແຮ່ທາດຊະນິດຕ່າງໆ, ກາເຟ, ຢາງ, ໝາກໄມ້ເຂດຮ້ອນ...ອັນເປັນເງື່ອນໄຂເຮັດໃຫ້ ອາເມຣິກາຈະເລີນຮັ່ງມີ. ນອກນັ້ນ ຍັງມີປັດໃຈທີ່ຊຸກຍູ້ສົ່ງເສີມໃຫ້ເສດຖະກິດອາເມຣິກາຂະຫຍາຍຕົວມາຈາກ ປະຊາກອນອາເມຣິກາມີຫຼາຍທີ່ມີຄວາມຮູ້ຄວາມສາມາດສູງ, ມີຊັບພະຍາກອນທຳມະຊາດຫຼວງຫຼາຍ, ມີທຶນຮອນອັນມະຫາສານ, ມີລະບົບການຄົມມະນາຄົມທີ່ທັນສະໄໝສະດວກສະບາຍ ແລະ ມີການບໍລິການດ້ານການຄ້າຂາຍຢ່າງມີຄວາມຄ່ອງແຄ້ວວ່ອງໄວ.

ຕາຕາລາງການຄ້າຂອງອາເມຣິກາ

| | ກວມ % ຂອງການແລກປ່ຽນໃນໂລກ | | |
|---|---|---|---|
| | 1980 | 1985 | 1990 |
| ການນຳເຂົ້າສິນຄ້າ | 13.5% | 19.8% | 18% |
| ການສົ່ງອອກສິນຄ້າ | 11.7% | 12% | 13.5% |

**ປະເທດອັງກິດ**

ປະເທດອັງກິດເປັນປະເທດໜຶ່ງທີ່ເສດຖະກິດຂະຫຍາຍຕົວທີ່ຢືນຢູ່ແຖວໜ້າຂອງເສດຖະກິດໂລກ ກໍ່ຄືຂົງເຂດເອີຣົບຕາເວັນຕົກ ແລະ ທັງເປັນປະເທດທີ່ມີການປະຕິວັດອຸດສາຫະກຳກ່ອນໝູ່ໃນໂລກ ມີການນຳໃຊ້ໂຮງງານມາທົດ

ແທນແຮງງານຄົນ ອັນເຮັດໃຫ້ການຜະລິດໄດ້ຫຼາຍ ແລະ ມີຄຸນນະພາບສູງ. ສາດມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມນັບມື້ນັບຫຼາຍຂຶ້ນອັນໄດ້ເຮັດໃຫ້ມີເສດຖະກິດ ອັງກິດມີການຂະຫຍາຍຕົວ.

- ອຸດສາຫະກຳ ພາຍຫຼັງສົງຄວາມໂລກຄັ້ງທີ 2 ລະບົບຫົວເມືອງຂຶ້ນຂອງອັງກິດ ໄດ້ຖືກພັງທະລາຍລົງຢ່າງໄວວາ ບັນຫາດັ່ງກ່າວໄດ້ສົ່ງຜົນສະທ້ອນໜັກໜ່ວງຕໍ່ກັບພື້ນຖານເສດຖະກິດຂອງປະເທດອັງກິດ. ຍ້ອນວ່າພື້ນຖານທາງດ້ານເສດຖະກິດຂອງອັງກິດມີຄວາມຫຼ້າຫຼັງ ແລະ ເກົ່າແກ່ອັນເຮັດໃຫ້ ຜົນການຜະລິດບໍ່ໄດ້ດີເທົ່າທີ່ຄວນ. ໃນສະຕະວັດທີ XIX ອັງກິດເປັນ " ໂຮງຊ່າງຂອງໂລກ ", ມາຮອດສະຕະວັດທີ XX ອັງກິດຖືກອາເມຣິກາ ແລະ ເຢຍລະມັນນຳໜ້າ ແລະ ສາມາດລື່ນກາຍ. ດັ່ງນັ້ນຈຶ່ງເຮັດໃຫ້ທ່າຕັ້ງທາງດ້ານເສດຖະກິດຫຼຸດຫນ້ອຍຖອຍລົງຮອງອາເມຣິກາ, ຍີ່ປຸ່ນ ແລະ ເຢຍລະມັນຕາເວັນຕົກ.

ມາໃນປີ ຄ.ສ 1948 ອັງກິດຕ້ອງອີງໃສ່ຄວາມຊ່ວຍເຫຼືອຈາກອາເມຣິກາ ເພື່ອເປັນກ້ອນທຶນໃນການຟື້ນຟູພື້ນຖານເສດຖະກິດດ້ານການຜະລິດ, ສະນັ້ນຈຶ່ງເຮັດໃຫ້ເສດຖະກິດຂອງອັງກິດຖືກຜູກມັດ ແລະ ຂຶ້ນກັບອາເມຣິກາ.

- ການຄ້າ - ການລົງທຶນ ຍ້ອນວ່າອັງກິດໄດ້ອາໄສ ຄວາມຊ່ວຍເຫຼືອຈາກອາເມຣິກາເຮັດໃຫ້ ລັດຖະບານອັງກິດອະນຸຍາດ ໃຫ້ອາເມຣິກາສາມາດເຂົ້າມາທຳມາຄ້າຂາຍ, ເຂົ້າມາລົງທຶນຢູ່ພາຍໃນປະເທດຂອງຕົນໄດ້ຢ່າງຫຼວງຫຼາຍ ( ປະຈຸບັນ ສະເພາະບໍລິສັດຝອດຂອງອາເມຣິກາໄດ້ຄວບຄຸມ 50% ຂອງຂະແໜງການຜະລິດລົດຍົນໃນປະເທດອັງກິດ ).

ມາຮອດປີ ຄ.ສ 1950 ອັງກິດສາມາດຟື້ນຟູພື້ນຖານເສດຖະກິດໃຫ້ສາມາດເທົ່າທຽມກັບໄລຍະກ່ອນສົງຄາມ ແມ່ນໄດ້ມີການຂະຫຍາຍຕົວໄວພໍສົມຄວນ ນອກນັ້ນອັງກິດຍັງໄດ້ສຸມໃສ່ຂະຫຍາຍເສດຖະກິດທີ່ເປັນມູນເຊື້ອຄື: ການລົງທຶນຢູ່ຕ່າງປະເທດ, ການຂຸດຄົ້ນຖ່ານຫີນ, ການຜະລິດເຄື່ອງກົນຈັກ, ການຜະລິດກຳປັ່ນ ແລະ ການຕໍ່າແຜ່ນແພ ອັງກິດໄດ້ຖືເອົາຂະແໜງການກະສິກຳລ້ຽງສັດເປັນພື້ນຖານ, 1/2 ເນື້ອທີ່ການປູດຝັງແມ່ນດຳເນີນການປູກຫຍ້າເພື່ອລ້ຽງສັດ.

**ປະເທດຍີ່ປຸ່ນ**

ປະເທດຍີ່ປຸ່ນເປັນ ປະເທດໜຶ່ງທີ່ນອນໃນທະວີບອາຊີ ທີ່ມີເສດຖະກິດຂະຫຍາຍຕົວ ແລະ ພັດທະນາປະເທດຊາດໄປສູ່ຄວາມຈະເລີນຮຸ່ງເຮືອງທີ່ມີຄວາມທັນສະໄໝ ດ້ານເຕັກໂນໂລຢີ ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຕັ້ງແຕ່ມີການປະຕິຮູບເມຈິ ເຮັດໃຫ້ເສດຖະກິດຍີ່ປຸ່ນຂະຫຍາຍຕົວເລື້ອຍມາ.

ຍີ່ປຸ່ນເປັນປະເທດຟາດຊິດທີ່ປາລາໄຊໃນສົງຄາມໂລກຄັ້ງທີ 2 ເຮັດໃຫ້ຍີ່ປຸ່ນສູນເສຍຫົວເມືອງຂຶ້ນທັງໝົດ ແລະ ຖືກອາເມຣິກາໃຊ້ກຳລັງທະຫານປາບປາມຍຶດຄອງ ຕາມກົດເກນຂອງຝ່າຍສຳພັນທະມິດ. ພື້ນຖານເສດຖະກິດຂອງຍີ່ປຸ່ນແມ່ນຖືກທຳລາຍຢ່າງໜັກໜ່ວງ ຜະລິດຕະພັນອຸດສາຫະກຳໃນປີ ຄ.ສ 1946 ເທົ່າກັບ1/4 ຂອງໄລຍະສົງຄາມ

ປີ ຄ.ສ 1945 – 1950 ພື້ນຖານເສດຖະກິດຍີ່ປຸ່ນ ການຂະຫຍາຍຕົວແມ່ນຊັກຊ້າ ແລະ ມີຄວາມຕິດພັນແໜ້ນແຟ້ນກັບເສດຖະກິດ ອາເມຣິກາ. ພາຍຫຼັງທີ່ອາເມຣິກາໄດ້ດຳເນີນສົງຄາມຮຸກຮານ ເກົາຫຼີ ( ຄ.ສ 1950 ) ເຮັດໃຫ້ຍີ່ປຸ່ນສາມາດຂະຫຍາຍໄດ້ຢ່າງວ່ອງໄວ ຍ້ອນວ່າໄດ້ມີການຜະລິດອຸປະກອນຮັບໃຊ້ທາງ ການທະຫານຂາຍໃຫ້ອາເມຣິກາ. ຮອດຊຸມປີ 60 ໃນເມື່ອອາເມຣິກາພວມເມົາໃນການເຮັດສົງຄວາມຮຸກຮານອິນດູຈີນ, ເຮັດໃຫ້ ຍີ່ປຸ່ນສວຍໃຊ້ໂອກາດດັ່ງກ່າວ ເພື່ອຂະຫຍາຍເສດຖະກິດຢ່າງວ່ອງໄວກະໂດດຂັ້ນ ແລະ ໜ້າມະຫັດສະຈັນທີ່ສຸດ.

- ຂະແໜງອຸດສາຫະກຳ ຍີ່ປຸ່ນກໍ່ມີບາດກ້າວການຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ໄວກວ່າໝູ່. ປະຈຸບັນ ຍີ່ປຸ່ນກາຍເປັນຜູ້ນຳໜ້າກ່ຽວກັບການຜະລິດກຳປັ່ນ ( ເທົ່າກັບ 50% ຂອງຈຳນວນກຳປັ່ນໃນທົ່ວໂລກ ), ການຜະລິດເຫຼັກກ້າ, ເຄື່ອງຈັກ, ລົດຍົນ, ເຫັບ, ໂທລະພາບ, ກ້ອງຖ່າຍຮູບ, ໂມງ...



ຮູບທີ 2 ໂຮງງານຜະລິດລົດຍົນ ແລະ ໂຮງງານໄຟຟ້າ ເມືອງກູຟູຊິມະ

ດ້ານການກະສິກຳ ປະລິມານການຜະລິດເຂົ້າແມ່ນ 80% ( ຄ.ສ 1967 – 1969 ) ຂອງຈານວນເຂົ້າໃນທົ່ວປະເທດ. ການລ້ຽງສັດສະໜອໄດ້ 2/3 ຂອງຄວາມຕ້ອງການພາຍໃນປະເທດ ສ່ວນການປະມົງແມ່ນມີການຂະຫຍາຍຕົວຮອງອັນດັບສອງຮອງຈາກປະເທດເປຣູ

ນັບແຕ່ຊຸມປີ 70 ເປັນຕົ້ນມາ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນ 3 ປະເທດທີ່ເປັນສູນກາງທາງດ້ານເສດຖະກິດ ແລະ ການເງິນຂອງໂລກ ( ອາເມຣິກາ, ເອີຣົບຕາເວັນຕົກ ແລະ ຍີ່ປຸ່ນ ) ໃນນັ້ນຄັງເງິນສົດ ແລະ ຄຳສົດຂອງຍີ່ປຸ່ນລື່ນກາຍອາເມຣິກາ.

- ການຄ້າຍີ່ປຸ່ນ ສິນຄ້າໄດ້ແຊກຊຶມ ແລະ ແກ້ງແຍ້ງຢູ່ໃນຕະຫຼາດໂລກຢ່າງກ້ວາງຂວາງ ພຽງແຕ່ໄລຍະເວລາສັ້ນໆເທົ່ານັ້ນ, ຍີ່ປຸ່ນກໍ່ສາມາດສູ້ຊົນບົນຕົວຂຶ້ນໃຫ້ກາຍເປັນມະຫາອຳນາດທາງດ້ານເສດຖະກິດ ເຊິ່ງໂລກໄດ້ໃຫ້ຂະໜານນາມວ່າ " ຍີ່ປຸ່ນມະຫັດສະຈັນ ".

ປັດໃຈທີ່ເຮັດໃຫ້ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຢ່າງວ່ອງໄວກະໂດດຂັ້ນມາຈາກ

- ໄດ້ນຳໃຊ້ແຫຼ່ງທຶນຂອງອຕ່າງປະເທດ ເພື່ອສຸມໃສ່ການລົງທຶນໃນຂະແໜງການອຸດສາຫະກຳທີ່ສຳຄັນເຊັ່ນ: ເຄື່ອງກົນຈັກ, ຫຼອມໂລຫະ...ຫຼຸດຜ່ອນຄ່າໃຊ້ຈ່າຍທາງດ້ານການທະຫານ ກົນໄກກົງຈັກລັດໃຫ້ກະທັດຮັດລົງ.
- ໝູນໃຊ້ຜົນງານທາງດ້ານວິທະຍາຍສາດ ເຕັກນິກ ເພື່ອເພີ່ມສະມັດທະພາບຂອງການອອກແຮງງານການຜະລິດໃຫ້ດີຂຶ້ນ, ດັດແປງເຕັກນິກ ແລະ ຫຼູດລາຄາສິນຄ້າ



ຮູບທີ 3 ສະໜາມບິນນິວຊິໂຕເຊະ ໃນຍີ່ປຸ່ນ

- ການເປີດກວ້າງປະຊາທິປະໄຕພາຍຫຼັງສົງຄາມ ໄດ້ຮັບການກະຕຸກຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ
- ຮູ້ນໍາເອົາສິນຄ້າຂອງຕົນແຊກຊຶມເຂົ້າ ຕະຫຼາດປະເທດຕ່າງໆໃນໂລກໄດ້ຢ່າງຄ່ອງແຄ້ວ
- ນັບແຕ່ການປະຕິຮູບເມຈິ ( Meji ) ເປັນຕົ້ນມາຄືນ ຍີ່ປຸ່ນໄດ້ເສີມຂະຫຍາຍມູນເຊື້ອ ( ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ) ເພື່ອບຸກບືນຕົວໃນການສ້າງສາພັດທະນາປະເທດຊາດໃຫ້ຮັ່ງມີເຂັ້ມແຂງ.

ລັດຖະບານ ຍີ່ປຸ່ນ ເວລາໃດກໍ່ຖືເອົາວຽກງານການຂະຫຍາຍຕົວທາງ ດ້ານວິທະຍາສາດເຕັກນິກ ແລະ ປະຕິຮູບພື້ນຖານການສຶກສາແຫ່ງຊາດເປັນໜ້າທີ່ສໍາຄັນ. ປັດຈຸບັນນີ້ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນຈໍານວນປະເທດທີ່ນໍາໜ້າໝູ່ໃນການຂະຫຍາຍຕົວທາງດ້ານວິທະຍາສາດເຕັກນິກ.

ຂະແໜງການຄ້າ ແມ່ນໄມ້ງັດທີ່ສໍາຄັນຂອງເສດຖະກິດ ຍີ່ປຸ່ນ ເພາະວ່າ ຍີ່ປຸ່ນຕ້ອງມີການຊື້ ວັດຖຸດິບຫຼາຍຢ່າງຈາກຕ່າງປະເທດເປັນຈໍານວນຫຼວງຫຼາຍເຊັ່ນ: ແຮ່ເຫຼັກ 100%, ແຮ່ທອງ 99.9%, ຖ່ານຫີນ 97.1%, ບົກຊິດ 100%, ແຮ່ກົ່ວ 87.7%, ເກືອກິນ 85.5%, ນໍ້າມັນເຊື້ອໄຟ 99..7%... ແຕ່ກໍ່ເປັນປະເທດທີ່ມີການສົ່ງສິນຄ້າອອກຂາຍປະເພດ ວັດຖຸສໍາເລັດຮູບ, ຜະລິດຕະພັນອຸດສາຫະກໍາທີ່ມີລາຄາແພງໄດ້ເປັນຈໍານວນຫຼວງຫຼາຍເຊັ່ນ: ເຄື່ອງຈັກແມ່, ເຄື່ອງກົນຈັກຕ່າງໆ, ເຄື່ອງໄຟຟ້າ-ເອເລັກໂທນິກ, ລາງລົດໄຟ, ເຫຼັກເສັ້ນ, ເຄື່ອງແກ້ວ, ເຄື່ອງກະປ໋ອງ ແລະ ອື່ນໆ ເຊິ່ງເຮັດໃຫ້ການຄ້າຕ່າງໄດ້ດູນການຄ້າຕະຫຼອດມາ

ສະຫຼຸບລວມແລ້ວເສດຖະກິດທຶນນິຍົມແມ່ນເປັນເສດຖະກິດເອກະຊົນການຂະຫຍາຍຕົວ ເສດຖະກິດສະແດງອອກໃນດ້ານການຊ່ວຍເຫຼືອກັນທາງ ດ້ານເສດຖະກິດແກ່ບັນ ດາປະເທດພັນ ທະມິດເຊັ່ນ: ການໃຫ້ກູ້ຢືມເງິນ ຫຼື ການໃຫ້ຊ່ວຍເຫຼືອລ້າ.

ນອກນັ້ນຍັງມີການໃຊ້ມາດຕະການທາງດ້ານເສດຖະກິດເພື່ອຕອບໂຕ້ ຝ່າຍກົງກັນຂ້າມເຊັ່ນ: ການປິດລ້ອມທາງ ດ້ານເສດຖະກິດ, ການຈັດຕັ້ງກຸ່ມທາງ ດ້ານເສດຖະກິດເຊິ່ງກັນ ແລະ ກັນ. ໂດຍມີການສ້າງຕັ້ງ " ອົງການຕະຫຼາດຮ່ວມ " ເປັນການຮ່ວມກຸ່ມທາງດ້ານເສດຖະກິດຂອງເອີຣົບຕາເວັນຕົກ ເພື່ອເປັນການສົ່ງເສີມເສດຖະກິດ ແລະ ການຄ້າຮ່ວມກັນພາຍໃນປະເທດສະມາຊິກ ເຊິ່ງມີການຫຼຸດຜ່ອນລະບົບພາສີລະຫວ່າງປະເທດສະມາຊິກ, ລົບລ້າງຂໍ້ກີດກັ້ນດ້ານການຄ້າຕ່າງປະເທດສະມາຊິກດ້ວຍກັນເວົ້າໄດ້ວ່າເປັນ " ເປັນລະບົບການຄ້າເສລີ " ນອກຈາກການຮ່ວມກຸ່ມທາງດ້ານເສດຖະກິດແລ້ວ ນອກນັ້ນບັນດາປະເທດສະມາຊິກຍັງຮ່ວມກັນສ້າງຕັ້ງອົງການປະລາມະນູເອີຣົບ ( European Atomic Energy Community :EORTOM ) ເພື່ອພັດທະນາພະລັງງານປາລາມະນູ ແລະ ການນໍາໃຊ້ໂດຍສັນຕິ

ການຮ່ວມກຸ່ມທາງດ້ານເສດຖະກິດ ໄດ້ເຮັດໃຫ້ມີຜົນກະທົບຕໍ່ກັບປະເທດທີ່ບໍ່ແມ່ນປະເທດສະມາຊິກ ອັນກ້າວໄປເຖິງການ ຈັດຕັ້ງກຸ່ມເສດຖະກິດຫຼາຍໆຂຶ້ນ ເພື່ອແກ້ງແຍ່ງກັດທາງດ້ານເສດຖະກິດ,

ເວົ້າລວມແລ້ວ ການຮ່ວມກຸ່ມທາງດ້ານເສດຖະກິດຂອງບັນດາປະເທດທຶນນິຍົມແມ່ນ ເພື່ອປົກປ້ອງຕົນເອງຈາກການແຊກແຊງ ແລະ ການເອົາລັດເອົາປຽບທາງດ້ານການຄ້າ ແລະ ດ້ານເສດຖະກິດ.

## 2. ວິກິດການທາງດ້ານເສດຖະກິດທຶນນິຍົມ

ສົງຄາມໂລກສິ້ນສຸດລົງໄດ້ມີຜົນສະທ້ອນຢ່າງໃຫຍ່ຫຼວງຕໍ່ ສະພາບທາງດ້ານເສດຖະກິດການເມືອງ ແລະ ສັງຄົມ, ແຕ່ຜົນກະທົບທີ່ສຳຄັນຄື: ການກໍ່ໃຫ້ເກີດບັນຫາທາງ ດ້ານເສດຖະກິດຕົກຕໍ່າຄັ້ງໃຫຍ່ສຸດໃນລະຫວ່າງປີ ຄ.ສ 1929-1933 ຢ່າງບໍ່ເຄີຍມີມາກ່ອນ. ເຮັດໃຫ້ປະເທດທີ່ໄດ້ຮັບໄຊຊະນະ ແລະ ປະເທດປາລາໄຊສົງຄາມ ກໍ່ຕ້ອງພົບກັບບັນຫາດັ່ງກ່າວ ໂດຍສະເພາະແມ່ນເມື່ອສິ້ນສຸດສົງຄາມໃໝ່ໆ ແລະ ມີຄວາມຮຸນແຮງກວ່າໝູ່ທີ່ນອນຢູ່ໃນລະຫວ່າງປີ ຄ.ສ 1929-1933

ສາເຫດທີ່ພາໃຫ້ເກີດມີສະພາວະເສດຖະກິດຕົກຕໍ່ານີ້ ແມ່ນເນື່ອງມາຈາກໃນ ຄ.ສ 1929 ໂຮງງານອຸດສາຫະກຳ ແລະພື້ນທີ່ການຜະລິດກະສິກຳຕ່າງໆຂອງໂລກ ພາກັນຜະລິດເຄື່ອງສຳເລັດຮູບ ແລະ ຜົນຜະລິດທາງການກະສິກຳມີຫຼາຍຢ່າງມະຫາສານຈົນເກີນຄວາມສາມາດຊື້ຂອງ ປະຊາຊົນ ( ເກີນຄວາມຕ້ອງການຂອງຄົນ ) ດັ່ງນັ້ນຈຶ່ງເຮັດໃຫ້ລາສິນຄ້າຕົກຕໍ່າ ແລະ ຂາຍບໍ່ອອກ ຈົນກ້າວໄປເຖິງໂຮງງານອຸດສາຫະກຳ ມີການປິດກິດຈະການອັນເຮັດໃຫ້ກຳມະກອນເກີດໄພຫວ່າງງານຫຼາຍ. ອີກປະການໜຶ່ງແມ່ນໄດ້ຮັບຜົນກະທົບຈາກການຄ້າ ເພາະວ່າພາຍຫຼັງສົງຄາມຢຸດຕິລົງ ເຮັດໃຫ້ບັນດາໂຮງງານຕ່າງໆທີ່ເຄີຍຜະລິດອາວຸດ ໄດ້ປ່ຽນສະພາບການໃຊ້ງານປ່ຽນມາເປັນໂຮງງານ ຜະລິດເຄື່ອງສຳເລັດຮູບເພື່ອສົ່ງອອກ. ເຫດຜົນນີ້ກໍ່ເພື່ອຊອກຫາກ້ອນທຶນ ( ເງິນ ) ມາສຳລະໜີ້ທີ່ໄດ້ກູ້ຢືມໃນໄລຍະສົງຄາມ ແຕ່ວ່າປະເທດເຫຼົ່ານີ້ຕ້ອງມີການປະເຊີນໜ້າ ກັບ ສິນຄ້າສົ່ງອອກລວມທັງ ອາເມຣິກາພ້ອມ ມີການກົ້ນກຳແພງດ້ານພາສີຂາເຂົ້າແພງ ເພື່ອປ້ອງກັນເສດຖະກິດພາຍໃນຂອງປະເທດຕົນ. ອີກຢ່າງໜຶ່ງປະເທດທີ່ເຄີຍຊື້ ສິນຄ້າຄື: ອິນເດຍ, ຍີ່ປຸ່ນ ກໍ່ຫັນມາສ້າງຕັ້ງໂຮງງານອຸດສາຫະກຳຂຶ້ນເພື່ອດຳເນີນການຜະລິດເປັນຈຳນວນຫຼວງຫຼາຍ.

ອີກສາເຫດໜຶ່ງທີ່ພາໃຫ້ເສດຖະກິດຕົກຕໍ່າກໍ່ຄື: ຂໍ້ຕົກລົງໃນການໃຊ້ໜີ້ສົງຄາມລະຫວ່າງ ອັງກິດ, ຝຣັ່ງ ແລະ ອາເມຣິກາ ປະເທດເຫຼົ່ານີ້ເປັນເຈົ້າໜີ້ລາຍໃຫຍ່ ການສຳລະເງິນຄ່າປະຕິສົງຄາມຂອງ ເຢຍລະມັນໄດ້ກູ້ຢືມມາໃຊ້ຄ່າ ປະຕິສົງຄາມຈາກທະນາຄານ ອາເມຣິກາ ເຢຍລະມັນກໍ່ ໃຊ້ຄືນພຽງບາງສ່ວນເທົ່ານັ້ນ ເພາະວ່າອີກບາງສ່ວນແມ່ນເພື່ອນຳໄປປັບປຸງອຸດສາຫະກຳພາຍໃນ ປະເທດຂອງຕົນເອງ ດັ່ງນັ້ນຈຶ່ງມີການໝູນໃຊ້ທາງການເງິນຊ່ວຍໃຫ້ເສດຖະກິດຂະຫຍາຍຕົວໄວ. ພາຍຫຼັງປີ ຄ.ສ 1929 ຕະຫຼາດຫຸ້ນໃນນິວຢອກ ( ອາເມຣິກາ ) ຕົກຕໍ່າທີ່ສຸດເຮັດໃຫ້ ທະນາຄານຮຽກເງິນກູ້ຈາກ ເຢຍລະມັນ ເຮັດໃຫ້ໂຮງງານຈຳເປັນຕ້ອງປິດກິດຈະການ ເຊິ່ງເປັນຜົນໃຫ້ ລະບົບທຸລະກິດການເງິນໂລກຕົກຕໍ່າຢູ່ໃນ ພາວະຮ້ອນອັນຕະລາຍເຊັ່ນດຽວກັນ. ເວົ້າລວມແລ້ວເຫດການທັງໝົດນີ້ແມ່ນເຮັດໃຫ້ເສດຖະກິດໂລກຊ່ວງປີ ຄ.ສ 1929-1933 ພົບກັບວິກິດການຮ້າຍແຮງ. ທຳອິດແມ່ນເກີດຢູ່ອາເມຣິກາ ແລະ ໄດ້ແຜ່ລາມໄປຍັງທະວີບເອີຣົບ ໄລຍະນີ້ປະລິມານອຸດສາຫະກຳຫຼຸດລົງເຖິງ 36%, ການຄ້າ 66%, ລາຄາສິນຄ້າກະສິກຳ50%, ມີຄົນຫວ່າງງານເຖິງ 30.000.000 ຄົນ ແລະ ຊາວນາຫຼາຍລ້ານຄົນພົບບກັບຄວາມອຶດຫິວ ກົງກັນຂ້າມພວກນາຍທຶນພັດເອົາ ສິນຄ້າ ຫຼື ຜົນປະລິດທີ່ຂາຍບໍ່ອອກທັງໝົດໄປຖິ້ມລົງທະເລ ຫຼື ທຳລາຍຖິ້ມ.

ໃນໄລຍະເກີດວິກິດການ ເຮັດໃຫ້ພວກນາຍທຶນເກີດມີຄວາມວິຕົກກັງວົນພວກເຂົາໄດ້ຊອກຫາວິທີທາງເພື່ອແກ້ໄຂບັນຫາເພື່ອໃຫ້ພົ້ນຈາກ ວິກິດການດັ່ງກ່າວເຊັ່ນ: ນາຍທຶນບັງຄັບໃຫ້ ລັດຖະບານ ຕ້ອງຈ່າຍເງິນອຸດໜູນເພື່ອກູ້ສະຖານະພາບ ເສດຖະກິດທີ່ຊຸດໂຊມ, ດຳເນີນການປິດຕະຫຼາດພາຍໃນປະເທດ, ທຳລາຍສິນຄ້າຕ່າງໆ ແລະ ຫຼຸດກຳລັງ

ຜະລິດລົງ ໂດຍມີການໃຊ້ມາດຕະການເດັດຂາດເຂົ້າຄວບຄຸມການຜະລິດທັງໝົດ. ວິທີການດັ່ງກ່າວສາມາດແກ້ໄຂວິກິດການໄດ້ຊົ່ວຄາວເທົ່ານັ້ນ. ພວກນາຍທຶນຄິດວ່າ ມີພຽງທັນທາງດຽວເທົ່ານັ້ນທີ່ ສາມາດແກ້ໄຂບັນຫາໄດ້ຄື: ການເຮັດສົງຄາມ, ການຍາດເອົາຕະຫຼາດຈຳໜ່າຍສິນຄ້າໃນໂລກ, ດ້ວຍເຫດນັ້ນພວກນາຍທຶນໃຫຍ່ຕ່າງໆ ກໍ່ພາກັນສະໜັບສະໜູນສົ່ງເສີມໃຫ້ ລັດຖະບານຂະຫຍາຍອານານິຄົມອອກຈົນກ້າວໄປເຖິງ ການປະທະດ້ວຍກຳລັງເຮັດໃຫ້ເກີດມີຄວາມຂັດແຍ່ງລະຫວ່າງ ປະເທດທຶນນິຍົມດ້ວຍກັນ ຄວາມຂັດແຍ່ງດັ່ງກ່າວໄດ້ກ້າວໄປສູ່ຄວາມຮຸນແຮງກ້າວໄປເຖິງສົງຄາມໄລຍະຕໍ່ມາ.

ວິກິດການທາງດ້ານເສດຖະກິດ ໄດ້ມີຜົນສູ່ປະຊາຊົນຜູ້ອອກແຮງງານເກີດມີຄວາມຂັດແຍ່ງກັນຢູ່ໃນສັງຄົມອັນໄດ້ເຮັດໃຫ້ ສະພາບທາງດ້ານການເມືອງ-ສັງຄົມປ່ຽນແປງ ບັນດາພັກການເມືອງຕ່າງໆມີແນວຄິດຕໍ່ຕ້ານ ອານາດລັດຖະບານ ເຮັດໃຫ້ມີໂອກາດໃນການສະແຫວງຫາຄວາມນິຍົມ ເພື່ອກ້າວໄປສູ່ການມີອຳນາດ ເດັ່ນແມ່ນຂະບວນກຳມະກອນແຕ່ກໍ່ຕ້ອງຢຸດຕິລົງຍ້ອນ ສະພາບການບໍ່ອຳນວຍຄວາມສະດວກເຮັດໃຫ້ ຂະບວນກະມະກອນຢຸດຕິລົງ. ເວລາດຽວກັນຢູ່ ປະເທດອີຕາລີ, ຍີ່ປຸ່ນ ແລະ ເຢຍລະມັນ ໄດ້ໄປຄຸກຄາມການເມືອງໂລກໃນໄລຍະຕໍ່ມາ.

## 2.1.2 ດ້ານການເມືອງ ການທູດ-ອຸດົມການ ຂອງລະບົບທຶນນິຍົມ

ສະຫະລັດອາເມຣິກາ ເປັນປະເທດໜຶ່ງທີ່ມີຜົນສຳເລັດໃນການພັດທະນາ ປະເທດຊາດດ້ວຍການສ້າງອຸດົມການແບບເສລີນິຍົມ ( ທຶນນິຍົມ ) ຍ້ອນວ່າອາເມຣິກາໄດ້ມີບົດຮຽນ ແລະ ປະສົບການທາງດ້ານການ ຜະລິດອາວຸດຮັບໃຊ້ໃນຊ່ວງ ສົງຄາມໂລກຄັ້ງທີ 1 ແລະ 2 ປະກອບກັບ ອາເມຣິກາມີອາວຸດປາລາມະນູຈຶ່ງເຮັດໃຫ້ ອາເມຣິກາຄິດວ່າຕົນເອງເປັນຕຳຫຼວດໂລກທີ່ໄດ້ສະແດງຕົນອອກໜ້າ ໂດຍພະຍາຍາມເຜີຍແຜ່ອຸດົມການແບບເສລີນິຍົມໄປຍັງປະເທດຕ່າງໆໃນໂລກ ປະກົດວ່າປະເທດຕ່າງໆໃນທະວີບເອີຣົບ ( ເອີຣົບຕາເວັນຕົກ ), ບັນດາປະເທດໃນອາເມຣິກາລາຕິນ ແລະ ອາຊີເຫັນດີຮ່ວມມືຕາມອຸດົມການຂອງ ອາເມຣິກາ.

ດັ່ງນັ້ນ ອຸດົມການຂອງ ທຶນນິຍົມ ທີ່ມີຄວາມແຕກຕ່າງກັບ ສັງຄົມນິຍົມຈຶ່ງຈຳເປັນຕ້ອງມີການພະຍາຍາມສົ່ງເສີມສ້າງອຳນາດຂອງຕົນດ້ວຍກຳລັງ ແລະ ການຫາສຽງສະໜັບສະໜູນສະແດງອອກໃນການພະຍາຍາມສ້າງກຸ່ມທາງການເມືອງ.

## ກ. ກຸ່ມມາກຊານ ( MarShallPlan )

ນັບແຕ່ໂລກແບ່ງອອກເປັນສອງລະບົບ ( ຄ້າຍ ) ທີ່ມີອຸດົມການ ແລະ ເປົ້າໝາຍທີ່ແຕກຕ່າງກັນ ບັນດາປະເທດທຶນນິຍົມ ອັນມີສະຫະລັດອາເມຣິກາ ເປັນຜູ້ນຳໜ້າກໍ່ມີຄວາມພະຍາຍາມຈັດຕັ້ງກຸ່ມເສດຖະກິດ, ກຸ່ມການເມືອງຂຶ້ນເພື່ອຕໍ່ຕ້ານກັບບັນດາປະເທດສະມາຊິກສັງຄົມນິຍົມກໍ່ຄື ສະຫະພາບໂຊວຽດ ເພື່ອຕ້ອງການຢາກຢັບຢັ້ງການຂະຫຍາຍຕົວຂອງລະບົບສັງຄົມນິຍົມກໍ່ຄືການຂະຫຍາຍຕົວຂອງ ລັດທິຄອມມູນິດໃນໂລກ.

ບັນດາປະເທດທຶນນິຍົມ ໂດຍສະເພາະອາເມຣິກາໄດ້ເລີ່ມມີການຮ່ວມກຸ່ມທາງດ້ານເສດຖະກິດ ການເມືອງເພື່ອຕ້ານກັບລັດທິຄອມມູນິດ ຕັ້ງແຕ່ໄລຍະຫຼັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ, ສະແດງອອກຢູ່ໃນແຜນການ " ມາກຊານ " ຂອງແຜນສະຫະລັດອາເມຣິກາ.

ກຸ່ມມາກຊານ ( MarShallPlan ) ເປັນກຸ່ມແຜນການຂອງສະຫະລັດອາເມຣິກາວາງອອກ ແຜນການນີ້ ອາເມຣິກາພະຍາຍາມໃຫ້ຄວາມຊ່ວຍເຫຼືອແກ່ ບັນດາປະເທດເອີຣົບຕາເວັນອອກ ທີ່ໄດ້ຮັບຜົນສະທ້ອນໃນສົງຄາມໂລກຄັ້ງທີ 2 ເພື່ອເປັນກ້ອນທຶນໃນການພື້ນຟູເສດຖະກິດ, ສັງຄົມໃຫ້ມີຄວາມເຂັ້ມແຂງຢ່າງໄວວາ ເພື່ອເປັນກຳລັງໃນການສະໜັບສະໜູນຂອງຕົນໃນການຕໍ່ຕ້ານ ອິດທິພົນຂອງ ສະຫະພາບໂຊວຽດກໍ່ຄື ລັດທິສັງຄົມນິຍົມແຫ່ງໂລກ.

### 2.1.3 ດ້ານການທະຫານ

ໃນເດືອນມິຖຸນາປີ ຄ.ສ 1948 ມີປະເທດແບນຊິກ, ຝຣັ່ງ, ອັງກິດ, ລຸກຊຳບວກ, ໂຮນລັງ ໄດ້ຮ່ວມກັນເຮັດສົນທິສັນຍາຢູ່ກຸງບຣາແຊນ ( ປະເທດແບນຊິກ ) ເອີ້ນວ່າ: ສົນທິສັນຍາບຣຸກແຊນ ( BrasselsTreaty ) ສົນທິສັນຍາວ່າດ້ວຍ ການຮ່ວມມືທາງດ້ານເສດຖະກິດ ແລະ ດ້ານການທະຫານ, ຈັດຕັ້ງລະບົບປ້ອງກັນການຮ່ວມມືກັບບັນດາປະເທດເອີຣົບຕາເວັນຕົກ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ອາເມຣິກາຢ່າງເຕັມທີ່ ສະແດງອອກໃນຄວາມພະຍາຍາມຊ່ວຍເຫຼືອທາງ ດ້ານການທະຫານນັບມື້ນັບຫຼາຍຂຶ້ນຈົນສຸດທ້າຍກໍ່ມີການຮ່ວມມືກັນເຮັດ ສົນທິສັນຍາປ້ອງກັນອັດລັງຕິກເໜືອ ( NATO ) ຂຶ້ນ.

## ກ. ການສ້າງຕັ້ງກຸ່ມນາໂຕ ( NATO )

ກຸ່ມນາໂຕ ( NATO: North Atlantic Treaty Organization ) ເປັນອົງການສົນທິສັນຍາປ້ອງກັນອັດລັງຕິກເໜືອ ສ້າງຕັ້ງຂຶ້ນຢູ່ກຸງວໍຊິງຕັນ ວັນທີ 4 ເມສາ ປີ ຄ.ສ 1949 ໂດຍມີປະເທດສະມາຊິກເຂົ້າຮ່ວມມີ: ສະຫະລັດອາເມຣິກາ, ແຄນນາດາ, ໂປໂລຍ, ອີຕາລີ, ນໍອກແວ, ເດັນໝາກ, ໄອແລນ ກຸ່ມນີ້ສ້າງຕັ້ງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ.

ອົງການນີ້ ສະຫະລັດອາເມຣິກາ ເປັນຜູ້ຄອບງຳທາງດ້ານການທະຫານເຫັນໄດ້ຈາກຂໍ້ຄວາມໃນມາດຕາທີ 1 ຂອງສົນທິສັນຍານີ້ວ່າ: " ປະເທດພາຄີສະຫາຊິກຕົກລົງກັນວ່າ ການໂຈມຕີດ້ວຍອາວຸດຕໍ່ປະເທດໃດໜຶ່ງ ຫຼື ຫຼາຍກ່ວານັ້ນ ໃນເອີຣົບ ຫຼື ວ່າໃນເອເມຣິກາເໜືອຖືວ່າເປັນການໂຈມຕີປະເທດພາຄີສະມາຊິກໝົດ ແລະ ຈະຖືສິດໃນການປົກປ້ອງຕົນເອງທີ່ຈະ ໄດ້ດຳເນີນການຕອບໂຕ້ ບໍ່ວ່າຈະເປັນໂດຍພາລະການ ຫຼື ການຮ່ວມມືກັບປະເທດສະມາຊິກອື່ນ. ຮ່ວມທັງການຕອບໂຕ້ທີ່ໃຊ້ກຳລັງອາວຸດເພື່ອຮັກສາ ໄວ້ຄວາມໝັ້ນຄົງສັນຕິພາບລະຫວ່າງປະເທດ ". ນີ້ແມ່ນ ການສະແດງໃຫ້ເຫັນການກຳນົດສິດຂອງອາເມຣິກາໃນການລວງລະເມີດກິດຈະການພາຍໃນຂອງປະເທດສະມາຊິກ ຈົນກາຍເປັນເຫດໃຫ້ ຝຣັ່ງເກີດຄວາມບໍ່ພໍໃຈ ໄລຍະຕໍ່ມາຕໍ່ກັບອົງການ, ທ່ານ ເດີໂກນ ( CharLes De Gaulle ) ປະທານາທິບໍດີຝຣັ່ງ ໃຫ້ທັດສະນະວ່າ: " ເອີຣົບບໍ່ແມ່ນຄູ່ສັນຍາເທົ່າທຽມກັບສະຫະລັດອາເມຣິກາ, ແຕ່ເປັນຄວາມພະຍາຍາມຂອງອາເມຣິກາ ຢາກຄອບງຳເອີຣົບຕາເວັນຕົກໂດຍຜ່ານອົງການນີ້ ".

ຈຸດປະສົງຂອງການສ້າງຕັ້ງອົງການນີ້ແມ່ນ ເພື່ອຈັດຕັ້ງລະບົບສຳພັນທະມິດທາງດ້ານການທະຫານໃຫ້ທ່ວງດຶງອຳນາດຂອງຝ່າຍກົງກັນຂ້າມຄື ຄອມມູນິດກໍ່ຄືສະຫະພາບໂຊວຽດ ແລະ ເພື່ອໃຫ້ຄວາມຊ່ວຍເຫຼືອປະເທດສະມາຊິກໃນກໍລະນີທີ່ຖືກຮຸກຮານຈາກພາຍນອກ. ຕະຫຼອດຮອດເຖິງ ເປັນການສົ່ງເສີມຄວາມໝັ້ນຄົງທາງດ້ານເສດຖະກິດ. ໂດຍມີນັກປະຫວັດສາດທ່ານໜຶ່ງໄດ້ກ່າວໄວ້ວ່າ: " ການຈັດຕັ້ງອົງການນາໂຕ ( NATO ) ນີ້ຖືວ່າເປັນສ່ວນໜຶ່ງຂອງຄວາມພະຍາຍາມທີ່ຈະດຶງຝ່າຍຄອມມູນິດໄວ້ໃຫ້ຢູ່ກັບທີ່ບໍ່ໃຫ້ມີການຂະຫຍາຍຕົວໄດ້ ".

ປັດຈຸບັນນີ້ ກຸ່ມນາໂຕມີປະເທດສະມາຊິກທັງໝົດ 26 ປະເທດຄື: ປະເທດສະຫະລັດອາເມຣິກາ, ເດັນໝາກ, ແບຣນຊິກ, ແຄນນາດາ, ຝຣັ່ງ, ໄອແລນ, ອີຕາລີ, ລຸກຊຳບວກ, ນິວຊີແລນ, ນອກແວ, ແອັດສະປາຍ, ຕວກກີ, ປ໋ອກຕຸຍການ, ເຊັກ, ຮົງກາລີ, ໂປໂລຍ, ລູມານີ, ສະໂລວາກີ, ມົງໂກລີ, ເຢຍລະມັນ, ແອັດໂຕນີ, ລັດເວຍ.



ຮູບທີ 4 ສັນຍາລັກອົງການນາໂຕ

\+ ລະບົບໂຄງສ້າງຂອງກຸ່ມນາໂຕ ( NATO )

ອົງການນາໂຕ ໄດ້ແບ່ງລະບົບການເຮັດວຽກອອກເປັນ 2 ບົບຄື:

1 **ອົງການພົນລະເຮືອນ**

\- ຄະນະມົນຕີ ອົງການອັດລັງຕິກເໜືອ ມີໜ້າທີ່ຮັບຜິດຊອບຕໍ່ການຕັດສິນໃຈຕ່າງໆ, ຄວາມໝາຍຂອງສົນທິສັນຍາ ແລະ ການນຳໄປປະຕິບັດ ຄະນະມົນຕີແມ່ນປະກອບດ້ວຍ ລັດຖະມົນຕີກະຊວງຕ່າງປະເທດ, ລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ລັດຖະມົນຕີກະຊວງການເງິນ. ອົງການນີ້ມີການປະຊຸມຢ່າງໜ້ອຍ 2 ຄັ້ງຕໍ່ປີ.

\- ສຳນັກງານເລຂາທິການນາໂຕ ( NATO ) ຕັ້ງຢູ່ກຸງປຣັສເຊຍ ມີໜ້າທີ່ຮັບຜິດຊອບລວມຂອງອົງການ ລວມທັງການວາງແຜນນະໂຍບາຍ . ຫົວໜ້າສານັກງານເລຂາທິການໃຫຍ່ຄົນປະຈຸບັນແມ່ນ ທ່ານ ແຈບ ເດ ຮຸບເຊັດເຕີ ( Jaap De HoopScheter )

2 **ອົງການຝ່າຍທະຫານ**

ຄະນະກຳມາທິການທາງການທະຫານ ( The mititary Committee ) ມີໜ້າທີ່ໃຫ້ຄຳແນະນຳທາງດ້ານການທະຫານແກ່ ຄະນະມົນຕີ ແລະ ຜູ້ບັນຊາການທະຫານປະສົມປະກອບດ້ວຍ ເສນາທິການທະຫານຂອງປະເທດ, ຍົກເວັ້ນອັງກິດ ແລະ ໄອແລນ ( ເພາະບໍ່ມີກຳລັງທະຫານ ) ມີການຈັດກອງປະຊຸມຢ່າງໜ້ອຍ 2 ຄັ້ງຕໍ່ປີ. ອົງການນາໂຕໄດ້ແບ່ງເຂດຍຸດທະສາດການປົກຄອງອອກເປັນ 3 ເຂດຄື:

1\. ເຂດເອີຣົບພາຍໃຕ້ ການບັນຊາການເອີຣົບ ໂດຍມີການບັນຊາການເອີ້ນວ່າ: SHAPE ປະກອບດ້ວຍກຳລັງທະຫານເຄື່ອນທີ່ໄວ ມາຈາກປະເທດສະມາຊິກພ້ອມປະຕິການທັນທີເມື່ອມີການສົງການໃນເຂດຮັບຜິດຊອບຄື: ອາຟຣິກາເໜືອ, ທະເລເມດິແຕລາເນ, ເອີຣົບກາງ ແລະ ເອີຣົບເໜືອ ມີກອງບັນຊາການຢູ່ເມືອງໂຄຊັນ ( ປະເທດນອກແວ )

2\. ເຂດມະຫາສະໝຸດອັດລັງຕິກ ມີເຂດຮັບຝິດຊອງແຕ່ຂົ້ວໂລເໜືອຮອດຝຣັ່ງ ມີໜ້າທີ່ຮັບຜິດຊອບຮັກສາການເສັ້ນທາງການເດີນເຮືອໃນຂອບເຂດມະຫາສະໝຸດອັງລັງຕິກລັກສະນາການປະຕິບັດການແມ່ນເປັນທະຫານກອງທັບເຮືອ

3 ຊ່ອງແຄບ ( the chanel command ) ຮັບຜິບຊອບຊອງແຄບອັງກິດ ແລະ ທະເລເໜືອຕອນໃຕ້ ເຮັດໜ້າທີ່ຄຸ້ມຄອງປ້ອງກັນເຮືອພານິດເຊີ່ງປະສານງານກັບກອງທັບອາກາດ

## ຂ. ການສ້າງຕັ້ງກຸ່ມຊີອາໂຕ ( SEATO)

ອົງການຊີອາໂຕ ( SEATO: South East Asai Collection Defence Treaty ) ອົງການສົນທິສັນຍາປ້ອງກັນອາຊີຕາເວັນອອກສຽງໃຕ້ ສ້າງຕັ້ງຂຶ້ນເມື່ອວັນທີ 8 ກັນຍາ 1954 ທີ່ກຸງມະນີລາ ( ປະເທດຟີລິບປິນ ) ປະເທດສະມາຊິກປະກອບມີ: ປະເທດສະຫະລັດອາເມຣິກາ, ໄທ, ຟີລິບປິນ, ປາກີດສະຖານ, ອົດສະຕາລີ, ນິວຊີແລນ, ອັງກິດ ແລະ ຝຣັ່ງ.




ຮູບທີ 5: ຮູບພາບປະເທດສະມາຊິກກຸ່ມຊີອາໂຕ

ອົງການນີ້ ໄດ້ກຳເນີດຂຶ້ນໃນລະຫວ່າງການປະຊຸມຄະນະມົນຕີສົນທິນສັນຍາໃນກຸງເທບ ( ປະເທດໄທ ) ວັນທີ 23-25 ເດືອນກຸມພາ ປີ ຄ.ສ 1955 ເຊິ່ງໄດ້ຮັບການສະໜັບສະໜູນຈາກ ສະຫະລັດອາເມຣິກາ ເພື່ອເປັນເຄື່ອງມືໃນການສະກັດກັ້ນການຂະຫຍາຍຕົວຂອງ ລັດທິຄອມມູນິດ ໃນພູມິພາກອາຊາຕາເວັນອອກສຽງໃຕ້ ຍ້ອນວ່າອາເມຣິກາບໍ່ພໍໃຈ ແລະ ມີຄວາມກັງວົນກ່ຽວກັບອິນດູຈີນ ພາຍຫຼັງຂໍ້ຕົກລົງ " ເຈນີວາ " ວ່າດ້ວຍອິນດູຈີນ ເດືອນ ກໍລະກົດ ຄ.ສ 1954 ອາເມຣິກາ ໄດ້ລະເມີດຂໍ້ຕົກລົງນີ້ ເພາະວ່າບໍ່ພໍໃຈໃນຂໍ້ຕົກລົງໄດ້ແບ່ງ ຫວຽດນາມຊົ່ວຄາວໃນ ລະຫວ່າງເສັ້ນຂະໜານທີ ເໜືອ ແລະ ໄດ້ມອບໃຫ້ ຄອມມູນິດ ເປັນຜູ້ຄວບຄຸມບໍລິຫານພາກເໜືອຫວຽດນາມ ສະຫະລັດອາເມຣິກາຄິດວ່າເທົ່າກັບເປັນການຍອມຮັບມີການກໍ່ຕັ້ງປະເທດຄອມມູນິດຂຶ້ນອັນເຮັດໃຫ້ ອາເມຣິກາບໍ່ພໍໃຈຢ່າງແຮງ.



ຮູບທີ 6: ຮູບກອງປະຊຸມເຈນີວາ ປະເທດສະວິດເຊີແລນ

ອົງການຊີອາໂຕ SEATO ບັນດາປະເທດສະມາຊິກໄດ້ພາກັນສະແດງການປະສານສົມທົບກັນ ພະຍາຍາມປົກປ້ອງສັນຕິພາບ ແລະ ຄວາມໝັ້ນຄົງຂອງອົງການ ໂດຍສະເພາະສະແດງອອກໃນສົນທະສັນຍາຂໍ້ທີ 4 ມີເນື້ອໃນວ່າ: ບັນດາປະເທດສະມາຊິກໃດໜຶ່ງຖືກຮຸກຮານຈະເປັນການຮຸກຮານທາງອາວຸດ ຫຼື ທາງໃດກໍ່ຕາມ ປະເທດສະມາຊິກທັງໝົດຖືວ່າເປັນອັນຕະລາຍຮ່ວມກັນ ແລະ ຈະປະຕິບັດຕາມການປະເຊີນໜ້າອັນຕະລາຍຮ່ວມກັນ ຫຼື ວ່າບໍ່ລິເວນຂອບເຂດຄວບຄຸມຂອງອົງການຖືກຮຸກຮານບໍ່ວ່າເປັນ ວິທີການໃດກໍ່ຕາມ ປະເທດສະມາຊິກຈະມີການປຶກສາຫາລືກັນເພື່ອປ້ອງກັນຮ່ວມກັນ



ຮູບທີ 7: ສັນຍາລັກອົງການຊີອາໂຕ

ໃນເບື້ອງຕົ້ນອົງການຊີອາໂຕ ( SEATO ) ໄດ້ກ່າວວ່າ: ປະເທດສະມາຊິກທັງໝົດຈະມີການຊ່ວຍເຫຼືອກັນທັນທີເມື່ອຖືກຮຸກຮານຈາກອາວຸດ ແລະ ຕັ້ງກອງບັນຊາການໃຫຍ່ຢູ່ປະເທດໄທ, ສະຫະລັດອາເມຣິກາໃນເບື້ອງຕົ້ນເຫັນວ່າອົງການນີ້ບໍ່ມີຄວາມຈຳເປັນໃດໆກັບການຈຳກັດເສລີພາບພາຍໃຕ້ ສົນທິສັນຍາຈຶ່ງໄດ້ລະບຸໃນສັນຍາແບບລວມໆ ມີພຽງແຕ່ກໍລະນີທີ່ຖືກບຸກໂຈມຕີດ້ວຍອາວຸດຕໍ່ປະເທດໃດໜຶ່ງ ກັບ ອີກປະເທດໜຶ່ງ ກໍ່ຈະດຳເນີນການພິຈາລະນາໄປຕາມກົດໝາຍຂອງຕົນ. ມີການແຕ່ງຕັ້ງຄະນະກຳມະການເປັນທີ່ເປີກສາທາງ ການທະຫານ ເພື່ອວາງແຜນ ແລະ ສະເໜີແນະນຳມາດຕະການ ການຮ່ວມມືທາງການທະຫານ ເພື່ອກຽມພ້ອມຮັບກັບທຸກສະຖານະການທີ່ຈະເກີດຂຶ້ນໃນທຸກເມື່ອ. ອົງການຊີອາໂຕ ( SEATO ) ບໍ່ມີບົດບາດທາງການທະຫານຢ່າງແທ້ຈິງ ຍ້ອນວ່າຄວາມແຕກຕ່າງຢ່າງຂາດຂັ້ນ ທາງດ້ານຜົນປະໂຫຍດ ແລະ ລະດັບຄວາມໝັ້ນຄົງຂອງປະເທດສະມາຊິກ. ຄວາມເປັນເອກະພາບກັນໃນການດຳເນີນງານ. ນອກນັ້ນ ຍັງບໍ່ມີຂໍ້ໃດໃນສົນທິສັນຍາມີການກຳນົດການຊ່ວຍເຫຼືອກັນຢ່າງຊັດເຈນ.

ມາໃນວັນທີ 30 ເດືອນ ມິຖຸນາ ຄ.ສ 1987 ອົງການຊີອາໂຕ SEATO ໄດ້ຖືກຍົກເລີກຢ່າງເປັນທາງການຍ້ອນວ່າ ສະຖານະການຂອງໂລກມີການປ່ຽນແປງຫຼາຍໂດຍສພເພາະທາງດ້ານການເມືອງ ສະຫະລັດອາເມຣິກາຈຶ່ງໄດ້ຖອນກຳລັງອອກຈາກຫວຽດນາມໃຕ້ບວກກັບ ລັດຖະບານທີ່ອາເມຣິກາໄດ້ໃຫ້ການສະໜັບສະໜູນໃນປະເທດ 3 ຊາດອິນດູຈີນໄດ້ປະສົບກັບການປະລາໄຊ ເຮັດໃຫ້ອາເມຣິກາເຫັນວ່າ ອົງການນີ້ບໍ່ມີຄວາມຈຳເປັນແລ້ວໃນຖານະໃນການດຳເນີນນະໂຍບາຍຕ່າງປະເທດຂອງ ສະຫະລັດອາເມຣິກາໃນຂົງເຂດອາຊີຕາເວັນອອກສຽງໃຕ້.

## 3. ການພົວພັນບັນດາປະເທດທຶນນິຍົມດ້ວຍກັນ

## 3.1 ຂໍ້ຂັດແຍ່ງຂອງໂລກທຶນນິຍົມ

ການພົວພັນກັນລະຫວ່າງປະເທດທຶນນິຍົມ ແມ່ນໄປຄຽງຄູ່ກັບ ຄວາມປານີປະນອມເຊິ່ງກັນ ແລະ ກັນ ເພື່ອຂັດຂວາງ ແລະ ຫວັງດັບສູນລັດທິຄອມມູນິດນັ້ນ ພາຍໃນຂອງກຸ່ມປະເທດນາຍທຶນເອງກໍ່ເກີດມີຄວາມຂັດແຍ່ງເຊັ່ງຄຽງກັນ ເຊິ່ງສືບເນື່ອງມາຈາກການເອົາລັດເອົາປຽບກັນເຊິ່ງກັນ ແລະ ກັນ, ການຊ່ວງຊີງກັນເປັນໃຫຍ່ ແລະ ຍາດແຍ່ງກັນທາງດ້ານສິດຜົນປະໂຫຍດຂອງກັນ ແລະ ກັນລະຫວ່າງ ປະເທດມະຫາອຳນາດດ້ວຍກັນໂດຍ ສະເພາະຄວາມຂັດແຍ່ງທາງດ້ານ ເສດຖະກິດອັນເປັນເຫດໃຫ້ມີຄວາມຂັດແຍ່ງກັນໃນດ້ານອື່ນຕາມໆມາ.

ພາຍຫຼັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງເປັນຕົ້ນມາອາເມຣິກາ ໄດ້ອາໄສຄວາມເຂັ້ມແຂງທາງດ້ານເສດຖະກິດ ແລະ ຄວາມເໜືອກ່ວາທາງ ດ້ານການທະຫານຂອງຕົນແຜ່ອຳນາດແຜ່ອິດທິພົນຄອບງຳ ບັນດາປະເທດຕາເວັນຕົກ ເຊິ່ງເຄີຍເປັນປະເທດມະຫາອຳນາດມາກ່ອນ ສະແດງອອກການເຂົ້າມີບົດບາດໃນການຈັດຕັ້ງກຸ່ມການເມືອງ, ການທະຫານຂຶ້ນໃນພາກພື້ນຕ່າງໆໃນໂລກ. ດ້ານເສດຖະກິດອາເມຣິກາໄດ້ແຜ່ອິດທິພົນດ້ວຍແຜນການ " ມາກຊານ ປີ ຄ.ສ 1947 " ກ້າວໄປສູ່ການສ້າງຕັ້ງອົງການວ່າດ້ວຍ ການຮ່ວມມືທາງດ້ານເສດຖະກິດຂອງເອີຣົບໃນປີ ຄ.ສ 1948

ຄວາມພະຍາຍາມຢາກເປັນມະຫາອຳນາດພຽງຜູ້ດຽວຂອງ ສະຫະລັດອາເມຣິກາຢູ່ໃນໂລກເວລານັ້ນ ກໍ່ໃຫ້ເກີດຄວາມຂັດແຍ່ງເກີດຂຶ້ນໄປຄຽງຄູ່ກັບການຮ່ວມມືຂອງ ບັນດາປະເທດມະຫາອຳນາດເອີຣົບຕາເວັນຕົກກັບ ອາເມຣິກາ. ເຊິ່ງສະແດງອອກຢູ່ໃນການພະຍາຍາມຈັດຕັ້ງສະພາເສດຖະກິດເອີຣົບໃນປີ ຄ.ສ 1957 ເພື່ອການຫຼີກລ້ຽງການແຊກແຊງທາງດ້ານເສດຖະກິດຂອງອາເມຣິກາ, ຕົກມາຊ່ວງຊຸມປີ 70 ຂອງສະຕະວັດທີ XX ຝຣັ່ງໄດ້ມີນະໂຍບາຍຂັດແຍ່ງກັບ ສະຫະລັດອາເມຣິກາສະແດງອອກ ປະທານາທິບໍດີ ທ່ານ ເດີໂກນ ໄດ້ມີການປ່ຽນແປງນະໂຍບາຍການຕ່າງປະເທດໃໝ່ຄື: ໄດ້ປະກາດຮັບຮູ້ລັດຖະບານ ສາທາລະນະລັດ ປະຊາຊົນຈີນ ປີ ຄ.ສ 1964 ຈາກນັ້ນກໍ່ເປີດສຳພັນການທູດຕໍ່ກັນ , ມາໃນປີ ຄ.ສ 1965 ຝຣັ່ງໄດ້ຢຸດຕິການເຂົ້າຮ່ວມກິດຈະການຕ່າງໆຂອງກຸ່ມນາໂຕ, ໃນປີຖັດມາໄດ້ສ້າງສາຍສຳພັນທະໄມຕີກັບ ສະຫະພາບໂຊວຽດ, ມາໃນປີ ຄ.ສ 1966 ໄດ້ປະກາດຖອນຕົວອອກຈາກການເປັນສະມາຊິກຂອງ ອົງການນາໂຕ ( NATO ) ພ້ອມກັນນັ້ນ ຍັງຮຽກຮ້ອງໃຫ້ກອງບັນຊາການສູງສຸດ ແລະ ທະຫານຂອງອົງການນາໂຕ ( NATO ) ຕ້ອງຖອນອອກຈາກຝຣັ່ງໂດຍໄວ ໃນທີ່ສຸດອົງການນາໂຕກໍ່ຖອນອອກຈາກຝຣັ່ງໄປຕັ້ງຢູ່ກຸງບຣຸກແຊນ ( ປະເທດແບນຊິກ ). ໃນປີ ຄ.ສ 1967 ຝຣັ່ງໄດ້ປະກາດນະໂຍບາຍວ່າ " ເອີຣົບສຳລັບຊາວເອີຣົບ ແລະ ເອີຣົບຍ່ອມມີສ່ວນຮັບຜິດຊອບຕໍ່ການເມືອງລະຫວ່າງປະເທດຢູ່ໃນລະດັບດຽວກັບ ສະຫະລັດອາເມຣິກາ ແລະ ສະຫະພາບໂຊວຽດ " ເຫດການດັ່ງກ່າວນັ້ນມັນ ໄດ້ສະແດງໃຫ້ເຫັນຄວາມຂັດແຍ່ງລະຫວ່າງປະເທດມະຫາອຳນາດຕາເວັນຕົກ ແລະ ສະຫະລັດອາເມຣິກາ.

- ຄວາມຂັດແຍ່ງລະຫວ່າງຝຣັ່ງ ກັບ ອັງກິດ ຝຣັ່ງໄດ້ທຳການກີດຂວາງບໍ່ໃຫ້ອັງກິດເຂົ້າຮ່ວມອົງການຕະຫຼາດຮ່ວມ ໃນໄລຍະຕົ້ນທັ້ງໆທີ່ນອນ ໃນກຸ່ມໂລກເສລີຄືກັນ
- ເກຣັກ ກັບ ຕວກກີ ຄວາມຂັດແຍ່ງລະຫວ່າງບັນຫາ ເກາະໄຊປຣັດ ແລະ ການຊ່ວງຊີງກັນສະແຫວງຫາແຫຼ່ງນ້ຳມັນໃນທະເລເຊຍ.
- ອັງກິດ ກັບ ໄອແລນ ເກີດຄວາມຂັດແຍ່ງກັນໃນ ເຂດນ່ານນ້ຳຫາປາຈົນໄປເຖິງ ໄອແລນໄດ້ຕັດຄວາມສຳຄັນໄມຕີຈິດຮ່ວມກັນ ແລະ ຄວາມສຳພັນທາງດ້ານການທູດກັບອັງກິດໃນປີ ຄ.ສ 1975.
- ປ໋ອກຕຸຍການ ກັບ ແອັດສະປາຍ ຂັດແຍ່ງກັນເນື່ອງຈາກຂະບວນກອງໂຈນ ແຕ່ລະເຂົ້າມາອາໄສຢູ່ໃນດິນແດນທັງສອງຝ່າຍ ພາໃຫ້ເກີດມີຄວາມເຂົ້າໃຈຜິດຕໍ່ກັນ.

- ສະມາຊິກອົງການຕ່າງໆຕະຫຼາດຮ່ວມ ບັນດາປະເທດສະມາຊິກຕ່າງກໍ່ພະຍາຍາມຮັກສາສິດຜົນປະໂຫຍດຂອງຕົນສູງກວ່າຜົນປະໂຫຍດສ່ວນລວມເຊິ່ງເປັນຂອດທີ່ພາໃຫ້ເກີດຄວາມຂັດແຍ່ງກັນຂຶ້ນເລື້ອຍໆ. ຄວາມຂັດແຍ່ງທີ່ພວມເຄັ່ງຕຶງຢູ່ໃນລະດັບສູງລະຫວ່າງປະເທດທຶນນິຍົມດ້ວຍກັນແມ່ນຄວາມຂັດແຍ່ງທາງດ້ານເສດຖະກິດ, ການຄ້າທີ່ໄດ້ເລີ່ມຂຶ້ນແຕ່ຊຸມປີ 80 ແມ່ນ 3 ໃຈກາງທາງດ້ານເສດຖະກິດຄື: ສະຫະລັດອາເມຣິກາ, ເອີຣົບຕາເວັນຕົກ ແລະ ຍີ່ປຸ່ນ ເຮັດໃຫ້ຄວາມຂັດແຍ່ງແຜ່ຂະຫຍາຍຕົວກ້ວາງອອກ ພາຍຫຼັງທີ່ປະເທດຕ່າງໆພາກພື້ນໃນທົ່ວໂລກໄດ້ມີມາດຕະການເຕົ້າໂຮມກັນເປັນກຸ່ມເສດຖະກິດໃນພາກພື້ນ ໂດຍມີຈຸດປະສົງເພື່ອປົກປ້ອງຕະຫຼາດຂອງຕົນ ແລະ ຫຼີກລ້ຽງມີການໃຊ້ກຳລັງໃນ ການເຈລະຈາແກ້ໄຂບັນຫາລະຫ່ວາງປະເທດໃນກຸ່ມ ແລະ ກຸ່ມປະເທດນາຍທຶນ.

ເວົ້າລວມແລ້ວ ຄວາມເປັນເອກະພາບຂອງນາຍທຶນນັ້ນ ໄດ້ຂະຫຍາຍຕົວໄປພ້ອມໆກັບຄວາມຂັດແຍ່ງກັນທາງດ້ານການເມືອງ ແລະ ດ້ານເສດຖະກິດ ທີ່ພວມຜັນແປໄປຢ່າງສັບສົນລະຫ່ວາງປະເທດທຶນນິຍົມດ້ວຍກັນ.

## 2.2 ລະບົບສັງຄົມນິຍົມ

ສັງຄົມນິຍົມແມ່ນ ລະບອບການປົກຄອງທີ່ມີອຳນາດການປົກຄອງແບບລວມສູນທີ່ສູນກາງຂອງປະເທດຄື: ຄະນະລັດຖະບານ ແລະ ປະມຸກລັດຂອງປະເທດເປັນລະບົບການປົກຄອງທີ່ບໍ່ມີກະສັດເປັນປະມຸກສັດ ດັ່ງນັ້ນຈຶ່ງມີການປົກຄອງແບບສາທາລະນະລັດ ໂດຍມີລັດຖະບານເປັນຜູ້ນຳບໍລິຫານປະເທດຊາດ.

### 2.2.1 ເສດຖະກິດ

#### ກ. ສະພາຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນ

ພາຍຫຼັງປະເທດເອີຣົບຕາເວັນອອກ ໄດ້ກ້າວເຂົ້າສູ່ໄລຍະກໍ່ສ້າງ ສັງຄົມນິຍົມເພື່ອສ້າງສາຍພົວພັນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ມີການຮ່ວມກຸ່ມທາງດ້ານເສດຖະກິດແຕ່ຕ້ອງໃຕ້ສະພາຊ່ວຍກັນ ແລະ ກັນ ທາງເສດຖະກິດ (Couneil of Mual Eutual Ecomomic Assistant ) ຊື່ຫຍໍ້ວ່າ: ໂຄເມຄອນ ( ComeCon ) ສ້າງຕັ້ງຂຶ້ນໃນ ເດືອນມັງກອນ ປີ ຄ ສ 1969 ໃນເບື້ອງຕົ້ນມີພຽງແຕ່ເອີຣົບຕາເວັນອອກ ໂດຍສະເພາະແມ່ນສະຫະພາບໂຊວຽດເປັນຜູ້ຊີ້ນຳ ປະເທດສະມາຊິກປະກອບມີ : ສະຫະພາບໂຊວຽດ, ບູນກາລີ, ເຊັກໂກສະໂລວາກີ, ຮົງກາລີ, ອານບານີ ( ປີ ຄ.ສ 1961 ລາອອກຈາກປະເທດສະມາຊິກ ) ແລະ ເຢຍລະມັນຕາເວັນອອກ. ໃນໄລຍະຕໍ່ມາມີບັນດາປະເທດໃນອາຊີ ແລະ ອາເມລິກາລາຕິນເຂົ້າຮ່ວມຢ່າງຫຼວງຫຼາຍເຊັ່ນ: ຄ.ສ 1972 ປະເທດມົງໂກລີ, ປະເທດຄິວບາ, ຫວຽດນາມ ຄ ສ 1978.

ຈຸດປະສົງການຮ່ວມກຸ່ມເສດຖະກິດນີ້ແມ່ນເພື່ອການຮ່ວມມືກັນທາງດ້ານເສດຖະກິດລະຫວ່າງປະເທດ ສັງຄົມນິຍົມດ້ວຍກັນ ໂດຍສະເພາະແມ່ນເອີຣົບຕາເວັນອອກ. ມາໃນປີ ຄ.ສ 1959 ອົງການນີ້ໄດ້ຮັບການພັດທະນາປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນຄື: ມີການຈັດຕັ້ງໜ່ວຍງານທີ່ສຳຄັນ ເພື່ອຮັບຜິດຊອບວຽກງານອົງການຄັກແນ່ເຊັ່ນ: ຄະນະມົນຕີ, ຄະນະກຳມາທິການຖາວອນ, ສຳນັກງານເລຂາທິການ ຕະຫຼອດຮອດການຈັດຕັ້ງລະບົບທະນາຄານເພື່ອຮ່ວມກັນທາງດ້ານເສດຖະກິດ ແລະ ການລົງທຶນພາຍໃນປະເທດສະມາຊິກ ພາລະບົດຂອງອົງການນີ້ມີຖານະຄືກັບລັດໜຶ່ງ ໂດຍມີການກຳນົດແຜນການຕ່າງໆທາງດ້ານເສດຖະກິດຮ່ວມກັນ, ມີການລົງທຶນ ແລະ ການຮ່ວມມືໃນ ການກຳນົດຄວາມຊຳນານ ເພື່ອການແບ່ງງານກັນໃນຂະບວນການຜະລິດເພື່ອແນ່ໃສ່ຫຼີກເວັ້ນການຜະລິດທີ່ຊ່ວງຊີງແຂ່ງກັນ. ເພື່ອທ້ອນໂຮມ ແລະ ປະສົມປະສານແຮງງານຂອງບັນດາປະເທດໃນສັງຄົມນິຍົມ ໂດຍແນໃສ່ການລົງເລິກ ແລະ ປັບປຸງການຮ່ວມມືລະຫ່ວາງພວກເຂົາໃນ ຂົງເຂດເສດຖະກິດ, ວິທະຍາສາດ ແລະ ເຕັກນິກ. ຍົກສູງລະດັບການຂະຫຍາຍຕົວທາງດ້ານອຸດສາຫະກຳໜັກຂອງ ບັນດາປະເທດທີ່ມີລະດັບການຂະຫຍາຍຕົວໜ້ອຍກວ່າ, ຊຸກຍູ້ການເພີ່ມທະວີສະມັດຕະພາບຂອງແຮງງານໃນ ປະເທດສະມາຊິກເຫຼົ່ານີ້ ກ້າວໄປສູ່ຄວາມດຸ່ນດ່ຽງກັບລະດັບການຂະຫຍາຍຕົວທາງ ດ້ານເສດຖະກິດ ກ້າວໄປເຖິງຄວາມສົມບູນພູນສຸກຂອງປະຊາຊົນໃນບັນດາປະເທດພາຄີເອງ.

ຜ່ານການດຳເນີນງານຮ່ວມກັນໃນອົງການນີ້ເຮັດໃຫ້ການຜະລິດຂະຫຍາຍຕົວຢ່າງວ່ອງໄວ ຜົນຜະລິດຕະພັນເພີ່ມຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະເທດສະມາຊິກໃນກຸ່ມ ແລະ ສາມາດຕອບສະໜອງການກະຈາຍຜົນຜະລິດຕ່າງໆອອກໄປຍັງປະເທດທີ່ດ້ອຍ ພັດທະນາກ່ວາໃນຂົງເຂດຕ່າງໆທົ່ວໂລກ.

ການຮ່ວມກຸ່ມກັນທາງດ້ານເສດຖະກິດຂອງປະເທດສັງຄົມນິຍົມ ຫຼື ເອີຣົບຕາເວັນອອກແມ່ນໄດ້ສົມທົບກັນຢ່າງສົມເຫດ ແລະ ສົມຜົນ ລະຫວ່າງຜົນປະໂຫຍດຂອງຊາດ ແລະ ສິດຜົນປະໂຫຍດສ່ວນລວມຂອງລະບົບ ໂດຍພາຍໃຕ້ການແບ່ງງານກັນ ຜະລິດເປັນວິຊາສະເພາະຕາມຄວາມຊຳນິຊຳນານ ແລະ ການຮ່ວມມືແຕ່ລະປະເທດ ປະເທດທີ່ເປັນພື້ນຖານໃນການຜະລິດແມ່ນ ສະຫະພາບໂຊວຽດ ແລະ ປະເທດໂປໂລຍ ຜະລິດກຳປັ່ນ ສ່ວນປະເທດອື່ນໆກໍຜະລິດຕາມການກຳນົດໃນແຜນການລວມຂອງລະບົບ ການຮ່ວມກຸ່ມທາງດ້ານເສດຖະກິດ ຂອງປະເທດເຫຼົ່ານີ້. ນອກຈາກ ເປັນການພັດທະນາບັນດາປະເທດສະມາຊິກແລ້ວ ຍັງເປັນການຊ່ວຍສົ່ງເສີມເສດຖະກິດ, ສັງຄົມ ແລະ ການເມືອງໂລກ ໃຫ້ຜັນແປໄປຢ່າງມີ ສັນຕິພາບ ແລະ ມີຄວາມເປັນທຳ.

**ຂ. ການຂະຫຍາຍຕົວຂອງເສດຖະກິດຂອງສັງຄົມນິຍົມ**

**# ປະເທດຣັດເຊຍ**

- ດ້ານເສດຖະກິດ

ພາຍຫຼັງ ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ລັດຖະບານຣັດເຊຍ ໄດ້ເລີ່ມທຳການພື້ນຟູເສດຖະກິດ ໂດຍມີການຜັນປ່ຽນ ຈາກການຜະລິດກະສິກຳ ທີ່ຫຼ້າຫຼັງຫັນມາເປັນການກະສິກຳທີ່ມີຄວາມກ້າວໜ້າເທື່ອລະກ້າວ. ມາຮອດ ຄ.ສ 1921 ກອງປະຊຸມໃຫຍ່ຂອງ ພັກໂບເຊວິກ ໄດ້ຕົກລົງການຫັນນະໂຍບາຍ ( ຄອມມູນິດໃນສະໄໝສົງຄາມ ) ມາເປັນນະໂຍບາຍ “ ເສດຖະກິດແຜນໃໝ່ Nep ” ຫຍໍ້ມາຈາກ ( New Economic Planning ) ໂດຍແມ່ນທ່ານ ເລນິນ ເປັນຜູ້ຄົ້ນຄ້ວາ, ຮຽບຮຽງຂຶ້ນມາ ເຊິ່ງເນື້ອແທ້ຂອງ ນະໂຍບາຍເສດຖະກິດແຜນໃໝ່ ແມ່ນແຜນການຫັນປ່ຽນຈາກພື້ນຖານເສດຖະກິດເກົ່າເຊິ່ງເມື່ອກ່ອນແມ່ນ ລັດກຳມະສິດຜູກຂາດໃນທຸກດ້ານນັ້ນ ມາເປັນເສດຖະກິດການຄ້າ ໂດຍມີການດັດສົມຂອງລັດໃຫ້ມີການຂະຫຍາຍຕົວຂອງເສດຖະກິດຫຼາຍພາກສ່ວນ ແລະ ການນຳໃຊ້ທຶນຮອນ, ເຕັກນິກ ບົດຮຽນຂອງນາຍທຶນທີ່ມີຢູ່ໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ໃຫ້ ເສດຖະກິດມີການຂະຫຍາຍຕົວ ເຊິ່ງໄດ້ຖືເອົາການພື້ນຟູຂະຫຍາຍການ ກະສິກາເປັນຂອດຕົ້ນ ແລ້ວຈຶ່ງໄດ້ຊຸກຍູ້ຂະແໜງການອື່ນໆໃຫ້ມີການຂະຫຍາຍຕົວໄປພ້ອມໆກັນ.

ຍ້ອນມີແນວທາງອັນຖືກຕ້ອງ, ການພື້ນຟູເສດຖະກິດຂອງ ຣັດເຊຍຈຶ່ງມີທ່າຂະຫຍາຍຕົວໄປຢ່າງເຂັ້ມແຂງ ເນື້ອທີ່ການປູກຝັງຂະຫຍາຍຕົວອອກ ມາຮອດປີ ຄ.ສ 1922 ປະຊາຊົນໄດ້ຮັບໄຊຊະນະໃນ ການເກັບກູ້ຜົນລະປູກ ມີອາຫານພຽງພໍ, ກຳມະກອນຜູ້ຊຳນານງານຕ່າງໆກໍ່ກັບກັບຄືນເຂົ້າມາເຮັດວຽກຢູ່ ຕາມໂຮງຈັກ, ໂຮງງານຫຼາຍແຫ່ງ. ມາໃນທ້າຍປີ ຄ.ສ 1922 ທົ່ວດິນແດນຣັດເຊຍ ສາມາດປົດປ່ອຍຕົນເອງ ໄດ້ຢ່າງສິ້ນເຊີງບັນດາຊົນຊາດພາຍໃນປະເທດຣັດເຊຍ ໄລຍະ 3 ປີ ( ຄ.ສ 1922-1924 ) ການພື້ນພູເສດຖະກິດແມ່ນສຳເລັດໂດຍພື້ນຖານ ປີຄ.ສ 1925 ປະລິມານການຜະລິດການກະສິກຳເພີ່ມຂຶ້ນ 87%, ຜະລິດຕະພັນອຸດສາຫະກຳບັນລຸ 75% ຊີວິດການເປັນຢູ່ຂອງປະຊາຊົນກໍ່ໄດ້ຮັບການປົວແປງດີຂຶ້ນເທື່ອລະກ້າວ.

ທ້າຍປີ ຄ.ສ 1925 ເພື່ອເຮັດໃຫ້ເສດຖະກິດມີການພັດທະນາດີຂຶ້ນກ່ວາເກົ່າ ລັດຖະບານໄດ້ຫັນນະໂຍບາຍເສດຖະກິດມາເປັນອຸດສາຫະກຳ ສັງຄົມນິຍົມ ອຸດສາຫະກຳພື້ນຖານຕົ້ນຕໍແມ່ນ ອຸດສາຫະກຳພະລັງງານເຊັ່ນ: ໄຟຟ້າ, ຖ່ານຫີນ, ນ້ຳມັນເຊື້ອໄຟ...ນອກນັ້ນຍັງມີຍັງມີ ອຸດສາຫະກຳກົນຈັກ, ອຸດສາຫະກຳເຄມີ, ຂະແໜງການຄົມມະນາຄົມຂົນສົ່ງ ແລະ ປ້ອງກັນຊາດ.

ປີ 1927 ພັກ ແລະ ລັກຖະບານ ໄດ້ວາງແນວທາງໂດຍລະດົມໃຫ້ທຸກພາກສ່ວນປະຕິບັດ " ແຜນການ 5 ປີໃຫ້ສຳເລັດພາຍໃນ 4 ປີ " ຄ.ສ 1928-1933 ໃນແຜນການ 5 ປີ ລັດຖະບານໄດ້ວາງແນວທາງ ໂດຍຫັນເປັນ ກະສິກອນກະເສດ ທີ່ວ່າດ້ວຍການຫຼຸດຜ່ອນ ຊົນຊັ້ນກູລັກ ( ການກົດຂີ່ຂູດຮີດ ) ປະຊາຊົນລັດເຊຍ ໄດ້ພ້ອມກັນສູ້ຊົນຢ່າງສຸດຂີດ ເພື່ອບັນລຸຜົນສຳເລັດ ຕາມແຜນການ 5 ປີ ແລະ ສາມາດຮັບຜົນສຳເລັດໄດ້ພາຍໃນ 4 ປີ 3 ເດືອນ ( ຄ.ສ 1932 )

ຮອດປີ ຄ.ສ 1929 ວຽກງານການຫັນເປັນອຸດສາຫະກຳ ໄດ້ບັນລຸຜົນສຳເລັດ, ກິດຈະການໃຫຍ່ຫຼາຍແຫ່ງໄດ້ຮັບການກໍ່ສ້າງຂຶ້ນ ( ຄ.ສ 1930 ), ຄ.ສ 1931 ການຫັນເປັນກະສິກອນໄດ້ກວມ 2/3 ຂອງເນື້ອທີ່ປູກຝັງທົ່ວປະເທດ, ຈຳນວນຄອບຄົວຊາວນາໃນທົ່ວປະເທດເພີ່ມຂຶ້ນ 53% ມາຮອດທ້າຍປີ ຄ.ສ 1932 ວຽກງານການເຫັນເປັນການກະສິກຳແມ່ນໄດ້ຮັບຜົນສຳເລັດໂດຍພື້ນຖານ. ແຜນການ 5 ປີຄັ້ງທີ 1 ໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງ ແລະ ຈົບງາມໃນການສ້າງພື້ນຖານເສດຖະກິດ - ສັງຄົມ ຂອງຣັດເຊຍ.

- ດ້ານການເມືອງ-ສັງຄົມ

ພາຍຫຼັງ ການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917 ອຳນາດຂອງຣັດເຊຍ ໄດ້ຖະແຫຼງການກ່ຽວກັບ ກຳມະສິດຂອງ ບັນດາຊົນຊາດຢູ່ໃນປະເທດຣັດເຊຍ ຖະແຫຼງການດັ່ງກ່າວໄດ້ຢືນຢັນວ່າເຖິງສິດສະເໝີພາບ ແລະ ບັນດາສິດຕັດສິນດ້ວຍຕົນເອງຂອງບັນຊາດ ພ້ອມທັງມີສິດແຍກຕົວອອກຈາກປະເທດຣັດເຊຍ ແລະ ປະກາດລົບລ້າງທຸກຮູບການກົດຂີ່ຂູດຂອງ ລະບອບເກົ່າ, ໄດ້ຮັບຮອງເອົາຄວາມເປັນເອກະລາດແຫ່ງຊາດ ປະເທດແຟງ ແລະ ປະເທດໂປໂລຍ ຢ່າງເປັນທາງການ.

ໜ້າທີ່ສຳຄັນກ່ວາໝູ່ແມ່ນ ການທັບມ້າງກົງຈັກການປົກຄອງຂອງ ລັດສະຖາບັນເກົ່າ ສ້າງຕັ້ງກົງຈັກຂອງ ຊົນຊັ້ນກຳມະຊົນແບບໃໝ່ຄື ລັດໂຊວຽດ, ສານປະຊາຊົນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຮັບຜິດຊອບໜ້າທີ່ໆສຳຄັນຢູ່ໃນ ກົງຈັກອຳນາດການປົກຄອງໃໝ່.

ນອກຈາກນັ້ນ ລັດຖະບານຍັງປະກາດລົບລ້າງຊົນຊັ້ນວັນນະ, ຖານະບັນດາສັກຂອງພວກສັກດີນາຕ່າງໆໃນສັງຄົມ ພ້ອມທັງລົບລ້າງອະພິສິດຂອງໂບດ ( ຄວາມເຊື່ອ ) , ແຍກໂບດອອກຈາກ ອຳນາດລັດ ແລະ ໂຮງຮຽນຍິງ ແລະ ຊາຍໃຫ້ມີສິດສະເໝີພາບ ແລະ ພົນລະເມືອງທຸກຄົນລ້ວນແຕ່ມີສິດເທົ່າທຽມກັນ.

### 2.2.2 ດ້ານການເມືອງ ການທູດ-ອຸດົມການ

ອຸດົມການຂອງລັດທີສັງຄົມນິຍົມ ພາຍຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດລົງ ສະຫະພາບໂຊວຽດກ້າວສູ່ຄວາມມີບົດບາດ ອັນເນື່ອງມາຈາກຄວາມປະສົບຜົນສຳເລັດ ໂດຍສະພາຊ່ວຍເຫຼືອ ອເຊິ່ງກັນ ແລະ ກັນ ບັນດາປະເທດເອີຣົບຕາເວັນອອກ ໄດ້ຫຼຸດພົ້ນອອກຈາກອິດທິພົນຂອງພວກ ຟາດຊິດ ເຮັດໃຫ້ປະເທດເຫຼົ່ານີ້ຕັດສິນໃຈ ການສ້າງສາພັດທະນາປະເທດຊາດຂອງຕົນເອງໄປຕາມ ເສັ້ນທາງສັງຄົມນິຍົມ ໄດ້ມີການໂຄສະນາເຜີຍແຜ່ ຍົກໃຫ້ເຫັນຜົນສຳເລັດ ແລະ ຜົນດີຂອງອຸດົມການທາງການເມືອງຂອງຕົນ. ດັ່ງນັ້ນຈຶ່ງເຮັດໃຫ້ ລະບົບສັງຄົມນິຍົມກາຍເປັນ ການເມືອງທີ່ມີບົດບາດໃນເວທີສາກົນ ເຄື່ອງມືຊ່ວຍໃນການດຳເນີນການປະຕິບັດ ແມ່ນສຳນັກງານຂ່າວສານ ວັດທະນະທຳ.

ດ້ານການເມືອງ-ການທູດ ສັງຄົມນິຍົມ ໄດ້ມີການປຸກລະດົມຂົນຂວາຍ ຫາສຳພັນທະມິດເພື່ອການຕໍ່ສູ້ກັນທາງດ້ານການເມືອງເຊິ່ງສະແດງອອກເຊັ່ນ: ການຊັກຊວນກັນເຮັດສົນທິສັນຍາຮ່ວມກັນທາງດ້ານການເມືອງ

### ກ. ອົງການໂຄມິນຟອມ

ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງບັນດາປະເທດສັງຄົມນິຍົມ ໄດ້ມີການຈັດຕັ້ງກຸ່ມຂອງຕົນຂຶ້ນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ, ບໍ່ໃຫ້ຊາດຕາເວັນຕົກ ໂດຍສະເພາະ ຈັກກະພັດບໍໃຫ້ເຂົ້າມາແຊກແຊງກິດຈະການ

ພາຍໃນຂອງບັນດາປະເທດສັງຄົມນິຍົມ ດັ່ງຈຶ່ງການສ້າງອົງການທຳອິດຂື້ນແມ່ນສຳນັກງານຂ່າວ ຄອມມູນິດ ຫຼື ອົງການ ໂຄມິນຟອມ (COMINFROM: The Communist Infromation Bureau ) ໃນເດືອນຕຸລາປີ ຄ.ສ 1947; ເປັນອົງການແລກປ່ຽນຂ່າວສານຂອງ ບັນດາພັກຄອມມູນິດປະເທດຕ່າງໆ ໂດຍສະເພາະແມ່ນ ເອີຣົບຕາເວັນອອກ ແລະ ສະຫະພາບໂຊວຽດ

ຈຸດປະສົງການສ້າງຕັ້ງອົງການນີ້ແມ່ນ ເພື່ອການປົກປ້ອງບໍ່ໃຫ້ພວກປະເທດ ມະຫາອຳນາດຕາເວັນຕົກ ສາມາດ ແຊກແຊງເຂົ້າພາຍໃນ ພັກຄອມມູນິດ ຂອງເອີຣົບຕາເວັນອອກ ແລະ ປ້ອງກັນບໍ່ໃຫ້ປະເທດເຫຼົ່ານັ້ນ ຮັບການຊ່ວຍເຫຼືອ ຕາມແຜນ ການມາກຊາກ ຂອງສະຫະລັດອາເມຣິກາວາງອອກ. ອົງການນີ້ ໄດ້ລົດລະຄວາມຈຳເປັນລົງ ເມື່ອທຸກປະເທດ ໃນເອີຣົບຕາເວັນອອກໄດ້ຖືກປົກຄອງໂດຍພັກຄອມມູນິດຮຽບຮ້ອຍແລ້ວ ແລະ ໃນທີ່ສຸດອົງການນີກໍໄດ້ຖືກຍົກເລີກ ໃນ ຄ.ສ 1958 ມີອາຍຸການພຽງແຕ່ 11 ປີ

### 2.2.3. ດ້ານການທະຫານ

ໃນໄລຍະຕໍ່ມາ ພາຍຫຼັງທີ່ບັນດາປະເທດຕາເວັນຕົກ ໂດຍແມ່ນຈັກກະພັກອາເມຣິກາ ເປັນຫົວໜ້າ ໄດ້ພາກັນ ຈັດຕັ້ງກຸ່ມການທະຫານ ຄື ອົງການນາໂຕ ຂື້ນ ເຊິ່ງມັນໄດ້ເປັນໄພຂົ່ມຂູ່ຕໍ່ລະບົບສັງຄົມນິຍົມແຫ່ງໂລກ, ສະນັ້ນ ກຸ່ມປະ ເທດ ເອີຣົບຕາເວັນອອກ ໂດຍມີສະຫະພາບໂຊວຽດ ເປັນແກນນຳ ໄດ້ຮ່ວມກັນທຳສົນທິສັນຍາ ວາກໂຊວີ ຂື້ນ ໃນປີ ຄ.ສ 1955 ເພື່ອເປັນການຕອບໂຕ້ ກັບ ກຸ່ມທະຫານຂອງພວກ ເອີຣົບຕາເວັນຕົກ ເຊັ່ນ: ອົງການນາໂຕ, ອົງການຊີອາໂຕ ເປັນຕົ້ນ.

**ກ. ກຸ່ມວາກໂຊວີ**

ການສ້າງຕັ້ງກຸ່ມສົນທິສັນຍາ ວາກໂຊວີ ( Warksaw Pact ) ສ້າງຕັ້ງຂື້ນ ໃນວັນທີ 14 ພຶດສາພາ ຄ.ສ 1955 ມີບັນດາປະເທດພາຄີເຂົ້າຮ່ວມມີ ສະຫະພາບໂຊວຽດ, ບູນກາລີ, ເຊັກໂກສະໂລວາກີ, ຮົງກົງ, ໂປໂລຍ, ລູມານີ ແລະ ເຢຍລະມັນຕາເວັນອອກ.

ຈຸດປະສົງການສ້າງຕັ້ງ ກຸ່ມສົນທິສັນຍາທາງ ການທະຫານ ນີ້ເພື່ອ ຮັກສາຄວາມໝັ້ນຄົງ ຄວາມປອດໄພຂອງ ລະບົບສັງຄົມນິຍົມ ໂດຍສະເພາະແມ່ນ ເພື່ອຕ້ານຈາກການແຊກແຊງຂອງ ກຸ່ມທະຫານນາໂຕ ( NATO ) ອົງການນີ້ ສະຫະພາບໂຊວຽດ ເປັນພື້ນຖານທາງດ້ານການຊີ້ນຳ ແລະ ທາງດ້ານການທະຫານ, ຕາມການ ຕົກລົງຂອງສົນທິສັນຍານີ້ ສະຫະພາບໂຊວຽດ ສາມາດມີກຳລັງທະຫານໄວ້ໃນປະເທດສະມະຊິກໄດ້. ສົນທິສັນຍາ ນີ້ໄດ້ລະບຸວ່າ: ໃນກໍລະນີໜຶ່ງ ຫຼາຍປະເທດສະມາຊິກພາຍໃນ ກຸ່ມຖືກບຸກໂຈມຕີ ຈາກສະພາບການພາຍນອກ ຫຼື ສະພາບການພາຍໃນບໍ່ມີ ຄວາມ ສະຫງົບ ບັນດາປະເທດສະມາຊິກໃນກຸ່ມ ມີໜ້າທີ່ຊ່ວຍເຫຼືອໄດ້ທຸກຮູບການ. ນອກນັ້ນ ບັນດາປະເທດເຫຼົ່ານັ້ນ ຍັງໄດ້ ຕົກລົງສ້າງກອງບັນຊາການຂອງ ກຳລັງປະກອບອາວຸດ ໂດຍມີ ນາຍພົນ ໂກແຢບ ເປັນຜູ້ບັນຊາການສູງສຸດ.

ກຸ່ມສົນທິສັນຍາ ວາກໂຊວີ ໄດ້ປະກອບສ່ວນສຳຄັນເຂົ້າໃນ ການຮັກສາສັນຕິພາບຢູ່ໃນເອີຣົບ ແລະ ຄວາມ ເປັນ ເອກະລາດຂອງບັນດາປະເທດສັງຄົມນິຍົມ, ສາມາດທັບມ້າງທຸກໆໄພຂົ່ມຂູ່ ຈາກກຳລັງພາຍນອກ. ຕົວຢ່າງ ຢູ່ ຮົງ ໂກລີ ( 1956 ), ເຊັກໂກສະໂລວາກີ (1968 ) ແລະ ໂປໂລຍ ( ຊຸມປີ 80 ) ໃນທີ່ສຸດກໍ່ກ້າວໄປເຖິງຄວາມດຸ່ນດ່ຽງໃນ ທ່າຍຸດທະສາດທາງດ້ານ ການທະຫານ ລະຫວ່າງ ບັນດາປະເທດ ສັງຄົມນິຍົມ ກັບ ບັນດາປະເທດຈັກກະພັດໃນຕົ້ນຊຸມ ປີ 70

ພາຍຫຼັງການຜັນແປໄປທາງດ້ານການເມືອງຢ່າງສັບສົນຢູ່ເອີຣົບຕາເວັນອອກ ແລະ ຜູ້ນຳໂຊວຽດ-ອາເມຣິກາ ໄດ້ ມີການເຈລະຈາກັນ ກ່ຽວກັບບັນຫາ ການຢຸດຕິ “ ສົງຄາມເຢັນ ” , ຫຼັງຈາກນັ້ນ ການສືບຕໍ່ຄົງຕົວຂອງ ກຸ່ມສົນທິສັນຍາ

ອາກໂຊວີ ບໍ່ສອດຄ່ອງກັບ ສະພາບການປ່ຽນແປງໃໝ່ ດັ່ງນັ້ນ ມາຮອດຕົ້ນປີ ຄ.ສ 1991 ການຈັດຕັ້ງກອງປະຊຸມຜູ້ແທນຂອງບັນດາ ປະເທດສະມາຊິກດັ່ງກ່າວ ໄດ້ຕົກລົງການຢຸດຕິການເຄື່ອນໄຫວຂອງ ກຸ່ມວາກໂຊວີ ໃນວັນທີ 31/3/1991.

## 3. ການກຳເນີດຂະບວນການບໍ່ຮ່ວມກຸ່ມ

ໃນຂະນະທີ່ ສະພາບການຂອງໂລກ ພວມຜັນແປໄປຢ່າງສັບສົນ ແບ່ງອອກເປັນ ສອງລະບົບ ( ຄ້າຍ ) ມີຄວາມຂັດແຍ່ງກັນທາງດ້ານ ອຸດົມການລະຫ່ວາງ ນາຍທຶນປະຊາທິປະໄຕ ແລະ ລັດທິຄອມມູນິດ ໄປຢ່າງຮຸນແຮງນັ້ນ ໄດ້ເກີດມີການແຂ່ງຂັນກັນ ຈັດຕັ້ງກຸ່ມທາງດ້ານເສດຖະກິດ, ການເມືອງ ຕະຫຼອດຮອດການຮ່ວມກຸ່ມທາງດ້ານ ການທະຫານຂອງແຕ່ລະຝ່າຍ. ເຊິ່ງກໍໃຫ້ເກີດບັນຫາຫຍຸ້ງຍາກໃນການເຈລະຈາຕົກລົງລະຫ່ວາງຊາດ ແລະ ນັບມື້ນັບ ເພີ່ມມີຄວາມຮຸນແຮງ ສະນັ້ນ, ບັນດາປະເທດທີ່ດ້ອຍພັດທະນາ ແລະ ກຳລັງພັດທະນາ ໂດຍສະເພາະບັນດາປະເທດຫາກໍ່ ໄດ້ຮັບເອກະລາດ ໃໝ່ ໄດ້ຮ່ວມກັນເປັນກຸ່ມເອີ້ນວ່າ: “ ໂລກທີ 3 ” ໂດຍຖືເອົາ ນະໂຍບາຍທາງດ້ານການເມືອງ ລະຫ່ວາງປະເທດເປັນຕົວວັດ. ກຸ່ມນີ້ ຈະວາງຕົວເປັນກາງ ບໍ່ເຂົ້າຮ່ວມຝ່າຍໃດຝ່າຍໜຶ່ງ, ພິຈາລະນາບັນຫາ ຫຼື ລົງມະຕິໃນການແກ້ໄຂບັນຫາ ຂໍ້ຂັດແຍ່ງທາງ ດ້ານການເມືອງ ລະຫວ່າງປະເທດ. ໂດຍຍຶດເອົາເຫດ ແລະ ຜົນ, ຫຼັກການເປັນທຳເປັນຫຼັກການສຳຄັນໃນການດຳເນີນງານຂອງກຸ່ມ.

ຂະບວນການບໍ່ຮ່ວມກຸ່ມນີ້ ໄດ້ເປີດຂຶ້ນ ໂດຍກອງປະຊຸມທີ່ ບັນດຸງ ( ປະເທດອິນໂດເນເຊຍ ) ເດືອນ ເມສາ ປີ ຄ.ສ 1955 ລວມມີ 25 ປະເທດທີ່ມາຈາກທະວີບອາຊີ ແລະ ອາຟຣິກາ, ກອງປະຊຸມໄດ້ຄົ້ນຄ້ວາ ແລະ ຮັບຮອງເອົາ 10 ຫຼັກການ ໂດຍຖືເອົານະໂຍບາຍ ຢູ່ຮ່ວມກັນໂດຍສັນຕິຂອງ ທ່ານ ຍາວາຮາ ຣານເນລູ 5 ປະການພື້ນຖານຄື:

- ການເຄົາລົບ ອຳນາດອະທິປະໄຕ ແລະ ເຂດນໍ້າແດນດິນຂອງກັນ ແລະ ກັນ
- ບໍ່ຮຸກຮານເຊິ່ງກັນ ແລະ ກັນ
- ບໍ່ແຊກແຊງ ກິດຈະການພາຍໃນຂອງກັນ ແລະ ກັນ.
- ມີຄວາມສະເໝີພາບ ແລະ ມີຜົນປະໂຫຍດຮ່ວມກັນ
- ການຢູ່ຮ່ວມກັນໂດຍສັນຕິ

5 ຫຼັກການນີ້ ມີລັກສະນະສອດຄ່ອງກັບ ອົງການສະຫະປະຊາຊາດ ຕໍ່ຕ້ານກັບ ລັດທິລ່າເມືອງຂຶ້ນຂອງຈັກກະພັດ, ສົ່ງເສີມການຕໍ່ສູ້ເພື່ອ ເອກະລາດ ອະທິປະໄຕ ຂອງປະເທດຕ່າງໆໃນໂລກ ແລະ ຮ່ວມການຕໍ່ຕ້ານທຸກການກະທຳທີ່ເປັນການເອົາລັດເອົາປຽບປະເທດອື່ນຂອງ ບັນດາປະເທດມະຫາອຳນາດ ແລະ ຕໍ່ຕ້ານທຸກການກະທຳ ທີ່ເປັນໄພຂົ່ມຂູ່ ສັນຕິພາບໂລກ.

ຍ້ອນນະໂຍບາຍກ້າວໜ້າຂອງວຽກງານນີ້ ເຮັດໃຫ້ມີປະເທດສະມາຊິກເພີ່ມຂຶ້ນຢ່າງຫຼວງຫຼາຍເຊັ່ນ: ໃນກອງປະຊຸມ ເດືອນຕຸລາ ປີ ຄ.ສ 1957 ມີ 44 ປະເທດເຂົ້າຮ່ວມ, ເດືອນ ຕຸລາ ຄ.ສ 1964 ມີ 47 ປະເທດເຂົ້າຮ່ວມ.

### 3.1 ຈຸດປະສົງຂອງການສ້າງຕັ້ງກຸ່ມ

ຈຸດປະສົງຂອງການສ້າງຕັ້ງກຸ່ມບໍ່ຮ່ວມກຸ່ມນີ້ເພື່ອ

- ເພື່ອຫຼີກເວັ້ນຈາກ ການຢູ່ໂດດດ່ຽວ ເຊິ່ງເປັນການສ້າງຄວາມສະດວກໃນການແຊກແຊງໄດ້ຍາກຂອງ ປະເທດມະຫາອຳນາດ
- ເພື່ອຫຼີກລ້ຽງຈາກການຕົກຢູ່ໃນ ການຄອບຄອງຂອງປະເທດມະຫາອຳນາດ
- ເພື່ອສ້າງໃຫ້ເກີດກຳລັງທີ່ສຳຄັນເຊິ່ງຈະເຮັດໃຫ້ ປະເທດມະຫາອຳນາດ ຈຳຕ້ອງຍອມຮັບຮູ້ ຖານະບົດບາດໃນເວທີເສດຖະກິດ ຂອງການເມືອງໂລກ.

- ເພື່ອຍາດແຍ່ງເອົາຄວາມຊ່ວຍເຫຼືອຈາກ ປະເທດມະຫາອຳນາດ ໃນການພັດທະນາປະເທດ ຢ່າງບໍ່ເກງກົວ ໂດຍຊ່ວງໃຊ້ຂໍ້ຂັດແຍ່ງ ລະຫ່ວາງມະຫາອຳນາດ ທັງສອງມາຕໍ່ລອງ.

ເຖິງແນວໃດກໍ່ຕາມ ເພື່ອຄວາມເຂົ້າໃຈກ່ຽວ ໂລກທີ 3 ຫຼື ອີງການບໍ່ຮ່ວມກຸ່ມໃຫ້ມີຄວາມຊັດເຈນຂຶ້ນ ເຮົາຕ້ອງມີຄວາມເຂົ້າໃຈຕໍ່ໂລກທີໜຶ່ງ ແລະ ໂລກທີສອງ ຄວບຄູ່ກັນໄປ. ໃນດ້ານຫຼັກການແລ້ວ ຄຳວ່າ ໂລກທີໜຶ່ງ ແລະ ໂລກທີສອງ ຍັງບໍ່ທັນມີຫຼັກການແບ່ງອັນເປັນທີ່ແນ່ນອນ ແຕ່ເທົ່າທີ່ການສັງເກດ ສະພາບສັງຄົມສ່ວນໃຫຍ່ ອັນຮັບຮູ້ກັນໃນປັດຈຸບັນນີ້ ໂລກອອກເປັນ 3 ກຸ່ມ ຄື: ກຸ່ມເສລີນິຍົມ ( ທຶນນິຍົມ ), ກຸ່ມສັງຄົມນິຍົມ ແລະ ກຸ່ມບໍ່ຮ່ວມກຸ່ມ. ທັງ 3 ກຸ່ມນີ້ ໄດ້ມີຄວາມແຕກຕ່າງກັນໃນຫຼາຍໆດ້ານເປັນຕົ້ນແມ່ນ ດ້ານເສດຖະກິດ ການເມືອງ ແລະສັງຄົມ.

### 3.1.1 ກຸ່ມອາຊຽນ

ສະມາຄົມປະຊາຊາດບັນດາປະເທດອາຊີຕາເວັນອອກສຽງໃຕ້ ສ້າງຕັ້ງໃນວັນທີ 8 ສິງຫາ ຄ.ສ 1967 ໃນເບື້ອງຕົ້ນກຸ່ມອາຊຽນມີ 5 ປະເທດເຂົ້າຮ່ວມປະກອບມີ ປະເທດໄທ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ສິງກະໂປ.ໃນເບື້ອງຕົ້ນບັນດາປະເທດດັ່ງກ່າວ ຮ່ວມກັນສ້າງຕັ້ງກຸ່ມອາສາ ຫຼື ( Association of South Eaet Asean ) ເພື່ອຮ່ວມມືກັນທາງດ້ານເສດຖະກິດ ສັງຄົມ ວັດທະນະທຳ ແຕ່ວ່າດຳເນີນການໄປພຽງ 2 ປີກໍ່ຢຸດຕິລົງ ເນື່ອງຈາກວ່າເກີດຄວາມຂັດແຍ່ງກັນທາງດ້ານການເມືອງ ຂອງສອງປະເທດອິນໂດເນເຊຍ ແລະ ປະເທດມາເລເຊຍ.

ໄລຍະຕໍ່ມາ ໄດ້ມີການສະແຫວງຫາຄູ່ຈັດຕັ້ງ ອີງການຮ່ວມມືທາງເສດຖະກິດຂຶ້ນ ໃນພູມີພາກ " ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ " ວັນທີ 8 ສິງຫາ 1967 . ການສ້າງຕັ້ງກຸ່ມ ອາຊຽນ ເກີດຂຶ້ນໃນສະພາບແວດລ້ອມມພາຍນອກທີ່ມີຄວາມໝັ້ນຄົງ, ເພື່ອພະຍາຍາມສ້າງຄວາມສົນໃຈ ຂອງປະເທດມະຫາອຳນາດ ພາຍນອກ ໃນຊ່ວງສະຕະວັດທີ XX ບວກກັບຄວາມຕ້ອງ ການພັດທະນາເສດຖະກິດຂອງປະເທດ. ການຈັດຕັ້ງກຸ່ມ ອາຊຽນ ຄວາມຕ້ອງການແມ່ນ ມີຄວາມແຕກຕ່າງຈາກການຈັດຕັ້ງກຸ່ມ ສະຫະພາບເອີຣົບ ເພາະວ່າ ການສ້າງຕັ້ງກຸ່ມ ອາຊຽນ ສ້າງເພື່ອເປັນການສະໜັບສະໜູນ ຄວາມເປັນຊາດນິຍົມ. ກຸ່ມອາຊຽນ ໄດ້ມີການຂະຫຍາຍຕົວເຮັດໃຫ້ ມີປະເທດຕ່າງໆເຂົ້າຮ່ວມໃນແຕ່ລະໄລຍະມີດັ່ງນີ້ . ປະເທດລາວ ເຂົ້າເປັນສະມາຊິກ ກຸ່ມອາຊຽນ ວັນທີ 23 ເດືອນ ກໍລະກົດ ປີ ຄ.ສ 1997, ປະເທດຫວຽດນາມ ວັນທີ 28 ກໍລະກົດ 1995, ບຣູໄນ ວັນທີ 8 ເດືອນ ກໍລະກົດ ປີ ຄ.ສ 1984 , ມຽນມາ ວັນທີ 23 ເດືອນ ກໍລະກົດ ປີ ຄ.ສ 1997 .ປັດຈຸບັນສະມາຊິກ ກຸ່ມອາຊຽນ ມີ 10 ປະເທດຄື: ປະເທດໄທ, ລາວ, ຫວຽດນາມ, ກຳປູເຈຍ, ມຽນມາ, ຟີລິບປິນ, ສິງກະໂປ, ອິນໂດເນເຊຍ, ມາເລເຊຍ, ບຣູໄນ, ຕີມໍ ( ຍັງເປັນປະເທດສັງເກດການ ). ນອກນັ້ນ ຍັງມີການຮ່ວມມືກັບປະເທດຕ່າງໃນໂລກກາຍເປັນ ອາຊຽນ+1, ອາຊຽນ+3, ອາຊຽນ+6 …




ຮູບທີ 8: ກອງປະຊຸມສຸດຍອດອາຊຽນຄັ້ງທີ 19 ປະເທດອິນໂດເນເຊຍ

ຮູບທີ 9: ເຄື່ອງໝາຍສັນຍາລັກອາຊຽນ

ຮູບສັນຍາລັກ ກຸ່ມອາຊຽນ ແມ່ນຮູບຮວງເຂົ້າສີເຫຼືອງ ພື້ນສີແດງອ້ອມດ້ວຍວົງມົນສີຂາວ ແລະ ສີຟ້າ ມີຮູບຮວງເຂົ້າ 10 ອັນມັດລວມກັນໝາຍເຖິງ ປະເທດສະມາຊິກຮ່ວມກັນເພື່ອມິດຕະພາບ ແລະ ຄວາມເປັນຈິດໜຶ່ງໃຈດຽວກັນ ພື້ນວົງມົນສີແດງ ສີຂາຍ ແລະ ສີຟ້າ ໝາຍເຖິງຄວາມເປັນເອກະພາບມີ ການຂຽນຄໍາວ່າ " asean " ສີຟ້າຢູ່ໃຕ້ຮວງເຂົ້າ ສະແດງເຖິງຈຸດປະສົງ, ເປົ້າໝາຍທີ່ຈະເຮັດວຽກຮ່ວມກັນ ເພື່ອຄວາມສັນຕິ ເອກະພາບ ແລະ ຄວາມກ້າວໜ້າຂອງປະເທດສະມາຊິກອາຊຽນ.

- ສີຟ້າໝາຍເຖິງ ສັນຕິພາບ ແລະ ຄວາມໝັ້ນຄົງ
- ສີແດງໝາຍເຖິງ ຄວາມກ້າຫານ ແລະ ຄວາມຈະເລີນກ້າວໜ້າ
- ສີຂາວໝາຍເຖິງ ຄວາມຊື່ສັດບໍລິສຸດ
- ສີເຫຼືອງໝາຍເຖິງ ຈະເລີນຮຸ່ງເຮືອງ

\+ ຈຸດປະສົງຂອງການສ້າງຕັ້ງກຸ່ມອາຊຽນ

- ເພື່ອເລັ່ງລັດໃນການຂະຫຍາຍຕົວທາງດ້ານເສດຖະກິດ ສັງຄົມ ແລະ ການພັດທະນາທາງດ້ານວັດທະນະທຳ ໃນພາກພື້ນໃຫ້ມີ ການຂະຫຍາຍຕົວທາງ ດ້ານວິທະຍາສາດ ແລະ ການບໍລິການ.
- ສົ່ງເສີມຮັກສາ ສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ໂດຍການເຄົາລົບບົນຫຼັກ ຄວາມຍຸດຕິທຳ ແລະ ກົດໝາຍການພົວພັນລະຫ່ວາງປະເທດໃນພາກພື້ນ ແລະ ກົດບັດສະຫະປະຊາຊາດ.
- ສົ່ງເສີມການສ້າງຄວາມຈະເລີນຮັ່ງມີທາງດ້ານ ເສດຖະກິດ ວັດທະນະທຳໃນພາກພື້ນ
- ສົ່ງເສີມການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານການທະຫານການວິໄຈທາງດ້ານການສຶກສາໃນພາກພື້ນ
- ສົ່ງເສີມການຄົ້ນຄວ້າກ່ຽວກັບອາຊີຕາເວັນອອກສຽງໃຕ້ ແລະ ເສລີພາບດ້ານເສດຖະກິດຈະຫຼອດຮອດການຂະຫຍາຍຕົວທາງດ້ານການຄ້າ ການຄົມມະນາຄົມຂົນສົ່ງ.
- ເພື່ອເສີມສ້າງ ການຮ່ວມມືຢ່າງຕັ້ງໜ້າ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນຂົງເຂດ ເສດຖະກິດ, ສັງຄົມ, ວັດທະນະທຳ, ວິຊາການ ແລະ ການບໍລິການ.

ເລຂາທິການອາຊຽນ ຈັດຂຶ້ນຕາມຂໍ້ຕົກລົງຂອງ ລັດທະມົນຕີການຕ່າງປະເທດອາຊຽນ ເພື່ອເຮັດໜ້າທີ່ປະສານງານ ແລະ ດຳເນີນງານໃຫ້ໄປຕາມແຜນການ ຂອງສະມາຄົມເປັນສູນກາງການຕິດຕໍ່ລະຫ່ວາງ ສະມາຄົມອາຊຽນ ຄະນະກຳມະການຕະຫຼອດຮອດ ການພົວພັນຕ່າງໆ ລັດຖະບານຂອງ ປະເທດສະມາຊິກ.

ສຳນັກງານ ເລຂາທິການໃຫຍ່ຂອງ ອາຊຽນ ຕັ້ງຢູ່ກຸງຈາກາຕາ ປະເທດອິນໂດເນເຊຍ ຫືວໜ້າສຳນັກງານ ເອີ້ນວ່າ “ ເລຂາທິການ ອາຊຽນ ” ເລຂາທິການ ອາຊຽນ ຄົນປະຈຸບັນແມ່ນ ທ່ານ ເກົາ ກິມຮອນ ( ປະເທດກຳປູເຈຍ ) 1 ມັງກອນ 2023

### 3.1.2 ການສ້າງຕັ້ງກຸ່ມ 77

ສ້າງຕັ້ງຂຶ້ນໃນ ປີ ຄ.ສ 1963 ທີ່ກອງປະຊຸມ ເຊີແນວ ( ປະເທດສະວິດເຊີແລນ ລວມປະເທດສະມາຊິກ 77 ປະເທດຮ່ວມກັນສ້າງຕັ້ງຂຶ້ນ ( ຮອດປັດຈຸບັນມີປະເທດສະມາຊິກເຖິງ 120 ກ່ວາປະເທດ ) ອົງການນີ້ມີໜ້າທີ່ດຳເນີນການຄ້າ ແລະ ການພັດທະນາເສດຖະກິດ ບັນດາປະເທດທີ່ດ້ອຍພັດທະນາ ທີ່ເປັນສະມາຊິກ.

### 3.1.3. ອົງການຮ່ວມມືປະຊາຊົນອາຊີ-ອາຟຣິກາ

ອົງການຮ່ວມມື ປະຊາຊົນອາຊີ-ອາຟຣິກາ ( AAPSO: Affro-Asian Peoples Solidaity Organization ) ໄດ້ຮັບການສ້າງຕັ້ງຂຶ້ນໃນ ປີ ຄ.ສ 1957, ຈຸດປະສົງຂອງການສ້າງ ອົງການນີ້ ເພື່ອສ້າງຄວາມເປັນອັນໜຶ່ງອັນດຽວກັນ ລະຫ່ວາງກຸ່ມ ປະເທດໃນອາຊີ-ອາຟຣິກາ, ເຊິ່ງມີໜ້າທີ່ຊ່ວຍເຫຼືອຂະບວນການປົດປ່ອຍຊາດ, ຕ້ານການແຜ່ອຳນາດຂອງ ລັດທິຈັກກະພັດ ໂດຍສະເພາະແມ່ນ ຕ້ານລັດທິລ່າເມືອງຂຶ້ນແບບໃໝ່ ຢູ່ໃນທະວີບອາຊີ ແລະ ອາຟຣິກາ. ນອກນັ້ນ ຍັງມີການຮ່ວມມືທາງດ້ານເສດຖະກິດ ເພື່ອພັດທະນາເສດຖະກິດຂອງບັນດາປະເທດສະມາຊິກ ໃຫ້ມີຄວາມເຂັ້ມແຂງ ແລະ ພະຍາຍາມຫຼຸດຜ່ອນ ຄວາມແຕກຕ່າງລະຫ່ວາງ ປະເທດຮັ່ງມີ ແລະ ທຸກຈົນ, ປະເທດອຸດສາຫະກຳ ແລະ ປະເທດດ້ອຍພັດທະນາ.

### 3.1.4 ກຸ່ມໂອເປັກ ( OPEC )

ກຸ່ມໂອເປັກ ( OPEC: Organization of Petroleum Exportring Coumtries ) ແມ່ນ ອົງການບັນດາ ປະເທດຜະລິດນ້ຳມັນສົ່ງອອກເປັນສິນຄ້າ ສ້າງຂຶ້ນໃນ ປີ ຄ.ສ 1960 ມີສະມາຊິກທັງໝົດ 5 ປະເທດຄື: ປະເທດຊາອຸດີອາລາເບຍ, ອີຣັກ, ອີຣານ, ກູເວດ ແລະ ເວເນຊູເອລາ. ສຳນັກງານໃຫຍ່ຕັ້ງຢູ່ ປະເທດເຊີວິດເຊີແລນ ແລະ ຕໍ່ມາໄດ້ຍ້າຍໄປຕັ້ງຢູ່ເມືອງວຽນນາ ( ປະເທດອັອດເຕເລຍ ) ແລະ ໄດ້ມີປະເທດສະມາຊິກເພີ່ມອີກ 7 ປະເທດຄື: ສະຫະລັດອາເມຣິກາ, ອາຣັບອາມີເຣດ, ກາຕາ, ໄນຈີເລຍ, ແອນຈີເລຍ, ລີບີ ແລະ ອິນໂດເນເຊຍ.

ກຸ່ມໂອເປັກ ເປັນກຸ່ມທີ່ອິດທິພົນຕໍ່ ລະບົບເສດຖະກິດ ແລະການເມືອງ ລາຄານໍ້າມັນໃນຕະຫຼາດໂລກແມ່ນຂຶ້ນຢູ່ກັບການກຳນົດ ລາຄາຂອງນໍ້າມັນ ກຸ່ມໂອເປັກ ( OPEC ) ເຮັດໃຫ້ມີຜົນຕໍ່ສະພາບການຂອງໂລກຄື:

- ເຮັດໃຫ້ປະເທດຕ່າງໆ ມີຄວາມຕື່ນຕົວ ຮູ້ເຖິງຄຸນຄ່າຂອງ ຊັບພະຍາກອນ ທີ່ສາມາດສ້າງໄດ້ໃໝ່, ມີການຊົມໃຊ້ຢ່າງປະຢັດ ແລະ ໃຫ້ມີຄວາມຄຸ້ມຄ່າທີ່ສຸດ.
- ມີຄວາມພະຍາຍາມ ຄົ້ນຄ້ວາວິໄຈ ຊອກຫາພະລັງງານອື່ນທີ່ສາມາດທົດແທນ ນໍ້າມັນໄດ້ເຊັ່ນ: ການພັດທະນາພະລັງງານແສງອາທິດ, ພະລັງລົມ, ພະລັງງານຄວາມຮ້ອນ...

ຮູບທີ 10: ເຄື່ອງໝາຍສັນຍາລັກກຸ່ມໂອເປັກ

\+ ຈຸດປະສົງຂອງການສ້າງຕັ້ງ ກຸ່ມນີ້ຂຶ້ນຍ້ອນ

- ເພື່ອປ້ອງກັນບໍ່ໃຫ້ລາຄາ ນໍ້າມັນຕົກຕໍ່າ ແລະ ສາມາດເຈລະຈາຂາຍ ນໍ້າມັນ ໃນເງື່ອນໄຂທີ່ດີຍຸດທິທຳ.
- ເພື່ອເປັນການເກັບພາສີລາ ໄດ້ຈາກຜົນກຳໄລຂອງບໍລິສັດຜູ້ຜະລິດນໍ້າມັນໃນອັດຕາສ່ວນຂັ້ນຕໍ່າ 55% .
- ເພື່ອໃຫ້ມີອຳນາດ ໃນການປະກາດ ເພີ່ມລາຄານໍ້າມັນໃນທຸກໆປີ.
- ເພື່ອລົດການຜະລິດ ຫຼື ສົ່ງນໍ້າມັນດິບໃນປະເທດທີ່ຊ່ວຍເຫຼືອ ຫຼື ສົ່ງເຂົ້າອິດສາລະແອນ
- ເພື່ອຄວບຄຸມ ຫຼື ຍຶດຄອງ ບໍລິສັດນໍ້າມັນຂອງປະເທດຕ່າງໆ ແລະ ການໂອນກິດຈະການ ຜະລິດນໍ້າມັນເປັນ ລັດວິສາຫະກິດ.

ປັດຈຸບັນນີ້ ມີ 11 ປະເທດຄື: ປະເທດແອນຈີເລຍ, ໄນຈີເລຍ, ອາຣານ, ລີບີ, ອີຣັກ, ກູເວດ, ກາຕາ, ອິນໂດເນເຊຍ, ອາຣັບອາມີເຣດ, ຊາອຸດີອາຣາເບຍ ແລະ ເວເນຊູເອລາ.

ປັດຈຸບັນນີ້ ບົດບາດຂອງກຸ່ມ ໂອເປັກ ໄດ້ຫຼຸດລົງຫຼາຍ ບໍ່ສາມາດຄວບຄຸມລາຄານໍ້າມັນໃນຕະຫຼາດໂລກ ໃຫ້ເປັນໄປຕາມ ຄວາມຕ້ອງການຂອງກຸ່ມໄດ້ ແລະ ບໍ່ສາມາດໃຊ້ ນໍ້າມັນ ເປັນອາວຸດ ບີບໃຫ້ປະເທດ ມະຫາອຳນາດຕາເວັນຕົກ ປະຕິບັດຕາມນະໂຍບາຍທາງ ດ້ານການເມືອງ ລະຫ່ວາງປະເທດຕາມຄວາມຕ້ອງການຂອງກຸ່ມໄດ້. ທັງນີ້ເນື່ອງຈາກວ່າປະເທດສະມາຊິກ ບໍ່ປະຕິບັດຕາມ ກົດລະບຽບຂອງອົງການ ບໍ່ຈິງຈັງກັບການຮ່ວມມື ນອກນັ້ນ ຍັງມີການລັກລອບຜະລິດນໍ້າມັນ ເກີນໂກຕ້າ ທີ່ກຸ່ມກຳນົດໄວ້, ເຮັດໃຫ້ປະລິມານນໍ້າມັນລົ້ນໂລກ ແລະ ຍັງມີປະເທດນອກກຸ່ມສາມາດຜະລິດນໍ້າມັນ ໄດ້ປະລິມານຫຼາຍເຊັ່ນວ່າ: ປະເທດອັງກິດ, ແມັກຊີໂກ, ບຣູໄນ, ນໍອກແວ ເຮັດໃຫ້ ອຳນາດຂອງອົງການໂອເປັກ ບໍ່ສາມາດສ້າງຄວາມສັ່ນສະເທືອນ ໃຫ້ແກ່ຊາວໂລກໄດ້ຄືແຕ່ກ່ອນ. ແຕ່ຍັງຄົງເຮັດ ໜ້າທີ່ປະສານງານຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນໝູ່ປະເທດສະມາຊິກ.

ນອກຈາກ ກຸ່ມຂ້າງເທິງນີ້ແລ້ວ ຍັງມີການຈັດຕັ້ງອົງການ ຫຼື ສະຖາບັນທາງເສດຖະກິດເຊັ່ນ: ກອງທຶນການເງິນລະຫ່ວາງຊາດ, ທະນາຄານ ລະຫ່ວາງປະເທດ ເພື່ອການບູລະນະພື້ນຟູ ແລະ ການພັດທະນາ.

ເວົ້າລວມແລ້ວ ການຮ່ວມກຸ່ມ ຂະບວນການບໍ່ຮ່ວມກຸ່ມ ໄດ້ເຮັດໃຫ້ທົ່ວສັງຄົມໂລກ ມີການແປ່ນແປງ, ເຮັດໃຫ້ປະເທດອື່ນໆທີ່ຢູ່ໃກ້ຄຽງ ມີຄວາມອ່ອນແອທາງ ດ້ານເສດຖະກິດ ໄດ້ມີບາດກ້າວຂຶ້ນໃນເວທີສາກົນ. ສາມາດສະແດງອອກຢູ່ໃນການຕັດສິນບັນຫາຕ່າງໆ ຂອງສາກົນ ໂດຍສະເພາະ ອົງການສະຫະປະຊາຊາດ, ເຮັດໃຫ້ປະເທດມະຫາອຳນາດ ຈຳຕ້ອງຮັບຟັງຄຳຄິດເຫັນ ຫຼື ຂໍ້ສະເໜີຂອງຕົນຢ່າງອອກໜ້າ.

# 4 ຜົນສະທ້ອນຄວາມແຕກຕ່າງລະຫ່ວາງສອງກຸ່ມການເມືອງໂລກ

## 4.1. ດ້ານຕັ້ງໜ້າ.

- ດ້ານເສດຖະກິດ ເຮັດໃຫ້ມີການຊ່ວຍເຫຼືອກັນທາງ ດ້ານເສດຖະກິດ ແກ່ບັນດາປະເທດພັນທະມິດເຊັ່ນ ການໃຫ້ກູ້ຢືມເງິນ ຫຼື ການໃຫ້ຄວາມຊ່ວຍເຫຼືອລ້າ. ນອກນັ້ນ ຍັງມີມາດຕະການ ທີ່ໃຊ້ເປັນມາດຕະການທາງ ດ້ານເສດຖະກິດ ເພື່ອຈະຕອບໂຕ້ກັບຝ່າຍ ກົງກັນຂ້າມເຊັ່ນ ການສະແດງອອກທາງ ການການປິດລ້ອມທາງດ້ານເສດຖະກິດ, ນອກນັ້ນ ຍັງມີການຈັດຕັ້ງກຸ່ມທາງດ້ານເສດຖະກິດເພື່ອຊ່ວງຊີງກັນເຊັ່ນໃນຂະນະທີ່ ສະຫະລັດອາເມຣິກາ ປະກາດໃຊ້ແຜນການມາກຊານ ( Marshall Plan ) ຄ.ສ 1947 ເປັນແຜນການຊ່ວຍເຫຼືອ ເອີຣົບຕາເວັນຕົກ ເພື່ອພື້ນຟູເສດຖະກິດ ອັນນຳການໄປສູ່ ການກໍ່ຕັ້ງອົງການວ່າ ດ້ວຍຄວາມຮ່ວມມືທາງດ້ານເສດຖະກິດຂອງເອີຣົບ ( OEEC: Organization of European Economic Co-operation ) ໃນ ປີ ຄ.ສ 1949 ສະຫະພາບໂຊວຽດ ກໍ່ໄດ້ປະກາດໃຊ້ແຜນການ ໂມໂລຕົບ ( MOLOTOPLAN ແຜນການຊ້ວຍເຫຼືອທາງດ້ານເສດຖະກິດຂອງ ສະຫະພາບໂຊວຽດ ) ກ້າວໄປສູ່ການສ້າງຕັ້ງ ສະພາຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານເສດຖະກິດ.

ຕາຕາລາງສົມທຽບປະລິມານການຜະລິດເຫຼັກກ້າ ( ລ້ານໂຕນ )

| ປີ / ປະເທດ | 1950 | 1960 | 1970 | 1980 |
|---|---|---|---|---|
| ສະຫະພາບໂຊວຽດ | 27.3 | 65.3 | 115.9 | 147.9 |
| ສະຫະລັດອາມາຣິກາ | 87.8 | 90.1 | 119.3 | 11.5 |
| ທົ່ວໂລກ | 189.3 | 348.1 | 593.8 | 696.3 |

- ດ້ານວິທະຍາສາດ ແລະ ເຕັດໂນໂລຊີ ຕ່າງຝ່າຍກໍ່ ໄດ້ພະຍາຍາມສະແດງໃຫ້ເຫັນຄວາມສຳເລັດທາງ ດ້ານວິທະຍາສາດ ທີ່ໃຊ້ເຕັກໂນໂລຊີສູງເຊັ່ນ: ການຄົ້ນຄິດປະດິດສິ່ງໃໝ່ໆ, ສ້າງອາວຸດທີ່ທັນສະໄໝ, ການສະຫຼວດອາວະກາດ... ການແຂ່ງຂັນ ລະຫ່ວາງອາເຣິກາ ແລະ ໂຊວຽດ ເພື່ອສ້າງຄວາມສັດທາໃຫ້ແກ່ປະເທດສະມາຊິກ ຫຼື ຝ່າຍພັນທະມິດຂອງຕົນ ແລະ ສ້າງຄວາມ ຢຳເກງ ຂົ່ມຂູ່ຝ່າຍກົງກັນຂ້າມ ສະແດງອອກໃນ ປີ ຄ.ສ 1961 ໂຊວຽດ ເປັນປະເທດ ທຳອິດທີ່ສົ່ງ ຍານອາວະກາດ ຂຶ້ນສູ່ ອະວະກາດ ໂດຍມີ ຢູຣີກາກາລິນ ເປັນນັກອາວະກາດທຳອິດຂອງໂລກ ມັນໄດ້ສັງກາດ

ແຫ່ງການຄອບຄອງ ອາວະກາດຂອງມວນມະນຸດ ເຮັດໃຫ້ ໂຊວຽດ ມີທ່າແຮງເທົ່າທຽມກັບອາເມຣິກາທາງ ດ້ານການທະຫານ ສະເພາະແມ່ນ ອາວຸດນິວເຄຣຍ ຜົນງານຂອງ ໂຊວຽດຄັ້ງນີ້ ໄດ້ມີຄວາມໝາຍເຊິ່ງສາມາດພິກປີ້ນ ຍຸດທະສາດກອມໂລກຂອງ ອາເມຣິກາ ແລະ ພັນທະມິດຂອງພວກເຂົາ.

- ດ້ານການທະຫານ ສອງຝ່າຍ ໄດ້ມີການສະສົມອາວຸດ ທີ່ມີຄວາມທັນສະໄໝ ແລະ ຫຼວງຫຼາຍ, ມີການຊ້ອມຮົບເພື່ອບໍ່ໃຫ້ຝ່າຍກົງທ້າທາຍ, ໃຫ້ຄວາມຊ່ວຍເຫຼືອທາງດ້ານການທະຫານແກ່ ປະເທດພັນທະມິດເຊັ່ນ ການຊ່ວຍເຫຼືອດ້ານອາວຸດ, ຊ່ຽວຊານທາງດ້ານການທະຫານ ຝ່າຍໂລກເສລີປະຊາທິປະໄຕ ໄດ້ສ້າງຕັ້ງກຸ່ມນາໂຕ ( 1949 ) , ກຸ່ມຊີອາໂຕ ( ຄ.ສ 1954 ); ຝ່າຍ ສັງຄົມນິຍົມ ກໍ່ໄດ້ສ້າງຕັ້ງ ກຸ່ມສັນຍາວາກໂຊວີ ( ຄ.ສ 1955 ) ເພື່ອຕອບໂຕ້ຝ່າຍກົງກັນຂ້າມຄືນ.

### 4.2. ດ້ານຫຍໍ້ທໍ້

- ດ້ານການເມືອງ ພາຍຫຼັງໂລກແບ່ງອອກເປັນສອງລະບົບ ( ສອງຄ້າຍ ) ໄດ້ເຮັດໃຫ້ ສະພາບການທາງດ້ານການເມືອງໂລກ ມີຄວາມສັບສົນວຸ້ນວາຍ ຍ້ອນວ່າທັງສອງ ລະບົບການເມືອງນັ້ນ ໄດ້ພະຍາຍາມສ້າງຄວາມເປັນປໍລະປັກເຊິ່ງກັນ ແລະ ກັນ, ເປັນຕົວການໃນການແບ່ງແຍກດິນແດນ ຫຼື ເປັນຕົວການໃນການ ແຊກເຂົ້າກິດຈະການພາຍໃນຂອງຊາດອື່ນ ເຊິ່ງເປັນເຫດໃຫ້ເກີດ ມີຄວາມຂັດແຍ່ງກັນພາຍໃນ ປະເທດ ກ້າວໄປເຖິງ ການເກີດສົງຄາມອີກຄັ້ງໃໝ່ນັ້ນກໍ່ຄື " ການເກີດສົງຄວາມເຢັນ ". ເຊິ່ງມັນ ໄດ້ສົ່ງຜົນສະທ້ອນໃຫ້ ສັງຄົມໂລກຫຼາຍປະການເປັນຕົ້ນແມ່ນ ໄດ້ເຮັດໃຫ້ແຜນດິນ ປະເທດເກົາຫຼີ ຕ້ອງຖືກແບ່ງອອກເປັນສອງປະເທດ ຫຼື ສອງລະບົບການເມືອງທີ່ແຕກຕ່າງກັນ; ເກົາຫຼີໃຕ້ ເດີນຕາມລະບົບການເມືອງ ເສລີ ປະຊາທິປະໄຕ ໂດຍມີ ສະຫະລັດອາເມຣິກາ ເປັນຕົວຜັກດັນ, ສ່ວນເກົາຫຼີເໜືອ ແມ່ນເດີນຕາມລະບົບສັງຄົມນິຍົມ ໂດຍມີ ສະຫະພາບໂຊວຽດເປັນຜູ້ຊຸກດັນ ຄວາມແຕກຕ່າງທາງດ້ານອຸດົມການດັ່ງກ່າວນີ້ອັນ ໄດ້ເຮັດໃຫ້ເກີດມີ ຄວາມຂັດແຍ່ງກັນຢ່າງຮຸນແຮງ ໃນທີ່ສຸດກໍ່ແບ່ງອອກເປັນສອງປະເທດໃນ ລະຫ່ວາງເສັ້ນຂະໜານທີ N ມາຮອດປະຈຸບັນ.

ບັນຫາເຢຍລະມັນ ພາຍຫຼັງສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງ ເຢຍລະມັນ ໄດ້ແບ່ງອອກເປັນ 4 ເຂດ ( 1 ສິງຫາ 1945 ); ເຢຍລະມັນຕາເວັນອອກ ຄຸ້ມຄອງໂດຍ ສະຫະພາບໂຊວຽດ ແລະ ອີກ 3 ເຂດແມ່ນຄຸ້ມຄອງ ໂດຍປະເທດມະຫາອຳນາດມີ ອັງກິດ, ຝຣັ່ງ ແລະ ອາເມຣິກາ; ດ້ວຍວ່າອິດທິພົນຂອງອາເມຣິກາເໜືອກວ່າ ຈຶ່ງເຮັດໃຫ້ອາເມຣິກາ ສາມາດຄຸມໄດ້ທັງໝົດ 3 ເຂດ ( ເຢຍລະມັນຕາເວັນຕົກ ). ສະນັ້ນ ໂຊວຽດຈຶ່ງປິດລ້ອມ ແບັກແລງ ເປັນເວລາ 1 ປີ ເຮັດໃຫ້ສະພາບຄວາມຂັດແຍ່ງໃນເຢຍລະມັນ ຍິ່ງເຄັ່ງຕຶງຂຶ້ນ ແລະ ໃນທີ່ສຸດ ປີ ຄ.ສ 1949 ອາເມຣິກາໄດ້ປະກາດສະຖາປະນາເຂດປົກຄອງ ຂອງຕົນ (ເອີຣົບຕາເວັນຕົກ ) ເປັນປະເທດສາທາລະນະລັດ ເຢຍລະມັນ, ສ່ວນ ສະຫະພາບໂຊວຽດ ກໍ່ໄດ້ປະກາດເຂດຄຸ້ມຄອງຂອງຕົນຂຶ້ນເປັນ ປະເທດສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ. ດັ່ງນັ້ນ ເຮັດໃຫ້ ເຢຍລະມັນ ແຍກອອກເປັນສອງເຂດ ທີ່ມີລະບົບການເມືອງແຕກຕ່າງກັນ. ນອກຈາກນັ້ນ ຍັງມີຫຼາຍບັນຫາທີເກີດຂຶ້ນ ເປັນຕົ້ນ ບັນຫາຢູ່ ຈີນ, ຫວຽດນາມ, ບັນຫາອິນດູຈີນ...

ສະຫຼຸບລວມແລ້ວ, ພາຍຫຼັງສົງຄາມໂລກຄັ້ງທີ II ບັນດາຊົນຊາດ ຕ່າງກໍສະແຫວງຫາຊ່ອງທາງເພື່ອຄວາມສັນຕິ ຫຼື ເວັ້ນຈາກສົງຄາມ ອັນຈະນຳມາ ຊຶ່ງຄວາມຫາຍານະ ສະແດງອອກຢູ່ໃນ ການຮ່ວມກັນກໍ່ຕັ້ງ ອົງການສະຫະປະຊາຊາດ , ການກໍ່ຕັ້ງອົງການສົນທິສັນຍາ ດ້ານເສດຖະກິດ ການເມືອງຕ່າງໆ; ແຕ່ພ້ອມດຽວກັນນັ້ນ ຕ່າງກຸ່ມ ຕ່າງຝ່າຍກໍພະຍາຍາມ ຍາດແຍ່ງສິດຜົນປະໂຫຍດ, ຊິງດີ ຊິງເດັ່ນ ຊິງຄວາມເປັນໃຫຍ່ ນັບທັງດ້ານເສດຖະກິດ ການເມືອງ ແລະການທະຫານ; ອັນພາໃຫ້ເກີດຄວາມເຄັ່ງຕຶງ ຊຶ່ງເອີ້ນກັນວ່າ: " ຍຸກແຫ່ງສົງຄາມເຢັນ ". ຕົກມາຮອດກາງຊຸມປີ 80 ຂອງສະຕະວັດທີ XX ກໍເກີດມີການປ່ຽນແປງທີ່ໃຫຍ່ຫຼວງ ຢູ່ໃນລະບົບສັງຄົມນິຍົມ, ນັ້ນແມ່ນການ ລົ້ມລະລາຍຂອງສະຫະພາບໂຊວຽດ ແລະ ບັນດາປະເທດເອີຣົບຕາເວັນອອກ, ເຫດການດັ່ງກ່າວໄດ້ເປັນຂີດໝາຍການປ່ຽນແປງ ການ

ຊັ່ງຊາກຳລັງທີ່ກ້ຳເກິ່ງກັນລະຫວ່າງສອງລະບົບການເມືອງ, ໄພຂົ່ມຂູ່ຂອງສົງຄາມຂະໜາດໃຫຍ່ໄດ້ຖືກຫຼຸດຜ່ອນລົງ ແລະ ໄດ້ຮັບການແກ້ໄຂເປັນລຳດັບ, ທ່າອ່ຽງການພົບປະເຈລະຈາກັນ ເພື່ອຢູ່ຮ່ວມກັນໂດຍສັນຕິ ແລະ ຮ່ວມມືກັນລະຫ່ວາງນາໆຊາດໃນໂລກ ນັບມື້ນັບຂະຫຍາຍຕົວ, ແຕ່ພ້ອມດຽວກັນນັ້ນ ຄວາມຂັດແຍ່ງລະຫວ່າງຊາດໃນພາກພື້ນ, ກຸ່ມ, ພັກຝ່າຍ ຫຼື ລັດທິ ກໍຍັງຄົງສືບຕໍ່ຂະຫຍາຍຕົວ ໃນສະຖານະການໃໝ່ແຫ່ງໂລກປັດຈຸບັນ.

# IV. ເຝິກຫັດ ແລະ ວິທີແກ້

1. ຈົ່ງບອກຄວາມໝາຍປະຫັວດສາດ ຂອງການປະຕິວັດເດືອນຕຸລາຣັດເຊຍ ?

- ວິທີແກ້: 1 ການປະຕິວັດເດືອນຕຸລາຣັດເຊຍປີ ຄ.ສ 1917 ໄດ້ເປັນການທັບມ້າງແອກປົກຄອງທີ່ມີການກົດຂີ່ຂູດຮີດຂອງລັດທິທຶນນິຍົມ ແລະ ລະບອບສັກດີນາ ໃນຣັດເຊຍລົງຢ່າງສິ້ນເຊີງ ແລະ ເປັນຄັ້ງທຳອິດໃນ ປະຫວັດສາດໂລກທີ່ມີດິນແດນອັນກ້ວາງໃຫຍ່ເຊິ່ງກວມເຖິງ 1/6 ເນື້ອທີ່ຂອງໂລກ ທີ່ມີຊົນຊັ້ນທຳມະກອນຂຶ້ນກຳອຳນາດຢ່າງແທ້ຈິງ.

ໄຊຊະນະດັ່ງກ່າວນີ້ ໄດ້ເປັນສິ່ງກະຕຸກຊຸກຍູ້ໃຫ້ຊົນຊັ້ນກຳມະຊີບ ກໍ່ຄືຊາວຜູ້ອອກແຮງງານ ແລະ ຜູ້ທີ່ຖືກກົດຂີ່ຂູດຮີດທັງຫຼາຍຢູ່ໃນໂລກ ກໍ່ຄືຢູ່ພາຍໃນຣັດເຊຍເອງໄດ້ພາກັນລຸກຂຶ້ນຕໍ່ສູ້ເພື່ອປົດປ່ອຍຕົນເອງໃຫ້ມີ ເອກະລາດ ເອກະພາບ

ໄຊຊະນະຄັ້ງນີ້ ຍັງເປັນການໄຂສັງກາດໃໝ່ແຫ່ງ ລະບອບການເມືອງໂລກ ກໍ່ຄືລະບອບສັງຄົມນິຍົມ ແລະ ໄດ້ກາຍເປັນບົດຮຽນອັນລ້ຳຄ່າໃຫ້ແກ່ ບັນດາປະເທດ ທຶນນິຍົມປະຊາທິປະໄຕ ໃຫ້ບັນດາບຸກຄົນໃນ ສັງຄົມນິຍົມພວມຂະຫຍາຍຕົວທັງໝົດເຫັນໄດ້ໝາກຜົນ ແລະ ຄວາມໝາຍ ປະຫວັດສາດການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917.

2. ອາເມຣິກາ ສ້າງກຸ່ມມາຊານຂຶ້ນ ເພື່ອຈຸດປະສົງຫຍັງ ?

--- ວິທີແກ້: 2 ກຸ່ມມາກຊານ ( MarShallPlan ) ເປັນກຸ່ມແຜນການຂອງສະຫະລັດອາເມຣິກາວາງອອກແຜນການນີ້ ອາເມຣິກາພະຍາຍາມໃຫ້ຄວາມຊ່ວຍເຫຼືອແກ່ ບັນດາປະເທດເອີຣົບຕາເວັນອອກ ທີ່ໄດ້ຮັບຜົນສະທ້ອນໃນສົງຄາມໂລກຄັ້ງທີ 2 ເພື່ອເປັນກ້ອນທຶນໃນການພື້ນຟູເສດຖະກິດ, ສັງຄົມໃຫ້ມີຄວາມເຂັ້ມແຂງຢ່າງໄວວາ ເພື່ອເປັນກຳລັງໃນການສະໜັບສະໜູນຂອງຕົນໃນການຕໍ່ຕ້ານ ອິດທິພົນຂອງ ສະຫະພາບໂຊວຽດກໍ່ຄື ລັດທິສັງຄົມນິຍົມແຫ່ງໂລກ.

# V. ເຝິກຫັດເພີ່ມເຕີມ

1. ຈົ່ງຍົກໃຫ້ເຫັນເຖິງຈຸດປະສົງການສ້າງຕັ້ງ ຂະບວນການບໍ່ຮ່ວມກຸ່ມ ?
2. ຍ້ອນສາເຫດອັນໃດຈິ່ງພາໃຫ້ ເກີດວິກິດການທາງດ້ານເສດຖະກິດທຶນນິຍົມປີ ຄ.ສ 1929-1933 ?

# VI. ຜົນໄດ້ຮັບຈາກການສຶກສາ

ຈາກການສຶກສາເນື້ອໃນບົດຮຽນທີ່ໄດ້ຄົ້ນຄວ້າໃນ ບົດສາລະນິພົນເຫຼັ້ມນີ້ສາມາດສັງລວມຜົນທີ່ໄດ້ຮັບທັງຜູ້ຂຽນ ແລະ ຜູ້ທີ່ຈະຊົມໃຊ້ເຂົ້າໃຈໄດ້ເຊັ່ນ:

- ເຂົ້າໃຈກ່ຽວກັບຄວາມໝາຍ, ຄວາມສຳຄັນ, ຈຸດພິເສດ, ເປົ້າໝາຍ ແລະ ວິທີການຄົ້ນຄວ້າກ່ຽວກັບການພົວພັນສາກົນ
- ສາມາດເຂົ້າໃຈ ແລະ ອະທິບາຍໄດ້ ສະພາບການຕ່າງໆຂອງໂລກທີ່ເກີດຂຶ້ນໃນໄລຍະກ່ອນສົງຄາມໂລກຄັ້ງທີ I
- ອະທິບາຍໄດ້ກ່ຽວກັບຄວາມແຕກຕ່າງສອງກຸ່ມການເມືອງໂລກ
- ສາມາດຕີລາຄາ ແລະ ປຽບທຽບໄດ້ກ່ຽວກັບສະພາບການສັງຄົມການເມືອງຂອງໂລກໃນໄລຍະນັ້ນມັນເຮັດໃຫ້ພວກກຳອຳນາດກ້າວເປັນຈັກກະພັດ.

ຫຼາຍເຫດການທີ່ກ່າວມາຂ້າງເທິງນັ້ນ ລ້ວນແລ້ວແຕ່ເປັນການພົວພັນເຊິ່ງກັນ ແລະ ກັນ ໃນສັງຄົມ ສາມາດສ້າງຄວາມຮູ້ພື້ນຖານໄດ້ໃນ ການພົວພັນກັບການສຶກສາໃນສັງຄົມປັດຈຸບັນ ເຊິ່ງຈະທີ່ໄດ້ມີການຕິດພັນກັບການຮຽນຮູ້ໄດ້ຢ່າງສົມເຫດສົມຜົນ ແລະ ສາມາດນຳເອົາບົດດັ່ງກ່າວໄປເປັນບົດຮຽນປະກອບເຂົ້າໃນການຮຽນການສອນ ແລະ ເປັນບ່ອນອີງໃນການຮຽນຮູ້ກ່ຽວກັບສະພາບການຂອງໂລກໃນລຸ້ນຕໍ່ໆໄປໄດ້.ໄດ້ເບິ່ງໃຫ້ເຫັນຄວາມສຳມັກຄີປອງດອງເຊິ່ງກັນ ແລະ ກັນ ແລະ ສະພາບຂໍ້ຂັດແຍ່ງທີ່ເກີດຂຶ້ນ ລະຫວ່າງປະເທດມະຫາອຳນາດໃນໂລກ ແຕ່ເຫດການດັ່ງກ່າວມັນໄດ້ສ່ອງແສງໃຫ້ເຫັນກ່ຽວກັບສະພາບຂອງສັງຄົມໃນໄລຍະນັ້ນຈຶ່ງມີຂໍ້ຂັດແຍ່ງເຊິ່ງກັນ ແລະ ກັນໃນການຊອກສະແຫວງຫາອານານິຄົມ ໃນການຍາດແຍ່ງເອົາຫົວເມືອງຂຶ້ນເພື່ອຂະຫຍາຍອານານິຄົມ ແລະ ວິຊານີ້ກໍ່ກາຍເປັນ ຈາກຜົນປະໂຫຍດທີ່ກ່າວມາແລ້ວ ເນື້ອໃນ ບົດສາລະນິພົນຍັງມີຄວາມສອດຄ່ອງກ່ຽວກັບຫຼັກສູດການຮຽນ - ການສອນ

# VII. ພາກສະຫຼຸບ ແລະ ຄຳຄິດເຫັນຂອງຜູ້ຂຽນ

ຜ່ານການຂຽນບົດສາລະນິພົນ ກ່ຽວກັບ ຄວາມແຕກຕ່າງລະຫ່ວາງສອງກຸ່ມການເມືອງໂລກ ໄດ້ເຮັດໃຫ້ຂ້າພະເຈົ້າເອງສາດຮູ້ຈັກຫຼາຍໆບັນຫາ ຄື:

- ຮູ້ໄດ້ໝາກຜົນ ແລະ ຄວາມໝາຍປະຫວັດສາດ ຂອງການປະຕິວັດເດືອນຕຸລາຣັດເຊຍ ຄ.ສ 1917
- ການກຳເນີດລະບົບສັງຄົມນິຍົມ ຫຼັງການປະຕິວັດເດືອນຕຸລາຣັດເຊຍ1917
- ຮູ້ໄດ້ຄວາມແຕກຕ່າງກັນລະຫ່ວາງສອງກຸ່ມການເມືອງໂລກ
- ການສ້າງຕັ້ງກຸ່ມທີ່ປໍລະປັກກັນຂອງສອງລະບົບການເມືອງໂລກຄື: ການຮ່ວມກຸ່ມທາງດ້ານເສດຖະກິດ ການເມືອງ ແລະ ດ້ານການທະຫານ.
- ຮັບຮູ້ ໄດ້ການພົວພັນຂອງບັນດາປະເທດທຶນນິຍົມ
- ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວິກິດການທາງດ້ານເສດຖະກິດຂອງ ບັນດາປະເທດທຶນິຍົມ ກໍຄືເສດຖະກິດໂລກ ( 1929-1933 )
- ຜົນກະທົບພາຍຫຼັງໂລກແບ່ງອອອກເປັນສອງລະບົບການເມືອງ ຄື ມີທັງດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ ຊຶ່ງຜົນກະທົບຕໍ່ກັບຄວາມໝັ້ນຄົງທາງດ້ານການເມືອງ ແລະ ຜົນກະທົບຕໍ່ຊີວິດ, ສິດເສລີພາບຂອງສັງຄົມໂລກ.

ຜ່ານຈາກການຂຽນບົດສາລະນິພົນເຫຼັ້ມນີ້ ໄດ້ເຮັດໃຫ້ຂ້າພະເຈົ້າເອງເຂົ້າໃຈຢ່າງເລິກເຊິ່ງ ຕໍ່ເຫດການທີ່ເກີດຂຶ້ນຫຼາຍບັນຫາທີ່ຕິດພັນກັບ ໂລກແຕ່ອະດີດຮອດປັດຈຸບັນເຊິ່ງມັນເປັນບົດຮຽນອັນລໍ່າຄ່າສຳລັບຕົນເອງ ແລະ ບັນດາທ່ານຜູ້ອ່ານທັງຫຼາຍໄດ້ຮູ້, ໄດ້ເຫັນ ແລະ ເຂົ້າໃຈໃນບົດທີ່ກ່າວມາ ໃນນັ້ນ, ຂ້າພະເຈົ້າ ຄິດວ່າບົດສາລະນິພົນນີ້ ຈະເປັນບົດຮຽນອັນລໍ້າຄ່າໃຫ້ບັນດານັກສຶກສາລຸ້ນຕໍ່ໆໄປ ໄດ້ເອົາເປັນບ່ອນອີງເຂົ້າໃນການສິດສອນວິຊາປະຫວັດສາດທີ່ສອດຄ່ອງກັບບົດດັ່ງກ່າວໄດ້.

## 1. ຂໍ້ສະດວກ

--- ຄູທີ່ເປິກສາ ໄດ້ໃຫ້ຄວາມຮ່ວມມືເປັນຜູ້ຊີ້ທິດເບື່ອງທາງຊ່ວຍເຫຼືອ ໃນການຂຽນບົດສາລະນິພົນນີ້ທຸກຂັ້ນຕອນ
- ມີປື້ມຕຳລາເພື່ອສຶກສາຂໍ້ມູນໄດ້ພຽງພໍຕາມຄວາມຕ້ອງການ ໂຮງຮຽນມີຫ້ອງສະໝຸດໃຫ້ຄົ້ນ ຄວ້າເພື່ອຊອກຫາເນື້ອໃນຂອງບົດຮຽນ
- ມີປື້ມຄູ່ມືຄູກ່ຽວກັບການຂຽນ ບົດສາລະນິພົນປ້ອງກັນຈົບຊັ້ນປະລິນຍາຕີ
- ສະຖານທີ່ຢູ່ໃກ້ກັບບ່ອນຈຳໜ່າຍອຸປະກອນການເກັບກຳຂໍ້ມູນ
- ມີໝູ່ເພື່ອນຫຼາຍຄົນຊ່ວຍຊີ້ແນະ ແລະ ໃຫ້ຄວາມຄິດເຫັນໃຫ້ບົດຮຽນຫຼາຍໆຢ່າງສຳລັບການຂໍຄຳເປິກສາ

2. ຂໍ້ຫຍຸ້ງຍາກ

- ຍ້ອນປະສົບການ ແລະ ຄວາມເຂົ້າໃຈ ໃນການຂຽນບົດສາລະນິພົນຍັງບໍ່ທັນສູງເທົ່າທີ່ຄວນ.
- ຍ້ອນມີຄວາມຮູ້ຍັງບໍ່ທັນເລິກເຊິ່ງ.
- ອຸປະກອນການເກັບກຳຂໍ້ມູນບາງຢ່າງຍັງຂາດ ເຊັ່ນ: ກ້ອງຖ່າຍຮູບ, USB ເພື່ອບັນທຶກຂໍ້ມູນ ຂໍ້ມູນຈາກອິນເຕີເນັດບໍ່ໄດ້ຫຼາຍ ແລະ ເອກະສານກໍຫາຍາກ.

## 3. ບົດຮຽນທີ່ຖອດຖອນໄດ້

- ສາມາດສະຫຼຸບ ແລະ ຮູ້ວິທີເກັບກຳເນື້ອໃນບົດຮຽນ
- ຮູ້ກ່ຽວກັບວິທີການໃໝ່ໆຂອງການຂຽນບົດສາລະນິພົນ
- ຮູ້ຄວາມໝາຍ ແລະ ຄວາມສຳຄັນຂອງຫົວຂໍ້ບົດບົດສາລະນິພົນ
- ຮັບຮູ້ ແລະ ເຂົ້າໃຈ ໄດ້ຄວາມແຕກຕ່າງລະຫ່ວາງສອງກຸ່ມການເມືອງໂລກ
- ເຂົ້າໃຈໃນການຮ່ວມກຸ່ມບໍ່ຮ່ວມກຸ່ມ
- ອະທິບາຍໄດ້ກ່ຽວກັບຄວາມແຕກຕ່າງລະຫ່ວາງສອງກຸ່ມການເມືອງໂລກ
- ສາມາດຕີລາຄາ ແລະ ປຽບທຽບໄດ້ກ່ຽວກັບຜົນກະທົບສັງຄົມການເມືອງຂອງໂລກໃນໄລຍະນັ້ນ
- ຮູ້ໄດ້ການຮ່ວມກຸ່ມກັນ ທາງດ້ານເສດຖະກິດ ການເມືອງ ແລະ ດ້ານການທະຫານ ຂອງສອງກຸ່ມການເມືອງແຕກຕ່າງກັນ
- ເຮັດໃຫ້ຕົນມີຄວາມອົດທົນພະຍາຍາມຫຼາຍຂຶ້ນ
- ເປັນການຊອກຫາປະສົບການໃໝ່ໆມາໃຫ້ແກ່ຕົນເອງ

# ເອກະສານອ້າງອີງ


- ປື້ມແບບຮຽນປະຫວັດສາດ 2 ສ້າງຄູມັດທະຍົມຕົ້ນ ລະບົບ 11+3 ປີທີ I (ປີ 2009)
- ປຶ້ມແບບຮຽນປະຫວັດສາດ ມັດທະຍົມ ມ.6 ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ (ປີ 2008)
- ປຶ້ມແບບຮຽນປະຫວັດສາດ ມັດທະຍົມ ມ.7 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ (ປີ 2010)
- ປຶ້ມແບບຮຽນພູມສາດ ມັດທະຍົມ ມ.5 ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ (ປີ 2008)
- ປຶ້ມແບບຮຽນປະຫວັດສາດໂລກສະໄໝໃໝ່ ສຳລັບສ້າງຄູ ລະບົບ 11+3 ປີທີ 2 ກະຊວງສຶກສາທິການ ສູນພັດທະນາຄູ 1998
- ປຶ້ມແບບຮຽນວັດທະນະທຳລາວ-ອາຊຽນ ລະບົບ 11+3 ປີທີ 2
- ຈາກອິນເຕີເນັດ www.google.co.th